ກະຊວງອຸດສາຫະກຳ ແລະ ການຄ້າ
MINISTRY OF INDUSTRY AND COMMERCE

ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030

ສະບັບຮັບຮອງ ວັນທີ 18 ສິງຫາ 2026.

ຄຳນຳ

ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030 ເຊື່ອມສານໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ເຂົ້າກັບ 6 ເປົ້າໝາຍລວມທັງຕິດພັນກັບການຜັນຂະຫຍາຍ ມະຕິ ສອຈ ເລກທີ 04/ກມສພ ຊຶ່ງເປັນແຜນບຸກທະລຸ ທີ່ມີການນຳໃຊ້ທຸກທ່າແຮງເພື່ອສ້າງພື້ນຖານເສດຖະກິດເອກະລາດ, ເປັນເຈົ້າຕົນເອງ ແລະ ເພື່ອຟື້ນຟູສະຖຽນລະພາບ ດ້ານເສດຖະກິດມະຫາພາກ ແລະ ການເຕີບໂຕແບບຍືນຍົງ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ຈະຕ້ອງໄດ້ກຳນົດເປົ້າໝາຍ ແລະ ທິດທາງໃນການຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ເພື່ອສ້າງເສດຖະກິດເອກະລາດ ແລະ ສາມາດເພິ່ງຕົນເອງໄດ້ຫຼາຍຂຶ້ນ, ມີປະສິດທິພາບ, ສີຂຽວ ແລະ ຍືນຍົງ. ເພື່ອຮັບປະກັນໃຫ້ແຜນສາມາດດຳເນີນໄປຖືກທິດຕາມກຳນົດເວລາ, ແຜນພັດທະນາ 5 ປີ ຂອງ ກອຄ ໄດ້ກຳນົດຂີດໝາຍເວລາໃຫ້ສຳເລັດ ແລະ ຕົວຊີ້ບອກທີ່ຈຳເປັນສຳລັບການຕິດຕາມ ແລະ ປະເມີນຜົນ ຂອງເປົ້າໝາຍ ແລະ ການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ດັ່ງນີ້:

ພາກທີ I ແມ່ນໄດ້ ສະຫຼຸບຜົນສຳເລັດ ຂອງແຜນພັດທະນາ 5 ປີ 2021-2025 ຂອງ ກອຄ ແລະ ກະຊວງ ພະລັງງານ ແລະ ບໍ່ແຮ່ (ກະຊວງ ພບ), ກຳນົດປັດໄຈຕົ້ນຕໍ ຂອງຄວາມສຳເລັດ, ກ່າວເຖິງປັດໄຈທີ່ເປັນສາເຫດຕົ້ນຕໍ ທີ່ພາໃຫ້ມີຈຸດອ່ອນ, ຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ, ພ້ອມທັງບົດຮຽນທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດ.

ພາກທີ II ແມ່ນກຳນົດເປົ້າໝາຍ ແລະ ທິດທາງລວມ ຂອງການພັດທະນາ ຂອງແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030 ແລະ ຂົງເຂດບຸລິມະສິດຍຸດທະສາດຕາມ 3 ແຜນງານຫຼັກ: (1) **ສົ່ງເສີມການພັດທະນາອຸດສາຫະກຳ**, (2) **ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ, ແລະ (3) ຍົກລະດັບການພັດທະນາພາກເອກະຊົນ ແລະ ວິສາຫະກິດ**. ແຜນ 5 ປີ ດັ່ງກ່າວໄດ້ສ້າງບັນຊີລາຍການກິດຈະກຳບຸລິມະສິດ ແລະ ຄາດໝາຍແຜນວຽກຈຸດສຸມ ແຕ່ລະດ້ານທີ່ເປັນຂົງເຂດຈຸດສຸມ 3 ແຜນງານດັ່ງກ່າວ. ພ້ອມດຽວກັນນັ້ນ, ກໍໄດ້ກຳນົດແຜນງານສະໜັບສະໜຸນປິ່ນອ້ອມ ຊຶ່ງປະກອບດ້ວຍ: (1) **ສ້າງຂີດຄວາມສາມາດ**, (2) **ພັດທະນາອຸດສາຫະກຳ ແລະ ການຄ້າຕາມທິດຍືນຍົງ** , (3) **ເລັ່ງການຫັນເປັນດິຈິຕອນ**, ແລະ (4) **ສົ່ງເສີມຄວາມສະເໝີພາບທາງເພດ ແລະ ການມີສ່ວນຮ່ວມ.**

ພາກທີ III ແມ່ນກຳນົດ ກ່ຽວກັບກົນໄກການຈັດຕັ້ງປະຕິບັດແຜນການ 5 ປີ ຂອງ ກອຄ, ການປະສານງານລະຫວ່າງ ໜ່ວຍງານ ຂອງລັດ, ການຕິດຕາມ ແລະ ປະເມີນຜົນ, ແລະ ຄວາມຕ້ອງການດ້ານງົບປະມານ.

ຂໍສະແດງຄວາມຂອບໃຈຢ່າງຍິ່ງມາຍັງບັນດາກະຊວງ ແລະ ຂະແໜງການທີ່ກ່ຽວຂ້ອງ ລວມທັງພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ສະຖາບັນການສຶກສາ. ຕະຫຼອດຮອດອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ. ລວມທັງ ADB ແລະ BGC ໃນການໃຫ້ຄວາມຮ່ວມມືປະກອບສ່ວນຢ່າງຕັ້ງໜ້າໃນການສ້າງແຜນດັ່ງກ່າວມີຜົນສຳເລັດ. ຂ້າພະເຈົ້າ, ຫວັງຢ່າງຍິ່ງວ່າ ບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜຸນປະກອບສ່ວນຢ່າງຕັ້ງໜ້າທາງດ້ານວິຊາການ ແລະ ທຶນຮອນເຂົ້າໃນການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030 ສະບັບນີ້ ຢ່າງມີຜົນສຳເລັດອັນຈົບງາມ.

ນະຄອນຫຼວງວຽງຈັນ, ວັນທີ: 18 AUG 2026

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ

ມະໄລທອງ ກົມມະສິດ

ສາລະບານ

ໜ້າ

ພາກທີ I ສະຫຼຸບຜົນການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2021-2025..... 5

1.1 ສະພາບລວມ..... 5

1.1.1 ສະພາບສາກົນ..... 5

1.1.2 ສະພາບພາຍໃນປະເທດ..... 5

1.2 ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ 2021-2025..... 6

1.2.1 ຜົນສຳເລັດ ຂອງ ແຜນພັດທະນາ 5 ປີ ຂອງ ກອຄ ສຳລັບປີ 2021-2025..... 7

ແຜນງານທີ 1: ການເຊື່ອມໂຍງ ແລະ ເຊື່ອມຈອດເສດຖະກິດກັບພາກພື້ນ ແລະ ສາກົນ..... 7

ແຜນງານທີ 2: ສົ່ງເສີມການພັດທະນາອຸດສາຫະກຳ ແລະ ການຜະລິດເປັນສິນຄ້າ ຕິດພັນກັບຕະຫຼາດ..... 11

ແຜນງານທີ 3 ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກທຸລະກິດ..... 13

ແຜນງານທີ 4 ສົ່ງເສີມ ແລະ ພັດທະນາການຄ້າໃຫ້ກ້າວທັນກັບສະພາບການໃໝ່..... 14

ແຜນງານທີ 5 ເພີ່ມປະສິດທິພາບການຄຸ້ມຄອງມະຫາພາກ, ການແບ່ງຂັ້ນຄຸ້ມຄອງກັບທ້ອງຖິ່ນ, ການນຳພາ ການຈັດຕັ້ງທຸລະກິດ ແລະ ຫົວໜ່ວຍທຸລະກິດ ທີ່ຂຶ້ນກັບກະຊວງ. 15

1.2.2 ຜົນສຳເລັດ ຂອງຂະແໜງພະລັງງານ ປີ 2021-2025..... 16

1.2.3 ຜົນສຳເລັດຂອງຂະແໜງບໍ່ແຮ່ 2021-2025..... 18

1.3 ການປະເມີນຜົນລວມ ຂອງການຈັດຕັ້ງປະຕິບັດແຜນການ 5 ປີ..... 21

1.3.1 ຄວາມສຳເລັດ..... 21

1.3.2 ສາເຫດຕົ້ນຕໍທີ່ພາໃຫ້ມີຜົນສຳເລັດ..... 23

1.3.3 ຈຸດອ່ອນຂໍ້ບົກຜ່ອງ, ຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ..... 24

1.3.4 ບົດຮຽນທີ່ຖອດຖອນໄດ້..... 24

ພາກທີ II: ເປົ້າໝາຍ, ທິດທາງລວມ, ແລະ ລະດັບຄາດໝາຍຊີ້ນຳ ຂອງການພັດທະນາ ຂອງແຜນການພັດທະນາ 5 ປີ ຂອງ ກະຊວງ ອຄ..... 28

2.1. ສະພາບແວດລ້ອມ ທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ..... 28

2.2 ທິດທາງລວມ, ເປົ້າໝາຍ, ແຜນວຽກຈຸດສຸມ ຂອງແຜນພັດທະນາ 5 ປີ 2026-2030..... 31

2.2.1 ແຜນງານ ທີ I: ສົ່ງເສີມການພັດທະນາອຸດສາຫະກຳ..... 34

2.2.1.1 ອຸດສາຫະກຳພະລັງງານ..... 35

2.2.1.2 ອຸດສາຫະກຳບໍ່ແຮ່..... 62

2.2.1.3 ອຸດສາຫະກຳປຸງແຕ່ງ..... 73

2.2.2 ແຜນງານທີ II: ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ..... 81

2.2.2.1 ປັບປຸງນະໂຍບາຍ ແລະ ເຈລະຈາການຄ້າ..... 84
2.2.2.2 ຍົກລະດັບມາດຕະຖານ, ຄຸນນະພາບ ແລະ ຄວາມຫຼາກຫຼາຍຂອງສິນຄ້າ..... 90
2.2.2.3 ສົ່ງເສີມການແຂ່ງຂັນ ແລະ ຫ້ອຄິດປະດິດສ້າງ, ປົກປ້ອງຊັບສິນທາງປັນຍາ ແລະ ຜູ້ຊົມໃຊ້ 91
2.2.2.4 ການເພີ່ມທະວີການບໍລິການທາງດ້ານໂລຈິສຕິກ 94
2.2.3 ແຜນງານທີ III: ສົ່ງເສີມການພັດທະນາເອກະຊົນ ແລະ ວິສາຫະກິດ 95
2.2.3.1 ປັບປຸງດ້ານການຄ້າ ແລະ ອຸດສາຫະກຳ ແລະ ສະພາບແວດລ້ອມການດຳເນີນທຸລະກິດ..... 95
2.2.3.2 ສົ່ງເສີມການພັດທະນາຜູ້ປະກອບການ, ຍົກລະດັບຄວາມສາມາດແຂ່ງຂັນຂອງຈຸນລະວິສາຫະກິດ,ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) 97
2.2.3.3 ປະຕິຮູບລັດວິສາຫະກິດຍຸດທະສາດ..... 102
2.2.4 ວຽກງານສະໜັບສະໜຸນ ແລະ ປິ່ນອ້ອມ 109
2.2.4.1 ແຜນງານທີ IV: ການສ້າງຂີດຄວາມສາມາດ..... 109
2.2.4.2 ແຜນງານທີ V: ພັດທະນາອຸດສາຫະກຳ ແລະ ການຄ້າຕາມທິດຍືນຍົງ..... 110
2.2.4.3 ແຜນງານທີ VI: ເລັ່ງການຫັນເປັນດີຈີຕອນ 111
2.2.4.4 ແຜນງານທີ VI: ສົ່ງເສີມຄວາມສະເໝີພາບທາງເພດ ແລະ ການມີສ່ວນຮ່ວມ 112
ພາກທີ III: ກົນໄກການຈັດຕັ້ງປະຕິບັດ, ການປະສານງານ ລະຫວ່າງ ພາກລັດກັບພາກລັດ ແລະ ການຕິດຕາມ-ປະເມີນຜົນ 113
3.1 ກົນໄກການປະສານງານ ແລະ ວິທີການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ 2026-2030..... 113
3.2 ງົບປະມານ ແລະ ແຫຼ່ງທຶນ 115
3.3 ການຕິດຕາມ, ປະເມີນຜົນ ແລະ ການລາຍງານ 115
ເອກະສານຊ້ອນທ້າຍ 1: ຕົວຊີ້ບອກຜົນສຳເລັດ ໃນການປະຕິບັດ ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030**.....117**
ເອກະສານຊ້ອນທ້າຍ 2: ແຜນດຳເນີນງານ ຂອງແຜນພັດທະນາ ອຄ 5 ປີ 2026-2030 ສຳລັບ ອຸດສາຫະກຳປຸງແຕ່ງ, ພະລັງງານ ແລະ ບໍ່ແຮ່, ການສົ່ງເສີມການຄ້າ ແລະ ການພັດທະນາພາກເອກະຊົນ, ສົ່ງເສີມການພັດທະນາອຸດສາຫະກຳ **..... 122**
ເອກະສານຊ້ອນທ້າຍ 3:ບັນດາໂຄງການບູລິມະສິດ ທີ່ໄປສະໜັບສະໜຸນ ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5ປີ 2026-2030 ແລະ ນອນຢູ່ໃນບູລິມະສິດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030). **..... 157**

ພາກທີ I

ສະຫຼຸບຜົນການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2021-2025

1.1 ສະພາບລວມ

1.1.1 ສະພາບສາກົນ

ໃນປີ 2021, ເສດຖະກິດໂລກໄດ້ເລີ່ມຟື້ນຕົວຈາກຜົນກະທົບ ຂອງການລະບາດ ຂອງພະຍາດ ໂຄວິດ-19. ມາດຕະການທາງເສດຖະກິດລະດັບມະຫາພາກ ເພື່ອບັນເທົາຜົນກະທົບຈາກການປິດກິດຈະກຳທາງເສດຖະກິດ ໄດ້ນຳໄປສູ່ການຂາດດຸນງົບປະມານ ທີ່ເພີ່ມຂຶ້ນ ແລະ ການເກີດຄວາມບໍ່ສົມດຸນ ຂອງຕ່ອງໂສ້ການຜະລິດ-ການສະໜອງ ໃນທົ່ວໂລກ. ພະຍາດລະບາດຍັງໄດ້ນຳໄປສູ່ ການໃຊ້ມາດຕະການປົກປ້ອງຕົນເອງ ຢ່າງແຜ່ຫຼາຍ ເພື່ອຈຳກັດການຄ້າ ແລະ ການເພີ່ມຂຶ້ນ ຂອງຄວາມເຄັ່ງຕຶງທາງພູມລັດຖະສາດການເມືອງ ຊຶ່ງໄດ້ກະຕຸ້ນໃຫ້ເກີດພາວະເງິນເຟີ້ ໃນຊ່ວງປີ 2022-2023, ໃນໄລຍະປີ 2024 ແລະ 2025 ປະເທດໃນກຸ່ມອົງການ ເພື່ອຄວາມຮ່ວມມືເສດຖະກິດ ແລະ ການພັດທະນາ (OECD) ສ່ວນໃຫຍ່ແມ່ນສາມາດຄວບຄຸມພາວະເງິນເຟີ້ໄດ້, ແຕ່ປະເທດກຳລັງພັດທະນາ ແລະ ປະເທດທີ່ເກີດໃໝ່ຫຼາຍໆປະເທດ ຍັງຄົງປະສົບກັບອັດຕາເງິນເຟີ້ທີ່ຂ້ອນຂ້າງສູງກວ່າ ແລະ ຍັງສືບຕໍ່ໄດ້ຮັບຜົນກະທົບຈາກເຫດການທີ່ບໍ່ໄດ້ຄາດຄິດ ຂອງການປ່ຽນແປງລາຄາສິນຄ້າ ແລະ ການບໍລິການ. ສິ່ງເຫຼົ່ານີ້ໄດ້ສົ່ງຜົນໃຫ້ ສປປ ລາວ ຕ້ອງປະເຊີນໜ້າກັບສະພາບແວດລ້ອມສາກົນທີ່ທ້າທາຍ ຕະຫຼອດຊ່ວງປີ 2021-2025.

1.1.2 ສະພາບພາຍໃນປະເທດ

ຕະຫຼອດ 5 ປີຜ່ານມາ (2021-2025), ເສດຖະກິດສາມາດເຕີບໂຕໄດ້ສະເລ່ຍ 4,24% ຕໍ່ປີ. ມາດຕະການຄວບຄຸມ ໂຄວິດ-19 ໄດ້ສົ່ງຜົນໃຫ້ລາຍໄດ້ຈາກການບໍລິການ, ການຂົນສົ່ງ ແລະ ການທ່ອງທ່ຽວຫຼຸດລົງຢ່າງຫຼວງຫຼາຍ; ຢ່າງໃດກໍດີໃນຊ່ວງປີ 2021 ການເພີ່ມຂຶ້ນ ຂອງຄວາມຕ້ອງການຊື້ຈາກຕ່າງປະເທດໄດ້ກະຕຸ້ນການເຕີບໂຕໃນການສົ່ງອອກສິນຄ້າກະສິກຳ ແລະ ການຜະລິດ ຂອງຂະແໜງພະລັງງານ, ບໍ່ແຮ່ ແລະ ອຸດສາຫະກຳປຸງແຕ່ງ ແລະ ການປຸງແຕ່ງຜົນຜະລິດ ທີ່ແນໃສ່ການສົ່ງອອກ. ໃນໄລຍະ 2021-2022, ການເພີ່ມຂຶ້ນຢ່າງໄວວາ ຂອງອັດຕາເງິນເຟີ້, ການອ່ອນຄ່າ ຂອງເງິນກີບ ແລະ ການຂາດດຸນງົບປະມານທີ່ເພີ່ມຂຶ້ນ ໄດ້ເພີ່ມຄວາມບອບບາງ ຂອງເສດຖະກິດມະຫາພາກ ແລະ ຈຳກັດຄວາມສາມາດໃນການເຕີບໂຕ. ພາຍຫຼັງສຳເລັດການເຈລະສອງຝ່າຍ ດ້ານໜີ້ສິນ ກັບ ຈີນ, ຄວາມມີສະຖຽນລະພາບດ້ານເສດຖະກິດມະຫາພາກ ແມ່ນດີຂຶ້ນ. ຕະຫຼອດປີ 2022, ການທ່ອງທ່ຽວ ແລະ ບໍລິການອື່ນໆ ເລີ່ມຟື້ນຕົວຢ່າງຊ້າໆ ແລະ ການສົ່ງອອກຊັບພະຍາກອນທຳມະຊາດໄດ້ເປັນຕົວຂັບເຄື່ອນການເຕີບໂຕໃນພາກອຸດສາຫະກຳ. ການເປີດໃຊ້ງານ ຂອງທັງລົດໄຟ ລາວ-ຈີນ ແລະ ທ່າບົກ ໄດ້ກະຕຸ້ນກະແສການເດີນທາງໄປມາ ແລະ ການແລກປ່ຽນດ້ານການຄ້າ. ຕະຫຼອດປີ 2023-2025, ຂະແໜງທີ່ໃຊ້ຊັບພະຍາກອນ ທຳມະຊາດຈຳນວນຫຼວງຫຼາຍ ເຊັ່ນ: ໄຟຟ້າ, ການຂຸດຄົ້ນບໍ່ແຮ່ ແລະ ການກໍ່ສ້າງ ໄດ້ກາຍເປັນຕົວຂັບເຄື່ອນຕົ້ນຕໍ ຂອງເສດຖະກິດ. ບັນດາຂະແໜງການເຫຼົ່ານີ້ ແມ່ນໄດ້ສ້າງມູນຄ່າເພີ່ມໜ້ອຍ ແລະ ປະເທດກໍໄດ້ຮັບຜົນປະໂຫຍດໜ້ອຍຈາກການເຕີບໂຕດັ່ງກ່າວ. ຕະຫຼອດປີ 2024-2025, ຂະແໜງບໍລິການ, ໄຟຟ້າ, ການຂຸດຄົ້ນບໍ່ແຮ່, ກະສິກຳ ແລະ ການປະກອບອຸປະກອນເອເລັກໂຕຣນິກ ຍັງຄົງເຕີບໂຕຕໍ່ເນື່ອງ ເຖິງແມ່ນວ່າຈະຍັງມີສະພາບຄວາມບອບບາງດ້ານເສດຖະກິດ ມະຫາພາກ ຢ່າງຕໍ່ເນື່ອງ.

1.2 ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ 2021-2025

ບົດຮຽນທີ່ໄດ້ຮຽນຮູ້ຈາກການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ ປັດຈຸບັນ ຂອງ ກອຄ ແລະ ກະຊວງ ພບ ປີ 2021-2025 ໃນການປະກອບສ່ວນເຂົ້າໃນການຈັດຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 9 (NSEDP 9) ປີ 2021-2025 ມີ 2 ເປົ້າໝາຍ ຄື: ເປົ້າໝາຍທີ 1 ແລະ 5 ທີ່ສະແດງໄວ້ໃນກ່ອງຂໍ້ຄວາມຂ້າງລຸ່ມນີ້ ທີ່ສອດຄ່ອງກັບ ໜ້າທີ່ພາລະບົດບາດ ແລະ ການເຄື່ອນໄຫວ ຂອງ ກອຄ, ແລະ 2 ເປົ້າໝາຍ ທີ່ມີລັກສະນະສອດຫ້ອຍກັບຫຼາຍຂະແໜງວຽກງານ ຊຶ່ງສຸມໃສ່ການເຊື່ອມສານຂໍ້ພິຈາລະນາດ້ານຄວາມທົ່ວເຖິງ ແລະ ສິ່ງແວດລ້ອມເຂົ້າໄປໃນທຸກໆກິດຈະກຳ. **ເປົ້າໝາຍ ທີ 6** ຂອງ NSEDP 9 ເລັ່ງໃສ່ຄວາມຈຳເປັນໃນການຍົກລະດັບປະສິດທິພາບພາຍໃນພາກລັດ ໂດຍການເສີມສ້າງຂີດຄວາມສາມາດທາງວິຊາການ ແລະ ປັບປຸງກົນໄກການປະສານງານ ແລະ ການຕິດຕໍ່ສື່ສານ. NSEDP 9 ໄດ້ກຳນົດເອົາການກຽມຄວາມພ້ອມໃຫ້ ສປປ ລາວ ຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ, ການບັນລຸເປົ້າໝາຍ ແຫ່ງການພັດທະນາແບບຍືນຍົງ (SDGs), ພ້ອມທັງຄວາມຈຳເປັນໃນການເຕີບໂຕແບບສີຂຽວ ແລະ ການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ເປັນວຽກບຸລິມະສິດ ຂອງແຜນ.
ເປົ້າໝາຍທີ 1 ຂອງ NSEDP: ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ ຜ່ານບັນດາແຜນວຽກຈຸດສຸມຕໍ່ໄປນີ້ ເຊັ່ນ:

1. ການຊຸກຍູ້ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ;
2. ການສ້າງເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ;
3. ການຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ;
4. ການພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ;
5. ການພັດທະນາວິສາຫະກິດລັດ ແລະ ເສດຖະກິດຮວມໝູ່ ຂອງ ປະຊາຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ເປົ້າໝາຍທີ 5: ການສ້າງພື້ນຖານໂຄງລ່າງທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ ຜ່ານບັນດາແຜນວຽກຈຸດສຸມຕ່າງໆຕໍ່ໄປນີ້ ເຊັ່ນ:

1. ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນ ກັບພາກພື້ນ ແລະ ສາກົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ;
2. ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

1.2.1 ຜົນສຳເລັດ ຂອງ ແຜນພັດທະນາ 5 ປີ ຂອງ ກອຄ ສຳລັບປີ 2021-2025

ບັນດາກິດຈະກຳການເຄື່ອນໄຫວ ຂອງແຜນການພັດທະນາ 5 ປີ ຂອງ ກອຄ ສຳລັບໄລຍະ 2021-2025 ແມ່ນໄດ້ຈັດເປັນ ຫ້າເສົາຄ້ຳ/ແຜນງານ ທີ່ໄດ້ລະບຸໄວ້ໃນກ່ອງຂໍ້ຄວາມ ທີ່ສະແດງໄວ້ຂ້າງລຸ່ມນີ້:

1. ການເຊື່ອມໂຍງ ແລະ ເຊື່ອມຈອດເສດຖະກິດກັບພາກພື້ນ ແລະ ສາກົນ;
2. ສົ່ງເສີມການພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຜະລິດຕາມກົນໄກເສດຖະກິດຕະຫຼາດ;
3. ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກທຸລະກິດ;
4. ສົ່ງເສີມ ພັດທະນາ ແລະ ຫັນວຽກງານການຄ້າເປັນທັນສະໄໝ;
5. ປັບປຸງປະສິດທິພາບ ຂອງການຄຸ້ມຄອງມະຫາພາກ, ສົ່ງເສີມວຽກງານສາມສ້າງ ແລະ ຍົກລະດັບຄວາມສາມາດ ຂອງຜູ້ບໍລິຫານວິສາຫະກິດ ແລະ ພາກທຸລະກິດ ພາຍໃຕ້ການຄຸ້ມຄອງ ຂອງ ບັນດາກະຊວງ.

ແຜນງານທີ 1: ການເຊື່ອມໂຍງ ແລະ ເຊື່ອມຈອດເສດຖະກິດກັບພາກພື້ນ ແລະ ສາກົນ.

1) **ຜົນສຳເລັດໃນການເພີ່ມທະວີການຮ່ວມມື ແລະ ຂະຫຍາຍການເຂົ້າເຖິງຕະຫຼາດສິນຄ້າ ແລະ ບໍລິການ ຂອງ ສປປ ລາວ ຜ່ານກົນໄກການເຈລະຈາສັນຍາ ແລະ ຮ່ວມມືດ້ານການຄ້າແບບສອງຝ່າຍ, ອະນຸພາກພື້ນ, ພາກພື້ນ ແລະ ຫຼາຍຝ່າຍ. ໃນຂອບສອງຝ່າຍ:** ປັບປຸງຂໍ້ຕົກລົງການຄ້າສອງຝ່າຍ ລາວ-ຫວຽດນາມ, ແຕ່ງຕັ້ງ ຄະນະກຳມະການເພື່ອເຈລະຈາການຄ້າຜ່ານແດນ ກັບ ປະເທດມຽນມາ ແລະ ໄດ້ທົບທວນແກ້ໄຂຂໍ້ຕົກລົງ ສອງຝ່າຍ ກັບ ສປ ຈີນ ໃນການເສີມສ້າງ ຄວາມຮ່ວມມືທາງເສດຖະກິດ ແລະ ການຄ້າຊາຍແດນ. ສຳເລັດ ການປັບປຸງສັນຍາວ່າດ້ວຍການຮ່ວມມື ດ້ານເສດຖະກິດ, ການຄ້າ ແລະ ເຕັກນິກ ລະຫວ່າງ ລາວ ແລະ ຕີມໍ ເລສະເຕ; ສຳເລັດການເຈລະຈາ ແລະ ລົງນາມສັນຍາການຄ້າ ລາວ-ຫວຽດນາມ (ສະບັບປັບປຸງ). ນອກນັ້ນ, ກໍ່ຍັງໄດ້ຈັດກອງປະຊຸມພົບປະແບບສອງຝ່າຍ, ເດີນທາງໄປຢ້ຽມຢາມບັນດາປະເທດຄູ່ຄ້າ ໂດຍສະເພາະ ປະເທດເພື່ອນມິດ ເພື່ອສ້າງຂອບວຽກການຮ່ວມມື ແລະ ຍາດແຍ່ງເອົາການຊ່ວຍເຫຼືອຕ່າງໆ. **ໃນຂອບພາກພື້ນ:** ສຳເລັດການເຈລະຈາຍົກລະດັບສັນຍາການຄ້າດ້ານສິນຄ້າອາຊຽນ; ສຳເລັດການເຈລະຈາຍົກລະດັບ ສັນຍາການຄ້າເສລີ ອາຊຽນ-ຈີນ 3.0; ສຳເລັດການເຈລະຈາຍົກລະດັບສັນຍາການຄ້າເສລີອາຊຽນ-ອິດ ສະຕຣາລີ-ນິວຊີແລນ; ແລະ ສັນຍາວ່າດ້ວຍການຮ່ວມມືເສດຖະກິດແບບຮອດດ້ານລະດັບພາກພື້ນ. **ໃນ ຂອບການຄ້າຫຼາຍຝ່າຍ:** ສຳເລັດການເຂົ້າຮ່ວມເປັນພາຄີ ຂອງສັນຍາວ່າດ້ວຍ ເຕັກໂນໂລຊີຂໍ້ມູນຂ່າວສານ ພາຍໃຕ້ອົງການການຄ້າໂລກ, ເຂົ້າຮ່ວມເປັນພາຄີຂອງຂໍ້ລິເລີ່ມການຄ້າທາງເອເລັກໂຕຣນິກ, ການຖືມຊຸມ ສິນຄ້າກະສິກຳ ແລະ ການອຳນວຍຄວາມສະດວກທາງດ້ານການລົງທຶນ; **ໃນຂອບອະນຸພາກພື້ນ:** ສຳເລັດ ການປັບປຸງແຜນຮ່ວມມື ໄລຍະ 3 ປີ (2024-2027) ເພື່ອເພີ່ມທະວີຄວາມອາດສາມາດດ້ານການຜະລິດ ພາຍໃຕ້ຂອບການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ; ສຳເລັດແຜນການຮ່ວມມື ໄລຍະ 5 ປີ (2024-2028) ເພື່ອເພີ່ມທະວີເສດຖະກິດຂ້າມຊາຍແດນ ພາຍໃຕ້ຂອບການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ.

2) **ຜົນສຳເລັດໃນການຍົກສູງບົດບາດ ຂອງ ສປປ ລາວ ໃນເວທີພາກພື້ນ ແລະ ສາກົນ.** ໃນນັ້ນ, ໄດ້ປະກອບ ສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດພັນທະສັນຍາອົງການການຄ້າໂລກ ເຊັ່ນ: ການສ້າງນິຕິກຳ ແລະ ການເຂົ້າຮ່ວມຖະແຫຼງການຈຸດຢືນຕ່າງໆຂອງກຸ່ມປະເທດດ້ອຍພັດທະນາ, ກຸ່ມອາຊຽນປະຈຳເຊີເນວ ເຊັ່ນ:

ຂໍ້ສະເໜີຍົກເວັ້ນ ສັນຍາການຄ້າດ້ານການບໍລິການໃຫ້ກັບປະເທດດ້ອຍພັດທະນາ, ການປະຕິຮູບ ອົງການ ການຄ້າໂລກ ແລະ ບັນຫາໃໝ່ໃນການເຈລະຈາ ສັນຍາອົງການການຄ້າໂລກ; ສຳເລັດຈັດກອງປະຊຸມສະ ເໜີມສະຫຼອງການເຂົ້າຮ່ວມເປັນສະມາຊິກອົງການການຄ້າໂລກຂອງ ສປປ ລາວ ຈຳນວນ 03 ຄັ້ງ; ສຳເລັດ ການເປັນເຈົ້າພາບຈັດກອງປະຊຸມໂຕະມົນຄັ້ງທີ 11 ຂອງອົງການການຄ້າໂລກ (ອຄລ) ແລະ ສະເໜີມ ສະຫຼອງການເຂົ້າເປັນສະມາຊິກ ອຄລ ຂອງ ສປປ ລາວ ຄົບຮອບ 10 ປີ ທີ່ ນະຄອນຫຼວງວຽງຈັນ. ການຈັດຕັ້ງປະຕິບັດສັນຍາ WTO-TFA ຂອງ ສປປ ລາວ ສຳເລັດ 100 % ຕາມພັນທະປີ 2025.

3) **ວຽກໃນຂອບອາຊຽນ**:

- ສຳເລັດໜ້າທີ່ໃນການເປັນເຈົ້າພາບ ແລະ ປະທານກອງປະຊຸມອາຊຽນ ສຳລັບເສົາຄ້ຳເສດຖະກິດຂອງ ສປປ ລາວ ໃນປີ 2024 ຈຳນວນ 25 ກອງປະຊຸມ ໃນນັ້ນ ໄດ້ສຳເລັດການເປັນເຈົ້າພາບ ແລະ ປະທານກອງ ປະຊຸມລະດັບເຈົ້າໜ້າອາວຸໂສເສດຖະກິດອາຊຽນຈຳນວນ 04 ຄັ້ງ, ລະດັບຮອງລັດຖະມົນຕີ ຈຳນວນ 02 ຄັ້ງ ແລະ ລະດັບລັດຖະມົນຕີເສດຖະກິດອາຊຽນຈຳນວນ 03 ຄັ້ງ ຢ່າງຈົບງາມ. ໃນນັ້ນ, ສາມາດນຳພາ ການຈັດຕັ້ງປະຕິບັດແຜນແມ່ບົດຂອງປະຊາຄົມເສດຖະກິດອາຊຽນ ປີ 2025 ໄດ້ສຳເລັດທັງໝົດ 92 ເອກະສານຂອງເສົາຄ້ຳເສດຖະກິດ ແລະ ມີ 20 ເອກະສານທີ່ໄດ້ມີການຮັບຮອງເອົາໃນກອງປະຊຸມຍອດ ອາຊຽນຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ, ເຊິ່ງຜົນສຳເລັດດັ່ງກ່າວນີ້ ຍັງບໍ່ ທັນມີປະເທດໃດໃນການເປັນອາຊຽນສາມາດບັນລຸຕົວເລກດັ່ງກ່າວໄດ້. ສາມາດນຳພາການຈັດຕັ້ງປະຕິບັດ ແຜນຍຸດທະສາດ ປະຊາຄົມເສດຖະກິດອາຊຽນ ປີ 2021-2025 ໄດ້ສຳເລັດຈຳນວນ 807 ກິດຈະກຳ ໃນ ປີ 2024 ຊຶ່ງໄດ້ເພີ່ມຂຶ້ນ 34% ທຽບໃສ່ປີ 2023; ສາມາດນຳພາການຈັດຕັ້ງປະຕິບັດແຜນວຽກບູລິມະ ສິດເສດຖະກິດອາຊຽນ ປີ 2024 ໄດ້ສຳເລັດທັງໝົດ 14 ແຜນວຽກ ໃນໄລຍະການເປັນປະທານອາຊຽນ ຂອງ ສປປ ລາວ.
- ສຳເລັດກອງປະຊຸມລັດຖະມົນຕີ ພະລັງງານອາຊຽນ ຄັ້ງທີ 42 ທີ່ ສປປ ລາວ ເປັນເຈົ້າພາບໃນປີ 2024;
- ສປປ ລາວ ຍັງໄດ້ມີສ່ວນຮ່ວມຢ່າງຕັ້ງໜ້າເຂົ້າການເຈລະຈາການຄ້າລະດັບພາກພື້ນ ໃນເລື່ອງເສດຖະກິດດິ ຈິຕອນ, ສັນຍາການຄ້າສິນຄ້າຂອງອາຊຽນ (**ATIGA**), ແລະ ສັນຍາຂອບລະຫວ່າງອາຊຽນ-ຈີນ;
- ສຳເລັດການລົງນາມ ແລະ ໃຫ້ສັດຕະຍາບັນສິນທິສັນຍາວ່າດ້ວຍການຮ່ວມມືເສດຖະກິດແບບຮອບດ້ານ ລະດັບພາກພື້ນ **RCEP;**
- ສຳເລັດການເຈລະຈາຍົກລະດັບສັນຍາ ແລະ ເປີດຕະຫຼາດເພີ່ມຕື່ມກັບຄູ່ເຈລະຈາກັບອາຊຽນ.
- ໄດ້ມີການພົວພັນຮ່ວມມືໃນຂົງເຂດພະລັງງານ ແລະ ບໍ່ແຮ່ ໃນຂອບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດ ຕັ້ງສາກົນ.

4) **ຜົນສຳເລັດການເພີ່ມທະວີການຮ່ວມມື ແລະ ຂະຫຍາຍຕະຫຼາດສົ່ງອອກໄຟຟ້າຂອງ ສປປ ລາວ ໄປ ຕ່າງປະເທດ.** ໃນນັ້ນ, ສຳເລັດການສົ່ງອອກພະລັງງານໄຟຟ້າ ໄປປະເທດສິງກະໂປ ໂດຍຜ່ານລະບົບສາຍສົ່ງ ໄທ, ມາເລເຊຍ ໄລຍະທີ 1 (LTMS-PIP Phase 1) ຈຳນວນບໍ່ເກີນ 100 MW ໄດ້ເລີ່ມຈ່າຍໄຟ ໃນ ທ້າຍເດືອນ 6/2022; ສຳເລັດການປັບປຸງສັນຍາວ່າດ້ວຍການຄ້າພະລັງງານໄລຍະ II ລະຫວ່າງ ສປປ ລາວ ແລະ ກຳປູເຈຍ ແລະ ລົງນາມ ໃນວັນທີ 24/3/2024 ແລະ ສຳເລັດການລົງນາມແຜນປະຕິບັດງານ ລະຫວ່າງ ລັດວິສາຫະກິດ Rosatom (ຣັດເຊຍ) ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ

ລາວ ວ່າດ້ວຍ ການຮ່ວມມືດ້ານວຽກງານພະລັງງານນິວເຄຼຍເພື່ອສັນຕິ ສົກປີ 2025-2027 ໃນວັນທີ 31/07/2025;

5) **ຜົນສຳເລັດໃນການຜັນຂະຫຍາຍບັນດາພັນທະສັນຍາ ແລະ ຂອບການຮ່ວມມືດ້ານການຄ້າ ທີ່ ສປປ ລາວ ເປັນພາຄີ.** ໃນນັ້ນ, ສຳເລັດການສ້າງຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ມາດຕາ 10, 11 ແລະ 18 ຂອງກົດໝາຍວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜຸນຂອງປະເທດຜູ້ສົ່ງອອກ ພາຍໃຕ້ພັນທະສັນຍາອົງການການຄ້າໂລກ; ສຳເລັດການເຜີຍແຜ່ຜົນຂອງການທົບທວນນະໂຍບາຍການຄ້າ ຄັ້ງທຳອິດຂອງ ສປປ ລາວ ໃນປີ 2020; ສຳເລັດບົດວິເຄາະຜົນກະທົບຕໍ່ສິດທິພິເສດທາງການຄ້າຂອງ ສປປ ລາວ ທີ່ສົ່ງອອກໄປ ອີຢູ ,ຈີນ , ເກົາຫຼີ ແລະ ຍີ່ປຸ່ນ ພາຍຫຼັງຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ; ສຳເລັດການເຮັດບົດປະເມີນກາງສະໄໝການຈັດຕັ້ງປະຕິບັດແຜນແມ່ບົດປະຊາຄົມເສດຖະກິດອາຊຽນ 2025 ຂອງ ສປປ ລາວ ເພື່ອເຜີຍແຜ່ຜົນໄດ້ຮັບຈາກການເຊື່ອມໂຍງເສດຖະກິດດັ່ງກ່າວ ນັບຕັ້ງແຕ່ມີການສ້າງປະຊາຄົມເສດຖະກິດອາຊຽນ 2015 ໃຫ້ແກ່ພາກລັດ ແລະ ພາກເອກະຊົນ; ສຳເລັດການສ້າງແຜນວຽກ ຂອງ ສປປ ລາວ ສຳລັບປີ 2021-2025 ເພື່ອຈັດຕັ້ງປະຕິບັດແຜນແມ່ບົດປະຊາຄົມເສດຖະກິດອາຊຽນ 2025.

6) **ຜົນສຳເລັດການຮ່ວມມື ແລະ ເຊື່ອມໂຍງ ເພື່ອຍົກສູງການຄຸ້ມຄອງ ແລະ ສົ່ງເສີມການຜະລິດ**

- ຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ: ໄດ້ສຳເລັດບົດສຶກສາການສ້າງມູນຄ່າເພີ່ມການປຸງແຕ່ງສາລີ, ແຜນພັດທະນາແປ້ງມັນຕົ້ນ ແລະ ຢາງພາລາ, ສ້າງຖານຂໍ້ມູນເຄມີແຫ່ງຊາດ.
- ຮ່ວມມືກັບແມ່ນ້ຳຂອງ-ຍີ່ປຸ່ນ: ຈັດຕັ້ງປະຕິບັດວິໄສທັດການພັດທະນາອຸດສາຫະກຳແມ່ນ້ຳຂອງ ໄລຍະ 2.
- ຮ່ວມມືກັບກະຊວງເສດຖະກິດ, ການຄ້າ ແລະ ອຸດສາຫະກຳ ແລະ ສະມາຄົມສິ່ງແວດລ້ອມ ເພື່ອການພັດທະນາອຸດສາຫະກຳ ຂອງປະເທດຍີ່ປຸ່ນ: ໂຄງການພັດທະນາລະບົບຜູ້ຄວບຄຸມມົນລະພິດປະຈຳໂຮງງານ ແລະ ຜົນສຳເລັດອື່ນອີກຫຼາຍດ້ານ.
- ຮ່ວມມືກັບອົງການ **GIZ**: ສຳເລັດການຊຸກຍູ້ການເຈລະຈາການຈັດຕັ້ງປະຕິບັດການຄ້າໄມ້ແບບສະໝັກໃຈ ໂດຍສຳເລັດສ້າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ, ຕິດຕາມໄມ້ສົ້ນເຂົ້າ ແລະ ສົ້ນອອກ ເພື່ອໃຫ້ສອດຄ່ອງຕາມຫຼັກການຂອງສາກົນ, ຈັດຕັ້ງປະຕິບັດໂຄງການພັດທະນາສະຫຼາກສີຂຽວ ຢູ່ ສປປ ລາວ.
- ຮ່ວມມືກັບສະຫະພັນລັດເຊຍ ແລະ ສູນຂໍ້ມູນຂ່າວສານທາດໄຍຫີນຂາວ ກ່ຽວກັບວຽກງານການຄຸ້ມຄອງທາດໄຍຫີນຂາວຢ່າງປອດໄພ ໃນ ສປປ ລາວ.
- ຮ່ວມເຮັດວຽກກັບອົງການປະລໍາມະນູສາກົນ ເພື່ອກະກຽມການຮ່ວມມືໃນວຽກງານສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການນຳໃຊ້ທາດລັງສີ ໃນຂະແໜງການອຸດສາຫະກຳ ຂອງ ສປປ ລາວ.
- ຮ່ວມມືກັບ **ASEAN** ສປ ຈີນ: ໄດ້ສຳເລັດການເຈລະຈາຍົກລະດັບສັນຍາການຄ້າເສລີ ອາຊຽນ-ຈີນ ຂອງໝ່ວຍງານເສດຖະກິດສີຂຽວ.
- ຮ່ວມມືກັບ ອາຊອນາຈັກໄທ (**TICA**): ໂຄງການພັດທະນາອຸດສາຫະກຳປຸງແຕ່ງອາຫານ, ກະສິກຳ ແລະ ການຖ່າຍທອດເຕັກໂນໂລຊີຫຼັງການເກັບກ່ຽວ.

- ຮ່ວມມືກັບ ສ. ເກົາຫຼີ: ລິເລີ່ມຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງກ່ຽວກັບການສ້າງຍຸດທະສາດໃນການຕອບໂຕ້ອຸບປະຕິເຫດທາງເຄມີ. ປະຈຸບັນກຳລັງຢູ່ໃນຂັ້ນຕອນ ການຮ່າງຄູ່ມືແນະນຳກ່ຽວກັບວິທີການ ແລະ ມາດຕະການຕອບໂຕ້ອຸບປະຕິເຫດທາງເຄມີ.
- ຮ່ວມມືກັບອົງການ **UNIDO**: ສຳເລັດສ້າງເຕົາຕົ້ມເກືອ ທີ່ນຳໃຊ້ ເຊື້ອເພີງຊີວະມວນອັດເມັດ ໃຫ້ແກ່ໂຮງງານຜະລິດເກືອເວີນຄຳ ເພື່ອປ່ຽນແທນການນຳໃຊ້ເຊື້ອເພີງຈາກຖ່ານຫີນ ເພື່ອຫຼຸດຜ່ອນການຊື້ເຊື້ອເພີງຈາກຕ່າງປະເທດ ແລະ ຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ.
- ຮ່ວມມືກັບອົງການ **GGGI**: ຈັດຕັ້ງປະຕິບັດໂຄງການ ນຳໃຊ້ພະລັງງານຢ່າງມີປະສິດຕິພາບ ສຳລັບພາກອຸດສາຫະກຳ ໃນ ສປປ ລາວ.
- ສ້າງບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືດ້ານອຸດສາຫະກຳ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ແລະ ກະຊວງອຸດສາຫະກຳ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ສປ ຈີນ.
- ຮ່ວມມືພາຍໃນ: ຮ່ວມມືກັບສູນວິຊາການດ້ານການຈັດການສິ່ງແວດລ້ອມ, ຄະນະວິທະຍາສາດສິ່ງແວດລ້ອມ ເພື່ອພັດທະນາລະບົບຕິດຕາມການເຄື່ອນຍ້າຍ ແລະ ການກຳຈັດສິ່ງເສດເຫຼືອອຸດສາຫະກຳ ລວມທັງການບຳບັດ ແລະ ກຳຈັດສິ່ງເສດເຫຼືອອັນຕະລາຍຈາກໂຮງງານ, ປະຈຸບັນມີຜູ້ລົງທະບຽນເຂົ້ານຳໃຊ້ລະບົບແລ້ວ 100 ຫົວໜ່ວຍ.

7) **ຜົນສຳເລັດ ເພີ່ມຂີດຄວາມສາມາດໃຫ້ພາກລັດ ແລະ ທຸລະກິດ ດ້ວຍຫຼາຍຮູບແບບ** ເຊັ່ນ:

- ການຈັດສຳມະນາເຜີຍແຜ່ ກ່ຽວກັບເນື້ອໃນຂອງສັນຍາທີ່ ສປປ ລາວ ເປັນພາຄີ ຫຼາຍກວ່າ 20 ຄັ້ງ, ຈັດພິມປຶ້ມຄູ່ມື ແລະ ແຈກຢາຍເອກະສານທີ່ເປັນຂໍ້ມູນອ້າງອີງໃນການຈັດຕັ້ງປະຕິບັດສັນຍາ ຫຼາຍກວ່າ 3,000 ຫົວ ແລະ ເຜີຍແຜ່ຜ່ານສູນຂໍ້ມູນຂ່າວສານ, ຕົວເລກຈຳນວນຄັ້ງເຂົ້າຊົມເວັບໄຊ້ LSP ຕັ້ງແຕ່ມື້ເປີດໃຫ້ບໍລິການຈົນເຖິງປະຈຸບັນ ມີເຖິງ 29,507 ເທື່ອ ແລະ ຕົວເລກເຂົ້າໃຊ້ບໍລິການເວັບໄຊ້ ຈຳນວນ 6,519 ເທື່ອ. ຜ່ານການຈັດກິດຈະກຳດັ່ງກ່າວ ໄດ້ເຮັດໃຫ້ພະນັກງານ ທັງພາກລັດ ແລະ ທຸລະກິດ ສາມາດຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບວຽກງານເຊື່ອມໂຍງ, ຜົນປະໂຫຍດ ແລະ ສິ່ງທ້າທາຍຈາກການເຊື່ອມໂຍງໄດ້ໃນລະດັບດີ ຊຶ່ງສະແດງໃນການຫັນມານຳໃຊ້ສິດທິພິເສດຈາກບັນດາສັນຍາຕ່າງໆຫຼາຍຂຶ້ນ.
- ສຳເລັດບົດລາຍງານກ່ຽວກັບການກະກຽມຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາຂອງ ສປປ ລາວ;
- ສຳເລັດການລົງນາມສັນຍາວ່າດ້ວຍການຮັບຮອງຜົນກວດສອບສິດທິບັດເອີຣັບ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ອົງການສິດທິບັດເອີຣັບ.

8) **ຜົນສຳເລັດວຽກການຄ້າຕ່າງປະເທດ**

- ໄດ້ຍົກລະດັບລະບົບຖານຂໍ້ມູນສະຖິຕິການນຳເຂົ້າ-ສົ່ງອອກໃຫ້ເປັນລະບົບອອນລາຍ, ຕິດຕັ້ງລະບົບອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທາງອີເລັກໂຕຣນິກ (e-CO);
- ສົ່ງເສີມ ແລະ ອຳນວຍຄວາມສະດວກດ້ານການບໍລິການຂົນສົ່ງສິນຄ້າຜ່ານແດນ ພາຍໃຕ້ສັນຍາອຳນວຍຄວາມສະດວກການຂົນສົ່ງຂ້າມຊາຍແດນ ຂອງບັນດາປະເທດລຸ່ມແມ່ນ້ຳຂອງ (GMS-CBTA);

9) **ຜົນສຳເລັດວຽກຊັບສິນທາງປັນຍາ**

- ເຊັນບົດບັນທຶກຄວາມເຂົ້າໃຈສອງຝ່າຍກັບກັບອົງການຊັບສິນທາງປັນຍາ ໂລກ (WIPO) ໃນເລື່ອງການແກ້ໄຂຂໍ້ຂັດແຍ່ງ;

- ສຳເລັດການປັບປຸງກົດໝາຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງລຸ່ມກົດໝາຍ ຈຳນວນ 5 ສະບັບ.

ແຜນງານທີ 2: ສົ່ງເສີມການພັດທະນາອຸດສາຫະກຳ ແລະ ການຜະລິດເປັນສິນຄ້າ ຕິດພັນກັບຕະຫຼາດ

- ສົ່ງເສີມ ແລະ ພັດທະນາກຸ່ມອຸດສາຫະກຳທີ່ມີຢູ່ໃນປະຈຸບັນ ແລະ ອຸດສາຫະກຳທີ່ມີທ່າແຮງ ເຊັ່ນ: ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ອຸດສາຫະກຳແຜ່ນແພ, ອຸດສາຫະກຳວັດສະດຸກໍ່ສ້າງ, ອຸດສາຫະກຳປຸງແຕ່ງຜະລິດຕະພັນຈາກກະສິກຳ (ທີ່ບໍ່ແມ່ນສະບຽງອາຫານ) ແລະ ປ່າໄມ້, ອຸດສາຫະກຳປຸງແຕ່ງແຮ່ທາດໂລຫະ ແລະ ເຄມີອຸດສາຫະກຳ, ອຸດສາຫະກຳເຄື່ອງໃຊ້ໄຟຟ້າ ແລະ ຊິ້ນສ່ວນອເລັກໂຕຣນິກ, ອຸດສາຫະກຳພາຫະນະ ແລະ ກົນຈັກຮັບໃຊ້ກະສິກຳ, ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່ ຊຶ່ງມີໂຮງງານເກີດໃໝ່ ເຊັ່ນ: ໄມ້ອັດ (ແຂວງວຽງຈັນ), ແປ້ງມັນຕົ້ນ (ອຸດົມໄຊ), ເຈ້ຍຈາກໄມ້ປ່ອງ (ແຂວງວຽງຈັນ), ໂຮງງານປຸ໋ຍ (ສະຫວັນນະເຂດ), ຢາງພາລາ, ໂຮງງານຜະລິດຊີມັງກາມັງກອນ (ແຂວງຫົວພັນ), ໂຮງງານຜະລິດຊີມັງຈຽງເດີ (ແຂວງອຸດົມໄຊ), ໂຮງງານຜະລິດຄອນກຣີດແຫຼວ ແລະ ດິນບ່ອກ, ໂຮງງານຜະລິດປະຕູມ້ວນ, ໂຮງງານຜະລິດໄມ້ອັດ, ເຫຼັກຕະປູ, ໜາມໝາກຈັບ, ຕາໜ່າງຮົ້ວ (ນະຄອນຫຼວງ), ໂຮງງານຫຼອມໂລຫະ (ນະຄອນຫຼວງ), ຊີລິຄອນ (ແຂວງອຸດົມໄຊ), ໂຮງງານຜະລິດເຄມີ (ປຸ໋ຍກາລີ, ໂປຼມມິນ, ໂຊດາໄຟ, ອາຊິດຊຸຣຟູຣິກ 20% ແຂວງຄຳມ່ວນ), ຜະລິດຕະພັນເຄມີຂັ້ນຕົ້ນທີ່ເປັນຫົວເຊື້ອໃນການຜະລິດຢາປາບສັດຕູພືດ (ນະຄອນຫຼວງວຽງຈັນ), ໂຮງງານກັ່ນນ້ຳມັນ (ຊຽງຂວາງ), ໂຮງງານຜະລິດໂຟມຫຸ້ມຫໍ່ໝາກໄມ້ 01 ແຫ່ງ (ແຂວງວຽງຈັນ), ຂະຫຍາຍກຳລັງການຜະລິດເປົ້າ (ແຂວງວຽງຈັນ), ຜະລິດເຈ້ຍຊັ້ນເປເປີ (ສະຫວັນນະເຂດ). ພ້ອມດຽວກັນນັ້ນ ມີໂຮງງານໄດ້ມາດຖານ ແລະ ຮັບປະກັນດ້ານຄວາມປອດໄພ ເປັນຕົ້ນໂຮງສີເຂົ້າໄດ້ຮັບຢັ້ງຢືນ GMP 01 ແຫ່ງ ແລະ ໂຮງງານຂ້າສັດໄດ້ຮັບຢັ້ງຢືນ GMP 01 ແຫ່ງ, ໂຮງງານຜະລິດຢາໄດ້ຮັບຢັ້ງຢືນ GMP ທຸກໂຮງງານ. ນອກນີ້ ໂຮງງານນ້ຳດື່ມ. ຂະນະດຽວກັນ ຄວາມຄືບໜ້າໃນການເພີ່ມຈຳນວນທຸລະກິດລາວທີ່ຜ່ານການຢັ້ງຢືນຮັບຮອງມາດຕະຖານ ISO, HACCP ຫຼື ອຸດສາຫະກຳສີຂຽວຍັງມີຢູ່ຢ່າງຈຳກັດ.
- **ການສົ່ງເສີມ ແລະ ພັດທະນາການຄ້າ**: ອອກໃບອະນຸຍາດນຳໃຊ້ການໝາຍສິນຄ້າໂອດອບ ໄດ້ທັງໝົດ 343 ຫົວໜ່ວຍ, ມີ 1.243 ຜະລິດຕະພັນສິນຄ້າ, ກວມເອົາ 298 ບ້ານ, ໃນ 114 ເມືອງ ໃນຂອບເຂດທົ່ວປະເທດ; ຈົດທະບຽນເຄື່ອງໝາຍການຄ້າ 16,107 ເຄື່ອງໝາຍ, ຈົດປົກປ້ອງ ສິນຄ້າລາວໃນຕະຫຼາດຕ່າງປະເທດ ເຊັ່ນ: ເບຍລາວ, ການ້ຳດື່ມລາວ ແລະ ສິນຄ້າອື່ນໆ. ສົ່ງເສີມຫົວໜ່ວຍທຸລະກິດສິນຄ້າໂອດອບ ແລະ ສິນຄ້າທ່າແຮງຂອງລາວ ເຂົ້າໄປວາງຂາຍສິນຄ້າຢູ່ໃນຮ້ານສະດວກຊື້, ຊຸບເປີມາເກັດ, ດີມາກ (D-Mart), ມິນິບິກຊີ ໃນ 61 ສາຂາໃນນະຄອນຫຼວງວຽງຈັນ ທັງໝົດ ຈຳນວນ 16 ຫົວໜ່ວຍ 90 ລາຍການຜະລິດຕະພັນ. ໄດ້ຮັບຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ 2021 ຫາ 2025 ລວມທັງໝົດ 16,561 ສະບັບ, ໃນນັ້ນ ສິດທິບັດ 287 ສະບັບ; ອະນຸສິດທິບັດ: 29 ສະບັບ; ແບບອຸດສາຫະກຳ: 132 ແບບ; ເຄື່ອງໝາຍການຄ້າ ຈຳນວນ 16,107 ເຄື່ອງໝາຍ; ຖິ່ນກຳເນີດ: ຈຳນວນ 2 ພັນພືດໃໝ່ ຈຳນວນ 4 ສະບັບ. ນອກຈາກນີ້ ຍັງໄດ້ຮັບ ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຈຳນວນ 140

ສະບັບ ແລະ ໄດ້ຮັບຄຳຮ້ອງ ກໍລະນີການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ທັງໝົດ ຈຳນວນ 316 ສາມາດແກ້ໄຂໄດ້ 90% ຂຶ້ນໄປ.

- **ການເຂົ້າຮ່ວມງານວາງສະແດງຢູ່ພາຍໃນ ແລະ ຕ່າງປະເທດ:** ກອຄ ໄດ້ສະໜັບສະໜູນການມີສ່ວນຮ່ວມ ຂອງພາກເອກະຊົນໃນງານວາງສະແດງສິນຄ້າໃໝ່ ສັນຈອນຕາມສະຖານທີ່ຕ່າງໆ (Road Show), ງານ ຕະຫຼາດນັດ ແລະ ວາງສະແດງສິນຄ້າ ຕ່າງໆ; ໂດຍສະເພາະ ສິ່ງທີ່ພົ້ນເດັ່ນໃນປີ 2024 ແມ່ນການຈັດງານ ເວທີການປະຊຸມດ້ານວັດທະນະທຳ, ເສດຖະກິດ ແລະ ການຄ້າ ລາວ-ຈີນ ຄັ້ງທຳອິດ ໂດຍມີການສະແດງ ສິນຄ້າຈາກ 18 ແຂວງ ຂອງລາວ.
- **ວຽກສົ່ງເສີມການຜະລິດເປັນສິນຄ້າ:** ໄດ້ຈັດຕັ້ງປະຕິບັດກົນໄກດຸ່ນດ່ຽງເຂົ້າກົນໃນໄລຍະທົດລອງຢູ່ 5 ແຂວງເປົ້າໝາຍ ພາຍໃຕ້ໂຄງການສົ່ງເສີມການຜະລິດກະສິກຳເປັນສິນຄ້າ ຊຶ່ງໄດ້ສຳເລັດຂັ້ນຕອນການເກັບ ກຳຂໍ້ມູນ ກ່ຽວກັບເຂົ້າ ຈາກບັນດາຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງເຊັ່ນ: ບໍລິສັດນຳເຂົ້າ-ສົ່ງອອກເຂົ້າ, ໂຮງສີເຂົ້າ, ໂຮງງານປຸງແຕ່ງທີ່ນຳໃຊ້ເຂົ້າເປັນວັດຖຸດິບ ແລະ ປະຈຸບັນ ກຳລັງດຳເນີນການວິເຄາະຂໍ້ມູນ ແລະ ສ້າງເປັນໃບດຸ່ນດ່ຽງເຂົ້າ ເພື່ອເປັນບ່ອນອີງໃນການກຳນົດນະໂຍບາຍກ່ຽວກັບການພິຈາລະນານຳເຂົ້າ ແລະ ສົ່ງອອກ ເຂົ້າ ຂອງແຂວງ. ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດກະສິກຳ (AMIS), ຍຸດທະສາດສົ່ງ ອອກເຂົ້າ, ກາໝາຍຄຸນນະພາບສິນຄ້າກະສິກຳ, ນະໂຍບາຍສົ່ງເສີມມາດຕະຖານໂຮງສີເຂົ້າ: ສຳເລັດການ ສ້າງຮ່າງຄູ່ມື ຈັດຕັ້ງປະຕິບັດການປັບປຸງໂຮງງານສີເຂົ້າໃຫ້ໄດ້ມາດຕະຖານໃນຂັ້ນພື້ນຖານ, ປັບປຸງລະບຽບ ການນຳເຂົ້າ ແລະ ສົ່ງອອກ: ສຳເລັດການສ້າງປຶ້ມຄູ່ມືກ່ຽວກັບການສ້າງກົນໄກການດຸ່ນດ່ຽງເຂົ້າກົນ ຢູ່ ສປປ ລາວ. ພ້ອມນັ້ນ, ຍັງໄດ້ສຳເລັດການປັບປຸງຄຳສັ່ງວ່າດ້ວຍການລົບລ້າງໃບອະນຸຍາດນຳເຂົ້າລົດແທັກ ເຕ້ ຮັບໃຊ້ການຜະລິດກະສິກຳ, ສ້າງຄວາມເຂັ້ມແຂງໃຫ້ແກ່ໂຮງສີເຂົ້າ ເພື່ອຍົກລະດັບມາດຕະຖານການ ບໍລິຫານດ້ານຄຸນນະພາບ (GMP/GHP & HACCP);
- ວຽກເຂດ ແລະ ນິຄົມອຸດສາຫະກຳ: ສຳເລັດການສ້າງດຳລັດ ວ່າດ້ວຍນິຄົມອຸດສາຫະກຳ (ດຳລັດລວມ), ດຳ ລັດວ່າດ້ວຍນິຄົມອຸດສາຫະກຳ ອຳມະຕະ ແລະ ດຳລັດ ວ່າດ້ວຍນິຄົມອຸດສາຫະກຳ ອາຊີໂປຕາສ; ທົ່ວ ປະເທດ 106 ເຂດ, ເນື້ອທີ່ທັງໝົດ 32.472 ເຮັກຕາ, ມີໂຮງງານຕັ້ງຢູ່ຫຼາຍກວ່າ 230 ແຫ່ງ ແລະ ນິຄົມ ອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ, ມີຜູ້ລົງທຶນ 71 ບໍລິສັດ, ມີທຶນຈົດທະບຽນ 81 ລ້ານກວ່າ ໂດລາສະຫະລັດ;
- **ວຽກຫັດຖະກຳ:** ໄດ້ອອກໃບຢັ້ງຢືນດຳເນີນກິດຈະການສູນສົ່ງເສີມຫັດຖະກຳ ຈຳນວນ 15 ສູນ ຢູ່ທີ່ ນະຄອນຫຼວງວຽງຈັນ, ຫຼວງພະບາງ, ຫຼວງນ້ຳທາ, ອຸດົມໄຊ ແລະ ຈຳປາສັກ. ອອກໃບຢັ້ງຢືນນຳໃຊ້ກາໝ າຍຫັດຖະກຳແຫ່ງຊາດ ໃຫ້ 12 ຫົວໜ່ວຍ ມີ 03 ຂະແໜງ: ແກະສະຫຼັກໄມ້, ເຄື່ອງປະດັບ-ເອຢ້ອງ, ແຜ່ນແພ ແລະ ເຄື່ອງປັ້ນດິນເຜົາ ທີ່ນະຄອນຫຼວງວຽງຈັນ. ຫຼວງພະບາງ ແລະ ຈຳປາສັກ. ສະຕິຖິຫັດຖະກຳ ທົ່ວປະເທດ ມີໂຮງງານຫັດຖະກຳ ທັງໝົດ 161 ແຫ່ງ; ໃນນັ້ນ ໂຮງງານຫັດຖະກຳຂະໜາດໃຫຍ່ມີ 4 ແຫ່ງ, ໂຮງງານຫັດຖະກຳຂະໜາດກາງ 18 ແຫ່ງ, ໂຮງງານຫັດຖະກຳຂະໜາດນ້ອຍ 139 ແຫ່ງ, ໂຮງ ຊ່າງຫັດຖະກຳປະເພດ I (ອາຊີບຕົ້ນຕໍ) 1.248 ແຫ່ງ, ປະເພດ II (ອາຊີບສຳຮອງ) 9.946 ແຫ່ງ, ສ້າງ

ວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ປະຊາຊົນຈຳນວນຫຼວງຫຼາຍ ໃນນັ້ນ ໂຮງງານຫັດຖະກຳມີແຮງງານ ທັງ ໝົດ 9.148 ຄົນ, ໂຮງຊ່າງຫັດຖະກຳປະເພດ I ມີ 1,357 ຄົນ ແລະ ປະເພດ II ມີເຖິງ 24,742 ຄົນ.

- ໄດ້ສ້າງຖານຂໍ້ມູນໂຮງງານອຸດສາຫະກຳ, ຖານຂໍ້ມູນສານເຄມີແຫ່ງຊາດ, ໄດ້ຜັດທະນາເວັບໄຊ ທີ່ ສາທາລະນະຊົນເຂົ້າເຖິງໄດ້. ສຳລັບເຜີຍແຜ່ລະບຽບການ ແລະ ກົດລະບຽບຕ່າງໆທັງໝົດ.

ແຜນງານທີ 3 ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພາກທຸລະກິດ

- **ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ພາກທຸລະກິດ:** ສຳເລັດການປັບປຸງກົດໝາຍວ່າດ້ວຍວິ ສາຫະກິດ ສະບັບປັບປຸງປີ 2022 ແລະ ສຳເລັດການເປີດໂຕເວັບໄຊຖານຂໍ້ມູນດ້ານລະບຽບການຂໍຍາດດຳ ເນີນທຸລະກິດ, ໄດ້ສຸມໃສ່ປັບປຸງກົດລະບຽບໃຫ້ມີຄວາມກະທັດຮັດ ດ້ວຍການຕັດຂັ້ນຕອນທີ່ບໍ່ຈຳເປັນ ສຳລັບ ການເລີ່ມຕົ້ນ ແລະ ດຳເນີນທຸລະກິດ ໂດຍຜ່ານການຜັດທະນາລະບົບຂຶ້ນທະບຽນວິສາຫະກິດ ທາງ ເອເລັກໂຕຣນິກ (online electronic business registration). ກອຄ ໄດ້ຫຼຸດຈຳນວນຂັ້ນຕອນ ການຂຶ້ນທະບຽນວິສາຫະກິດ ຈາກ 9 ຂັ້ນຕອນ ເຫຼືອພຽງ 1 ຂັ້ນຕອນ ແລະ ຫຼຸດກຳນົດໄລຍະເວລາຕາມ ກົດ ໝາຍເຫຼືອ 17 ວັນ, ສົມທຽບກັບລະດັບພື້ນຖານ 67 ວັນ ຕາມເອກະສານລາຍງານປະເມີນໂຄງການ ຂອງທະນາຄານໂລກ (World Bank Project Appraisal Document) ປີ 2018. ດ້ວຍການສະໜັ ບສະໜູນ ຈາກໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (LCTP), ໄດ້ຍົກເລີກຂໍ້ກຳນົດກ່ຽວກັບ ການອະນຸມັດ ເນື້ອໃນປ້າຍຊື່ບໍລິສັດ ແລະ ການປະຊຸມປະຖົມນິເທດດ້ານ ວຽກງານອາກອນ, ເຮັດໃຫ້ຂັ້ນຕອນການອະນຸມັດ ແລະ ຄວັດການປະທັບ ຂອງ ບໍລິສັດ ງ່າຍຂຶ້ນ, ໄດ້ລວມ ເອົາການຂຶ້ນທະບຽນອາກອນ ແລະ ອາກອນມູນຄ່າເພີ່ມ (VAT) ໄວ້ໃນຂັ້ນຕອນການອອກໃບທະບຽນວິ ສາ ຫະກິດ (ERC) ແລະ ຍ້າຍຂັ້ນຕອນການຈົດທະບຽນກົດລະບຽບ ຂອງ ບໍລິສັດ ແລະ ການກວດສອບ ປະ ຫວັດນັກລົງທຶນໄປຢູ່ຫຼັງຈາກການຂຶ້ນທະບຽນວິສາຫະກິດ. ໃນຂະນະດຽວກັນ, ກອຄ ຍັງມີຄວາມຄືບ ໜ້າຊັກຊ້າ ໃນການລົບລ້າງ ຫຼື ປັບປຸງຂັ້ນຂອດ ການອອກໃບອະນຸຍາດດຳເນີນທຸລະກິດ (Business Operating Licenses), ການຫຼຸດມາດຕະການກີດກັນການຄ້າ ທີ່ບໍ່ແມ່ນພາສີ (Non-Tariff Measures) ແລະ ການຈັດຕັ້ງປະຕິບັດລະບົບການຂຶ້ນທະບຽນວິສາຫະກິດອອນລາຍ ທາງເອເລັກໂຕຣ ນິກ ໃຫ້ບັນລຸຜົນໄດ້ຢ່າງເຕັມສ່ວນ.ການສົ່ງເສີມບົດບາດຍິງຊາຍ ໂດຍສະເພາະແມ່ຍິງເຄື່ອນໄຫວທຸລະກິດ ກວມເອົາ 47%.
- ການອຳນວຍຄວາມສະດວກທາງດ້ານການຄ້າ: ການສຶກສາເວລາກວດປ່ອຍສິນຄ້າ ປີ **2024** ໄດ້ສະແດງ ໃຫ້ເຫັນວ່າ: ເວລາສະເລ່ຍໃນການກວດປ່ອຍສິນຄ້າຢູ່ດ່ານ ແມ່ນຫຼຸດລົງ 32% ທຽບໃສ່ ປີ **2022** ແລະ ເວລາສະເລ່ຍ ໃນການອອກອະນຸຍາດ, ຢັ້ງຢືນ ການນຳເຂົ້າ-ສົ່ງອອກສິນຄ້າແມ່ນຫຼຸດລົງ 41% ເນື່ອງຈາກ ວຽກງານດັ່ງກ່າວຕິດພັນກັບຫຼາຍຂະແໜງການທີ່ກ່ຽວຂ້ອງ, ສົມທົບກັບກະຊວງ ຍທຂ ແລະ ພາກສ່ວນ ກ່ຽວຂ້ອງ ເພື່ອແກ້ໄຂບັນຫາທ່າບົກ ກ່ຽວກັບການບໍລິການຢູ່ດ່ານສາກົນທ່າບົກ ທີ່ມີລາຄາຄ່າບໍລິການສູງ, ມີຫຼາຍຂັ້ນຕອນ ແລະ ຫຼາຍເອກະສານ ເຮັດໃຫ້ເພີ່ມຕົ້ນທຶນໃນການນຳເຂົ້າ ແລະ ສົ່ງອອກ.

- **ວຽກສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ:** ສຳເລັດການປັບປຸງແລ້ວເປັນກົດ ໝາຍ ຈນກ ເລກທີ **16/**ສພຊ ແລະ ດຳລັດ ແບ່ງຂະໜາດ ຈນກ ເລກທີ **04/**ລບ; ປັບປຸງດຳລັດວ່າດ້ວຍກອງ ທຶນສົ່ງເສີມ ຈນກ ເລກທີ **05/**ລບ; ສຳເລັດການສ້າງ ດຳລັດ ວ່າດ້ວຍ ກອງທຶນສົ່ງເສີມຜະລິດສິນຄ້າລາວ; ສ້າງແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງໄລຍະປີ **2021-2025.** ສຳ ເລັດກົນໄກຄ້ຳປະກັນສິນເຊື່ອສຳລັບ **SME;** ການເຂົ້າເຖິງທຶນ: ສະໜອງສິນເຊື່ອໃຫ້ **SME** ລວມມູນຄ່າ **1,725** ກວ່າ ຕື້ກີບ, ໃນນັ້ນ, ຂະແໜງກະສິກຳ ກວມ **37.38%,** ການຄ້າ **24.43%,** ບໍລິການ **24.06%,** ອຸດສາຫະກຳ **10.02%** ແລະ ຫັດຖະກຳ **4.11%.** ສ້າງຕັ້ງ ບໍລິສັດ ຄ້ຳປະກັນສິນເຊື່ອ ເພື່ອຈະສາມາດ ຊ່ວຍ ຈນກ ທີ່ຕ້ອງການເຂົ້າເຖິງແຫຼ່ງທຶນ ແຕ່ບໍ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ ຍ້ອນບໍ່ມີຫຼັກຊັບຄ້ຳປະກັນ ໃຫ້ສາມາດເຂົ້າເຖິງແຫຼ່ງທຶນໄດ້;
- **ວຽກງານມາດຕະຖານ ແລະ ວັດແທກ:** ອອກໃບຢັ້ງຢືນແບບອຸດສາຫະກຳ ຈຳນວນ **30** ສະບັບ ແລະ ໃບຢັ້ງຢືນຕໍ່ອາຍຸແບບອຸດສາຫະກຳ ຈຳນວນ **25** ສະບັບ ແລະ ປະກາດໃຊ້ ມາດຕະຖານແຫ່ງຊາດ ລວມມີ ທັງໝົດ **11** ຂົງເຂດ;
- ວຽກການຄຸ້ມຄອງຊັບສິນທາງປັນຍາ: ຈົດທະບຽນເຄື່ອງໝາຍການຄ້າ **1.465** ເຄື່ອງໝາຍ, ຕໍ່ອາຍຸເຄື່ອງໝ າຍ ການຄ້າ **2.810** ເຄື່ອງໝາຍ.

ແຜນງານທີ 4 ສົ່ງເສີມ ແລະ ພັດທະນາການຄ້າໃຫ້ກ້າວທັນກັບສະພາບການໃໝ່

- **ການສ້າງຖານຂໍ້ມູນ ແລະ ພັດທະນາລະບົບການຄ້າ ທັນສະໄໝ:** ການຄຸ້ມຄອງ ແລະ ພັດທະນາການຄ້າ, ສູນ ຂໍ້ມູນຂ່າວສານການຄ້າລາວ (Lao Trade Portal) ໄດ້ຮັບການປັບປຸງ ແລະ ຍົກລະດັບຂຶ້ນໃຫ້ເປັນມິດ ກັບຜູ້ໃຊ້ຫຼາຍຂຶ້ນ, ໄດ້ມີການສ້າງນິຕິກຳຂຶ້ນເພື່ອສົ່ງເສີມ ແລະ ຄຸ້ມຄອງການຄ້າທາງເອເລັກໂຕຣນິກ (e-commerce), ໄດ້ອອກແບບລະບົບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອອນລາຍ ໂດຍທາງເອ ເລັກໂຕຣນິກ (e-CO) ແລະ ໄດ້ຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕາມສັນຍາການຄ້າ ສິນຄ້າ ຂອງອາຊຽນ ATIGA (e-Form D), ໄດ້ປັບປຸງລະບຽບການກ່ຽວກັບການນຳເຂົ້າຊົ່ວຄາວ ແລະ ສິນຄ້າຜ່ານແດນ. ໄດ້ເອົາໃຈໃສ່ວຽກງານປົກປ້ອງຜູ້ຊົມໃຊ້ ດ້ວຍຫຼາຍຮູບແບບ ແລະ ການກວດກາສິນຄ້ານອກລະບົບ, ສິນຄ້າລອກຮຽນແບບ, ສິນຄ້າບໍ່ໄດ້ຄຸນນະພາບ... ໃນການປົກປ້ອງຜູ້ຊົມໃຊ້.
- **ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ:** ໄດ້ພັດທະນາຮູບແບບການຕິດຕາມການເໜັງຕີງ ຂອງລາຄາ ສິນຄ້າທີ່ລະບຸໄວ້ໃນດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 474/ນຍ ຊຶ່ງລວມທັງ ບັນຊີ ກ (ສິນຄ້າ ຄວບຄຸມລາຄາ) ແລະ ບັນຊີ ຂ (ສິນຄ້າຕິດຕາມການເໜັງຕີງ ຂອງລາຄາ) ແລະ ລາຍງານໃນແຕ່ລະເດືອນ ກ່ຽວກັບການເໜັງຕີງຂອງລາຄາສິນຄ້າ, ພ້ອມນັ້ນ, ກໍໄດ້ປັບປຸງ ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 331/ນຍ ກ່ຽວກັບທຸລະກິດນ້ຳມັນເຊື້ອໄຟ.
- **ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ:** ໄດ້ປະເມີນຜົນແຜນດຳເນີນງານການອຳນວຍຄວາມ ສະດວກດ້ານການຄ້າ ໄລຍະ 2017-2022, ໄດ້ກະກຽມແຜນດຳເນີນງານການອຳນວຍຄວາມສະດວກ

ດ້ານການຄ້າ ແລະ ຂົນສົ່ງ ສຳລັບໄລຍະປີ 2025-2029 ແລະ ໄດ້ເຮັດໃຫ້ລະບຽບການນຳເຂົ້າ-ສົ່ງອອກ ມີຄວາມກະທັດຮັດຂຶ້ນ ເພື່ອຫຼຸດຜ່ອນເວລາໃນການອະນຸມັດ ແລະ ການແຈ້ງພາສີສິນຄ້າ. ລວມທັງນິຕິກຳທີ່ຕິດພັນກັບລາຍການສິນຄ້າທີ່ຕ້ອງຂໍອະນຸຍາດ ແລະ ເກືອດຫ້າມ ນຳເຂົ້າ-ສົ່ງອອກ, ການຂໍອະນຸຍາດນຳເຂົ້າຊົ່ວຄາວ, ການນຳເຂົ້າເພື່ອສົ່ງອອກຕໍ່ ແລະ ການຜ່ານແດນສິນຄ້າ.

ແຜນງານທີ 5 ເພີ່ມປະສິດທິພາບການຄຸ້ມຄອງມະຫາພາກ, ການແບ່ງຂັ້ນຄຸ້ມຄອງກັບທ້ອງຖິ່ນ, ການນຳພາການຈັດຕັ້ງທຸລະກິດ ແລະ ຫົວໜ່ວຍທຸລະກິດ ທີ່ຂຶ້ນກັບກະຊວງ.

- **ວຽກການພັດທະນາຊັບພະຍາກອນມະນຸດ:** ໄດ້ມີເປົ້າໝາຍໃນການພັດທະນາປະສິດທິພາບ ຂອງ ກະຊວງ ອຄ ໂດຍການຍົກລະດັບການພັດທະນາບຸກຄະລາກອນ, ການປັບປຸງໂຄງປະກອບການຈັດຕັ້ງຄືນໃໝ່ ແລະ ສົ່ງເສີມຄ່ານິຍົມຕົ້ນຕໍ ຂອງຄວາມໂປ່ງໃສ ແລະ ຄວາມເປັນທຳ. ໃນປີ 2025, ຫຼາຍກວ່າ 57 ສ່ວນຮ້ອຍ ຂອງບຸກຄະລາກອນ ຂອງ ກະຊວງ ອຄ ເປັນຜູ້ສຳເລັດການສຶກສາລະດັບປະລິນຍາຕີ ແລະ 16,5 ສ່ວນຮ້ອຍ ແມ່ນມີວຸດທິປະລິນຍາໂທ ຫຼື ສູງກວ່າ.
- **ວຽກການປັບປຸງກົງຈັກການຈັດຕັ້ງ ແລະ ປະສິດທິພາບການບໍລິຫານງານ ຂອງກະຊວງ:** ໃນໄລຍະແຜນພັດທະນາ 5 ປີ 2021–2025, ກະຊວງ ອຄ ໄດ້ປັບຂະບວນການເຮັດວຽກໃຫ້ກະທັດຮັດງ່າຍດາຍຂຶ້ນ, ແລະ ໄດ້ສ້າງລະບຽບການໃໝ່ໆ ທີ່ຄອບຄຸມດ້ານການສົ່ງເສີມການຄ້າ, ອຸດສາຫະກຳ ແລະ ຫັດຖະກຳ, ການສ້າງຄວາມເຂັ້ມແຂງໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs), ການພັດທະນາຕະຫຼາດ, ຊັບສິນທາງປັນຍາ, ຂະບວນການນຳເຂົ້າ-ສົ່ງອອກ ແລະ ການກວດສອບມາດຕະຖານ. ກະຊວງ ອຄ ໄດ້ປະສານງານໃກ້ຊິດກັບອົງການຈັດຕັ້ງສາກົນ ແລະ ໄດ້ຮັບຜົນປະໂຫຍດຈາກການສະໜັບສະໜູນທາງການເງິນ ແລະ ທາງດ້ານເຕັກນິກວິຊາການ.
- **ວຽກການປັບປຸງ ແລະ ສ້າງນິຕິກຳ:** ໄດ້ປັບປຸງແບບແຜນວິທີເຮັດວຽກ ໃຫ້ກະທັດຮັດ, ສ້າງລະບຽບການສົ່ງເສີມການຄ້າ, ອຸດສາຫະກຳ ແລະ ຫັດຖະກຳ, ສ້າງຄວາມເຂັ້ມແຂງໃຫ້ ຈນກ, ພັດທະນາຕະຫຼາດ-ຕາໜ່າງການຈຳໜ່າຍ, ຊັບສິນທາງປັນຍາ, ການນຳເຂົ້າ-ສົ່ງອອກ ແລະ ການກວດສອບມາດຕະຖານ. ໄດ້ປັບປຸງ ແລະ ສ້າງນິຕິກຳໃໝ່ ເຊັ່ນ ປັບກົດໝາຍວິສາຫະກິດ, ປັບກົດໝາຍ ຈນກ ແລະ ດຳລັດແບ່ງຂະໜາດ ຈນກ, ດຳລັດກອງທຶນສົ່ງເສີມ ຈນກ, ດຳລັດຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ, ດຳລັດທຸລະກິດນ້ຳມັນເຊື້ອໄຟ, ດຳລັດກອງທຶນສົ່ງເສີມຜະລິດສິນຄ້າລາວ ແລະ ດຳລັດນິຄົມອຸດສາຫະກຳ. ປະຈຸບັນ, ກະຊວງ ອຄ ແລະ ພບ ມີກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ມີຜົນບັງຄັບໃຊ້ ຫຼາຍກວ່າຈຳນວນ 300 ສະບັບ ປະກອບດ້ວຍ: ກົດໝາຍ 15 ສະບັບ, ດຳລັດ ຫຼາຍກວ່າ 15 ສະບັບ, ທັງໝົດໄດ້ຖືກເຜີຍແຜ່ໃນເວັບໄຊ້ https://law.moic.gov.la .

ແຜນການປັດຈຸບັນ ຂອງ ກະຊວງ ອຄ ໄດ້ນຳໃຊ້ແນວທາງ "ຈາກລຸ່ມຂຶ້ນເທິງ" (bottom-up approach), ໂດຍແຕ່ລະກົມວິຊາການໄດ້ສັງລວມເອົາກິດຈະກຳການເຄື່ອນໄຫວທີ່ເປັນວຽກບຸລິມະສິດຕາມໜ້າທີ່ພາລະບົດບາດ ຂອງຕົນມາລວບລວມໄວ້ເປັນບົດຢ່າງຄົບຖ້ວນ. ເຖິງຢ່າງໃດກໍຕາມ, ບໍ່ໄດ້ມີການຈັດລຽງລຳດັບຄວາມສຳຄັນ ຫຼື ການລຽງລຳດັບກ່ອນຫຼັງສຳລັບບັນດາກິດຈະກຳເຫຼົ່ານັ້ນ. ແຕ່ໃນຄວາມເປັນຈິງ, ກະຊວງ ອຄ, ໃນຖານະກະຊວງທີ່ປະສານງານ

ໂຄງການ ສິ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (LCTP), ແມ່ນໄດ້ໃຫ້ຄວາມສຳຄັນ ແລະ ຈັດລຽງລຳດັບບັນດາກິດຈະກຳ ຂອງ LCTP. ໂຄງການ LCTP ທີ່ມີຜູ້ໃຫ້ທຶນຈາກຫຼາຍຝ່າຍ ໄດ້ຈັດວຽກບຸລິມະສິດ ຕາມນີ້: (1) ການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ພາກທຸລະກິດ, (2) ການຫຼຸດຕົ້ນທຶນ (ຄ່າໃຊ້ຈ່າຍສິ້ນເປືອງ) ທາງການຄ້າ ແລະ (3) ການສ້າງຂີດຄວາມສາມາດໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໂດຍຜ່ານການຈັດຫາທຶນສົມທົບແບບຊ່ວຍເຫຼືອລ້ຳ (matching grants). ໂຄງການ LCTP ໄດ້ເຮັດໃຫ້ກະຊວງ ອຄ ສາມາດນຳໃຊ້ເງິນທຶນ ຂອງລັດຈຳນວນເກີດປະໂຫຍດ ຈຳກັດ ເພື່ອເປັນໄມ້ງ້ຶດໃນການດຶງດູດແຫຼ່ງຊັບພະຍາກອນທາງວິຊາການ ແລະ ແຫຼ່ງທຶນ ຂອງປວງຊົນ ໃນການເພີ່ມຜົນປະໂຫຍດທາງເສດຖະກິດໃຫ້ຢ່າງສູງສຸດ.

ການປະເມີນຜົນແຜນ 5 ປີ 2021-2025 ໄດ້ຊີ້ໃຫ້ເຫັນຄວາມຈຳເປັນໃນການສ້າງພາລະບົດບາດການຕິດຕາມ ແລະ ປະເມີນຜົນ (M&E) ໃຫ້ແຂງແຮງຂຶ້ນ ຊຶ່ງປະກອບດ້ວຍການຕິດຕາມ ທີ່ເປັນປົກກະຕິ ແລະ ເຂັ້ມແຂງກວ່າເກົ່າ ຕໍ່ຕົວຊີ້ວັດຜົນງານ-ຜົນສຳເລັດທີ່ກ່ຽວຂ້ອງກັບແຜນວຽກຈຸດສຸມ ແລະ ເປົ້າໝາຍທີ່ຕ້ອງການ. ລະບົບ M&E ຊ່ວຍສ້າງໃຫ້ມີຂໍ້ມູນສະທ້ອນກັບທີ່ເປັນປະໂຫຍດກ່ຽວກັບຜົນງານ-ຜົນສຳເລັດ ແລະ ເຮັດໃຫ້ສາມາດດັດປັບດ້ານຕ່າງໆ ຂອງບັນດາກິດຈະກຳ ໃຫ້ແທດເໝາະ ໃນຊ່ວງການດຳເນີນງານ ຂອງແຜນຫ້າປີ.

1.2.2 ຜົນສຳເລັດ ຂອງຂະແໜງພະລັງງານ ປີ 2021-2025

ຂະແໜງພະລັງງານໄດ້ບັນລຸຄວາມຄືບໜ້າຕະຫຼອດ 5 ປີທີ່ຜ່ານມາໃນ 6 ຂົງເຂດບຸລິມະສິດທີ່ໄດ້ສະແດງໃຫ້ເຫັນໃນກ່ອງຂໍ້ຄວາມຂ້າງລຸ່ມນີ້:

1. ກຳລັງການຜະລິດພະລັງງານໄຟຟ້ານ້ຳຕົກ ແລະ ຄວາມສຳເລັດໃນການສົ່ງອອກ ເພີ່ມຂຶ້ນ;
2. ເພີ່ມທະວີການຂະຫຍາຍຕາໜ່າງໄຟຟ້າ;
3. ດຳເນີນການປະຕິຮູບດ້ານການເງິນໃນລັດວິສາຫະກິດ ໄຟຟ້າລາວ (EDL);
4. ເສີມສ້າງ ພື້ນຖານໂຄງລ່າງດ້ານຕາໜ່າງໄຟຟ້າ ແລະ ການເຊື່ອມຕໍ່ຂ້າມຊາຍແດນ;
5. ປັບປຸງ ຄວາມປອດໄພ ແລະ ລະບົບນິຕິກຳການຄຸ້ມຄອງດັດສົມ ຂອງເຂື່ອນ;
6. ຂະຫຍາຍການພັດທະນາພະລັງງານທົດແທນ ທີ່ກຳລັງເກີດໃໝ່ (ທີ່ບໍ່ແມ່ນພະລັງງານນ້ຳ).

ຜົນສຳເລັດໃນການເພີ່ມກຳລັງການຜະລິດໄຟຟ້າ ແລະ ໃນການສົ່ງອອກ

ສປປ ລາວ ໄດ້ປະສົບຜົນສຳເລັດໃນການດຶງດູດການລົງທຶນຂອງພາກເອກະຊົນໃນຂະແໜງໄຟຟ້ານ້ຳຕົກ ເພື່ອແນໃສ່ສົ່ງອອກພະລັງງານໄຟຟ້າໄປປະເທດເພື່ອນບ້ານ. ໃນປີ 2024, ໄຟຟ້ານ້ຳຕົກກວມເອົາຫຼາຍກວ່າ 80% ຂອງກຳລັງການຜະລິດທັງໝົດຂອງລາວ. ການສົ່ງອອກເພີ່ມຂຶ້ນ 4 ເທົ່າໃນລະຫວ່າງປີ 2012 ຫາ 2022, ເຮັດໃຫ້ລາວເປັນປະເທດ ສົ່ງອອກກະແສໄຟຟ້າລະດັບໃຫ່ຍໄປ ໄທ, ຫວຽດນາມ, ມາເລເຊຍ, ກຳປູເຈຍ ແລະ ປະເທດມຽນມາ, ກວມເອົາ 7,161 ເມກາວັກ ຫຼື ປະມານ 60% ຂອງກຳລັງການຜະລິດທັງໝົດ. **ໂຄງການເຂື່ອນໄຟຟ້າສ້າງໃໝ່:** ໄດ້ສ້າງສຳເລັດ 21 ໂຄງການເມື່ອທຽບໃສ່ແຜນການ 45 ໂຄງການໃນໄລຍະ 2021-2025. ພະລັງງານໄຟຟ້າເຫຼົ່ານີ້ ລວມກຳລັງຕິດຕັ້ງ ຈຳນວນ 1,694 ເມກາວັກ (MW) ແລະ ສາມາດຜະລິດໄຟຟ້າໄດ້ 6,627 GWh ຕໍ່ປີ. ເຂື່ອນໄຟຟ້າ ໄດ້ກວມເອົາ 94.27 % ຂອງຈຳນວນກຳລັງການຕິດຕັ້ງທັງໝົດ 12,139 MW ໃນປີ 2025. ໄດ້ຊຸກຍູ້ກໍ່ສ້າງ **ເຂື່ອນໄຟຟ້າຂະໜາດໃຫຍ່** ເຊັ່ນ: ນ້ຳງື່ມ 3, ນ້ຳຂອງປາກແບງ, ນ້ຳຂອງທີ່ແຂວງຫຼວງພະບາງ, ນ້ຳຂອງເມືອງປາກລາຍ ຊຶ່ງເປັນໂຄງການ

ບຸລິມະສິດເພື່ອຊຸກຍູ້ເສດຖະກິດ ແລະ ຮັບປະກັນສະຖຽນລະພາບການສະໜອງພາຍໃນ. ນ້ຳງື່ມ 3 (ສາມາດຜະລິດໄດ້ 480 MW) ສຳເລັດແລ້ວ 80% ແລະ ຄາດວ່າຈະ ເລີ່ມຜະລິດໃນຕົ້ນປີ 2027. ໃນຂອບເຂດທົ່ວປະເທດ ມີຈຸດສາກ ລິດໄຟຟ້າ 137ຈຸດ (ລວມທັງຈຸດທີ່ໃຫ້ບໍລິການສາທາລະນະ ແລະ ຈຸດສະເພາະຮັບໃຊ້ບໍລິສັດເອງ) ໃນນັ້ນ ມີຢູ່ ນະຄອນຫລວງວຽງຈັນ, 70 ຈຸດ, ແຂວງວຽງຈັນ 16 ຈຸດ, ຫຼວງພະບາງ 4 ຈຸດ, ໄຊຍະບູລີ 6 ຈຸດ ບໍລິຄຳໄຊ 5 ຈຸດ, ຄຳມ່ວນ 4, ສະຫວັນນະເຂດ 10 ແລະ ຈຳປາສັກ 9 ຈຸດ, ຫຼວງນ້ຳທາ 1 ຈຸດ, ອຸດົມໄຊ 1 ຈຸດ, ຊຽງຂວາງ 1 ຈຸດ, ໄຊ ສົມບູນ 3 ຈຸດ, ສາລະວັນ 3 ຈຸດ, ເຊກອງ 1 ຈຸດ, ອັດຕະປື 1 ຈຸດ ແລະ ສະຖານີສາກລິດຂົນສົ່ງຫີນປູນ 2 ຈຸດ ຢູ່ໂຮງ ໄຟຟ້າຫົງສາລີກໄນ. ລິດໄຟຟ້າທີ່ໄດ້ຂຶ້ນທະບຽນແລ້ວ ຈຳນວນ 9,476 ຄັນ.

ເພີ່ມທະວີການເຂົ້າເຖິງໄຟຟ້າ

ປະເທດລາວບັນລຸໄດ້ຄວາມຄືບໜ້າຢ່າງໂດດເດັ່ນທາງດ້ານການເຂົ້າເຖິງໄຟຟ້າ, ເພີ່ມຂຶ້ນຈາກ 15 % ໃນປີ 1995 ເປັນ ປະມານ 95 % ໃນປີ 2020. ປະຊາກອນອີກປະມານ 5 ສ່ວນຮ້ອຍ ທີ່ຍັງບໍ່ມີໄຟຟ້າໃຊ້ ແມ່ນຢູ່ເຂດຫ່າງ ໄກສອກຫຼີກຂອງ, ເຊິ່ງມັນຍາກທີ່ຈະຂະຫຍາຍລະບົບຕາຂ່າຍໄຟຟ້າໄປສູ່ເຂດຊົນນະບົດໃນປັດຈຸບັນ. ຕາຂ່າຍແສງຕາ ເວັນຂະໜາດນ້ອຍ ແລະ ພະລັງງານທົດແທນອື່ນໆມີທ່າແຮງທີ່ຈະແກ້ໄຂຊ່ອງຫວ່າງການເຂົ້າເຖິງໄຟຟ້າໃນເຂດ ຊົນນະບົດ.

ການປະຕິຮູບດ້ານການເງິນຂອງລັດວິສາຫະກິດໄຟຟ້າລາວ (EDL)

ການຫຼຸດຕົ້ນທຶນ: ລັດວິສາຫະກິດໄຟຟ້າລາວ ປະສົບຜົນສຳເລັດໃນການຫຼຸດຜ່ອນລາຍຈ່າຍບໍລິຫານລົງຫຼາຍກວ່າ 20 ເປີເຊັນ ແລະ ປະຢັດໄດ້ປະມານ 136 ລ້ານໂດລາສະຫະລັດຜ່ານການເຈລະຈາກ່ຽວກັບ EPC ແລະ ໂຄງການຈັດ ຊື້. **ລາຍຮັບລັດວິສາຫະກິດລາວໄຟຟ້າ**: ໄດ້ຂະຫຍາຍຕະຫຼາດພະລັງງານໂດຍການສົ່ງພະລັງງານໄປສິງກະໂປ ແລະ ສະໜ ອງກະແສໄຟຟ້າໃຫ້ແກ່ ໂຄງການທົດລອງຂຸດຄົ້ນຊັບສິນດິຈິຕອນ, ສ້າງລາຍຮັບເປັນເງິນຕາຕ່າງປະເທດຕື່ມອີກ 250 ລ້ານໂດລາສະຫະລັດ/ປີ. **ການຄຸ້ມຄອງໜີ້ສິນ:** ພະຍາຍາມປັບປຸງກົນໄກການຄຸ້ມຄອງໜີ້ສິນ, ລວມມີການດັດແກ້ສັນຍາ ຊື້- ຂາຍໄຟຟ້າ (PPA) ກັບຜູ້ຜະລິດໃຫ້ເປັນຮູບແບບ “ຂັ້ນຕົ້ນຕ່ຳ, ສູງໃນພາຍຫຼັງ”, ປະຢັດໄດ້ຫຼາຍກວ່າ 20 ລ້ານໂດ ລາສະຫະລັດ/ປີ ໃນໄລຍະເບື້ອງຕົ້ນ. ຍັງມີຄວາມຄືບໜ້າໃນການແກ້ໄຂໜີ້ສິນໄຟຟ້າຂະໜາດໃຫຍ່ເຊັ່ນ: ໂຄງການນ້ຳອູ ແລະ ນ້ຳງື່ມ 5 ມູນຄ່າ 137 ລ້ານໂດລາສະຫະລັດ.

ການພັດທະນາໂຄງສ້າງພື້ນຖານຕາຂ່າຍໄຟຟ້າ ແລະ ການເຊື່ອມໂຍງພາກພື້ນ

ການພັດທະນາສາຍສົ່ງໄຟຟ້າ: ໄດ້ມີການມອບໝາຍ 4 ໂຄງການສາຍສົ່ງໄຟຟ້າລວມທັງສາຍສົ່ງ 500 kV ຈາກບ້ານຫາດ-ບ້ານນາ- ອັດຕະປືໄປກຳປູເຈຍ. ປະຈຸບັນ, ໃນທົ່ວປະເທດມີສະຖານີໄຟຟ້າ 96 ແຫ່ງ ແລະ ມີສາຍສົ່ງ ແຮງດັນສູງ, ກາງ ແລະ ຕ່ຳ 76,573 ກິໂລແມັດຕໍ່ວົງຈອນ. ໂຄງການສາຍສົ່ງ ແລະ ສະຖານີຍ່ອຍ 11 ໂຄງການແມ່ນ ກຳລັງກໍ່ສ້າງຢູ່ໃນປັດຈຸບັນ. **ການເຊື່ອມຈອດກັນ ລາວ-ຈີນ**: ການຮ່ວມມືດ້ານພະລັງງານກັບຈີນມີຄວາມຄືບໜ້າຢ່າງ ຫຼວງຫຼາຍໂດຍໄດ້ລົງນາມໃນ ສັນຍາເຊື່ອມຕໍ່ສາຍສົ່ງ 500 kV ເພື່ອອຳນວຍຄວາມສະດວກໃນການແລກປ່ຽນ ພະລັງງານເຊິ່ງກັນ ແລະ ກັນ ໂດຍສະເພາະການດຸ່ນດ່ຽງໄຟຟ້າໃນຊ່ວງລະດູຝົນ ແລະ ລະດູແລ້ງ. ໂຄງການເຊື່ອມຕໍ່ສາຍ ສົ່ງ 500 ກິໂລ ໂວນ ລາວ-ຈີນ ໄດ້ເລີ່ມລົງມືກໍ່ສ້າງ. ໂດຍຈະເຊື່ອມຕໍ່ຕາຂ່າຍໄຟຟ້າລາວ ແລະ ຈີນ, ສະໜັບສະໜູນ ການເປັນສູນກາງພະລັງງານສະອາດຢູ່ໃນອະນຸພາກພື້ນລ້ານຊ້າງ-ແມ່ນ້ຳຂອງ. ການ**ສ້າງຕັ້ງ EDL-T: EDL-T** ເຊິ່ງເປັນ ບໍລິສັດຮ່ວມທຶນລະຫວ່າງ ລັດວິສາຫະກິດໄຟຟ້າລາວ EDL ແລະ China Southern Power Grid (CSG),

ໂດຍມີໜ້າທີ່ ພັດທະນາລະບົບສາຍສົ່ງໄຟຟ້າຂອງລາວ ໃຫ້ມີສະຖຽນລະພາບໃນຂອບເຂດທົ່ວປະເທດ, ເພີ່ມທະວີຄວາມໝັ້ນຄົງດ້ານພະລັງງານພາຍໃນ ແລະ ສົ່ງເສີມການເຊື່ອມໂຍງຕາຂ່າຍໄຟຟ້າໃນພາກພື້ນ ໂດຍສະເພາະການຄ້າພະລັງງານສະອາດ, ໄດ້ສ້າງຕັ້ງຢ່າງເປັນທາງການໃນຕົ້ນປີ 2024.

ຄວາມປອດໄພຂອງເຂື່ອນໄຟຟ້າ ແລະ ລະບຽບການ

ການປະກາດນຳໃຊ້ກົດໝາຍວ່າດ້ວຍຄວາມປອດໄພເຂື່ອນໄຟຟ້າ: ກະຊວງພະລັງງານ ແລະ ບໍ່ແຮ່ (ພບ)ໄດ້ອອກກົດໝາຍວ່າດ້ວຍຄວາມປອດໄພເຂື່ອນໄຟຟ້າ (ສະບັບເລກທີ 20/ສພຊ, ລົງ ວັນທີ 7 ກໍລະກົດ 2022). **ການຂຶ້ນທະບຽນ ແລະ ຝຶກອົບຮົມຄວາມສ່ຽງ:** ການລົງທະບຽນຄວາມສ່ຽງເຂື່ອນໄຟຟ້າແມ່ນສຳເລັດ 90 ສ່ວນຮ້ອຍສຳລັບໂຄງການກໍ່ສ້າງເຂື່ອນໄຟຟ້າ. ໄດ້ຈັດກອງປະຊຸມເປັນປະຈຳ ແລະ ໄດ້ດຳເນີນການຝຶກອົບຮົມ 5 ຄັ້ງ ເພື່ອສ້າງ ຄວາມເຂັ້ມແຂງທາງດ້ານຄວາມຮູ້ດ້ານວິຊາການ ແລະ ການບັງຄັບໃຊ້ລະບຽບທີ່ກ່ຽວຂ້ອງກັບຄວາມປອດໄພຂອງເຂື່ອນ. **ແຜນງານສຸກເສີນ:** ແຜນງານສຸກເສີນຂອງ 23 ໂຄງການພັດທະນາໄຟຟ້ານ້ຳຕົກໄດ້ຮັບການອະນຸມັດທາງດ້ານເຕັກນິກ.

ການພັດທະນາພະລັງງານທົດແທນທີ່ເກີດຂຶ້ນໃໝ່ (ນອກຈາກ ພະລັງງານໄຟຟ້ານ້ຳຕົກ)

ຂະນະທີ່ໄຟຟ້ານ້ຳຕົກຍັງຄົງກວມເອົາສ່ວນໃຫຍ່ໃນເສດຖະກິດ, ປະເທດເຮົາແມ່ນໄດ້ເລີ່ມຄົ້ນຄວ້າສຳຫຼວດແຫຼ່ງພະລັງງານທົດແທນອື່ນໆ. ການຜະລິດລວມ ສປປ ລາວ ໃນປັດຈຸບັນນີ້ແມ່ນ 10,075.9 ເມກາວັກ ປະກອບມີ 83 ເຂື່ອນໄຟຟ້າ, ພະລັງງານຄວາມຮ້ອນຈາກຖ່ານຫີນ 15.5 %, ພະລັງງານ ທົດແທນ 1.2 % ແລະ ຊີວະມວນ 0.4%. ໃນຂະນະທີ່ການພັດທະນາພະລັງງານທົດແທນຍັງຊ້າກວ່າເປົ້າໝາຍ 11% ທີ່ສະພາແຫ່ງຊາດວາງອອກ, ແຕ່ແຜນການດັ່ງກ່າວພວມ ເລັ່ງລັດໂຄງການພະລັງງານແສງຕາເວັນ. ນັກລົງທຶນເອກະຊົນກຳພວມພັດທະນາໂຄງການພະລັງງານລົມຂະໜາດໃຫຍ່ເຊັ່ນ: ໂຄງການພະລັງງານລົມ 1,200 ເມກາວັກ ຄາດວ່າຈະເປັນໂຄງການທີ່ໃຫຍ່ທີ່ສຸດໃນອາຊີຕາເວັນອອກສຽງໃຕ້, ເຊິ່ງຜົນຜະລິດແມ່ນສົ່ງອອກຫວຽດນາມ.

1.2.3 ຜົນສຳເລັດຂອງຂະແໜງບໍ່ແຮ່ 2021-2025

ຄວາມຄືບໜ້າໃນຫ້າຂົງເຂດບູລິມະສິດໃນຂອງກະຊວງ ພບ ແຜນການພັດທະນາ 5 ປີ (2021-2025) ແມ່ນໄດ້ສະຫຼຸບຂ້າງລຸ່ມນີ້:

1. ການສ້າງແຜນທີ່ທໍລະນີສາດ ແລະ ການປະເມີນຊັບພະຍາກອນ;
2. ສ້າງຄວາມເຂັ້ມແຂງທາງດ້ານກົດໝາຍ ແລະ ລະບຽບການ;
3. ການສົ່ງເສີມການປຸງແຕ່ງເພື່ອເພີ່ມມູນຄ່າ (ອຸດສາຫະກຳປາຍນ້ຳ);
4. ການເພີ່ມຄວາມຄືບໜ້າຂອງໂຄງການ ແລະ ການລົງທຶນ;
5. ຂໍ້ລິເລີ່ມພັດທະນາ ການທ່ອງທ່ຽວທາງທໍລະນີສາດ;
6. ສ້າງນະໂຍບາຍການບໍລິຫານ/ການຄຸ້ມຄອງ ແລະ ການພັດທະນາຊັບພະຍາກອນບໍ່ແຮ່ເພື່ອຜົນປະໂຫຍດສູງສຸດຕາມຫຼັກການການເຕີບໂຕສີຂຽວ.

ການສ້າງແຜນທີ່ທໍລະນີສາດ ແລະ ການປະເມີນຊັບພະຍາກອນ

ເປົ້າໝາຍ ທີ 1 ຂອງຂະແໜງບໍ່ແຮ່ ເນັ້ນໜັກເຖິງຄວາມຈຳເປັນພື້ນຖານໃນການສ້າງແຜນທີ່ ແລະ ປະເມີນຊັບພະຍາກອນທໍລະນີສາດ ແລະ ແຮ່ທາດຂອງປະເທດລາວໃຫ້ຄົບຖ້ວນ ເພື່ອນຳໄປສູ່ການວາງແຜນພັດທະນາຍຸດທະ

ສາດ ແລະ ດຶງດູດການລົງທຶນ. **ຄວາມຄືບໜ້າຂອງການສ້າງແຜນທີ່ແບບຄົບວົງຈອນ**: ມີຄວາມຄືບໜ້າອັນສຳຄັນໃນການສຳຫຼວດ ແລະ ການສ້າງແຜນທີ່ທໍລະນີສາດ-ແຮ່ທາດຂັ້ນພື້ນຖານໃນຂະໜາດອັດຕາສ່ວນ 1:200,000, ກວມເອົາ 74,696 ກມ^2 (31.5 % ຂອງພື້ນທີ່ທີ່ຍັງບໍ່ທັນສຳເລັດຂອງປະເທດ). ຂໍ້ສະເໜີການລົງທຶນ ແລະ ແຜນງົບປະມານສຳລັບການສ້າງແຜນທີ່ນີ້ໄດ້ຖືກກະກຽມ. **ການສ້າງແຜນທີ່ທໍລະນີສາດແບບຄົບວົງຈອນ:** ເປົ້າໝາຍເບື້ອງຕົ້ນແມ່ນໃຫ້ສຳເລັດ 100% ຂອງແຜນທີ່ທໍລະນີສາດ-ແຮ່ທາດພື້ນຖານໃນຂະໜາດອັດຕາສ່ວນ 1:200,000 ໃນເຂດທີ່ຍັງບໍ່ທັນສຳເລັດ, ກວມເອົາເນື້ອທີ່ກວ້າງ 74,696 ຕາແມັດ (31.5% ຂອງເນື້ອທີ່ທັງໝົດຂອງປະເທດ). ກະຊວງພະລັງງານ ແລະ ບໍ່ແຮ່ (ພບ) ໄດ້ກະກຽມບົດສະເໜີການລົງທຶນຂອງລັດ ແລະ ແຜນງົບປະມານສຳລັບການສ້າງແຜນທີ່ຄັ້ງນີ້, ມູນຄ່າ 119,66 ລ້ານກີບ ແລະ ເຄື່ອງມືອຸປະກອນ 333,66 ລ້ານກີບ. ຂໍ້ມູນແຜນທີ່ເຂດວຽງຈັນພາກເໜືອ-ຫຼວງພະບາງພາກໃຕ້ໄດ້ມອບໃຫ້ຢ່າງເປັນທາງການແລ້ວ ແລະ ແຜນການສ້າງໂຄງການໃໝ່ຢູ່ແຂວງບໍລິຄຳໄຊ-ໄຊສົມບູນໄດ້ຍື່ນໃຫ້ຫວຽດນາມພິຈາລະນາເພື່ອສະໜອງທຶນ. ເຖິງວ່າຈະມີຄວາມຄືບໜ້າ, **ແຕ່ການຈຳກັດງົບປະມານ ແລະ ດ້ານວິຊາການ** ແມ່ນສິ່ງທ້າທາຍຢ່າງທີ່ເກີດຂຶ້ນຕໍ່ເນື່ອງ ຈຶ່ງຕ້ອງການທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອເຮັດສຳເລັດວຽກງານສ້າງແຜນທີ່ທີ່ຍັງເຫຼືອ.

ລາຍລະອຽດແຜນທີ່ພື້ນທີ່ອຸດົມສົມບູນດ້ວຍແຮ່ທາດ ໃນຂອບເຂດອັດຕາສ່ວນ 1:50,000 ໄດ້ເລີ່ມຕົ້ນໃນເຂດທີ່ອຸດົມສົມບູນດ້ວຍໄປດ້ວຍແຮ່ທາດທີ່ມີເປົ້າໝາຍສະເພາະສຳລັບແຮ່ທາດທີ່ບໍ່ແມ່ນໂລຫະ (ຫີນປູນໃນສາມແຂວງ) ແລະ ແຮ່ທາດໂລຫະ (5,568,75 ກິໂລແມັດ^2, ຫຼື 20 ສ່ວນຮ້ອຍຂອງພື້ນທີ່ສະຫງວນແຮ່ທາດເປົ້າໝາຍຂອງລັດຖະບານ). ໃນນັ້ນລວມມີຂໍ້ຕົກລົງ ແລະ ວຽກງານທີ່ສືບຕໍ່, ໂດຍສະເພາະແມ່ນການຊ່ວຍເຫຼືອຈາກ ສປ ຈີນ, ເຊິ່ງສະເໜີ 13,649,23 ກມ2 ແລະ 2,994 ກມ2 ສຳເລັດແລ້ວໃນບາງເຂດສະເພາະ ຄື: ເມືອງງອຍ-ປາກອຸ ແຂວງຫຼວງພະບາງ. **ການກຳນົດພື້ນທີ່ທີ່ມີຈຸດປະກົດຕົວແຮ່ທາດ:** ມີການຄົ້ນພົບແຮ່ທາດໃໝ່ອີກ 202 ແຫ່ງ, ເຮັດໃຫ້ຈຳນວນທັງ ໝົດເປັນ 772 ຊະນິດ, ເຊິ່ງສະທ້ອນໃຫ້ເຫັນເຖິງຄວາມເຂົ້າໃຈທີ່ ເພີ່ມຂຶ້ນກ່ຽວກັບຄວາມຮັ່ງມີທາງດ້ານແຮ່ທາດຂອງ ລາວ. **ການຄົ້ນຄວ້າ ແລະ ການພັດທະນາ ແລະ ການເກັບກຳຂໍ້ມູນ**: ພວມດຳເນີນຄວາມພະຍາຍາມຄົ້ນຫາເພື່ອຮັບປະກັນການມີຖານຂໍ້ມູນທໍລະນີສາດ-ແຮ່ທາດ ແລະ ຂໍ້ມູນໄພພິບັດທາງດ້ານທໍລະນີສາດ ແລະ ການແລກປ່ຽນຂໍ້ມູນກັບຄູ່ຮ່ວມມືສາກົນໂດຍຜ່ານຄະນະກຳມະການປະສານງານໂຄງການ Geoscience ໃນພາກພື້ນອາຊີຕາເວັນອອກ ແລະ ຕາເວັນ ອອກສຽງໃຕ້ ແລະ ໂຄງການ Geoinformation Sharing Infrastructure (CCOP-Gsi) ພວມດຳເນີນການ ຄົ້ນຄວ້າຢູ່. ການຮ່ວມມືກັບມະຫາວິທະຍາໄລວິທະຍາສາດເຕັກໂນໂລຊີຄຸນໝິງ (ຈີນ) ແມ່ນເພີ່ມທະວີຄວາມສາມາດ ຄົ້ນຄວ້າວິທະຍາສາດທັນສະໄໝ ທີ່ມີເຕັກໂນໂລຊີ, ສະໜັບສະໜູນຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ". ອຸປະກອນການ ວິເຄາະແຮ່ທາດແລະ ການຄົ້ນຄວ້າກຳລັງຖືກປັບປຸງ ແລະ ຕິດຕັ້ງ. ການສ້າງຂີດຄວາມສາມາດ ແລະ ການຄົ້ນຄວ້າ: ໄດ້ມີ ການສ້າງຕັ້ງຫໍພິພິທະພັນແຮ່ທາດຫີນ-ແຮ່ ແລະ ຟອດຊິນ ແລະ ສູນຄົ້ນຄວ້າແຮ່ທາດຫາຍາກແຫ່ງທຳອິດຂອງລາວ-ຈີນ ໄດ້ສ້າງຕັ້ງ, ວິເຄາະຕົວຢ່າງແຮ່ທາດຫາຍາກ 198 ຊະນິດ. ໂຄງການຝຶກອົບຮົມໃຫ້ແກ່ພະນັກງານວິຊາການກໍໄດ້ຈັດຕັ້ງ ປະຕິບັດ. ມາຮອດປະຈຸບັນ, ພະນັກງານວິຊາການສູນກາງ 6 ຄົນໄດ້ຮັບການຝຶກອົບຮົມຢູ່ຕ່າງປະເທດ (ຈີນ, ຟິລິບປິນ, ສ.ເກົາຫຼີ), ແລະ 27 ຄົນໄດ້ຮັບການອະນຸມັດໃຫ້ສຶກສາຕໍ່ພາຍໃນ ແລະ ຕ່າງປະເທດ.

ສ້າງຄວາມເຂັ້ມແຂງທາງດ້ານກົດໝາຍ ແລະ ລະບຽບການ

ການປັບປຸງກົດໝາຍວ່າດ້ວຍແຮ່ທາດ: ການດັດແກ້ກົດໝາຍວ່າດ້ວຍແຮ່ທາດ (ປີ 2017) ທີ່ກຳລັງດຳເນີນຢູ່ ແລະ ການສ້າງຮ່າງດຳລັດ ແລະ ນິຕິກຳອື່ນໆ ແມ່ນສະທ້ອນໃຫ້ເຫັນຄວາມມຸ່ງໝັ້ນໃນການສ້າງລະບົບການຄຸ້ມຄອງ ບໍລິຫານທີ່ເຂັ້ມແຂງ ແລະ ເປັນທາງການຫຼາຍຂຶ້ນ. **ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ (ມີນາ 2025):** ນະໂຍບາຍສຳຄັນນີ້ໄດ້ເປັນທີ່ມາ ຂອງການປະຕິຮູບ, ລວມທັງການຫ້າມຂຸດຄົ້ນຄຳໃນຂອບເຂດທົ່ວປະເທດຢ່າງຖາວອນ (ຍ້ອນການເສື່ອມສະພາບສິ່ງແວດລ້ອມ), ຈຶ່ງໄດ້ໂຈະການອະນຸມັດໂຄງການແຮ່ທາດໂລຫະໃໝ່ໄປຈົນຮອດສິ້ນສຸດສະ ໄໝຂອງ ລັດຖະບານ, ການກວດກາ ແລະ ຕິດຕາມທີ່ເຂັ້ມງວດຫຼາຍຂຶ້ນ, ບັງຄັບໃຫ້ມີການບູລະນະຄຸ້ມຄອງລະບົບ ນິເວດ. ນີ້ ແມ່ນບາດກ້າວທີ່ສຳຄັນເພື່ອສະກັດກັ້ນການກະທຳທີ່ບໍ່ຍືນຍົງ. **ຂໍ້ຕົກລົງວ່າດ້ວຍການຂຸດຄົ້ນແຮ່ທາດ ແບບທົດ ລອງ:** ຂໍ້ຕົກລົງວ່າດ້ວຍການທົດລອງຂຸດຄົ້ນ, ປຸງແຕ່ງ, ແລະ ຂໍ້ຕົກລົງການສົ່ງອອກແຮ່ທາດຕ່າງໆ (ແຮ່ເຫຼັກ, ແຮ່ຄຳ, ຫີນອ່ອນ ແລະ ແຮ່ທາດຫາຍາກ) ໄດ້ປະກາດໃຊ້ແລ້ວ.

ການສົ່ງເສີມການປຸງແຕ່ງ ເພື່ອເພີ່ມມູນຄ່າ (ອຸດສາຫະກຳປາຍນ້ຳ) ຊຸກຍູ້ການປຸງແຕ່ງພາຍໃນປະເທດ: ໄດ້ສືບຕໍ່ສົ່ງເສີມ ການລົງທຶນຂຸດຄົ້ນບໍ່ແຮ່ທີ່ມີຄຸນນະພາບ ລວມທັງການ ປຸງແຕ່ງແຮ່ທາດ (ເຊັ່ນ: ຄຳ, ທອງ, ແຮ່ທາດ ບົກຊິດ, ແຮ່ທາດ ໂປຕາສ) ເພື່ອເພີ່ມມູນຄ່າໃຫ້ແກ່ຜະລິດຕະພັນ ແລະ ເພີ່ມການ ຊົມໃຊ້ໄຟຟ້າພາຍໃນປະເທດ.

ຄວາມຄືບໜ້າຂອງໂຄງການ ແລະ ການລົງທຶນເພີ່ມຂຶ້ນ

ເປົ້າໝາຍກຸ່ມການຜະລິດແຮ່ທາດ: ແຮ່ທາດໄດ້ຖືກແບ່ງອອກເປັນ 5 ກຸ່ມ ໂດຍມີເປົ້າໝາຍມູນຄ່າການຜະລິດ ສະເພາະ: (i) ມູນຄ່າສູງ, (ii) ປະລິມານສູງ/ມູນຄ່າຕ່ຳ (ໂປຕາສ), (iii) ຍຸດທະສາດ (ຖ່ານຫີນ, ຫີນກາວ, ຫີນປູນ ສຳ ລັບຊີມັງ), (iv) ແຮ່ທີ່ບໍ່ແມ່ນໂລຫະເພື່ອການກໍ່ສ້າງ/ອຸດສາຫະກຳ ແລະ (v) ການລິເລີ່ມການຜະລິດແຮ່ທາດຫາຍາກ. ການປະຕິບັດສຳລັບຫ້າກຸ່ມແຮ່ທາດເຫຼົ່ານີ້ໄດ້ເລີ່ມຕົ້ນ, ສະໜັບສະໜູນໂດຍເຄື່ອງມືທາງດ້ານ ກົດໝາຍໃໝ່. ລັດຖະບານ ໄດ້ອະນຸຍາດໃຫ້ 20 ບໍລິສັດສຳຫຼວດຂຸດຄົ້ນແຮ່ທາດຫາຍາກ, ໃນຂະນະນີ້ 12 ແຫ່ງໄດ້ຫັນໄປສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ. ແຫຼ່ງສຳຮອງແຮ່ຫາຍາກຂອງ ສປປ ລາວ ມີປະມານ 790 ລ້ານໂຕນ. ມີ 2,611 ຕົວຢ່າງ ຈາກ 747 ບໍລິສັດໄດ້ຖືກປຸງແຕ່ງ ແລະ ວິເຄາະ, ເຊິ່ງກວມເອົາແຮ່ທາດຫຼາກຫຼາຍ ຊະນິດຕັ້ງແຕ່ແຮ່ເຫຼັກ ແລະ ທອງທອງ ຈົນເຖິງແຮ່ຫາຍາກ ແລະ ຫີນປູນ.

ການພັດທະນາໂຄງການບໍ່ແຮ່: ໄດ້ມີແຜນຊຸກຍູ້ 19 ໂຄງການ ໃຫ້ໄດ້ກ້າວເຂົ້າສູ່ການຂຸດຄົ້ນ ໂດຍຜ່ານການສຶກສາ ຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ເພື່ອລົງນາມໃນສັນຍາການພັດທະນາບໍ່ແຮ່. ປັດຈຸບັນລັດຖະບານໄດ້ ອະນຸມັດ **ບໍລິສັດດຳເນີນການຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ** ຈຳນວນ 410 ບໍລິສັດ ມີ 562 ກິດຈະການ. ນອກຈາກນັ້ນ, ຍັງມີ 630 ບໍລິສັດ ມີ 696 ກິດຈະການ ທີ່ໄດ້ຮັບການອະນຸມັດຈາກທ້ອງຖິ່ນ. **ການ ຫັນປ່ຽນ ໂຄງການທົດລອງ:** ມີ 15 ໂຄງການທົດລອງໄດ້ປະສົບຜົນສຳເລັດໃນການຫັນໄປສູ່ການດຳເນີນງານປົກກະຕິ ໃນທ້າຍປີ 2024, ເຊິ່ງຊີ້ໃຫ້ເຫັນເຖິງເສັ້ນທາງທີ່ປະສົບຜົນສຳເລັດສຳລັບທຸລະກິດເບື້ອງຕົ້ນ. **ການສຶກສາຕະຫຼາດ ແລະ ການສຳປະທານ:** ການສຶກສາຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດສຳລັບແຮ່ທາດໂລຫະ ແລະ ບໍ່ແມ່ນ ໂລຫະ; ໄດ້ນຳສະເໜີການສຳປະທານສຳລັບແຫຼ່ງແຮ່ທາດທີ່ບໍ່ແມ່ນໂລຫະໄດ້ສຳເລັດ.

ລິເລີ່ມການພັດທະນາການທ່ອງທ່ຽວທາງທໍລະນີສາດ

ການສຳຫຼວດ ແລະ ຂໍ້ສະເໜີ: ສະຖານທີ່ທ່ອງທ່ຽວທາງທໍລະນີສາດ 10 ແຫ່ງໄດ້ຖືກສຳຫຼວດ ແລະ ຖ້ຳກອງລໍ ໄດ້ຖືກສະເໜີໃຫ້ກາຍເປັນເຂດອະນຸລັກທາງທຳມະຊາດດ້ານທໍລະນີສາດແຫ່ງທຳອິດຂອງລາວ, ໂດຍຄາດວ່າຈະມີການ ປະກາດທີ່ເປັນທາງການການເຂົ້າຮ່ວມເຄືອຂ່າຍເຂດອະນຸລັກທາງທຳມະຊາດດ້ານທໍລະນີສາດ (Geopark) ໃນປີ 2026, ເພື່ອກ້າວໄປເຖິງການຮັບຮອງຂອງອົງການ UNESCO ໃຫ້ກາຍເປັນສະຖານທີ່ອະນຸລັກມໍລະໂດກ (Geopark) ໃນປີ 2028. ລວມເຖິງເປົ້າໝາຍການສ້າງຕັ້ງຖານຂໍ້ມູນເປັນເຂດອະນຸລັກທາງທຳມະຊາດດ້ານທໍລະນີ ສາດ (Geopark) ຢ່າງເປັນທາງການ.

ນະໂຍບາຍທີ່ວາງອອກສຳລັບການບໍລິຫານ, ການຄຸ້ມຄອງ ແລະ ການພັດທະນາຊັບພະຍາກອນແຮ່ທາດເພື່ອຜົນປະ ໂຫຍດສູງສຸດພາຍໃຕ້ຫຼັກການການເຕີບໂຕສີຂຽວ

ເປົ້າໝາຍນີ້ສຸມໃສ່ການສ້າງຂອບນະໂຍບາຍທີ່ເຂັ້ມແຂງສຳລັບການຄຸ້ມຄອງຊັບພະຍາກອນແຮ່ທາດແບບຍືນຍົງ, ຮັບປະກັນຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ເພີ່ມຜົນປະໂຫຍດສູງສຸດທາງເສດຖະກິດຜ່ານຂະບວນ ການສ້າງມູນຄ່າເພີ່ມ. ພ້ອມນັ້ນ, ກະຊວງ ໄດ້ຊຸກຍູ້ໃຫ້ບັນດາບໍລິສັດຈັດຕັ້ງປະຕິບັດໂຄງການໃນທຸກຂັ້ນຕອນ, ນັບແຕ່ ການສຳຫຼວດຈົນເຖິງການຈຳໜ່າຍ, ເຊິ່ງປະກອບສ່ວນເຂົ້າໃນສະຖຽນລະພາບທາງເສດຖະກິດ. ລັດຖະບານໄດ້ອອກຂໍ້ ຕົກລົງກ່ຽວກັບການທົດລອງຂຸດຄົ້ນແຮ່ທາດ, ການແປຮູບ, ແລະ ສັນຍາສິ່ງອອກແຮ່ທາດເຊັ່ນ: ແຮ່ເຫຼັກ, ແຮ່ຄຳ, ຫີນ ອ່ອນ ແລະ ແຮ່ທາດຫາຍາກ. ກົດໝາຍ ແລະ ລະບຽບການທີ່ຄຸ້ມຄອງໂຄງການພັດທະນາບໍ່ແຮ່ໄດ້ຮັບການປັບປຸງ ແລະ ແກ້ໄຂ, ໂດຍລວມມີ 38 ສະບັບ ໄດ້ຮັບການປັບປຸງ (ແກ້ໄຂ 34 ສະບັບ, ສ້າງໃໝ່ 4 ສະບັບ). **ການດຳເນີນງານທີ່ໄດ້ ມາດຕະຖານ ແລະ ມີຄວາມຮັບຜິດຊອບ:** ຜູ້ຜະລິດແຮ່ທາດ ແລະ ຂະແໜງອຸດສາຫະກຳຕ້ອງດຳເນີນງານຕາມ ມາດຕະຖານທີ່ສອດຄ່ອງກັບຫຼັກການທີ່ເປັນມິດຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ສຸຂະພາບຂອງຊຸມຊົນ. ລັດຖະບານຂັ້ນ ສູນກາງ ແລະ ອຳນາດການປົກຄອງທ້ອງຖິ່ນສືບຕໍ່ຈັດຕັ້ງການລົງຕິດຕາມ ແລະ ກວດກາພາກສະໜາມເປັນປະຈຳ ເພື່ອ ປະເມີນການປະຕິບັດງານບົນພື້ນຖານກົດໝາຍວ່າດ້ວຍແຮ່ທາດສະບັບປັບປຸງປີ 2017.

1.3 ການປະເມີນຜົນລວມ ຂອງການຈັດຕັ້ງປະຕິບັດແຜນການ 5 ປີ

1.3.1 ຄວາມສຳເລັດ

ຂະແໜງອຸດສາຫະກຳ (ສະເພາະພະລັງງານໄຟຟ້າ, ບໍ່ແຮ່ ແລະ ອຸດສາຫະກຳປຸງແຕ່ງ) 5 ປີ (2021-2025) ໄດ້ ປະກອບສ່ວນໃນອົງປະກອບຂອງລວມຍອດຜະລິດຕະພັນພາຍໃນລາຄາໃນປີໄດ້ 317,711 ຕື້ກີບ, ຊຶ່ງກວມເອົາ 23.28% ຂອງ GDP (ໃນນັ້ນມີປະກອບມີອຸດສາຫະກຳພັງລັງງານໄຟຟ້າ 132,104 ຕື້ກີບ ເທົ່າກັບ 9.68%, ອຸດສາຫະກຳບໍ່ແຮ່ 44,799 ຕື້ກີບ ເທົ່າກັບ 3.28% ແລະ ອຸດສາຫະກຳປຸງແຕ່ງ 140,809 ຕື້ກີບ ເທົ່າກັບ 10.32%) ດັ່ງລາຍລະອຽດ ລຸ່ມນີ້:

1) ຂະແໜງອຸດສາຫະກຳ: ໃນ 5 ປີ (2021-2025) ປະຕິບັດໄດ້ 519,949.79 ຕື້ກີບ, ບັນລຸໄດ້ 185.65% ຂອງ ແຜນການ (ແຜນການທີ່ວາງໄວ້ 5 ປີ 280,071.18 ຕື້ກີບ), ທຽບໃສ່ໃນຍະດຽວກັນຜ່ານມາເພີ່ມຂຶ້ນ 181.36% (ມູນ ຄ່າໃນປີ 2016-2020: 184,799.33 ຕື້ກີບ), ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 26.74% ຕໍ່ປີ, ໃນນັ້ນ ປະກອບ ມີ:

- **ມູນຄ່າການຜະລິດອຸດສາຫະກຳພະລັງງານໄຟຟ້າ 262,848.19 ຕື້ກີບ**, ໂດຍມີການຜະລິດໄຟຟ້າໄດ້ 253,963 ລ້ານກິໂລວັດໂມງ, ບັນລຸໄດ້ 186.58% ຂອງແຜນການທີ່ວາງໄວ້ (ມະຕິສະພາ 140,879.60 ຕື້ກີບ), ທຽບໃສ່ໃນຍະດຽວກັນຜ່ານມາເພີ່ມຂຶ້ນ 234.92% (ມູນຄ່າໃນປີ 2016-2020: 78,481.76 ຕື້ກີບ), ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 29.50% ຕໍ່ປີ;

- **ມູນຄ່າການຜະລິດອຸດສາຫະກຳບໍ່ແຮ່** 179,755.35 ຕື້ກີບ, ບັນລຸໄດ້ 320.35% ຂອງແຜນການທີ່ວາງໄວ້ (ມະຕິສະພາ 56,111.74ຕື້ກີບ), ທຽບໃສ່ໃນໄລຍະດຽວກັນຜ່ານມາເພີ່ມຂຶ້ນ 235.43% (ມູນຄ່າໃນປີ 2016-2020: 53,589.68 ຕື້ກີບ) ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 39.26% ຕໍ່ປີ;

- **ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ** 77,346.25 ຕື້ກີບ, ບັນລຸໄດ້ 93.10% ຂອງແຜນການທີ່ວາງໄວ້ (ມະຕິສະພາ 83,079.83 ຕື້ກີບ) ທຽບໃສ່ໃນໄລຍະດຽວກັນຜ່ານມາເພີ່ມຂຶ້ນ 46.69% (ມູນຄ່າໃນປີ 2016-2020: 52,727.90 ຕື້ກີບ) ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 9.57% ຕໍ່ປີ;

2) ມູນຄ່າຈໍລະຈອນສິນຄ້າ (ຂາຍຍົກ, ຂາຍຍ່ອຍ ແລະ ບໍລິການສ້ອມແປງ): ໃນ 5 ປີ (2021-2025) ປະຕິບັດໄດ້ 410,269.82 ຕື້ກີບ, ບັນລຸໄດ້ 96.71% ຂອງແຜນການ (ມະຕິສະພາ 424,227.52 ຕື້ກີບ), ທຽບໃສ່ໃນຍະດຽວກັນຜ່ານມາເພີ່ມຂຶ້ນ 43.88% (ມູນຄ່າໃນ 5 ປີ 2016-2020: 285,152.81 ຕື້ກີບ) ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 9.97% ຕໍ່ປີ; ຈຶ່ງມີມູນຄ່າຈໍລະຈອນສິນຄ້າທີ່ກ່າວນີ້ໄດ້ປະກອບສ່ວນໃນຄຶງປະກອບຂອງລວມຍອດຜະລິດຕະພັນພາຍໃນລາຄາໃນປີໄດ້ 165,384 ກີບ, ກວມເອົາ 12.12% ຂອງ GDP.

3) ການຄ້າຕ່າງປະເທດ: ໃນ 5 ປີ (2021-2025) ປະຕິບັດໄດ້ 84,406.01 ລ້ານໂດລາສະຫະລັດ, ບັນລຸໄດ້ 118.93% ຂອງແຜນການ (ມະຕິສະພາ 70,970.87 ລ້ານໂດລາສະຫະລັດ), ທຽບໃສ່ໃນໄລຍະດຽວກັນຜ່ານມາເພີ່ມຂຶ້ນ 61.68% (ມູນຄ່າໃນປີ 2016-2020: 52,205.31 ລ້ານໂດລາສະຫະລັດ), ອັດຕາຂະຫຍາຍ ຕົວໂດຍສະເລ່ຍ 14.38% ຕໍ່ປີ, ໃນນັ້ນ ປະກອບມີ:

- ມູນຄ່າສົ່ງອອກ 46,440.88 ລ້ານໂດລາສະຫະລັດ, ເທົ່າກັບ 122.07% ຂອງແຜນການ (ມະຕິສະພາ 38,043.52 ລ້ານໂດລາສະຫະລັດ) ທຽບໃສ່ໃນຍະດຽວກັນຜ່ານມາເພີ່ມຂຶ້ນ 74.81%, ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 15.19% ຕໍ່ປີ;

- ມູນຄ່ານຳເຂົ້າ 37,965.13 ລ້ານໂດລາສະຫະລັດ, ເທົ່າກັບ 115.30% ຂອງແຜນການ (ມະຕິສະພາ 32,927.35 ລ້ານໂດລາສະຫະລັດ) ທຽບໃສ່ໃນໄລຍະດຽວກັນຜ່ານມາເພີ່ມຂຶ້ນ 48.08%, ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 13.45% ຕໍ່ປີ;

ຕະຫຼອດໄລຍະ 5 ປີ (2021-2025) ສປປ ລາວ ມີດຸນການຄ້າມູນຄ່າ 8,475.75 ລ້ານໂດລາສະຫະລັດ, ເທົ່າກັບ 165.67% ຂອງແຜນການ (ມະຕິສະພາ 5,116.17 ລ້ານໂດລາສະຫະລັດ) ທຽບໃສ່ໃນໄລຍະດຽວກັນຜ່ານມາເພີ່ມຂຶ້ນ 813.32%, ດ້ວຍອັດຕາຂະຫຍາຍຕົວໂດຍເລ່ຍ 25.79% ຕໍ່ປີ;

1.3.2 ສາເຫດຕົ້ນຕໍທີ່ພາໃຫ້ມີຜົນສຳເລັດ

- ຕະຫຼອດໄລຍະການຈັດຕັ້ງປະຕິບັດແຜນການ, ຄະນະພັກ-ຄະນະນຳ ຂອງ ກະຊວງ ອຄ ແລະ ກະຊວງ ພບ ແມ່ນໄດ້ມີການນຳພາຊີ້ນຳ ແລະ ໃຫ້ທິດຢ່າງໃກ້ຊິດ, ເປັນລະບົບ ແລະ ສະເໝີຕົ້ນສະເໝີປາຍ ໂດຍສອດຄ່ອງກັບການຜັນແປ ຂອງສະພາບແວດລ້ອມພາຍໃນ ແລະ ສາກົນ. ດັ່ງນັ້ນ, ແຜນພັດທະນາ ຂອງ ກະຊວງ ອຄ ແລະ ກະຊວງ ພບ ສຳລັບປີ 2021-2025 ໄດ້ຖືກຜັນຂະຫຍາຍເປັນແຜນປະຕິບັດທີ່ລະອຽດ ໂດຍສົມທົບກັບການຄຸ້ມຄອງຕິດຕາມຢ່າງໃກ້ຊິດ ຂອງລັດຖະບານ, ຂະແໜງການ ແລະ ທ້ອງຖິ່ນ.

- ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດແຜນພັດທະນາ ໄລຍະ 5 ປີ (2021-2025) ໄດ້ກຳນົດເປົ້າໝາຍການເພີ່ມຂຶ້ນ ໂດຍສະເລ່ຍດ້ານອຸດສາຫະກຳ ແລະ ຫັດຖະກຳ, ການຂາຍຍົກ ແລະ ຂາຍຍ່ອຍ, ການນຳເຂົ້າ ແລະ ສົ່ງອອກ, ປະມານ 8-10 %. ອັດຕາການຂະຫຍາຍຕົວຂອງອຸດສາຫະກຳຫຼັງພະຍາດລະບາດໂຄວິດ-19 ໃນຊ່ວງປີ 2021-2024 ໂດຍສະເລ່ຍແມ່ນ 9.54%.

- ສປປ ລາວ ມີແຫຼ່ງຊັບພະຍາກອນທຳມະຊາດ ຢ່າງມະຫາສານ ສຳລັບການຜະລິດພະລັງງານ, ໂດຍສະເພາະ ທ່າແຮງທີ່ກວ້າງຂວາງທາງດ້ານພະລັງງານໄຟຟ້ານ້ຳຕົກ, ຊຶ່ງຄາດຄະເນ ຢູ່ລະຫວ່າງ 18,000 MW ຫາ 26,000 MW. ພະລັງງານນີ້ເປັນຮາກຖານສຳຄັນໃນຍຸດທະສາດພະລັງງານ ແລະ ເຮັດໃຫ້ສາມາດສົ່ງອອກໄຟຟ້າໄປໃນປະເທດໃກ້ຄຽງ ເຊັ່ນ: ປະເທດໄທ, ຫວຽດນາມ, ກຳປູເຈຍ ແລະ ສິງກະໂປ. ຂະແໜງພະລັງງານໄດ້ມີບົດບາດສຳຄັນໃນການພັດທະນາ ປະເທດ ແລະ ການຫຼຸດຜ່ອນຄວາມທຸກຍາກ, ຊຶ່ງຂະແໜງພະລັງງານແມ່ນໄດ້ມີສ່ວນແບ່ງໃນ GDP ເພີ່ມຂຶ້ນສອງເທົ່າ ຕົວຈາກ 6.5 ສ່ວນຮ້ອຍໃນປີ 2012 ເປັນ 12.8 ສ່ວນຮ້ອຍໃນປີ 2022. ແຜນການພັດທະນາຂະແໜງພະລັງງານ 5 ປີ (2021-2025) ໄດ້ຖືເປັນບຸລິມະສິດການຫັນເປັນທັນສະໄໝ ແລະ ການຂະຫຍາຍຂະແໜງໄຟຟ້າ ເພື່ອຕອບສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກ, ເຮັດໃຫ້ສ່ວນປະສົມດ້ານແຫຼ່ງພະລັງງານມີຄວາມຫຼາກຫຼາຍດ້ວຍການຂະຫຍາຍໄປສູ່ພະລັງງານທົດແທນ, ການເພີ່ມຄວາມເຂັ້ມແຂງໃຫ້ແກ່ພື້ນຖານໂຄງລ່າງລະບົບສາຍສົ່ງ ແລະ ການສົ່ງເສີມການຮ່ວມມືດ້ານພະລັງງານໃນພາກພື້ນ. ຕະຫຼອດແຜນຫ້າປີ ສປປ ລາວ ໄດ້ມີຄວາມກ້າວໜ້າໃນທຸກດ້ານເຫຼົ່ານີ້.

- ຕະຫຼອດແຜນຫ້າປີ 2021-2025 ຂະແໜງບໍ່ແຮ່ ຂອງ ສປປ ລາວ ໄດ້ມີຄວາມກ້າວໜ້າທີ່ພົ້ນເດັ່ນ ໂດຍສະເພາະແມ່ນໃນການເພີ່ມທະວີຄວາມເຂົ້າໃຈດ້ານທໍລະນີສາດ ຜ່ານການສ້າງແຜນທີ່ຊັບພະຍາກອນຢ່າງຄົບຖ້ວນ, ການສ້າງຄວາມເຂັ້ມແຂງໃນລະບົບກົດໝາຍ ແລະ ລະບອບລະບຽບການຕ່າງໆ, ການຮັບປະກັນໃຫ້ມີຄວາມຮັບຜິດຊອບດ້ານສິ່ງແວດລ້ອມ ແລະ ສັງຄົມ, ການຫັນເປັນທັນສະໄໝ ແລະ ເພີ່ມທະວີການຄຸ້ມຄອງກວດກາ ແລະ ການສົ່ງເສີມກິດຈະກຳທີ່ເປັນການເພີ່ມມູນຄ່າ.ແລະ ຂະແໜງບໍ່ແຮ່ ຂະຫຍາຍໃນລະດັບ 2.3 ສ່ວນຮ້ອຍ.

- ການພົວພັນລະຫວ່າງພາກລັດ ແລະ ພາກທຸລະກິດເອກະຊົນໄດ້ຮັບການເສີມຂະຫຍາຍໃຫ້ແໜ້ນແຟ້ນຂຶ້ນໃນໄລຍະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ໂດຍຜ່ານການເພີ່ມການພົບປະ ຂອງໜ່ວຍງານປຶກສາຫາລືວຽກງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນ ພາຍໃຕ້ຂະບວນການກອງປະຊຸມໂຕະມົນ ແລະ ກອງປະຊຸມທຸລະກິດລາວ ລະດັບສູງ ທີ່ມີທ່ານນາຍົກລັດຖະມົນຕີ ເປັນປະທານ.

- ບັນດາຄູ່ຮ່ວມພັດທະນາ ຕ່າງປະເທດໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອຢ່າງຕໍ່ເນື່ອງ ແລະ ປະຊາຊົນທຸກຊົນເຜົ່າ ຂອງພວກເຮົາ ໄດ້ມີສ່ວນຮ່ວມ ແລະ ມີການປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາ. ການສະໜັບສະໜູນຊ່ວຍເຫຼືອ ຂອງ ບັນດາຄູ່ຮ່ວມມື ຂອງ ກອຄ ແລະ ກະຊວງ ພບ ແມ່ນລວມມີການຊ່ວຍ ເຫຼືອທາງວິຊາການ ຈາກບັນດາອົງການພັດທະນາ ສອງຝ່າຍ ແລະ ຫຼາຍຝ່າຍ. ໃນນັ້ນມີ ທະນາຄານພັດທະນາອາຊີ ADB, ທະນາຄານໂລກ,

ອົງການຊ່ວຍເຫຼືອ ຂອງສະວິດ SDC, UNDP, WTO, ອົງການຊັບສິນທາງປັນຍາ ໂລກ WIPO, ອົງການຊ່ວຍເຫຼືອ ຂອງ ຈີນ China Aid, ກະຊວງການຕ່າງປະເທດ ແລະ ການຄ້າ ຂອງອິດສະຕຣາລີ (DFAT), EU, GIZ, ອົງການ ຊ່ວຍເຫຼືອ ຂອງອີກລັງ Irish Aid, USAID ແລະ ອື່ນໆ.

1.3.3 ຈຸດອ່ອນຂໍ້ບົກຜ່ອງ, ຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ

- ການລະບາດ ຂອງພະຍາດໂຄວິດ-19 ເຮັດໃຫ້ຄວາມກ້າວໜ້າການພັດທະນາ ຂອງ ສປປ ລາວ ຖືກຜົນ ກະທົບຢ່າງຮ້າຍແຮງ ເພາະວ່າທຸລະກິດຫຼາຍແຫ່ງໄດ້ຖືກປິດຕົວ ແລະ ຄວາມຕ້ອງການບໍລິການທ່ອງທ່ຽວໄດ້ເຫືອດຫາຍ ໄປ. ສິ່ງນີ້ເຮັດໃຫ້ລາຍໄດ້ ຂອງ ຫຼາຍຄົວເຮືອນ ແລະ ຄວາມຕ້ອງການ ຂອງຜູ້ຊົມໃຊ້ສິນຄ້າ ແລະ ບໍລິການຫຼຸດລົງ ລວມ ທັງການຈໍລະຈອນສິນຄ້າຖືກຈຳກັດ, ຊຶ່ງນຳໄປສູ່ການເພີ່ມຂຶ້ນ ຂອງສະພາບການວ່າງງານ, ຄວາມທຸກຍາກ ແລະ ຄວາມ ບໍ່ໝັ້ນຄົງທາງດ້ານສະບຽງອາຫານ. ນອກຈາກນັ້ນ ມາດຕະການສະໜັບສະໜູນ ຂອງລັດຖະບານ ເພື່ອບັນເທົາຜົນ ກະທົບທີ່ຮ້າຍແຮງທີ່ສຸດ ໄດ້ເພີ່ມຄວາມກັງວົນກ່ຽວກັບຄວາມມີສະຖຽນລະພາບ ຂອງເສດຖະກິດມະຫາພາກ ໃນຂະນະ ທີ່ລັດຖະບານມີຂໍ້ຈຳກັດໃນດ້ານຂອບເຂດການໃຊ້ຈ່າຍທາງດ້ານງົບປະມານ.

- ການປະເມີນແຜນຫ້າປີ 2021-2025 ຂອງ ກະຊວງ ອຄ ໄດ້ສະແດງໃຫ້ເຫັນວ່າ ຂອບເຂດວຽກງານ ທີ່ ກວມເອົາຫຼາຍດ້ານ ແລະ ຄາດໝາຍສູ້ຊົນທີ່ຕັ້ງໄວ້ສູງ ແລະ ວິທີການທີ່ເນັ້ນ ການປະຕິບັດ “ແຕ່ລຸ່ມຂຶ້ນເທິງ” ແມ່ນຍັງ ຂາດຄວາມເຂົ້າໃຈຮ່ວມກັນໃນການສ້າງຄວາມເປັນເອກະພາບ ເພື່ອເຮັດໃຫ້ການເຄື່ອນໄຫວ ມີການປະສານງານ ແລະ ໄປລວງດຽວກັນ ແນໃສ່ບັນລຸເປົ້າໝາຍລວມ. ແຜນຫ້າປີບໍ່ໄດ້ແກ້ໄຂບັນຫາປິ່ນອ້ອມທີ່ສອດຫ້ອຍກັບຫຼາຍວຽກງານ ຢ່າງຊັດເຈນ ເຊັ່ນ ຄວາມສະເໝີພາບຍິງ-ຊາຍ, ການຫັນເປັນອຸດສາຫະກຳສີຂຽວ ແລະ ເປັນດິຈິຕອນ. ໃນແຜນການ ແມ່ນຍັງຂາດການເອົາກິດຈະກຳໄປຕິດພັນຢ່າງຊັດເຈນກັບກຳລັງຄົນທີ່ມີຄວາມຊ່ຽວຊານທາງວິຊາການ ແລະ ກັບການ ສະໜັບສະໜູນດ້ານທຶນຮອນ ທີ່ຈຳເປັນ, ຊຶ່ງເຮັດໃຫ້ຫຍຸ້ງຍາກໃນການຕິດຕາມຊັບພະຍາກອນ ຫຼື ປະເມີນຄວາມຄືບ ໜ້າ. ນອກຈາກນັ້ນ, ຕົວຊີ້ວັດ ທີ່ໃຊ້ໃນການວັດແທກຜົນໄດ້ຮັບ ແມ່ນຍັງບໍ່ສ່ອງແສງໄດ້ສິ່ງທີ່ໄດ້ເຮັດຕົວຈິງ. ເວົ້າລວມ , ແຜນການແມ່ນຍັງຂາດຄຳອະທິບາຍຊີ້ແຈງທີ່ຊັດເຈນ ວ່າການປະຕິບັດຕ່າງໆ ຂອງແຜນ ຈະນຳໄປສູ່ການບັນລຸເປົ້າ ໝາຍທີ່ຕ້ອງການ ໄດ້ຄືແນວໃດ.

- ແຜນຫ້າປີຍັງເອົາໃຈໃສ່ໜ້ອຍ ຕໍ່ກັບ ວຽກງານ ລະອຽດ ແລະ ບັນຫາທ້າທາຍທີ່ເລັ່ງທວງ ແລະ ຕໍ່ກັບເວລາທີ່ ອາດໃຊ້ໃນການປະຕິຮູບກົດໝາຍ ແລະ ລະບຽບການ, ແລະ ການສ້າງຂີດຄວາມສາມາດ ທີ່ຕ້ອງການສຳລັບການບັນລຸ ເປົ້າໝາຍການພັດທະນາລວມ.

1.3.4 ບົດຮຽນທີ່ຖອດຖອນໄດ້

ການປະເມີນແຜນຫ້າປີ ຂອງ ກອຄ ໄດ້ຊີ້ໃຫ້ເຫັນຫຼາຍບົດຮຽນຈາກການຈັດຕັ້ງປະຕິບັດ. ໃນນັ້ນ ລວມມີ:

(i) ຄວາມສຳຄັນ ຂອງການໃຫ້ທິດຊີ້ນຳ ຈາກຄະນະນຳກະຊວງ ແລະ ຜູ້ບໍລິຫານລະດັບສູງ ກ່ຽວກັບເປົ້າ ໝາຍຍຸດ ທະສາດລະດັບສູງ ແລະ ການອອກແບບແຜນລວມ;

(ii) ຄວາມຈຳເປັນໃນການຮັບປະກັນວ່າ ທຸກກົມ, ພະແນກ, ແລະ ພະນັກງານວິຊາການ ໃນລະດັບສູນກາງ ແລະ ຂັ້ນແຂວງ ຈະມີຄວາມເປັນເຈົ້າການ ຕໍ່ແຜນຫ້າປີ ແລະ ເຂົ້າໃຈຄວາມຮັບຜິດຊອບ ຂອງຕົນໃນການເຮັດວຽກ ເພື່ອ ບັນລຸຜົນໄດ້ຮັບ;

(iii) ສ້າງແຜນການ 5 ປີ ໂດຍມີການປຶກສາຫາລືກັບພາກທຸລະກິດເອກະຊົນ ເພື່ອຮັບປະກັນວ່າການ ເຄື່ອນໄຫວ ກິດຈະກຳຕ່າງໆ ຈະສາມາດແກ້ໄຂບັນຫາທ້າທາຍຕົ້ນຕໍໄດ້;

(iv) ຮັບປະກັນວ່າກົດຈະກຳການເຄື່ອນໄຫວທີ່ໄດ້ກຳນົດເປັນບຸລິມະສິດໃນແຜນຫ້າປີ ແມ່ນມີຄວາມສົມຄູ່ກັບຊັບພະຍາກອນທາງດ້ານວິຊາການ ແລະ ງົບປະມານທີ່ມີຢູ່;

(v) ນຳໃຊ້ແຜນການທີ່ເນັ້ນຜົນໄດ້ຮັບເປັນຫຼັກສຳຄັນ ໂດຍມີການເຊື່ອມຕໍ່ຈັບຄູ່ການກະທຳຕ່າງໆ ໃສ່ກັບບັນດາເປົ້າໝາຍທີ່ຕ້ອງການບັນລຸ ຢ່າງມີແບບແຜນ;

(vi) ເຊື່ອມສານບັນດາບັນຫາປິ່ນອ້ອມ ເຂົ້າໄປໃນບັນດາກິດຈະກຳບຸລິມະສິດ ຂອງແຜນຫ້າປີ;

(vii) ຮັບປະກັນໃຫ້ມີການຕິດຕາມ ແລະ ປະເມີນຜົນ ໃຫ້ເປັນວຽກໜຶ່ງຢູ່ໃນແຜນການຫ້າປີ ໂດຍມີການກຳນົດຕົວຊີ້ບອກທີ່ກ່ຽວຂ້ອງ ຂອງຜົນການປະຕິບັດວຽກງານ.

ການແກ້ໄຂສິ່ງທ້າທາຍທີ່ພາກທຸລະກິດເອກະຊົນຍົກຂຶ້ນ ຕາມປົກກະຕິແມ່ນມີຄວາມສະຫຼັບຊັບຊ້ອນ ຊຶ່ງຮຽກຮ້ອງໃຫ້ພາກລັດມີການຮຽນຮູ້ ແລະ ການພັດທະນາຂີດຄວາມສາມາດ. ການມີຂໍ້ມູນທີ່ບໍ່ສົມຄູ່ກັນ ຂອງແຕ່ລະຝ່າຍ, ຂໍ້ຈຳກັດ ຂອງການປະສານງານ ແລະ ຜົນກະທົບຂ້າງຄຽງທາງບວກ ແລະ ທາງລົບ ທີ່ບໍ່ໄດ້ຕັ້ງໃຈຈະໃຫ້ເກີດ ພາໃຫ້ເກີດຄວາມຫຼົ້ມເຫຼວ ໃນຕະຫຼາດສິນເຊື່ອ ແລະ ການບໍລິຫານຄວາມສ່ຽງ, ການຈັດສັນຊັບພະຍາກອນທີ່ບໍ່ເປັນໄປຕາມທາງຄອນ, ຜະລິດຕະພາບມີຄວາມຄືບໜ້າ ແລະ ທ່າອ່ຽງການເຕີບໂຕຕ່ຳໃນໄລຍະຍາວ. ການບັນລຸວິໄສທັດໄລຍະຍາວ 2045 ຂອງການສ້າງເສດຖະກິດທີ່ມີພະລັງຂັບເຄື່ອນໄປຂ້າງໜ້າ ແລະ ມີຄວາມສາມາດການແຂ່ງຂັນ ເລັ່ງທວງໃຫ້ມີການແຊກແຊງທາງດ້ານນະໂຍບາຍ ໃນຫຼາຍດ້ານ ເພື່ອເພີ່ມປະສິດທິພາບ ຂອງຕະຫຼາດ ແລະ ຜະລິດຕະພາບ ຂອງງານ. ການປ່ຽນແປງໄປສູ່ເສັ້ນທາງເຕີບໂຕ ທີ່ມີປະສິດທິພາບ ແລະ ຍືນຍົງ ວ່າ ຕ້ອງການການເສີມສ້າງສະພາບແວດລ້ອມ ຂອງການຄ້າ ແລະ ທຸລະກິດ ເພື່ອສົ່ງເສີມຕະຫຼາດທີ່ມີການແຂ່ງຂັນ.

ສປປ ລາວ ຕ້ອງພິຈາລະນາວາງແຜນ ແລະ ຄາດຫວັງຈາກການລົງທຶນໃໝ່ ທີ່ມຸ່ງເນັ້ນແກ້ໄຂບັນຫາສິ່ງແວດລ້ອມທີ່ນັບມື້ມີຫຼາຍຂຶ້ນ ແລະ ການເສີມຂະຫຍາຍສູ່ພາກບໍລິການ. ພື້ນທີ່ການງົບປະມານ ແຫ່ງລັດທີ່ຈຳກັດ ຊຶ່ງເປັນສະພາບທີ່ບໍ່ສາມາດສ້າງໜີ້ສິນໃໝ່ ຫຼື ດຳເນີນການຈັດຊື້ ທີ່ບໍ່ໄດ້ຄາດຫວັງໄວ້ (fiscal space) ຖືວ່າເປັນການກີດກັນຄວາມສາມາດ ຂອງ ສປປ ລາວ ໃນການລົງທຶນ ເພື່ອຂ້າມຜ່ານໄປສູ່ເສດຖະກິດຕາມທິດສີຂຽວ; ເຖິງຢ່າງໃດກໍດີ, ທ່າແຮງດ້ານພະລັງງານໄຟຟ້ານ້ຳຕົກທີ່ສຳຄັນ ແມ່ນຈະເປັນໂອກາດໃນການປັບໂຄງສ້າງລະບົບພະລັງງານຄືນໃໝ່ ໃຫ້ໄປສູ່ພະລັງງານທົດແທນ ແລະ ການສົ່ງເສີມການລົງທຶນຕ່າງປະເທດເຂົ້າໃນອຸດສາຫະກຳ ແລະ ການບໍລິການ ແບບສີຂຽວ ຈະເປັນສິ່ງສຳຄັນ. ໃນຂະນະທີ່ການເພີ່ມຜະລິດຕະພາບໃນຂະແໜງກະສິກຳ ອາດຈະຫຼຸດການລະໂອກາດສຳລັບການສ້າງວຽກເຮັດງານທຳໃນຟາມໂດຍກົງ, ມັນຈະເປັນການສົ່ງເສີມໂອກາດສ້າງວຽກງານໃໝ່ ໃນການບໍລິການທີ່ເພີ່ມມູນຄ່າໃນຂະແໜງກະສິກຳ ເຊັ່ນ ການເກັບຮວບຮວມຜົນຜະລິດ, ການເຮັດສາງເຢັນ ແລະ ການຈັດຈຳໜ່າຍ. ໃນອຸດສາຫະກຳປຸງແຕ່ງສະໄໝໃໝ່ ທີ່ມີການເພີ່ມການສ້າງວຽກເຮັດງານທຳໃນລະດັບພໍປະມານ, ບັນດາວຽກງານໃໝ່ສ່ວນຫຼາຍ ຈະຢູ່ໃນຂະແໜງບໍລິການ ເຊັ່ນ ການທ່ອງທ່ຽວ, ເສດຖະກິດວັດທະນະທຳ, ການປະມວນຜົນຂໍ້ມູນ ແລະ ການຄ້າດີຈີຕອນ.

ພະແນກ ອຄ ແຂວງ, ນະຄອນຫຼວງ ຕ້ອງກາຍເປັນພາກສ່ວນທີ່ມີການປະດິດຄິດສ້າງສັນສິ່ງໃໝ່ໆ ແລະ ມີແນວຄວາມຄິດ ຂອງການເປັນຜູ້ປະກອບກິດຈະການທຸລະກິດ ໂດຍມຸ່ງເນັ້ນໃສ່ການຈັດຫາຂໍ້ມູນ, ການໃຫ້ຄຳແນະນຳ ແລະ ການອຳນວຍຄວາມສະດວກໃຫ້ແກ່ພາກທຸລະກິດ. ເນື່ອງຈາກວ່າພາກທຸລະກິດ ໄດ້ມີຄວາມກະຕືລືລົ້ນຕໍ່ນະໂຍບາຍການຊຸກຍູ້ສົ່ງເສີມພິເສດ, ດ້ວຍເຫດນັ້ນ ກະຊວງ ອຄ ຄວນມຸ່ງເນັ້ນໃສ່ການສົ່ງເສີມເຕັກໂນໂລຊີ ທີ່ເປັນມິດກັບຜູ້ອອກແຮງງານ ໂດຍສະເພາະໃນຂະແໜງການບໍລິການ. ຍົກຕົວຢ່າງ, ໃນຂະແໜງການທ່ອງທ່ຽວ ແລະ ການບໍລິການດ້ານສຸຂະພາບ ການນຳໃຊ້ເຕັກໂນໂລຊີດີຈີຕອນ ແລະ ນະວັດຕະກຳປັນຍາປະດິດ (AI) ຈະຊ່ວຍຍົກລະດັບການປະຕິບັດໜ້າ

ທີ່ ແລະ ປະສິດທິພາບ ຂອງຜູ້ອອກແຮງງານ ທີ່ມີທັກສະຕ່ຳໄດ້. ນະວັດຕະກຳປັນຍາປະດິດ (AI) ບໍ່ໄດ້ມີຈຸດມຸ່ງໝາຍ ເພື່ອທົດແທນການອອກແຮງງານຂອງຄົນ: ມັນສາມາດຍົກລະດັບຜະລິດຕະພາບຂອງແຮງງານ. ຍົກຕົວຢ່າງ, ບັນດາ ການບໍລິການດ້ານໂທລະຄົມ, ການບໍລິການໃຫ້ຄຳປຶກສາ ດ້ວຍນະວັດຕະກຳປັນຍາປະດິດ (AI) ຈະຊ່ວຍຍົກລະດັບຜະ ລິດຕະພາບ ຂອງພະນັກງານບໍລິການລູກຄ້າທີ່ຂາດປະສົບການໄດ້.

ກະຊວງ ອຄ ຕ້ອງໃຫ້ບູລິມະສິດນະໂຍບາຍສິ່ງເສີມ ແກ່ບັນດາ ບໍລິສັດ ທຸກຂະໜາດ ແລະ ທຸກປະເພດ ໂດຍ ບໍ່ຈຳແນກ, ເພື່ອຮັບປະກັນການມີສ່ວນຮ່ວມ, ຄວາມຍຸຕິທຳ, ຍືນຍົງ ແລະ ການເຕີບໂຕຢ່າງມີຄຸນນະພາບ ແລະ ສ້າງ ວຽກເຮັດງານທຳທີ່ດີ ທີ່ສ້າງຜົນປະໂຫຍດໃຫ້ຄົນຈຳນວນຫຼາຍ. ສິ່ງດັ່ງກ່າວນີ້ ຈະຊ່ວຍສ້າງວຽກເຮັດງານທຳ ທີ່ໃຫ້ຜົນ ຕອບແທນສູງກວ່າ ໂດຍສະເພາະກຸ່ມຄົນຜູ້ທຸກຍາກ ແລະ ກຸ່ມຄົນທີ່ມີຄວາມບອບບາງ. ສປປ ລາວ ຕ້ອງຊຸກຍູ້ສິ່ງເສີມ ນະວັດຕະກຳ ທີ່ເປັນມິດກັບຜູ້ໃຊ້ແຮງງານ, ອາດເບິ່ງຕົວຢ່າງຂອງພາກທຸລະກິດທີ່ປະສົບຜົນສຳເລັດ ລວມທັງການນຳໃຊ້ ເຕັກໂນໂລຊີ ທີ່ນຳໃຊ້ຢູ່ມາຈາກບັນດາປະເທດລາຍຮັບປານກາງ ເປັນຕົ້ນ: ອິນເດຍ ແລະ ປະເທດອື່ນໆໃນອາຊີ ລວມທັງ ສປ. ຈີນ. ຈາກການສຶກສາຫຼ້າສຸດ ໂດຍທ່ານ Liu et al (2024) ພົບວ່າ ບັນດາປະເທດກຳລັງພັດທະນາ ຈະໄດ້ຮັບຜົນ ປະໂຫຍດຈາກການສິ່ງເສີມທຸລະກິດ ແລະ ນຳໃຊ້ເຕັກໂນໂລຊີ “ທີ່ເໝາະສົມ” ໂດຍສະເພາະຈາກ ຈີນ ແຕ່ຫາກບໍ່ແມ່ນ ເຕັກໂນໂລຊີຈາກ ປະເທດຮັ່ງມີ. ການຄົ້ນພົບດັ່ງກ່າວ ເຫັນວ່າສອດຄ່ອງກັບສະພາບຈຸດພິເສດ ຂອງ ສປປ ລາວ ເນື່ອງ ຈາກວ່າມີຈຸດທີ່ຕັ້ງພູມສັນຖານໃກ້ກັບ ສປ. ຈີນ.

ກະຊວງ ອຄ ເຂົ້າໃຈເລື່ອງຄວາມຈຳເປັນ ຂອງການລົງທຶນໃນການພັດທະນາຂີດຄວາມສາມາດ ເພື່ອເສີມສ້າງ ທັກສະຕົວຈິງ ຂອງຕົນ ໃນການສະໜັບສະໜູນພາກເອກະຊົນ, ໜຶ່ງໃນນັ້ນ, ແມ່ນເພື່ອອຳນວຍຄວາມສະດວກແກ່ການ ລົງທຶນ, ການນຳໃຊ້ເຕັກໂນໂລຊີໃໝ່, ເພີ່ມຜະລິດຕະພາບ, ພັດທະນາຕະຫຼາດໃໝ່ ແລະ ຍົກລະດັບຄຸນນະພາບ. ກະຊວງ ອຄ ມີຄວາມໝາຍໝັ້ນໃນການເປັນ “ກະຊວງທີ່ມີການຮຽນຮູ້”. ເມື່ອມີຄວາມອາດສາມາດ ແລະ ປະສົບການເພີ່ມຂຶ້ນ ຕະຫຼອດໄລຍະແຜນພັດທະນາ ແລະ ຫຼັງຈາກນັ້ນ, ກະຊວງ ອຄ ຈະພັດທະນາການດຳເນີນງານທີ່ສາມາດກະທົບໃສ່ ແລະ ກໍ່ໃຫ້ເກີດຜົນສຳເລັດ ຫຼາຍຂຶ້ນ ເພື່ອຈະສ້າງຜົນປະໂຫຍດໃນດ້ານເສດຖະກິດທີ່ກວ້າງ ຂວາງກວ່າເກົ່າ.

ກະຊວງ ອຄ ສະໜັບສະໜູນອຸດສາຫະກຳ ແລະ ການຄ້າ ຜ່ານການໃຊ້ມາດຕະການຕ່າງໆ ເພື່ອປັບປຸງສະພາບ ແວດລ້ອມທີ່ເອື້ອອຳນວຍ ຕໍ່ການດຳເນີນທຸລະກິດ ແລະ ຫຼຸດຕົ້ນທຶນການເຮັດທຸລະກຳການແລກປ່ຽນທາງເສດຖະກິດ. ເພື່ອບັນລຸການເພີ່ມ ການລົງທຶນ ແລະ ການຄ້າ ຈຳເປັນຕ້ອງໃຫ້ ກອຄ:

(i) **ສ້າງຄວາມເຂັ້ມແຂງໃຫ້ແກ່ການປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດເອກະຊົນ** ໃຫ້ມີປະສິດທິຜົນ ເພື່ອໃຫ້ພະນັກງານເຈົ້າໜ້າທີ່ ຂອງລັດ ເຂົ້າໃຈບັນຫາສິ່ງທ້າທາຍ ແລະ ກາລະໂອກາດທີ່ພາກເອກະຊົນກຳລັງປະເຊີນໜ້າ ຢູ່;

(ii) **ປັບປຸງການປະສານງານຕາມໜ່ວຍງານຕ່າງໆ ຂອງລັດຖະບານ** ຊຶ່ງອາດສາມາດຕອບສະໜອງ ຕໍ່ບັນຫາຂໍ້ຈຳກັດ ຂອງພາກທຸລະກິດເອກະຊົນ. ສິ່ງນີ້ມັກຈະໃຊ້ຄຳທີ່ມີຄວາມໝາຍກວ້າງ “ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ທຸລະ ກິດ.” ຈຳເປັນທີ່ບັນດາໜ່ວຍງານ ຂອງລັດຖະບານ ຈະຕ້ອງມີອຳນາດໜ້າທີ່ ສຳລັບປະສານງານ ແລະ ຈັດຕັ້ງປະຕິບັດ ການປະຕິຮູບຕ່າງໆ ດ້ານນະໂຍບາຍ, ລະບຽບການ ແລະ ການປຶກຄອງ ທີ່ໄດ້ຕົກລົງກັນແລ້ວ;

(iii) **ຮັບປະກັນວ່າສິ່ງກະຕຸກຊຸກຍູ້ຕ່າງໆ ມີການຕິດພັນກັບຜົນໄດ້ຮັບ.** ການໃຫ້ນະໂຍບາຍສິ່ງເສີມແກ່ບໍລິສັດ ຈະ ຕ້ອງຂຶ້ນຢູ່ກັບເງື່ອນໄຂການສ້າງຜົນໄດ້ຮັບ (ເຊັ່ນ ການຊຳລະຄືນເງິນກູ້, ການຮ່ວມຈັດຫາທຶນ) ເພື່ອໃຫ້ການສະໜັບສະ ໜູນດຳເນີນຕໍ່ໄປ. ການຕິດຕາມຜົນການປະຕິບັດວຽກງານ ແລະ ການຮັບປະກັນວ່າບໍລິສັດ ໄດ້ປະຕິບັດຕາມຫຼັກການທີ່ ຜູ້ບໍລິຫານມີສ່ວນໄດ້ສ່ວນເສຍຮ່ວມກັບເຈົ້າຂອງບໍລິສັດ ໃນການຕັດສິນໃຈ ຂອງຕົນ ເພື່ອຍົກສູງຄວາມຮັບຜິດຊອບຕໍ່

ຜົນໄດ້ຜົນເສຍ ຂອງການດຳເນີນທຸລະກິດ. ການໃຫ້ທຶນສົມທົບຊ່ວຍເຫຼືອລ້າໃຫ້ແກ່ພາກທຸລະກິດ (BAF) ຂອງ ໂຄງການ ສິ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (LCTP) ແມ່ນຕົວຢ່າງທີ່ດີ ແລະ ພາຍໃຕ້ແຜນພັດທະນາຫ້າປີ ກະຊວງ ອຄ ຈະເປີດຕົວການໃຫ້ທຶນທຶນສົມທົບຊ່ວຍເຫຼືອລ້າພາກຂະຫຍາຍ ເພື່ອເລັ່ງເປົ້າ ແນໃສ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ;

(iv) **ພັດທະນາການເຂົ້າເຖິງແຫຼ່ງທຶນ.** ເພື່ອຮັບມືກັບບັນຫາ ຂອງທຸລະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າເຖິງ ແຫຼ່ງເງິນທຶນ, ກະຊວງ ອຄ ຈະເຮັດວຽກຢ່າງໃກ້ຊິດ ກັບ ທະນາຄານແຫ່ງ ສປປ ລາວ ເພື່ອສົ່ງເສີມທະນາຄານ ພາຍໃນ ແລະ ບັນດາສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ມີການອອກແບບຜະລິດຕະພັນເງິນກູ້ໃຫ້ຫຼາກຫຼາຍຂຶ້ນ ໂດຍຫັນ ມານຳໃຊ້ແຫຼ່ງຂໍ້ມູນທາງເລືອກທີ່ແຕກຕ່າງ ໃຫ້ເກີດຜົນດີ ເຊັ່ນ: ກະແສເງິນສົດ ຂອງຫົວໜ່ວຍທຸລະກິດ ແທນທີ່ຈະ ອີງໃສ່ແຕ່ຫຼັກຊັບຄ້ຳປະກັນຕາມປະເພນີປະຕິບັດ;

(v) **ເສີມສ້າງຂີດຄວາມສາມາດທາງເຕັກນິກວິຊາການ ແລະ ປະສິດທິຜົນ ຂອງ ກະຊວງ ອຄ.** ກະຊວງ ອຄ ຈະເຄື່ອນ ໄຫວເປັນ “ກະຊວງທີ່ມີການຮຽນຮູ້” ທີ່ສາມາດປັບປຸງການດຳເນີນການແຊກແຊງ ແລະ ການສະໜັບສະໜູນ ໂດຍຄຳນຶງ ເຖິງວ່າ ສິ່ງໃດທີ່ເຮັດແລ້ວໄດ້ຮັບຜົນ ແລະ ສິ່ງໃດທີ່ເຮັດແລ້ວບໍ່ໄດ້ຮັບຜົນ. ອັນນີ້ຮຽກຮ້ອງໃຫ້ ກະຊວງ ອຄ ມີທີມງານ ການຕິດຕາມ ແລະ ປະເມີນຜົນ ທີ່ມີປະສິດທິພາບ. ການປະເມີນຜົນເປົ້າໝາຍຜົນໄດ້ຮັບຢ່າງຕໍ່ເນື່ອງ ແລະ ການດັດປັບ ການດຳເນີນການແຊກແຊງ ຕາມຄວາມຈຳເປັນ ແມ່ນມີຄວາມສຳຄັນ. ມີຄວາມເຕັມໃຈ “ຮຽນຮູ້ຈາກການປະຕິບັດ” ແມ່ນຈະຊ່ວຍໃຫ້ ກອຄ ສາມາດປັບວິທີການ ແລະ ການດຳເນີນການແຊກແຊງໃຫ້ມີປະສິດທິພາບ ແລະ ສິ່ງຜົນກະທົບ ທີ່ກວ້າງຂວາງ. ຕົວຢ່າງ: ສປ ຈີນໄດ້ສະແດງໃຫ້ເຫັນຄວາມຕັ້ງໃຈໃນການທົດລອງນະໂຍບາຍໃໝ່ໆໃນພື້ນທີ່ ຫຼື ແຂວງ ທີ່ຖືກກຳນົດສະເພາະ, ແລ້ວຈຶ່ງດັດປັບມາດຕະການສິ່ງເສີມຕ່າງໆຕາມຜົນທີ່ໄດ້ຮັບ.

ພາກທີ II

ເປົ້າໝາຍ, ທິດທາງລວມ ແລະ ລະດັບຄາດໝາຍຊີ້ນຳ ຂອງການພັດທະນາ ຂອງແຜນການພັດທະນາ 5 ປີ ຂອງ ກອຄ

ຄຳຂວັນ:

" ເສີມຂະຫຍາຍທ່າແຮງ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ໃຫ້ເປັນກຳລັງຂັບເຄື່ອນ ເສດຖະກິດ ເອກະລາດ-ເປັນເຈົ້າຕົນເອງ ຢ່າງໜັກແໜ້ນ".

2.1. ສະພາບແວດລ້ອມ ທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ

ສປປ ລາວ ເປັນປະເທດເສດຖະກິດຂະໜາດນ້ອຍທີ່ມີຄວາມສ່ຽງຕໍ່ຜົນກະທົບພາຍນອກ ເຊັ່ນ: ການຢຸດຊະງັກ ຂອງລະບົບຕ່ອງໂສ້ການສະໜອງທີ່ເປັນຜົນມາຈາກຄວາມແຕກແຍກທາງພູມສາດການເມືອງ, ການປິດຊາຍແດນ, ພາວະສຸກເສີນດ້ານສາທາລະນະສຸກທົ່ວໂລກ, ຄວາມລົ້ມເຫຼວ ຂອງການຂົນສົ່ງ ລະຫວ່າງ ປະເທດ ແລະ ການເພີ່ມຄວາມ ຖີ່ ຂອງເຫດການສະພາບອາກາດປັ່ນປ່ວນຮ້າຍແຮງ ຊຶ່ງມີຜົນມາຈາກການປ່ຽນແປງ ຂອງດິນຟ້າອາກາດ. ການເສີມສ້າງ ຄວາມສາມາດໃນການປັບຕົວທາງເສດຖະກິດ ຂອງ ສປປ ລາວ ຕໍ່ຜົນກະທົບພາຍນອກເຫຼົ່ານີ້ ແມ່ນເປັນພື້ນຖານ ຂອງ ເປົ້າໝາຍຍຸດທະສາດ ຂອງແຜນພັດທະນາ 5 ປີ ຂອງ ກອຄ. ສປປ ລາວ ພະຍາຍາມບັນລຸການເຕີບໂຕທີ່ສູງຂຶ້ນໂດຍ ການປັບຕົວເຂົ້າກັບອຸດສາຫະກຳ ແລະ ການຄ້າ ທີ່ເປັນມິດກັບສິ່ງແວດລ້ອມຫຼາຍຂຶ້ນ ແລະ ຮັບຮູ້ວ່າບັນດາລະບຽບການ ແລະ ນະໂຍບາຍການຄ້າ ທີ່ ເປັນມິດຕໍ່ສິ່ງແວດລ້ອມ ແມ່ນຕ້ອງຂັບເຄື່ອນຕົ້ນຕໍ ເພື່ອບັນເທົາຜົນກະທົບການປ່ຽນແປງດິນ ຟ້າອາກາດ ແລະ ເພື່ອສົ່ງເສີມເສດຖະກິດທີ່ມີຄວາມສາມາດແຂ່ງຂັນຫຼາຍຂຶ້ນ ແລະ ສາມາດສ້າງການເຕີບໂຕ ທີ່ຍືນຍົງ ແລະ ປັບຕົວໄດ້ເມື່ອຖືກຜົນກະທົບ.

ການຄ້າມີທ່າແຮງທີ່ຈະເປັນ ແຫຼ່ງຂອງສິນຄ້າ ແລະ ການບໍລິການ ທີ່ມີການປ່ອຍອາຍພິດໜ້ອຍ, ເປັນແຫຼ່ງຂອງ ການແຜ່ກະຈາຍເຕັກໂນໂລຊີສີຂຽວ, ການເພີ່ມຜະລິດຕະພາບ ແລະ ການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ. ເພື່ອ ບັນລຸຜົນເປົ້າໝາຍການເຕີບໂຕສີຂຽວ, ມັນຮຽກຮ້ອງໃຫ້ມີນະໂຍບາຍແບບແຕ່ງບຸກ ທີ່ສົ່ງເສີມການຄ້າສິນຄ້າ, ການ ບໍລິການ ແລະ ຄວາມຮູ້ ທີ່ມີການປ່ອຍອາຍພິດໜ້ອຍ ແລະ ການຫຼຸດຜ່ອນ ຫຼື ຈຳກັດເງິນອຸດໜູນສຳລັບການຜະລິດທີ່ ປ່ອຍກາກບອນສູງ. ຄວາມເປັນຫ່ວງ ຂອງໂລກທີ່ເພີ່ມຂຶ້ນກ່ຽວກັບຄວາມສ່ຽງ ຂອງການປ່ຽນ ແປງດິນຟ້າອາກາດ ໄດ້ສ້າງໂອກາດໃຫ້ ສປປ ລາວ ມີການປົກປ້ອງສົ່ງເສີມການລົງທຶນໃນການຫັນເປັນອຸດສາຫະກຳ ແລະ ການບໍລິການ ສີຂຽວ ໃນຖານະປະເທດກຳລັງພັດທະນາ.

ສປປ ລາວ ເປັນພາຄີ ຂອງສັນຍາປາຣີ ແລະ ໄດ້ຍື່ນແຜນການຈັດຕັ້ງປະຕິບັດການປະກອບສ່ວນທີ່ໄດ້ຖືກ ກຳນົດໃນລະດັບຊາດ (NDC) ສະບັບປັບປຸງ ຕໍ່ສົນທິສັນຍາຂອບ ຂອງສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າ ອາກາດ (UNFCCC) ໃນ ເດືອນມີນາ 2021. ນີ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນ ຂອງ ສປປ ລາວ ຕໍ່ການ ຫຼຸດຜ່ອນ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ໂດຍການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ GHG ແລະ ການສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດພາຍໃນປີ 2030 ແລະ ການບັນລຸການປ່ອຍອາຍ ພິດສຸດທິເປັນສູນພາຍໃນປີ 2050. ລັດຖະບານໄດ້ຮັບຮອງແຜນງານຫຼຸດຜ່ອນ ແລະ ແຜນງານປັບຕົວໄດ້ຖືກວາງອອກ ສຳລັບ ກະສິກຳ, ປ່າໄມ້ ແລະ ການນຳໃຊ້ທີ່ດິນ (AFOLU), ພະລັງງານ, ການຂົນສົ່ງ, ແລະ ການຄຸ້ມຄອງສິ່ງເສດເຫຼືອ. ການຈັດຕັ້ງປະຕິບັດ NDC ຢ່າງມີປະສິດທິພາບຮຽກຮ້ອງການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນຈາກພາຍນອກ

ຢ່າງຫຼວງຫຼາຍ. ໃນຂະນະທີ່ NDC ໄດ້ກ່າວເຖິງຄວາມຈຳເປັນທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ (ກະຊວງ ກສ) ຈະຕ້ອງປະສານງານ ກັບ ກອຄ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດທີ່ມີປະສິດທິພາບ, ປັດຈຸບັນ NDC ຍັງບໍ່ໄດ້ລວມເອົາມຸມມອງດ້ານທຸລະກິດ ແລະ ການຄ້າຢ່າງຊັດເຈນ. ກອຄ ຈະເຮັດວຽກຮ່ວມກັບ ກະຊວງ ກສ ເພື່ອແກ້ໄຂຊ່ອງວ່າງດັ່ງກ່າວ.

ຂໍ້ຕົກລົງສີຂຽວ ຂອງ EU ແລະ ຊຸດ "Fit for 55" ໄດ້ໃຫ້ຄຳໝັ້ນສັນຍາທີ່ຈະຫຼຸດຜ່ອນ GHG ຢ່າງໜ້ອຍ 55 ສ່ວນຮ້ອຍ ພາຍໃນປີ 2030 ແລະ ບັນລຸຄວາມເປັນກາງ ຂອງການກ ບອນພາຍໃນປີ 2050. ການບັນລຸເປົ້າໝາຍເຫຼົ່ານີ້ສ່ວນໃຫຍ່ແມ່ນຂຶ້ນກັບກົນໄກການຊື້ຂາຍການປ່ອຍອາຍພິດ (ETS) . ເພດານ ETS ຂອງ EU ມີກຳນົດທີ່ຈະຫຼຸດລົງເທື່ອລະໜ້ອຍ ເມື່ອເວລາຜ່ານໄປ. ການກຳນົດເພດານ ETS ພາຍໃນ EU ຈະເປັນການຜັກດັນໃຫ້ກິດຈະກຳທີ່ໃຊ້ການກ ບອນສູງໃຫ້ຍ້າຍອອກໄປບ່ອນອື່ນ, ເຮັດໃຫ້ຜູ້ຜະລິດ ຂອງ EU ເສຍປຽບ ແລະ ມີຜົນກະທົບທີ່ຈຳກັດຕໍ່ການຫຼຸດຜ່ອນ GHG ຢູ່ທົ່ວໂລກ. ຄວາມເປັນຫ່ວງ ຂອງບັນດາປະເທດສະມາຊິກ EU ກ່ຽວກັບການຮົ່ວໄຫຼ ຂອງການ ບອນ, ການສູນເສຍສ່ວນແບ່ງຕະຫຼາດໂດຍຜ່ານການປ່ຽນ ທີ່ຕັ້ງການຜະລິດ ຂອງຕ່ອງໂສ້ມູນຄ່າ ລະດັບໂລກ (GVC) ໄປສູ່ເສດຖະກິດທີ່ບໍ່ມີການກຳນົດລາຄາການ ບອນ, ແລະ ຕົ້ນທຶນຕ່ຳສະຫວັດດີການຈາການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດໃນຂອບເຂດທົ່ວໂລກ ໄດ້ສົ່ງຜົນໃຫ້ EU ນຳໃຊ້ກົນໄກການປັບປ່ຽນການ ບອນຊາຍແດນ (CBAM) ໃນເດືອນ ຕຸລາ 2023 ເພື່ອພະຍາຍາມຮັກສາຄວາມສະເໝີພາບໃນການແຂ່ງຂັນ. CBAM ຮຽກຮ້ອງໃຫ້ປະເທດສົ່ງອອກລາຍງານກ່ຽວກັບການປ່ອຍອາຍພິດໂດຍກົງ ແລະ ທາງອ້ອມທີ່ນອນຢູ່ໃນບາງຜະລິດຕະພັນທີ່ນຳເຂົ້າ EU. CBAM ຊຸກຍູ້ບໍລິສັດ EU ແລະ ຕ່າງປະເທດໃຫ້ຫຼຸດຜ່ອນການປ່ອຍອາຍການ ບອນໃນເວລາສົ່ງອອກໄປ EU. ຫຼັງຈາກໄລຍະຂ້າມຜ່ານ 3 ປີ, ຜູ້ນຳເຂົ້າຈະເລີ່ມຈ່າຍຄ່າຊັກພິເສດຕັ້ງແຕ່ເດືອນມັງກອນ 2026 ສຳລັບສິນຄ້ານຳເຂົ້າທີ່ໃຊ້ການ ບອນສູງ, ເຊິ່ງທຽບເທົ່າກັບມູນຄ່າທີ່ເກັບຈາກສິນຄ້າພາຍໃນປະເທດພາຍໃຕ້ EU ETS. ຜູ້ນຳເຂົ້າຈະຊື້ໃບອະນຸຍາດຕາມລາຄາ ETS ທີ່ໃຊ້ຢູ່. ໃບອະນຸຍາດແມ່ນຖືກກຳນົດລາຄາຕາມການປ່ອຍອາຍພິດທັງໝົດທີ່ນອນຢູ່ໃນຜະລິດຕະພັນ (CO_2 ຕໍ່ໂຕນ). ລະບຽບນີ້ຈະຖືກນຳໃຊ້ກັບສິນຄ້າປະເພດອາລູມິນຽມ, ຊີມັງ, ໄຟຟ້າ, ຝຸ່ນເຄມີ, ເຫຼັກ ແລະ ເຫຼັກກ້າ, ໄຮໂດຣເຈນ, ພລາສຕິກ, ແລະ ສານເຄມີອິນຊີ. EU ຈະເພີ່ມຈຳນວນຜະລິດຕະພັນທີ່ຢູ່ພາຍໃຕ້ CBAM ໃນຊ່ວງປີ 2026-2030 ເພື່ອລວມເອົາຜະລິດຕະພັນທັງໝົດທີ່ຄອບຄຸມໂດຍ ETS. ດັ່ງນັ້ນ, ຮອດປີ 2030, CBAM ຈະຖືກນຳໃຊ້ກັບເຊລາມິກ, ປູນຂາວ, ແກ້ວ, ເຍື່ອເຈ້ຍ, ເຈ້ຍ, ແລະ ເຈ້ຍການກ ຕົ່ງ. ສປປ ລາວ ເປັນຜູ້ສົ່ງອອກ ເຍື່ອເຈ້ຍ, ເຈ້ຍ ແລະ ເຈ້ຍການກ ຕົ່ງທີ່ສຳຄັນ.

ບໍລິສັດທີ່ສົ່ງອອກຜະລິດຕະພັນທີ່ໄດ້ເງື່ອນໄຂໄປ EU ຈະໄດ້ລາຍງານການກຳນົດການປ່ອຍອາຍພິດໂດຍອີງໃສ່ຂໍ້ມູນກິດຈະກຳ ແລະ ປັດໄຈການຄຳນວນ ຫຼື ໂດຍການວັດແທກ GHG ທີ່ກ່ຽວຂ້ອງໃນອາຍພິດຢ່າງຕໍ່ເນື່ອງ ດ້ວຍວິທີການ ທີ່ EU ນຳໃຊ້. **ຜົນການລາຍງານຈະຕ້ອງໄດ້ຮັບການຢັ້ງຢືນໂດຍບຸກຄົນທີສາມທີ່ໄດ້ຮັບການຮັບຮອງແລ້ວ. ກອຄ ຈະເຮັດວຽກຮ່ວມກັບ EU ໃນການສ້າງຄວາມສາມາດທາງດ້ານວິຊາການເພື່ອຊ່ວຍ ເຫຼືອທຸລະກິດ ຂອງ ສປປ ລາວ ໃຫ້ສາມາດປະຕິບັດຕາມຂໍ້ກຳນົດ CBAM.**

ກົດລະບຽບກ່ຽວກັບຜະລິດຕະພັນທີ່ບໍ່ມີການຕັດໄມ້ທຳລາຍປ່າ (EUDR) ຈະຖືກເລີ່ມນຳໃຊ້ກັບ ບໍລິສັດຂະໜາດໃຫຍ່ ແລະ ກາງ ໃນວັນທີ 30 ທັນວາ 2025, ແລະ ເລີ່ມແຕ່ ວັນທີ 30 ມິຖຸນາ 2026 ຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ກໍ່ຈະໄດ້ເລີ່ມປະຕິບັດ ເຊັ່ນກັນ. ລະບຽບດັ່ງກ່າວຮຽກຮ້ອງໃຫ້ຜູ້ດຳເນີນງານ ຫຼື ທຸລະກິດທີ່ຕ້ອງການນຳສິນຄ້າເຂົ້າ EU, ຫຼື ສົ່ງອອກຈາກ EU, ຕ້ອງສາມາດພິສູດ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຜະລິດຕະພັນດັ່ງກ່າວຢູ່ໃນປະເທດທີ່ຜະລິດ, ຕ້ອງໄດ້ຢັ້ງຢືນວ່າ ສິນຄ້າດັ່ງກ່າວບໍ່ໄດ້ມາຈາກທີ່ດິນທີ່ຖືກຕັດໄມ້ທຳລາຍປ່າ ຫຼັງວັນທີ 31 ທັນວາ 2020, ຫຼື ບໍ່ໄດ້ປະກອບສ່ວນເຮັດໃຫ້ປ່າໄມ້ເສື່ອມໂຊມ. EUDR ນີ້ຈະຖືກນຳໃຊ້ກັບໄມ້, ໂກໂก้, ຖົ່ວເຫຼືອງ, ນ້ຳມັນປາມ, ກາເຟ, ຢາງພາລາ ແລະ ບາງຜະລິດຕະພັນທີ່ໄດ້ມາຈາກສິ່ງເຫຼົ່ານີ້ ລວມທັງ ໜັງ, ຊັອກໂກແລັດ ແລະ ເຄື່ອງເຟີນີເຈີ. ຜູ້ຜະລິດ ແລະ ຜູ້ສົ່ງອອກ ຂອງ ສປປ ລາວ ຈະມີໄລຍະເວລາຂ້າມຜ່ານ 3 ປີ; ຢ່າງໃດກໍຕາມ, ການປະຕິບັດລະບຽບການດັ່ງກ່າວ ຈະຮຽກຮ້ອງໃຫ້ມີການເກັບກຳຂໍ້ມູນ, ໂດຍສະເພາະຂໍ້ມູນ GPS ກ່ຽວກັບພື້ນທີ່ທຳການຜະລິດ. **ຜູ້ສົ່ງອອກ ຂອງ ສປປ ລາວ ຕ້ອງມີຄວາມສາມາດໃນການພິສູດ ແລະ ການຕິດຕາມແຫຼ່ງວັດຖຸດິບ ຂອງຜະລິດຕະພັນຕົນເອງ.**

ສປປ ລາວ ມຸ່ງໝັ້ນທີ່ຈະສືບຕໍ່ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ທຸລະກິດ, ນຳໃຊ້ນະໂຍບາຍການຄ້າ ແລະ ການປະຕິຮູບກົດລະບຽບເພື່ອລະດົມການລົງທຶນ, ຫຼຸດຜ່ອນ ແລະ ກຳຈັດມາດຕະການທີ່ບໍ່ແມ່ນອັດຕາພາສີ, ຫັນຂັ້ນຕອນການຄ້າໃຫ້ເປັນດິຈິຕອນເພື່ອຫຼຸດຜ່ອນຕົ້ນທຶນການຄ້າ, ຂັບເຄື່ອນຜົນຜະລິດ, ສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ສ້າງຄວາມທົນທານ. ການຈັດຕັ້ງປະຕິບັດວາລະເສດຖະກິດພາກພື້ນອາຊຽນຢ່າງຫ້າວຫັນຈະເປັນຕົວຂັບເຄື່ອນຫຼັກໃນການສົ່ງເສີມການເຕີບໂຕ ຂອງເສດຖະກິດລາວ.

ໃນລະຫວ່າງ ແລະ ຫຼັງການລະບາດ ຂອງພະຍາດໂຄວິດ-19, GVC ຂອງອາຊີໄດ້ເລີ່ມຫັນເປັນພາກພື້ນຫຼາຍຂຶ້ນ, ເຖິງແມ່ນວ່າການຫັນເປັນພາກພື້ນ ຂອງ GVC ສ່ວນໃຫຍ່ແມ່ນເນັ້ນການເຊື່ອມໂຍງໄປຂ້າງໜ້າ (forward linkage) (ຜົນຜະລິດຈາກອຸດສາຫະກຳໜຶ່ງຈະກາຍເປັນວັດຖຸດິບ ສຳລັບອຸດສາຫະກຳອື່ນອີກຕໍ່ໄປ), ສ່ວນການເຊື່ອມໂຍງໄປຂ້າງຫຼັງ (ການເຊື່ອມໂຍງໄປຍັງອຸດສາຫະກຳທີ່ຜະລິດວັດຖຸດິບໃຫ້ຕົນ) ແມ່ນຍັງບໍ່ມີຫຼາຍ. GVC ຂອງ ສປປ ລາວ ມີລະດັບການປ່ອຍອາຍພິດ CO_2 ສູງກວ່າປະເທດສະມາຊິກອາຊຽນອື່ນໆ, ການເພີ່ມຂຶ້ນ 1 ສ່ວນຮ້ອຍ ຂອງຜົນຜະລິດ GVC ສົ່ງຜົນໃຫ້ການປ່ອຍອາຍພິດ CO_2 ລວມເພີ່ມຂຶ້ນ 3.5 ສ່ວຍຮ້ອຍ. **ອັນນີ້ຖືວ່າສູງກວ່າບັນດາສະມາຊິກອື່ນໆ ຂອງອາຊຽນ.** ໃນ ສປປ ລາວ, ກິດຈະກຳທາງເສດຖະກິດທີ່ອີງໃສ່ຊັບພະຍາກອນ ທຳມະຊາດແມ່ນສຸມໃສ່ຢູ່ໃນຂັ້ນຕົ້ນນ້ຳ (ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງຂັ້ນຕົ້ນ) ຂອງ GVC, ແລະ ກິດຈະກຳທາງເສດຖະກິດຕົ້ນນ້ຳແມ່ນຕິດພັນກັບລະດັບການປ່ອຍອາຍພິດທີ່ສູງກວ່າ. ໃນປີ 2023, ສປປ ລາວ ມີການປ່ອຍອາຍພິດ CO_2 ສູງສຸດ ທຽບກັບມູນຄ່າການເພີ່ມໃນ GVCs ໃນໂລກ ແລະ ເມື່ອວັດແທກດ້ວຍມູນຄ່າເພີ່ມທັງໝົດ, ສປປ ລາວແມ່ນອັນດັບສອງ[1]. ສິ່ງນີ້ເປັນການສະທ້ອນເຖິງໂຄງສ້າງເສດຖະກິດ ຂອງ ສປປ ລາວ ທີ່ ໄຟຟ້າ, ບໍ່ແຮ່, ແລະ ໂລຫະພື້ນຖານມີສັດສ່ວນທີ່ສູງ ຢູ່ໃນ GDP.

[1] ADB, *Asian Economic Integration Report 2024: Decarbonizing Global Value Chains*, Manila, February 2024. Figure 6.11 page 156

ການເປີດເສລີມາດຕະການທີ່ບໍ່ແມ່ນພາສີ (NTM) ສາມາດຈຳກັດການເຂົ້າເຖິງສິນຄ້າທີ່ເປັນມິດກັບສິ່ງແວດລ້ອມ (ເອີ້ນວ່າສິນຄ້າສິ່ງແວດລ້ອມ, EG). ອັນນີ້ອາດຈະລວມເຖິງຂໍ້ກຳນົດການຫຸ້ມຫໍ່ ແລະ ການຕິດສະຫຼາກ, ມາດຕະຖານເຕັກນິກ ແລະ ຂໍ້ກຳນົດຕ່າງໆ. ຍິ່ງໄປກວ່ານັ້ນ, ນະໂຍບາຍພາຍໃນປະເທດ ເຊັ່ນ: ກົດລະ ບຽບຕະຫຼາດແຮງງານ (ຂໍ້ກຳນົດວີຊາ ແລະ ໃບອະນຸຍາດເຮັດວຽກ) ອາດຈະຈຳກັດການຄ້າບໍລິການດ້ານສິ່ງແວດລ້ອມ (ການໃຫ້ຄຳແນະນຳດ້ານເຕັກນິກສຳລັບການເພີ່ມວິທີປະຕິບັດການຄຸ້ມຄອງທີ່ຍືນຍົງ). ຈຳນວນການແຈ້ງເຕືອນທີ່ກ່ຽວຂ້ອງກັບສະພາບອາກາດຕໍ່ WTO ໄດ້ເພີ່ມຂຶ້ນຫຼາຍກວ່າສອງເທົ່າໃນລະຫວ່າງປີ 2009 ຫາ 2021, ໃນນັ້ນ 22 ສ່ວນຮ້ອຍແມ່ນກ່ຽວຂ້ອງກັບການຫຼຸດຜ່ອນ ແລະ ການປັບຕົວເຂົ້າກັບສະພາບອາກາດ. ມາດຕະການການປ່ຽນແປງດິນຟ້າອາກາດທີ່ກ່ຽວຂ້ອງກັບການຄ້າລວມມີກົດລະບຽບດ້ານເຕັກນິກ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງທີ່ຮຽກຮ້ອງໃຫ້ GVCs ປະຕິບັດຕາມ.

ຂໍ້ຕົກລົງການຄ້າໃໝ່ທັງໝົດແມ່ນມີຂໍ້ກຳນົດດ້ານສິ່ງແວດລ້ອມທີ່ສົ່ງເສີມການຄ້າສິນຄ້າ ແລະ ການບໍລິການທີ່ຕິດພັນກັບສິ່ງແວດລ້ອມ ແລະ ຊຸກຍູ້ການຮ່ວມມືໃນການຂົນສົ່ງທີ່ຍືນຍົງ. WTO ສາມາດຊ່ວຍເພີ່ມຄວາມໂປ່ງໃສຜ່ານການປັບປຸງກົນໄກການແຈ້ງຂໍ້ມູນ ພາຍໃຕ້ກົນໄກການທົບທວນນະໂຍບາຍການຄ້າ. ຄວາມບໍ່ແນ່ນອນໃນປັດຈຸບັນກ່ຽວກັບນະໂຍບາຍການຄ້າ ຂອງສະຫະລັດອາເມຣິກາ ເຊິ່ງນຳໄປສູ່ການເພີ່ມພາສີສຳລັບ ສປປ ລາວ, ປະເທດສະມາຊິກອາຊຽນອື່ນໆ, ແລະ ຄູ່ຄ້າອື່ນໆ ລວມທັງຈີນ ແລະ EU, ເປັນຄວາມສ່ຽງທີ່ອາດຈະສົ່ງຜົນກະທົບຕໍ່ການຄ້າທີ່ມີຢູ່ປັດຈຸບັນ ແລະ ສປປ ລາວ ກໍ່ຕ້ອງຮັບປະກັນການປະຕິບັດຕາມຂໍ້ຕົກລົງສີຂຽວ ຂອງ EU. ພາຍໃຕ້ຄວາມບໍ່ແນ່ນອນທົ່ວໂລກເຫຼົ່ານີ້, ຄວາມມຸ່ງໝັ້ນ ແລະ ຢຶດໝັ້ນ ຂອງ ສປປ ລາວ ຕໍ່ວາລະເສດຖະກິດອາຊຽນ, ລວມທັງວິໄສທັດ ອາຊຽນ 2045, ແມ່ນພື້ນຖານຍຸດທະສາດ ຂອງ ກອຄ ສຳລັບປີ 2026-2030. ສປປ ລາວ ເປັນປະເທດທີ່ເຊື່ອມຈອດທາງບົກກັບ ສປ ຈີນ ແລະ ສີ່ປະເທດສະມາຊິກອາຊຽນ (AMS). ການຫຼຸດຜ່ອນອຸປະສັກທາງການຄ້າກັບປະເທດເພື່ອນບ້ານເຫຼົ່ານີ້ຈະສ້າງໂອກາດສຳລັບການເພີ່ມການລົງທຶນ ແລະ ການຄ້າ. ກອຄ ຈະຕັ້ງໜ້າສົ່ງເສີມໂອກາດການລົງທຶນຕາມເສັ້ນທາງການຂົນສົ່ງບໍ່ເຕັ່ນ-ວຽງຈັນ-ບາງກອກ.

2.2 ທິດທາງລວມ, ເປົ້າໝາຍ, ແຜນວຽກຈຸດສຸມ ຂອງແຜນພັດທະນາ 5 ປີ 2026-2030

ວິໄສທັດ 2030 ໄດ້ກຳນົດເປົ້າໝາຍ ເພີ່ມລາຍໄດ້ແຫ່ງຊາດສະເລ່ຍຕໍ່ຫົວຄົນຫຼາຍກວ່າສີ່ເທົ່າຈາກປີ 2015 ດ້ວຍການຈັດຕັ້ງປະຕິບັດ “ການພັດທະນາເສດຖະກິດຕະຫຼາດຢ່າງເປັນລະບົບຕາມທິດສັງຄົມນິຍົມ” ໂດຍ “ການສົ່ງເສີມທຸກຂະແໜງການທີ່ມີທ່າແຮງສູງ ແລະ ສ້າງໂຄງລ່າງພື້ນຖານເສດຖະກິດເພື່ອການຫັນເປັນອຸດສາຫະກຳ ແລະ ທັນສະໄໝ”. ລັດຖະບານ ສປປ ລາວ ແມ່ນຢຶດໝັ້ນຕໍ່ ແນວທາງການພັດທະນາທີ່ເຊື່ອມສານການໃຫ້ໂອກາດແກ່ທຸກຄົນໃນສັງຄົມຢ່າງທົ່ວເຖິງ ແລະ ເນັ້ນຄວາມຍືນຍົງ.

ແຜນພັດທະນາ 5 ປີ ຂອງ ກອຄ 2026-2030 ແມ່ນສອດຄ່ອງກັບທິດຊີ້ນຳ ຂອງມະຕິ 4 ຂອງສູນກາງພັກ ແລະ ມະຕິ ຂອງລັດຖະບານ, ວິໄສທັດ ແລະ ເປົ້າໝາຍລວມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X, ເປົ້າໝາຍການພັດທະນາແບບຍືນຍົງ ຂອງສະຫະປະຊາຊາດ (SDGs) ເຖິງປີ 2030[2], ຄາດໝາຍ ຂອງອາຊຽນ, ລວມທັງຄຳໝັ້ນສັນຍາທີ່ໄດ້ຕົກລົງໃນປີ 2025 ຂອງອາຊຽນ ຄື: ການກ້າວໄປຂ້າງໜ້າຮ່ວມກັນ ຕາມວິໄສທັດ 2045 ຂອງ

[2] SDGs 8, 9 and 12 ແມ່ນຕິດພັນກັບພາລະບົດບາດໂດຍກົງຂອງ ກຊ ອຄ.

ອາຊຽນ, ແລະ ແຜນແມ່ບົດດິຈິຕອນອາຊຽນ. ເປົ້າໝາຍຂອງບັນດາປະເທດສະມາຊິກອາຊຽນແມ່ນ ການພັດທະນາອາຊຽນ ໃຫ້ກາຍເປັນກຸ່ມເສດຖະກິດ ທີ່ມີຂະໜາດໃຫຍ່ເປັນອັນດັບທີ 4 ຂອງໂລກ ກ່ອນປີ 2045. ການບັນລຸເປົ້າໝາຍນີ້ຈະຮຽກຮ້ອງໃຫ້ບັນດາປະເທດສະມາຊິກ, ລວມທັງ ສປປ ລາວ, ເສີມສ້າງການເຊື່ອມໂຍງເສດຖະກິດ ແລະ ເພີ່ມຄວາມສາມາດປັບຕົວເມື່ອຖືກຜົນກະທົບຈາກພາຍນອກ ໃຫ້ສູງກ່ວາເກົ່າ.

ເພື່ອໃຫ້ບັນລຸເປົ້າໝາຍລວມ ຂອງການພັດທະນາໃນ NSEDP 10 ໃນການກໍ່ສ້າງເສດຖະກິດໃຫ້ເຂັ້ມແຂງ, ເພິ່ງຕົນເອງໄດ້ ແລະ ສັງຄົມທີ່ມີສະຖຽນລະພາບ ໂດຍການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງ, ການປັບປຸງຊີວິດການເປັນຢູ່, ແລະ ການເຊື່ອມຕົວເຂົ້າກັບປະຊາຄົມໂລກ, ແລະ ການປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ໃນຂະນະດຽວກໍຮັບປະກັນໃຫ້ການຄຸ້ມຄອງບໍລິຫານ ມີປະສິດທິພາບ ແລະ ໝັ້ນທ່ຽງ, ໄດ້ມີການວາງແຜນ 5 ປີ ຂອງ ກອຄ ປີ່ນອ້ອມສາມເສົາຄ້ຳ/ເປົ້າໝາຍຍຸດທະສາດ: (i) ສົ່ງເສີມການພັດທະນາອຸດສາຫະກຳ, (ii) ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ, ແລະ (iii) ຍົກລະດັບການພັດທະນາພາກເອກະຊົນ ແລະ ວິສາຫະກິດ ທີ່ໄດ້ຮັບການສະໜັບສະໜູນໂດຍກົງຈາກແຜນງານສະໜັບສະໜູນປີ່ນອ້ອມ ຊຶ່ງມີ 4 ບັນຫາປີ່ນອ້ອມ ທີ່ສອດຫ້ອຍກັບຫຼາຍໆວຽກງານ ເຊິ່ງປະກອບດ້ວຍ: (i) ສ້າງຂີດຄວາມສາມາດ, (ii) ພັດທະນາອຸດສາຫະກຳ ແລະ ການຄ້າຕາມທິດຍືນຍົງ, (iii) ເລັ່ງການຫັນເປັນດິຈິຕອນ ແລະ (VI) ສົ່ງເສີມຄວາມສະເໝີພາບທາງເພດ ແລະ ການມີສ່ວນຮ່ວມ ຊຶ່ງຈະຖືກລວມເຂົ້າໃນບັນດາກິດຈະກຳໃນທັງໝົດສາມເປົ້າໝາຍ (ຜົນໄດ້ຮັບ) ຍຸດທະສາດ. ບັນດາກິດຈະກຳ ຂອງ ແຜນພັດທະນາ 5 ປີ ຂອງ ກອຄ 2026-2030 ຈະຖືກຕິດຕາມ ແລະ ປະເມີນຜົນເປັນປົກກະຕິຕະຫຼອດຫ້າປີ ແລະ ວັດແທກທຽບໃສ່ຕົວຊີ້ບອກທີ່ໄດ້ກຳນົດໄວ້.

ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030 ແລະ ເປົ້າໝາຍການພັດທະນາເສດຖະກິດ ສັງຄົມ-ແຫ່ງຊາດ 5 ປີ ຄັ້ງທີ X (2026-2030)

ເສດຖະກິດທີ່ເປັນເອກະລາດ ແລະ ເພິ່ງຕົນເອງ

ເປົ້າໝາຍທີ 1 : ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທ່າແຮງ ເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ.

ເປົ້າໝາຍທີ 2: ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ຮັ່ງມີໃຊ້ເຕັກໂນໂລຊີທີ່ທັນສະໄໝ.

ເປົ້າໝາຍທີ 3: ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງ ແລະ ຊົນນະບົດ ໄດ້ຮັບການພັດທະນາຢ່າງສົມດຸ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ.

ເປົ້າໝາຍທີ 4: ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ.

ເປົ້າໝາຍທີ 5: ພັດທະນາການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນ.

ເປົ້າໝາຍທີ 6: ພັດທະນາການຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ.

ສົມມຸດຕິຖານທີ່ສຳຄັນສະຖຽນລະພາບເສດຖະກິດມະຫາພາກ ສາມາດຮັກສາໄວ້ຈະຫລອດສະໄໝແຜນການຫ້າປີ

ບັນດາເປົ້າໝາຍ(ຜົນໄດ້ຮັບ)

ເປົ້າໝາຍການພັດທະນາ ຂອງ MOIC & NSEDP 10

ການຈັດສັນຊັບພະຍາກອນທີ່ມີປະສິດທິພາບກວ່າ (#1)

ການຄ້າເພີ່ມຂຶ້ນ (#5)

ສ້າງລາຍຮັບເຂົ້າງົບປະມານ, ການສ້າງວຽກເຮັດງານທຳ, ທັກສະທີ່ເພີ່ມຂຶ້ນ, ເງິນເດືອນທີ່ສູງຂຶ້ນ (#2)

ການຖ່າຍທອດເຕັກໂນໂລຊີ ແລະ ນະວັດຕະກຳທາງດ້ານເຕັກນິກ ເພີ່ມຂຶ້ນ (#1)

ຄວາມທຸກຍາກຫຼຸດລົງ (#3)

ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ເພີ່ມຂຶ້ນ (#4)

ຄວາມສາມາດໃນການຕິດຕາມ & ປະເມີນຜົນ ສູງຂຶ້ນ (#6)

ແຜນວຽກຈຸດສຸມ: ບັນດາກິດຈະກຳບຸລິມະສິດ ໃນແຜນດຳເນີນງານ ຂອງ ກະຊວງ ອຄ ໄດ້ຮັບການຈັດຕັ້ງປະຕິບັດ

ສົ່ງເສີມການພັດທະນາອຸດສາຫະກຳ	**ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ**	**ຍົກລະດັບການພັດທະນາພາກເອກະຊົນ ແລະ ວິສາຫະກິດ**
ອຸດສາຫະກຳພະລັງງານ	ປັບປຸງນະໂຍບາຍ ແລະ ເຈລະຈາການຄ້າ	ປັບປຸງດ້ານການຄ້າ ແລະ ອຸດສາຫະກຳ ແລະ ສະພາບແວດລ້ອມການດຳເນີນທຸລະກິດ
ອຸດສາຫະກຳບໍ່ແຮ່	ຍົກລະດັບມາດຕະຖານ, ຄຸນນະພາບ ແລະ ຄວາມຫຼາກຫຼາຍຂອງສິນຄ້າ	ສົ່ງເສີມການພັດທະນາຜູ້ປະກອບການ, ຍົກລະດັບຄວາມສາມາດແຂ່ງຂັນຂອງ ຈນກ
ອຸດສາຫະກຳປຸງແຕ່ງ	ສົ່ງເສີມການແຂ່ງຂັນ ແລະ ຫ້ອຄິດປະດິດສ້າງ, ປົກປ້ອງຊັບສິນທາງປັນຍາ ແລະ ຜູ້ຊົມໃຊ້	ປະຕິຮູບລັດວິສາຫະກິດ ຍຸດທະສາດ

ການສ້າງຂີດຄວາມສາມາດ, ພັດທະນາອຸດສາຫະກຳ ແລະ ການຄ້າຕາມທິດຍືນຍົງ, ເລັ່ງການຫັນເປັນດິຈິຕອນ, ສົ່ງເສີມຄວາມສະເໝີພາບທາງເພດ ແລະ ການມີສ່ວນຮ່ວມ

ໝາຍເຫດ: ເປົ້າໝາຍຜົນໄດ້ຮັບ ຂອງ ແຜນພັດທະນາ 5 ປີ ຂອງກະຊວງ ອຄ 2026-2030 ສະແດງອອກໃນ #1- #6 ແມ່ນຕິດພັນກັບ 6 ເປົ້າໝາຍການພັດທະນາ ຂອງ NSEDP 10.

ເພື່ອບັນລຸລະດັບຄາດໝາຍສຳຄັນທີ່ໄດ້ວາງອອກໃນ 6 ຂົງເຂດເປົ້າໝາຍຜົນໄດ້ຮັບ ຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030 ສູ້ຊົນໃຫ້ບັນລຸ ລະດັບຄາດໝາຍການພັດທະນາທີ່ສຳຄັນ ແລະ ໄດ້ກຳນົດ 3 ແຜນງານເສົ້າຄ້ຳຍຸດທະສາດ ແລະ 4 ແຜນງານສະໜັບສະໜູນ ແລະ ປິ່ນອອມ ດັ່ງນີ້:

1. ການເຕີບໂຕ 5% ດ້ານພະລັງງານ;
2. ການເຕີບໂຕ 2.3% ດ້ານບໍ່ແຮ່
3. ການເຕີບໂຕ 13% ດ້ານອຸດສາຫະກຳປຸງແຕ່ງ;
4. ເພີ່ມມູນຄ່າການຄ້າລວມໄດ້ 10%:
5. ບັນລຸ 5% ທຸລະກິດທີ່ຂຶ້ນທະບຽນໃໝ່;
6. ການມີສ່ວນຮ່ວມຂອງເພດຍິງທີ່ເປັນເຈົ້າຂອງທຸລະກິດໃຫ້ໄດ້ 50%.
7. **ຕົວເລກຄາດໝາຍສູ້ຊົນຕົ້ນຕໍ**

1) ອຸດສາຫະກຳ

- ສູ້ຊົນຜະລິດກະແສໄຟຟ້າ ໃຫ້ໄດ້ 333,562.60 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ 485,016.45 ຕື້ກີບ. ໃນນີ້: ສິ່ງອອກຕ່າງປະເທດ ມູນຄ່າ 17,637.50 ລ້ານໂດລາສະຫະລັດ ແລະ ນຳເຂົ້າມູນຄ່າ 974.69 ລ້ານໂດລາສະຫະລັດ.
- ສູ້ຊົນເຮັດໃຫ້ມູນຄ່າຜະລິດ ແລະ ປຸງແຕ່ງແຮ່ທາດ ໃຫ້ໄດ້ 284,432.80 ຕື້ກີບ, ໃນນີ້: ການຈຳໜ່າຍແຮ່ທາດພາຍໃນ ໃຫ້ໄດ້ 3,264.66 ລ້ານໂດລາສະຫະລັດ ແລະ ສິ່ງອອກແຮ່ທາດໄປຕ່າງປະເທດ 11,799.95 ລ້ານໂດລາສະຫະລັດ.
- ສູ້ຊົນເຮັດໃຫ້ມູນຄ່າອຸດສາຫະກຳປຸງແຕ່ງ ໃຫ້ໄດ້ 148,707.91 ຕື້ກີບ.

2) ການຄ້າ

- ສູ້ຊົນເຮັດໃຫ້ມູນຄ່າການຄ້າຕ່າງປະເທດ ໃຫ້ບັນລຸ 143,288.33 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍ 10.09% ຕໍ່ປີ, ໃນນັ້ນ: ມູນຄ່າການສິ່ງອອກສິນຄ້າ 82,245.35 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍ 10.91% ຕໍ່ປີ ແລະ ມູນຄ່າການນຳເຂົ້າສິນຄ້າ 61,042.98 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍບໍ່ເກີນ 9.01% ຕໍ່ປີ.
- ສູ້ຊົນເຮັດໃຫ້ມູນຄ່າການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ) ໃຫ້ໄດ້ 809,460.84 ຕື້ກີບ.

2.2.1 ແຜນງານ ທີ I: ສິ່ງເສີມການພັດທະນາອຸດສາຫະກຳ

ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030 ໃຫ້ບຸລິມະສິດໃນການເພີ່ມທະວີການລົງທຶນໃນຂະແໜງການອຸດສາຫະກຳ ພະລັງງານ, ບໍ່ແຮ່ ແລະ ປຸງແຕ່ງ ເພື່ອຊຸກຍູ້ການເຕີບໂຕເສດຖະກິດແບບຍືນຍົງ, ເປັນທຳ ແລະ ຢືດຢຸ່ນ.

ລະດັບຄາດໝາຍສຳຄັນສຳລັບເປົ້າໝາຍຜົນໄດ້ຮັບນີ້ ລວມມີ:

1. ອັດຕາການເຕີບໂຕ ຂອງຂະແໜງພະລັງງານ ສະເລ່ຍ 5 ສ່ວນຮ້ອຍ (ຕາມມູນຄ່າ);
2. ອັດຕາການເຕີບໂຕ ຂອງຂະແໜງການບໍ່ແຮ່ ສະເລ່ຍໃນລະດັບ 2.3 ສ່ວນຮ້ອຍ ຕໍ່ປີ (ຕາມມູນຄ່າ);
3. ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ຂະຫຍາຍຕົວສະເລ່ຍ 13% ຕໍ່ປີ, ປະກອບສ່ວນໃນລວມຍອດຜະລິດຕະພັນພາຍໃນ ຫຼື GDP ກວມ 12.21%.
4. ມູນຄ່າການສົ່ງອອກຜະລິດຕະພັນອຸດສາຫະກຳປຸງແຕ່ງ ຂະຫຍາຍຕົວສະເລ່ຍ 15 ເປີເຊັນຕໍ່ປີ;
5. ເພີ່ມອັດຕາສ່ວນການກູ້ຄືນ/ກຸ້ມຕົນເອງດ້ານຕົ້ນທຶນ ຂອງ EDL ເປັນ 100 ສ່ວນຮ້ອຍ ແຕ່ນີ້ຮອດປີ 2030.

ເພື່ອຄັດເລືອກ ແລະ ຈັດລຳດັບຄວາມສຳຄັນ ຂອງບັນດາຂະແໜງການຍ່ອຍດ້ານອຸດສາຫະກຳ ແລະ ໂອກາດໃນການລົງທຶນ ພາຍໃຕ້ແຜນການ 5 ປີ, ກອຄ ໄດ້ດຳເນີນການປະເມີນແບບພິຈາລະນາຄວບກັນສອງດ້ານ ຄື ດ້ານຄວາມເປັນໜ້າດຶງດູດໃນການເຮັດການຄ້າ ຫຼື ທ່າແຮງດ້ານການຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ (Commercial Attractiveness) ແລະ ດ້ານຂີດຄວາມສາມາດການແຂ່ງຂັນ/ກຳລັງແຮງພາຍໃນເພື່ອເອົາຊະນະກັບປະເທດອື່ນໆ (Right-to-win). ແນວທາງການເຮັດວຽກທີ່ອີງໃສ່ຫຼັກຖານຕົວຈິງນີ້ ແມ່ນເພື່ອຮັບປະກັນວ່າ ການກຳນົດບຸລິມະສິດດ້ານອຸດສາຫະກຳ ແມ່ນໄດ້ຮັບການຄັດເລືອກບົນພື້ນຖານທ່າແຮງ ຂອງຕະຫຼາດ ແລະ ທ່າແຮງປຽບທຽບ ຂອງ ສປປ ລາວ.

ຄວາມເປັນໜ້າດຶງດູດໃນການເຮັດການຄ້າ ແມ່ນໄດ້ຮັບການປະເມີນໂດຍການສຶກສາບັນດາປັດໄຈຕ່າງໆ ເຊັ່ນ: ຂະໜາດຂອງຕະຫຼາດ, ຄວາມຕ້ອງການໃນໄລຍະຜ່ານມາ ແລະ ທ່າແຮງການເຕີບໂຕທີ່ຄາດໄວ້ໃນຕະຫຼາດພາກພື້ນ, ໂດຍສະເພາະແມ່ນຕະຫຼາດທີ່ ສປປ ລາວ ສາມາດເຂົ້າເຖິງໄດ້ ເຊັ່ນ: ອາຊຽນ ແລະ ສປ ຈີນ. ການວິເຄາະນີ້ໄດ້ພິຈາລະນາເຖິງທ່າອ່ຽງຄວາມຕ້ອງການ, ແນວໂນ້ມການເຕີບໂຕໃນອະນາຄົດ ແລະ ຂີດຄວາມສາມາດ ຂອງແຕ່ລະຂະແໜງການຍ່ອຍ ໃນການສ້າງຜົນກະທົບຕໍ່ເນື່ອງເປັນວົງກວ້າງທາງດ້ານເສດຖະກິດ (Multiplier Effects). ສຳລັບ ຂີດຄວາມສາມາດໃນການແຂ່ງຂັນ (Right-to-win) ແມ່ນໄດ້ຖືກກຳນົດຜ່ານການປະເມີນຖານະການແຂ່ງຂັນ ຂອງ ສປປ ລາວ, ເຊິ່ງລວມມີ ຂີດຄວາມສາມາດດ້ານອຸດສາຫະກຳທີ່ມີຢູ່, ທັກສະແຮງງານ ແລະ ພື້ນຖານໂຄງລ່າງທີ່ເອື້ອອຳນວຍ. ນອກນີ້, ການວິເຄາະ ຍັງໄດ້ປະເມີນການຂະຫຍາຍຕົວ ຂອງຕະຫຼາດ ແລະ ລະດັບຄວາມສາມາດ ຂອງແຕ່ລະຂະແໜງການຍ່ອຍ ໃນການນຳໃຊ້ພື້ນຖານຊັບພະຍາກອນທຳມະຊາດ, ທ່າແຮງດ້ານທີ່ຕັ້ງພູມສາດ ແລະ ການເຂົ້າເຖິງພະລັງງານທົດແທນ ຫຼື ພະລັງງານສະອາດ ໃຫ້ເກີດປະໂຫຍດໃນລະດັບສູງ.

ການປະເມີນເຫຼົ່ານີ້ ແມ່ນໄດ້ຮັບຂໍ້ມູນຈາກການປຶກສາຫາລືກັບຊ່ຽວຊານ, ການສຳພາດຂະແໜງການ ແລະ ການສົນທະນາແລກປ່ຽນ ຂອງຄະນະນຳ, ປະສານສົມທົບກັບຂໍ້ມູນຕະຫຼາດພາຍນອກ ແລະ ການວິເຄາະທ່າອ່ຽງ ຂອງພາກພື້ນ. ໝາກຜົນ ຂອງຂະບວນການນີ້ ໄດ້ກາຍເປັນພື້ນຖານການວິເຄາະ ໃນການຈັດລຳດັບຄວາມສຳຄັນໃຫ້ແກ່ບັນດາຂະແໜງການຍ່ອຍ ທີ່ມີທ່າແຮງການຈະເລີນເຕີບໂຕສູງສຸດ ແລະ ມີຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດພາຍໃຕ້ແຜນການ ປີ 2026-2030.

2.2.1.1: ອຸດສາຫະກຳພະລັງງານ

ສະພາບລວມ ແລະ ຈຸດປະສົງຫຼັກ

ຂະແໜງພະລັງງານຂອງ ສປປ ລາວ ກຳລັງຢູ່ໃນຊ່ວງເວລາສຳຄັນ. ຜົນສຳເລັດຂອງປີ 2021-2025 ສະແດງ ໃຫ້ເຫັນເຖິງຄວາມສາມາດຂອງປະເທດຊາດ ໃນການນຳໃຊ້ຊັບພະຍາກອນ ຈາກພະລັງງານທົດແທນ ເພື່ອການເຕີບໂຕ ທາງເສດຖະກິດ ແລະ ການເຂົ້າເຖິງການຊົມໃຊ້ໄຟຟ້າ. ຈາກທ່າແຮງດັ່ງກ່າວ ເຮັດໃຫ້ປະເທດກາຍເປັນຜູ້ສະໜອງໄຟຟ້າ ໃຫ້ຄົວເຮືອນໃນຂອບເຂດທົ່ວປະເທດ ແລະ ພາກພື້ນ . ໃນຕໍ່ໜ້າ, ຂະແໜງພະລັງງານຈະມີບົດບາດສຳຄັນຍິ່ງຂຶ້ນໃນການ ພັດທະນາປະເທດຊາດ. ເພື່ອເພີ່ມປະສິດທິພາບການປະກອບສ່ວນຂອງຂະແໜງການດັ່ງກ່າວ ໃຫ້ມີຄວາມສຳຄັນຂຶ້ນ ຈະ ຕ້ອງເນັ້ນໃສ່ສາມເປົ້າໝາຍຫຼັກ, ເຊິ່ງເປັນທິດທາງຍຸດທະສາດສຳລັບປີ 2026-2030.

(i) ເພື່ອສະໜອງໄຟຟ້າ ທີ່ໝັ້ນຄົງ ໃຫ້ແກ່ການຂະຫຍາຍໂຕ ອຸດສາຫະກຳພາຍໃນປະເທດ , ເຂດເສດຖະກິດພິເສດ ແລະ ລະບຽງອຸດສາຫະກຳ.

(ii) ປັບປຸງການດຸນດ່ຽງການຄ້າພະລັງງານແຫ່ງຊາດ ແລະ ສ້າງຄວາມໝັ້ນຄົງການສະໜອງພະລັງງານຕະຫຼອດປີ.

(iii) ສະໜອງໄຟຟ້າໃນລາຄາທີ່ເໝາະສົມ ໃຫ້ແກ່ຄົວເຮືອນ ພ້ອມທັງຫຼຸດຜ່ອນພາລະດ້ານງົບປະມານ ແລະ ຮັບ ປະກັນການຄືນທຶນໃນໄລຍະຍາວ.

ພະລັງງານໄຟຟ້ານ້ຳຕົກຈະຍັງຄົງເປັນ ແຫຼ່ງສະໜອງພະລັງງານໄຟຟ້າຕົ້ນຕໍ ແລະ ເປັນແຫຼ່ງຜະລິດພະລັງງານໄຟຟ້າ ທົດແທນທີ່ສຳຄັນ ຂອງປະເທດຊາດ. ເຖິງຢ່າງໃດກໍຕາມ, ເນື່ອງຈາກວ່າພະລັງງານໄຟຟ້ານ້ຳຕົກ ແມ່ນຂຶ້ນກັບເງື່ອນໄຂ ຄວາມສ່ຽງທາງດ້ານອຸທົກກະສາດ ແລະ ລະດູການ, ດັ່ງທີ່ເຫັນໃນປີທີ່ມີໄພແຫ້ງແລ້ງທີ່ຜ່ານມາເຮັດໃຫ້ປະລິມານນ້ຳໄຫຼເຂົ້າ ອ່າງຫຼຸດລົງ ເຮັດໃຫ້ໃນລະດູແລ້ງຂາດແຄນພະລັງງານໄຟຟ້າຫຼາຍກວ່າ 600 GWh ຈຳເປັນຕ້ອງນຳເຂົ້າພະລັງງານໄຟຟ້າ ເພີ່ມຂຶ້ນ. ຄວາມຕ້ອງການພະລັງງານໄຟຟ້າ ໃນຂະແໜງອຸດສາຫະກຳເພີ່ມຂຶ້ນຢ່າງໄວວາ ແລະ ຄາດວ່າຈະກວມເອົາຫຼາຍ ກວ່າເຄິ່ງໜຶ່ງຂອງການຊົມໃຊ້ໄຟຟ້າ ໃນປີ 2035, ຊຶ່ງລວມທັງຄວາມຕ້ອງການຊົມໃຊ້ໄຟຟ້າ ໃນເຂດເສດຖະກິດພິເສດ ໃໝ່, ການຂຸດຄົ້ນບໍ່ແຮ່, ອຸດສະຫະກຳປຸງແຕ່ງ, ແລະ ບັນດາອຸດສາຫະກຳທີ່ເກີດຂຶ້ນໃໝ່ເຊັ່ນ: ສູນຂໍ້ມູນ. ເພື່ອຕອບສະ ໜອງການເຕີບໂຕ ຄວາມຕ້ອງການຊົມໃຊ້ພະລັງງານໄຟຟ້າ ແລະ ສິ່ງເສີມການຂະຫຍາຍໂຕທາງດ້ານເສດຖະກິດພາຍໃນ ປະເທດທີ່ເພີ່ມຂຶ້ນ, ສປປ ລາວ ຈະຕ້ອງສຸມໃສ່ການລົງທຶນໃນສາມຂົງເຂດບູລິມະສິດຄື:

(i) ເພີ່ມກຳລັງການຜະລິດໄຟຟ້າໃຫ້ໝັ້ນຄົງ ແລະ ມີສະຖຽນລະພາບ, ເພີ່ມປະສິດທິພາບ ແລະ ສ້າງຄວາມໝັ້ນໃນ ການສະໜອງພະລັງງານໄຟຟ້າໃຫ້ມີຄວາມສະເຖຍລະພຽບຕະຫຼອດປີ.

(ii) ປັບປຸງ ລະບົບສາຍສົ່ງ ແລະ ລະບົບຈຳໜ່າຍ ໃຫ້ທັນສະໄໝ ເພື່ອຫຼຸດຜ່ອນໄຟດັບໄຟມອດ, ຫຼຸດຜ່ອນຄວາມແອອັດ ຂອງການສົ່ງໄຟຟ້າ ແລະ ຂະຫຍາຍການເຊື່ອມຕໍ່ສາຍສົ່ງໄຟຟ້າແຫ່ງຊາດ ແຕ່ ພາກເໜືອ-ກາງ-ໃຕ້.

(iii) ເພີ່ມການສົ່ງອອກໄຟຟ້າ ໂດຍການຂະຫຍາຍການເຊື່ອມຕໍ່ສາຍສົ່ງໄຟຟ້າ ລະຫວ່າງ ປະເທດ, ເພື່ອສົ່ງພະລັງງານ ຈາກແຫຼ່ງຜະລິດໄຟຟ້າພາຍໃນປະເທດອອກສູ່ຕ່າງປະເທດ, ເພື່ອເປັນການສົ່ງເສີມການຮ່ວມມືການຄ້າພະລັງ ງານໄຟຟ້າກັບບັນດາປະເທດໃກ້ຄຽງ ແລະ ພາກພື້ນ.

ສາມບູລິມະສິດນີ້ສ່ອງແສງໃຫ້ເຫັນເຖິງຄວາມມຸ່ງໝັ້ນທີ່ຍາວນານຂອງລັດຖະບານຕໍ່ການຄ້າຂາຍໄຟຟ້າໃນພາກ ພື້ນ, ໂດຍຖືເອົາການສົ່ງອອກໄຟຟ້າເປັນແຫຼ່ງລາຍຮັບແຫ່ງຊາດທີ່ສຳຄັນ, ເປັນກົນໄກຮອງຮັບການລະບາຍໄຟຟ້າທີ່ເຫຼືອ ໃຊ້ ໃນລະດູຝົນ ອອກສູ່ຕ່າງປະເທດ ແລະ ເປັນແນວທາງໃນການປະກອບສ່ວນ ຄວາມໝັ້ນຄົງດ້ານພະລັງງານໄຟຟ້າໃນ ພາກພື້ນ. ລັດຖະບານຈະສືບຕໍ່ພັນທະສັນຍາໃນການສົ່ງອອກ ແລະ ການເຊື່ອມຕໍ່ລະບົບສາຍສົ່ງໄຟຟ້າ ລະຫວ່າງ ປະເທດ ເພື່ອນຳສົ່ງໄຟຟ້າອອກສູ່ຕ່າງປະເທດ ຊຶ່ງແມ່ນທິດທາງນະໂຍບາຍໄລຍະຍາວຂອງລັດຖະບານ.

ການຮັກສາວິໄນ ແລະ ສ້າງຄວາມໝັ້ນຄົງຖານະທາງການເງິນຂອງ ຟຟລ ແມ່ນສິ່ງທີ່ສຳຄັນທີ່ສຸດເພື່ອສ້າງຄວາມເຊື່ອໝັ້ນໃນການລົງທຶນ. ການສ້າງຄວາມເຊື່ອໝັ້ນໃຫ້ນັກລົງທຶນ ແລະ ການສ້າງເງື່ອນໄຂໃນການລະດົມທຶນ ຈະຕ້ອງມີການປັບປຸງລາຄາໄຟຟ້າ ແລະ ໂຄງສ້າງຂອງສັນຍາ ໃຫ້ມີຄວາມໂປ່ງໃສ, ປັບປຸງທຸລະກິດຂອງ ຟຟລ ໃຫ້ມີກຳໄລ. ເພື່ອເຮັດໃຫ້ຖານະການເງິນມີຄວາມໝັ້ນຄົງ, ຟຟລ ມີຄວາມຈຳເປັນຕ້ອງ ສ້າງແຜນກໍ່ສ້າງ ແລະ ປັບປຸງລະບົບສາຍສົ່ງໄຟຟ້າ ແລະ ສາຍຈຳໜ່າຍ ໂດຍກຳນົດເອົາ ລະບົບສົ່ງ 115 kV ແລະ 230 kV ເປັນບູລິມະສິດທີ່ສຳຄັນ ແລະ ສ້າງບັນດາລະບົບຄວບຄຸມການສົ່ງໄຟຟ້າ ແບບອັດຕະໂນມັດ ເພື່ອແກ້ໄຂບັນຫາຄວາມແອອັດໃນການສົ່ງໄຟຟ້າ, ການສະວິງຂອງແຮງດັນ ແລະ ຄວາມທ້າທາຍດ້ານຄວາມສະຖຽນລະພາບຂອງລະບົບ. ການສ້າງຄວາມໝັ້ນຄົງທາງດ້ານການເງິນ ຂອງ ຟຟລ ຈະຊ່ວຍເຮັດໃຫ້ ຟຟລ ສາມາດບັນລຸ ແຜນການສົ່ງອອກໄຟ ໃນໄລຍະຍາວຂອງຕົນໄດ້ ແລະ ຈະເຮັດໃຫ້ ສປປ ລາວ ມີຄວາມເຂັ້ມແຂງໃນການເຈລະຈາຕໍ່ລອງ ຊື້-ຂາຍ ໄຟຟ້າ ໃນຕະຫຼາດພະລັງງານຂອງອະນຸພາກພື້ນ.

ເພື່ອເປັນການດຶງດູດການລົງທຶນ ໃນຂະແໜງພະລັງງານ ລັດຖະບານ ຈະຕ້ອງປະຕິບັດເຈັດ (7) ຂໍ້ ລິເລີ່ມຍຸດທະສາດ ທີ່ກຳນົດມາ ເພື່ອເປັນການປັບປຸງຕະຫຼາດໂດຍລວມດ້ານພະລັງງານໄຟຟ້າ. ເຈັດ (7) ຂໍ້ ລິເລີ່ມຍຸດທະສາດ ເຫຼົ່ານີ້ ແມ່ນຕິດພັນກັບ ການປະຕິຮູບ ສອງ (2) ເສົາຄ້ຳທີ່ສຳຄັນ ຄື:

(i) ປະຕິຮູບອົງກອນ ແລະ ຟື້ນຟູຖານະທາງດ້ານການເງິນ, ການແກ້ໄຂສະພາບຄ່ອງ, ໜີ້ສິນທີ່ແກ່ຍາວ ແລະ ປະສິດທິພາບການເຮັດວຽກ ພາຍໃນ ຂອງ ຟຟລ.

(ii) ການປະຕິຮູບ ຕະຫລາດໄຟ ແລະ ລະບຽບການຄຸ້ມຄອງ ເພື່ອຍົກລະດັບຄວາມໂປ່ງໃສໃນການຄາດການໄດ້ ແລະ ການຄຸ້ມຄອງຂອງລັດໃນຂະແໜງພະລັງງານໄຟຟ້າ.

ການປະຕິຮູບນີ້ບໍ່ໄດ້ມີຈຸດປະສົງເພື່ອເປີດເສລີທາງດ້ານຕະຫຼາດຢ່າງເຕັມຮູບແບບ, ແຕ່ແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກົດລະບຽບ, ລະບຽບການ ແລະ ຄວາມເຊື່ອໝັ້ນຂອງນັກລົງທຶນ ໃນຂະນະທີ່ຍັງຮັກສາການຄຸ້ມຄອງຂອງລັດ ໃນລະດັບຊາດເອົາໄວ້.

ໃນຂະນະທີ່ເຕັກໂນໂລຊີໃໝ່ໆ ເຊັ່ນ: ໄຮໂດຣເຈນສີຟ້າ/ສີຂຽວ (Blue/Green Hydrogen), ເຕົາປະຕິກອນນິວເຄຼຍຂະໜາດນ້ອຍ (SMR), ໂຊລ່າເຊລແບບລອຍນ້ຳ (Floating Solar) ແລະ ລະບົບກັກເກັບພະລັງງານທີ່ທັນສະໄໝ ທີ່ມີທ່າແຮງໃນໄລຍະຍາວ, ແຕ່ການນຳໃຊ້ຕົວຈິງຈະຂຶ້ນກັບຄວາມເປັນໄປໄດ້ທາງດ້ານເສດຖະກິດ, ຄວາມພ້ອມດ້ານເຕັກນິກ ແລະ ຄວາມພ້ອມຂອງລະບົບໃນອະນາຄົດ. ສຳລັບ SMR ນັ້ນ, ເຕັກໂນໂລຊີນີ້ຍັງຖືວ່າໃໝ່ຫຼາຍ, ຖືກພັດທະນາໂດຍກຸ່ມປະເທດຈຳນວນໜ້ອຍ ແລະ ຍັງຕ້ອງການໂຄງຮ່າງການຄຸ້ມຄອງດ້ານລະບຽບການ, ຄວາມປອດໄພ ແລະ ການກວດກາທີ່ເຂັ້ມງວດ ເຊິ່ງຍັງບໍ່ທັນມີຢູ່ໃນ ສປປ ລາວ. ນອກຈາກນັ້ນ, SMR ຍັງຕ້ອງມີຂະໜາດກຳລັງຕິດຕັ້ງໄຟຟ້າທີ່ເໝາະສົມຈຶ່ງຈະຄຸ້ມທຶນ, ດັ່ງນັ້ນ ມັນຈຶ່ງເປັນທາງເລືອກໃນໄລຍະຍາວ ຫຼາຍກວ່າທີ່ຈະນຳມາພິຈາລະນາໃນໄລຍະອັນໃກ້ນີ້.

ໃນໄລຍະປີ 2026-2030, ເຕັກໂນໂລຊີເຫຼົ່ານີ້ (ເຊັ່ນ SMR, Hydrogen) ຍັງຈະຕ້ອງໄດ້ມີການຕິດຕາມ ແລະ ສຶກສາຜ່ານໂຄງການທົດລອງ ແລະ ການຮ່ວມມືໃນລະດັບພາກພື້ນ ສາກົນ. ໃນຂະນະດຽວກັນ, ຄວາມພະຍາຍາມໃນໄລຍະອັນໃກ້ນີ້ ແມ່ນຈະຍັງສຸມໃສ່ທາງເລືອກທີ່ຜ່ານການພິສູດແລ້ວ ແລະ ມີຄວາມຄຸ້ມຄ່າທາງດ້ານຕົ້ນທຶນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະຖຽນລະພາບຂອງລະບົບໄຟຟ້າໃນລະດູແລ້ງ ແລະ ສະໜັບສະໜູນການເຕີບໂຕຂອງພາກອຸດ

ສາທະນາ. ແນວທາງທີ່ສົມດຸນນີ້ ຈະຊ່ວຍໃຫ້ ສປປ ລາວ ສາມາດເສີມສ້າງພື້ນຖານຂອງລະບົບພະລັງງານໃຫ້ແຂງແຮງ, ພ້ອມທັງກຽມຄວາມພ້ອມສຳລັບເຕັກໂນໂລຊີໃນອະນາຄົດ ເມື່ອມີຄວາມເປັນໄປໄດ້ໃນການນຳໃຊ້ຕົວຈິງ.

ໂດຍລວມແລ້ວ, ບຸລິມະສິດເຫຼົ່ານີ້ຈະຊ່ວຍເສີມສ້າງພື້ນຖານຂອງລະບົບພະລັງງານລາວໃຫ້ເຂັ້ມແຂງ, ຮັບປະກັນຄວາມສະຖຽນລະພາບຂອງການສະໜອງໄຟຟ້າຕະຫຼອດປີ, ປັບປຸງສະພາບຄ່ອງທາງດ້ານການເງິນຂອງຂະແໜງການ, ແລະ ສ້າງສະພາບແວດລ້ອມການລົງທຶນທີ່ມີຄວາມໂປ່ງໃສ ແລະ ສາມາດຄາດຄະເນໄດ້. ດ້ວຍການສຸມໃສ່ການສ້າງແຫຼ່ງຜະລິດໄຟຟ້າທີ່ໝັ້ນຄົງ (Firm Capacity), ຄວາມພ້ອມຂອງລະບົບສາຍສົ່ງ, ພ້ອມທັງການປະຕິຮູບການຕະຫຼາດ ແລະ ການປະຕິຮູບຢ່າງມີເປົ້າໝາຍ, ສປປ ລາວ ຈະມີຄວາມພ້ອມດີຂຶ້ນໃນການສະໜັບສະໜຸນການຂະຫຍາຍຕົວຂອງພາກອຸດສາຫະກຳ, ຮັກສາລາຄາໄຟຟ້າທີ່ເໝາະສົມສຳລັບຄົວເຮືອນ ແລະ ເພີ່ມທະວີການໂອກາດໃນການຄ້າຂາຍໄຟຟ້າລະດັບພາກພື້ນ. ແນວທາງນີ້ບໍ່ພຽງແຕ່ເຮັດໃຫ້ລະບົບຫຼັກໃນປັດຈຸບັນເຂັ້ມແຂງເທົ່ານັ້ນ, ແຕ່ຍັງເປັນການວາງຮາກຖານສຳລັບເຕັກໂນໂລຊີໃນອະນາຄົດ ແລະ ເປົ້າໝາຍທາງດ້ານພະລັງງານໃນໄລຍະຍາວ.

ສິ່ງທ້າທາຍຫຼັກຂອງຂະແໜງພະລັງງານ

ເຖິງແມ່ນວ່າຈະມີຄວາມຄືບໜ້າຢ່າງແຂງແຮງໃນໄລຍະປີ 2021-2025, ແຕ່ສິ່ງທ້າທາຍທາງດ້ານໂຄງສ້າງຫຼາຍປະການຍັງຈຳເປັນຕ້ອງໄດ້ຮັບການແກ້ໄຂ ເພື່ອໃຫ້ຂະແໜງພະລັງງານສາມາດບັນລຸຕາມຈຸດປະສົງຂອງຊາດ ແລະ ສະໜັບສະໜຸນເປົ້າໝາຍການພັດທະນາໃນວົງກວ້າງຂອງ ສປປ ລາວ. ສິ່ງທ້າທາຍເຫຼົ່ານີ້ກ່ຽວພັນກັບ ຄວາມອ່ອນໄຫວດ້ານອຸທົກກະສາດ (ປະລິມານນ້ຳ), ຄວາມຍືນຍົງດ້ານການເງິນ, ຄວາມສະຖຽນລະພາບຂອງລະບົບສາຍສົ່ງ, ຄວາມສອດຄ່ອງລະບຽບການຄຸ້ມຄອງຂອງລັດ, ການຫັນປ່ຽນແຫຼ່ງພະລັງງານໃຫ້ມີຄວາມຫຼາກຫຼາຍ ແລະ ການບໍລິຫານຈັດການການປ່ຽນຜ່ານດ້ານພະລັງງານ. ການແກ້ໄຂບັນຫາເຫຼົ່ານີ້ແມ່ນມີຄວາມຈຳເປັນ ເພື່ອຮັບປະກັນການສະໜອງໄຟຟ້າພື້ນຖານ (Baseload) ໃຫ້ໝັ້ນຄົງ, ເພື່ອຍົກສູງການສະໜອງໄຟຟ້າຂອງຊາດໃຫ້ດີຂຶ້ນ ແລະ ສະໜອງໄຟຟ້າໃນລາຄາທີ່ເໝາະສົມໃຫ້ແກ່ຄົວເຮືອນ ແລະ ພາກອຸດສາຫະກຳ.

1. **ການເພິ່ງພາພະລັງງານໄຟຟ້ານ້ຳຕົກຢ່າງຫຼວງຫຼາຍ ແລະ ຄວາມຜັນຜວນຂອງສະພາບອາກາດທີ່ເພີ່ມຂຶ້ນ**

ພະລັງງານນ້ຳຈະຍັງຄົງເປັນແຫຼ່ງພະລັງງານຫຼັກຂອງການຜະລິດໄຟຟ້າແຫ່ງຊາດ, ແຕ່ຈະເຮັດໃຫ້ລະບົບມີຄວາມສ່ຽງຕໍ່ຄວາມຜັນຜວນຂອງສະພາບອາກາດ ແລະ ປະລິມານນ້ຳໄຫຼເຂົ້າເຂື່ອນຕາມລະດູການ. ສະພາວະໄພແລ້ງທີ່ແກ່ຍາວໃນປີ 2023 ແລະ 2024 ໄດ້ເຮັດໃຫ້ການຜະລິດຫຼຸດລົງຢ່າງຫຼວງຫຼາຍ, ສິ່ງຜົນໃຫ້ມີການນຳເຂົ້າໄຟຟ້າທີ່ມີຕົ້ນທຶນສູງ ແລະ ເກີດສິ່ງທ້າທາຍດ້ານຄວາມສະຖຽນລະພາບຂອງລະບົບໄຟຟ້າ. ຄວາມຜັນຜວນນີ້ຍັງເຮັດໃຫ້ເກີດສະພາວະໄຟຟ້າເກີນໃນລະດູຝົນ ແລະ ຂາດແຄນໃນລະດູແລ້ງ, ສ້າງຄວາມບໍ່ສົມດຸນຂອງການສະໜອງຕະຫຼອດທັງປີ.

ໂຄງການພະລັງງານນ້ຳຍັງສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຈຳນວນໜຶ່ງ, ເປັນຕົ້ນແມ່ນຜົນກະທົບຕໍ່ການໄຫຼຂອງຕະກອນ, ການເຄື່ອນຍ້າຍຂອງປາ, ຊີວະນາໆພັນ ແລະ ການດຳລົງຊີວິດຂອງຊຸມຊົນ, ເຊິ່ງຕ້ອງການ ການກວດກາ ແລະ ຄຸ້ມຄອງທີ່ເຂັ້ມງວດ ເພື່ອຫຼຸດຜ່ອນຜົນກະທົບໃນໄລຍະຍາວ.

ໃນຂະນະທີ່ຄວາມຕ້ອງການໄຟຟ້າໃນພາກອຸດສາຫະກຳເພີ່ມຂຶ້ນ, ການຮັບປະກັນການສະໜອງໄຟຟ້າຕະຫຼອດປີຈະຕ້ອງອາໄສກຳລັງການຜະລິດທີ່ໝັ້ນຄົງ (Firm) ແລະ ສາມາດຕອບສະໜອງ (Flexible) ຕາມຄວາມຕ້ອງການ, ພ້ອມທັງການວາງແຜນສິ່ງພະລັງງານໄຟຟ້າທີ່ດີຂຶ້ນ ແລະ ການປະສົມປະສານກັບພະລັງງານທົດແທນ(Hybrid) ເພື່ອຮັບປະກັນການສະໜອງໄຟຟ້າໄດ້ຕະຫຼອດປີ.

2. ຂໍ້ຈຳກັດທາງດ້ານການເງິນ ແລະ ສິ່ງທ້າທາຍດ້ານລາຍຮັບ ຂອງ ຟຟລ:

ຟຟລ ຍັງຄົງປະເຊີນກັບຄວາມກົດດັນທາງດ້ານການເງິນຢ່າງຫຼວງຫຼາຍ ເຊິ່ງເປັນຜົນມາຈາກໜີ້ສິນສະສົມ, ຂໍ້ຈຳກັດດ້ານສະພາບຄ່ອງ ແລະ ຄວາມແຕກຕ່າງທີ່ມີມາຢ່າງຍາວນານລະຫວ່າງລາຄາໄຟຟ້າພາຍໃນກັບຕົ້ນທຶນການສະໜອງ. ການຂາຍໄຟຟ້າໃນລາຄາທີ່ຕ່ຳກວ່າຕົ້ນທຶນ, ບວກກັບການກູ້ຢືມຕໍ່ ແລະ ການຄ້ຳປະກັນຈາກລັດຖະບານ, ໄດ້ເຮັດໃຫ້ຊ່ອງວ່າງດ້ານສະພາບຄ່ອງທາງດ້ານການເງິນຫລາຍຂຶ້ນ ແລະ ພາລະໜີ້ສິນເພີ່ມຂຶ້ນ.

ຄວາມກົດດັນດ້ານງົບປະມານເຫຼົ່ານີ້ໄດ້ຈຳກັດຄວາມສາມາດຂອງ ຟຟລ ໃນການບຳລຸງຮັກສາ ແລະ ຍົກລະດັບໂຄງລ່າງພື້ນຖານ, ການປະຕິບັດພັນທະການຊຳລະເງິນໃຫ້ແກ່ຜູ້ຜະລິດໄຟຟ້າ ແລະ ການລະດົມທຶນໃຫ້ແກ່ໂຄງການສາຍສົ່ງທີ່ຈຳເປັນ. ໜີ້ສິນຕ່າງປະເທດທີ່ສູງ ເຊິ່ງສະສົມມາຈາກການຂະຫຍາຍຕົວຢ່າງໄວວາຂອງບັນດາໂຮງໄຟຟ້າ ຍັງສ້າງຄວາມສ່ຽງດ້ານເສດຖະກິດມະຫາພາກໃຫ້ແກ່ປະເທດ.

ການເສີມສ້າງຄວາມສາມາດໃນການຄືນທຶນ, ການປັບປຸງລະບຽບວິໄນດ້ານສັນຍາ ແລະ ສັນຍາຊື້-ຂາຍໄຟຟ້າ (PPA) ແລະ ການຟື້ນຟູຄວາມເຊື່ອໝັ້ນທາງດ້ານການເງິນຂອງ ຟຟລ ແມ່ນມີຄວາມຈຳເປັນຢ່າງຍິ່ງ ເພື່ອສະໜັບສະໜູນ ການລົງທຶນຄືນໃນໄລຍະຍາວ ແລະ ຫຼຸດຜ່ອນຄວາມສ່ຽງດ້ານງົບປະມານ.

3. ການສະໜອງໄຟຟ້າພາຍໃນປະເທດທີ່ບໍ່ພຽງພໍ ແລະ ຂໍ້ຈຳກັດຂອງລະບົບສົ່ງໄຟຟ້າ

ເຖິງວ່າຈະມີກຳລັງການຕິດຕັ້ງໄຟຟ້າ ຈາກເຂື່ອນໄຟຟ້າພະລັງງານນ້ຳມະຫາສານ, ແຕ່ ສປປ ລາວ ຍັງຜະເຊີນກັບສະພາວະຂາດແຄນໄຟຟ້າພາຍໃນປະເທດໃນຊ່ວງລະດູແລ້ງ ແລະ ການທີ່ຕ້ອງຢຸດການຜະລິດບາງສ່ວນ ໃນຊ່ວງລະດູຝົນ ເຊິ່ງເກີດຈາກຄວາມບໍ່ສອດຄ່ອງລະຫວ່າງການຜະລິດ ແລະ ການຊົມໃຊ້, ບວກກັບຂໍ້ຈຳກັດຂອງລະບົບສາຍສົ່ງ. ເຫດການໄຟຟ້າດັບຍັງຄົງເກີດຂຶ້ນ ເຖິງວ່າລາວຈະຍັງເປັນຜູ້ສົ່ງອອກໄຟຟ້າຫຼັກກໍຕາມ, ເຊິ່ງສະທ້ອນໃຫ້ເຫັນເຖິງການເພິ່ງພາປັດໄຈ ສະພາບອາກາດຕາມລະດູການ ແລະ ບັນຫາຄວາມສະຖຽນລະພາບຂອງລະບົບໄຟຟ້າພາຍໃນປະເທດ.

ລະບົບສາຍສົ່ງ ແລະ ລະບົບຈຳໜ່າຍພົບກັບສິ່ງທ້າທາຍຫຼາຍປະການ, ລວມທັງການຂາດລະບົບສຳຮອງ N-1 ທີ່ພຽງພໍ, ຄວາມລ່າຊ້າໃນການກໍ່ສ້າງສາຍສົ່ງທີ່ລົງທຶນໂດຍຜູ້ພັດທະນາໂຄງການ, ແລະ ການເຊື່ອມໂຍງທີ່ບໍ່ພຽງພໍລະຫວ່າງສາຍສົ່ງໄຟຟ້າໃນແຕ່ລະພາກທີ່ແຍກອອກຈາກກັນ. ສິ່ງເຫຼົ່ານີ້ສົ່ງຜົນ ບໍ່ສາມາພະລັງງານໄຟຟ້າໄດ້ຕາມຄວາມຕ້ອງການຜ່ານລະບົບສາຍສົ່ງ, ແຮງດັນໄຟຟ້າບໍ່ຄົງທີ່, ແລະ ການຜັນຜວນຂອງກຳລັງໄຟຟ້າ (Power oscillations) ເຊິ່ງເຮັດໃຫ້ຄຸນນະພາບຂອງການສະໜອງໄຟຟ້າຫຼຸດລົງ.

ເພື່ອຮັບປະກັນຄວາມສະຖຽນລະພາບຂອງລະບົບ ຕ້ອງອາໄສການເລັ່ງລັດລົງທຶນໃນການຍົກລະດັບສາຍສົ່ງທີ່ສຳຄັນ 115 kV ແລະ 230 kV, ການສ້າງສະຖານີໄຟຟ້າໃໝ່, ລະບົບຄວບຄຸມການສົ່ງໄຟຟ້າອັດຕະໂນມັດ (SCADA /EMS) ແລະ ການປັບປຸງລະບົບປ້ອງກັນໃຫ້ມີຄວາມສອດຄ່ອງກັນ, ໂດຍສະເພາະໃນຊ່ວງທີ່ຄວາມຕ້ອງ ການຂອງພາກອຸດສາຫະກຳ ທີ່ກຳລັງເພີ່ມຂຶ້ນຢ່າງໄວວາ. ນອກຈາກນີ້, ການຂະຫຍາຍໂຄງລ່າງພື້ນຖານໃນຫຼາຍເຂດຍັງຖືກຈຳກັດຈາກລະເບີດຕົກຄ້າງ (UXO), ເຊິ່ງຕ້ອງການການເກັບກູ້ຢ່າງມີເປົ້າໝາຍເພື່ອໃຫ້ການກໍ່ສ້າງໂຄງຂ່າຍສາຍສົ່ງມີຄວາມປອດໄພ ແລະ ທັນເວລາ.

4. ການຄຸ້ມຄອງ ແລະ ການປະຕິບັດຕາມກົດລະບຽບ

ພາລະບົດບາດທີ່ທັບຊ້ອນທັບກັນ ລະຫວ່າງການວາງນະໂຍບາຍ, ການອອກລະບຽບການ ແລະ ຕະຫຼາດໄຟຟ້າ. ຂັ້ນຕອນການອອກໃບອະນຸຍາດ, ການເຈລະຈາສັນຍາຊື້-ຂາຍໄຟຟ້າ (PPA), ການອະນຸມັດດ້ານສິ່ງແວດລ້ອມ ແລະ

ການຕິດຕາມກວດກາການປະຕິບັດຕາມລະບຽບການ ມັກຈະຂາດຄວາມຕໍ່ເນື່ອງ, ຂາດຄວາມໂປ່ງໃສ ແລະ ບໍ່ມີກຳນົດເວລາທີ່ຊັດເຈນ.

ຂໍ້ຈຳກັດດ້ານວິຊາການຂອງບຸກຄະລາກອນ ແລະ ໜ່ວຍງານຫຼັກທີ່ຮັບຜິດຊອບ ສິ່ງຜົນໃຫ້ການຕິດຕາມການຈັດຕັ້ງປະຕິບັດໂຄງການ ແລະ ຄວາມປອດໄພດ້ານສິ່ງແວດລ້ອມ-ສັງຄົມ ດ້ານຕ່າງໆມີຂໍ້ຈຳກັດ ໂດຍສະເພາະເຂື່ອນໄຟຟ້ານ້ຳຕົກ. ສປປ ລາວ ຈຳເປັນຕ້ອງມີນະໂຍບາຍພະລັງງານແຫ່ງຊາດທີ່ເຊື່ອມໂຍງກັນຫຼາຍຂຶ້ນ, ໂດຍມີການແບ່ງຄວາມຮັບຜິດຊອບທີ່ຊັດເຈນລະຫວ່າງ **ກະຊວງອຸດສາຫະກຳ ແລະ ການຄ້າ (MOIC)**, **ລັດວິສາຫະກິດໄຟຟ້າລາວ**, **ກະຊວງການເງິນ (MOF)** ແລະ ກະຊວງອື່ນໆທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ຂັ້ນຕອນການຕັດສິນໃຈມີຄວາມຄ່ອງຕົວ.

ການປັບປຸງ ການຄຸ້ມຄອງ ຈະຕ້ອງແຍກບົດບາດໃຫ້ຊັດເຈນ, ການສ້າງລະບົບກວດກາທີ່ເຂັ້ມແຂງ, ແລະ ການກຳນົດກົນໄກການອະນຸມັດ ແລະ ການກວດສອບທີ່ເປັນມາດຕະຖານ ຈະຊ່ວຍເພີ່ມຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ແລະ ເລັ່ງລັດການພັດທະນາໂຄງການທີ່ມີຄຸນນະພາບສູງໃຫ້ໄວຂຶ້ນ.

5. **ຄວາມທ້າທາຍໃນການປ່ຽນຜ່ານດ້ານພະລັງງານໃຫ້ມີຄວາມສົມດຸນ, ສະຖຽນລະພາບ ແລະ ມີລາຄາທີ່ເໝາະສົມ:**

ໃນຂະນະທີ່ ສປປ ລາວ ຕັ້ງເປົ້າໝາຍທີ່ຈະເພີ່ມການນຳໃຊ້ພະລັງງານທົດແທນໃຫ້ຫຼາຍຂຶ້ນ ແລະ ຫຼຸດຜ່ອນການເພິ່ງພາເຊື້ອໄຟຟອດຊິວ, ແຕ່ບຸລິມະສິດໃນໄລຍະອັນໃກ້ນີ້ແມ່ນການຮັກສາຄວາມສະຖຽນລະພາບຂອງການສະໜອງພະລັງງານ ແລະ ໃນລາຄາທີ່ເໝາະສົມ. ປັດຈຸບັນການນຳໃຊ້ເຊື້ອໄຟຟອດຊິວ ກວມເອົາປະມານ 20% ຂອງຄວາມຕ້ອງການພະລັງງານທັງໝົດພາຍໃນປະເທດ, ໂດຍສະເພາະໃນຂະແໜງຂົນສົ່ງ ແລະ ບາງຂະແໜງອຸດສາຫະກຳ. ການບໍລິຫານຈັດການການປ່ຽນຜ່ານນີ້ ຕ້ອງມີການຈັດລຳດັບກ່ອນ-ຫຼັງຢ່າງລະມັດລະວັງ ເພື່ອຫຼີກລ່ຽງການກະທົບຕໍ່ການສະໜອງໄຟຟ້າພື້ນຖານ (Baseload). ການຫັນປ່ຽນແຫຼ່ງພະລັງງານແບບຄ່ອຍເປັນຄ່ອຍໄປ ໂດຍການໃຫ້ບຸລິມະສິດແກ່ກ໊າຊ (Gas) ແລະ ລະບົບປະສົມປະສານ (Hybrid) ຈະຊ່ວຍສ້າງຄວາມສົມດຸນລະຫວ່າງຄວາມຕ້ອງການດ້ານຄວາມສະຖຽນລະພາບ ກັບ ພັນທະການຫຼຸດຜ່ອນການປ່ອຍກາດຄາບອນໃນໄລຍະຍາວ.

ເຕັກໂນໂລຊີໃໝ່ໆ ເຊັ່ນ: ໄຮໂດຣເຈນ (Hydrogen), ແອມໂມເນຍ (Ammonia), ໂຊລ່າເຊລແບບລອຍນ້ຳ (Floating Solar), ແບັດເຕີຣີ (Batteries) ແລະ ເຕົາປະຕິກອນນິວເຄຼຍຂະໜາດນ້ອຍ (SMR) ແມ່ນທ່າແຮງສຳລັບອະນາຄົດ ທີ່ຕ້ອງມີການສຶກສາ ປະເມີນຕື່ມອີກ, ລວມທັງການທົດລອງຕົວຈິງ ແລະ ການຮ່ວມມືກັບສາກົນ ກ່ອນທີ່ຈະສາມາດນຳມາໃຊ້ໄດ້ ໂດຍສະເພາະແມ່ນໂຄງການຂະໜາດໃຫຍ່,

ເປົ້າໝາຍຫຼັກສຳລັບຂະແໜງພະລັງງານປະກອບມີ:

1. **ການເຕີບໂຕ:** ຮັກສາອັດຕາການເຕີບໂຕສະເລ່ຍຂອງຂະແໜງພະລັງງານໃຫ້ໄດ້ **5% ຕໍ່ປີ**.
2. **ການເງິນ:** ພາຍໃນປີ 2030, ລັດວິສາຫະກິດໄຟຟ້າລາວ (EDL) ຕ້ອງບັນລຸການ **ຄືນທຶນຢ່າງເຕັມຮູບແບບ (Full cost recovery)** ຈາກລາຄາຂາຍໄຟຟ້າ.
3. **ຄຸນນະພາບ:** ຢ່າງໜ້ອຍ **50%** ຂອງໂຄງການລົງທຶນດ້ານພະລັງງານໃໝ່ ຕ້ອງໄດ້ມາດຕະຖານຄຸນນະພາບທີ່ກຳນົດໄວ້.

ແຜນບຸລິມະສິດດ້ານການຜະລິດພະລັງງານໄຟຟ້າ

ການພັດທະນາແຫຼ່ງຜະລິດພະລັງງານໄຟຟ້າໃຫ້ພຽງພໍກັບຄວາມຕ້ອງການ ແມ່ນປັດໄຈທີ່ສຳຄັນທີ່ສຸດ ເຊິ່ງຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມໝັ້ນຄົງທາງດ້ານພະລັງງານຂອງຊາດ.ໃນປັດຈຸບັນ, ໄຟຟ້າທີ່ສະ

ໜອງພາຍໃນປະເທດ ແມ່ນມາຈາກພະລັງງານນ້ຳເປັນຫຼັກ ເຊິ່ງກວມເອົາເຖິງ **94.27%** ຂອງການຜະລິດໄຟຟ້າທັງໝົດ. ການເພິ່ງພາທຳມະຊາດຫຼາຍຄືແນວນີ້ ຈະເຮັດໃຫ້ການສະໜອງໄຟຟ້າຂາດຄວາມສະຖຽນລະພາບຕາມທີ່ຄວນຈະເປັນ. ດັ່ງນັ້ນ, ເພື່ອຮັບປະກັນຄວາມໝັ້ນຄົງໃນການສະໜອງໄຟຟ້າ, ຈຳເປັນຕ້ອງມີກຳລັງການຜະລິດສຳຮອງ (Reserve Margin) ໃນປະລິມານຫຼາຍ, ເຊິ່ງເຮັດໃຫ້ການບໍລິຫານຈັດການລະບົບມີຄວາມຊັບຊ້ອນ. ຕົວຢ່າງ:

- **ໃນລະດູຝົນ:** ກຳລັງການຜະລິດແມ່ນເກີນຄວາມຕ້ອງການຊົມໃຊ້, ເຮັດໃຫ້ເກີດມີພະລັງງານສ່ວນເກີນມະຫາສານ.
- **ໃນລະດູແລ້ງ:** ກຳລັງການຜະລິດພັດບໍ່ພຽງພໍກັບຄວາມຕ້ອງການ, ເຮັດໃຫ້ຈຳເປັນຕ້ອງໄດ້ນຳເຂົ້າພະລັງງານໄຟຟ້າຈາກປະເທດເພື່ອນບ້ານ.

ເພື່ອແກ້ໄຂບັນຫາພະລັງງານໄຟຟ້າສ່ວນເກີນ ແລະ ສ່ວນຂາດຕາມລະດູການ, ສປປ ລາວ ຄວນຫັນປ່ຽນໂຄງສ້າງການປະສົມປະສານ ການຜະລິດພະລັງງານໄຟຟ້າໃຫ້ມີຄວາມຫຼາກຫຼາຍ (Diversify) ດັ່ງນີ້:

- **ໂຮງໄຟຟ້າຄວາມຮ້ອນ:** ເພື່ອເປັນແຫຼ່ງຜະລິດພະລັງງານໄຟຟ້າພື້ນຖານ (Baseload) ທີ່ໝັ້ນຄົງໃນຊ່ວງລະດູແລ້ງ.
- **ໂຄງການພະລັງງານນ້ຳທີ່ມີອ່າງເກັບນ້ຳ:** ແນໃສ່ໂຄງການທີ່ສາມາດຜະລິດໄຟຟ້າໃນລະດູແລ້ງໄດ້ຫຼາຍກວ່າ **60%** ຂອງການຜະລິດທັງໝົດຕໍ່ປີ.
- **ແຫຼ່ງພະລັງງານທົດແທນ:** ເຊັ່ນ ພະລັງງານແສງແດດ, ພະລັງງານລົມ ແລະ ຊີວະມວນ ເພື່ອສາມາດສະໜອງໄຟຕາມຄວາມຕ້ອງການຂອງຜູ້ຊົມໃຊ້ ທັງພາຍໃນ ແລະ ພາກພື້ນ.

ນອກຈາກການຂະຫຍາຍກຳລັງການຜະລິດແລ້ວ, ຍັງຕ້ອງໄດ້ພິຈາລະນາ 5 ເກນມາດຖານຫຼັກໃນການວາງແຜນເພື່ອຮັບປະກັນໃຫ້ລະບົບມີຄວາມຄຸ້ມຄ່າທາງດ້ານເສດຖະກິດ ແລະ ມີຄວາມຮັບປະກັນ:

(i) ແຫຼ່ງຜະລິດໄຟຟ້າທີ່ໃກ້ກັບຈຸດຊົມໃຊ້ໄຟຟ້າ: ເພື່ອຫຼຸດຜ່ອນການລົງທຶນໃນລະບົບສາຍສົ່ງ ແລະ ຫຼຸດຜ່ອນການສູນເສຍພະລັງງານໄຟຟ້າໃນລະບົບ.

(ii) ຄວາມສາມາດໃນການຜະລິດໄຟຟ້າໃນລະດູແລ້ງ: ເພື່ອຕອບສະໜອງຄວາມຕ້ອງການໄຟຟ້າໃນຊ່ວງທີ່ມີປະລິມານນ້ຳໄຫຼເຂົ້າເຂື່ອນໜ້ອຍ.

(iii) ສະຖຽນລະພາບ ແລະ ຄວາມປອດໄພຂອງລະບົບສາຍສົ່ງໄຟຟ້າ: ຮັບປະກັນວ່າກຳລັງການຜະລິດໄຟຟ້າຈາກແຫຼ່ງຜະລິດໃໝ່ຈະບໍ່ສົ່ງຜົນກະທົບຕໍ່ການປະຕິບັດງານຂອງລະບົບສົ່ງຂອງ ຟຟລ.

(iv) ການຄຸ້ມຄອງພາກຄວາມຕ້ອງການໄຟຟ້າ: ສະໜອງໄຟຟ້າທີ່ໝັ້ນຄົງ, ສົມດຸນ ໃຫ້ແກ່ພາກອຸດສາຫະກຳ ແລະ ຄົວເຮືອນ.

(v) ການກຳນົດລາຄາໄຟຟ້າທີ່ໂປ່ງໃສ ແລະ ສະທ້ອນເຖິງຕົ້ນທຶນ: ໂດຍພິຈາລະນາລາຄາໄຟຟ້າລະດູແລ້ງ/ລະດູຝົນ ແລະ ລາຄາໄຟຟ້ານຳເຂົ້າ.

ຫຼັກການເຫຼົ່ານີ້ຈະເປັນທິດທາງໃນການພັດທະນາແຫຼ່ງຜະລິດໄຟຟ້າໃນໄລຍະປີ 2026–2030 ແລະ ຮັບປະກັນສອງເປົ້າໝາຍທີ່ສຳຄັນ ຄື: ມີປະສິດທິຜົນທາງດ້ານເສດຖະກິດ ແລະ ການສະໜອງໄຟຟ້າໃຫ້ໝັ້ນຄົງ.

1. **ສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດໄຟຟ້າໃນລະດູແລ້ງເພື່ອສະໜອງໃຫ້ຄວາມຕ້ອງການຢ່າງໝັ້ນຄົງ:**

ພະລັງງານນ້ຳຍັງຄົງເປັນພະລັງງານໄຟຟ້າຫຼັກຂອງລະບົບ, ແຕ່ລັກສະນະການຜັນຜວນ ສະພາບອາກາດຕາມລະດູ ປີການ ຂອງປະລິມານນ້ຳທີ່ໄຫຼເຂົ້າອ່າງມີຄວາມ ແຕກຕ່າງໃນແຕ່ລະປີ. ຜ່ານການສ້າງແບບຈຳລອງຂອງ ຟຟລ ສະແດງ ໃຫ້ເຫັນວ່າ: ລະດູແລ້ງຈະຂາດແຄນພະລັງງານໄຟຟ້າໃນ ເກີນກວ່າ **600 GWh** ໃນບາງປີ ແລະ ຈະເພີ່ມຂຶ້ນພາຍໃນປີ 2035 ຫາກບໍ່ມີການລົງທຶນໃໝ່ໆ, ເຖິງແມ່ນວ່າຄວາມຕ້ອງການຊົມໃຊ້ຈະເຕີບໂຕໃນລະດັບປານກາງກໍຕາມ. ການ ເພີ່ມຂຶ້ນຂອງການຊົມໃຊ້ໃນພາກອຸດສາຫະກຳ (ເຊິ່ງຄາດວ່າຈະເພີ່ມຂຶ້ນຫຼາຍກວ່າສອງເທົ່າພາຍໃນປີ 2035) ແລະ ກຳລັງການຜະລິດທີ່ໝັ້ນຄົງ (Firm capacity) ທີ່ມີຈຳກັດ ເຮັດໃຫ້ມີຄວາມສ່ຽງໃນການຕ້ອງນຳເຂົ້າໄຟຟ້າໃນ ລະດູແລ້ງເພີ່ມສູງຂຶ້ນ.

ເພື່ອຫຼຸດຜ່ອນຄວາມສ່ຽງນີ້, ສປປ ລາວ ຈຳເປັນຕ້ອງລົງທຶນພັດທະນາ ແຫຼ່ງຜະລິດທີ່ໝັ້ນຄົງ ແລະ ສ້າງຫລາຍ ທາງເລືອກການສະໜອງໄຟຟ້າ ຕາມຄວາມຕ້ອງການຄື:

- **ການສຶກສາທາງເລືອກທີ່ດີທີ່ສຸດຂອງເຂື່ອນໄຟຟ້າ:** ເຊັ່ນການປະສານງານບໍລິຫານຈັດການນ້ຳ ຂອງເຂື່ອນທີ່ຢູ່ ສາຍນ້ຳດຽວກັນ (Cascade) ແລະ ການຄຸ້ມຄອງອ່າງເກັບນ້ຳ ເພື່ອເພີ່ມກຳລັງການຜະລິດທີ່ໝັ້ນຄົງ.
- ກຳລັງການຜະລິດຈາກໂຮງໄຟຟ້າ ຄວາມຮ້ອນ ແລະ ໂຮງໄຟຟ້າຈາກກ໊າຊແບບປະສົມປະສານ (Gas-hybrid) ທີ່ມີປະສິດທິພາບ ສາມາດຄາດຄະເນ ກຳນົດ ແລະ ຊ່ວຍການຜະລິດໄຟຟ້າໄດ້ໃນຊ່ວງທີ່ ເຂື່ອນໄຟຟ້າຜະລິດ ພະລັງງານໄດ້ໜ້ອຍ.
- ໂຄງການພະລັງງານລົມມີຂີດຄວາມສາມາດໃນການຜະລິດໄຟຟ້າສູງໃນລະດູແລ້ງ ແລະ ສາມາດຂະຫຍາຍໄດ້ ໃນເຂດພື້ນທີ່ ທີ່ມີທ່າແຮງອື່ນໆ.

ການລົງທຶນ ພະລັງງານໄຟຟ້າ ເຫຼົ່ານີ້ຈະກວມເອົາສັດສ່ວນທີ່ສຳຄັນຂອງງົບປະມານການລົງທຶນ (CAPEX) ໃນໄລຍະປີ 2026–2030 ແລະ ມີຄວາມຈຳເປັນຢ່າງຍິ່ງເພື່ອຮັກສາຄວາມສະຖຽນລະພາບ ໃນຂະນະທີ່ເສດຖະກິດ ກຳລັງປ່ຽນຜ່ານໄປສູ່ການຊົມໃຊ້ໄຟຟ້າທີ່ສູງຂຶ້ນໃນພາກອຸດສາຫະກຳ ແລະ ການບໍລິການ.

2. ປັບປຸງປະສິດທິພາບ ແລະ ສະມັດຖະພາບຂອງບັນດາເຂື່ອນໄຟຟ້າທີ່ມີຢູ່:

ບັນດາເຂື່ອນໄຟຟ້າຂອງ ສປປ ລາວ ຫຼາຍແຫ່ງຈະສາມາດຜະລິດພະລັງງານໄດ້ຫຼາຍຂຶ້ນກວ່າເກົ່າ ຖ້າຫາກໄດ້ ຮັບການປັບປຸງ ແລະ ບຳລຸງຮັກສາ. ລັດວິສາຫະກິດໄຟຟ້າລາວ (EDL) ໄດ້ຊີ້ໃຫ້ເຫັນວ່າ ເຄື່ອງຈັກປັ່ນໄຟ (Turbines) ທີ່ເກົ່າແກ່, ລະບົບຄວບຄຸມທີ່ຫຼ້າສະໄໝ, ແລະ ຂີດຄວາມສາມາດໃນການພະຍາກອນອຸທົກກະສາດທີ່ຈຳກັດ ແມ່ນປັດ ໄຈຫຼັກທີ່ເຮັດໃຫ້ການຜະລິດໄຟຟ້າຕົວຈິງຫຼຸດລົງ.

ມາດຕະການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດມີ ຄື:

- ການບຳລຸງຮັກສາກົງຫັນນ້ຳ ແລະ ປັບປຸງຈັກປັ່ນໄຟ ເພື່ອເພີ່ມກຳລັງການຜະລິດດ້ວຍຕົ້ນທຶນທີ່ຕ່ຳກວ່າການສ້າງ ເຂື່ອນໃໝ່.
- ການຫັນເປັນດິຈິຕອນ, ການຍົກລະດັບລະບົບ SCADA ແບບດິຈິຕ້ອນ ແລະ ລະບົບຄວບຄຸມ ອັດຕະໂນມັດ ເພື່ອປັບປຸງປະສິດທິພາບໃນການດຳເນີນງານ.
- ການນຳໃຊ້ເຄື່ອງມືພະຍາກອນອຸທົກກະສາດ ແລະ ວາງແຜນການຜະລິດໄຟຟ້າທີ່ທັນສະໄໝ ເພື່ອບໍລິຫານ ຈັດການການປ່ອຍນ້ຳໃນລະດູແລ້ງໃຫ້ມີປະສິດທິພາບສູງສຸດ.

ການຍົກລະດັບເຫຼົ່ານີ້ແມ່ນສ່ວນໜຶ່ງຂອງແຜນງົບປະມານການລົງທຶນຂອງ ຟຟລ ແລະ ໃຫ້ຜົນຕອບແທນສູງ ທາງດ້ານເສດຖະກິດ ເມື່ອທຽບກັບໂຄງການລົງທຶນໃໝ່.

3. ການຂະຫຍາຍແຫຼ່ງຜະລິດໄຟຟ້າຈາກພະລັງງານທົດແທນໃຫ້ ຕອບສະໜອງກັບຄວາມຕ້ອງການຂອງລະບົບໄຟຟ້າ:

ໂຄງການພະລັງງານແສງຕາເວັນ (Solar), ພະລັງງານລົມ (Wind), ແລະ ຊີວະມວນ (Biomass) ຍັງຄົງເປັນອົງປະກອບຫຼັກໃນການສ້າງຄວາມຫຼາກຫຼາຍຂອງແຫຼ່ງພະລັງງານ. ເຖິງຢ່າງໃດກໍຕາມ, ຜ່ານການສ້າງແບບຈຳລອງຂອງ ຟຟລ ສະແດງໃຫ້ເຫັນວ່າ: ການຂະຫຍາຍພະລັງງານທົດແທນແບບບໍ່ມີການຄວບຄຸມ ຈະເຮັດໃຫ້ໄຟຟ້າເຫຼືອໃນລະບົບຫລາຍຂຶ້ນໃນລະດູຝົນ ຖ້າຫາກບໍ່ມີລະບົບກັກເກັບພະລັງງານ, ລະບົບປະສົມປະສານ ຫຼື ການປັບປຸງຕາຂ່າຍສາຍສົ່ງຄວບຄູ່ກັນໄປ.

ດັ່ງນັ້ນ, ການຂະຫຍາຍກຳລັງການຜະລິດໄຟຟ້າ ຈະກຳນົດບຸລິມະສິດດັ່ງນີ້:

- ຮູບແບບປະສົມປະສານ ໂຊລ່າ-ພະລັງງານນ້ຳ ເພື່ອເພີ່ມຄວາມສາມາດໃນການສະໜອງໄຟຟ້າຕາມຄວາມຕ້ອງການ ແລະ ຫຼຸດຜ່ອນການຜະລິດໄຟຟ້າເຫຼືອ.
- ໂຄງການພະລັງງານລົມທີ່ມີລັກສະນະການຜະລິດໄຟຟ້າ ທີ່ດີໃນລະດູແລ້ງ ລວມທັງການພັດທະນາຂະໜາດໃຫຍ່ ເຊັ່ນ: ກຸ່ມໂຄງການພະລັງງານລົມ Monsoon.
- ໂຮງໄຟຟ້າຊີວະມວນ ແລະ ໂຮງໄຟຟ້າຈາກສິ່ງເສດເຫຼືອ ທີ່ຕັ້ງຢູ່ໃກ້ກັບເຂດອຸດສາຫະກຳ ແລະ ເຂດປຸງແຕ່ງຜະລິດຜົນກະສິກຳ ເພື່ອເສີມສ້າງຄວາມໝັ້ນຄົງຂອງໄຟຟ້າໃນລະດັບທ້ອງຖິ່ນ.

ໂຄງການເຫຼົ່ານີ້ຈະປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍກາດຄາບອນໃນໄລຍະຍາວ ພ້ອມທັງສ້າງຄວາມໝັ້ນຄົງໃນການສະໜອງໄຟຟ້າຕາມລະດູການ.

4. ການເພີ່ມກຳລັງການຜະລິດໄຟຟ້າ ເພື່ອສະໜັບສະໜຸນລະບຽງອຸດສາຫະກຳ ແລະ ເຂດເສດຖະກິດພິເສດ (SEZ):

ຄວາມຕ້ອງການໄຟຟ້າໃນພາກອຸດສາຫະກຳ ຄາດວ່າຈະກາຍເປັນປັດໄຈຫຼັກທີ່ຂຸກຍູ້ການເຕີບໂຕຂອງການຊົມໃຊ້ໄຟຟ້າ. ຟຟລ ຄາດການວ່າ ການຊົມໃຊ້ໃນພາກອຸດສາຫະກຳອາດຈະເກີນ **50%** ຂອງການຊົມໃຊ້ທົ່ວປະເທດ ພາຍໃນປີ 2035 ຈາກຂະແໜງການ ປຸງແຕ່ງອຸດສາຫະກຳ, ການຫຼອມໂລຫະ ແລະ ການພັດທະນາ ເຂດເສດຖະກິດພິເສດ SEZ.

ການກຳນົດ ກຳລັງການຜະລິດໄຟຟ້າຈະຕ້ອງເຮັດ:

- ສ້າງແຫຼ່ງຜະລິດໄຟຟ້າທີ່ສາມາດຕອບສະໜອງຕາມຄວາມຕ້ອງການ ແລະ ແບບປະສົມປະສານ (Hybrid) ໄວ້ໃກ້ກັບເຂດຊົມໃຊ້ໄຟຟ້າເປັນຕົ້ນ: ລະບຽງອຸດສາຫະກຳຫຼັກ ເພື່ອຮັບປະກັນຄຸນນະພາບໄຟຟ້າ ແລະ ຫຼຸດຜ່ອນການສູນເສຍໄຟຟ້າໃນລະບົບ.
- ສ້າງແຫຼ່ງຜະລິດໄຟຟ້າທີ່ເປັນແບບເຄື່ອນຍ້າຍໄດ້ສະດວກ ແລະ ສາມາດຕິດຕັ້ງໄດ້ໄວ ສຳລັບເຂດເສດຖະກິດພິເສດ SEZ ທີ່ມີຄວາມຕ້ອງການໄຟຟ້າເພີ່ມຂຶ້ນຢ່າງຮີບດ່ວນ.
- ວາງແຜນປະສານງານລະຫວ່າງ MOIC, ຄະນະກຳມະການເຂດເສດຖະກິດພິເສດ SEZ ແລະ ຟຟລ EDL ເພື່ອຮັບປະກັນວ່າການພັດທະນາແຫຼ່ງຜະລິດໄຟຟ້າ ຕອບສະໜອງກັບການຂະຫຍາຍຕົວຂອງພາກອຸດສາຫະກຳຢ່າງທັນເວລາ.

ວິທີທາງທີ່ກ່າວມາຂ້າງເທິງນີ້ ຈະຊ່ວຍສະໜັບສະໜຸນ ແລະ ດຶງດູດການລົງທຶນ ໃນພາກອຸດສາຫະກຳ ໃຫ້ຫລາຍຂຶ້ນ ແລະ ເພີ່ມມູນຄ່າເພີ່ມຜະລິດຕະພັນພາຍໃນປະເທດ.

5. ການປັບປຸງການພັດທະນາແຫຼ່ງຜະລິດໄຟຟ້າ ໃຫ້ສອດຄ່ອງກັບຍຸດທະສາດການຄ້າ ແລະ ການສົ່ງອອກ ໄຟຟ້າ ໃນລະດັບພາກພື້ນ:

ສປປ ລາວ ມີເປົ້າໝາຍທີ່ຈະເພີ່ມການມີສ່ວນຮ່ວມໃນຕະຫຼາດພະລັງງານໄຟຟ້າ ລະດັບພາກພື້ນ ແລະ ປະຕິບັດຕາມພັນທະພາຍໃຕ້ຂໍ້ຕົກລົງການສົ່ງອອກແບບສອງຝ່າຍ ແລະ ຫຼາຍຝ່າຍ. ເຖິງຢ່າງໃດກໍ່ຕາມ, ການວິເຄາະລະບົບຂອງ

ຟຟລ ແມ່ນເນັ້ນໃສ່ ຄວາມພຽງພໍຂອງການສະໜອງໄຟຟ້າພາຍໃນປະເທດໃນລະດູແລ້ງຕ້ອງມາກ່ອນ, ເພາະປະລິມານນ້ຳທີ່ໜ້ອຍຈະຈຳກັດໂອກາດໃນການສົ່ງອອກໄຟຟ້າ.

ການວາງແຜນການຜະລິດທີ່ຈະຕ້ອງເຮັດ:

- ການເຈລະຈາທີ່ຈະສົ່ງອອກໄຟຟ້າ ຈະຕ້ອງຄຳໜຶ່ງເຖິງການຊົມໃຊ້ໄຟຟ້າເປັນບູລິມະສິດຫຼັກ.
- ໃຫ້ບຸລິມະສິດແກ່ໂຄງການ ແຫຼ່ງຜະລິດທີ່ສາມາດຜະລິດໄຟຟ້າໝັ້ນຄົງ ແລະ ສະໜອງຕາມຄວາມຕ້ອງການ ເພື່ອຮັກສາພັນທະການສົ່ງອອກໃນລະດູແລ້ງໃຫ້ໄດ້.
- ຮັບປະກັນວ່າແຫຼ່ງຜະລິດໄຟຟ້າທີ່ເນັ້ນການສົ່ງອອກ ຕ້ອງເຊື່ອມຕໍ່ກັບຕາຂ່າຍໄຟຟ້າຂອງ ຟຟລ ເພື່ອການບໍລິຫານຈັດການແບບລວມສູນ ແລະ ໃຫ້ເຫັນພາບລວມຂອງການໄຫຼຂອງກະແສໄຟຟ້າໃນລະບົບ.

ແນວທາງນີ້ ຈະຊ່ວຍຮັບປະກັນການສະໜອງພະລັງງານພາຍໃນປະເທດ ໄປພ້ອມໆກັບການເສີມສ້າງບົດບາດຂອງ ສປປ ລາວ ໃນການເປັນຜູ້ສະໜອງພະລັງງານໄຟຟ້າລະດັບພາກພື້ນ.

6. ການສ້າງຄວາມເຂັ້ມແຂງໃຫ້ແກ່ ວຽກງານຄຸ້ມຄອງລະບົບໄຟຟ້າ, ຄັດເລືອກການບັນຊາລະບົບໄຟຟ້າທີ່ມີປະສິດທິພາບສູງສຸດ ແລະ ຄວາມສາມາດໃນການວາງແຜນ:

ນອກເໜືອຈາກຊັບສິນ (ໂຮງໄຟຟ້າ ແລະ ສາຍສົ່ງ), ຟຟລ ຍັງມີຂໍ້ຈຳກັດດ້ານການດຳເນີນງານຫຼາຍປະການທີ່ສົ່ງຜົນກະທົບຕໍ່ສະມັດຖະພາບຂອງລະບົບ ຄື:

- ການຂາດຂໍ້ມູນແບບຕາມເວລາ (Real-time data) ແລະ ລະບົບຄວບຄຸມ SCADA/EMS ທີ່ຍັງບໍ່ທັນທົ່ວເຖິງ.
- ການປະສານງານ ລະຫວ່າງ ເຂື່ອນໄຟຟ້າຕ່າງໆຍັງມີຈຳກັດ.
- ການຄາດຄະເນຄວາມຕ້ອງການຊົມໃຊ້ ໄຟຟ້າ ແລະ ການຜະລິດໄຟຟ້າ ຈາກພະລັງງານທົດແທນຍັງບໍ່ທັນຊັດເຈນ.
- ຂັ້ນຕອນການສັ່ງຜະລິດ-ຈ່າຍໄຟຟ້າ (Dispatch) ທີ່ຍັງແຍກສ່ວນກັນໃນແຕ່ລະພາກ.

ວິທີການປັບປຸງທີ່ສຳຄັນປະກອບມີ:

- ຍົກລະດັບເຄື່ອງມືພະຍາກອນ, ແບບຈຳລອງອຸທົກກະສາດ ແລະ ການວິເຄາະຄວາມຕ້ອງການຊົມໃຊ້ໄຟຟ້າ.
- ກຳນົດຂັ້ນຕອນມາດຕະຖານການດຳເນີນງານ (SOP) ຂອງ ຟຟລ, ຜູ້ຜະລິດໄຟຟ້າເອກະຊົນ (IPPs) ແລະ ຜູ້ຄວບຄຸມລະບົບໄຟຟ້າໃນລະດັບພາກ.
- ປັບປຸງການປະສານງານການບໍລິຫານຈັດການນ້ຳຂອງເຂື່ອນໄຟຟ້າໃນສາຍນ້ຳດຽວກັນ (Cascade) ແລະ ການຄຸ້ມຄອງອ່າງເກັບນ້ຳ ຂອງແຕ່ລະເຂື່ອນໄຟຟ້າ.
- ຍົກລະດັບລະບົບສັ່ງຜະລິດ-ຈ່າຍໄຟຟ້າ ດ້ວຍລະບົບ SCADA/EMS ເພື່ອໃຫ້ສາມາດຄວບຄຸມລະບົບໄດ້ແບບຕາມເວລາ.

ການຍົກລະດັບຕາມວຽກງານເຫຼົ່ານີ້ ຈະຊ່ວຍສົ່ງເສີມການລົງທຶນດ້ານງົບປະມານ (CAPEX) ແລະ ສາມາດສ້າງພະລັງງານ (GWh) ເພີ່ມຕື່ມຈາກຊັບສິນທີ່ມີຢູ່ດ້ວຍຫົວໜ່ວຍຕົ້ນທຶນທີ່ຕ່ຳ.

ລິເລີ່ມແຜນບຸລິມະສິດດ້ານລະບົບສາຍສົ່ງ ແລະ ລະບົບຈຳໜ່າຍ:

ການບັນລຸເປົ້າໝາຍດ້ານພະລັງງານໄຟຟ້າຂອງ ສປປ ລາວ ສຳລັບປີ 2026–2030 ຕ້ອງອາໄສການລົງທຶນຢ່າງມະຫາສານໃນໂຄງລ່າງພື້ນຖານລະບົບສາຍສົ່ງ ແລະ ລະບົບຈຳໜ່າຍ (T&D). ເຖິງແມ່ນວ່າກຳລັງການຜະລິດຈະຂະຫຍາຍຕົວຢ່າງໄວວາໃນທົດສະວັດທີ່ຜ່ານມາ, ແຕ່ການພັດທະນາໂຄງຂ່າຍສາຍສົ່ງແມ່ນຍັງບໍ່ທັນຕອບສະໜອງ ສົ່ງ

ຜົນໃຫ້ເກີດຄວາມຈຳກັດ ໃນລະບົບສາຍສົ່ງໄຟຟ້າ, ສິ່ງທ້າທາຍດ້ານຄວາມສະຖຽນລະພາບ, ແລະ ຂໍ້ຈຳກັດດ້ານການສະໜອງໄຟຟ້າ ທີ່ກະທົບໂດຍກົງຕໍ່ຜູ້ຊົມໃຊ້ພາຍໃນ, ພາກອຸດສາຫະກຳ, ແລະ ສະມັດຖະພາບຂອງການສົ່ງອອກ. ດັ່ງນັ້ນ, ການສ້າງຄວາມເຂັ້ມແຂງໃຫ້ແກ່ ໂຄງຂ່າຍໄຟຟ້າແຫ່ງຊາດຈຶ່ງມີຄວາມຈຳເປັນ ເພື່ອຮອງຮັບການຊົມໃຊ້ທີ່ເພີ່ມຂຶ້ນ, ປັບປຸງຄຸນນະພາບໄຟຟ້າ ແລະ ເພີ່ມທະວີການຜະລິດໄຟຟ້າແບບປະສົມປະສານກັບພະລັງງານນ້ຳ, ພະລັງງານທົດແທນ ແລະ ຊື້ຂາຍໄຟຟ້າໃນລະດັບພາກພື້ນ.

ການວາງແຜນລະບົບສາຍສົ່ງໄຟຟ້າແມ່ນປະຕິບັດຕາມ 3 ວັດຖຸປະສົງຫຼັກ:

(i) ຮັບປະກັນຄວາມໝັ້ນຄົງ ແລະ ສະຖຽນລະພາບຂອງລະບົບ ໄຟຟ້າ ເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ພາຍໃນທີ່ເພີ່ມຂຶ້ນ.

(ii) ຍົກລະດັບໂຄງລ່າງພື້ນຖານລະບົບສາຍສົ່ງໄຟຟ້າທີ່ມີຢູ່ ເພື່ອຂະຫຍາຍຂີດຄວາມສາມາດໃນການສົ່ງໄຟຟ້າ.

(iii) ເປີດກວ້າງການເຊື່ອມໂຍງກັບລະບົບໄຟຟ້າຂອງປະເທດເພື່ອນບ້ານ (Cross-border interconnection).

ວິທີການເຫຼົ່ານີ ຈະເປັນພື້ນຖານຂອງແຜນພັດທະນາລະບົບສາຍສົ່ງແລະສະຖານີ ໄຟຟ້າ ທີ່ບັນຈຸໃນແຜນພັດທະນາໄຟຟ້າ 2026-2030.

ການຂະຫຍາຍລະບົບສາຍສົ່ງໄຟຟ້າ ແມ່ນບົນພື້ນຖານການຄາດຄະເນຄວາມຕ້ອງການຊົມໃຊ້ໄຟຟ້າແຫ່ງຊາດ ແລະ ຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກ (Feasibility studies) ຂອງໂຄງການເຫຼົ່ານັ້ນ, ລວມທັງການວິເຄາະດ້ານເຕັກນິກຂອງກຳລັງໄຟຟ້າຂອງໝໍ້ແປງ, ອຸປະກອນຊົດເຊີຍກຳລັງໄຟຟ້າ (Reactive compensation) ເຊັ່ນ Capacitor banks ແລະ Shunt reactors, ພ້ອມທັງການກຳນົດທີ່ຕັ້ງຂອງສະຖານີໄຟຟ້າທີ່ເໝາະສົມ. ການວາງແຜນລະບົບສາຍສົ່ງແມ່ນອາໄສເຄື່ອງມື ຊອບແວ (ເຊັ່ນ: ArcView GIS) ເພື່ອກຳນົດທີ່ຕັ້ງຂອງສະຖານີໄຟຟ້າ ແລະ ແລວສາຍສົ່ງ, ຄວບຄູ່ໄປກັບການໃຊ້ຊອບແວວິເຄາະລະບົບໄຟຟ້າ ເຊັ່ນ: ໂປຣແກຣມວິເຄາະ ແລະ ຈຳລອງລະບົບໄຟຟ້າ (PSS/E ແລະ DIgSILENT PowerFactory) ເພື່ອຈຳລອງລະບົບສົ່ງໄຟຟ້າ ແລະ ວິເຄາະສະພາວະສຸກເສີນ.

ການສຶກສາຄວາມເປັນໄປໄດ້ດ້ານເຕັກນິກຈະເນັ້ນໃສ່ 4 ຂົງເຂດຫຼັກ: ການວິເຄາະການໄຫຼຂອງກຳລັງໄຟຟ້າ (Power flow), ການວາງແຜນໃນກໍລະນີສຸກເສີນ N-1, ສະຖຽນລະພາບຂອງລະບົບ (ແຮງດັນ ແລະ ການປ່ຽນແປງຊື່ວຄາວ) ແລະ ຮູບແບບໂຄງຂ່າຍໄຟຟ້າທີ່ເໝາະສົມທີ່ສຸດ. ການສຶກສາເຫຼົ່ານີ້ມີຄວາມສຳຄັນຫຼາຍໃນການກຳນົດທາງເລືອກໃນການພັດທະນາທີ່ດີທີ່ສຸດ ແລະ ເປັນທາງເລືອກການພັດທະນາທີ່ສາມາດ ນຳໃຊ້ເຂົ້າໃນການວາງແຜນພັດທະນາລະບົບສາຍສົ່ງໄຟຟ້າໄລຍະຍາວ.

ລະບົບສາຍສົ່ງ ແລະ ການຈຳໜ່າຍທີ່ມີຄວາມເຊື່ອຖືໄດ້ ມີຄວາມຈຳເປັນຢ່າງຍິ່ງ ເພື່ອສະໜັບສະໜູນບົດບາດຂອງ ສປປ ລາວ ທີ່ພວມເຕີບໂຕໃນການເປັນຜູ້ສົ່ງອອກໄຟຟ້າ ໃນລະດັບພາກພື້ນ ແລະ ເພື່ອຮັບປະກັນການສະໜອງໄຟຟ້າທີ່ມີຄຸນນະພາບສູງ ແລະ ສະຖຽນລະພາບ ໃຫ້ແກ່ບັນດາເຂດເສດຖະກິດພິເສດ (SEZs), ອຸດສາຫະກຳປຸງແຕ່ງແຮ່ທາດ ແລະ ເຂດອຸດສາຫະກຳ. ປັບປຸງຂີດຄວາມສາມາດຂອງຕາຂ່າຍໄຟຟ້າ ແລະ ການປະສານງານທີ່ດີຂຶ້ນ ຈະຊ່ວຍຫຼຸດຜ່ອນຄວາມສ່ຽງທີ່ກໍ່ໃຫ້ເກີດການຢຸດຜະລິດໄຟຟ້າ, ສະໜັບສະໜູນການວາງແຜນການຈ່າຍໄຟພາຍໃນປະເທດ ແລະ ເຮັດໃຫ້ສາມາດປະຕິບັດພັນທະການສົ່ງອອກແບບສອງຝ່າຍໄດ້ຢ່າງມີປະສິດທິຜົນ.

1. **ການປັບປຸງ ສາຍສົ່ງແຫ່ງຊາດ ເໜືອ-ກາງ-ໃຕ້ ເພື່ອຫຼຸດຜ່ອນຄວາມແອອັດຂອງລະບົບສົ່ງ ແລະ ປັບປຸງສະຖຽນລະພາບຂອງລະບົບ:**

ບັນດາລະບົບສາຍສົ່ງໄຟຟ້າແຫ່ງຊາດທີ່ເປັນຍຸດທະສາດ ຂອງລາວຈະຍັງສືບຕໍ່ ພົບບັນຫາຄໍຂວດແອອັດ, ໂດຍ ສະເພາະ ສາຍສົ່ງ ທີ່ເຊື່ອມຕໍ່ພາກເໜືອ (ທີ່ມີເຂື່ອນໄຟຟ້າຫລາຍ) ກັບເຂດຊົມໃຊ້ໄຟຟ້າໃນພາກກາງ ແລະ ພາກໃຕ້. ແຜນພັດທະນາລະບົບສາຍສົ່ງ (SDP) ຂອງ ຟຟລ ລະບຸວ່າ ມີສາຍສົ່ງ 230 kV ແລະ 115 kV ຫຼາຍຈຸດທີ່ໃກ້ເຕັມຂີດ ຄວາມສາມາດ ສົ່ງຜົນໃຫ້ແຮງດັນໄຟຟ້າບໍ່ຄົງທີ່, ຈຳກັດການສົ່ງໄຟຟ້າ ແລະ ມີຄວາມສ່ຽງໃນການຕ້ອງຢຸດການຜະລິດ ບາງສ່ວນ.

- **ບຸລິມະສິດໃນການລົງທຶນປະກອບມີ:**
- ຂະຫຍາຍ ແລະ ເສີມຄວາມເຂັ້ມແຂງໃຫ້ສາຍສົ່ງ 230 kV ທີ່ສຳຄັນ ເພື່ອເພີ້ມການແລກປ່ຽນພະລັງງານໄຟຟ້າ ໃນແຕ່ລະພາກ;
- ປັບປຸງສາຍສົ່ງ 115 kV ແລະ ສະຖານີໄຟຟ້າໃນເຂດທີ່ມີຄວາມແອອັດ ໂດຍສະເພາະໃກ້ກັບເຂດອຸດສາຫະກຳ;
- ຕິດຕັ້ງອຸປະກອນຄວບຄຸມ ແລະ ປັບປຸງລະບົບປ້ອງກັນເພື່ອແກ້ໄຂບັນຫາໄຟຟ້າຜັນຜວນ.

2. ການເພີ່ມລະບົບສຳຮອງກໍລະນີສຸກເສີນ N-1 ແລະ ເສີມສ້າງຄວາມເຂັ້ມແຂງຂອງລະບົບສົ່ງ:

ສາຍສົ່ງ ແລະ ສະຖານີໄຟຟ້າທີ່ສຳຄັນຫຼາຍແຫ່ງຍັງຂາດລະບົບສຳຮອງກໍລະນີສຸກເສີນ N-1, ໝາຍຄວາມວ່າລະບົບ ຈະບໍ່ສາມາດດຳເນີນງານໄດ້ຢ່າງປອດໄພຫາກມີອຸປະກອນໃດໜຶ່ງຂັດຂ້ອງ. ບັນຫາເຫຼົ່ານີ້ຈະເພີ່ມໂອກາດໃນການເກີດໄຟ ດັບ ແລະ ຈຳກັດຄວາມສາມາດຂອງລາວໃນການຂະຫຍາຍການຜະລິດໄຟຟ້າໃຫ້ແກ່ການຊົມໃຊ້ໄຟຟ້າ ພາກ ອຸດສາຫະກຳໃໝ່ ຫຼື ສົ່ງຂາຍໄຟຟ້າໃນພາກພື້ນ.

ວຽກບຸລິມະສິດທີ່ຈະຕ້ອງເຮັດ:

- ສ້າງສາຍສົ່ງໄຟຟ້າເພີ່ມເຕີມໃນເຂດທີ່ມີ ສົ່ງໄຟຟ້າລະບົບດ່ຽວ (Single-circuit);
- ເສີມສະມັດຖະພາບຂອງໝໍ້ແປງ ແລະ ສະຖານີໄຟຟ້າ;
- ສ້າງຄວາມສົມດຸນລະຫວ່າງເຂດທີ່ມີການຜະລິດໄຟຟ້າທີ່ໜາແໜ້ນ ກັບ ເຂດທີ່ມີການຊົມໃຊ້ສູງ ເພື່ອຫຼຸດຜ່ອນ ຄວາມແອອັດ ແລະ ບັນຫາໄຟດັບ.

3. ເລັ່ງພັດທະນາການເຊື່ອມຕໍ່ລະບົບສາຍສົ່ງໄຟຟ້າໃນແຕ່ລະພາກທີ່ບໍ່ເຊື່ອມຕໍ່ກັນ:

ໃນໄລຍະຜ່ານມາ, ບາງເຂດຂອງລະບົບໄຟຟ້າ ຂອງ ຟຟລ (ໂດຍສະເພາະໃນແຂວງຫ່າງໄກສອກຫຼີກ) ບໍ່ຜ່ານສູນ ບັນຊາໄຟ ແຕ່ບັນຊາແຕ່ລະຈຸດສະເພາະ, ເຮັດໃຫ້ຈຳກັດຄວາມສາມາດໃນການສົ່ງຈ່າຍໄຟ ແລະ ແລກປ່ຽນໄຟຟ້າ. ການ ເຊື່ອມໂຍງໂຄງເຄືອຂ່າຍໄຟຟ້າ ໃຫ້ທົ່ວເຖິງ ຈະອຳນວຍຄວາມສະດວກໃຫ້ແກ່ການວາງແຜນການຜະລິດໄຟຟ້າເຂື່ອນ ໄຟຟ້າ, ສ້າງຄວາມສົມດຸນໃນການສະໜອງໄຟຕາມຄວາມຕ້ອງການຂອງລະບົບ ແລະ ເພີ່ມຄວາມໝັ້ນຄົງໃນ ລະບົບ ໄຟຟ້າແຫ່ງຊາດ.

ການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດມີຄື:

- ເຊື່ອມຕໍ່ລະບົບສາຍສົ່ງໄຟຟ້າ ພາກເໜືອ, ພາກກາງ ແລະ ພາກໃຕ້ ໃຫ້ທົ່ວເຖິງ ສາມາດສົ່ງຈ່າຍໄຟແບບລວມ ສູນທົ່ວປະເທດ;
- ຂະຫຍາຍຂີດຄວາມສາມາດໃນການເຊື່ອມຕໍ່ ປະເທດໄກ້ຄຽງ ເພື່ອຮອງຮັບການຄ້າຂາຍໃນພາກພື້ນ ແລະ ນຳ ເຂົ້າໄຟຟ້າໃນລະດູແລ້ງ.
- ປັບປຸງໂຄງສ້າງສາຍສົ່ງໄຟຟ້າ ເພື່ອຮອງຮັບການໄຫຼຂອງກະແສໄຟຟ້າແບບສອງທິດທາງ ໃຫ້ສອດຄ່ອງກັບ ຄວາມຕ້ອງການພາຍໃນປະເທດ ແລະ ການສົ່ງອອກ.

4. ການທັນເປັນທັນສະໄໝຂອງລະບົບ SCADA/EMS, ລະບົບປ້ອງກັນ ແລະ ການບັນຊາສັ່ງຮັບ-ຈ່າຍໄຟ

ໂຄງລ່າງພື້ນຖານດ້ານດິຈິຕອນ ແລະ ລະບົບຄວບຄຸມການບັນຊາສັ່ງຮັບ-ຈ່າຍໄຟຍັງເປັນຂໍ້ຈຳກັດຫຼັກ. ການທີ່ລະບົບ SCADA/EMS ຍັງບໍ່ມີ ອຸປະກອນປ້ອງກັນ (Relays) ທີ່ທັນສະໄໝ ແລະ ຂາດຂໍ້ມູນຕາມເວລາ (Real-time) ເຮັດໃຫ້ບັນຊາສັ່ງຮັບ-ຈ່າຍໄຟ ກວດຈັບຈຸດບົກພ່ອງ ແລະ ຮັກສາສະຖຽນລະພາບຂອງລະບົບໄຟຟ້າຍັງບໍ່ສາມາດ ເຮັດໄດ້.

ການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດມີຄື:

- ປັບປຸງລະບົບ SCADA/EMS ເພື່ອຕິດຕາມ ແລະ ຄວບຄຸມແບບອັດຕະໂນມັດ;
- ຕິດຕັ້ງອຸປະກອນປ້ອງກັນທີ່ທັນສະໄໝ ເພື່ອຫຼຸດໄລຍະເວລາໄຟຟ້າມອດ;
- ປັບປຸງລະບົບສື່ສານ ແລະ ການແບ່ງປັນຂໍ້ມູນລະຫວ່າງ EDL, EDL-T ແລະ ຜູ້ຜະລິດໄຟຟ້າ.

5. ການຮັບປະກັນຄວາມພ້ອມຂອງລະບົບສາຍສົ່ງ ເພື່ອສະໜອງໄຟຟ້າໃຫ້ເຂດເສດຖະກິດພິເສດ SEZ ແລະ ລະບຽງອຸດສາຫະກຳ:

ການລົງທຶນໃໝ່ໃນໂຮງງານຫຼອມໂລຫະ, ການປຸງແຕ່ງແຮ່ທາດ ແລະ ການຜະລິດສິນຄ້າຕ່າງໆ ຕ້ອງການໄຟຟ້າໃນປະລິມານມະຫາສານ ແລະ ໝັ້ນຄົງ. ເຖິງຢ່າງໃດກໍຕາມ, ຂີດຄວາມສາມາດຂອງຕາຂ່າຍໄຟຟ້າອ້ອມຮອບເຂດເສດຖະກິດພິເສດ SEZ ແລະ ເຂດອຸດສາຫະກຳຫຼາຍແຫ່ງຍັງບໍ່ພຽງພໍ, ໂດຍສະເພາະໃນຊ່ວງທີ່ມີການຊົມໃຊ້ໄຟຟ້າສູງສຸດ ໂດຍສະເພາະລະດູແລ້ງ.

ການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດມີຄື:

- ປັບປຸງສາຍສົ່ງ ແລະ ສະຖານີໄຟຟ້າ 115 kV ແລະ 230 kV ທີ່ຮັບໃຊ້ເຂດອຸດສາຫະກຳຫຼັກ;
- ຂະຫຍາຍຕາຂ່າຍຈຳໜ່າຍພາຍໃນ ແລະ ອ້ອມຮອບເຂດເສດຖະກິດພິເສດ SEZ;
- ປະສານງານການວາງແຜນລະຫວ່າງ MOIC, EDL, ຄະນະກຳມະການ SEZ ແລະ ອຳນາດການປົກປ້ອງແຂວງ ເພື່ອໃຫ້ການສະໜອງໄຟຟ້າສອດຄ່ອງກັບການອະນຸມັດການລົງທຶນ.

6. ການອຳນວຍຄວາມສະດວກໃນການເຊື່ອມຕໍ່ພະລັງງານທົດແທນ ແລະ ຫຼຸດຜ່ອນເວລາຢຸດການຜະລິດໄຟຟ້າ:

ຫາກບໍ່ມີການປັບປຸງລະບົບສາຍສົ່ງ, ການເພີ່ມກຳລັງການຜະລິດຈາກແສງແດດ ແລະ ລົມ ກໍມີຄວາມສ່ຽງທີ່ຈະຖືກສັ່ງໃຫ້ຢຸດເວລາການຜະລິດຫລາຍຂຶ້ນ, ໂດຍສະເພາະໃນລະດູຝົນທີ່ມີພະລັງງານຈາກເຂື່ອນເປັນຫຼັກ. ປັດຈຸບັນລະບົບກັກເກັບພະລັງງານໄຟຟ້າຍັງມີຈຳກັດ ແລະ ການເລືອກທີ່ຕັ້ງຂອງພະລັງງານທົດແທນຍັງບໍ່ສອດຄ່ອງກັບຂີດຄວາມສາມາດຂອງລະບົບຕາຂ່າຍໄຟຟ້າ.

ການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດມີຄື:

- ສ້າງຄວາມເຂັ້ມແຂງໃຫ້ລະບົບສາຍສົ່ງໃນເຂດທີ່ມີພະລັງງານທົດແທນໜາແໜ້ນ ເພື່ອເພີ່ມທ່າແຮງການສົ່ງອອກ ແລະ ຫຼຸດຄວາມແອອັດ;
- ທົດລອງໃຊ້ລະບົບກັກເກັບໄຟຟ້າດ້ວຍແບັດເຕີຣີ (BESS) ຫຼື ລະບົບ Hybrid ໃນເຂດທີ່ມີໄຟຟ້າຈາກພະລັງງານທົດແທນຫລາຍ;
- ປັບປຸງການອະນຸມັດໂຄງການແຫຼ່ງຜະລິດໄຟຟ້າໃຫ້ປະສານ ກັບ ແຜນພັດທະນາຕາຂ່າຍໄຟຟ້າ.

7. ການຫຼຸດຜ່ອນການສູນເສຍໄຟຟ້າທາງດ້ານເຕັກນິກ ແລະ ການປັບປຸງຄວາມເຊື່ອໝັ້ນຂອງລະບົບຈຳໜ່າຍ:

ເຖິງວ່າຈະມີການເນັ້ນໃສ່ລະບົບສາຍສົ່ງໄຟຟ້າເປັນຫຼັກ, ແຕ່ ສປປ ລາວ ຍັງຄົງພົບພໍ້ການສູນເສຍໄຟຟ້າທາງດ້ານເຕັກນິກສູງໃນລະບົບສາຍຈຳໜ່າຍ, ໂດຍສະເພາະໃນເຂດຕົວເມືອງທີ່ຂະຫຍາຍຕົວຢ່າງໄວວາ. ອຸປະກອນທີ່ບໍ່ໄດ້ມາດຕະຖານ, ການຊົມໃຊ້ໄຟຟ້າທີ່ບໍ່ສົມດຸນ ລະຫວ່າງ ການສະໜອງ ແລະ ຄວາມຕ້ອງການ ແລະ ກົນໄກການບັງຄັບໃຊ້ລະບຽບ ແມ່ນຍັງອ່ອນແອ ຊຶ່ງເປັນສາເຫດທີ່ເຮັດໃຫ້ເກີດຄວາມບໍ່ມີປະສິດທິພາບ.

ການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດມີ ຄື:

- ປ່ຽນອຸປະກອນ: ປ່ຽນຂະໜາດສາຍໄຟໃຫ້ໃຫຍ່ຂຶ້ນ, ປ່ຽນໝໍ້ແປງທີ່ເກົ່າແກ່ ແລະ ອຸປະກອນປ້ອງກັນທີ່ທັນສະໄໝ.
- ສ້າງແຫຼ່ງຜະລິດໄຟຟ້າແບບກະຈາຍຕາມຈຸດຊົມໃຊ້ໄຟຟ້າເຊັ່ນ: ໂຊລ່າເຊລແບບຕິດຕັ້ງຢູ່ຈຸດຊົມໃຊ້ເພື່ອຫຼຸດຜ່ອນການສູນເສຍໄຟຟ້າ ແລະ ປັບປຸງຄຸນນະພາບຂອງແຮງດັນໄຟຟ້າໃນເຂດທີ່ເຄືອຂ່າຍໄຟຟ້າຍັງບໍ່ເຂັ້ມແຂງ.
- ຂະຫຍາຍລະບົບບັນຊາຈຳໜ່າຍໄຟຟ້າແບບອັດຕະໂນມັດ ໂດຍນຳໃຊ້ເຄື່ອງມືບໍລິຫານຈັດການໄຟຟ້າ ເພື່ອອຳນວຍຄວາມສະດວກໃນການສັ່ງຈ່າຍວ່ອງໄວ ແລະ ຕິດຕາມເກັບກຳຂໍ້ມູນ.
- ສ້າງຄວາມເຂັ້ມແຂງດ້ານການຕິດຕາມກວດກາລະບົບຕາຂ່າຍ, ໝໍ້ນັບໄຟ ເພື່ອເປັນການເກັບຄ່າໄຟ ແລະ ສ້າງລະບຽບວິໄນໃນການຊົມໃຊ້ໃຫ້ດີຂຶ້ນ.

ການລົງທຶນເຫຼົ່ານີ້ ຈະຊ່ວຍຫຼຸດຜ່ອນການສູນເສຍໄຟຟ້າຂອງລະບົບ ແລະ ປັບປຸງຖານະທາງດ້ານການເງິນໃຫ້ດີຂຶ້ນ.

ແຜນບຸລິມະສິດດ້ານການສົ່ງອອກ:

ການສົ່ງອອກໄຟຟ້າຈະຍັງຄົງມີບົດບາດສຳຄັນໃນການສະໜັບສະໜູນການພັດທະນາເສດຖະກິດແຫ່ງຊາດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ສະຖານະການສົ່ງພະລັງງານ ໄຟຟ້າຂອງ ສປປ ລາວ ໃນລະດັບນພາກພື້ນ. ໃນຂະນະທີ່ປະເທດເພື່ອນບ້ານມີຄວາມຕ້ອງການໄຟຟ້າທີ່ສະອາດ, ເຊື່ອຖືໄດ້ ແລະ ລາຄາທີ່ແຂ່ງຂັນໄດ້ເພີ່ມຂຶ້ນ, ສປປ ລາວ ກໍມີຄວາມພ້ອມທີ່ຈະປະກອບສ່ວນເຂົ້າໃນການສະໜອງພະລັງງານໄຟຟ້າໃນລະດັບພາກພື້ນ ຈາກບັນດາໂຄງການພະລັງງານນ້ຳ, ພະລັງງານລົມ ແລະ ພະລັງງານແສງແດດ ທີ່ພວມເຕີບໃຫຍ່ຂະຫຍາຍຕົວ. ເພື່ອຮັກສາ ແລະ ຂະຫຍາຍບົດບາດນີ້ ລັດຖະບານຈະຕ້ອງສຸມໃສ່ການປັບປຸງຄວາມພ້ອມ, ການປະສານງານ ແລະ ຄວາມເຊື່ອໝັ້ນຂອງການສະໜອງໄຟຟ້າເພື່ອການສົ່ງອອກ, ຮັບປະກັນການຊົມໃຊ້ໄຟຟ້າພາຍໃນ ໄປຄວບຄູ່ກັບ ການສົ່ງອອກ ຕາມເປົ້າໝາຍການພັດທະນາເສດຖະກິດແຫ່ງຊາດ.

ການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດ ພັດທະນາໂຄງການແຫຼ່ງຜະລິດໄຟຟ້າ ໃຫ້ສຳເລັດຕາມແຜນເວລາທີ່ກຳນົດ ແລະ ມີການປະສານງານ. ເນັ້ນການວາງແຜນ ແລະ ຈັດລຳດັບການຈັດຕັ້ງປະຕິບັດໂຄງການເຂື່ອນໄຟຟ້າຂະໜາດໃຫຍ່ໃນສາຍນ້ຳດຽວກັນ, ກຸ່ມໂຄງການພະລັງງານລົມ ແລະ ພະລັງງານແສງຕາເວັນ ໃຫ້ມີຄວາມຕໍ່ເນື່ອງ ຜ່ານຂັ້ນຕອນການກວດສອບ ການສຶກສາທີ່ເປັນເອກະພາບ ເພື່ອຮັກສາຊື່ສຽງຂອງປະເທດໃນການເປັນຄູ່ຮ່ວມງານພະລັງງານທີ່ໄວ້ວາງໃຈໄດ້.

ປັບປຸງລະບົບສາຍສົ່ງຂ້າມຊາຍແດນ: ລົງທຶນໃນສາຍສົ່ງໄຟຟ້າແຕ່ ເໜືອ-ກາງ-ໃຕ້, ປັບປຸງສະຖານີໄຟຟ້າ ແລະ ລະບົບຄວບຄຸມທີ່ທັນສະໄໝ ເພື່ອໃຫ້ການໄຫຼຂອງໄຟຟ້າສົ່ງອອກມີຄວາມສະຖຽນລະພາບ ແລະ ສະໜອງຕາມຄວາມຕ້ອງການ, ຮອງຮັບການເຊື່ອມໂຍງເຂົ້າໃນໂຄງຂ່າຍສາຍສົ່ງໄຟຟ້າອາຊຽນ.

ປັບປຸງຂັ້ນຕອນການຄັດເລືອກ ແລະ ອະນຸມັດໂຄງການໄຟຟ້າ ເພີ່ມຄວາມເຂັ້ມງວດໃນການປະເມີນໂຄງການແຫຼ່ງຜະລິດໄຟຟ້າສົ່ງອອກ ໂດຍອີງໃສ່ຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກ, ຄວາມພຽງພໍຂອງການສະໜອງໄຟຟ້າພາຍໃນ (ໂດຍສະເພາະໃນລະດູແລ້ງ) ແລະ ຄວາມສອດຄ່ອງກັບຄວາມຕ້ອງການຂອງຄູ່ຄ້າສາກົນ.

ການວາງແຜນ ການສົ່ງອອກໄຟຟ້າ ຈະຕ້ອງຄຳນຶ່ງເຖິງ ຄວາມຕ້ອງການຊົມໃຊ້ພາຍໃນເປັນບູລິມະສິດຫຼັກ. ບໍລິຫານຈັດການຄວາມສົມດຸນລະຫວ່າງພະລັງງານເຫຼືອໃນລະດູຝົນ ແລະ ສ່ວນຂາດໃນລະດູແລ້ງ ໂດຍການວາງແຜນການສົ່ງອອກຄວບຄູ່ໄປກັບການຊົມໃຊ້ຂອງພາກອຸດສາຫະກຳພາຍໃນ ເພື່ອໃຫ້ແນ່ໃຈວ່າຄວາມຕ້ອງການພາຍໃນປະເທດຈະໄດ້ຮັບການປົກປ້ອງຢ່າງເຕັມສ່ວນ. ການຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນ ແລະ ສະຖາບັນ: ສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງ (MOIC, EDL, EDL-T) ໃນການວິເຄາະໂຄງການຂ້າມແດນ, ການຕິດຕາມຂໍ້ມູນການສົ່ງອອກ ແລະ ເສີມຂີດຄວາມສາມາດໃນການເຈລະຈາການຄ້າຂາຍໄຟຟ້າໃນໄລຍະຍາວ.

ຜ່ານບັນດາແຜນບຸລິມະສິດເຫຼົ່ານີ້, ສປປ ລາວ ຈະເສີມສ້າງບົດບາດຂອງຕົນໃນການເປັນຜູ້ສະໜອງພະລັງງານສະອາດໃນພາກພື້ນທີ່ໄດ້ຮັບຄວາມໄວ້ວາງໃຈ ແລະ ເຊື່ອຖືໄດ້, ສາມາດຍາດແຍ່ງເອົາຜົນປະໂຫຍດທາງດ້ານເສດຖະກິດຈາກການຄ້າຂາຍໄຟຟ້າຂ້າມແດນ ແລະ ສະໜັບສະໜູນການພັດທະນາປະເທດຊາດໃນວົງກວ້າງ ໂດຍການນຳໃຊ້ທ່າແຮງບຶ່ມຊ້ອນດ້ານພະລັງງານທົດແທນ ຢ່າງມີຍຸດທະສາດ ແລະ ຍືນຍົງ.

ແຜນບຸລິມະສິດເພື່ອປັບປຸງຄວາມໜ້າສົນໃຈໃນການລົງທຶນຂອງຕະຫຼາດພະລັງງານ

ເພື່ອບັນລຸວັດຖຸປະສົງຂອງແຜນພັດທະນາພະລັງງານປີ 2026-2030 ແລະ ເພື່ອລະດົມທຶນທີ່ຈຳເປັນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດ ແລະ ລະບົບສາຍສົ່ງໄຟຟ້າ, ລັດຖະບານຈະຕ້ອງຈັດຕັ້ງປະຕິບັດບັນດາແຜນບຸລິມະສິດ ເພື່ອປັບປຸງຄວາມໜ້າສົນໃຈໃນການລົງທຶນ, ຄວາມຍືນຍົງດ້ານການເງິນ ແລະ ການຄຸ້ມຄອງບໍລິຫານຂະແໜງການ. ແຜນບຸລິມະສິດເຫຼົ່ານີ້ ແມ່ນການຕອບສະໜອງໂດຍກົງຕໍ່ສິ່ງທ້າທາຍທາງດ້ານໂຄງສ້າງທີ່ຂະແໜງການພວມຜະເຊີນຢູ່ ລວມທັງການເພິ່ງພາພະລັງງານໄຟຟ້າ ຈາກນ້ຳຢ່າງຫຼວງຫລາຍ ແລະ ຄວາມຜັນຜວນຂອງສະພາບອາກາດ, ຂໍ້ຈຳກັດດ້ານການເງິນຂອງ ຝຟລ ແລະ ສິ່ງທ້າທາຍດ້ານລາຍຮັບຂອງ ຝຟລ, ຄວາມບໍ່ສົມດຸນຂອງການສະໜອງພາຍໃນ ແລະ ຂໍ້ຈຳກັດຂອງລະບົບສາຍສົ່ງ, ຂະບວນການຄຸ້ມຄອງ ແລະ ລະບຽບການທີ່ແຍກສ່ວນ, ພ້ອມທັງຄວາມຈຳເປັນໃນການສ້າງຄວາມສົມດຸນລະຫວ່າງຄວາມສະຖຽນລະພາບໃນໄລຍະອັນໃກ້ ກັບ ເປົ້າໝາຍການປ່ຽນຜ່ານດ້ານພະລັງງານໃນໄລຍະຍາວ.

ແຜນບຸລິມະສິດເຫຼົ່ານີ້ ມີເປົ້າໝາຍເພື່ອແກ້ໄຂທີ່ຕົ້ນເຫດຂອງບັນຫາ ໂດຍການເສີມສ້າງ ສະຖານະການເງິນ ແລະ ການດຳເນີນງານຂອງ ຝຟລ, ປັບປຸງການຄືນທຶນ ແລະ ລະບຽບວິໄນດ້ານສັນຍາ, ຫັນການວາງແຜນ ແລະ ການກວດກາໃຫ້ທັນສະໄໝ, ແລະ ກຳນົດກົດລະບຽບທີ່ຊັດເຈນ ແລະ ຄາດການໄດ້ຫຼາຍຂຶ້ນ ສຳລັບການມີສ່ວນຮ່ວມຂອງພາກເອກະຊົນ. ໂດຍແບ່ງອອກເປັນ 2 ເສົາຫຼັກຂອງການປະຕິຮູບ ດັ່ງນີ້:

(i) ການຟື້ນຟູດ້ານການເງິນ ແລະ ການຫັນປ່ຽນອົງກອນຂອງ ຝຟລ.

(ii) ການຈັດຕັ້ງປະຕິບັດມາດຕະການດ້ານນະໂຍບາຍ ແລະ ລະບຽບການທີ່ມີເປົ້າໝາຍຊັດເຈນ ເພື່ອເສີມສ້າງການຄຸ້ມຄອງ, ປັບປຸງການປະສານງານ ແລະ ເພີ່ມຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ.

ເວົ້າລວມແລ້ວ, ແຜນບຸລິມະສິດເຫຼົ່ານີ້ຈະຊ່ວຍເສີມສ້າງອຳນາດການຄວບຄຸມລະບົບພະລັງງານໄຟຟ້າຂອງຊາດ ໃນຂະນະທີ່ປັບປຸງຄວາມໂປ່ງໃສ, ຄວາມຮັບຜິດຊອບ ແລະ ຄວາມພ້ອມໃນການຮັບການລົງທຶນ ເພື່ອຮັບປະກັນໃຫ້

ໂຄງການໃໝ່ໆ ແລະ ກະແສທຶນທີ່ເຂົ້າມາ ສາມາດສະໜັບສະໜູນເປົ້າໝາຍຂອງລາວ ດ້ານຄວາມໝັ້ນຄົງທາງພະລັງງານໄຟຟ້າ, ລາຄາທີ່ເໝາະສົມ, ການເຕີບໂຕຂອງອຸດສາຫະກຳ ແລະ ຄວາມຍືດຢຸ່ນໃນໄລຍະຍາວ.

1. ການປັບປຸງໂຄງສ້າງລາຄາຄ່າໄຟຟ້າ ເພື່ອໃຫ້ສະທ້ອນຕົ້ນທຶນທີ່ແທ້ຈິງ ໂດຍນຳໃຊ້ຮູບແບບລາຄາຕາມຊ່ວງເວລາ, ລະດູການ, ອັດຕາແລກປ່ຽນ ແລະ ດັດຊະນີລາຄາເຊື້ອໄຟ:

ລາຄາໄຟຟ້າໃນ ສປປ ລາວ ໄດ້ຫຼຸດລົງຢ່າງຫຼວງຫຼາຍໃນມູນຄ່າຕົວຈິງໃນທົດສະວັດທີ່ຜ່ານມາ ເນື່ອງຈາກການອ່ອນຄ່າຂອງເງິນກີບ ແລະ ການປັບລາຄາໄຟຟ້າທີ່ມີຈຳກັດ, ເຮັດໃຫ້ລາຄາໄຟຟ້າຕ່ຳກວ່າຕົ້ນທຶນການສະໜອງສຳລັບລູກຄ້າຫຼາຍກຸ່ມ. ສິ່ງນີ້ໄດ້ເຮັດໃຫ້ ຖານລາຍຮັບ ຂອງ ຟຟລ ຫຼຸດລົງ ເຮັດໃຫ້ຊ່ອງວ່າງດ້ານສະພາບຄ່ອງ ກວ້າງອອກ ແລະ ເພີ່ມຄວາມກົດດັນດ້ານງົບປະມານໃຫ້ແກ່ລັດຖະບານ. ໂຄງສ້າງລາຄາໄຟແບບຂັ້ນໄດໃນປັດຈຸບັນ ຍັງບໍ່ທັນສະທ້ອນເຖິງຄວາມແຕກຕ່າງຂອງການຊົມໃຊ້ໃນແຕ່ລະຊ່ວງເວລາຂອງວັນ, ການສະໜອງພະລັງງານໄຟຟ້າຈາກເຂື່ອນໄຟຟ້າຕາມລະດູການ ຫຼື ປັດໄຈຕົ້ນທຶນພາຍນອກ ເຊັ່ນ: ລາຄາເຊື້ອໄຟ, ອັດຕາແລກປ່ຽນ ແລະ ສະພາບອຸທົກກະສາດ. ນອກຈາກນີ້, ຍັງບໍ່ສາມາດຈຳແນກລະຫວ່າງຄົວເຮືອນທີ່ທຸກຍາກ ກັບ ຜູ້ຊົມໃຊ້ລາຍໃຫຍ່ໄດ້ຢ່າງຊັດເຈນ, ເຮັດໃຫ້ການສະໜັບສະໜູນລາຄາໄຟຟ້າບໍ່ມີປະສິດທິຜົນ.

ການປະຕິຮູບລາຄາໄຟຟ້າໄດ້ເລີ່ມດຳເນີນການແລ້ວ ແລະ ລັດຖະບານກໍໄດ້ເລີ່ມຈັດຕັ້ງປະຕິບັດການປັບປຸງລາຄາ ໂດຍມີຈຸດປະສົງເພື່ອເພີ່ມທະວີການຄືນທຶນ ແລະ ຫຼຸດຜ່ອນພາລະທາງດ້ານການເງິນຂອງ ຟຟລ. ແຜນບຸລິມະສິດນີ້ ຈະເປັນການສືບຕໍ່ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການປະຕິຮູບທີ່ພວມຈັດຕັ້ງປະຕິບັດຢູ່, ເພື່ອຮັບປະກັນໃຫ້ການປັບປຸງລາຄາໄຟຟ້າເປັນໄປຢ່າງມີລະບົບ, ມີຄວາມໂປ່ງໃສ ແລະ ສອດຄ່ອງກັບຄວາມຕ້ອງການທີ່ປ່ຽນແປງໄປຂອງລະບົບໄຟຟ້າ.ໃນໄລຍະຕໍ່ໄປຂອງການປະຕິຮູບ ຈະມີການນຳໃຊ້ໂຄງສ້າງລາຄາຄ່າໄຟຟ້າທີ່ສະທ້ອນຕົ້ນທຶນ, ມີຄວາມໂປ່ງໃສ ແລະ ສາມາດຄາດການໄດ້ຫຼາຍຂຶ້ນ ໂດຍລວມເອົາ: ການຈຳແນກລາຄາຕາມຊ່ວງເວລາຊົມໃຊ້ສູງ ແລະ ຕ່ຳ, ລາຄາຕາມລະດູການ ແລະ ການປັບລາຄາຕາມສູດຄິດໄລ່ ທີ່ຜູກຕິດກັບປັດໄຈຕົ້ນທຶນຫຼັກ ເຊັ່ນ: ລາຄາເຊື້ອໄຟ, ການຜັນຜວນຂອງອັດຕາແລກປ່ຽນ ແລະ ສະພາບອຸທົກກະສາດ (ປະລິມານນ້ຳ). ກົນໄກເຫຼົ່ານີ້ ຈະຮັບປະກັນໃຫ້ລາຄາໄຟຟ້າປ່ຽນແປງໄປຕາມຕົ້ນທຶນຕົວຈິງຂອງລະບົບ, ເຊິ່ງຈະຊ່ວຍປັບປຸງຄວາມຍືນຍົງທາງດ້ານການເງິນ ພ້ອມທັງຫຼຸດຜ່ອນຄວາມສ່ຽງຈາກປັດໄຈພາຍນອກທີ່ບໍ່ສາມາດຄາດຄະເນໄດ້.

ລັດຖະບານຈະນຳໃຊ້ຫຼັກການອອກແບບທີ່ ຍຸຕິທຳ, ກົງເປົ້າໝາຍ ແລະ ປັບຕົວໄດ້ ເພື່ອຮັບປະກັນໃຫ້ການປະຕິຮູບລາຄາໄຟຟ້າສາມາດສ້າງຄວາມສົມດຸນລະຫວ່າງວັດຖຸປະສົງດ້ານການເງິນ ແລະ ດ້ານສັງຄົມ. ການຊ່ວຍເຫຼືອຄົວເຮືອນທີ່ມີລາຍໄດ້ຕ່ຳ ແລະ ກຸ່ມບຸລິມະສິດ ຈະຖືກເຮັດໃຫ້ເຂັ້ມແຂງຂຶ້ນ ຜ່ານການກຳນົດເປົ້າໝາຍສະຫວັດດີການ ແລະ ການແບ່ງກຸ່ມການຊົມໃຊ້ທີ່ຊັດເຈນ, ໃນຂະນະທີ່ຜູ້ຊົມໃຊ້ລາຍໃຫຍ່ ແລະ ພາກທຸລະກິດ ຈະຕ້ອງມີສ່ວນຮ່ວມໃນການຈ່າຍຕາມຕົ້ນທຶນ ການບໍລິການທີ່ແທ້ຈິງ.ເພື່ອເສີມສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ແລະ ຜູ້ໃຫ້ກູ້ຢືມ, ການປັບລາຄາໄຟຟ້າ ຕາມສູດຄິດໄລ່ການປັບລາຄາທີ່ຖືກກຳນົດຢ່າງຊັດເຈນ ແລະ ເປີດເຜີຍຕໍ່ສາທາລະນະ, ຄວບຄູ່ໄປກັບກຳນົດການທົບທວນປະຈຳປີທີ່ສະໝ່ຳສະເໝີ ເພື່ອເພີ່ມຄວາມໂປ່ງໃສ ແລະ ຄວາມສາມາດໃນການຄາດການໄດ້.

ໃນໄລຍະຍາວ, ມາດຕະການເຫຼົ່ານີ້ຈະເສີມສ້າງຄວາມເຂັ້ມແຂງທາງດ້ານການເງິນໃຫ້ແກ່ ຟຟລ, ສ້າງຄວາມສະຖຽນລະພາບດ້ານລາຍຮັບ, ແລະ ຫຼຸດຜ່ອນການເພິ່ງພາການນຳເຂົ້າໄຟຟ້າລາຄາແພງໃນຊ່ວງທີ່ມີການຊົມໃຊ້ສູງສຸດໃນລະດູແລ້ງ. ລະບົບລາຄາໄຟຟ້າທີ່ໂປ່ງໃສ ແລະ ປັບຕົວໄດ້ ຈະສ້າງສະພາບແວດລ້ອມການລົງທຶນທີ່ໜ້າເຊື່ອເທື່ອ ຫຼາຍ

ຂຶ້ນ, ສະໜັບສະໜຸນການວາງແຜນລະບົບໄຟຟ້າໃນໄລຍະຍາວ ແລະ ສ້າງພື້ນຖານລາຍຮັບທີ່ໝັ້ນຄົງ, ເຊິ່ງມີຄວາມຈຳເປັນສຳລັບການຍົກລະດັບການຜະລິດໄຟຟ້າ ແລະ ລະບົບສາຍສົ່ງໄຟຟ້າ.ດ້ວຍການຫັນໂຄງສ້າງລາຄາໄຟຟ້າໃຫ້ທັນສະໄໝ ຄວບຄູ່ໄປກັບການປົກປ້ອງກຸ່ມຄົນທີ່ເປາະບາງໃນສັງຄົມ, ລັດຖະບານຈະສາມາດຮັບປະກັນແນວທາງພັດທະນາພະລັງງານໄຟຟ້າ ທີ່ມີຄວາມຍຸຕິທຳທາງສັງຄົມ ແລະ ມີຄວາມຍືນຍົງທາງດ້ານການເງິນ.

2. ສ້າງສັນຍາຊື້-ຂາຍໄຟຟ້າແບບມາດຕະຖານ ແລະ ຂັ້ນຕອນການອະນຸມັດ:

ໃນປັດຈຸບັນ, ການເຈລະຈາສັນຍາຊື້-ຂາຍໄຟຟ້າ ຢູ່ ສປປ ລາວ ແມ່ນຍັງປະຕິບັດເປັນແຕ່ລະໂຄງການ ເຮັດໃຫ້ເງື່ອນໄຂສັນຍາ ການແບ່ງປັນຄວາມສ່ຽງ ແລະ ໂຄງສ້າງລາຄາມີຄວາມແຕກຕ່າງກັນ. ບັນຫາດັ່ງກ່າວ ສ້າງຄວາມຫຍຸ້ງຍາກໃນການຄາດຄະເນພາລະຜູກພັນດ້ານງົບປະມານໄລຍະຍາວ ແລະ ການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບບຸລິມະສິດດ້ານພະລັງງານໄຟຟ້າ ແລະ ການເງິນແຫ່ງຊາດ. ນອກຈາກນີ້, ການປະສານງານລະຫວ່າງຂະແໜງການໃນການເຈລະຈາທີ່ບໍ່ທັນເປັນເອກະພາບກັນ ຍັງສົ່ງຜົນໃຫ້ການປະເມີນດ້ານເຕັກນິກ, ການຄ້າ ແລະ ງົບປະມານມີຄວາມແຕກຕ່າງກັນໃນແຕ່ລະໂຄງການ.

ສັນຍາຊື້ຂາຍໄຟຟ້າ ບາງສະບັບ, ໂດຍສະເພາະໂຄງການພະລັງງານນ້ຳ, ລວມມີຂໍ້ກຳນົດການຈ່າຍຄ່າພະລັງງານໄຟຟ້ຕາມສັນຍາ Take Or Pay (ທີ່ບັງຄັບໃຫ້ ຝຝລ ຕ້ອງຈ່າຍເງິນ ເຖິງວ່າຈະຢູ່ໃນຊ່ວງທີ່ບໍ່ສາມາດຜະລິດ ຫຼື ສັ່ງຈ່າຍໄຟໄດ້ກໍຕາມ, ເຊິ່ງເປັນການໂອນຄວາມສ່ຽງດ້ານອຸທົກກະສາດ ແລະ ການສັ່ງຈ່າຍໄຟໃຫ້ເປັນພາລະຂອງ ຝຝລ) . ນອກຈາກນັ້ນ, ຄວາມແຕກຕ່າງດ້ານສະກຸນເງິນທີ່ໃຊ້, ການຄ້ຳປະກັນການຊຳລະເງິນ ແລະ ສູດການປັບລາຄາ ຍັງໄດ້ສ້າງຄວາມກົດດັນດ້ານສະພາບຄ່ອງ ແລະ ເພີ່ມຄວາມບອບບາງຕໍ່ການຜັນຜວນຂອງອັດຕາແລກປ່ຽນ. ການຈັດເກັບຂໍ້ມູນສັນຍາຊື້-ຂາຍໄຟຟ້າ ທີ່ຍັງກະຈັດກະຈາຍຢູ່ຫຼາຍພາກສ່ວນ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຕິດຕາມພາບລວມຂອງພັນທະສັນຍາ ແລະ ການປະເມີນຄວາມສ່ຽງລວມທາງດ້ານງົບປະມານ.

ເພື່ອແກ້ໄຂບັນຫາເຫຼົ່ານີ້, ລັດຖະບານຈະກຳນົດ "ຮ່າງສັນຍາຊື້ຂາຍແບບມາດຕະຖານ" ແລະ "ຂັ້ນຕອນການອະນຸມັດແບບລວມສູນ". ຮ່າງມາດຕະຖານນີ້ ຈະມີຂໍ້ກຳນົດທີ່ຊັດເຈນ ແລະ ເປັນເອກະພາບ ເຊັ່ນ: ກຳນົດເວລາຂອງໂຄງການ, ການຄ້ຳປະກັນປະສິດທິພາບ, ໂຄງສ້າງລາຄາ ແລະ ການປັບລາຄາ, ເງື່ອນໄຂ Take-or-pay, ກົດລະບຽບການຢຸດຜະລິດ, ມາດຕະການຄວາມປອດໄພໃນການຊຳລະເງິນ, ການແກ້ໄຂຂໍ້ຂັດແຍ່ງ ແລະ ການປ່ຽນແປງດ້ານກົດໝາຍ. ຮູບແບບນີ້ຈະອີງຕາມມາດຕະຖານລະດັບພາກພື້ນ ເຊັ່ນ: ສັນຍາສັນຍາຊື້ຂາຍ ພະລັງງານທົດແທນຂອງຫວຽດນາມ ແລະ ຮ່າງ SPP/VSPP ຂອງໄທ ເພື່ອຫຼຸດເວລາໃນການເຈລະຈາ ແລະ ເພີ່ມຄວາມເຊື່ອໝັ້ນໃຫ້ນັກລົງທຶນ.

ຂັ້ນຕອນການອະນຸມັດຈະຜ່ານກົນໄກການກວດສອບຮ່ວມກັນລະຫວ່າງ **MOIC, EDL ແລະ MOF** ເພື່ອຮັບປະກັນຄວາມເປັນໄປໄດ້ດ້ານເຕັກນິກ, ຄວາມສອດຄ່ອງກັບນະໂຍບາຍ ແລະ ຜົນກະທົບດ້ານງົບປະມານ. ຜູ້ພັດທະນາຈະຍື່ນຮ່າງ PPA ຜ່ານຈຸດປະສານງານດຽວ. ເມື່ອໄດ້ຮັບການເຫັນດີແລ້ວ, ສັນຍາ PPA ຈະຖືກບັນທຶກໄວ້ໃນ **"ລະບົບການຂຶ້ນທະບຽນດີຈີຕອນລວມສູນ"** ເພື່ອຊ່ວຍໃຫ້ສາມາດຕິດຕາມກວດກາພັນທະສັນຍາລວມ, ຄວາມສ່ຽງດ້ານອັດຕາແລກປ່ຽນ, ຄວາມສ່ຽງດ້ານອຸທົກກະສາດ ຫຼື ຄວາມສ່ຽງຕາມລະດູການ ໄດ້ຢ່າງໂປ່ງໃສ.

ສັນຍາ PPA ແບບມາດຕະຖານ ຈະມີຜົນປະໂຫຍດຫຼາຍປະການ: ມາດຕະການເຫຼົ່ານີ້ ຈະຊ່ວຍເພີ່ມຄວາມໂປ່ງໃສ, ເຮັດໃຫ້ພັນທະຕາມສັນຍາມີຄວາມຊັດເຈນ ສາມາດຄາດຄະເນໄດ້ ແລະ ຊ່ວຍໃຫ້ການວາງແຜນງົບປະມານ

ຂອງລັດວິສາຫະກິດໄຟຟ້າລາວ ກໍລັດຖະບານມີຄວາມຊັດເຈນຂຶ້ນ. ນອກຈາກນີ້, ຂໍ້ກຳນົດໃນສັນຍາທີ່ເປັນເອກະພາບ ແລະ ມີການກຳນົດໄວ້ຢ່າງລະອຽດ ຍັງຈະຊ່ວຍເພີ່ມຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ, ຫຼຸດຜ່ອນໄລຍະເວລາໃນການເຈລະຈາ ແລະ ຫຼຸດຕົ້ນທຶນໃນການພັດທະນາໂຄງການລົງ.ໃນໄລຍະຍາວ, ແຜນບຸລິມະສິດນີ້ຈະປະກອບສ່ວນເຂົ້າໃນການສ້າງຕະຫຼາດພະລັງງານໄຟຟ້າທີ່ມີຄວາມໂປ່ງໃສ, ຄາດການໄດ້ ແລະ ມີຄວາມພ້ອມໃນການຮັບການລົງທຶນ ໂດຍທີ່ຍັງຄົງຮັກສາຜົນປະໂຫຍດຂອງຊາດໄວ້ໄດ້ຢ່າງໝັ້ນຄົງ.

3. ຊຸກຍູ້ການປະຕິຮູບ ຟຟລ ຜ່ານການປັບໂຄງສ້າງອົງກອນ, ການເງິນ ແລະ ການສ້າງຂີດຄວາມສາມາດ:

ລັດວິສາຫະກິດໄຟຟ້າລາວ ມີບົດບາດສຳຄັນໃນການຮັບປະກັນຄວາມໝັ້ນຄົງດ້ານພະລັງງານໄຟຟ້າຂອງຊາດ ແລະ ສະໜັບສະໜູນຄວາມຕ້ອງການ ການຊົມໃຊ້ໄຟຟ້າ ຂອງຄົວເຮືອນ ແລະ ພາກອຸດສາຫະກຳ. ໃນຊຸມປີມໍ່ໆມານີ້, ຟຟລ ໄດ້ດຳເນີນການປະຕິຮູບດ້ານການເງິນ ແລະ ການດຳເນີນງານຫຼາຍດ້ານ ເຊິ່ງໄດ້ຮັບຜົນສຳເລັດທີ່ຊັດເຈນ ເຊັ່ນ: ການຫຼຸດລາຍຈ່າຍ ຊື້ໄຟຟ້າ ຜ່ານການປັບລາຄາຊື້-ຂາຍໄຟ, ການຫຼຸດຕົ້ນທຶນການຈັດຊື້ ຜ່ານການເຈລະຈາສັນຍາຄືນໃໝ່ ແລະ ການປັບປຸງການເກັບຄືນພະລັງງານໄຟຟ້າທີ່ສູນເສຍ. ຜົນສຳເລັດເຫຼົ່ານີ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ ຟຟລ ໃນການເສີມສ້າງສະມັດຖະພາບ ແລະ ສະຖານະທາງການເງິນຂອງຕົນ.

ເຖິງຢ່າງໃດກໍຕາມ, ຄວາມສາມາດຂອງ ຟຟລ ໃນການຈັດຕັ້ງປະຕິບັດການປະຕິຮູບໃຫ້ໄດ້ຕາມລະດັບທີ່ຕ້ອງການນັ້ນ ຍັງມີຂໍ້ຈຳກັດຈາກການປະສານງານທີ່ຍັງແຍກສ່ວນ, ຂີດຄວາມສາມາດພາຍໃນທີ່ມີຈຳກັດ ແລະ ການຕິດຕາມວຽກງານທີ່ບໍ່ຕໍ່ເນື່ອງໃນແຕ່ລະພະແນກ. ວຽກງານການປະຕິຮູບມັກຈະດຳເນີນງານແບບເອກະລາດຕໍ່ກັນ, ແລະ ຍັງຂາດກົນໄກສູນກາງໃນການຕິດຕາມຄວາມຄືບໜ້າ, ການບໍລິຫານຄວາມສ່ຽງ ຫຼື ການຮັບປະກັນຄວາມສອດຄ່ອງລະຫວ່າງວຽກງານເຕັກນິກ, ການເງິນ, ການຄ້າ ແລະ ການດຳເນີນງານ. ຂໍ້ຈຳກັດເຫຼົ່ານີ້ເຮັດໃຫ້ການຈັດຕັ້ງປະຕິບັດມີຄວາມຊັກຊ້າ, ຫຼຸດຜ່ອນຄວາມຮັບຜິດຊອບ ແລະ ເຮັດໃຫ້ການສ້າງແຮງຂັບເຄື່ອນທີ່ຍືນຍົງເຮັດໄດ້ຍາກ.

ເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້, ລັດຖະບານສະໜັບສະໜູນການສ້າງຕັ້ງ **ຫ້ອງການບໍລິຫານການປະຕິຮູບ (Transformation Management Office ຫຼື TMO)** ຂຶ້ນພາຍໃນ ຟຟລ EDL ເພື່ອເປັນກົນໄກກາງໃນການປະສານງານ ແລະ ຊຸກຍູ້ການປະຕິຮູບ. ຫ້ອງການ TMO ຈະເຮັດໜ້າທີ່ລວມສູນການຕິດຕາມກວດກາບັນດາແຜນວຽກທີ່ສຳຄັນ, ຕິດຕາມຄວາມຄືບໜ້າຜ່ານລະບົບລາຍງານລວມ, ກວດພົບຂໍ້ຄົງຄ້າງໄດ້ຢ່າງທັນການ ແລະ ປະສານງານລະຫວ່າງຂະແໜງການຕ່າງໆ ເພື່ອຮັບປະກັນໃຫ້ການປະຕິຮູບສອດຄ່ອງກັບຈຸດປະສົງທາງດ້ານຍຸດທະສາດທີ່ວາງໄວ້. ນອກຈາກນີ້, TMO ຈະໃຫ້ການສະໜັບສະໜູນດ້ານເຕັກນິກ ແລະ ການວິເຄາະແກ່ຜູ້ຮັບຜິດຊອບແຜນງານ, ຊ່ວຍວາງໂຄງສ້າງແຜນວຽກ, ເສີມສ້າງລະບຽບວິໄນໃນການລາຍງານ, ແລະ ປັບປຸງຂີດຄວາມສາມາດຂອງອົງກອນດ້ານການບໍລິຫານແຜນງານ, ການວິເຄາະການເງິນ ແລະ ການວາງແຜນການດຳເນີນງານ.

TMO ຈະຮັບຜິດຊອບ 4 ໜ້າທີ່ຫຼັກ: ຕິດຕາມຄວາມຄືບໜ້າຂອງການປະຕິຮູບ, ລາຍງານຕໍ່ຄະນະບໍລິຫານ ຟຟລ EDL ແລະ ຄະນະກຳມະການຊີ້ນຳ, ຊຸກຍູ້ ແລະ ຊ່ວຍເຫຼືອຜູ້ຮັບຜິດຊອບແຜນງານໃນການແກ້ໄຂຊ່ອງວ່າງ ແລະ ສະເໜີບັນຫາທີ່ຕ້ອງການການຕັດສິນໃຈຈາກຂັ້ນເທິງ. ບັນດາໜ້າວຽກເຫຼົ່ານີ້ ຈະໄດ້ຮັບການສະໜັບສະໜູນຈາກບັນດາທີມງານວິຊາສະເພາະ ເຊັ່ນ: ທີມງານຄຸ້ມຄອງແຜນງານ, ທີມງານຄຸ້ມຄອງການປ່ຽນແປງ, ທີມງານຝຶກອົບຮົມ ແລະ

ພັດທະນາ, ພ້ອມທັງໜ່ວຍງານບໍລິການສະໜັບສະໜູນສູນກາງ ດ້ານງົບປະມານ, ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ (IT) ແລະ ວຽກງານບໍລິຫານ.

ດ້ວຍການເສີມສ້າງການປະສານງານວຽກງານປະຕິຮູບໃຫ້ເຂັ້ມແຂງ, ການເພີ່ມຄວາມຊັດເຈນໃນການຕິດຕາມ ຄວາມຄືບໜ້າ ແລະ ຄວາມສ່ຽງ, ພ້ອມທັງການສ້າງຂີດຄວາມສາມາດຫຼັກໃຫ້ແກ່ອົງກອນ, ແຜນບຸລິມະສິດນີ້ຈະຊ່ວຍເລັ່ງລັດການຫັນປ່ຽນດ້ານການເງິນ ແລະ ການດຳເນີນງານຂອງ ຟຟລ EDL.ໃນໄລຍະຍາວ, TMO ຈະສະໜັບສະໜູນໃຫ້ ຟຟລ ກາຍເປັນຜູ້ຄຸ້ມຄອງລະບົບໄຟຟ້າ ທີ່ມີຄວາມຍືນຍົງທາງດ້ານການເງິນ, ມີປະສິດທິພາບໃນການດຳເນີນງານ ແລະ ມີຂີດຄວາມສາມາດທາງດ້ານເຕັກນິກທີ່ສູງຂຶ້ນ, ເຊິ່ງຈະຊ່ວຍປັບປຸງສະມັດຖະພາບຂອງຂະແໜງການ ແລະ ເພີ່ມທະວີຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ແລະ ຄູ່ຮ່ວມພັດທະນາຕ່າງໆ.

4. ສຶກສາ ລະບຽບການລະດັບຊາດ ທີ່ບັງຄັບໃຫ້ບັນດາແໜ່ງຜະລິດໄຟຟ້າທີ່ສົ່ງອອກທັງໝົດ ຕ້ອງເຊື່ອມຕໍ່ຜ່ານລະບົບສາຍສົ່ງໄຟຟ້າຂອງ ລັດວິສາຫະກິດໄຟຟ້າລາວ ເພື່ອບຸລິມະສິດໃນການສະໜອງໄຟຟ້າພາຍໃນປະເທດ:

ປັດຈຸບັນ, ການສົ່ງອອກໄຟຟ້າຂອງ ສປປ ລາວ ພັດທະນາພາຍໃຕ້ 2 ຮູບແບບທີ່ແຕກຕ່າງກັນ:**ຮູບແບບການສົ່ງອອກຕາມລາຍໂຄງການ** ຜູ້ຜະລິດໄຟຟ້າເອກະຊົນກໍ່ສ້າງສາຍສົ່ງສະເອງ ແລະ ສົ່ງໄຟຟ້າໂດຍກົງໃຫ້ກັບຜູ້ຊື້ໃນຕ່າງປະເທດ. ຮູບແບບນີ້ຊ່ວຍໃຫ້ການສົ່ງອອກເຕີບໂຕໃນທິດສະວັດທີ່ຜ່ານມາ, ແຕ່ມັນເຮັດໃຫ້ ຟຟລ ຂາດຂໍ້ມູນການສົ່ງໄຟຟ້າ, ຈຳກັດຄວາມສາມາດໃນການປະສານງານການສັ່ງຈ່າຍໄຟລະຫວ່າງພາຍໃນ ແລະ ສົ່ງອອກ, ພ້ອມທັງເຮັດໃຫ້ ຟຟລ ສູນເສຍລາຍຮັບຈາກຄ່າຜ່ານສາຍສົ່ງ.**ຮູບແບບການເຊື່ອມຕໍ່ຜ່ານສາຍສົ່ງແຫ່ງຊາດ** ການສົ່ງອອກແມ່ນຜ່ານລະບົບສາຍສົ່ງແຫ່ງຊາດ, ເຊິ່ງຊ່ວຍໃຫ້ ຟຟລ ສາມາດຕິດຕາມໄດ້, ຮັກສາສະຖຽນລະພາບ ແລະ ມີສ່ວນຮ່ວມໃນລະບົບຕ່ອງໂສ້ມູນຄ່າທາງການຄ້າ. ເຖິງວ່າຈະມີຜົນດີ, ແຕ່ຮູບແບບນີ້ຍັງຖືກນຳໃຊ້ໜ້ອຍ.

ຮູບແບບການດຳເນີນງານທີ່ຂະໜານກັນດັ່ງກ່າວ ໄດ້ສ້າງສິ່ງທ້າທາຍຫຼາຍດ້ານໃຫ້ແກ່ລະບົບໄຟຟ້າ, ດ້ານການຄ້າ ແລະ ການບໍລິຫານຈັດການ. ສັນຍາສຳປະທານແບບລາຍໂຄງການ ໄດ້ຈຳກັດສິດໃນການຄຸ້ມຄອງການຜະລິດຂອງລັດວິສາຫະກິດໄຟຟ້າລາວ, ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດສັນແຜນການຜະລິດ ຫຼື ການຫຼຸດຜ່ອນການສົ່ງອອກໃນໄລຍະລະດູແລ້ງ ເຊິ່ງເປັນໄລຍະທີ່ຕ້ອງໃຫ້ບຸລິມະສິດແກ່ການສະໜອງໄຟຟ້າພາຍໃນປະເທດໃຫ້ພຽງພໍ. ສັນຍາຊື້-ຂາຍໄຟຟ້າແບບສອງຝ່າຍ ທີ່ເຈລະຈາໂດຍກົງລະຫວ່າງຜູ້ພັດທະນາໂຄງການ ແລະ ຕ່າງປະເທດ ຍັງເຮັດໃຫ້ ຟຟລ ຢູ່ນອກຂອບການຮ່ວມມືດ້ານການຄ້າ, ສິ່ງຜົນໃຫ້ຂາດໂອກາດໃນການສ້າງລາຍຮັບ ແລະ ຂາດຂໍ້ມູນທີ່ຊັດເຈນກ່ຽວກັບພັນທະການສົ່ງອອກໃນໄລຍະຍາວ. ນອກຈາກນີ້, ຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ອະນຸມັດການສົ່ງອອກ ຍັງກະຈັດກະຈາຍຢູ່ຫຼາຍຂະແໜງການ, ເຮັດໃຫ້ຂັ້ນຕອນການປະຕິບັດບໍ່ເປັນເອກະພາບ ແລະ ຫຍຸ້ງຍາກໃນການນຳໃຊ້ບົດມາດຕະຖານລວມ ສຳລັບການເຊື່ອມຕໍ່ສາຍສົ່ງໄຟຟ້າ, ປະລິມານການສົ່ງອອກ ຫຼື ໂຄງສ້າງສັນຍາ. ພ້ອມດຽວກັນນັ້ນ, ການແບ່ງຄວາມຮັບຜິດຊອບ ລະຫວ່າງ EDL-Gen, EDL-T ແລະ EDL ຍັງສ້າງຄວາມສັບສົນໃຫ້ແກ່ການວາງແຜນ ແລະ ການສັ່ງຈ່າຍໄຟແບບລວມສູນ, ເຊິ່ງສິ່ງຜົນໃຫ້ປະສິດທິພາບໃນການບໍລິຫານຈັດການລະບົບໄຟຟ້າໃນທົ່ວປະເທດຫຼຸດລົງ.

ເພື່ອແກ້ໄຂບັນຫາເຫຼົ່ານີ້ ແລະ ວາງທິດທາງໃຫ້ ສປປ ລາວ ສາມາດຂະຫຍາຍການສົ່ງອອກໄຟຟ້າຢ່າງມີແບບແຜນ ແລະ ຍືນຍົງ, ລັດຖະບານຈະນຳໃຊ້ແນວທາງ Grid-First ເຊິ່ງກຳນົດໃຫ້ບັນດາໂຄງການຜະລິດໄຟຟ້າ ເພື່ອ

ສົ່ງອອກໃນອະນາຄົດທັງໝົດ ຕ້ອງເຊື່ອມຕໍ່ເຂົ້າກັບລະບົບຕາໜ່າງຂອງ EDL/EDL-T. ພາຍໃຕ້ແນວທາງນີ້, ການສົ່ງອອກໄຟຟ້າຈະຖືກກຳນົດຕາມແຜນການ, ຕິດຕາມກວດກາ ແລະ ສັ່ງຈ່າຍໂດຍຜ່ານລະບົບສາຍສົ່ງແຫ່ງຊາດ, ເຮັດໃຫ້ຟຟລ EDL ສາມາດບໍລິຫານຈັດການການສົ່ງອອກໃຫ້ຂະໜານໄປກັບຄວາມຕ້ອງການຊົມໃຊ້ພາຍໃນ, ປະລິມານນ້ຳໃນເຂື່ອນ ແລະ ຂີດຈຳກັດຂອງລະບົບໄຟຟ້າ.ສັນຍາຊື້-ຂາຍໄຟຟ້າເພື່ອສົ່ງອອກ ແລະ ການຊຳລະສະສາງ ຈະຕ້ອງໄດ້ຮັບການປະສານງານຜ່ານ EDL ເພື່ອຮັບປະກັນຂະບວນການທີ່ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້, ທັງເປັນການເສີມສ້າງຄວາມສອດຄ່ອງລະຫວ່າງການຕັດສິນໃຈສົ່ງອອກ ແລະ ບຸລິມະສິດດ້ານພະລັງງານໄຟຟ້າແຫ່ງຊາດ. ນອກຈາກນີ້, ການສົ່ງອອກໄຟຟ້າຜ່ານລະບົບສາຍສົ່ງໄຟຟ້າແຫ່ງຊາດ ຍັງຈະຊ່ວຍເພີ່ມປະສິດທິພາບໃນການນຳໃຊ້ຊັບສິນສາຍສົ່ງໄຟຟ້າຂອງຊາດ, ສ້າງຄວາມເຂັ້ມແຂງໃຫ້ແກ່ການເດີນເຄື່ອງຂອງລະບົບ ແລະ ລວມສູນກະແສລາຍຮັບດ້ານການຄ້າ ເພື່ອຜັນປະໂຫຍດລວມຂອງຂະແໜງການພະລັງງານ.

ເພື່ອສະໜັບສະໜູນການປ່ຽນແປງນີ້, ລັດຖະບານຈະພັດທະນາກອບລະບຽບການທີ່ໂປ່ງໃສ ແລະ ເປັນເອກະພາບສຳລັບການອອກໃບອະນຸຍາດສົ່ງອອກ, ກົດລະບຽບການເຊື່ອມຕໍ່ສາຍສົ່ງໄຟຟ້າ ແລະ ການຄິດໄລ່ຄ່າຜ່ານສາຍ ດັ່ງທີ່ໄດ້ກຳນົດໄວ້ໃນແນວທາງ **Grid-First**. ການທ້ອນໂຮມຂະບວນການເຫຼົ່ານີ້ເຂົ້າກັນ ຈະຊ່ວຍຫຼຸດຜ່ອນຄວາມຊັກຊ້າໃນການອະນຸມັດ, ຮັບປະກັນການນຳໃຊ້ມາດຕະຖານທີ່ສອດຄ່ອງກັນໃນທຸກໂຄງການ, ແລະ ສ້າງສະພາບແວດລ້ອມທີ່ຊັດເຈນ ແລະ ຄາດການໄດ້ຫຼາຍຂຶ້ນສຳລັບນັກລົງທຶນ. ການເສີມສ້າງການປະສານງານລະຫວ່າງ EDL-Gen, EDL-T ແລະ EDL ຈະຊ່ວຍໃຫ້ການດຳເນີນງານຂອງລະບົບເປັນເອກະພາບ, ເພີ່ມປະສິດທິພາບໃນການສົ່ງຈ່າຍໄຟ, ແລະ ສະໜັບສະໜູນການວາງແຜນທີ່ມີລະບົບຫຼາຍຂຶ້ນ ທັງສຳລັບການສະໜອງພາຍໃນ ແລະ ພັນທະການສົ່ງອອກໄຟຟ້າ. ດ້ວຍການນຳໃຊ້ແນວທາງ Grid-First, ສປປ ລາວ ຈະສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປະລິມານການສົ່ງອອກໄຟຟ້າ, ເພີ່ມທະວີຄວາມເຊື່ອໝັ້ນຂອງລະບົບ, ແລະ ເພີ່ມມູນຄ່າໃນໄລຍະຍາວທີ່ໄດ້ຈາກການຄ້າຂາຍໄຟຟ້າຂ້າມແດນ. ກອບລະບຽບການທີ່ເປັນເອກະພາບ ແລະ ໂປ່ງໃສສຳລັບການພັດທະນາການສົ່ງອອກໄຟຟ້າ ຈະຊ່ວຍເສີມສ້າງການກວດກາຂອງລັດ, ປັບປຸງການປະສານງານດ້ານການດຳເນີນງານ, ແລະ ສ້າງສະພາບແວດລ້ອມການຄຸ້ມຄອງທີ່ຄາດການໄດ້ ເຊິ່ງມີຄວາມຈຳເປັນໃນການດຶງດູດການລົງທຶນທີ່ມີຄຸນນະພາບສູງ ທັງໃນໂຄງການຜະລິດໄຟຟ້າເພື່ອສົ່ງອອກ ແລະ ເພື່ອຊົມໃຊ້ພາຍໃນປະເທດ.

ແນວຄວາມຄິດ Grid-First ນີ້ຍັງຈະຕ້ອງສຶກສາໃນລາຍລະອຽດຕື່ມ ເນື່ອງຈາກວ່າບັນຫາການເຊື່ອມຕໍ່ສາຍສົ່ງ ກັບບັນດາປະເທດຢູ່ໃນພູມມິພາກຍັງນຳໃຊ້ມາດຕະຖານທີ່ບໍ່ຄືກັນຫລາຍພໍສົມຄວນ ແລະ ການກຳນົດລາຄາໄຟຟ້າ ຊຶ່ງຍັງບໍ່ທັນໄດ້ສຶກສາລະອຽດ.

5. ສ້າງຂອບການຄຸ້ມຄອງຊັບສິນລະດັບຊາດ ເພື່ອຍົກສູງປະສິດທິພາບໃນການນຳໃຊ້ຊັບສິນ ພາຍຫຼັງສິ້ນສຸດສັນຍາສຳປະທານ (BOT) :

ສປປ ລາວ ຈະມີຊັບສິນປະເພດເຂື່ອນໄຟຟ້ານ້ຳຕົກ ຫຼັງສິ້ນສຸດສັນຍາສຳປະທານ **(BOT)** ເພີ່ມຂຶ້ນຢ່າງຕໍ່ເນື່ອງໃນທົດສະວັດໜ້າ, ໂດຍມີຫຼາຍໂຄງການຂະໜາດໃຫຍ່ທີ່ມີກຳນົດຈະໂອນກຳມະສິດຄືນໃຫ້ລັດຖະບານ ເລີ່ມແຕ່ປີ 2029. ຊັບສິນເຫຼົ່ານີ້ຖືເປັນໂອກາດອັນສຳຄັນຂອງປະເທດ ຊຶ່ງເປັນແຫຼ່ງຜະລິດໄຟຟ້າທີ່ເຊື່ອຖືໄດ້, ມີສະມັດຖະພາບການດຳເນີນງານທີ່ດີ ແລະ ມີທ່າແຮງໃນການສ້າງລາຍຮັບທີ່ຜ່ານການພິສູດມາແລ້ວ, ແລະ ຈະຊ່ວຍສ້າງຄວາມເຂັ້ມແຂງ

ໃຫ້ແກ່ຖານພະລັງງານແຫ່ງຊາດ ເມື່ອເຂົ້າມາສູ່ການຄຸ້ມຄອງຂອງລັດ. ເຖິງຢ່າງໃດກໍຕາມ, ຫາກຊັບສິນເຫຼົ່ານີ້ຖືກບໍລິຫານຈັດການແບບກະແຈກກະຈາຍ ຫຼື ເປັນລາຍໂຄງການ, ປະເທດຈະມີຄວາມສ່ຽງຕໍ່ການຈັດສັນທີ່ບໍ່ມີປະສິດທິພາບ, ການຕັດສິນໃຈທີ່ກະຈັດກະຈາຍ ແລະ ການສູນເສຍມູນຄ່າທາງດ້ານງົບປະມານ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງມີແນວທາງການຄຸ້ມຄອງແບບ "ລວມສູນເປັນກຸ່ມຊັບສິນ" ເພື່ອສ້າງຜົນປະໂຫຍດສູງສຸດໃນໄລຍະຍາວ ໃຫ້ແກ່ການສະໜອງພາຍໃນປະເທດ, ລາຍຮັບຈາກການສົ່ງອອກ ແລະ ຄວາມໝັ້ນຄົງທາງດ້ານພະລັງງານຂອງຊາດ.

ແນວທາງການຄຸ້ມຄອງແບບກຸ່ມຊັບສິນ ຈະຊ່ວຍໃຫ້ລັດຖະບານສາມາດຈັດສັນການຜະລິດ ລະຫວ່າງ ຕະຫຼາດພາຍໃນ ແລະ ຕະຫຼາດສົ່ງອອກໄດ້ຢ່າງຄ່ອງຕົວ ໂດຍອີງໃສ່ຄວາມຕ້ອງການຂອງລະບົບ ແລະ ການພິຈາລະນາດ້ານມູນຄ່າ, ແທນທີ່ຈະເປັນການຕັດສິນໃຈແບບກະແຈກກະຈາຍ. ແນວທາງນີ້ຈະປ່ຽນຊັບສິນຫຼັງ ການມອບໂອນ BOT ຈາກການເປັນພຽງຊັບສິນຄົງທີ່ ໃຫ້ກາຍເປັນ "ກຸ່ມການລົງທຶນຍຸດທະສາດ" ທີ່ສາມາດເສີມສ້າງທັງຄວາມເຊື່ອໝັ້ນຂອງລະບົບ ແລະ ຜົນໄດ້ຮັບດ້ານງົບປະມານ. ດ້ວຍການປະເມີນຊັບສິນແບບລວມໝູ່, ລັດຖະບານສາມາດກຳນົດຄວາມສົມດຸນທີ່ດີທີ່ສຸດລະຫວ່າງ: ການສະໜັບສະໜູນຄວາມພຽງພໍຂອງໄຟຟ້າພາຍໃນຊ່ວງລະດູແລ້ງ, ການປະກອບສ່ວນເຂົ້າໃນຜັນທະການສົ່ງອອກໃນຊ່ວງທີ່ມີພະລັງງານເກີນ, ແລະ ການໃຫ້ບຸລິມະສິດແກ່ຊັບສິນທີ່ມອບມູນຄ່າສູງສຸດໃຫ້ແກ່ລະບົບ ແລະ ລາຍຮັບໃນໄລຍະຍາວ.

ເພື່ອຈັດຕັ້ງປະຕິບັດແນວທາງນີ້, ລັດຖະບານຈະສ້າງຕັ້ງ **ກອບການຄຸ້ມຄອງຊັບສິນແຫ່ງຊາດ** ພ້ອມດ້ວຍປັດໃຈຊຸກຍູ້ດ້ານການຄຸ້ມຄອງ, ດ້ານການຄ້າ ແລະ ດ້ານເຕັກນິກ ທີ່ຈຳເປັນໃນການກວດກາຊັບສິນຫຼັງການມອບໂອນ BOT ຢ່າງມີລະບົບ. ກົນໄກການຄຸ້ມຄອງກຸ່ມຊັບສິນແບບລວມສູນ ຈະປະສານງານການຕັດສິນໃຈກ່ຽວກັບກຳມະສິດ, ບຸລິມະສິດໃນການສັ່ງຈ່າຍໄຟ ແລະ ຍຸດທະສາດດ້ານສັນຍາ ສຳລັບທຸກຊັບສິນຫຼັງ ການມອບໂອນ BOT ເພື່ອຮັບປະກັນຄວາມສອດຄ່ອງກັບວັດຖຸປະສົງດ້ານພະລັງງານ ແລະ ດ້ານງົບປະມານຂອງຊາດ. ເພື່ອສະໜັບສະໜູນການຕັດສິນໃຈ, ກອບການຄຸ້ມຄອງນີ້ຈະເສີມສ້າງຂີດຄວາມສາມາດດ້ານການເງິນ ແລະ ການດຳເນີນງານແບບເວລາຈິງ, ເຊິ່ງຊ່ວຍໃຫ້ລັດຖະບານສາມາດປະເມີນຜົນຕອບແທນຂອງຊັບສິນໄດ້ຢ່າງຄ່ອງຕົວ ແລະ ສາມາດສັ່ງຈ່າຍໄຟຟ້າໄປສູ່ຈຸດທີ່ມອບມູນຄ່າທາງເສດຖະກິດ ແລະ ມູນຄ່າຕໍ່ລະບົບໄດ້ສູງສຸດ.ການລົງທຶນໃນສະຖານີໄຟຟ້າທີ່ທັນສະໄໝ ແລະ ຈຸດເຊື່ອມຕໍ່ຕາຂ່າຍທີ່ສະໜອງໄດ້ຕາມຄວາມຕ້ອງການ ເຊັ່ນ:ສະຖານີປ່ຽນກະແສໄຟຟ້າ (Back to Back) ແລະ ລະບົບຄວບຄຸມ, ຈະຊ່ວຍໃຫ້ພະລັງງານໄຟຟ້າສາມາດ ສະຫຼັບ ລະຫວ່າງສາຍສົ່ງພາຍໃນ ແລະ ສາຍສົ່ງສົ່ງອອກໄດ້ແບບຕາມເວລາຈິງ. ນອກຈາກນີ້, ກອບການຄຸ້ມຄອງດັ່ງກ່າວ ຈະກຳນົດລາຄາ ແລະ ກົດລະບຽບຕະຫຼາດທີ່ໂປ່ງໃສ, ໂດຍນຳໃຊ້ລາຄາໄຟພາຍໃນ ແລະ ຄ່າຜ່ານສາຍສົ່ງທີ່ຊັດເຈນ ເພື່ອເປັນບ່ອນອີງໃນການເພີ່ມປະສິດທິພາບການສັ່ງຈ່າຍໄຟຟ້າ ແລະ ສະທ້ອນໃຫ້ເຫັນເຖິງຕົ້ນທຶນການເສຍໂອກາດ.

ການຈັດຕັ້ງປະຕິບັດແນວທາງແບບກຸ່ມຊັບສິນ ຈະຕ້ອງອາໄສຄວາມເຂົ້າໃຈທີ່ໜັກແໜ້ນ ແລະ ເປັນເອກະພາບກ່ຽວກັບຄຸນລັກສະນະດ້ານການເງິນ, ເຕັກນິກ ແລະ ຍຸດທະສາດຂອງແຕ່ລະຊັບສິນຫຼັງ ການມອບໂອນ BOT. ແຕ່ລະຊັບສິນຈະຖືກປະເມີນເປັນລາຍໂຄງການ ໂດຍນຳໃຊ້: **ມາດຖານດ້ານການເງິນ:** ເຊັ່ນ ຕົ້ນທຶນການຜະລິດສະເລ່ຍ (LCOE), ຄາດການລາຄາໄຟຟ້າພາຍໃນ ແລະ ສົ່ງອອກ, ພ້ອມທັງຄວາມຕ້ອງການດ້ານການບຳລຸງຮັກສາ (O&M). **ມາດຖານດ້ານເຕັກນິກ:** ລວມມີ ອາຍຸຂອງໂຮງໄຟຟ້າ, ສະມັດຖະພາບການດຳເນີນງານ, ການເຊື່ອມຕໍ່ຕາຂ່າຍ, ແລະ ທ່າແຮງໃນການກັກເກັບພະລັງງານ ຫຼື ການເຮັດເປັນລະບົບປະສົມປະສານ (Hybrid).**ມາດຖານດ້ານຍຸດທະສາດ:** ເຊັ່ນ:

ການປະກອບສ່ວນເຂົ້າໃນຄວາມໝັ້ນຄົງຂອງໄຟຟ້າໃນລະດູແລ້ງ ຫຼື ຄວາມກ່ຽວຂ້ອງກັບເຂດ ເຂດເສດຖະກິດພິເສດ SEZ ແລະ ອຸດສາຫະກຳຫຼັກ. ມາດຖານເຫຼົ່ານີ້ຈະຖືກລວມເຂົ້າໃນ **ກອບການໃຫ້ຄະແນນ** ເພື່ອຊີ້ທິດການຕັດສິນໃຈວ່າ ຊັບສິນນັ້ນເໝາະສົມທີ່ສຸດທີ່ຈະໃຊ້ເປັນ: ໂຄງການແບບປະສົມ (ຂາຍພາຍໃນ ແລະ ສົ່ງອອກ), ສົ່ງອອກຢ່າງດຽວ, ຊົມໃຊ້ພາຍໃນຢ່າງດຽວ, ຫຼື ຄວນປ່ຽນຈຸດປະສົງການນຳໃຊ້ ຫຼື ຢຸດການດຳເນີນງານ. ນອກຈາກນີ້, ກອບດັ່ງກ່າວຍັງຈະ ກຳນົດ **4 ຮູບແບບການດຳເນີນງານ** ເຊິ່ງລວມມີ: ການບໍລິຫານໂດຍລັດ, ສັນຍາເຊົ່າ ຫຼື ສັນຍາບໍລິຫານ, ສັນຍາສຳ ປະທານແບບຮ່ວມທຶນ, ແລະ ໂຄງສ້າງການຖອນທຶນ, ເພື່ອໃຫ້ມີການຕັດສິນໃຈທີ່ຊັດເຈນ ແລະ ເປັນເອກະພາບ ກ່ຽວ ກັບກຳມະສິດ ແລະ ບົດບາດໃນການດຳເນີນງານ.

ດ້ວຍການນຳໃຊ້ແນວທາງການຄຸ້ມຄອງຊັບສິນຫຼັງ BOT ແບບບູລະນາການ ແລະ ເປັນກຸ່ມຊັບສິນ, ສປປ ລາວ ຈະສາມາດເສີມສ້າງຄວາມໝັ້ນຄົງດ້ານພະລັງງານ, ເພີ່ມທະວີການຍາດແຍ່ງເອົາມູນຄ່າດ້ານງົບປະມານ ແລະ ສະ ໜັບສະໜູນການວາງແຜນລະບົບທີ່ມີປະສິດທິພາບຫຼາຍຂຶ້ນ.ແຜນບຸລິມະສິດນີ້ ຈະຮັບປະກັນວ່າຊັບສິນທີ່ໂອນຄືນໃຫ້ລັດ ຈະຖືກເຊື່ອມໂຍງເຂົ້າໃນຍຸດທະສາດການສະໜອງພະລັງງານໄຟຟ້າແຫ່ງຊາດຢ່າງເປັນເອກະພາບ, ປະກອບສ່ວນເຂົ້າໃນ ຄວາມຍືນຍົງທາງດ້ານການເງິນໃນໄລຍະຍາວ ແລະ ສ້າງມູນຄ່າທີ່ຍິ່ງໃຫຍ່ກວ່າໃຫ້ແກ່ປະເທດຊາດ ຜ່ານການບໍລິຫານ ຈັດການທີ່ໂປ່ງໃສ, ສະໝ່ຳສະເໝີ ແລະ ມີວິໄສທັດກວ້າງໄກ.

6. ສຶກສາເພື່ອນຳສະເໜີການນຳ ໃຊ້ສັນຍາຊື້-ຂາຍໄຟຟ້າໂດຍກົງ ສຳລັບຜູ້ຊົມໃຊ້ໄຟຟ້າໃນຂະແໜງອຸດສາຫະກຳຂະໜ າດໃຫຍ່, ໂດຍອະນຸຍາດໃຫ້ພາກສ່ວນທີສາມສາມາດນຳໃຊ້ລະບົບຕາໜ່າງໄຟຟ້າ (Third-party access) ແລະ ກຳນົດຄ່າບໍລິການສົ່ງຜ່ານໄຟຟ້າ ທີ່ໂປ່ງໃສ:

ໂຄງສ້າງຕະຫຼາດໄຟຟ້າຂອງ ສປປ ລາວ ແບບ "ຜູ້ຊື້ດຽວ" (Single Buyer) ໄດ້ກຳນົດໃຫ້ ຝຟລ EDL ເປັນ ສູນກາງຂອງການຊຳລະ ແລະ ການສະສາງທັງໝົດ. ເຖິງວ່າຮູບແບບນີ້ຈະສະໜັບສະໜູນການພັດທະນາລະບົບມາເປັນ ເວລາຫຼາຍປີ, ແຕ່ມັນກໍໄດ້ສ້າງຄວາມກົດດັນຢ່າງຫຼັກໜ່ວງຕໍ່ "ກະແສເງິນສົດ" (Financial-flow pressures), ເນື່ອງຈາກທັງລາຍຮັບ ແລະ ພັນທະການຊຳລະທັງໝົດຕ້ອງຜ່ານຊ່ອງທາງການຊຳລະດຽວ. ຂໍ້ຈຳກັດດ້ານສະພາບຄ່ອງທີ່ ເກີດຈາກການຊຳລະຄ່າໄຟຟ້າຂອງລູກຄ້າທີ່ຊັກຊ້າ, ຄວາມບໍ່ສົມດຸນຂອງສະກຸນເງິນ ລະຫວ່າງ ລາຍຮັບທີ່ເປັນ "ເງິນ ກີບ" ກັບ ພັນທະການຊຳລະທີ່ເປັນ "ເງິນໂດລາ" ແລະ ການຂາດການແຍກປະເພດກຸ່ມລູກຄ້າຕາມຄວາມເຊື່ອໝັ້ນທາງ ການເງິນ (Credit strength) ເຮັດໃຫ້ຄວາມເຂັ້ມແຂງດ້ານການເງິນຂອງ ຝຟລ EDL ອ່ອນຄ່າລົງ. ສິ່ງທ້າທາຍເຫຼົ່ານີ້ໄດ້ສ້າງຄວາມກັງວົນໃຫ້ແກ່ນັກລົງທຶນ ແລະ ຜູ້ໃຫ້ກູ້ຢືມ ກ່ຽວກັບຄວາມແນ່ນອນໃນການຊຳລະເງິນໄລຍະຍາວ ແລະ ສະຖຽນລະພາບຂອງຂະແໜງການ, ເຊິ່ງສົ່ງຜົນໃຫ້ການລົງທຶນຂອງພາກເອກະຊົນໃນການຜະລິດໄຟຟ້າໃໝ່ຊັກຊ້າລົງ.

ເພື່ອແກ້ໄຂສິ່ງທ້າທາຍດ້ານກະແສເງິນສົດເຫຼົ່ານີ້ ໃນຂະນະທີ່ຍັງຮັກສາການກວດກາລະບົບໄວ້ໄດ້, ລັດຖະບານ ຈະສຶກສາ ການນຳໃຊ້ **ກອບສັນຍາຊື້-ຂາຍໄຟຟ້າໂດຍກົງ (Corporate Power Purchase Agreement ຫຼື CPPA)** ເພື່ອອະນຸຍາດໃຫ້ຜູ້ຊົມໃຊ້ພາກອຸດສາຫະກຳລາຍໃຫຍ່ ສາມາດເຮັດສັນຍາຊື້ໄຟຟ້າໂດຍກົງກັບຜູ້ຜະລິດທີ່ໄດ້ ຮັບອະນຸຍາດ.ພາຍໃຕ້ຮູບແບບນີ້, ການສົ່ງກະແສໄຟຟ້າຕົວຈິງຈະຍັງຄົງຜ່ານຕາຂ່າຍສາຍສົ່ງຂອງ EDL/EDL-T ແລະ EDL ຈະຍັງຄົງຮັບຜິດຊອບໃນການບໍລິຫານຈັດການລະບົບ. EDL ຈະເກັບຄ່າທຳນຽມຜ່ານສາຍສົ່ງ (Wheeling fees) ແລະ ຄ່າທຳນຽມການນຳໃຊ້ລະບົບຕາມລະບຽບການ, ເຊິ່ງຈະຊ່ວຍສ້າງແຫຼ່ງລາຍຮັບທີ່ຫຼາກຫຼາຍ ແລະ ຄາດ ການໄດ້ຫຼາຍຂຶ້ນ ໃນຂະນະທີ່ຍັງຄົງເຫັນພາບລວມຂອງການສົ່ງໄຟຟ້າ ທັງໝົດ. ໂຄງສ້າງນີ້ຈະຊ່ວຍໃຫ້ຜູ້ຊົມໃຊ້ພາກ

ອຸດສາຫະກຳມີທາງເລືອກຫຼາຍຂຶ້ນ ແລະ ມີຄວາມແນ່ນອນດ້ານລາຄາ, ພ້ອມທັງຮັບປະກັນວ່າ ຕາຂ່າຍສາຍສົ່ງແຫ່ງຊາດ ຍັງຄົງເປັນແກນຫຼັກຂອງການບໍລິຫານຈັດການລະບົບໄຟຟ້າ.

ບົດຮຽນຈາກຕະຫຼາດໄຟຟ້າໃນບັນດາປະເທດໃກ້ຄຽງສະແດງໃຫ້ເຫັນວ່າ: ແຜນງານ CPPA ທີ່ຖືກອອກແບບມາຢ່າງດີ ສາມາດຊ່ວຍລະດົມການລົງທຶນໃໝ່ໃນຂະແໜງການຜະລິດ ໂດຍການສ້າງຊ່ອງທາງການຊື້-ຂາຍເພີ່ມເຕີມ, ເສີມສ້າງຄວາມໂປ່ງໃສ, ແລະ ຫຼຸດຜ່ອນການເພິ່ງພາການຊື້ໄຟຟ້າຈາກພາກລັດ (EDL) ພຽງບ່ອນດຽວ.

ການນຳໃຊ້ CPPA ໃນ ສປປ ລາວ ຈະຊ່ວຍຊຸກຍູ້ກະແສທຶນສ່ວນຕົວຈາກຕ່າງປະເທດ, ປັບປຸງຄວາມແນ່ນອນດ້ານລາຍຮັບໃນໄລຍະຍາວໃຫ້ແກ່ຜູ້ພັດທະນາໂຄງການ ແລະ ຂະຫຍາຍທາງເລືອກໃນການເຂົ້າເຖິງແຫຼ່ງທຶນ ສຳລັບໂຄງການພະລັງງານທົດແທນ ແລະ ໂຄງການທີ່ບໍ່ແມ່ນພະລັງງານນ້ຳ. ໃນຂະນະດຽວກັນ, ການກຳນົດໃຫ້ທຸກການສົ່ງຈ່າຍໄຟຟ້າພາຍໃຕ້ CPPA ຕ້ອງຜ່ານສາຍສົ່ງແຫ່ງຊາດ ຈະຊ່ວຍໃຫ້ ຝຟລ EDL ສາມາດຮັກສາການປະສານງານ ການສັ່ງຈ່າຍໄຟ ແລະ ຮັບປະກັນວ່າຜົນປະໂຫຍດດ້ານຄວາມໝັ້ນຄົງຂອງການສະໜອງໄຟຟ້າພາຍໃນປະເທດໄດ້ຮັບ ການປົກປ້ອງ.

ໃນການຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດນັ້ນ ຮຽກຮ້ອງໃຫ້ມີການວາງແຜນຢ່າງລະອຽດໃນຫຼາຍມິຕິ. ປັດໄຈທີ່ຕ້ອງພິຈາລະນາທີ່ສຳຄັນລວມມີ: ການກຳນົດວ່າຜູ້ຊື້ມໃຊ້ກຸ່ມໃດທີ່ມີສິດເຂົ້າຮ່ວມ, ການກຳນົດແຫຼ່ງຜະລິດທີ່ມີສິດ, ການເລືອກຮູບແບບສັນຍາທີ່ເໝາະສົມ (ແບບສົ່ງໄຟຕົວຈິງ ຫຼື ແບບການເງິນ), ການກຳນົດໄລຍະເວລາຂອງສັນຍາ ແລະ ການສ້າງໂຄງສ້າງລາຄາທີ່ສະທ້ອນຕົ້ນທຶນ ແລະ ວິທີການປັບລາຄາ (Indexation) ເພື່ອຫຼີກເວັ້ນການສ້າງຄວາມ ສ່ຽງດ້ານອັດຕາແລກປ່ຽນ (FX) ຄືນໃໝ່. ພ້ອມນີ້, ຍັງມີອົງປະກອບເພີ່ມເຕີມ ເຊັ່ນ: ລະດັບແຮງດັນໄຟຟ້າສຳລັບການ ເຂົ້າຮ່ວມ, ວິທີການຄິດໄລ່ຄ່າຜ່ານສາຍ (Wheeling charge), ຂັ້ນຕອນການເຂົ້າເຖິງ ລະບົບຕາຂ່າຍ, ຂໍ້ກຳນົດດ້ານ ການພະຍາກອນການຜະລິດ, ລະບຽບວິໄນໃນການສັ່ງຈ່າຍໄຟ, ກົນໄກການຊຳລະ ແລະ ການສະສາງ, ການກຳນົດ ສະກຸນເງິນ, ການຄ້ຳປະກັນການຊຳລະເງິນ, ແລະ ການກຳນົດບົດບາດຂອງແຕ່ລະພາກສ່ວນໃນການອອກໃບອະນຸຍາດ ແລະ ການຕິດຕາມກວດກາ. ທັງໝົດນີ້ຈະຕ້ອງຖືກກຳນົດໄວ້ໃນກອບລະບຽບການທີ່ໂປ່ງໃສ ແລະ ຄາດການໄດ້ ເພື່ອ ສ້າງຄວາມສົມດຸນລະຫວ່າງຄວາມເຊື່ອໝັ້ນຂອງນັກລົງທຶນ ແລະ ຄວາມໝັ້ນຄົງຂອງລະບົບ.

ເພື່ອຮັບປະກັນວ່າການພັດທະນາ CPPA ຈະຊ່ວຍເສີມສ້າງຄວາມເຂັ້ມແຂງ ແລະ ບໍ່ສ້າງຄວາມບໍ່ໝັ້ນຄົງໃຫ້ ແກ່ຕະຫຼາດ, ລັດຖະບານຈະນຳໃຊ້ **ມາດຕະການປ້ອງກັນນະໂຍບາຍ** ຫຼາຍດ້ານ ເຊິ່ງລວມມີ: ການກຳນົດຄ່າທຳນຽມຜ່ານ ສາຍ (Wheeling fees) ແລະ ຄ່າບໍລິການລະບົບທີ່ຖືກກຳກັບດູແລ ເພື່ອຮັບປະກັນໃຫ້ລາຍຮັບຂອງ ຝຟລ EDL ຍັງ ມີສະຖຽນລະພາບ, ການເກັບຄ່າທຳນຽມການດຳເນີນງານຕະຫຼາດ ເພື່ອເປັນທຶນໃຫ້ແກ່ວຽກງານກວດກາທີ່ຈຳເປັນ, ແລະ ການເກັບຄ່າທຳນຽມການເຊື່ອມຕໍ່ ຫຼື ຄ່າຜົນກະທົບ ເພື່ອນຳໃຊ້ເຂົ້າໃນການປັບປຸງໂຄງຂ່າຍໃນຈຸດທີ່ຈຳເປັນ. ນອກຈາກນີ້, ຈະມີການນຳໃຊ້ຄ່າບໍລິການປັບສົມດຸນ (Balancing) ແລະ ຄ່າບໍລິການເສີມ (Ancillary services) ເພື່ອຮັບປະກັນໃຫ້ຜູ້ຜະລິດ ແລະ ຜູ້ຊື້ມໃຊ້ລາຍໃຫຍ່ມີການຄາດຄະແນທີ່ຖືກຕ້ອງ ແລະ ມີລະບຽບວິໄນ, ໃນຂະນະທີ່ ມາດຕະການປັບໄໝສຳລັບການຜະລິດທີ່ຜິດພາດຫຼາຍເກີນກຳນົດ ຈະຊ່ວຍປົກປ້ອງສະຖຽນລະພາບຂອງລະບົບ. ລັດຖະບານຈະນຳໃຊ້ແນວທາງການຈັດຕັ້ງປະຕິບັດ CPPA ແບບຄ່ອຍເປັນຄ່ອຍໄປ ແລະ ແບ່ງເປັນໄລຍະ ເພື່ອໃຫ້ມີ ເວລາໃນການຮຽນຮູ້ດ້ານການດຳເນີນງານ ແລະ ເພື່ອຫຼີກເວັ້ນການປ່ຽນແປງໂຄງສ້າງຕະຫຼາດທີ່ກະທັນຫັນເກີນໄປ.

ດ້ວຍການສ້າງຊ່ອງທາງສັນຍາຊື້-ຂາຍໄຟຟ້າໂດຍກົງ (CPPA) ທີ່ຖືກຄຸ້ມຄອງເປັນຢ່າງດີສຳລັບຜູ້ຊົມໃຊ້ພາກອຸດສາຫະກຳລາຍໃຫຍ່, ສປປ ລາວ ຈະສາມາດສ້າງຄວາມຫຼາກຫຼາຍໃຫ້ແກ່ກະແສການເງິນ, ເສີມສ້າງຖານລາຍຮັບຂອງ ຝຟລ EDL ໃຫ້ເຂັ້ມແຂງ, ຫຼຸດຜ່ອນຄວາມສ່ຽງດ້ານສະພາບຄ່ອງ ແລະ ອັດຕາແລກປ່ຽນ (FX), ພ້ອມທັງລະດົມການລົງທຶນໃໝ່ຈາກພາກເອກະຊົນເຂົ້າໃນແຫຼ່ງຜະລິດໄຟຟ້າໃຫມ່.

ແຜນບຸລິມະສິດເຫຼົ່ານີ້ ຈະສ້າງຄວາມໂປ່ງໃສ, ຄວາມສາມາດໃນການຄາດການໄດ້ ແລະ ຄວາມແນ່ນອນດ້ານສັນຍາ ທີ່ຈຳເປັນໃນການດຶງດູດນັກລົງທຶນໄລຍະຍາວ, ໃນຂະນະທີ່ຍັງຮັບປະກັນວ່າການສົ່ງຂອງກະແສໄຟຟ້າຕົວຈິງທັງໝົດ ຍັງຄົງຖືກປະສານງານຜ່ານ ຕາຂ່າຍສາຍສົ່ງແຫ່ງຊາດ ເພື່ອປົກປ້ອງສະຖຽນລະພາບຂອງລະບົບ ແລະ ບຸລິມະສິດດ້ານພະລັງງານຂອງຊາດ.

7. ການແຍກບົດບາດດ້ານນະໂຍບາຍຕະຫຼາດ, ຜູ້ຄຸ້ມຄອງລະບົບ ແລະ ວຽກງານກຳກັບດູແລ ອອກຈາກກັນ ເພື່ອເສີມສ້າງການຄຸ້ມຄອງ ແລະ ຄວາມໂປ່ງໃສ:

ຂະແໜງພະລັງງານໄຟຟ້າໃນ ສປປ ລາວ ປະຈຸບັນດຳເນີນງານໂດຍມີການລວມສູນບົດບາດຂອງອົງກອນຢ່າງໜາແໜ້ນ, ໂດຍທີ່ການວາງນະໂຍບາຍ, ການກຳກັບດູແລ ແລະ ການດຳເນີນງານຂອງຕະຫຼາດ ສ່ວນໃຫຍ່ແມ່ນລວມສູນຢູ່ພາຍໃຕ້ **ກະຊວງອຸດສາຫະກຳ ແລະ ການຄ້າ (MOIC)** ແລະ **ລັດວິສາຫະກິດໄຟຟ້າລາວ (EDL)**. ເຖິງວ່າໂຄງສ້າງນີ້ຈະເຄີຍ ສົ່ງເສີມການພັດທະນາລະບົບໄຟຟ້າໃນໄລຍະຜ່ານມາ, ແຕ່ຄວາມຊັບຊ້ອນທີ່ເພີ່ມຂຶ້ນຂອງຂະແໜງພະລັງງານໄຟຟ້າ, ການຂະຫຍາຍຕົວຂອງການຄ້າຂ້າມແດນ ແລະ ຄວາມຄາດຫວັງທີ່ສູງຂຶ້ນຂອງນັກລົງທຶນ ໄດ້ຊີ້ໃຫ້ເຫັນເຖິງຂໍ້ຈຳກັດຫຼາຍປະການ. ນະໂຍບາຍ ແລະ ການຄຸ້ມຄອງມີການທັບຊ້ອນກັນ, ອົງກອນດຽວມີໜ້າທີ່ທັງກຳນົດກົດລະບຽບ, ບັງຄັບໃຊ້ລະບຽບການ ແລະ ອະນຸມັດການລົງທຶນຂະໜາດໃຫຍ່. ການອະນຸມັດໂຄງການມັກຈະຜ່ານຫຼາຍຂັ້ນຕອນທີ່ກ່ຽວຂ້ອງກັບຫຼາຍໜ່ວຍງານ, ສິ່ງຜົນໃຫ້ກຳນົດເວລາບໍ່ມີຄວາມສະໝ່ຳສະເໝີ ແລະ ມີຂະບວນການທີ່ຊ້ຳຊ້ອນ. ນອກຈາກນີ້, ການທົບທວນລາຄາໄຟຟ້າແມ່ນອີງໃສ່ດຸນຍິນດ້ານນະໂຍບາຍເປັນຫຼັກ ແທນທີ່ຈະເປັນໄປຕາມຂັ້ນຕອນທີ່ເປັນທາງການ, ເຊິ່ງອາດນຳໄປສູ່ຄວາມຊັກຊ້າ ແລະ ຈຳກັດຄວາມສາມາດໃນການຄາດການໄດ້ ສຳລັບທັງ ຝຟລ EDL ແລະ ຜູ້ຜະລິດໄຟຟ້າເອກະຊົນ (IPPs).

ການທັບຊ້ອນກັນຂອງບົດບາດລະຫວ່າງອົງກອນເຫຼົ່ານີ້ ສົ່ງຜົນກະທົບຕໍ່ພາບລັກດ້ານຄວາມເປັນກາງ ແລະ ເຮັດໃຫ້ຄວາມເຊື່ອໝັ້ນຂອງນັກລົງທຶນຫຼຸດລົງ. ເມື່ອນະໂຍບາຍ, ການຄຸ້ມຄອງ ແລະ ການດຳເນີນງານທາງການຄ້າລວມສູນຢູ່ພາຍໃຕ້ໜ່ວຍງານທີ່ມີຄວາມກ່ຽວຂ້ອງກັນຢ່າງໃກ້ຊິດ, ການຕັດສິນໃຈດ້ານລະບຽບການອາດເບິ່ງຄືວ່າຂາດຄວາມຍຸຕິທຳ, ເຊິ່ງເພີ່ມຄວາມຮູ້ສຶກດ້ານຄວາມສ່ຽງໃຫ້ແກ່ນັກລົງທຶນ ແລະ ຜູ້ໃຫ້ກູ້ຢືມ.ຂະບວນການອະນຸມັດທີ່ຊັກຊ້າ ຫຼື ບໍ່ສາມາດຄາດການໄດ້ ຍັງສົ່ງຜົນໃຫ້ການພັດທະນາໂຄງການຊັກຊ້າ ແລະ ເພີ່ມຕົ້ນທຶນທາງການເງິນ. ໃນຂະນະດຽວກັນ, ການຂາດການແຍກບົດບາດທີ່ຊັດເຈນລະຫວ່າງ ຄວາມຮັບຜິດຊອບດ້ານການດຳເນີນງານຂອງ ຝຟລ EDL ແລະ ຂະບວນການກວດສອບດ້ານລະບຽບການ ກໍມີສ່ວນເຮັດໃຫ້ເກີດແຮງກົດດັນທັງດ້ານການເງິນ, ການດຳເນີນງານ ແລະ ການຄຸ້ມຄອງໃນທົ່ວຂະແໜງການ. ຫາກບໍ່ມີການກຳນົດຂອບເຂດບົດບາດທີ່ຊັດເຈນກວ່າເກົ່າ, ຂະແໜງພະລັງງານໄຟຟ້າອາດຜະເຊີນກັບຄວາມທ້າທາຍໃນການດຶງດູດການລົງທຶນໃໝ່, ການເພີ່ມຂີດຄວາມສາມາດໃນການແຂ່ງຂັນ ຫຼື ການບັນລຸເປົ້າໝາຍການພັດທະນາແຫ່ງຊາດ.

ເພື່ອເສີມສ້າງການຄຸ້ມຄອງ ແລະ ປັບປຸງຄວາມຮັບຜິດຊອບ, ລັດຖະບານຈະຄ່ອຍໆແຍກບົດບາດດ້ານນະໂຍບາຍຕະຫຼາດ, ການດຳເນີນງານຕະຫຼາດ ແລະ ໜ້າທີ່ການກຳກັບດູແລອອກຈາກກັນ, ໂດຍກຳນົດບົດບາດຂອງອົງກອນໃຫ້ຊັດເຈນຂຶ້ນ ໃນຂະນະທີ່ຍັງຮັກສາການກວດກາ ແລະ ສະຖຽນລະພາບຂອງຊາດໄວ້.ພາຍໃຕ້ໂຄງສ້າງທີ່ສະເໜີນີ້:**ກະຊວງອຸດສາຫະກຳ ແລະ ການຄ້າ (MOIC):** ຈະຍັງຄົງເຮັດໜ້າທີ່ວາງນະໂຍບາຍ, ກຳນົດຍຸດທະສາດໄລຍະຍາວ ແລະ ນະໂຍບາຍພະລັງງານ. **ລັດວິສາຫະກິດໄຟຟ້າລາວ (EDL):** ຈະຍັງຄົງເປັນຜູ້ຊື້ດຽວ (Single Buyer) ແລະ ຜູ້ດຳເນີນງານຕະຫຼາດ, ຮັບຜິດຊອບການຄວບຄຸມການສັ່ງຈ່າຍໄຟ, ການດຳເນີນງານຕາຂ່າຍໄຟຟ້າ, ການບໍລິການລູກຄ້າ ແລະ ການເຮັດສັນຍາກັບຜູ້ຜະລິດເອກະຊົນ (IPPs). **ໜ່ວຍງານຄຸ້ມຄອງຕະຫຼາດໄຟຟ້າ:** ຈະຖືກສ້າງຕັ້ງຂຶ້ນໂດຍສະເພາະເພື່ອຮັບຜິດຊອບດ້ານວິທີການ ແລະ ການທົບທວນລາຄາຄ່າໄຟຟ້າ, ການອອກໃບອະນຸຍາດ, ການຕິດຕາມກວດກາຕະຫຼາດ, ການກວດສອບການປະຕິບັດຕາມລະບຽບການ, ມາດຕະຖານຄວາມປອດໄພ ແລະ ການກວດກາຂະບວນການຈັດຊື້ພະລັງງານ.ໂຄງສ້າງນີ້ແມ່ນຖອດຖອນມາຈາກແນວທາງທີ່ປະສົບຜົນສຳເລັດໃນຫຼາຍຕະຫຼາດໄຟຟ້າທັງໃນລະດັບພາກພື້ນ ແລະ ສາກົນ, ເຊິ່ງການແຍກບົດບາດທີ່ຊັດເຈນໄດ້ຊ່ວຍປັບປຸງຄວາມໂປ່ງໃສ, ເສີມສ້າງຄວາມຮັບຜິດຊອບ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ສາທາລະນະຊົນ ແລະ ນັກລົງທຶນ.

ການຫັນປ່ຽນທີ່ມີການຈັດລຽງລຳດັບຢ່າງລະມັດລະວັງ ຈະຮັບປະກັນວ່າໂຄງສ້າງອົງກອນໃໝ່ຖືກນຳໃຊ້ຢ່າງມີສະຖຽນລະພາບ ແລະ ຍືນຍົງ. ໜ່ວຍງານຄຸ້ມຄອງ ຈະຖືກສ້າງຕັ້ງຂຶ້ນໃຫ້ເປັນອົງກອນທີ່ມີໂຄງສ້າງກະທັດຮັດ ແລະ ມີບົດບາດທີ່ຊັດເຈນ, ໂດຍໄດ້ຮັບການສະໜັບສະໜູນຈາກຮາກຖານທາງກົດໝາຍທີ່ເໝາະສົມ ແລະ ຖືກອອກແບບໃຫ້ດຳເນີນງານໄດ້ດ້ວຍຕົນເອງທາງດ້ານການເງິນ ຜ່ານກົນໄກຕ່າງໆ ເຊັ່ນ: ຄ່າທຳນຽມໃບອະນຸຍາດ ຫຼື ຄ່າທຳນຽມຈາກຂະແໜງການ. ການສ້າງຂີດຄວາມສາມາດ ຈະໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາສາກົນຕາມຄວາມເໝາະສົມ ເພື່ອຮັບປະກັນວ່າໜ່ວຍຄຸ້ມຄອງມີຄວາມສາມາດດ້ານເຕັກນິກ ແລະ ການວິເຄາະທີ່ຈຳເປັນສຳລັບການກວດສອບທີ່ມີປະສິດທິພາບ. ນອກຈາກນີ້, ຈະມີການສ້າງຕັ້ງກົນໄກການປະສານງານຢ່າງເປັນທາງການ ເພື່ອຮັກສາຄວາມສອດຄ່ອງລະຫວ່າງ MOIC, EDL ແລະ ໜ່ວຍງານຄຸ້ມຄອງ, ເພື່ອຮັບປະກັນວ່າການຈັດຕັ້ງປະຕິບັດເປັນໄປໃນທິດທາງດຽວກັນ ແລະ ການຕັດສິນໃຈໃນຂະແໜງການຍັງຄົງສະໜັບສະໜູນບຸລິມະສິດຂອງຊາດຢ່າງຕໍ່ເນື່ອງ.

ການແຍກບົດບາດດ້ານນະໂຍບາຍ, ຜູ້ຄຸ້ມຄອງລະບົບ ແລະ ວຽກງານຄຸ້ມຄອງອອກຈາກກັນ ຈະຊ່ວຍເພີ່ມທະວີຄວາມໂປ່ງໃສ, ເສີມສ້າງຄວາມຮັບຜິດຊອບຂອງອົງກອນ ແລະ ຫຼຸດຜ່ອນບັນຫາຄໍຂວດໃນການອະນຸມັດໂຄງການ, ເຊິ່ງຈະຊ່ວຍປັບປຸງຄວາມສາມາດໃນການຄາດການໄດ້ ໃຫ້ແກ່ທັງນັກລົງທຶນພາຍໃນ ແລະ ຕ່າງປະເທດ.ໃນໄລຍະຍາວ, ແຜນບຸລິມະສິດນີ້ ຈະສະໜັບສະໜູນຂະບວນການທົບທວນລາຄາຄ່າໄຟຟ້າ ແລະ ສັນຍາ PPA ໃຫ້ມີລະບຽບວິໄນຫຼາຍຂຶ້ນ, ເສີມສ້າງຄວາມຍືນຍົງທາງດ້ານການເງິນໃນທົ່ວຂະແໜງການ ແລະ ສ້າງສະພາບແວດລ້ອມການລົງທຶນທີ່ມີຄວາມໜ້າເຊື່ອຖື ແລະ ມີປະສິດທິພາບ. ດ້ວຍການກຳນົດຂອບເຂດບົດບາດຂອງອົງກອນໃຫ້ຊັດເຈນຂຶ້ນ ແລະ ການເຮັດໃຫ້ການກວດກາດ້ານລະບຽບການມີຄວາມທັນສະໄໝ, ສປປ ລາວ ຈະສາມາດປັບປຸງ ການຄຸ້ມຄອງຂອງລະບົບ ພ້ອມທັງວາງຮາກຖານໃຫ້ແກ່ສະຖຽນລະພາບຂອງຂະແໜງການໃນໄລຍະຍາວ ແລະ ການປະຕິຮູບໃນອະນາຄົດ.

ໝາກຜົນທີ່ຄາດຫວັງ ແລະ ປັດໄຈຊຸກຍູ້ຮ່ວມ (Expected outcomes and cross-cutting enablers):

ການຈັດຕັ້ງປະຕິບັດບັນດາແຜນບຸລິມະສິດເຫຼົ່ານີ້ ຈະຊ່ວຍໃຫ້ ສປປ ລາວ ກ້າວໄປສູ່ເສັ້ນທາງການພັດທະນາຂະແໜງພະລັງງານທີ່ມີຄວາມຢືດຢຸ່ນ, ໂປ່ງໃສ ແລະ ມີຄວາມຍືນຍົງທາງດ້ານການເງິນຫຼາຍຂຶ້ນໃນອານາຄົດ.

ພາຍໃນປີ 2030, ການສະໜອງພະລັງງານໄຟຟ້າຄາດວ່າຈະມີຄວາມເຊື່ອໝັ້ນສູງຕະຫຼອດທັງປີ ໂດຍໄດ້ຮັບການສະໜັບສະໜູນ ຈາກການເພີ່ມຂຶ້ນຂອງແຫຼ່ງຜະລິດພະລັງງານທີ່ໝັ້ນຄົງ ແລະ ຍືດຢຸ່ນ, ການປັບປຸງການວາງແຜນການຜະລິດໄຟຟ້ານ້ຳຕົກໃຫ້ດີຂຶ້ນ ແລະ ການເສີມສ້າງຄວາມເຂັ້ມແຂງຂອງ ຕາຂ່າຍໄຟຟ້າ ແບບມີເປົ້າໝາຍ ເພື່ອຫຼຸດຜ່ອນບັນຫາຄວາມແອອັດຂອງສາຍສົ່ງ, ຫຼຸດຜ່ອນການຢຸດ ຜະລິດພະລັງງານໄຟຟ້າ ແລະ ແກ້ໄຂບັນຫາການຂາດແຄນໄຟຟ້າໃນລະດູແລ້ງ. ການວາງແຜນການດຳເນີນງານທີ່ເຂັ້ມແຂງ ແລະ ການປະສານງານການສັ່ງຈ່າຍໄຟທີ່ດີຂຶ້ນ ຈະຊ່ວຍເພີ່ມສະຖຽນລະພາບຂອງລະບົບສົ່ງໄຟຟ້າ, ເຮັດໃຫ້ ຟຟລ EDL ສາມາດບໍລິຫານຄວາມສົມດຸນ ລະຫວ່າງການສະໜອງພາຍໃນ ກັບ ພັນທະການສົ່ງອອກໄດ້ດີຂຶ້ນ ແລະ ສາມາດຮອງຮັບການຂະຫຍາຍຕົວຂອງພາກອຸດສາຫະກຳພາຍໃນປະເທດໄດ້ຢ່າງມີປະສິດທິພາບ.

ການປະຕິຮູບເຫຼົ່ານີ້ຍັງຈະຊ່ວຍເສີມສ້າງຮາກຖານທາງດ້ານການເງິນຂອງຂະແໜງການໃຫ້ເຂັ້ມແຂງ. ການກຳນົດອັດຕາຄ່າໄຟຟ້າທີ່ສະທ້ອນຕົ້ນທຶນຕົວຈິງ, ສັນຍາ PPA ທີ່ເປັນມາດຕະຖານ ແລະ ການປັບປຸງລະບຽບວິໄນດ້ານສັນຍາ ຈະສະໜັບສະໜູນການຟື້ນຟູທາງດ້ານການເງິນຂອງ ຟຟລ EDL ແລະ ຫຼຸດຜ່ອນຄວາມສ່ຽງຈາກສະພາບຄ່ອງທີ່ຜັນຜວນ, ຄວາມບໍ່ສົມດຸນຂອງສະກຸນເງິນ ແລະ ພາລະໜີ້ສິນທີ່ມີມາແຕ່ອະດີດ. ສະພາບແວດລ້ອມດ້ານນະໂຍບາຍທີ່ສາມາດຄາດການໄດ້ ແລະ ໂປ່ງໃສຫຼາຍຂຶ້ນ, ພ້ອມດ້ວຍກົດລະບຽບທີ່ຊັດເຈນກວ່າເກົ່າສຳລັບການສົ່ງອອກ, ສັນຍາ CPPA ແລະ ການຄຸ້ມຄອງຊັບສິນຫຼັງ BOT ຈະຊ່ວຍ ສ້າງຄວາມໜ້າເຊື່ອຖືໃຫ້ນັກລົງທຶນ ແລະ ຜູ້ໃຫ້ກູ້ຢືມ, ເຊິ່ງຈະເຮັດໃຫ້ການເຂົ້າເຖິງແຫຼ່ງທຶນສຳລັບ ແຫຼ່ງຜະລິດໄຟຟ້າໃໝ່ ແລະ ການລົງທຶນໃນຕາຂ່າຍໄຟຟ້າ ມີເງື່ອນໄຂທີ່ດີຂຶ້ນ ແລະ ແຂ່ງຂັນໄດ້ຫຼາຍຂຶ້ນ. ໃນໄລຍະຍາວ, ຂະແໜງການນີ້ຈະມີທ່າແຮງທີ່ດີກວ່າເກົ່າໃນການລະດົມທຶນທີ່ມີຄຸນນະພາບຈາກພາກເອກະຊົນ ໃນຂະນະທີ່ຍັງຄົງຮັກສາການກວດກາທີ່ເຂັ້ມແຂງຈາກພາກລັດ.

ໃນແງ່ມຸມຂອງການຄຸ້ມຄອງ, ການກຳນົດບົດບາດຂອງອົງກອນໃຫ້ຊັດເຈນຂຶ້ນ ແລະ ການປັບປຸງກົນໄກການປະສານງານ ຈະຊ່ວຍເສີມສ້າງຄວາມຮັບຜິດຊອບ ແລະ ເຮັດໃຫ້ຂະບວນການອະນຸມັດໂຄງການມີຄວາມຄ່ອງຕົວ, ເຊິ່ງຈະຫຼຸດຜ່ອນຄວາມຊັກຊ້າ ແລະ ສະໜັບສະໜູນການນຳໃຊ້ລະບຽບການຢ່າງສະໝ່ຳສະເໝີ.ການສ້າງຕັ້ງໜ່ວຍງານຄຸ້ມຄອງຕະຫຼາດ ສະເພາະໃນໄລຍະກາງ ຈະຊ່ວຍເພີ່ມທະວີຄວາມໂປ່ງໃສໃນການຕັດສິນໃຈດ້ານອັດຕາຄ່າໄຟ ແລະ ການອອກໃບອະນຸຍາດ, ໃນຂະນະທີ່ຫ້ອງການ TMO ຈະຊ່ວຍສ້າງລະບຽບວິໄນໃນການຈັດຕັ້ງປະຕິບັດພາຍໃນ ຟຟລ EDL ຢ່າງຕໍ່ເນື່ອງ. ການປ່ຽນແປງເຫຼົ່ານີ້ເພື່ອປັບປຸງຄວາມເຊື່ອໝັ້ນຂອງນັກລົງທຶນ, ເພີ່ມທະວີຄວາມໄວ້ວາງໃຈຈາກສາທາລະນະຊົນ ແລະ ຮັບປະກັນວ່າການຕັດສິນໃຈໃນຂະແໜງການແມ່ນອີງໃສ່ການວິເຄາະດ້ານເຕັກນິກ ແລະ ການເງິນທີ່ໜັກແໜ້ນ.

ການປະຕິຮູບເຫຼົ່ານີ້ຍັງຈະຊ່ວຍສະໜັບສະໜູນການຜັດທະນາເສດຖະກິດໃນວົງກວ້າງ. ເມື່ອຄວາມພຽງພໍຂອງການຜະລິດໄດ້ຮັບການປັບປຸງ ແລະ ຕາຂ່າຍໄຟຟ້າມີຄວາມເຊື່ອໝັ້ນຫຼາຍຂຶ້ນ, ບັນດາອຸດສາຫະກຳທີ່ຊົມໃຊ້ພະລັງງານໄຟຟ້າສູງ, ເຂດເສດຖະກິດພິເສດ (SEZ) ແລະ ບັນດາແຜນງານການສ້າງມູນຄ່າເພີ່ມພາຍໃນປະເທດ ຈະໄດ້ຮັບຜົນປະໂຫຍດຈາກການສະໜອງພະລັງງານໄຟຟ້າທີ່ໝັ້ນຄົງ ແລະ ຄາດການໄດ້ຫຼາຍຂຶ້ນ, ເຊິ່ງຈະຊ່ວຍໃຫ້ ສປປ ລາວ ສາມາດຍາດແຍ່ງເອົາໂອກາດທາງເສດຖະກິດທີ່ຍິ່ງໃຫຍ່ກວ່າເກົ່າ ຈາກການປ່ຽນແຕ່ງແຮ່ທາດ, ການຜະລິດ ແລະ ຂະແໜງການໃໝ່ໆທີ່ພວມເກີດຂຶ້ນ.

ການບໍລິຫານຈັດການການສົ່ງອອກທີ່ດີຂຶ້ນຜ່ານແນວທາງ **Grid-First** ຈະຊ່ວຍໃຫ້ ສປປ ລາວ ສາມາດເພີ່ມມູນຄ່າສູງສຸດຈາກໂອກາດໃນຕະຫຼາດພາກພື້ນ ໃນຂະນະທີ່ຍັງຮັບປະກັນວ່າຄວາມຕ້ອງການພາຍໃນປະເທດຍັງຄົງເປັນບຸລິມະສິດຫຼັກ. ນອກຈາກນີ້, ສະຖຽນລະພາບຂອງລະບົບສົ່ງໄຟຟ້າ ແລະ ການວາງແຜນທີ່ເຂັ້ມແຂງຂຶ້ນ ຈະຊ່ວຍໃຫ້ປະເທດສາມາດເຂົ້າຮ່ວມໃນ **ສາຍສົ່ງໄຟຟ້າອາຊຽນ (ASEAN Power Grid)** ໄດ້ຢ່າງເລິກເຊິ່ງກວ່າເກົ່າ, ເຊິ່ງເປັນການເສີມສ້າງຄວາມຮ່ວມມືດ້ານພະລັງງານໃນພາກພື້ນ ແລະ ທ່າແຮງໃນການສົ່ງອອກໄລຍະຍາວ.

ເພື່ອບັນລຸໝາກຜົນເຫຼົ່ານີ້, ຕ້ອງມີປັດໄຈຊຸກຍູ້ຮ່ວມຫຼາຍດ້ານເປັນພື້ນຖານໃນການຈັດຕັ້ງປະຕິບັດ. ຄວາມມຸ່ງໝັ້ນທາງດ້ານການເມືອງຢ່າງຕໍ່ເນື່ອງ ແລະ ຄວາມສອດຄ່ອງ ລະຫວ່າງ ບັນດາກະຊວງ ແມ່ນສິ່ງຈຳເປັນເພື່ອຮັກສາກະແສການປະຕິຮູບ ແລະ ຮັບປະກັນການຕັດສິນໃຈທີ່ທັນເວລາ. ການເສີມສ້າງຂີດຄວາມສາມາດດ້ານອົງກອນ ແລະ ເຕັກນິກ ທັງຢູ່ພາຍໃຕ້ MOIC, EDL, ໜ່ວຍງານຄຸ້ມຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງຈະເປັນປັດໄຈຕັດສິນໃນການປະເມີນໂຄງການ, ການວິເຄາະອັດຕາຄ່າໄຟ, ການວາງແຜນລະບົບ ແລະ ການກວດສອບດ້ານລະບຽບການ. ນອກຈາກນີ້, ການປັບປຸງລະບົບຂໍ້ມູນ ແລະ ເຄື່ອງມືການດຳເນີນງານແບບຕາມເວລາຈິງ, ລວມທັງການຍົກລະດັບລະບົບ SCADA/EMS ແລະ ການສ້າງລະບົບທະບຽນ PPA ແບບດິຈິຕອນ, ຈະຊ່ວຍສະໜັບສະໜຸນການຕັດສິນໃຈທີ່ຊັດເຈນ ແລະ ເພີ່ມທະວີຄວາມໂປ່ງໃສ.

ປັດໄຈຊຸກຍູ້ໃນພາກປະຕິບັດກໍແມ່ນສິ່ງທີ່ຕ້ອງໄດ້ຮັບການຍອມຮັບ ແລະ ເອົາໃຈໃສ່. **ການເກັບກູ້ລະເບີດທີ່ບໍ່ທັນແຕກ (UXO)** ໃນແລວສາຍສົ່ງທີ່ສຳຄັນ ແມ່ນມີຄວາມຈຳເປັນ ເພື່ອເຮັດໃຫ້ການຂະຫຍາຍຕາຂ່າຍໄຟຟ້າເປັນໄປຢ່າງປອດໄພ ແລະ ທັນເວລາ, ໂດຍສະເພາະໃນເຂດພື້ນທີ່ທີ່ຖືກກຳນົດໃຫ້ເປັນຈຸດລົງທຶນຂອງສາຍສົ່ງ 115 kV ແລະ 230 kV. ການເສີມສ້າງກົນໄກການປະສານງານລະຫວ່າງອົງກອນ, ລວມທັງການລາຍງານທີ່ມີໂຄງສ້າງຊັດເຈນ, ການຮ່ວມກັນທົບທວນວຽກ ແລະ ການວາງແຜນຮ່ວມກັນລະຫວ່າງໜ່ວຍງານຢ່າງສະໝ່ຳສະເໝີ ຈະຊ່ວຍຮັກສາຄວາມສອດຄ່ອງໃນຂະນະທີ່ການປະຕິຮູບຄືບໜ້າ. ນອກຈາກນີ້, ການຊຸກໃຊ້ພະລັງງານຢ່າງມີປະສິດທິພາບ ແລະ ການຫັນເປັນໄຟຟ້າໃນຂະແໜງການຊຸກໃຊ້ຂັ້ນສຸດທ້າຍ ຈະມາເຕີມເຕັມການປະຕິຮູບດ້ານການສະໜອງ ໂດຍການຫຼຸດຜ່ອນຄວາມຜັນຜວນຂອງຄວາມຕ້ອງການໄຟ, ປັບປຸງສະມັດຖະພາບການຊຸກໃຊ້ພະລັງງານໄຟຟ້າ ແລະ ສະໜັບສະໜຸນເປົ້າໝາຍດ້ານສິ່ງແວດລ້ອມ. ການສະໜັບສະໜຸນຈາກຄູ່ຮ່ວມພັດທະນາສາກົນກໍອາດຈະມີຄວາມຈຳເປັນສຳລັບການຊ່ວຍເຫຼືອດ້ານເຕັກນິກ, ການສ້າງຂີດຄວາມສາມາດ ແລະ ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນໃນໄລຍະເລີ່ມຕົ້ນ.

ໃນທ້າຍທີ່ສຸດ, ການປະຕິຮູບເຫຼົ່ານີ້ຈະສ້າງຮາກຖານໃຫ້ແກ່ຄວາມມຸ່ງຫວັງໃນໄລຍະຍາວຂອງປະເທດ. ເມື່ອຄວາມພຽງພໍຂອງລະບົບໄດ້ຮັບການປັບປຸງ, ຄວາມຍືນຍົງທາງດ້ານການເງິນມີຄວາມເຂັ້ມແຂງຂຶ້ນ ແລະ ຄວາມເຊື່ອໝັ້ນຕໍ່ລະບຽບການເພີ່ມຂຶ້ນ, ສປປ ລາວ ຈະມີທ່າແຮງທີ່ດີກວ່າເກົ່າໃນການຊຸກຍູ້ ເປົ້າໝາຍອັນສູງສົ່ງ ທີ່ຈະກາຍເປັນ **ສູນກາງພະລັງງານສີຂຽວຂອງພາກພື້ນ (Regional Green Energy Hub)** ໂດຍການນຳໃຊ້ທ່າແຮງຈາກຖານຊັບພະຍາກອນພະລັງງານທົດແທນ ແລະ ທີ່ຕັ້ງທາງຍຸດທະສາດຂອງປະເທດ. ບັນດາມາດຕະການເຫຼົ່ານີ້ຈະຮ່ວມກັນເສີມສ້າງ **3 ເສົາຄ້ຳຫຼັກ** ຂອງຂະແໜງການ ຄື: **ການຜະລິດ, ຄວາມພ້ອມຂອງຕາຂ່າຍໄຟຟ້າ ແລະ ຂີດຄວາມສາມາດໃນການສົ່ງອອກ**, ພ້ອມທັງຮັບປະກັນວ່າການປະຕິຮູບຈະປ່ຽນເປັນການປັບປຸງທີ່ເຫັນຜົນໄດ້ຢ່າງຊັດເຈນສຳລັບທັງຜູ້ຊຸກໃຊ້ ແລະ ນັກລົງທຶນ.

ຜົນໄດ້ຮັບຈາກການປະຕິຮູບ ຈະນຳໄປສູ່ການສ້າງຂະແໜງພະລັງງານໄຟຟ້າທີ່ໝັ້ນຄົງ ແລະ ຊົງຄຸນຄ່າທາງດ້ານການລົງທຶນ ເຊິ່ງບໍ່ພຽງແຕ່ຈະເປັນຖານຮອງຮັບການພັດທະນາເສດຖະກິດ ແລະ ຄວາມໝັ້ນຄົງຂອງຊາດເທົ່ານັ້ນ, ແຕ່ຍັງຈະເປັນການປະກາດສັກດາ ແລະ ບົດບາດອັນສຳຄັນຂອງ ສປປ ລາວ ໃນເວທີພະລັງງານຂອງອາຊຽນ.

2.2.1.2 ອຸດສາຫະກຳບໍ່ແຮ່

ໂອກາດຂອງຂະແໜງທໍລະນີສາດ ແລະ ບໍ່ແຮ່ ໃນໄລຍະປີ 2026-2030

ຂະແໜງທໍລະນີສາດ ແລະ ບໍ່ແຮ່ຂອງ ສປປ ລາວ ມີໂອກາດໃນການເຕີບໃຫຍ່ຂະຫຍາຍໂຕ ແລະ ຈະໄດ້ຮັບການລົງທຶນເພີ່ມຫຼາຍຂຶ້ນ ໃນຊ່ວງໄລຍະຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) ຄັ້ງທີ X ແລະ ໄລຍະຫຼັງຈາກນັ້ນ.

ທ່າແຮງຕົ້ນຕໍທີ່ເປັນໂອກາດ ຂອງ ສປປ ລາວ ປະກອບໄປດ້ວຍ ຊັບພະຍາກອນທຳມະຊາດທີ່ຊັບພະຍາກອນແຮ່ທາດທີ່ອຸດົມສົມບູນ, ມີທີ່ຕັ້ງທີ່ເປັນຍຸດທະສາດ, ສອດຄ່ອງແທດເໝາະກັບຄວາມຕ້ອງການແຮ່ທາດທີ່ສຳຄັນ (critical minerals) ທີ່ກຳລັງເພີ່ມຂຶ້ນໃນທົ່ວໂລກ, ຊຶ່ງກາຍເປັນສິ່ງ ແລະ ເປັນເງື່ອນໄຂທີ່ສຳຄັນໃນການດຶງດູດໃນການລົງທຶນອຸດສາຫະກຳປາຍນ້ຳເພີ່ມຂຶ້ນ (downstream activities) ແລະ ສອດຄ່ອງກັບນະໂຍບາຍ "ການເຕີບໂຕແບບສີຂຽວ" ດັ່ງຄຳອະທິບາຍລະອຽດລຸ່ມນີ້:

ຊັບພະຍາກອນແຮ່ທາດທີ່ອຸດົມສົມບູນ ແລະ ຫຼາກຫຼາຍ: ສປປ ລາວມີຊັບພະຍາກອນແຮ່ທາດທີ່ອຸດົມສົມບູນ ເຊິ່ງໄດ້ຄົ້ນພົບບັນດາຈຸດປະກົດແຮ່ທາດໃນຂອບເຂດທົ່ວປະເທດຫຼາຍກວ່າ 800 ກວ່າຈຸດປະກົດ, ເປັນຕົ້ນແມ່ນ ຄຳ, ທອງ, ແຮ່ທາດຫາຍາກ (rare earths), ເກືອໂປຕາສ ແລະ ອື່ນໆ, ຊຶ່ງໄດ້ເປັນເງື່ອນໄຂພື້ນຖານໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດຢ່າງຕໍ່ເນື່ອງ. **ຄວາມຕ້ອງການແຮ່ທາດທີ່ສຳຄັນກຳລັງເພີ່ມຂຶ້ນໃນທົ່ວໂລກ:** ໂດຍສະເພາະແມ່ນບັນດາແຮ່ທາດທີ່ຖືກນຳໃຊ້ໃນເຕັກໂນໂລຊີສີຂຽວ, ຊຶ່ງໄດ້ເປັນໂອກາດ ທີ່ສຳຄັນສຳລັບການຜະລິດ-ສົ່ງອອກຂອງ ສປປ ລາວ. ນອກຈາກນີ້, ທາງລົດໄຟ ລາວ-ຈີນ ຍັງໄດ້ສ້າງຄວາມເຂັ້ມແຂງໃນການເຊື່ອມຈອດ ແລະ ຫຼຸດຜ່ອນຕົ້ນທຶນການຂົນສົ່ງ. **ທີ່ຕັ້ງທີ່ເປັນຍຸດທະສາດ ແລະ ການເຊື່ອມຕໍ່:** ສປປ ລາວ ເປັນປະເທດທີ່ມີຊາຍແດນເຊື່ອມຈອດທາງບົກກັບຫລາຍປະເທດໃນຂົງເຂດ “land-linked” ແລະ ມີໂຄງລ່າງພື້ນຖານທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເຊັ່ນ: ທາງລົດໄຟ ລາວ-ຈີນ, ແມ່ນຈະຂະຫຍາຍການສົ່ງອອກທີ່ມີປະສິດທິພາບໄປສູ່ຕະຫຼາດທີ່ສຳຄັນ, ໂດຍສະເພາະແມ່ນ ສປ ຈີນ, ເຊິ່ງເປັນຜູ້ລົງທຶນ ແລະ ຜູ້ນຳເຂົ້າແຮ່ທາດຫລັກ ຂອງ ສປປ ລາວ. **ການສະໜັບສະໜຸນຂອງລັດຖະບານຕໍ່ການລົງທຶນໂດຍກົງຈາກຕ່າງປະເທດ (FDI):** ລັດຖະບານ ສປປ ລາວ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ແລະ ພະຍາຍາມດຶງດູດການລົງທຶນຈາກຕ່າງປະເທດ ໂດຍຜ່ານນະໂຍບາຍທີ່ເອື້ອອຳນວຍຕໍ່ການລົງທຶນ, ການປັບປຸງກົດໝາຍທີ່ຕິດພັນກັບການລົງທຶນ ແລະ ເງື່ອນໄຂທາງດ້ານພາສີ-ອາກອນ, ໂດຍຍັງຖືເອົາຂະແໜງທໍລະນີສາດ ແລະ ບໍ່ແຮ່ ເປັນຂະແໜງຫຼັກໃນການໃຫ້ສຳປະທານ. **ທ່າແຮງສຳລັບການປຸງແຕ່ງປາຍນ້ຳ (downstream processing):** ການສຸ່ມໃສ່ສິ່ງເສີມໃຫ້ມີໂຮງງານປຸງແຕ່ງ ແລະ ຫຼອມແຮ່ທາດພາຍໃນປະເທດ ແມ່ນເປັນໂອກາດໃນການເພີ່ມມູນຄ່າສູງໃຫ້ແກ່ແຮ່ດິບ, ເພີ່ມທະວີການຊົມໃຊ້ໄຟຟ້າຈາກພາຍໃນປະເທດ ແລະ ສ້າງລາຍຮັບໃຫ້ສູງຂຶ້ນ. **ການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງ:** ຄວາມມຸ່ງໝັ້ນຂອງລັດຖະບານຕໍ່ ຫຼັກການສີຂຽວ ລວມທັງການປົກປັກຮັກສາສິ່ງແວດລ້ອມ ສາມາດດຶງດູດການລົງທຶນທີ່ມີຄວາມຮັບຜິດຊອບ ແລະ ສອດຄ່ອງກັບການອະນຸລັກ, ເຊິ່ງນຳໄປສູ່ອຸດສາຫະກຳທີ່ຍືນຍົງຫຼາຍຂຶ້ນ. **ຄວາມຮ່ວມມືໃນພາກພື້ນ ແລະ ສາກົນ**: ຄວາມຮ່ວມມືໃນພາກພື້ນ ແລະ ສາກົນໃນການສຳຫຼວດແຜນທີ່, ການສຶກສາຄົ້ນຄວ້າ ແລະ ການ

ລົງທຶນ, ພ້ອມດ້ວຍການເຂົ້າຮ່ວມໃນໂຄງການຮ່ວມມືສາກົນ, ໄດ້ເປັນໂອກາດສຳລັບການຊ່ວຍເຫຼືອດ້ານເຕັກນິກວິຊາການ, ການຖ່າຍທອດຄວາມຮູ້ ແລະ ການເຂົ້າເຖິງຕະຫຼາດ ໃຫ້ແກ່ ສປປ ລາວ.

ຂະແໜງທໍລະນີສາດ ແລະ ບໍ່ແຮ່ມີບົດບາດທີ່ສຳຄັນໃນເສດຖະກິດ ສປປ ລາວ ທີ່ປະກອບສ່ວນໃຫ້ແກ່ຍອດລວມຜະລິດຕະພັນພາຍໃນ (GDP) ແລະ ການສົ່ງອອກ. ເຖິງຢ່າງໃດກໍຕາມ, ການເຕີບໂຕຂອງຂະແໜງການຍັງຂ້ອນຂ້າງຊະລໍຕົວ (plateaued) ເນື່ອງຈາກຫຼາຍປັດໄຈ ເຊັ່ນ: ຄວາມຕ້ອງການບາງແຮ່ທາດຫຼຸດລົງ, ລາຄາບາງແຮ່ທາດຕົກຕ່ຳ ແລະ ການຜະລິດຂອງໂຄງການໃຫຍ່ໆຈຳນວນໜຶ່ງແມ່ນມີລັກສະນະຢູ່ໂຕ. ແຕ່ສຳລັບລາຄາທອງ ແລະ ຄຳ ແມ່ນໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ ເຊິ່ງໄດ້ເຮັດໃຫ້ມີການທົບທວນ ແລະ ປະເມີນຄືນບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງບັນດາໂຄງການ (ລວມທັງແຜນການປິດບໍ່ແຮ່), ເຊິ່ງອາດຈະເຮັດໃຫ້ອາຍຸການດຳເນີນງານຂອງບໍ່ແຮ່ຂະໜາດໃຫຍ່ໃນລາວ ຍາວນານຂຶ້ນຕື່ມ. ສະນັ້ນ, ເພື່ອດຶງດູດການລົງທຶນທີ່ມີຄຸນນະພາບ ແລະ ບັນລຸທ່າແຮງໄດ້ຕາມເປົ້າໝາຍຂອງຂະແໜງການ, ແມ່ນມີຄວາມຈຳເປັນທີ່ຈະຕ້ອງແກ້ໄຂບັນຫາທີ່ສຳຄັນຫຼາຍຢ່າງ, ເຊິ່ງລວມມີ: ການໃຫ້ສິດສຳປະທານ ແລະ ການເຂົ້າເຖິງພື້ນທີ່ສຳຫຼວດ, ຄວາມໝັ້ນຄົງໃນການຄອບຄອງສິດສຳປະທານ, ລະບຽບການທາງດ້ານການເງິນທີ່ມີຄວາມສົມດຸນ (ສົມດຸນລະຫວ່າງລັດຖະບານ ແລະ ຜູ້ລົງທຶນ), ຄວາມເຂົ້າໃຈທີ່ຊັດເຈນກ່ຽວກັບສິດ ແລະ ພັນທະ (ພາກລັດ ແລະ ຜູ້ລົງທຶນ), ລະບຽບການຄຸ້ມຄອງກວດກາທີ່ມີຄວາມໂປ່ງໃສ, ແລະ ຂໍ້ມູນທີ່ສາມາດເຂົ້າເຖິງໄດ້. ນອກຈາກນີ້, ລັດຖະບານ ສປປ ລາວ ຍັງມີເປົ້າໝາຍທີ່ຈະປັບປຸງ ແລະ ຄຸ້ມຄອງຂະແໜງການໃຫ້ທັນສະໄໝຂຶ້ນກວ່າເກົ່າ, ໂດຍສຸມໃສ່ໃຫ້ມີການປະເມີນຊັບພະຍາກອນແຮ່ທາດຢ່າງລະອຽດຄົບຖ້ວນ, ມີການເພີ່ມມູນຄ່າແຮ່ທາດ, ແລະ ມີການຈັດຕັ້ງປະຕິບັດດຳເນີນງານຢ່າງມີຄວາມຮັບຜິດຊອບສູງ.

ໃນລະຫວ່າງປີ 2021-2025 ຂະແໜງທໍລະນີສາດ ແລະ ບໍ່ແຮ່ ໄດ້ພະຍາຍາມປັບປຸງຂະແໜງການ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ມີຄວາມຮັດກຸມ ພ້ອມທັງໄດ້ວາງພື້ນຖານການຂຸດຄົ້ນ ແລະ ການເພີ່ມມູນຄ່າຊັບພະຍາກອນແຮ່ທາດ ໃຫ້ມີຄວາມຮັບຜິດຊອບຫຼາຍຂຶ້ນ. ເຖິງຢ່າງໃດກໍ່ຕາມ, ການຜັດທະນາດັ່ງກ່າວເຫັນວ່າຍັງມີສິ່ງທ້າທາຍຫຼາຍດ້ານທີ່ຈຳເປັນຕ້ອງໄດ້ແກ້ໄຂ ເປັນຕົ້ນແມ່ນ ການບັງຄັບໃຊ້ກົດໝາຍ, ຂໍ້ຈຳກັດດ້ານການເງິນ ແລະ ຜົນກະທົບທາງດ້ານສັງຄົມ, ສິ່ງແວດລ້ອມ ແລະ ອື່ນໆ.

ຕະຫຼອດທົດສະວັດທີ່ຜ່ານມາ ຂະແໜງທໍລະນີສາດ ແລະ ບໍ່ແຮ່ໄດ້ປະກອບສ່ວນເກືອບໜຶ່ງສ່ວນສາມຂອງການລົງທຶນໂດຍກົງຈາກຕ່າງປະເທດທັງໝົດ ແລະ ຫຼາຍກວ່າໜຶ່ງສ່ວນຫ້າຂອງການສົ່ງອອກທັງໝົດຕະຫຼອດທົດສະວັດທີ່ຜ່ານມາ. ບູລິມະສິດສຳລັບກະຊວງ ອຄ (MOIC) ໃນແຜນພັດທະນາ 5 ປີ (FYP) 2026-2030 ແມ່ນ ເພື່ອແກ້ໄຂບັນດາຂໍ້ຄົງຄ້າງຕ່າງໆໃນການອະນຸຍາດລົງທຶນບໍ່ແຮ່ໃໝ່, ປັບປຸງການຈັດຕັ້ງປະຕິບັດລະບົບການອອກອະນຸຍາດ ແລະ ທົບທວນນະໂຍບາຍການປຸງແຕ່ງແຮ່ທາດ ພ້ອມທັງໃຫ້ຄວາມສຳຄັນໃນການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ. ໃນຂະແໜງໄຟຟ້າ ແລະ ໄຟຟ້ານ້ຳຕົກ ບູລິມະສິດລວມມີ:

(i) ການຜັດທະນາທ່າແຮງໃນການສະໜອງໄຟຟ້າທີ່ໜ້າເຊື່ອຖື ໂດຍຜ່ານພະລັງງານທົດແທນ ແທນທີ່ຈະເປັນຖ່ານຫີນ.

(ii) ການເພີ່ມປະສິດທິພາບການວາງແຜນລະບົບໄຟຟ້ານ້ຳຕົກ.

(iii) ການປ່ຽນທິດທາງການລົງທຶນໃໝ່ໄປສູ່ການປັບປຸງລະບົບສາຍສົ່ງ ແລະ ລະບົບເຊື່ອມຕໍ່ກັບປະເທດເພື່ອນບ້ານ.

ລະບົບການອະນຸຍາດສຳປະທານໃນປັດຈຸບັນ ແມ່ນຢູ່ຫຼາຍກະຊວງ, ມີຫຼາຍຂັ້ນຕອນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ. ຂະບວນການທີ່ຫຍຸ້ງຍາກນີ້ເຮັດໃຫ້ເກີດຄວາມຊັກຊ້າ ແລະ ນຳໄປສູ່ການປະຕິບັດທີ່ບໍ່ເທົ່າທຽມກັນ ແລະ ບໍ່ໂປ່ງໃສ ເຊິ່ງສ້າງຄວາມບໍ່ຍືນຍົງ ແລະ ບໍ່ດຶງດູດນັກລົງທຶນທີ່ມີຄຸນນະພາບ.

ໃນໄລຍະ 5 ປີ ທາງ ກະຊວງ ອຄ ຈະປັບປຸງຂອດການຂໍສະເໜີອະນຸຍາດ ແລະ ການຕໍ່ໃບອະນຸຍາດຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດແຮ່ທາດ ແລະ ໃບອະນຸຍາດສຳຫຼວດ ໂດຍການມອບອຳນາດໃຫ້ແກ່ ກະຊວງ ອຄ. ເພື່ອຄວາມໂປ່ງໃສ, ກະຊວງ ອຄ ຈະເຜີຍແຜ່ເງື່ອນໄຂ ແລະ ຂັ້ນຕອນໃນການຂໍສະເໜີອະນຸຍາດ ແລະ ການຕໍ່ໃບອະນຸຍາດ. ກະຊວງ ອຄ ຈະພັດທະນາ ແລະ ດຳເນີນການນຳໃຊ້ລະບົບ Landfolio ຜ່ານທາງອອນລາຍ, ເຊິ່ງລະບົບນີ້ເປັນລະບົບຂໍ້ມູນອອນລາຍທີ່ຈະອຳນວຍຄວາມສະດວກໃນການຍື່ນຄຳຮ້ອງ, ການຕໍ່ອາຍຸໃບອະນຸຍາດ ແລະ ຂະບວນການທາງທຸລະກິດອື່ນໆ ຜ່ານລະບົບອອນລາຍ. ພ້ອມທັງ, ຈັດໃຫ້ມີການເຂົ້າເຖິງຂໍ້ມູນເຂດພື້ນທີ່ສຳປະທານແຮ່ທາດ (tenement) ຂອງຜູ້ຖືໃບອະນຸຍາດ ແລະ ນັກລົງທຶນທີ່ມີຄວາມເປັນໄປໄດ້. ວິທີການນີ້ຈະຊ່ວຍສົ່ງເສີມຄວາມໂປ່ງໃສໃນຂະແໜງທໍລະນີສາດ ແລະ ບໍ່ແຮ່ຂອງ ສປປ ລາວ.

ເຖິງແມ່ນວ່າ ຂະແໜງທໍລະນີສາດ ແລະ ບໍ່ແຮ່ຈະມີການຂະຫຍາຍຕົວໃນຊ່ວງ 2021-2025 ກໍຕາມ, ແຕ່ຍັງມີສິ່ງທີ່ທ້າທາຍ ທີ່ຕ້ອງໄດ້ມີການແກ້ໄຂ ເພື່ອເຮັດໃຫ້ອຸດສາຫະກຳບໍ່ແຮ່ຫັນປ່ຽນໄປສູ່ເສັ້ນທາງທີ່ຍືນຍົງຫຼາຍຂຶ້ນ. ບັນດາສິ່ງທີ່ທ້າຍ ລວມມີ:

ຂໍ້ຈຳກັດດ້ານງົບປະມານ ແລະ ວິຊາການ: ການສຳຫຼວດແຜນທີ່ທໍລະນີສາດໃຫ້ສຳເລັດຄົບຖ້ວນ ແລະ ວຽກງານສຳຄັນອື່ນໆນັ້ນ ແມ່ນຍັງມີຂໍ້ຈຳກັດທາງດ້ານການເງິນ ແລະ ວິຊາການ, ເຊິ່ງຍັງມີການເພິ່ງພາອາໄສການສະໜອງທຶນຈາກພາຍນອກຢ່າງຕໍ່ເນື່ອງ. ຄວາມຫຍຸ້ງຍາກທາງດ້ານເສດຖະກິດແຫ່ງຊາດ, ລວມທັງອັດຕາເງິນເຟີ້ສູງ, ໜີ້ສິນສາທາລະນະທີ່ບໍ່ຍືນຍົງ, ແລະ ຂໍ້ຈຳກັດສະພາບຄ່ອງຂອງເງິນຕາຕ່າງປະເທດ, ສາມາດສົ່ງຜົນກະທົບຕໍ່ຄວາມສາມາດຂອງຂະແໜງທໍລະນີສາດ ແລະ ບໍ່ແຮ່ໃນການດຶງດູດ, ຮັກສາການລົງທຶນ ແລະ ການປະກອບສ່ວນຕໍ່ງົບປະມານແຫ່ງຊາດ.

ການເພິ່ງພາອາໄສຊ່ຽວຊານຈາກຕ່າງປະເທດ: ເຖິງແມ່ນວ່າຄວາມຮ່ວມມືໃນພາກພື້ນ ແລະ ສາກົນຈະສ້າງຜົນປະໂຫຍດທີ່ດີ, ແຕ່ໄດ້ສະແດງໃຫ້ເຫັນເຖິງການຍັງເພິ່ງພາອາໄສຊ່ຽວຊານດ້ານວິຊາການ ແລະ ອຸປະກອນຈາກຕ່າງປະເທດ, ເຊິ່ງສາມາດສົ່ງຜົນກະທົບຕໍ່ການສ້າງຄວາມເຂັ້ມແຂງພາຍໃນປະເທດ ແລະ ການເພິ່ງຕົນເອງ.

ສະຖານທີ່ຕັ້ງໂຄງການບໍ່ແຮ່ທີ່ຢູ່ຫ່າງໄກສອກຫລີກ: ສະຖານທີ່ຕັ້ງໂຄງການບໍ່ແຮ່ທີ່ຢູ່ຫ່າງໄກສອກຫລີກ ຜູ້ລົງທຶນແມ່ນມີຄວາມຈຳເປັນຕ້ອງໄດ້ສ້າງໂຄງລ່າງພື້ນຖານດ້ວຍຕົນເອງ, ເຊິ່ງເພີ່ມໄລຍະເວລາການກໍ່ສ້າງບໍ່ແຮ່, ງົບປະມານ ແລະ ຕົ້ນທຶນການດຳເນີນງານທີ່ສູງຂຶ້ນ.

ການບັງຄັບໃຊ້ກົດໝາຍ ແລະ ການຈັດຕັ້ງປະຕິບັດດ້ານຕາມລະບຽບການ ທີ່ຍັງບໍ່ເຂັ້ມງວດ: ເຖິງວ່າຈະມີການປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ, ແຕ່ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງດັ່ງກ່າວ ແມ່ນຍັງບໍ່ທັນເຂັ້ມງວດ ເນື່ອງຈາກມີຂໍ້ຈຳກັດທາງດ້ານຄວາມສາມາດ, ການຕິດຕາມກວດກາທີ່ຍັງບໍ່ທັນທົ່ວເຖິງ ແລະ ບັນຫາການປະສານງານລະຫວ່າງກະຊວງ ແລະ ລະດັບຂັ້ນບໍລິຫານຕ່າງໆ. ບັນຫາເຫຼົ່ານີ້ເປັນສາເຫດນຳໄປສູ່ການຂຸດຄົ້ນບໍ່ແຮ່ທີ່ຜິດກົດໝາຍ, ສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ ແລະ ເປັນປະກົດການຫຍໍ້ທໍ້ໃນສັງຄົມ.

ການຂຸດຄົ້ນບໍ່ແຮ່ຂະໜາດນ້ອຍ ແລະ ຫັດຖະກຳ ທີ່ບໍ່ເປັນທາງການ (ASM): ASM ມັກຈະດຳເນີນໄປຢູ່ໃນ “ເຂດທີ່ການບັງຄັບໃຊ້ກົດໝາຍຍັງບໍ່ທັນເຂັ້ມງວດ ແລະ ຄຸມເຄືອ” (legal grey zone), ເຊິ່ງກໍ່ໃຫ້ເກີດບັນຫາຄວາມເສື່ອມໂຊມຂອງທີ່ດິນ ແລະ ມົນລະພິດ, ແລະ ເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ການຄຸ້ມຄອງ ເນື່ອງຈາກຍັງມີຂອບເຂດທີ່ຄຸມເຄືອກັບໂຄງການສຳປະທານຂະໜາດໃຫຍ່ ແລະ ມີຄວາມຫຍຸ້ງຍາກໃນຫັນເຂົ້າສູ່ລະບົບກົນໄກ ແລະ ການຄວບຄຸມກິດຈະກຳເຫຼົ່ານີ້ ຢ່າງເປັນທາງການ.

ຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ: ການດຳເນີນການຂຸດຄົ້ນບໍ່ແຮ່ສາມາດນຳໄປສູ່ຂໍ້ຂັດແຍ້ງດ້ານທີ່ດິນ, ເກີດມົນລະພິດທາງນ້ຳ, ການເຊາະເຈື່ອນຂອງແຄມແມ່ນ້ຳ ແລະ ຜົນກະທົບທາງລົບຕໍ່ຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນ ຫາກບໍ່ໄດ້ຮັບການຄຸ້ມຄອງຢ່າງຖືກຕ້ອງ. ສະນັ້ນ, ການຮັບປະກັນການແບ່ງປັນຜົນປະໂຫຍດຢ່າງເທົ່າທຽມລະຫວ່າງ ຊຸມຊົນທ້ອງຖິ່ນ ແລະ ຜູ້ລົງທຶນ ຍັງຄົງເປັນສິ່ງທີ່ທ້າທາຍ.

ສປປ ລາວ ມີຊັບພະຍາກອນແຮ່ທາດທີ່ອຸດົມສົມບູນ ແລະ ຫຼາກຫຼາຍ. ການໝູນໃຊ້ຄວາມຮັ່ງມີທາງດ້ານຊັບພະຍາກອນແຮ່ທາດເຫຼົ່ານີ້ ໄດ້ກາຍເປັນໂອກາດທີ່ສຳຄັນໃນການພັດທະນາເສດຖະກິດແຫ່ງຊາດ. ເພື່ອປົດລັອກທ່າແຮງທາງດ້ານເສດຖະກິດຂອງຊັບພະຍາກອນແຮ່ທາດເຫຼົ່ານີ້ ເພີ່ມຂຶ້ນ, ສປປ ລາວ ສາມາດ ດຳເນີນຕາມສາມເສັ້ນທາງຍຸດທະສາດ ຄື: **ການເພີ່ມການສຳຫຼວດແຮ່ທາດ ເພື່ອສາມາດກຳນົດແຫລ່ງແຮ່ໃໝ່ ແລະ ກຳນົດຄວາມເປັນໄປໄດ້ທາງດ້ານເສດຖະກິດຂອງແຫລ່ງແຮ່, ການຂຸດຄົ້ນໃຫ້ໄດ້ຫຼາຍຂຶ້ນຈາກແຫລ່ງ ແລະ ປະລິມານແຮ່ທາດທີ່ມີຂໍ້ມູນຢູ່ແລ້ວໃນປັດຈຸບັນ ແລະ ການພັດທະນາທ່າແຮງການປຸງແຕ່ງປາຍນ້ຳ (downstream) ໂດຍຜ່ານຂະແໜງການຜະລິດ/ອຸດສາຫະກຳ.**

ກະຊວງ ອຄ ໄດ້ນຳໃຊ້ວິທີການຢ່າງເປັນລະບົບ ໃນການປະເມີນ ຄວາມດຶງດູດທາງດ້ານການຄ້າຂອງແຮ່ທາດແຕ່ລະຊະນິດ ແລະ ແຮ່ທາດທີ່ມີໂອກາດ/ທ່າແຮງໃນການສ້າງຜົນປະໂຫຍດ ຫຼື ພັດທະນາ ໃນເມື່ອເວລາທີ່ເໝາະສົມ (right-to-win) ເພື່ອໃຫ້ສາມາດກຳນົດໄດ້ແຮ່ທາດຍຸດທະສາດ ທີ່ເປັນບູລິມະສິດເຂົ້າໃນການພັດທະນາພາຍໃຕ້ແຜນ 5 ປີ ສະບັບນີ້. ຄວາມດຶງດູດທາງດ້ານການຄ້າໄດ້ຖືກປະເມີນ ໂດຍການກວດກາປັດໄຈພາຍນອກ ເຊັ່ນ: ການເຕີບໂຕຂອງຄວາມຕ້ອງການ ແລະ ແນວໂນ້ມຂອງການສະໜອງແຮ່ທາດທັງໃນ ພາກພື້ນ ແລະ ທົ່ວໂລກ ຈົນເຖິງປີ 2030. ແຮ່ທາດທີ່ມີໂອກາດ/ທ່າແຮງໃນການສ້າງຜົນປະໂຫຍດ ຫຼື ພັດທະນາ ໃນເມື່ອເວລາທີ່ເໝາະສົມ (right-to-win) ໄດ້ຖືກກຳນົດ ໂດຍຜ່ານການປະເມີນຂໍ້ໄດ້ປຽບທາງດ້ານຊັບພະຍາກອນທຳມະຊາດຂອງ ສປປ ລາວ ແລະ ການດຳເນີນງານການຂຸດຄົ້ນບໍ່ແຮ່ທີ່ມີຢູ່ໃນປະຈຸບັນ.

ການປະເມີນເພື່ອສ້າງແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ (2026-2030) ແມ່ນໄດ້ມີການປຶກສາຫາລືກັບຜູ້ຊ່ຽວຊານ, ເຮັດວຽກຮ່ວມກັບຂະແໜງການ ແລະ ການສົນທະນາກັບການນຳແຕ່ລະຂັ້ນ, ພ້ອມທັງການວິເຄາະຂໍ້ມູນຕະຫຼາດພາຍນອກ ແລະ ແນວໂນ້ມຂະແໜງການໃນພາກພື້ນ. ຜົນໄດ້ຮັບຂອງການປະເມີນນີ້ໄດ້ກາຍເປັນພື້ນຖານໃຫ້ແກ່ການວິເຄາະ ສຳລັບການກຳນົດແຮ່ທາດບູລິມະສິດ ທີ່ມີຄວາມດຶງດູດນັກລົງທຶນ ແລະ ສ້າງຜົນປະໂຫຍດ ຫຼື ພັດທະນາ ໃນເມື່ອເວລາທີ່ເໝາະສົມ (right-to-win) ຂອງ ສປປ ລາວ ພາຍໃຕ້ການຈັດຕັ້ງປະຕິບັດແຜນສະບັບນີ້.

ຜົນໄດ້ຮັບຂອງການປະເມີນນີ້ ສາມາດກຳນົດໄດ້ 5 ແຮ່ທາດບູລິມະສິດຫຼັກຄື: **ແຮ່ບ໊ົກຊິດ (bauxite), ໂປຕາສ (potash), ຄຳ (gold), ທອງ (copper) ແລະ ແຮ່ທາດຫາຍາກ (rare earths).** ໃນໄລຍະ 5 ປີຂ້າງໜ້າ, ຂະແໜງທໍລະນີສາດ ແລະ ບໍ່ແຮ່ຈະຫັນປ່ຽນຈາກອຸດສາຫະກຳທີ່ເອື້ອຍອີງການຂຸດຄົ້ນແຮ່ດິບ ໄປສູ່ເສດຖະກິດບໍ່ແຮ່ທີ່ມີການເພີ່ມມູນຄ່າແບບປະສົມປະສານ. ການຫັນປ່ຽນນີ້ຈະເນັ້ນໄປໃສ່ການປະສົມປະສານ ລະຫວ່າງ ການສ້າງກຸ່ມຕ່ອງໂສ້ອຸດສາຫະກຳແຮ່ທາດ (cluster plays) ແລະ ກຸ່ມຕ່ອງໂສ້ສະເພາະແຮ່ທາດທີ່ມີມູນຄ່າສູງ (pure-plays), ເຊິ່ງແຕ່ລະກຸ່ມແມ່ນສ້າງຂຶ້ນມາເພື່ອທີ່ຈະສ້າງມູນຄ່າເພີ່ມພາຍໃນປະເທດ, ສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມອາດສາມາດໃນການແຂ່ງຂັນໃນພາກພື້ນ ແລະ ສອດຄ່ອງຕາມຄາດໝາຍກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງທໍລະນີສາດ ແລະ ບໍ່ແຮ່ ໃນ ສປປ ລາວ.

ກຸ່ມຕ່ອງໂສ້ອຸດສາຫະກຳ ກຸ່ມທີ 1: ກຸ່ມອຸດສາຫະກຳບົກຊິດ (Bauxite) - ປຸງແຕ່ງເປັນ - ອາລູມິນາ(Alumina)

ແຮ່ບົກຊິດ (Bauxite) ໄດ້ຖືກກຳນົດເປັນແຮ່ບູລິມະສິດ ດ້ວຍເຫດຜົນ ຄື: ເປັນແຮ່ທາດທີ່ສຳຄັນ ຂອງ ສປປ ລາວ, ເຊິ່ງມີປະມານ 800 ລ້ານໂຕນ ທີ່ໄດ້ຖືກຄົ້ນພົບຢູ່ເຂດພູພຽງບໍລິເວນ ແລະ ມີທ່າແຮງໃນການສຸ່ມໃສ່ສ້າງ ເປັນ ລະບົບຕ່ອງໂສ້ອຸດສາຫະກຳ ບົກຊິດເປັນອາລູມິນາ, ເຊິ່ງລວມເອົາ ການຂຸດຄົ້ນແຮ່ບົກຊິດຢູ່ພາຍໃນ ເຂົ້າກັບການປຸງແຕ່ງ ເສີມຄຸນຄ່າແຮ່ທາດ ແລະ ການສົ່ງອອກໃນພາກພື້ນ. ຄວາມຕ້ອງການອາລູມິນາໃນຂົງເຂດ ປະເທດໄທ ແລະ ຫວຽດນາມ ຄາດວ່າຈະເຕີບໂຕໃນອັດຕາ CAGR ຫຼາຍກວ່າ 6%, ເຊິ່ງຈະສ້າງໂອກາດອັນສຳຄັນ ໃຫ້ແກ່ ສປປ ລາວ ໃນການຍົກລະດັບຕ່ອງໂສ້ອຸດສາຫະກຳ.

ປະຈຸບັນ, ສປປ ລາວ ສົ່ງອອກແຮ່ດິບບົກຊິດ ໂດຍບໍ່ມີການປຸງແຕ່ງເປັນອາລູມິນາຢູ່ພາຍໃນປະເທດ, ການ ພັດທະນາອຸດສາຫະກຳ ການຂຸດຄົ້ນແຮ່ບົກຊິດແບບລວມກັນເພື່ອໃຫ້ມີໂຮງງານປຸງແຕ່ງອາລູມິນາ ຈະຊ່ວຍໃຫ້ ສປປ ລາວ ສາມາດເຂົ້າຮ່ວມເປັນຜູ້ຫລິ້ນໃນລະບົບຕ່ອງໂສ້ການສະໜອງອາລູມິນຽມໃນພາກພື້ນ. ການຫັນປ່ຽນຈາກການສົ່ງ ອອກວັດຖຸດິບໄປສູ່ການປຸງແຕ່ງທີ່ເພີ່ມມູນຄ່າ ສອດຄ່ອງກັບເປົ້າໝາຍການພັດທະນາເສດຖະກິດແຫ່ງຊາດໃນ ການຫັນ ເປັນອຸດສາຫະກຳທັນສະໄໝ, ການໃຊ້ໂຄງລ່າງພື້ນຖານແບບປະສົມປະສານ ແລະ ການສົ່ງອອກຫຼາກຫລາຍສິນຄ້າ. ວຽກຈຸດສຸມໃນເບື້ອງຕົ້ນແມ່ນສຸມໃສ່ການປຸງແຕ່ງບົກຊິດເປັນອາລູມິນາ, ໂດຍຈະມີການພິຈາລະນາການຫຼອມເປັນອາລູ ມິນຽມ ຫຼັງປີ 2030 ເມື່ອສາມາດບັນລຸໄດ້ທາງດ້ານການສະໜອງພະລັງງານໄຟຟ້າທີ່ມີຄວາມໜ້າເຊື່ອຖື/ສະຖຽນ ແລະ ຂະແໜງອຸດສາຫະກຳໄດ້ມີການເຕີບໃຫຍ່ຂະຫຍາຍຕົວ.

ສະພາບປັດຈຸບັນ:

- ແຮ່ດິບບົກຊິດຖືກສົ່ງອອກໄປຕ່າງປະເທດ ໂດຍບໍ່ມີການປຸງແຕ່ງພາຍໃນປະເທດ. ການຕັ້ງເງື່ອນໄຂໃຫ້ມີການ ຂຸດຄົ້ນບໍ່ແຮ່ພ້ອມກັບການສ້າງໂຮງງານປຸງແຕ່ງ ແມ່ນຖືວ່າເປັນຂໍ້ຈຳກັດໃນການລົງທຶນ ຈາກມຸມມອງຂອງນັກ ລົງທຶນ.

ເປົ້າໝາຍ (ຮອດປີ 2030):

- ຄາດຄະເນໃຫ້ມີບໍ່ແຮ່ບົກຊິດ 1 ແຫ່ງ ແລະ ໂຮງງານປຸງແຕ່ງອາລູມິນາ 1 ແຫ່ງ (ຄວາມສາມາດໃນການຜະລິດ ປະມານ 1 ລ້ານໂຕນຕໍ່ປີ), ດ້ວຍການຜະລິດບົກຊິດປະມານ 4 ລ້ານໂຕນຕໍ່ປີ, ໂດຍໝູນໃຊ້ແລວທາງການ ຂົນສົ່ງໃນພາກພື້ນກັບຫວຽດນາມ ແລະ ໄທ.

ກຸ່ມຕ່ອງໂສ້ອຸດສາຫະກຳ ກຸ່ມທີ 2: ກຸ່ມ ໂປຕາສ-ເປັນ-ປຸ໋ຍ

ເກືອໂປຕາສແມ່ນມີຄວາມພົ້ນເດັ່ນ ແລະ ເປັນແຮ່ທາດບູລິມະສິດທີ່ມີທ່າແຮງສູງ ຍ້ອນມີປະລິມານຊັບພະຍາກອນ ຫຼວງຫຼາຍ, ເຊິ່ງ ໃນ ສປປ ລາວ ມີຂໍ້ມູນເບື້ອງຕົ້ນປະລິມານແຮ່ໂປຕາສ ປະມານ 6.8 ຕື້, ເຊິ່ງເປັນໂອກາດພິເສດຈະເຮັດ ໃຫ້ ສປປ ລາວ ກາຍເປັນສູນກາງຜະລິດປຸ໋ຍໃນພາກພື້ນ ເພື່ອຊຸກຍູ້ໃຫ້ແກ່ການຜະລິດກະສິກຳ ແລະ ການສົ່ງອອກທີ່ມີ ຫຼາກຫຼາຍສິນຄ້າ. ຄວາມຕ້ອງການໂປຕາສເພື່ອຜະລິດປຸ໋ຍໃນພາກພື້ນແມ່ນເພີ່ມຂຶ້ນໃນອັດຕາສະເລ່ຍ (CAGR) ຫຼາຍ ກວ່າ 5%, ການເພີ່ມຂຶ້ນດັ່ງກ່າວແມ່ນໄດ້ຮັບການຂັບເຄື່ອນໂດຍພາກກະສິກຳໃນປະເທດໄທ, ຫວຽດນາມ ແລະ ຈີນ. ສປປ ລາວຈະພັດທະນາລະບົບຕ່ອງໂສ້ມູນຄ່າຢ່າງເຕັມສ່ວນຈາກການຂຸດຄົ້ນເກືອໂປຕາສໄປສູ່ການຜະລິດເປັນປຸ໋ຍ NPK, ຫຼຸດຜ່ອນການນຳເຂົ້າປຸ໋ຍ ແລະ ວາງຕຳແໜ່ງ ສປປ ລາວ ໃຫ້ກາຍເປັນຜູ້ສະໜອງໃນຂົງເຂດ/ພາກພື້ນ. ການ ຜະລິດເປັນປຸ໋ຍນັ້ນ ແມ່ນຈະນຳໃຊ້ແຮ່ເກືອໂປຕາສທີ່ມີຢູ່ແລ້ວ ແລະ ສ້າງເງື່ອນໄຂດຶງດູດການລົງທຶນໃຫ້ມີໂຮງງານປຸ໋ຍ ປະມານ **2 ຫາ 4 ແຫ່ງ.** ວຽກຈຸດສຸມແມ່ນແນ່ໃສ່ໃຫ້ມີ ການດຳເນີນການຂຸດຄົ້ນບໍ່ແຮ່ແບບຍືນຍົງ, ມີມາດຕະຖານການ

ອອກໃບອະນຸຍາດທີ່ມີຄວາມໝັ້ນຄົງ ແລະ ມີຂັ້ນຕອນກຳນົດຂອບການຊື້-ຂາຍໂປຕາສໃຫ້ແກ່ຜູ້ຜະລິດປຸ໋ຍພາຍໃນ ປະເທດ (domestic offtake frameworks) ທີ່ຮັບປະກັນການສະໜອງໂປຕາສໃຫ້ແກ່ຜູ້ຜະລິດປຸ໋ຍທ້ອງຖິ່ນ.

ສະພາບປັດຈຸບັນ

- ການອະນຸມັດຂຸດຄົ້ນເກືອໂປຕາສໃໝ່ໄດ້ຖືກໂຈະໄວ້ ເນື່ອງຈາກບັນຫາ ດ້ານສິ່ງແວດລ້ອມ, ສັງຄົມ ແລະ ການ ຄຸ້ມຄອງ (ESG) ກ່ຽວກັບພື້ນທີ່ດິນ, ທີ່ດິນເສື່ອມໂຊມ ແລະ ການຍຸບຕົວຂອງດິນ; ປະຈຸບັນປຸ໋ຍທີ່ຊົມໃຊ້ ພາຍໃນປະເທດທັງໝົດແມ່ນເປັນສິນຄ້ານຳເຂົ້າ.

ເປົ້າໝາຍ (ຮອດປີ 2030):

- ຄາດຄະເນມີບໍ່ເກືອໂປຕາສ 1 ຫາ 2 ແຫ່ງ ທີ່ເຄື່ອນມາຈາກໂຄງການທີ່ລັດຖະບານໄດ້ອະນຸມັດໃຫ້ຂຸອກຄົ້ນ-ສຳ ຫຼວດມາກ່ອນແລ້ວ ແລະ ໄດ້ສຳເລັດການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໂດຍການປະ ເມີນຈາກທີ່ປຶກສາເອກະລາດທີສາມ ທີ່ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ. ພ້ອມນີ້ ຊຸ້ຍຸກໃຫ້ ມີໂຮງງານຜະລິດປຸ໋ຍຢູ່ພາຍໃນປະເທດ ໃຫ້ໄດ້ 2 ຫາ 4 ແຫ່ງ (ມີກຳລັງການຜະລິດປຸ໋ຍປະມານ 200,000 ໂຕນຕໍ່ປີຈາກແຕ່ລະໂຮງງານ) ເພື່ອບໍລິການໃຫ້ຕະຫຼາດພາຍໃນ ແລະ ສົ່ງອອກ.

ກຸ່ມຕ່ອງໂສ້ສະເພາະແຮ່ທາດທີ່ມີມູນຄ່າສູງ ກຸ່ມທີ 1: ແຮ່ຄຳ ແລະ ແຮ່ທອງ

ແຮ່ຄຳ ແລະ ແຮ່ທອງ ໄດ້ຖືກກຳນົດເປັນແຮ່ບູລິມະສິດຫຼັກ ເນື່ອງຈາກວ່າເປັນແຮ່ທາດທີ່ມີການຂຸດຄົ້ນຜະລິດຢູ່ ພາຍໃນປະເທດມາຫຼາຍປີແລ້ວ, ມີການປະກອບສ່ວນພັນທະທາງດ້ານການເງິນ ແລະ ມີທ່າແຮງຄວາມຕ້ອງການໃນ ໄລຍະຍາວທີ່ເຂັ້ມແຂງ. ຄວາມຕ້ອງການແຮ່ທອງໃນທົ່ວໂລກຄາດວ່າຈະເກີນຄວາມອາດສາມາດໃນການສະໜອງປະຈຸ ບັນ ປະມານ 3 ຫາ 4 ລ້ານໂຕນຕໍ່ປີ ຮອດປີ 2030, ເຊິ່ງ ສະທ້ອນໃຫ້ເຫັນເຖິງບົດບາດອັນສຳຄັນຂອງແຮ່ທອງໃນອຸດ ສາຫະກຳທົ່ວໂລກ, ໃນຂະນະທີ່ແຮ່ຄຳກໍ່ຍັງຄົງເປັນຊັບສິນການລົງທຶນທີ່ໝັ້ນຄົງ.

ສປປ ລາວ ຈະເປີດຄືນອະນຸຍາດກິດຈະການສຳຫຼວດ ໂດຍຜ່ານຂັ້ນຕອນ (ວິທີການ) ແບບເລືອກເຟັ້ນ ໃນການ ອະນຸຍາດໃຫ້ນັກລົງທຶນທີ່ມີຄຸນສົມບັດ ທີ່ປະຕິບັດຕາມຫຼັກການປົກປັກຮັກສາສິ່ງແວດລ້ອມ-ສັງຄົມ ESG ເພື່ອດຳ ເນີນການສຳຫຼວດທໍລະນີສາດໃໝ່ ແລະ ສຳຫຼວດໃນພື້ນທີ່ທີ່ລັດຖະບານໄດ້ກຳນົດໄວ້. ວິທີການນີ້ຈະເຮັດໃຫ້ມີການສຳ ຫຼວດແຮ່ທາດໃນເຂດທີ່ຍັງບໍ່ທັນໄດ້ມີການສຳຫຼວດມາກ່ອນ, ສ້າງຂໍ້ມູນຊັບພະຍາກອນແຮ່ທາດໃໝ່ ແລະ ວາງພື້ນຖານ ສຳລັບການລົງທຶນບໍ່ແຮ່ທີ່ມີຄວາມຮັບຜິດຊອບໃນອະນາຄົດ.

ສະພາບປັດຈຸບັນ:

- ການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳທີ່ໄດ້ດຳເນີນມາເປັນເວລາດົນນານແລ້ວ, ໂຄງການສຳຫຼວດ ແລະ ການຂຸດ ຄົ້ນໃໝ່ ແມ່ນໄດ້ຢຸດເຊົາຊົ່ວຄາວເພື່ອປະເມີນຄືນໂຄງການທີ່ໄດ້ອະນຸມັດໄປແລ້ວນັ້ນ.

ເປົ້າໝາຍ (ຮອດປີ 2030):

- ຄາດຄະເນໃຫ້ມີບໍ່ແຮ່ຄຳ ແລະ ທອງ 2 ຫາ 3 ແຫ່ງ ແລະ ໃຫ້ມີການສຳຫຼວດໃໝ່ ແລະ ຈະອະນຸຍາດໃຫ້ມີ ໂຄງການຂຸດຄົ້ນ-ປຸງແຕ່ງເປີດໃໝ່ ພາຍໃຕ້ຂັ້ນຕອນຂອບວຽກ (framework) ກ່ຽວກັບການອອກອະນຸຍາດ ທີ່ມີຄວາມໂປ່ງໃສ ແລະ ມີຄວາມໝັ້ນຄົງ.

ກຸ່ມຕ່ອງໂສ້ສະເພາະແຮ່ທາດທີ່ມີມູນຄ່າສູງ ກຸ່ມທີ 2: ແຮ່ທາດຫາຍາກ

ສຳລັບ ສປປ ລາວ ແຮ່ທາດຫາຍາກ ເປັນໂອກາດທາງດ້ານຍຸດທະສາດໃນມຸມມອງຂອງການພັດທະນາໃນຕໍ່ ໜ້າ. ເນື່ອງຈາກເປັນແຮ່ທາດທີ່ມີທ່າແຮງໃນລາວ ແລະ ຄວາມຕ້ອງການໃນທົ່ວໂລກຄາດວ່າຈະເພີ່ມຂຶ້ນຢ່າງໄວວາ

ຮອດປີ 2030, ແຮ່ທາດຫາຍາກ ສາມາດເຮັດໃຫ້ ສປປ ລາວ ມີບົດບາດໃນລະບົບຕ່ອງໂສ້ການສະ ໜອງແຮ່ທາດທີ່ສຳ ຄັນໃນທົ່ວໂລກ. ແຮ່ທາດຫາຍາກແມ່ນນຳໃຊ້ເຂົ້າໃນ ລົດໄຟຟ້າ, ກັງຫັນລົມ, ເຄື່ອງເອເລັກໂຕຣນິກ ແລະ ອື່ນໆ ເຮັດ ໃຫ້ແຮ່ທາດຫາຍາກເປັນສິ່ງຈຳເປັນສຳລັບ ໄລຍະການປ່ຽນຜ່ານພະລັງງານ. ສປປ ລາວ ໄດ້ວາງແຜນການທີ່ຈະເລັ່ງລັດ ການພັດທະນາການຂຸດຄົ້ນແຮ່ທາດຫາຍາກ ພາຍໃຕ້ມາດຕະການຕິດຕາມ, ກວດກາ ດ້ານສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງ (ESG) ທີ່ເຂັ້ມງວດ ໂດຍຜ່ານໂຄງການຕົວແບບທົດລອງທີ່ມີການຄວບຄຸມ ຫຼື sandbox ແລະ ສ້າງ ຕົນເອງໃຫ້ກາຍເປັນຜູ້ສະໜອງແຮ່ທາດຫາຍາກທາງເລືອກໃຫ້ແກ່ຕະຫຼາດທີ່ກຳລັງຂະຫຍາຍຕົວ ເຊັ່ນ ສປ ຈີນ.

ສະພາບປັດຈຸບັນ:

- ຍັງເປັນການສຳຫຼວດຂະໜາດນ້ອຍ ແລະ ເປັນການຂຸດຄົ້ນແບບທົດລອງ.

ເປົ້າໝາຍ (ຮອດປີ 2030):

- ຄາດຄະເນໃຫ້ມີບໍ່ແຮ່ທາດຫາຍາກ 1 ຫາ 2 ແຫ່ງ ດຳເນີນໄປດ້ວຍຮູບແບບການຄັດເລືອກເອົາຜູ້ລົງທຶນທີ່ເປັນ ເປົ້າໝາຍ (targeted anchor partner model) ແລະ ມີທ່າແຮງໃນການປຸງແຕ່ງອຸດສາຫະກຳປາຍນ້ຳ (midstream processing) ຫຼັງປີ 2030.

ນອກຈາກ 5 ແຮ່ທາດ ທີ່ເປັນບູລິມະສິດແລ້ວ, ກະຊວງ ອຄ ຍັງໄດ້ວາງແຜນຊຸກຍູ້ສິ່ງເສີມ ແລະ ພັດທະນາ ບັນດາແຮ່ທາດອື່ນໆ ທີ່ໄດ້ອະນຸມັດໃນໄລຍະຜ່ານມາ ໃຫ້ມີການປຸງແຕ່ງຍົກມູນຄ່າເພີ່ມເພື່ອສະໜອງແກ່ອຸດສາຫະກຳຕ່ຳ ເນື່ອງ, ພ້ອມນີ້ເພີ່ມທະວີສຶກສາຄົ້ນຄວ້າພິຈາລະນາຕາມຄວາມເໝາະສົມ ຂອງແຕ່ລະແຮ່ທາດທີ່ມີທ່າແຮງ ແລະ ຄວາມ ຕ້ອງການຂອງຕະຫຼາດໃນແຕ່ລະໄລຍະ ເນື່ອງຈາກລາຄາແຮ່ທາດສ່ວນໃຫຍ່ແມ່ນອີງຕາມລາຄາຂຶ້ນລົງຂອງຕະຫລາດ ສາກົນ, ເຊິ່ງມີແຮ່ທາດດັ່ງນີ້: ແຮ່ເຫຼັກ, ກົ່ວ, ຊຶນ, ສັງກະສີ, ບາຣິດ, ຫີນກາວ, ຫີນປູນ, ຫີນມາໂບ້, ຫີນກຣານິດ, ຫີນ ກວາສ ແລະ ຖ່ານຫີນ,...

ເປົ້າໝາຍສຳຄັນສຳລັບຂະແໜງທໍລະນີສາດ ແລະ ບໍ່ແຮ່ປະກອບມີ:

1. ອັດຕາການເຕີບໂຕສະເລ່ຍຕໍ່ປີຂອງຂະແໜງທໍລະນີສາດ ແລະ ບໍ່ແຮ່ຢູ່ທີ່ 2.3% (ຕາມມູນຄ່າ)
2. 50% ຂອງໂຄງການລົງທຶນບໍ່ແຮ່ໃໝ່ທີ່ບັນລຸມາດຕະຖານຄຸນນະພາບທີ່ໄດ້ກຳນົດໄວ້.

ເພື່ອຮັບປະກັນການເຕີບໂຕແບບຍືນຍົງ ແລະ ສ້າງຜົນປະໂຫຍດສູງສຸດຈາກຊັບພະຍາກອນແຮ່ທາດ, ສປປ ລາວ ຄວນໃຫ້ຄວາມສຳຄັນຕໍ່ກັບ **ຄຳແນະນຳທາງດ້ານນະໂຍບາຍ** ດັ່ງຕໍ່ໄປນີ້:

1. **ສຳເລັດການສຳຫຼວດແຜນທີ່ທໍລະນີສາດໃນຂອບເຂດທົ່ວປະເທດ**

(i) ຮັບປະກັນການສະໜອງທຶນຈາກພາຍໃນ ແລະ ສາກົນ ເພື່ອໃຫ້ສຳເລັດການສຳຫຼວດແຜນທີ່ທໍລະນີສາດ-ແຮ່ ທາດໃນອັດຕາສ່ວນ 1:200,000 ທີ່ຍັງເຫຼືອ ແລະ ເລັ່ງການສຳຫຼວດແຜນທີ່ໃນອັດຕາສ່ວນ 1:50,000 ໃນພື້ນທີ່ແຮ່ທາດຍຸດທະສາດ. ສິ່ງເຫຼົ່ານີ້ຈະເຮັດໃຫ້ມີຖານຂໍ້ມູນຊັບພະຍາກອນແຮ່ທາດທີ່ຄົບຖ້ວນສຳລັບ ການພັດທະນາໃນອະນາຄົດ.ໂດຍສະເໜີລັດຖະບານພິຈາລະນາອະນຸມັດງົບປະມານໃນການດຳເນີນການສຳ ຫຼວດ ຫຼື ຍາດແຍ່ງທຶນຊ່ວຍເຫຼືອຫຼ້າຈາກພາກພື້ນ ແລະ ສາກົນ.

2. **ສືບຕໍ່ສຸມໃສ່ການປະເມີນຜົນໂຄງການທີ່ໄດ້ຮັບອະນຸຍາດຊອກຄົ້ນ-ສຳຫຼວດ ແລະ ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທີ່ໄດ້ຮັບອະນຸມັດໄປແລ້ວນັ້ນ.**

(ii) ປະເມີນຕີລາຄາ ເພື່ອຊອກຫາສາເຫດທີ່ເຮັດໃຫ້ບັນດາໂຄງການດັ່ງກ່າວບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມກົດ ໝາຍ, ລະບຽບການ ແລະ ສັນຍາກຳນົດ. ພາກລັດຈະຕ້ອງໄດ້ເຂັ້ມງວດໃນການຍົກເລີກໂຄງການ ເພື່ອບໍ່ໃຫ້ ເປັນການຈັບຈອງເນື້ອທີ່ສຳປະທານ ແລະ ແກ່ຍາວໃນການພັດທະນາໂຄງລ່າງພື້ນຖານເຂດໂຄງການຕັ້ງຢູ່

ແລະ ເຮັດໃຫ້ມີຜົນກະທົບຕໍ່ເສດຖະກິດແຫ່ງຊາດ. ພ້ອມນີ້, ລັດຖະບານຈະຕ້ອງມີກົນໄກໃນການມີສ່ວນຮ່ວມເຂົ້າໄປສຳຫຼວດ ແລະ ຕິດຕາມກວດກາ ບັນດາໂຄງການຊອກຄົ້ນ-ສຳຫຼວດ ແລະ ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນແຕ່ລະໄລຍະ ຂອງໂຄງການ ເພື່ອໃຫ້ມີຂໍ້ມູນຊັດເຈນ, ຖ້າຫາກພົບວ່າໂຄງການໃດ ບໍ່ມີຄວາມອາດສາມາດທາງດ້ານວິຊາການ, ທຶນຮອນ ແລະ ປະສົບການ ລັດຖະບານຕ້ອງເປັນເຈົ້າການ ໃນການຊອກຫາຜູ້ລົງທຶນໃໝ່ ຫຼື ຄັດເລືອກນັກລົງທຶນດ້ວຍລະບົບການປະມູນ ເພື່ອມາສືບຕໍ່ໂຄງການ.

3. ການສ້າງຄັງສະສົມໂລຫະຄຳແຫ່ງແຫ່ງຊາດ ໂດຍຫັກ 50% ຂອງຄ່າຊັບພະຍາກອນຄຳ ເພື່ອເປັນຫຼັກຊັບຄ้ำປะกันให้แก่ลัดถะบาน

(iii) ການສ້າງຄັງສະສົມໂລຫະຄຳແຫ່ງແຫ່ງຊາດ ໂດຍຫັກ 50% ຂອງຄ່າຊັບພະຍາກອນຄຳເພື່ອເປັນຫລັກຊັບຄ้ำປะกันหมายว่า: ການຫັກ 50% ຂອງມູນຄ່າຊັບພະຍາກອນຄຳທີ່ໄດ້ຈາກລາຍຮັບຈາກການຂາຍເກັບເປັນເງິນສົດ (ແບ່ງສອນ 50% ຈາກຄ່າຊັບພະຍາກອນແລ້ວເກັບເປັນໂລຫະຄຳບໍລິສຸດ) ເພື່ອເກັບຄຳໄວ້ເປັນຫລັກຊັບຄ้ำปะกัน, ຜ່ານມາແມ່ນເກັບເປັນເງິນສົດເຂົ້າຄັງເງິນແຫ່ງຊາດ ແລະ ໄດ້ໝຸນໃຊ້ຈ່າຍເຂົ້າໃນງົບປະມານລັດ.

4. ການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງບໍ່ແຮ່ ແລະ ການບັງຄັບໃຊ້ກົດໝາຍ

(iv) ເປີດນຳໃຊ້ລະບົບການອອກອະນຸຍາດທີ່ມີຄວາມໂປ່ງໃສ ເພື່ອປັບປຸງຂະບວນການຂໍອອກ, ຕໍ່, ໂຈະ, ລຶບລ້າງ ແລະ ຕິດຕາມກວດກາ ກິດຈະການກ່ຽວກັບແຮ່ທາດ, ເຊິ່ງລະບົບນີ້ຈະຊ່ວຍເຮັດໃຫ້ ສິດ, ຄວາມຮັບຜິດຊອບ ໃນການອະນຸມັດທີ່ກະຈາຍຢູ່ໃນບັນດາກະຊວງ ມີຄ່ອງຕົວຂຶ້ນ, ມີມາດຕະຖານຂັ້ນຕອນໃນການຍື່ນຄຳຮ້ອງຂໍລົງທຶນ ແລະ ມາດຕະຖານສັນຍາ (SLAs) ແລະ ກຳນົດສິດ ແລະ ພັນທະຂອງຜູ້ຖືສິດສຳປະທານຢ່າງຊັດເຈນ ໂດຍສະເພາະແມ່ນການປະຕິບັດໃຫ້ສອດຄ່ອງດ້ານສິ່ງແວດລ້ອມ ແລະ ສັງຄົມ ເພື່ອຮັບປະກັນຂັ້ນຕອນການອະນຸມັດ ໃຫ້ມີຄວາມໂປ່ງໃສ, ສາມາດຄາດຄະເນໄດ້ ແລະ ສາມາດບັງຄັບໃຊ້ໄດ້ ສຳລັບຜູ້ລົງທຶນ.

(v) ນຳສະເໜີກົນໄກ ການເຂົ້າລົງທຶນຄືນໃໝ່ແບບເລືອກເຟັ້ນ (selective re-entry mechanism) ຂອງໂຄງການຊອກຄົ້ນ-ສຳຫຼວດໃໝ່ ທີ່ຈະຕ້ອງອະນຸຍາດໃຫ້ແຕ່ ນັກລົງທຶນທີ່ມີຄຸນສົມບັດ ຜູ້ທີ່ສະແດງໃຫ້ເຫັນຄວາມສາມາດດ້ານວິຊາການທີ່ເຂັ້ມແຂງ, ຄວາມສາມາດທາງດ້ານການເງິນ ແລະ ການປະຕິບັດຕາມມາດຕະຖານທີ່ດີຂອງສາກົນກໍຄື ດ້ານສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງ (ESG) ຕາມທີ່ຄັດເລືອກໄດ້ຈາກການຈັດອັນດັບຂອງພາກສ່ວນທີສາມ (ຕົວຢ່າງ: Bloomberg, Refinitiv, Sustainalytics). ສືບຕໍ່ດຳເນີນກິດຈະການກ່ຽວກັບແຮ່ທາດ ພາຍໃຕ້ຂັ້ນຕອນຂອບວຽກ (framework) ທີ່ມີການການຄຸ້ມຄອງ ແລະ ມີຄວາມໂປ່ງໃສ. ກົນໄກນີ້ຈະປ່ຽນແທນການໂຈະຊົ່ວຄາວທີ່ມີໃນປັດຈຸບັນ ແລະ ຈະເຮັດໃຫ້ໄດ້ຮັບການລົງທຶນທີ່ມີຄວາມຮັບຜິດຊອບ ແລະ ມີການຕິດຕາມກວດກາຢ່າງລະອຽດຮອບດ້ານ ໃນການດຳເນີນກິດຈະການກ່ຽວກັບແຮ່ທາດທີ່ສຳຄັນ ເຊັ່ນ: ຄຳ ແລະ ທອງ.

(vi) ກະຊວງອຸດສາຫະກຳ ແລະ ການຄ້າ ຈະເຜີຍແຜ່ເງື່ອນໄຂທີ່ຄົບຖ້ວນຂອງນັກລົງທຶນ ລວມທັງເງື່ອນໄຂດ້ານສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງ (ESG) ສຳລັບການອະນຸຍາດກິດຈະການກ່ຽວກັບແຮ່ທາດ. ດຳເນີນການທົບທວນຄືນນະໂຍບາຍທີ່ຮຽກຮ້ອງໃຫ້ຜູ້ລົງທຶນດ້ານບໍ່ແຮ່ດຳເນີນການປຸງແຕ່ງ-ໜອມເພື່ອເພີ່ມມູນຄ່າແຮ່ທາດ ໃນ ສປປ ລາວ. ການທົບທວນຄືນນີ້ຈະເປັນການສະຫຼຸບຖອດຖອນບົດຮຽນທີ່ຜ່ານມາ ຈາກປະເທດທີ່ນຳມາສົມທຽບ, ມີການກຳນົດ ແລະ ໄລ່ລ່ຽງຜົນປະໂຫຍດ, ສິ່ງທ້າທາຍ, ຄວາມສ່ຽງ ແລະ ຕົ້ນທຶນ

ທີ່ອາດຈະເກີດຂຶ້ນ. ທົບທວນຄືນລະບົບພາສີ-ອາກອນທີ່ມີຢູ່ ແລະ ນຳສະເໜີອັດຕາພາສີ-ອາກອນ ແລະ ວິທີການແບ່ງປັນສ່ວນແບ່ງລາຍຮັບທີ່ໂປ່ງໃສ ແລະ ໄດ້ມາດຕະຖານທີ່ສາມາດແຂ່ງຂັນໄດ້ ໃນລະດັບສາກົນ ເພື່ອຫຼຸດຜ່ອນການໃຊ້ດຸນຍິນິດໃນການຕັດສິນໃຈ (minimize the scope for discretion).

(vii) ສ້າງຕັ້ງໜ່ວຍງານຄຸ້ມຄອງການບັງຄັບໃຊ້ຈາກສູນກາງ (centralized enforcement unit) ພາຍໃຕ້ກະຊວງ ອຄ ສຳລັບໂຄງການບໍ່ແຮ່ແບບ sandbox, ໂດຍມີພະນັກງານວິຊາການທີ່ໄດ້ຮັບການຝຶກອົບຮົມ ແລະ ມີລະບົບການລາຍງານແບບດິຈິຕອລ. ໜ່ວຍງານນີ້ຈະປະສານງານໂດຍກົງກັບອຳນາດການປົກຄອງແຂວງ ເພື່ອບໍ່ໃຫ້ມີການນຳໃຊ້ສິດອຳນາດທີ່ຊ້ຳຊ້ອນກັນ, ປັບປຸງຂັ້ນຕອນການກວດກາໃຫ້ສອດຄ່ອງເປັນອັນດຽວກັນ, ແລະ ຮັບປະກັນການບັງຄັບໃຊ້ກົດໝາຍຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ. ພາຍຫຼັງການຈັດຕັ້ງປະຕິບັດຮູບແບບການດຳເນີນງານແບບໄລຍະທົດລອງນີ້ໄດ້ຮັບຜົນສຳເລັດແລ້ວ, ຮູບແບບວິທີການດັ່ງກ່າວຈະຖືກຜັນຂະຫຍາຍນຳໄປໃຊ້ໃນຂອບເຂດທົ່ວປະເທດພາຍຫຼັງປີ 2030 ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການດຳເນີນງານໃຫ້ມີຄວາມສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ມີຄວາມຮັດກຸມໃນການຄຸ້ມຄອງໃນຂະແໜງການທໍລະນີສາດ ແລະ ບໍ່ແຮ່.

(viii) ຊຸກຍູ້ໃຫ້ມີການສ້າງຕັ້ງສະມາຄົມບໍ່ແຮ່ ໂດຍແຍກເປັນແຕ່ລະແຮ່ທາດ ເພື່ອແນ່ໃສ່ການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດ ທິຜົນຂຶ້ນກວ່າເກົ່າ ແລະ ສະດວກໃນການຄຸ້ມຄອງ

5. ປັບປຸງການຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການແກ້ໄຂການຂຸດຄົ້ນບໍ່ແຮ່ຂະໜາດນ້ອຍແບບຫັດຖະກຳ (ASM)

(ix) ຮັບປະກັນວ່າໂຄງການບໍ່ແຮ່ທັງໝົດ, ທັງທີ່ມີຢູ່ແລ້ວ ແລະ ໂຄງການໃໝ່, ໄດ້ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຢ່າງລະອຽດ ແລະ ປະຕິບັດຕາມມາດຕະຖານການປ້ອງກັນສິ່ງແວດລ້ອມຢ່າງເຂັ້ມງວດ. ກຳນົດໃຫ້ມີແຜນການທີ່ເປັນພາກບັງຄັບເຊັ່ນ: ແຜນການຟື້ນຟູລະບົບນິເວດ ແລະ ແຜນການຄຸ້ມຄອງນ້ຳສຳລັບເຂື່ອນຫາງແຮ່ (ອ່າງຫາງແຮ່) ແລະ ເຂດຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ.

(x) ຈັດຕັ້ງປະຕິບັດກົນໄກ ESG sandbox ເພື່ອທົດລອງການປະຕິບັດການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທີ່ມີຄວາມຮັບຜິດຊອບ ສຳລັບໂຄງການໂປຕາສ, ແຮ່ທາດຫາຍາກ, ຄຳ ແລະ ທອງ ພາຍໃຕ້ການຕິດຕາມກວດກາ ແລະ ການກວດກາທີ່ໄດ້ປັບປຸງໃຫ້ດີຂຶ້ນ. ຂັ້ນຕອນຂອບວຽກການຄວບຄຸມນີ້ (framework) ຈະສະແດງໃຫ້ເຫັນຜົນງານການປະຕິບັດຕາມມາດຕະຖານສາກົນດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງຜູ້ລົງທຶນທີ່ຖືກຄັດເລືອກມາ ກ່ອນທີ່ຈະນຳຂັ້ນຕອນການຄຸ້ມຄອງໃໝ່ນີ້ໄປບັງຄັບໃຊ້ໃນຂອບເຂດທົ່ວປະເທດ, ພ້ອມນີ້ເຮັດໃຫ້ລັດຖະບານສາມາດປັບປຸງກົດລະບຽບດ້ານ ສິ່ງແວດລ້ອມ, ສັງຄົມ, ແລະ ການຄຸ້ມຄອງ (ESG) ຂອງຂະແໜງການ, ສ້າງຄວາມສາມາດໃນການບັງຄັບໃຊ້ ແລະ ສ້າງຄວາມເຊື່ອໝັ້ນອັນໜັກແໜ້ນຕໍ່ນັກລົງທຶນໃນການພັດທະນາແຮ່ທາດແບບຍືນຍົງ.

(xi) ຈັດຕັ້ງປະຕິບັດຍຸດທະສາດຫຼັກທີ່ສຳຄັນສຳລັບການພັດທະນາການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ແລະ ໄຟຟ້ານ້ຳຕົກ ແລະ ໃຫ້ມີການປະເມີນສິ່ງແວດລ້ອມຍຸດທະສາດ ເພື່ອກຳນົດຜົນກະທົບສະສົມ, ຜົນກະທົບໄລຍະຍາວ, ໂດຍສະເພາະຕໍ່ປ່າໄມ້, ພື້ນທີ່ປົກປ້ອງ, ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ທີ່ດິນກະສິກຳ ແລະ ຊີວິດການເປັນຢູ່.

(xii) ແກ້ໄຂການຂາດແຄນທາງດ້ານຄວາມສາມາດ ແລະ ຊັບພະຍາກອນ ພາຍໃນອົງການທີ່ຄຸ້ມຄອງກວດກາ ດ້ານທໍລະນີສາດ ແລະ ບໍ່ແຮ່ ຍ້ອນເປັນອົງການທີ່ມີຄວາມຮັບຜິດຊອບໃນການຄຸ້ມຄອງຜົນກະທົບຕໍ່ຊຸມຊົນ ເຈົ້າພາບ ແລະ ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ.

(xiii) ພັດທະນາວິທີການແກ້ໄຂບັນຫາແບບສະເພາະເຈາະຈົງ ແລະ ອີງຕາມສະພາບການ ສຳລັບການຄຸ້ມຄອງ ແລະ ການຄວບຄຸມ ASM, ໂດຍມີເປົ້າໝາຍແນ່ໃສ່ ການພັດທະນາຂຸດຄົ້ນແບບ ASM ໃຫ້ເປັນທາງການໃນ ເຂດທີ່ເປັນໄປໄດ້, ຫຼຸດຜ່ອນຜົນກະທົບທາງລົບ, ແລະ ລວມເອົາກິດຈະກຳເຫຼົ່ານີ້ເຂົ້າໃນຍຸດທະສາດການ ພັດທະນາແບບຍືນຍົງ.

(xiv) ນຳໃຊ້ຮູບແບບຄັດເລືອກຄູ່ຮ່ວມງານ/ຜູ້ລົງທຶນທີ່ເປັນເປົ້າໝາຍ (targeted anchor partnership model) ສຳລັບການພັດທະນາໂຄງການແຮ່ທາດຫາຍາກ, ຄັດເລືອກໜຶ່ງຫາສອງຄູ່ຮ່ວມງານ (ຜູ້ລົງທຶນ) ທີ່ມີຄວາມສາມາດດ້ານວິຊາການ ແລະ ມີຄວາມເຂັ້ມແຂງທາງດ້ານການເງິນ ມີປະສົບການທີ່ໄດ້ຮັບການ ພິສູດແລ້ວໃນການຂຸດຄົ້ນ ແລະ ປຸງແຕ່ງ ແລະ ການປະຕິບັດຕາມມາດຕະຖານ ສິ່ງແວດລ້ອມ, ສັງຄົມ, ແລະ ການຄຸ້ມຄອງ (ESG) ຂອງແຮ່ທາດຫາຍາກ. ຜູ້ລົງທຶນເຫຼົ່ານີ້ຈະເຮັດໜ້າທີ່ເປັນຜູ້ດຳເນີນງານຫລັກ ພາຍໃຕ້ຮູບແບບການທົດລອງທີ່ມີການຄວບຄຸມ, ເປັນຜູ້ຖ່າຍທອດເຕັກໂນໂລຊີ ແລະ ແບບແຜນການ ປະຕິບັດທີ່ດີ ແລະ ສ້າງການເຊື່ອມໂຍງກັບຕະຫຼາດສາກົນ.

(xv) ພິເສດສຳລັບແຮ່ທາດຫາຍາກ, ອະນຸຍາດໃຫ້ມີການຂຸດຄົ້ນບໍ່ແຮ່ທົດລອງ ກ່ອນການສຶກສາຄວາມເປັນໄປ ໄດ້ທາງດ້ານເສດຖະກິດ-ເຕັກນິກຢ່າງເຕັມຮູບແບບ ສຳລັບໂຄງການທີ່ມີເງື່ອນໄຂເໝາະສົມ ເພື່ອໃຫ້ຜູ້ ລົງທຶນທີ່ເປັນເປົ້າໝາຍ ສາມາດດຳເນີນການຂຸດຄົ້ນແບບຂະໜາດນ້ອຍ ເພື່ອທົດລອງທາງດ້ານ ໂລຫະ ວິທະຍາ, ຄວາມສາມາດໃນການຂະຫຍາຍຂະໜາດບໍ່ແຮ່ ແລະ ປະສິດຕິພາບດ້ານສິ່ງແວດລ້ອມ, ສັງຄົມ, ແລະ ການຄຸ້ມຄອງ (ESG) ພາຍໃຕ້ສະພາບ ແລະ ເງື່ອນໄຂທີ່ມີການຄວບຄຸມ. ວິທີການນີ້ຈະຫຼຸດຜ່ອນ ຄວາມສ່ຽງຂອງໂຄງການຕັ້ງແຕ່ໄລຍະເລີ່ມຕົ້ນ ໂດຍຜ່ານການກວດສອບຢັ້ງຢືນທາງດ້ານເຕັກນິກວິຊາການ ແລະ ສິ່ງແວດລ້ອມ ກ່ອນການອະນຸຍາດລົງທຶນຂະໜາດໃຫຍ່.

(xvi) ສືບຕໍ່ສຸມໃສ່ສົມທົບກັບຂະແໜງກະສິກຳ ແລະ ສິ່ງແວດລ້ອມ ແລະ ທ້ອງຖິ່ນ ເພື່ອສຶກສາ ແລະ ດຳເນີນ ການຟື້ນຟູລະບົບນິເວດເຂດອ່າງນ້ຳປ່າແທ່ນ ຢູ່ແຂວງຄຳມ່ວນ ທີ່ເກີດຈາກການຂຸດຄົ້ນ ແລະ ປຸງແຕ່ງແຮ່ ທາດຂະໜາດນ້ອຍ ໃນໄລຍະຜ່ານມາ ໂດຍສະເພາະ ບັນຫານ້ຳຊຸ້ມ, ບັນຫາສິ່ງຕົກຄ້າງທີ່ເຈືອປົນໃນແຫຼ່ງນ້ຳ ທຳມະຊາດ ໃຫ້ສຳລັດໃນປີ 2030.

6. ການປັບປຸງການຄຸ້ມຄອງຂໍ້ມູນ ແລະ ຄວາມໂປ່ງໃສ

(xvii) ສ້າງຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຖານຂໍ້ມູນຢູ່ສູນກາງ ສຳລັບຂໍ້ມູນການຜະລິດ, ການຈຳໜ່າຍແຮ່ ທາດ ແລະ ຜະລິດຕະພັນແຮ່ທາດ, ພັນທະທາງດ້ານການເງິນ ແລະ ການຄຸ້ມຄອງສຳປະທານ ເພື່ອເພີ່ມ ຄວາມໂປ່ງໃສ, ປັບປຸງຂະບວນການຕັດສິນໃຈ ແລະ ສ້າງຄວາມໄວ້ວາງໃຈຕໍ່ບັນດາຜູ້ມີສ່ວນຮ່ວມ (stakeholders).

(xviii) ສ້າງຖານຂໍ້ມູນແຮ່ທາດອອນລາຍ ພາຍໃຕ້ ກະຊວງ ອຄ ເພື່ອລວມສູນ ແລະ ຫັນຂໍ້ມູນທໍລະນີສາດເປັນດິ ຈິຕອລ ຈາກໂຄງການສຳຫຼວດທີ່ຜ່ານມາ ແລະ ໂຄງການທີ່ກຳລັງດຳເນີນຢູ່ ສຳລັບແຮ່ທາດທີ່ໄດ້ຮັບບູລິມະ

ສິດ, ຮັບປະກັນຖານເກັບຂໍ້ມູນແຫ່ງຊາດທີ່ເປັນເອກະພາບ, ເຊິ່ງຈະຊ່ວຍວຽກງານເກັບກຳຂໍ້ມູນສຳຫຼວດໃນອະນາຄົດໃຫ້ສະດວກຂຶ້ນ ແລະ ຫຼຸດຜ່ອນການສຳຫຼວດພື້ນທີ່ທັບຊ້ອນກັນ; ເຊິ່ງຂະແໜງທໍລະນີສາດ ແລະ ບໍ່ແຮ່ ຈະຕ້ອງໄດ້ກຳນົດກົນໄກດັ່ງກ່າວຢ່າງຮັດກຸມ.

7. ການທົບທວນ ແລະ ເພີ່ມປະສິດທິພາບສັນຍາສຳປະທານ ຢ່າງເປັນປະຈຳ

(xix) ສືບຕໍ່ທົບທວນສັນຍາສຳປະທານທີ່ມີຢູ່ ແລະ ພັດທະນາຂັ້ນຕອນທີ່ໂປ່ງໃສ ແລະ ຍຸຕິທຳສຳລັບການສຳອຸປະທານໃໝ່, ຮັບປະກັນຜົນປະໂຫຍດສູງສຸດໃຫ້ແກ່ລັດ ໃນຂະນະດຽວກັນກໍ່ຕ້ອງດຶງດູດການລົງທຶນທີ່ມີຄວາມຮັບຜິດຊອບ.

(xx) ຫຼຸດຜ່ອນ ຫຼື ກຳຈັດ ການກຳນົດພັນທະທາງດ້ານການເງິນແບບມີເງື່ອນໄຂເປັນແຕ່ລະກໍລະນີໂດຍບໍ່ຜ່ານເງື່ອນໄຂໃນລະບຽບການ ແລະ ກົດໝາຍ (ເງື່ອນໄຂແບບຕັດສິນໃຈເປັນແຕ່ລະໂຄງການ) ແລະ ຈັດຕັ້ງປະຕິບັດລະບົບຄ່າທຳນຽມ ແລະ ການຈັດສັນສ່ວນແບ່ງລາຍຮັບທີ່ໂປ່ງໃສ ແລະ ໄດ້ມາດຕະຖານ ເພື່ອເພີ່ມຄວາມແນ່ນອນ ແລະ ປັບປຸງສະພາບແວດລ້ອມຂອງການລົງທຶນ.

(xxi) ນຳສະເໜີສັນຍາຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທີ່ມີຄວາມໝັ້ນຄົງ ສຳລັບໂຄງການຂຸດຄົ້ນຍຸດທະສາດ ເພື່ອຮັບປະກັນຄວາມສອດຄ່ອງຂອງເງື່ອນໄຂທາງດ້ານການເງິນ ແລະ ກົດໝາຍ ທີ່ສຳຄັນ ເຊັ່ນ: ຄ່າຊັບພະຊາກອນແຮ່ທາດ, ພາສີ-ອາກອນ ແລະ ເງື່ອນໄຂການອອກໃບອະນຸຍາດໃນໄລຍະເວລາທີ່ໄດ້ກຳນົດໄວ້. ສັນຍາຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທີ່ໄດ້ຮັບການຮັບຮອງຮ່ວມກັນຈາກບັນດາກະຊວງກ່ຽວຂ້ອງ ຈະເຮັດໃຫ້ສາມາດຄາດເດົາສະພາບໃນໄລຍະຍາວ ສຳລັບນັກລົງທຶນໃນແຮ່ທາດບູລິມະສິດ ຄື: ໂປຕາສ, ບົກຊິດ, ຄຳ, ທອງ, ແລະ ແຮ່ທາດຫາຍາກ ເຊິ່ງຈະຊ່ວຍດຶງດູດການລົງທຶນທີ່ມີຄວາມຮັບຜິດຊອບ.

(xxii) ປັບປຸງຂີດຄວາມສາມາດດ້ານເຕັກນິກວິຊາການຂອງພະນັກງານຄຸ້ມຄອງກວດກາ ຂອງ ກະຊວງ ອຄ ເພື່ອຕິດຕາມການປະຕິບັດຕາມລະບຽບໄດ້ຢ່າງມີປະສິດທິຜົນຫຼາຍຂຶ້ນ. ຮ່ວມມືກັບໂຄງການບໍ່ແຮ່ເອກະຊົນ ແລະ ສະຖາບັນເຕັກນິກ ແລະ ອາຊີວະສຶກສາ ເພື່ອຈັດສົ່ງການຝຶກອົບຮົມໃຫ້ແກ່ຄົນລາວ ໃນດ້ານທໍລະນີສາດ ແລະ ວິຊາທີ່ກ່ຽວຂ້ອງອື່ນໆ.

8. ສົ່ງເສີມການປຸງແຕ່ງປາຍນ້ຳ ແລະ ການເພີ່ມມູນຄ່າ ໂດຍຜ່ານການລວມກຸ່ມເຂົ້າກັນ

(xxiii) ອຳນວຍຄວາມສະດວກໃຫ້ແກ່ຂັ້ນຕອນກຳນົດຂອບເຂດການຊື້-ຂາຍທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ (government-backed offtake frameworks) ລະຫວ່າງ ຜູ້ຜະລິດໂປຕາສ ແລະ ຜູ້ຜະລິດປຸ໋ຍ, ເຊັ່ນດຽວກັນກັບ ລະຫວ່າງ ຜູ້ຂຸດຄົ້ນບໍ່ແຮ່ບົກຊິດ ແລະ ໂຮງງານປຸງແຕ່ງອາລູມິນາ, ເພື່ອຮັບປະກັນການສະໜອງພາຍໃນປະເທດທີ່ໝັ້ນຄົງ, ລາຄາທີ່ສາມາດຄາດເດົາໄດ້ ແລະ ການຈັດສັນວັດຖຸດິບທີ່ເປັນລະບົບສຳລັບອຸດສາຫະກຳປຸງແຕ່ງປາຍນ້ຳ.

(xxiv) ສ້າງຕັ້ງເຂດເສດຖະກິດພິເສດ (SEZs) ທີ່ເນັ້ນໃສ່ແຮ່ບົກຊິດ ແລະ ໂປຕາສ ແລະ/ຫຼື ສວນອຸດສາຫະກຳ ດ້ວຍການສ້າງສິ່ງຈູງໃຈທາງດ້ານການເງິນທີ່ເໝາະສົມ ເພື່ອດຶງດູດນັກລົງທຶນ. ສະຖານທີ່ເຫຼົ່ານີ້ຈະເປັນເຂດໂຄງລ່າງພື້ນຖານທີ່ໜ້າເຊື່ອຖື ທີ່ຖືກອອກແບບມາສຳລັບອຸດສາຫະກຳທີ່ໃຊ້ຝຸ່ນ ແລະ ພະລັງງານສູງ ເຊັ່ນ: ປຸ໋ຍ NPK ແລະ ການປຸງແຕ່ງອາລູມິນາ.

(xxv) ພັດທະນາແລວທາງການຂົນສົ່ງສອງຝ່າຍກັບປະເທດໄທ ແລະ ຫວຽດນາມ ເພື່ອເຊື່ອມຕໍ່ກັບນິຄົມອຸດສາຫະກຳ SEZs ປຸ໋ຍ ແລະ ອາລູມິນາ ໄປຍັງທ່າເຮືອໃນພາກພື້ນ, ອຳນວຍຄວາມສະດວກໃນການນຳເຂົ້າວັດສະດຸທີ່

ສຳຄັນ ເຊັ່ນ: ໂຊດາໄຟ (caustic soda) ແລະ ປັບປຸງການເຂົ້າເຖິງການສົ່ງອອກສຳລັບຜະລິດຕະພັນສຸດທ້າຍ. ການຈັດຕັ້ງປະຕິບັດຕາມແລວທາງນີ້ຈະປະກອບໄປດ້ວຍ ຂັ້ນຕອນທາງພາສີທີ່ປະສານກົມກຽວກັນ, ລະບອບການຂົນສົ່ງແມ່ນນຳໃຊ້ລະບອບເກັບຄ່າພາສີ-ອາກອນເມື່ອສິນຄ້າຮອດປາຍທາງ (bonded transport regimes) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການເຊື່ອມຕໍ່ໃນພາກພື້ນຂອງລາວ. ເຊິ່ງການຈະສ້າງແລວທາງ ແລະ ລະບົບການຂົນສົ່ງແບບນີ້ ແມ່ນຈຳຕ້ອງໄດ້ມີການປຶກສາຫາລືສອງຝ່າຍກັບບັນດາປະເທດເຫຼົ່ານັ້ນ.

(xxvi) ຫຼຸດຜ່ອນການສົ່ງອອກຫີນກາວທີ່ບໍ່ທັນປຸງແຕ່ງ (ເປັນກ້ອນ) ໄປຈຳໜ່າຍຢູ່ຕ່າງປະເທດ ຮອດປີ 2030 ໃຫ້ໄດ້ 70%, ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານຜະລິດແຜ່ນຢິບຊຳ ໃຫ້ເປັນສິນຄ້າຈຳໜ່າຍຢູ່ພາຍໃນ ແລະ ຕ່າງປະເທດ ໂດຍສົ່ງເສີມໃຫ້ໂຄງການກໍ່ສ້າງຂອງລັດນຳໃຊ້ຜະລິດຕະພັນຈາກຫີນກາວທີ່ຜະລິດຢູ່ພາຍໃນປະເທດ.

(xxvii) ຫຼຸດຜ່ອນການສົ່ງອອກຖ່ານຫີນໄປຈຳໜ່າຍຢູ່ຕ່າງປະເທດ ຮອດປີ 2030 ໃຫ້ໄດ້ 30%. ຖ່ານຫີນເປັນແຮ່ທາດພະລັງງານເຊື້ອໄຟ ແລະ ເປັນແຮ່ທາດຍຸດທະສາດ ຊຶ່ງໄດ້ກຳນົດເປັນແຮ່ທາດສະຫງວນໄວ້ເພື່ອຮັບໃຊ້ອຸດສະຫະກຳພາຍໃນ ແລະ ຄວນໄດ້ຫລຸດຜ່ອນການສົ່ງອອກໄປຕ່າງປະເທດ ເພື່ອຮັກສາຄວາມໝັ້ນຄົງທາງດ້ານພະລັງງານຢູ່ພາຍໃນປະເທດ.

2.2.1.3 ອຸດສາຫະກຳປຸງແຕ່ງ

ອີງຕາມເປົ້າໝາຍລະດັບຊາດ ໃນການຫັນປ່ຽນ ສປປ ລາວ ໃຫ້ກາຍເປັນສູນກາງການຜະລິດອຸດສາຫະກຳປຸງແຕ່ງ ທີ່ມີຄວາມສາມາດໃນການແຂ່ງຂັນ, ມີຄວາມຫຼາກຫຼາຍ ແລະ ຍືນຍົງ, ກອຄ ຈຶ່ງໄດ້ດຳເນີນການກຳນົດບູລິມະສິດຂະແໜງການຍ່ອຍຢ່າງເປັນລະບົບ ເພື່ອກຳນົດຂະແໜງການທີ່ມີທ່າແຮງສູງສຸດ ໃນການຊຸກຍູ້ການເຕີບໂຕຂອງຂະແໜງອຸດສາຫະກຳປຸງແຕ່ງ ພາຍໃນ 5 ປີຕໍ່ໜ້າ. ໂດຍໄດ້ຮັບການປະເມີນຜ່ານແນວຄວາມຄິດ ຄື: 1. ການປະເມີນການລະໂອກາດດ້ານການຕະຫຼາດ ແລະ 2. ຂີດຄວາມສາມາດໃນການແຂ່ງຂັນກັບປະເທດຄູ່ແຂ່ງ (right-to-win), ໂດຍນຳໃຊ້ 6 ອົງປະກອບໃນການວິເຄາະ ຄື: 1) ຂະໜາດຂອງຕະຫຼາດ, 2) ຄວາມຕ້ອງການໃນໄລຍະຜ່ານມາ, 3) ທ່າອ່ຽງຂອງການເຕີບໂຕ, 4) ໂຄງສ້າງຂອງຕະຫຼາດ, 5) ຄວາມອາດສາມາດລວມທີ່ມີຢູ່ ແລະ 6) ຄວາມໄດ້ປຽບທາງດ້ານຊັບພະຍາກອນຂອງຊາດ ໂດຍຈະສຸມການຫັນປ່ຽນໂຄງສ້າງເສດຖະກິດ ຂອງ ສປປ ລາວ ຈາກການເພິ່ງພາຊັບພະຍາກອນທຳມະຊາດ ແລະ ການນຳເຂົ້າ ຫັນໄປສູ່ການເປັນ**: "ສູນກາງການຜະລິດ, ການປຸງແຕ່ງ ແລະ ການເຊື່ອມໂຍງພາກພື້ນ (Land-linked Hub)"** ທີ່ນຳໃຊ້ພະລັງງານສະອາດ, ມີຂີດຄວາມສາມາດໃນການແຂ່ງຂັນ ແລະ ເຊື່ອມໂຍງເຂົ້າກັບຕ່ອງໂສ້ມູນຄ່າພາກພື້ນ ແລະ ສາກົນ ໄດ້ຢ່າງກົມກຽວ ກ້າວໄປສູ່ການຫຼຸດຜ່ອນການເພິ່ງພາການນຳເຂົ້າຜະລິດຕະພັນອຸດສາຫະກຳທີ່ຈຳເປັນ ແລະ ສ້າງມູນຄ່າເພີ່ມໃນການສົ່ງອອກຜະລິດຕະພັນອຸດສາຫະກຳປຸງແຕ່ງ ແບບກ້າວກະໂດດ ແລະ ກາຍເປັນສູນກາງພາກພື້ນດ້ານການປຸງແຕ່ງກະສິກຳ, ປຸງແຕ່ງແຮ່ທາດ ແລະ ການຜະລິດຊິ້ນສ່ວນອຸປະກອນໄຟຟ້າ ແລະ ເຄື່ອງເອເລັກໂຕນິກຕ່າງໆ.

ທິດທາງການຫັນເປັນອຸດສາຫະກຳປຸງແຕ່ງຂອງ ສປປ ລາວ ໃນຕໍ່ໜ້າ ຈະບໍ່ດຳເນີນແບບກະຈັດກະຈາຍ, ແຕ່ແມ່ນການສຸມໃສ່ ອຸດສາຫະກຳປາຍນ້ຳ (Downstream) ຢ່າງເປັນຍຸດທະສາດ ໂດຍນຳໃຊ້ຂໍ້ໄດ້ປຽບຈາກແຫຼ່ງຊັບພະຍາກອນທຳມະຊາດ ເຊັ່ນ: ເກືອກາລີ, ແຮ່ທາດໂລຫະ-ອະໂລຫະ; ຜົນຜະລິດກະສິກຳ; ພະລັງງານສະອາດ ແລະ ຈຸດພົ້ນສັນຖານຍຸດທະສາດທີ່ຕັ້ງຢູ່ລະຫວ່າງ ສປ ຈີນ, ໄທ ແລະ ສສ ຫວຽດນາມ.

ອີງຕາມການຄົ້ນຄວ້າ ບົນພື້ນຖານການວິເຄາະປະເມີນທີ່ມີຫຼັກຖານອ້າງອີງນີ້ ເຫັນວ່າອຸດສາຫະກຳປຸງແຕ່ງຝຸ່ນປະສົມເຄມີ, ການຜະລິດປຸງແຕ່ງອາລູມິນາ ແລະ ອາລູມິນຽມ ແມ່ນໄດ້ກາຍເປັນອຸດສາຫະກຳປຸງແຕ່ງບູລິມະສິດໃນການ

ພັດທະນາເສດຖະກິດຂອງ ສປປ ລາວ ໃນຕໍ່ໜ້າ. ໃນນັ້ນ, ການປຸງແຕ່ງຝຸ່ນປະສົມເຄມີ ຖືເປັນອຸດສາຫະກຳປຸງແຕ່ງທີ່ໂດດເດັ່ນທີ່ສຸດ (flagship subsector), ເນື່ອງຈາກມີຄວາມໄດ້ປຽບດ້ານແຫຼ່ງແຮ່ໂປຕາສ (Comparative Advantage), ຄວາມຕ້ອງການຝຸ່ນປະສົມເຄມີທີ່ສູງໃນພາກພື້ນ ແລະ ມີທ່າແຮງທີ່ຈະຊຸກຍູ້ທັງການຫັນປ່ຽນອຸດສາຫະກຳໃຫ້ຫຼາກຫຼາຍ ຄ່ຽງຄູ່ໄປກັບການເພີ່ມຜະລິດຕະພາບ ແລະ ຄຸນນະພາບໃຫ້ແກ່ອຸດສາຫະກຳປຸງແຕ່ງກະສິກຳ.

ສຳລັບການຜະລິດສາຫະກຳປຸງແຕ່ງອື່ນໆ ແມ່ນໄດ້ຖືກຈັດຢູ່ໃນລຳດັບຄວາມສຳຄັນ ທີ່ຫຼຸດລົງຕາມລຳດັບ ແຕ່ເຖິງຢ່າງໃດກໍ່ຕາມ, ການຜະລິດເຫຼົ່ານັ້ນ ຕ້ອງມີການຕິດຕາມ, ຄຸ້ມຄອງ ແລະ ຊຸກຍູ້ສິ່ງເສີມ ຜ່ານການຍົກລະດັບຜະລິດຕະພາບ, ການສ້າງເຄືອຂ່າຍເຊື່ອມໂຍງກັບວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ແລະ ແຜນວຽກການປັບປຸງດ້ານນະໂຍບາຍສິ່ງເສີມ.

ສະນັ້ນ, ເພື່ອເພີ່ມທະວີຂີດຄວາມສາມາດໃນການແຂ່ງຂັນດ້ານອຸດສາຫະກຳປຸງແຕ່ງ, ກອຄ ຈຶ່ງຈະເອົາໃຈໃສ່ສືບຕໍ່ຊຸກຍູ້ສິ່ງເສີມການຫັນເຂົ້າສູ່ລະບົບທຸລະກິດທີ່ເປັນແບບແຜນທາງການ, ຍົກສູງຜະລິດຕະພາບ, ຊຸກຍູ້ ແລະ ສະໜັບສະໜຸນໃນການປັບປຸງລະບົບການຂົນສົ່ງ, ສ້າງເງື່ອນໄຂ ແລະ ນະໂຍບາຍດ້ານອຸດສາຫະກຳປຸງແຕ່ງ ເພື່ອດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ (FDI) ທີ່ມີຄຸນນະພາບ, ໂດຍສະເພາະໃນອຸດສາຫະກຳປຸງແຕ່ງ ທີ່ເນັ້ນການສົ່ງອອກ ແລະ ຕິດພັນກັບການນຳໃຊ້ແຫຼ່ງຊັບພະຍາກອນພາຍໃນ ໃຫ້ເກີດປະສິດທິພາບ ແລະ ໝາກຜົນສູງສຸດ. ໂດຍມີເປົ້າໝາຍລວມ ແມ່ນເພື່ອຫັນປ່ຽນ ສປປ ລາວ ໃຫ້ກາຍເປັນສູນກາງອຸດສາຫະກຳປຸງແຕ່ງ ທີ່ມີຄວາມສາມາດໃນການແຂ່ງຂັນ, ມີຄວາມຫຼາກຫຼາຍ, ສົມດຸນ, ສີຂຽວ ແລະ ຍືນຍົງ ສາມາດເຊື່ອມໂຍງເຂົ້າກັບຕ່ອງໂສ້ມູນຄ່າພາກພື້ນ ແລະ ສາກົນ ໂດຍໄດ້ກຳນົດມີ 7 ແຜນງານບູລິມະສິດຫຼັກ ເພື່ອສົ່ງເສີມການຂະຫຍາຍຕົວຂອງອຸດສາຫະກຳປຸງແຕ່ງ ໂດຍເນັ້ນການຊຸກຍູ້ສົ່ງເສີມການຜະລິດ, ສົ່ງເສີມໃຫ້ມີການຂະຫຍາຍຕົວດ້ານການຜະລິດ, ນຳໃຊ້ນະວັດຕະກຳໃໝ່, ສ້າງເງື່ອນໄຂເພີ່ມຂີດຄວາມສາມາດໃນການແຂ່ງຂັນ ຄ່ຽງຄູ່ກັບການຊຸກຍູ້ສົ່ງເສີມການເປັນມິດກັບສິ່ງແວດລ້ອມ, ສ້າງຜົນປະໂຫຍດຢ່າງທົ່ວເຖິງໃຫ້ແກ່ເສດຖະກິດ ແລະ ສັງຄົມຂອງຊາດ ຊຶ່ງ 7 ແຜນງານບູລິມະສິດຫຼັກ ດັ່ງກ່າວປະກອບມີ:

1. ເພີ່ມທະວີການເຊື່ອມໂຍງ ແລະ ການຮ່ວມມືກັບຄູ່ຮ່ວມງານໃນພາກພື້ນ ແລະ ສາກົນ

1) ເຊື່ອມໂຍງເຂົ້າໃນ "ຕ່ອງໂສ້ການສະໜອງພາກພື້ນ" ໂດຍດຶງດູດຈາກການຍ້າຍຖານການຜະລິດຈາກປະເທດ ອ້ອມຂ້າງ ເປັນຕົ້ນ ຈາກ: ສປ ຈີນ, ໄທ, ສສ ຫວຽດນາມ ແລະ ປະເທດອື່ນໆ ໃນພາກພື້ນ ເຊັ່ນ ຍີ່ປຸ່ນ, ສ.ເກົາຫຼີ ແນ່ໃສ່ໃຫ້ ສປປ ລາວ ກາຍເປັນຖານການຜະລິດຊິ້ນສ່ວນ ແລະ ການປະກອບ (Assembly) ທີ່ບໍ່ແມ່ນການແຂ່ງຂັນໂດຍກົງ ແຕ່ແມ່ນການ "ຊ່ວຍໜູນ" (Complementary) ເພາະ ສປປ ລາວ ຍັງບໍ່ສາມາດແຂ່ງຂັນໄດ້, ແຕ່ສາມາດກາຍເປັນ "ຖານສະໜັບສະໜູນ" ໄດ້ ໂດຍອີງໃສ່ທ່າແຮງການໃຫ້ນະໂຍບາຍຊຸກຍູ້ສົ່ງເສີມທີ່ດີກວ່າ ພ້ອມດ້ວຍທ່າແຮງດ້ານຄ່າແຮງງານຕ່ຳ ແລະ ອຸດົມສົມບູນດ້ວຍຊັບພະຍາກອນທຳມະຊາດ. ພ້ອມນີ້ ກໍ່ນຳໃຊ້ຈຸດເດັ່ນທາງດ້ານພູມສາດໃຫ້ເປັນປະໂຫຍດ ໂດຍໝູນໃຊ້ການປ່ຽນຈາກປະເທດ ທີ່ບໍ່ມີທາງອອກສູ່ທະເລ (Landlocked) ໃຫ້ກາຍເປັນ ປະເທດເຊື່ອມໂຍງ (Land-linked) ເຊັ່ນ ນຳໃຊ້ ທາງລົດໄຟລາວ-ຈີນ ແລະ ທາງດ່ວນເຊື່ອມຈອດປະເທດອ້ອມຂ້າງ ໃຫ້ເປັນປະໂຫຍດສູງສຸດ ຕົວຢ່າງ: ການນຳເຂົ້າຊິ້ນສ່ວນອາໄຫຼ່ຈາກ ສປຈີນ ເພື່ອມາປະກອບຢູ່ ສປປ ລາວ ແລ້ວສົ່ງອອກໄປໄທ, ສສ ຫວຽດນາມ ຫຼື ປະເທດອື່ນໆ.

2) ຊຸກຍູ້ການຕະຫຼາດ ແລະ ເຊື່ອມໂຍງກັບຕ່ອງໂສ້ ໃນພາກພື້ນ ແລະ ສາກົນ ໂດຍໃຊ້ເວທີການຄ້າເອເລັກໂຕຣນິກ, ງານວາງສະແດງ ແລະ ການຈັບຄູ່ທຸລະກິດ ເພື່ອຂະຫຍາຍຕະຫຼາດການສົ່ງອອກຜະລິດຕະພັນລາວ.

3) ລົງເລິກການຮ່ວມມືດ້ານອຸດສາຫະກຳແບບສອງຝ່າຍ ແລະ ຫຼາຍຝ່າຍເຊັ່ນ: ຮ່ວມມືກັບ ສປ ຈີນ, ສ.ເກົາຫຼີ, ຍີ່ປຸ່ນ, ບັນດາປະເທດໃນອາຊຽນ ແລະ ຄູ່ຮ່ວມພັດທະນາອື່ນໆ ເພື່ອຍູ້ແຮງຍົກລະດັບຄວາມຮູ້ເຕັກນິກວິຊາການ ດ້ານອຸດສາຫະກຳປຸງແຕ່ງ ແລະ ການຖ່າຍທອດເຕັກໂນໂລຊີ ເຊັ່ນ ຍາດແຍ່ງເອົາການຊ່ວຍ: (1) ຊ່ວຍສ້າງ "ຜູ້ປະກອບການດີເດັ່ນ" (Industrial Champions) ຂອງ ສປປ ລາວ ໂດຍຊຸກຍູ້ການເຂົ້າເຖິງດ້ານແຫຼ່ງທຶນ, ເຕັກນິກ-ເຕັກໂນໂລຊີ ແລະ ການສ້າງຄວາມເຂັ້ມດ້ານວິຊາການຜ່ານການຈັດຝຶກອົບຮົມ-ສຳມະນາ ແລະ ຮູບແບບຕ່າງໆ; (2) ໃຫ້ການຊ່ວຍເຫຼືອໃນການສ້າງຕັ້ງໂຮງຮຽນ ຫຼື ສູນຝຶກອົບຮົມວິຊາຊີບສະເພາະດ້ານ ເພື່ອຜະລິດຊ່ຽວຊານ, ເຕັກນິກວິຊາການ ເປັນຕົ້ນ ຊ່າງໄຟຟ້າ, ຊ່າງກົນຈັກ ແລະ ຜູ້ຄວບຄຸມການຜະລິດທີ່ມີທັກສະສູງ;

4) ຂະຫຍາຍຂອບເຂດການຮ່ວມມື ລະຫວ່າງ ພາກລັດ ແລະ ເອກະຊົນ ກັບປະເທດຄູ່ຮ່ວມມືຕ່າງໆ ເພື່ອຊຸກຍູ້ສິ່ງເສີມການພັດທະນາທັກສະດ້ານອຸດສາຫະກຳ, ການຄຸ້ມຄອງ ແລະ ຄວບຄຸມມົນລະພິດ (PCM) ແລະ ລະບົບຄວາມປອດໄພທາງເຄມີ ທີ່ສອດຄ່ອງກັບຫຼັກການ ESG ແລະ ຄວາມຍືນຍົງ.

5) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສົ່ງເສີມ ແລະ ສ້າງຄວາມຮູ້ ການນຳໃຊ້ສິດທິພິເສດທາງການຄ້າ ພາຍໃຕ້ຂອບການຮ່ວມມືຕ່າງໆ ເຊັ່ນ: RCEP, ASEAN-China, ASEAN-Korea ແລະ ອື່ນໆ ເພື່ອຫຼຸດຜ່ອນກຳແພງພາສີ ແລະ ເພີ່ມທະວີການສົ່ງອອກຜະລິດຕະພັນອຸດສາຫະກຳປຸງແຕ່ງ.

ເປົ້າໝາຍ: (1) ດຶງດູດການລົງທຶນ ທີ່ຜະລິດສາຍໂສ້ການສະໜອງໃຫ້ບັນດາປະເທດອ້ອມຂ້າງ ຢ່າງໜ້ອຍ 5 ໂຄງການ; (2) ຍາດແຍ່ງໂຄງການຮ່ວມມື/ຊ່ວຍເຫຼືອລ້າໃຫ້ໄດ້ຢ່າງໜ້ອຍ 3 ໂຄງການ, ລວມມູນຄ່າໂຄງການຢ່າງໜ້ອຍ 5 ລ້ານໂດລາສະຫະລັດ ຂຶ້ນໄປ; (3) ໄດ້ຮັບທຶນໃຫ້ພະນັກງານພາກລັດ ແລະ ພາກທຸລະກິດ ໄດ້ໄປຍົກລະດັບຄວາມຮູ້ດ້ານອຸດສາຫະກຳປຸງແຕ່ງ ຢູ່ຕ່າງປະເທດ ຢ່າງໜ້ອຍ 30 ເທື່ອຄົນ; (4) ມີການສ້າງໂຮງງານ ຫຼື ສູນວິຊາຊີບ ຢ່າງໜ້ອຍ 3 ແຫ່ງ; (4) ສົ່ງເສີມໃຫ້ມີການສົ່ງອອກຜະລິດຕະພັນອຸດສາຫະກຳ ຂະຫຍາຍຕົວສະເລ່ຍ 15% ຕໍ່ປີ.

2. ປັບປຸງສະພາບແວດລ້ອມການລົງທຶນ ແລະ ຄວາມສາມາດໃນການແຂ່ງຂັນດ້ານອຸດສາຫະກຳ

1) ປັບປຸງຂັ້ນຕອນການລົງທຶນໃນພາກອຸດສາຫະກຳປຸງແຕ່ງ ໃຫ້ມີຄວາມກະທັດຮັດ, ງ່າຍດາຍ ແລະ ໂປ່ງໃສ, ປະຢັດເວລາ ແລະ ຄ່າໃຊ້ຈ່າຍ, ສ້າງຄວາມສະດວກສະບາຍ ແລະ ຄວາມເຊື່ອໝັ້ນແກ່ນັກລົງທຶນ;

2) ປັບປຸງກົນໄກການປະສານງານ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ມີການປະສານງານທີ່ກົມກ່ຽວ ເພື່ອໃຫ້ຄວາມສະດວກແກ່ການລົງທຶນ ລວມທັງໃຫ້ຄວາມສະດວກໃນການເຂົ້າເຖິງຂໍ້ມູນດ້ານວັດຖຸດິບ ແລະ ການສະໜອງແຮງງານ ໃຫ້ແກ່ຫົວໜ່ວຍການຜະລິດອຸດສາຫະກຳປຸງແຕ່ງ, ສ້າງໃຫ້ມີເວທີປຶກສາຫາລືລະຫວ່າງ ພາກລັດ ແລະ ພາກທຸລະກິດ (Public-Private Dialogue) ໃນຂະແໜງອຸດສາຫະກຳປຸງແຕ່ງ ແຕ່ລະໄລຍະ;

3) ເພີ່ມທະວີຄວາມໂປ່ງໃສດ້ານຂໍ້ມູນ ແລະ ການຕິດຕາມກວດກາອຸດສາຫະກຳປຸງແຕ່ງ ຜ່ານລະບົບດີຈີຕອນແບບຄົບວົງຈອນ ແລະ ລະບົບການລາຍງານທີ່ງ່າຍດາຍ;

4) ປັບປຸງ ແລະ ພັດທະນາລະບົບຖານຂໍ້ມູນອຸດສາຫະກຳປຸງແຕ່ງ ເຊັ່ນ: ປັບປຸງຖານຂໍ້ມູນໂຮງງານອຸດສາຫະກຳປຸງແຕ່ງ; ປັບປຸງຖານຂໍ້ມູນເຄມີແຫ່ງຊາດ, ພັດທະນາຖານຂໍ້ມູນມົນລະພິດໂຮງງານອຸດສາຫະກຳປຸງແຕ່ງ; ສ້າງຖານຂໍ້ມູນການຜະລິດ ກ້າວໄປເຖິງການຊຸກຍູ້ການຫັນເປັນທັນສະໄໝໃນການອອກໃບອະນຸຍາດຜ່ານລະບົບອີເລັກໂຕນິກກໍ່ຄື ການຫັນເປັນອຸດສາຫະກຳດີຈີຕອນ (Digital Transformation - Industry 4.0);

5) ສົ່ງເສີມການສ້າງເຄືອຂ່າຍຕ່ອງໂສ້ການຜະລິດແຕ່ຕົ້ນນ້ຳຫາປາຍນ້ຳ (Value Chain Integration);

6) ຊຸກຍູ້ສົ່ງເສີມການວິເຄາະວິໄຈ, ຄົ້ນຄວ້າ ແລະ ພັດທະນາ (R&D), ການປະຍຸກນຳໃຊ້ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ດີຈີຕອນ ໃນການພັດທະນາຜະລິດຕະພັນ ແລະ ຍົກລະດັບປະສິດຕິພາບຂອງຂະແໜງອຸດສາຫະກຳປຸງແຕ່ງ ດ້ວຍການປັບປຸງ ແລະ ຍົກລະດັບເຕັກໂນໂລຊີ ເຂົ້າໃນຂະບວນການຜະລິດ;

7) ຊຸກຍູ້ໃຫ້ໂຮງງານປຸງແຕ່ງໄດ້ຮັບໃບຢັ້ງຢືນມາດຕະຖານສາກົນ ເຊັ່ນ: ISO, GMP, HACCP ເພື່ອເພີ່ມໂອກາດໃນການສົ່ງອອກ ແລະ ສ້າງຍີ່ຫໍ້ສິນຄ້າ "Made in Laos" ໃຫ້ມີຄວາມເຊື່ອໝັ້ນໃນຕະຫຼາດໂລກ.

ເປົ້າໝາຍ: (1) ສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການລົງທຶນໃນອຸດສາຫະກຳປຸງແຕ່ງໃຫ້ສຳເລັດ ຢ່າງໜ້ອຍ 10 ສະບັບ; (2) ທົບທວນ ແລະ ປັບປຸງການແບ່ງຂັ້ນຄຸ້ມຄອງ ສະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເໝາະສົມ ແລະ ກົມກຽວກັນ; (3) ທົບທວນ ແລະ ປັບປຸງ ການແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ກັບພາກສ່ວນກ່ຽວຂ້ອງໃຫ້ຊັດເຈນ ແລະ ແບ່ງຄວາມຮັບຜິດຊອບໃຫ້ແທດເໝາະກັບພາລະບົດບາດຂອງຂະແໜງການ; (4) ປັບປຸງ ແລະ ພັດທະນາລະບົບເກັບກຳສະຖິຕິໂຮງງານໃນທົ່ວປະເທດ ລວມທັງຂໍ້ມູນສະຖິຕິຕ່າງໆກ່ຽວກັບອຸດສາ ຫະກຳປຸງແຕ່ງ ໃຫ້ສາມາດເກັບກຳຂໍ້ມູນ ໄດ້ຢ່າງລະອຽດຊັດເຈນ ແລະ ຖືກຕ້ອງຕາມຄວາມເປັນຈິງ; (5) ຊຸກຍູ້ໃຫ້ໂຮງງານໄດ້ຮັບການຮັບຮອງດ້ານມາດຕະຖານແຫ່ງຊາດ ແລະ ມາດຕະຖານສາກົນ ແລະ ນຳໃຊ້ຜະລິດຕະພາບເຂົ້າໃນຂະບວນການຜະລິດ.

3. ຍົກລະດັບພື້ນຖານການຜະລິດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າພາຍໃນ

1) ພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳ ໂດຍນຳໃຊ້ເຄື່ອງຈັກທີ່ທັນສະໄໝ, ລະບົບອັດສະລິຍະ ແລະ ຊອບແວຄຸ້ມຄອງການຜະລິດ (MES, ERP) ເພື່ອເພີ່ມປະສິດທິພາບ;

2) ສ້າງໃຫ້ມີການເຊື່ອມໂຍງຕ່ອງໂສ້ມູນຄ່າພາຍໃນ ໂດຍສ້າງເວທີປະສານງານລະຫວ່າງຜູ້ຜະລິດວັດຖຸດິບ, ຜູ້ປຸງແຕ່ງ ແລະ ຜູ້ຈຳໜ່າຍ ເພື່ອຫຼຸດຕົ້ນທຶນ ແລະ ເພີ່ມມູນຄ່າ ກໍ່ຄື ສ້າງກົນໄກການເຊື່ອມໂຍງລະຫວ່າງ ຂະແໜງກະສິກຳ, ບໍ່ແຮ່ ແລະ ພະລັງງານ ເຂົ້າສູ່ຂະບວນການຜະລິດປຸງແຕ່ງ ເພື່ອສ້າງມູນຄ່າເພີ່ມໃຫ້ສູງສຸດ.

3) ສົ່ງເສີມການພັດທະນາໂຄງລ່າງພື້ນຖານ ເປັນຕົ້ນ ປັບປຸງລະບົບຂົນສົ່ງ, ໄຟຟ້າ, ນ້ຳປະປາ, ແລະ ອິນເຕີເນັດ ຄວາມໄວສູງ ເພື່ອສ້າງຄວາມສະດວກແກ່ການລົງທຶນທົ່ວໄປ ແລະ ຫຼຸດຕົ້ນທຶນການຜະລິດ;

4) ສົ່ງເສີມການລົງທຶນສ້າງນິຄົມອຸດສາຫະກຳ ໂດຍມີການລົງທຶນພັດທະນາໂຄງລ່າງພື້ນຖານຮອງຮັບການລົງທຶນ ໂດຍອີງໃສ່ທ່າແຮງຈາກນະໂຍບາຍສົ່ງເສີມການພັດທະນານິຄົມອຸດສາຫະກຳ ຕາມດຳລັດວ່າດ້ວຍນິຄົມອຸດສາຫະກຳ ທີ່ມີນະໂຍບາຍໃຫ້ການບໍລິການປະຕູດຽວ ແກ່ການລົງທຶນໃນນິຄົມອຸດສາຫະກຳ ແລະ ມີນະໂຍບາຍສົ່ງເສີມພິເສດດ້ານພາສີອາກອນ ຊຶ່ງຈະສ້າງຄວາມສະດວກແກ່ການລົງທຶນ ພ້ອມທັງປະຢັດເວລາ, ປະຢັດຕົ້ນທຶນ, ເຮັດໃຫ້ເພີ່ມຄວາມສາມາດໃນການແຂ່ງຂັນດ້ານອຸດສາຫະກຳປຸງແຕ່ງ ແລະ ສ້າງຄວາມເຂັ້ມແຂງແກ່ຕ່ອງໂສ້ການຜະລິດພາຍໃນ ເຊັ່ນ: ສ້າງ ແລະ ພັດທະນານິຄົມອຸດສາຫະກຳ ອາຊີໂປຕາສ ຢູ່ແຂວງ ຄຳມ່ວນ; ສ້າງ ແລະ ພັດທະນານິຄົມອຸດສາຫະກຳ ອຳມະຕະ ຢູ່ ເມືອງນາໜ້ໍ ແຂວງ ຫລວງນ້ຳທາ ແລະ ເມືອງ ໄຊ ແຂວງ ອຸດົມໄຊ; ສ້າງ ແລະ ພັດທະນານິຄົມອຸດສາຫະກຳ ລາວ-ໄຄຍອນ ຢູ່ແຂວງ ຄຳມ່ວນ; ພັດທະນາ ແລະ ຂະຫຍາຍ ນິຄົມອຸດສາຫະກຳ ວຽງຈັນ-ໂນນທອງ (VITA Park) ຢູ່ ນະຄອນຫລວງວຽງຈັນ (ໄລຍະທີ 2 ແລະ 3) ແລະ ຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ທີ່ໄດ້ເຊັນບົດບັນທຶກ(MOU) ໃນການພັດທະນານິຄົມອຸດສາຫະກຳ.

5) ສະໜັບສະໜູນນະໂຍບາຍການເງິນ ເຊັ່ນ: ການສະໜອງສິນເຊື່ອດອກເບ້ຍຕ່ຳ, ມາດຕະການຫຼຸດຜ່ອນພາສີ ຫຼື ກອງທຶນສະໜັບສະໜູນດ້ານເຕັກນິກວິຊາການ ໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ທີ່ໃຊ້ນຳໃຊ້ວັດຖຸດິບພາຍໃນເຂົ້າໃນການປຸງແຕ່ງ. ພ້ອມທັງ ຊຸກຍູ້ ແລະ ສົ່ງເສີມໃຫ້ມີການເຊື່ອມໂຍງອຸດ

ສາຫະກຳປຸງແຕ່ງ ລະຫວ່າງຫົວໜ່ວຍຜູ້ຜະລິດຂະໜາດໃຫຍ່, ກາງ ແລະ ນ້ອຍ ເພື່ອສ້າງຕ່ອງໂສ້ມູນຄ່າ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ການສະໜອງພາຍໃນ;

ເປົ້າໝາຍ: ການປະສົມມາດຕະການເຫຼົ່ານີ້ຢ່າງມີຍຸດທະສາດ ຈະຊ່ວຍໃຫ້ພື້ນຖານການຜະລິດແຂງແຮງ ແລະ ຕ່ອງໂສ້ມູນຄ່າພາຍໃນມີຄວາມໝັ້ນຄົງ ແລະ ຍືນຍົງ ແຕ່ການຈັດຕັ້ງປະຕິບັດມາດຕະການຕ່າງໆ ເລົ່ານ້ຕ້ອງໃຫ້ປະກົດຜົນເປັນຈິງ ເຊັ່ນ (1) ການສົ່ງເສີມການລົງທຶນສ້າງນິຄົມອຸດສາຫະກຳ ເປົ້າໝາຍ ຕ້ອງໃຫ້ໄດ້ ຢ່າງໜ້ອຍ 5 ແຫ່ງ, (2) ມີການຈ້າງງານ ຢ່າງຫນ້ອຍ 15 ພັນຄົນ; (3) ຊຸກຍູ້ ແລະ ສົ່ງເສີມໃຫ້ມີການເຊື່ອມໂຍງອຸດສາຫະກຳປຸງແຕ່ງ ລະຫວ່າງຫົວໜ່ວຍຜູ້ຜະລິດຂະໜາດໃຫຍ່, ກາງ ແລະ ນ້ອຍ ເພື່ອສ້າງຕ່ອງໂສ້ມູນຄ່າ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ການສະໜອງພາຍໃນ ຫຼາຍກວ່າ 10 ຫົວໜ່ວຍ, (4) ການລົງທຶນໃນພາກອຸດສາຫະກຳປຸງແຕ່ງເພີ່ມສູງຂຶ້ນ.

4. ສົ່ງເສີມການຜະລິດເປັນສິນຄ້າ ແລະ ທົດແທນການນຳເຂົ້າ

1) ສົ່ງເສີມ ແລະ ພັດທະນາຜະລິດຕະພັນອຸດສາຫະກຳປຸງແຕ່ງ ໃຫ້ມີຄວາມຫຼາກຫຼາຍ ໂດຍສຸມໃສ່ສົ່ງເສີມການຜະລິດຂອງ 09 ປະເພດ 88 ລາຍການຜະລິດຕະພັນອຸດສາຫະກຳປຸງແຕ່ງ; ສົ່ງເສີມອຸດສາຫະກຳ ແລະ ດຶງດູດການລົງທຶນ ທີ່ເປັນທ່າແຮງໃໝ່ ເປັນຕົ້ນ ອຸດສາຫະກຳປຸງແຕ່ງແຮ່ທາດໂລຫະ ແລະ ອະໂລຫະ; ເຄມີອຸດສາຫະກຳ; ອຸດສາຫະກຳຍານພາຫະນະໄຟຟ້າ; ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່; ອຸດສາຫະກຳ ພະລັງສະອາດ (ສົ່ງເສີມການຜະລິດໄຮໂດເຈນສີຂຽວ, ພະລັງງານຊີວະພາບ, ແຜງໂຊລາເຊວ); ອຸດສາຫະກຳ ໄຮເທັກເຕັກໂນໂລຊີ (ການຜະລິດຊິ້ນສ່ວນ ໄມໂຄຣຊິບ, ຣາດາດິສ, ເຊມິຄອນດັກເຕີ, ຕຣິກເກີຄອຍ, ແຜງວົງຈອນເອເລັກໂຕຣນິກ, ເລນ ແລະ ອື່ນໆ) ກ້າວໄປສູ່ເປົ້າໝາຍການສ້າງຄວາມເຂັ້ມແຂງໃຫ້ແກ່ ຄວາມສາມາດໃນການກຸ້ມຕົນເອງ ທາງດ້ານເສດຖະກິດ ແລະ ຫຼຸດຜ່ອນການອົ່ວໄຫຼຂອງເງິນຕາຕ່າງປະເທດ;

2) ຊຸກຍູ້ສົ່ງເສີມຜະລິດຕະພັນອຸດສາຫະກຳປຸງແຕ່ງພາຍໃນທີ່ສຳຄັນພື້ນເດັ່ນ, ຊຸກຍູ້ໃຫ້ສາມາດຜະລິດສະໜອງພາຍໃນໄດ້ພຽງພໍ ແລະ ປະກອບເຂົ້າໃນຕ່ອງໂສ້ການຜະລິດໃຫ້ຫລາຍຂຶ້ນ ເຊັ່ນ: ຜະລິດຕະພັນເຄມີ, ຜະລິດຕະພັນຖົງເປົ໋າ (ເປົ໋າຊີມັງ, ເປັນໂຕນ ແລະ ເປົ໋າບັນຈຸພັນອື່ນ), ຜະລິດຕະພັນປະເພດ ວັດສະດຸກໍ່ສ້າງ (ຊີມັງ, ເຫລັກ, ທໍ່ຢາງ ແລະ ນ້ຳສີ) ແລະ ອື່ນໆ.

3) ສົ່ງເສີມການສ້າງ ແລະ ປັບປຸງກຸ່ມຜູ້ຜະລິດອຸດສາຫະກຳປຸງແຕ່ງ, ພັດທະນາກຸ່ມ ແລະ ເຄືອຂ່າຍຜູ້ຜະລິດໃນອຸດສາຫະກຳປຸງແຕ່ງທີ່ມີທ່າແຮງ ເພື່ອເຊື່ອມໂຍງກັບຖານຜະລິດພາຍໃນ, ພາກພື້ນ ແລະ ສາກົນ.

ເປົ້າໝາຍ: (1) ສົ່ງເສີມ ແລະ ພັດທະນາຜະລິດຕະພັນອຸດສາຫະກຳປຸງແຕ່ງ ໃຫ້ສາມາດສະໜອງພຽງພໍຮັບໃຊ້ພາຍໃນ, ຫຼຸດຜ່ອນການນຳເຂົ້າ ແລະ ກ້າວໄປສູ່ການສົ່ງອອກ ໃຫ້ໄດ້ ຢ່າງໜ້ອຍ 6-12 ລາຍການ; (2) ຊຸກຍູ້ສົ່ງເສີມຜະລິດຕະພັນອຸດສາຫະກຳປຸງແຕ່ງພາຍໃນ ເຂົ້າໃນຕ່ອງໂສ້ການຜະລິດໃຫ້ຫຼາຍຂຶ້ນ; ສົ່ງເສີມການສ້າງ ແລະ ປັບປຸງກຸ່ມຜູ້ຜະລິດອຸດສາຫະກຳປຸງແຕ່ງ ຢ່າງໜ່ອຍ 03-05 ກຸ່ມ; (3) ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ປະກອບສ່ວນເຂົ້າໃນລວມຍອດຜະລິດຕະພັນພາຍໃນ ຫຼື GDP ຢ່າງໜ້ອຍໃນອັດຕາສ່ວນ 12% ແລະ (4) ມີອັດຕາການຂະຫຍາຍຕົວການຜະລິດອຸດສາຫະກຳປຸງແຕ່ງ 13% ຕໍ່ປີ.

5. ສົ່ງເສີມອຸດສາຫະກຳປຸງແຕ່ງ ຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ

1) ສົ່ງເສີມການລົງທຶນອຸດສາຫະກຳປຸງແຕ່ງ ທີ່ນຳໃຊ້ວັດຖຸດິບທີ່ປູກໄດ້ ແລະ ທົດແທນໄດ້ຢູ່ພາຍໃນ ເຊັ່ນ: ປະລາສຕິກຊີວະພາບ, ເຈ້ຍຈາກກະສິກຳຍືນຍົງ, ແລະ ວັດຖຸທຳມະຊາດອື່ນໆ. ພ້ອມທັງສ້າງຄວາມເຂັ້ມແຂງໃນວຽກງານເສດຖະກິດໝຸນວຽນ ໂດຍສະເພາະການນຳເອົາສິ່ງເສດເຫຼືອຕ່າງໆ ມາເປັນພະລັງງານທົດແທນ, ມາເປັນວັດຖຸດິບໃນການນຳມາຜະລິດຄືນໃໝ່, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ອອກແບບຜະລິດຕະພັນທີ່ສາມາດນຳມາໃຊ້ຄືນໃໝ່ໄດ້ງ່າຍ;

2) ຊຸກຍູ້ ແລະ ສົ່ງເສີມໃຫ້ໂຮງງານອຸດສາຫະກຳປຸງແຕ່ງນຳໃຊ້ວິທີການຜະລິດທີ່ສະອາດ, ນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ ແລະ ປະຢັດພະລັງງານ ພ້ອມທັງເປັນມິດຕໍ່ສິ່ງແວດລ້ອມ ເປັນຕົ້ນການນຳໃຊ້ ພະລັງງານແສງຕາເວັນ, ລົມ ແລະ ຊີວະມວນ ເພື່ອຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ;

3) ເພີ່ມທະວີການປະຕິບັດຕາມມາດຕະຖານ ຄຸ້ມຄອງສິ່ງແວດລ້ອມ, ສັງຄົມ, ແລະ ລະບົບການຄຸ້ມຄອງ (ESG), ການຄວບຄຸມມົນລະພິດ ແລະ ການຄຸ້ມຄອງສິ່ງເສດເຫຼືອ ເຊັ່ນ ພັດທະນາລະບົບຜູ້ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພປະຈຳໂຮງງານ (PCM) ຢູ່ ສປປ ລາວ;

4) ສົ່ງເສີມການນຳໃຊ້ມາດຕະຖານສາກົນ ແລະ ລະບົບການຢັ້ງຢືນ ເພື່ອຍົກລະດັບຄຸນນະພາບຜະລິດຕະພັນ, ການເຂົ້າເຖິງຕະຫຼາດ ແລະ ຜົນງານດ້ານສິ່ງແວດລ້ອມ

5) ຈັດຕັ້ງປະຕິບັດນະໂຍບາຍອຸດສາຫະກຳສີຂຽວ ແລະ ຍຸດທະສາດທີ່ກ່ຽວຂ້ອງ ເພື່ອສົ່ງເສີມການຫັນເປັນອຸດສາຫະກຳທີ່ມີຄາບອນຕ່ຳ ໂດຍຊຸກຍູ້ສົ່ງເສີມ ບັນດາໂຮງງານອຸດສາຫະກຳປຸງແຕ່ງ ໃຫ້ປະຕິບັດຕາມ ເງື່ອນໄຂ ແລະ ມາດຕະຖານຂອງນິຕິກຳ ເພື່ອສະເໜີຂໍຮັບໃບຢັ້ງຢືນອຸດສາຫະກຳສີຂຽວ ແລະ ສະຫຼາກສີຂຽວ ເພື່ອຫຼຸດຜ່ອນອາຍເຮືອນແກ້ວ ໃນພາກອຸດສາຫະກຳປຸງແຕ່ງ;

6) ສົ່ງເສີມໂຮງງານອຸດສາຫະກຳປຸງແຕ່ງທີ່ມີຄວາມສ່ຽງລະດັບສູງ ແລະ ກາງ ໃຫ້ເປັນຕົວແບບດ້ານການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ເປັນຕົ້ນ ການຄຸ້ມຄອງສິ່ງເສດເຫຼືອ ແລະ ການຄຸ້ມຄອງມົນລະພິດທາງອາກາດ ແລະ ໃຫ້ເຂົ້າຮ່ວມນຳໃຊ້ລະບົບຖານຂໍ້ມູນການຂົນສົ່ງສິ່ງເສດເຫຼືອ Waste Manifest System);

7) ສຸມໃສ່ວຽກງານຄຸ້ມຄອງເຄມີ ເປັນຕົ້ນ ຄວາມປອດໄພທາງເຄມີ ໃນການນຳເຂົ້າ, ການຂົນສົ່ງ, ການນຳໃຊ້ ແລະ ການບຳບັດກຳຈັດສິ່ງເສດເຫຼືອທາງເຄມີ ຜ່ານການເຜີຍແຜ່ຄູ່ມືແນະນຳກ່ຽວກັບການຄຸ້ມຄອງ, ການກຳຈັດ ແລະ ການບຳບັດ ສິ່ງເສດເຫຼືອເຄມີ; ຄູ່ມືແນະນຳກ່ຽວກັບການຕອບໂຕ້ອຸປະຕິເຫດທາງເຄມີ ທີ່ແທດເໝາະກັບສະຖານະການຕົວຈິງ; ການຕິດສະຫຼາກເຄມີ ເປັນພາສາລາວ ຕາມລະບົບ GHS ແລະ ອື່ນໆ;

8) ສຶກສາຄວາມເປັນໄປ ເພື່ອພັດທະນາລະບົບ GPS tracking, IoT Sensor, Mobile Application ຫຼື Cloud database ເພື່ອນຳໃຊ້ໃນການຕິດຕາມກວດກາການເຄື່ອນຍ້າຍເຄມີພາຍໃນປະເທດ ແບບທັນສະໄໝ ແລະ ໄດ້ມາດຕະຖານ ຮັບປະກັນດ້ານຄວາມປອດໄພ ແລະ ຖືກຕ້ອງຕາມການອະນຸຍາດ;

9) ສ້າງຄວາມຮັບຮູ້ ແລະ ອົບຮົມບຸກຄະລາກອນ ກ່ຽວກັບການຜະລິດແບບຍືນຍົງ ແລະ ການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.

ເປົ້າໝາຍ: ເຮັດໃຫ້ການນຳໃຊ້ວັດຖຸດິບ ແລະ ຊັບພະຍາກອນທຳມະຊາດ ທີ່ມີຢູ່ພາຍໃນໃຫ້ເກີດຜົນປະໂຫຍດສູງສຸດ ແລະ ເປັນມິດກັບສິ່ງແວດລ້ອມ ໂດຍການປະສານງານລະຫວ່າງລັດຖະບານ, ຜູ້ປະກອບການ, ຊຸມຊົນ ແລະ ອົງກອນສາກົນ ໃນການຈັດຕັ້ງປະຕິບັດມາດຕະການຕ່າງໆໃຫ້ມີປະສິດຕິຜົນ ຊຶ່ງຈະເປັນກຸນແຈສຳຄັນໃນການຂັບເຄື່ອນອຸດສາຫະກຳປຸງແຕ່ງໄປສູ່ຄວາມຍືນຍົງຢ່າງແທ້ຈິງ, (1) ເຮັດໃຫ້ບັນດາໂຮງງານອຸດສາຫະກຳປຸງແຕ່ງ ໄດ້ຮັບການຢັ້ງຢືນອຸດ ສາຫະກຳສີຂຽວ ຢ່າງໜ້ອຍ 30 ຫົວໜ່ວຍ ເພື່ອສ້າງຄວາມໝັ້ນໃຈໃຫ້ຜູ້ບໍລິໂພກ ແລະ (2) ສາມາດເຂົ້າເຖິງຕະຫຼາດ ສີຂຽວ ໃນພາກພື້ນ ແລະ ສາກົນໃຫ້ຫຼາຍຂຶ້ນ, ພັດທະນາສະຫຼາກເຄມີ ຢ່າງໜ້ອຍ 20 ສະຫຼາກ; ແລະ (3) ມີສູນຝຶກອົບຮົມດ້ານຄວາມປອດໄພທາງເຄມີ ໃນ ສປປ ລາວ ຈຳນວນ 01 ແຫ່ງ.

6. ພັດທະນາອຸດສາຫະກຳຍຸດທະສາດ ແລະ ອຸດສາຫະກຳສະໜັບສະໜຸນ

6.1 ສຸມໃສ່ສິ່ງເສີມການລົງທຶນໃໝ່ ແລະ ພັດທະນາອຸດສາຫະກຳທີ່ມີແລ້ວໃຫ້ເຂັ້ມແຂງ ສຳລັບອຸດສາຫະກຳຍຸດທະສາດ ໃຫ້ເປັນບູລິມະສິດ ເພື່ອຊຸກຍູ້ການຂະຫຍາຍຕົວທາງເສດຖະກິດ ແລະ ສ້າງຄວາມໝັ້ນຄົງຂອງຊາດ ເຊັ່ນ:

1) ອຸດສາຫະກຳປຸງແຕ່ງກະສິກຳ ເປັນບູລິມະສິດສູງສຸດ ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ເພີ່ມມູນຄ່າໃຫ້ຜະລິດຕະພັນກະສິກຳ ເຊັ່ນ: ປຸງແຕ່ງຢາງພາລາ, ມັນຕົ້ນ, ອ້ອຍ, ຝຸ່ນປະສົມເຄມີ (NPK); ຫົວອາຫານສັດ, ກາເຟ ແລະ ໝາກໄມ້ຕ່າງໆ, ປາ ແລະ ຜະລິດຕະພັນຊີ້ນສັດ;

2) ການປຸງແຕ່ງແຮ່ທາດ ເພື່ອຫຼຸດຜ່ອນການສົ່ງອອກວັດຖຸດິບ ແລະ ສ້າງຜະລິດຕະພັນມູນຄ່າເພີ່ມ ເຊັ່ນ: ການຫຼໍ່ຫຼອມເຫຼັກ, ທອງແດງ, ການຜະລິດຈາກອາລູມິນາ-ອາລູມິນຽມ, ຝຸ່ນໂປຕາສ ແລະ ການນຳໃຊ້ຜະລິດຕະພັນເຫຼົ່ານີ້ ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບຕ່າງໆ (ໃຫ້ມີການປຸງແຕ່ງແຕ່ຕົ້ນນ້ຳ ເຖິງ ປາຍນ້ຳ);

3) ການຜະລິດຊິ້ນສ່ວນໄຟຟ້າ ແລະ ເຄື່ອງເອເລັກໂຕຣນິກ, ຜະລິດຊິ້ນສ່ວນລົດ EV ແລະ ການປະກອບລົດ EV, ການຜະລິດ ແລະ ການປະກອບແຜງໂຊລ້າເຊລ, ແລະ ເຄື່ອງຈັກເບົາ;

4) ການປຸງແຕ່ງພາຍໃນ ເຂົ້າໃນຕ່ອງໂສ້ການຜະລິດ ເຊັ່ນ: ຜະລິດຕະພັນເຄມີ, ຜະລິດຕະພັນຖົງເປົ໋າ (ເປົ໋າຊີມັງ, ເປັນໂຕນ ແລະ ເປົ໋າບັນຈຸພັນອື່ນ), ຜະລິດຕະພັນປະເພດ ວັດສະດຸກໍ່ສ້າງ (ຊີມັງ, ເຫລັກ, ທໍ່ຢາງ ແລະ ນ້ຳສີ), ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່.

5) ການຜະລິດທົດແທນການນຳເຂົ້າ ເປັນບູລິມະສິດ ເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າບໍລິໂພກ ເປັນຕົ້ນ: ອາຫານ, ເຄື່ອງດື່ມ, ອາຫານເສີມ ແລະ ອື່ນໆ.

6.2 ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ ພາກສ່ວນປິ່ນອ້ອມສະໜອບສະໜູນ ຄື: ພະລັງງານ: ການສະໜອງວັດຖຸດິບ: ແຮ່ທາດ, ກະສິກຳ, ປ່າໄມ້, ເຄື່ອງປ່າຂອງດົງ ເປັນຕົ້ນ, ການພັດທະນາສີມືແຮງງານ ແລະ ສະໜອງແຮງງານ, ການຂົນສົ່ງ ແລະ ອື່ນໆ

ເປົ້າໝາຍ: ເຮັດໃຫ້ອຸດສາຫະກຳຍຸດທະສາດໄດ້ຮັບການພັດທະນາຢ່າງເປັນຮູບປະທຳ ເຮັດໃຫ້ເກີດມາການລົງທຶນ ການຜະລິດ, ການປຸງແຕ່ງຜະລິດຕະພັນ ທີ່ນຳໃຊ້ວັດຖຸດິບຈາກກະສິກຳ ແລະ ແຮ່ທາດ ເພື່ອສ້າງມູນຄ່າເພີ່ມ ໃຫ້ສູງຂຶ້ນ ກ່ອນຈຳໜ່າຍພາຍໃນ ແລະ ສົ່ງອອກ ໂດຍມີການຜະລິດຄຽງຄູ່ກັນກັບຜະລິດຕະພັນສະໜັບສະໜູນປິ່ນອ້ອມ ເຊັ່ນ: (1) ຊຸກຍູ້ສົ່ງເສີມການນຳໃຊ້ແຮ່ໂປຕາສ (Potassium) ພາຍໃນ ແລະ ດຶງດູດການລົງທຶນ ສ້າງຕັ້ງໂຮງງານ ຝຸ່ນປະສົມ (ຝຸ່ນປະສົມເຄມີ- Chemical Fertilizer) 01-02 ແຫ່ງ; (2) ຊຸກຍູ້ສົ່ງເສີມ ແລະ ດຶງດູດການລົງທຶນຈາກບໍລິສັດ ລະດັບສາກົນໃນການສ້າງຕັ້ງໂຮງງານປະກອບລົດໃຫ່ຍ ຮູບແບບ (ຊີເຄດີ- CKD) 01 ແຫ່ງ.

7. ສິ່ງເສີມອຸດສາຫະກຳປຸງແຕ່ງທີ່ມີທ່າແຮງຕາມເຂດແຄ້ວນ

ສິ່ງເສີມອຸດສາຫະກຳປຸງແຕ່ງ ຕາມທ່າແຮງຂອງເຂດແຄ້ວນ ແລະ ການສົ່ງເສີມ ອຸດສາຫະກຳທີ່ມີທ່າແຮງ ພ້ອມດ້ວຍ ອຸດສາຫະກຳສະໜັບສະໜຸນ ແມ່ນເປັນກຸນແຈສຳຄັນໃນການສ້າງເສດຖະກິດທີ່ໝັ້ນຄົງ ໂດຍອີງຕາມທ່າແຮ່ງຂອງທີ່ຕັ້ງ, ດ້ານວັດຖຸດິບ ແລະ ໂຄງລ່າງພື້ນຖານ ຈະຊ່ວຍສ້າງໂຄງສ້າງອຸດສາຫະກຳທີ່ສົມບູນ ຊຶ່ງບໍ່ພຽງແຕ່ຊ່ວຍເພີ່ມມູນຄ່າເສດຖະກິດໂດຍກົງເທົ່ານັ້ນ, ແຕ່ຍັງສ້າງພື້ນຖານທີ່ເຂັ້ມແຂງໃຫ້ແກ່ການພັດທະນາແບບຍືນຍົງ ໃນທຸກດ້ານ, ທັງປັບປຸງຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ໄປຈົນເຖິງການປົກປັກຮັກສາສິ່ງແວດລ້ອມ ຊຶ່ງໃນນີ້ ຈະສຸມໃສ່:

1) ສະໜັບສະໜຸນການປຸງແຕ່ງເບື້ອງຕົ້ນ ແລະ ຫັດຖະກຳທີ່ເປັນອັນສະເພາະ ຂອງພາກ ໂດຍອີງໃສ່ຈຸດແຂງ ຂອງທ້ອງຖິ່ນ ແລະ ວັດຖຸດິບທີ່ມີຢູ່ ແລະ ອຳນວຍຄວາມສະດວກໃຫ້ແກ່ການຫັນເປັນອຸດສາຫະກຳໃນເຂດຊົນນະບົດ ໂດຍການເຊື່ອມໂຍງຜູ້ຜະລິດທ້ອງຖິ່ນ ເຂົ້າກັບຕ່ອງໂສ້ມູນຄ່າລະດັບຊາດ ແລະ ການສົ່ງອອກ;

2) ສຸມໃສ່ "ກຸ່ມອຸດສາຫະກຳ" (Industrial Clusters) ແທນການຕັ້ງໂຮງງານແບບກະຈັດກະຈາຍຈຸດແຂງ ຂອງຈີນແມ່ນການສ້າງ Cluster. ແທນທີ່ຈະດຶງດູດໂຮງງານແບບຊະຊາຍ ແລະ ສົ່ງເສີມການລົງທຶນຕາມທ່າແຮງຂອງ ທີ່ຕັ້ງ ເຊັ່ນ:

- ກຸ່ມປະກອບຊິ້ນສ່ວນເອເລັກໂຕຣນິກ: ຢູ່ ນະຄອນຫຼວງວຽງຈັນ ຫຼື ສະຫວັນນະເຂດ ແມ່ນເນັ້ນໃສ່ ການລົງທຶນ ຜະລິດສາຍໄຟ ແລະ ຊິ້ນສ່ວນຂະໜາດນ້ອຍ;
- ກຸ່ມປຸງແຕ່ງກະສິກຳ: ຢູ່ ຈຳປາສັກ, ສະຫວັນນະເຂດ ຫຼື ຫຼວງນ້ຳທາ ເຊັ່ນ ການຜະລິດກາເຟ, ຢາງພາລາ, ແປ້ງ ມັນຕົ້ນ, ໝາກໄມ້;
- ກຸ່ມອຸປະກອນໄຟຟ້າ ແລະ EV: ຢູ່ຕາມແລວຊາຍແດນຕິດກັບໄທ ເພື່ອເຊື່ອມຕໍ່ກັບຖານການຜະລິດ EV ຂອງ ອາຊຽນ.
- ແລວທາງພາກເໜືອ: ເຊື່ອມຕໍ່ກັບຈີນ ຜ່ານທາງລົດໄຟ ລາວ-ຈີນ (ຫຼວງນ້ຳທາ, ບໍ່ເຕັນ, ອຸດົມໄຊ) ເນັ້ນການ ປະກອບເອເລັກໂຕຣນິກ ແລະ ໂລຈິດສະຕິກ.
- ແລວທາງພາກກາງ: (ນະຄອນຫຼວງວຽງຈັນ, ຄຳມ່ວນ) ເນັ້ນໃສ່ການລົງທຶນຜະລິດອຸດສາຫະກຳເບົາ ແລະ ອຸດ ສາຫະກຳສະໜັບສະໜູນ.
- ແລວທາງພາກໃຕ້: ເຊື່ອມຕໍ່ກັບໄທ ແລະ ຫວຽດນາມ (ສະຫວັນນະເຂດ, ຈຳປາສັກ) ເນັ້ນການປຸງແຕ່ງກະສິກຳ ແລະ ເຄື່ອງເຮືອນ. ສະຫວັນນະເຂດ ຄວນຖືກຍົກລະດັບເປັນສູນກາງການຜະລິດຫຼັກຂອງປະເທດ.

ເປົ້າໝາຍ: ນຳໃຊ້ທ່າແຮງດ້ານທີ່ຕັ້ງ ເຊັ່ນ ດ້ານໂຄງລ່າງພື້ນຖານ, ການຄົມມະນາຄົມ ແລະ ຖານການຜະລິດວັດຖຸ ດິບ ເພື່ອນຳໃຊ້ທ່າແຮງດັ່ງກ່າວ ໃນການຜະລິດ ແລະ ການປຸງແຕ່ງອຸດສາຫະກຳ ໃຫ້ເຂັ້ມແຂງ, ມີທ່າແຮງໃນການ ແຂ່ງຂັນ ດ້ານຕົ້ນທຶນການຂົນສົ່ງ ແລະ ການນຳໃຊ້ວັດຖຸດິບ.

ເພື່ອໃຫ້ບັນລຸຕາມເປົ້າໝາຍ ນອກຈາກ ຈະສຸມໃສ່ 7 ແຜນງານບູລິມະສິດຫຼັກແລ້ວ ຍັງຈະເອົາໃຈໃສ່ວຽກງານ ການຮ່ວມມື ແລະ ຄວາມສຳຄັນຂອງພາກສ່ວນປີ່ນອ້ອມ ເຊັ່ນ:

1. **ດ້ານພະລັງງານ** (Energy): ປະສານສົມທົບ ແລະ ຮ່ວມມືກັບກົມກ່ຽວຂ້ອງ ແລະ ລັດວິສາຫະກິດໄຟຟ້າລາວ ເພື່ອຮັບປະກັນສະຖຽນລະພາບດ້ານພະລັງງານໄຟຟ້າ ແລະ ຄວາມຕໍ່ເນື່ອງຂອງການສະໜອງໄຟຟ້າ ເພື່ອປ້ອງກັນບັນຫາ ໄຟຟ້າຕົກ ຫຼື ໄຟຟ້າດັບໃນບາງເຂດອຸດສາຫະກຳ ຊຶ່ງກະທົບຕໍ່ຕ່ອງໂສ້ການຜະລິດ ແລະ ເຄື່ອງຈັກໄດ້ຮັບຄວາມເສຍຫາຍ. ຮ່ວມມືໃນການແລກປ່ຽນການໃຫ້ຂໍ້ມູນ ແລະ ແຜນພັດທະນາ ສອດຄ່ອງກັນລະຫວ່າງ ການພັດທະນາຂະຫຍາຍຕາໜ່າງ ໄຟຟ້າແຮງກາງ ແລະ ສູງເຂົ້າເຖິງຈຸດພັດທະນາພື້ນຖານໂຄງລ່າງດ້ານອຸດສາຫະກຳ ເປັນຕົ້ນ: ເຂດອຸດສາຫະກຳ, ນິຄົມ ອຸດສາຫະກຳ ລວມທັງການກຳນົດນະໂຍບາຍລາຄາໄຟຟ້າທີ່ເໝາະສົມສຳລັບຂະແໜງອຸດສາຫະກຳການປຸງແຕ່ງ ເພື່ອຫຼຸດ ຕົ້ນທຶນການຜະລິດໃຫ້ສາມາດແຂ່ງຂັນໄດ້.

2. **ການສະໜອງວັດຖຸດິບ** (Raw Material Supply): ຊຸກຍູ້ສົ່ງເສີມ, ປະສານສົມທົບ ແລະ ຮ່ວມມືກັບພາກ ສ່ວນກ່ຽວຂ້ອງ ເພື່ອຮັບປະກັນການສະໜອງວັດຖຸດິບ ທັງປະລິມານ ແລະ ຄຸນນະພາບ ປ້ອນເຂົ້າຕ່ອງໂສ້ການຜະລິດ. ຫັນການສົ່ງອອກວັດຖຸດິບທີ່ມູນຄ່າຕ່ຳ ມາຜະລິດປຸງແຕ່ງເພື່ອສ້າງມູນຄ່າເພີ່ມສູງເທື່ອລະກ້າວ. ປະເພດວັດຖຸດິບທາງດ້ານ ກະສິກຳ ແລະ ເຄື່ອງປ່າຂອງດົງ ສ່ວນຫຼາຍແມ່ນຂຶ້ນກັບລະດູການ, ເຮັດໃຫ້ໂຮງງານປຸງແຕ່ງບໍ່ມີວັດຖຸດິບປ້ອນຕະຫຼອດປີ. ລວມທັງຄຸນນະພາບ ແລະ ມາດຕະຖານຂອງວັດຖຸດິບ (ເຊັ່ນ: ຜະລິດຜົນກະສິກຳ) ບາງສ່ວນຍັງບໍ່ທັນໄດ້ມາດຕະຖານ ເຕັກນິກ ເຮັດໃຫ້ການປຸງແຕ່ງເປັນຜະລິດຕະພັນສຳເລັດຮູບທີ່ມີມູນຄ່າເພີ່ມສູງເຮັດໄດ້ຍາກ ແລະ ການປັບປຸງລະບົບໂລ

ຈິສຕິກຕ່ອງໂສ້ຄວາມເຢັນ (Cold Chain) ສຳລັບຜະລິດຕະພັນກະສິກຳ ເພື່ອປ້ອງກັນການເຮັດໃຫ້ວັດຖຸດິບເນົ່າເສຍ ກ່ອນເຖິງໂຮງງານ. ສຳລັບຈາກແຮ່ທາດ ຄວນມີການສະໜອງວັນບາງປະເພດແຮ່ທາດ ແລະ ຊຸກຍູ້ໃຫ້ເປັນນິຄົມເພື່ອຜະລິດ ປຸງແຕ່ງສ້າງມູນຄ່າເພີ່ມຈາກແຮ່ທາດຢ່າງເປັນລະບົບຕ່ອງໂສ້ເຊື່ອມໂຍງກັນ ເພື່ອຊຸກຍູ້ສິ່ງເສີມການຜະລິດ ແລະ ນຳໃຊ້ ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດໃຫ້ເກີດປະໂຫຍດໃຫ້ແກ່ເສດຖະກິດ ແລະ ສັງຄົມສູງສຸດ.

3. **ການພັດທະນາສີມືແຮງງານ** (Labor & Skill Development): ແຮງງານລາວສ່ວນຫຼາຍຍັງເປັນແຮງງານ ທີ່ຂາດສີມື (Unskilled labor) ແລະ ເປັນແຮງງານລະດູການ, ໃນຂະນະທີ່ອຸດສາຫະກຳປຸງແຕ່ງທັນສະໄໝຕ້ອງການ ຈຳນວນແຮງງານທີ່ພຽງພໍ ແລະ ແຮງງານທີ່ມີທັກສະດ້ານເຕັກນິກ, ວິສະວະກຳ ແລະ ໄອທີ. ບັນຫາການຂາດແຄນແຮງ ງານຍ້ອນການຫຼັ່ງໄຫຼໄປເຮັດວຽກຢູ່ຕ່າງປະເທດ ເຮັດໃຫ້ພົບບັນຫາການຂາດແຄນແຮງງານທັງປະລິມານ ແລະ ຄຸນນະ ພາບຢູ່ໂຮງງານອຸດສາຫະກຳປຸງແຕ່ງ ຊຶ່ງກະທົບກັບແຜນການຜະລິດ ແລະ ຂະຫຍາຍທຸລະກິດ. ທິດທາງໃນຕໍ່ໜ້າ ຈະໄດ້ ປະສານສົມທົບ ແລະ ຮ່ວມມືຢ່າງໃກ້ຊິດກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ ໃນການຊ່ວຍສ້າງ, ພັດທະນາ ແລະ ຍົກລະດັບສີມືແຮງງານໃນດ້ານຕ່າງໆ ເປັນຕົ້ນ: ຍົກລະດັບສີມືແຮງງານ ແລະ ທັກສະດ້ານການນຳໃຊ້ ໄອຊີທີ, ວິຊາຊີບທີ່ໃຊ້ທັກສະສູງ, ການຊຸກຍູ້ຖ່າຍທອດຄວາມຮູ້ຈາກບັນດາໂຮງງານຂະໜາດ ໃຫຍ່ ເຕັກໂນໂລຊີສູງ ໃຫ້ແກ່ຄົນລາວ ລວມທັງການສ້າງບຸກຄະລາກອນ ແລະ ຜູ້ປະກອບການຈຸນລະວິສາຫະກິດ, ວິ ສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເພີ່ມຂຶ້ນ ພ້ອມທັງລະດົມການມີສ່ວນຮ່ວມຂອງພາກທຸລະກິດ.

4. **ການຂົນສົ່ງ ແລະ ໂລຈິສຕິກ** (Transportation): ຕົ້ນທຶນການຂົນສົ່ງ ແລະ ໂລຈິສຕິກມີລາຄາສູງ: ເຖິງ ແມ່ນວ່າຈະມີລົດໄຟ ລາວ-ຈີນ, ແຕ່ຕົ້ນທຶນການຂົນສົ່ງພາຍໃນ (First mile & Last mile) ຈາກໂຮງງານໄປຫາ ສະຖານີ ຫຼື ທ່າເຮືອບົກ ຍັງຖືວ່າສູງເມື່ອທຽບກັບພາກພື້ນ. ພ້ອມນີ້ ດ້ານພື້ນຖານໂຄງລ່າງ ເຊັ່ນ: ເສັ້ນທາງເຊື່ອມຕໍ່ ລະຫວ່າງແຫຼ່ງວັດຖຸດິບ ຫາ ໂຮງງານປຸງແຕ່ງ ບາງແຫ່ງຍັງມີສະພາບຊຸດໂຊມ, ເຮັດໃຫ້ການຂົນສົ່ງຊັກຊ້າ ແລະ ເພີ່ມຕົ້ນ ທຶນບຳລຸງຮັກສາພາຫະນະ.

5. ເຮັດວຽກຮ່ວມກັນກັບພາກສ່ວນກ່ຽວຂ້ອງ ເພື່ອແກ້ໄຂບັນຫາທີ່ຕິດພັນກັບການສົ່ງເສີມ ແລະ ພັດທະນາ ອຸດສາຫະກຳປຸງແຕ່ງເປັນຕົ້ນ: ບັນຫາຕິດພັນກັບການໃຫ້ນະໂຍບາຍດ້ານອຸດສາຫະກຳປຸງແຕ່ງ, ການກວດກາສິນຄ້າຂ້າມ ແດນ, ພາລະບົດບາດທີ່ຍັງມີຄວາມຊ້ຳຊ້ອນ ຫຼື ບໍ່ໄປແນວທາງດຽວກັນ, ການເຂົ້າເຖິງແຫຼ່ງທຶນຂອງຫົວໜ່ວຍການ ຜະລິດ, ການເຂົ້າເຖິງສິນເຊື່ອທີ່ອັດຕາດອກເບ້ຍຕ່ຳ ແລະ ໄລຍະຍາວຂຶ້ນ, ການຫັນເປັນອຸດສາຫະກຳ 4.0 (Digital Transformation) ແລະ ອື່ນໆ.

2.2.2 ແຜນງານທີ II: ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ

ການເຊື່ອມໂຍງເຂົ້າໃນຕະຫຼາດໂລກທີ່ເພີ່ມຂຶ້ນ ເປັນປັດໄຈຫຼັກໃນການສົ່ງເສີມການເຕີບໂຕທາງດ້ານ ເສດຖະກິດ, ການສ້າງວຽກເຮັດງານທຳ ແລະ ການບັນລຸຜົນສຳເລັດດ້ານການພັດທະນາທີ່ດີຂຶ້ນ. ການຄົ້ນຄວ້າທີ່ໄດ້ນຳ ໃຊ້ໄດ້ສ້າງການເຊື່ອມໂຍງທີ່ຊັດເຈນລະຫວ່າງການສົ່ງອອກທີ່ເພີ່ມຂຶ້ນ ແລະ ຜົນຜະລິດທີ່ສູງຂຶ້ນ ແລະ ວຽກທີ່ຈ່າຍຄ່າ ຕອບແທນດີຂຶ້ນ. ວຽກງານທີ່ຜ່ານມາໂດຍທະນາຄານພັດທະນາອາຊີ (ADB), ໂດຍນຳໃຊ້ແບບຈຳລອງແຮງດຶງດູດ (gravity model) ເພື່ອຄາດຄະເນທ່າແຮງການສົ່ງອອກ ໃນໄລຍະປີ 2010-2022, ພົບວ່າການສົ່ງອອກຂອງ ສປປ ລາວ ແມ່ນຕ່ຳກວ່າທ່າແຮງຂອງຕົນປະມານ 12% ເມື່ອທຽບໃສ່ GDP. ຢ່າງໃດກໍຕາມ, ສປປ ລາວ ໄດ້ສະແດງໃຫ້ ເຫັນຄວາມສາມາດໃນການຂະຫຍາຍການສົ່ງອອກ. ໃນປີ 2022, ສປປ ລາວ ໄດ້ສົ່ງອອກຫຼາຍກວ່າ 9.5 ຕື້ໂດລາ

ສະຫະລັດໃນທົ່ວໂລກ, ເຊິ່ງເປັນການເພີ່ມຂຶ້ນ 64% ທຽບໃສ່ປີ 2019 (5.8 ຕື້ໂດລາສະຫະລັດ) ແລະ ເພີ່ມຂຶ້ນຫ້າເທົ່າ ທຽບໃສ່ການສົ່ງອອກໃນປີ 2010 ທີ່ 1.9 ຕື້ໂດລາສະຫະລັດ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025) ໄດ້ໃຫ້ບູລິມະສິດແກ່ການເຊື່ອມໂຍງໃນພາກພື້ນ ແລະ ສາກົນ. ເຖິງວ່າຈະມີການເຕີບໂຕນີ້, ສປປ ລາວ ຍັງຄົງເປັນຜູ້ສົ່ງອອກຂະໜາດນ້ອຍຫຼາຍ ເຊິ່ງກວມເອົາໜ້ອຍກວ່າ 0.03% ຂອງການຄ້າໂລກ ແລະ ໜ້ອຍເມື່ອ ທຽບໃສ່ປະເທດເສດຖະກິດອາຊຽນອື່ນໆ.

ຕາຕະລາງ 1: ຂະແໜງສົ່ງອອກທີ່ເຕີບໂຕໄວທີ່ສຸດຂອງ ສປປ ລາວ, 2019-2023

ມູນຄ່າການສົ່ງອອກ (ລ້ານໂດລາສະຫະລັດ)

ລາຍລະອຽດ	2019	2020	2021	2022	2023
ໂລຫະ, ຄຳ	192	457	962	805	703
ແຮ່ເຫຼັກ ແລະ ແຮ່ເຂັ້ມຂຸ້ນ	44	84	246	495	410
ເຈ້ຍ ແລະ ເຈ້ຍແຂງ (ໜັກ)	0	2	288	306	304
ປຸ໋ຍ	108	131	139	320	401
ຫົວ ແລະ ເຫງົ້າຜັກ	90	195	270	649	334
ເຍື່ອໄມ້ (Wood pulp)	90	144	270	322	274
ເຈ້ຍ ແລະ ເຈ້ຍແຂງ (ເບົາ)	0	2	236	183	159
ແຮ່ຊິມັງ (Gypsum)	4	4	10	536	149
ນ້ຳຕານ; ຊູໂຄສ	101	34	63	217	225
ໝາກໄມ້ທີ່ກິນໄດ້	14	49	53	29	130

ແຫຼ່ງຂໍ້ມູນ: ໄດ້ມາຈາກ World Bank, World Integrated Trade Solution https://wits.worldbank.org/

ໃນໄລຍະປີ 2019-2023, ການສົ່ງອອກໄຟຟ້າໄປຍັງປະເທດເສດຖະກິດເພື່ອນບ້ານໄດ້ເພີ່ມຂຶ້ນເກືອບສອງ ເທົ່າ ຈາກ **1.3 ຕື້ໂດລາສະຫະລັດ ເປັນ 2.65 ຕື້ໂດລາສະຫະລັດ ແລະ ກວມເອົາຫຼາຍກວ່າໜຶ່ງສ່ວນສາມຂອງຍອດລວມ.** ຜະລິດຕະພັນຊັບພະຍາກອນທຳມະຊາດຈາກຂະແໜງບໍ່ແຮ່, ປ່າໄມ້, ແລະ ກະສິກຳ ກວມເອົາການສົ່ງອອກທີ່ເຕີບໂຕໄວ ທີ່ສຸດສິບອັນດັບ (ໃນລະດັບ HS 6-digit) ຕາມມູນຄ່າ, ດັ່ງທີ່ສະແດງຂ້າງເທິງໃນຕາຕະລາງ 1.

ການສົ່ງອອກຂອງ ສປປ ລາວ ແມ່ນລວມສູນຢູ່ໃນຈຳນວນຜະລິດຕະພັນທີ່ເພີ່ມມູນຄ່າຕ່ຳທີ່ຂ້ອນຂ້າງໜ້ອຍ. ອາຫານ ແລະ ຜັກ, ໂລຫະກຶບ, ແຮ່ທາດ, ແລະ ເຊື້ອໄຟ, ລວມທັງການສົ່ງອອກໄຟຟ້າ ກວມເອົາຫຼາຍກວ່າ 60% ຂອງ ການສົ່ງອອກທັງໝົດໃນປີ 2019. ການສົ່ງອອກສ່ວນໃຫຍ່ຂອງ ສປປ ລາວ ແມ່ນມຸ່ງໜ້າໄປຍັງປະເທດໄທ, ຈີນ ແລະ ຫວຽດນາມ. ໃນປີ 2021, ມູນຄ່າການສົ່ງອອກຂອງ ສປປ ລາວ ໄປຍັງສາມຄູ່ຮ່ວມຄ້າເຫຼົ່ານີ້ ກວມເອົາ 80% ຂອງ ການສົ່ງອອກທັງໝົດ. ສະຫຼຸບແລ້ວ, ສປປ ລາວ ສົ່ງອອກຜະລິດຕະພັນທີ່ເພີ່ມມູນຄ່າຕ່ຳໃນຂອບເຂດທີ່ແຄບ ໄປຍັງ ຈຳນວນປະເທດທີ່ຂ້ອນຂ້າງໜ້ອຍ. ດ້ວຍການສົ່ງອອກທີ່ລວມສູນຢູ່ໃນຜະລິດຕະພັນຕົ້ນຕໍ ແລະ ຜະລິດຕະພັນທີ່ເພີ່ມ

ມູນຄ່າຕ່ຳ, ການເຂົ້າຮ່ວມຂອງ ສປປ ລາວ ໃນລະບົບຕ່ອງໂສ້ມູນຄ່າທົ່ວໂລກ (GVC) ແມ່ນໜ້ອຍຫຼາຍ ແລະ ຕ່ຳກວ່າ ປະເທດເພື່ອນບ້ານຫຼາຍ. ສປປ ລາວ ມີທ່າແຮງສຳລັບການເຕີບໂຕຂອງການຄ້າທີ່ສຳຄັນທັງປະລິມານ ແລະ ຄຸນນະພາບ (ມີການຂະຫຍາຍຕົວເພີ່ມຂຶ້ນ ແລະ ຄວາມຫຼາກຫຼາຍ).

ການບັນລຸເປົ້າໝາຍໃນການຂະຫຍາຍ ແລະ ຫຼາກຫຼາຍ ໃນການສົ່ງອອກຂອງ ສປປ ລາວ ຮຽກຮ້ອງໃຫ້ ອຄ ໃຫ້ບູລິມະສິດແກ່ການປັບປຸງສະພາບແວດລ້ອມທຸລະກິດ ແລະ ການຄຸ້ມຄອງກວດກາ, ການຫຼຸດຜ່ອນຕົ້ນທຶນການຄ້າ, ການຂະຫຍາຍຄວາມພ້ອມຂອງທຶນມະນຸດ, ແລະ ການຮັບປະກັນສະຖຽນລະພາບເສດຖະກິດມະຫາພາກ ພາຍໃນ ສະພາບການໂລກທີ່ປ່ຽນແປງງ່າຍຂຶ້ນ. ໃນປີ 2026, ສປປ ລາວ ຈະຫຼຸດພົ້ນຈາກການເປັນປະເທດດ້ອຍພັດທະນາ. ແຕ່ ໃນສະຖານະທີ່ ສປປລາວ ຍັງເປັນປະເທດດ້ອຍພັດທະນາ ສປປ ລາວ ຈະໄດ້ຮັບສິດທິພິເສດທາງການຄ້າສາກົນ (GSP) ໃນ 24 ຕະຫຼາດດ້ວຍການສົ່ງອອກສິນຄ້າໃນອັດຕາພາສີທີ່ຕ່ຳ ຫຼື ຍົກເວັ້ນບາງລາຍການ; ພາຍຫຼັງຈາກການ ຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ໃນປີ 2026, ພາສີສະເລ່ຍທີ່ຜູ້ສົ່ງອອກຂອງ ສປປ ລາວ ປະເຊີນຢູ່ໃນຕະຫຼາດ ສາກົນ GSP ເດີມ ຈະເພີ່ມຂຶ້ນເປັນ 4.1% ຈາກ 0.3%. ສູນການຄ້າສາກົນ (ITC) ຄາດຄະເນວ່າ ສປປ ລາວ ອາດ ຈະປະສົບກັບການຫຼຸດລົງ 7.3% ໃນການສົ່ງອອກທີ່ໄດ້ຄາດຄະເນໄວ້, ໂດຍ 70% ຂອງການຫຼຸດລົງແມ່ນມາຈາກການ ສົ່ງອອກຢາງພາລາທຳມະຊາດ, ຜະລິດຕະພັນເຈ້ຍ, ແລະ ຜະລິດຕະພັນເມັດພືດໄປຍັງ ສປ ຈີນ. ຫຼັງຈາກການຫຼຸດພົ້ນ ຈາກປະເທດດ້ອຍພັດທະນາ ການຄ້າຂອງ ສປປ ລາວ ກັບຈີນ ຈະຖືກຄຸ້ມຄອງໂດຍຂໍ້ຕົກລົງການຄ້າເສລີ ຈີນ-ອາຊຽນ (China-ASEAN FTA) ຫຼື ຂໍ້ຕົກລົງການຄ້າອາຊີ-ປາຊີຟິກ (APTA).

ໃນຕະຫຼາດສະຫະພາບຢູໂຣບ (EU), ສປປ ລາວ ຈະຫັນປ່ຽນຈາກໂຄງການ "ທຸກສິ່ງທຸກຢ່າງຍົກເວັ້ນອາວຸດ" (EBA) ເຊິ່ງເປັນໂຄງການຍົກເວັ້ນໂກຕ້າ ແລະ ພາສີສຳລັບປະເທດດ້ອຍພັດທະນາ ໄປສູ່ໂຄງການ GSP. ເຊິ່ງສູນການ ຄ້າສາກົນໄດ້ປະເມີນວ່າການສົ່ງອອກຈະຫຼຸດລົງປະມານ 121.7 ລ້ານໂດລາສະຫະລັດ. ນອກຈາກນີ້, ການຄະເນຂອງ ສູນການຄ້າສາກົນຍັງສະແດງໃຫ້ເຫັນການສົ່ງອອກໄປຍັງບັນດາຮາຊະອານາຈັກ, ຍີ່ປຸ່ນ ແລະ ຄານາດາ ກໍ່ຈະຫຼຸດລົງ.

ເປົ້າໝາຍທີ່ສຳຄັນປະກອບມີ:

1. ການປັບປຸງຜົນງານຂອງ ສປປ ລາວ ໃນຫົວຂໍ້ “ການຄ້າສາກົນ”ຂອງບົດລາຍງານ ຄວາມພ້ອມທາງດ້ານທຸລະ ກິດ ຂອງທະນາຄານໂລກ (ປັບປຸງ 10% ຈາກປີ 2025).
2. ເວລາສະເລ່ຍໃນການກວດກາສຳເລັດການນຳເຂົ້າ, ສົ່ງອອກ, ແລະ ຜ່ານແດນ, ຜ່ານດ່ານຊາຍແດນ (ຫຼຸດລົງ 50% ຮອດປີ 2030).
3. ຈຳນວນການບໍລິການປັບທຽບ (calibration services) ທີ່ສະເໜີເພີ່ມຂຶ້ນ 10%; ຈຳນວນຫ້ອງທົດລອງ ທີ່ໄດ້ຮັບການຮັບຮອງເພີ່ມຂຶ້ນສອງເທົ່າ (ໂດຍສະເພາະໃນດ້ານອາຫານ/ກະສິກຳ) ຮອດປີ 2030.
4. ການຜ່ານກົດໝາຍທີ່ໄດ້ຮັບການປັບປຸງ ທີ່ສອດຄ່ອງກັບ WTO-TRIPS ສຳລັບປະເພດຊັບສິນທາງປັນຍາ (IP) ທີ່ສຳຄັນ (ຮອດປີ 2027).
5. ການຫຼຸດຜ່ອນເວລາ ແລະ ຕົ້ນທຶນໃນການລົງທະບຽນ IP ທີ່ສຳຄັນ (ຫຼຸດລົງ 25% ຮອດປີ 2030).

6. ລະບົບການຍື່ນເອກະສານທາງເອເລັກໂຕຣນິກ (e-filing system) ສຳລັບເຄື່ອງໝາຍການຄ້າທີ່ສາມາດນຳໃຊ້ໄດ້ຢ່າງຄົບຖ້ວນ ທີ່ອະນຸຍາດໃຫ້ມີການສະໝັກອອນລາຍ, ການຕິດຕາມສະຖານະຂອງຄຳຮ້ອງ ແລະ ການຊຳລະຄ່າທຳນຽມ, (ເລີ່ມດຳເນີນງານຮອດປີ 2030).
7. ການເພີ່ມຂຶ້ນຂອງການສະໝັກ IP ທີ່ຍື່ນໂດຍຜູ້ທີ່ຢູ່ອາໄສ ແລະ ບໍ່ແມ່ນຜູ້ທີ່ຢູ່ອາໄສ.
8. ຂະຫຍາຍຕະຫຼາດສິ່ງອອກສິນຄ້າໃຫ້ຫຼາຍຂຶ້ນຜ່ານສັນຍາການຄ້າ ແລະ ສິດທິພິເສດດ້ານການຄ້າ ພາຍໃນປີ 2030.
9. ສ້າງຄວາມເຂັ້ມແຂງດ້ານການເຈລະຈາການຄ້າ ແລະ ການບັງຄັບໃຊ້ສັນຍາໃຫ້ດີຂຶ້ນກ່ວາເກົ່າ ພາຍໃນປີ 2030

2.2.2.1 ປັບປຸງນະໂຍບາຍ ແລະ ເຈລະຈາການຄ້າ

ການຄ້າ ເປັນ ແກນກາງສຳຄັນ ໃນການຂ້າມຜ່ານຂອງ ລາວ ໄປສູ່ປະເທດທີ່ມີເສດຖະກິດລາຍຮັບ-ປານກາງ ມີຄວາມຍືດຍຸນທົນທານ, ມີສ່ວນຮ່ວມ ແລະ ຫັນເປັນອຸດສາຫະກຳ. ໃນຖານະປະເທດ ເຊື່ອມຈອດ, ລາວ ອີງໃສ່ລະບົບການຄ້າທີ່ເປີດກວ້າງ ແລະ ສາມາດຄາດຄະເນໄດ້ ເພື່ອໃຫ້ສາມາດເຂົ້າເຖິງປັດໃຈນຳເຂົ້າທີ່ຈຳເປັນ, ດຶງດູດເອົາການລົງທຶນ ແລະ ຂະຫຍາຍການສົ່ງອອກ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ກະຊວງອຸດສາຫະກຳ ແລະ ການຄ້າ (MOIC) ຈະຈັດຕັ້ງປະຕິບັດນະໂຍບາຍການຄ້າແບບທັນສະໄໝ ເພື່ອຫຼຸດຕົ້ນທຶນ, ເສີມຂະຫຍາຍຄວາມອາດສາມາດຂອງການແກ້ງແຍ້ງແຂ່ງຂັນ ແລະ ມີສ່ວນຮ່ວມຫຼາຍຂຶ້ນໃນຕ່ອງໂສ້ຂອງການສ້າງມູນຄ່າເພີ່ມຂອງພາກພື້ນ ແລະ ຂອງໂລກ.

ນະໂຍບາຍການຄ້າສຳລັບປີ 2026-2030 ຈະໃຫ້ຄວາມສຳຄັນກັບ ສາມເສົາຫຼັກຍຸດທະສາດ ຮ່ວມກັນຈະເຮັດໃຫ້ລາວກາຍເປັນເສດຖະກິດທີ່ມີຄວາມອາດສາມາດໃນການແກ້ງແຍ້ງແຂ່ງຂັນ, ເຊື່ອມໂຍງເຊື່ອມຈອດ ແລະ ຂັບເຄື່ອນດ້ວຍການສົ່ງອອກ ຫຼາຍຂຶ້ນກວ່າເກົ່າ:

1. ເພີ່ມການອຳນວຍຄວາມສະດວກ ແລະ ຄວາມມີປະສິດທິພາບທາງດ້ານການຄ້າ.
2. ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ໃຫ້ເລິກເຊິ່ງກວ່າເກົ່າ.
3. ເສີມຂະຫຍາຍການບໍລິຫານດ້ານການຄ້າໃຫ້ມີຄວາມໂປ່ງໃສ ແລະ ສາມາດແກ້ງແຍ້ງແຂ່ງຂັນ.
4. ການສົ່ງເສີມ ແລະ ພັດທະນາການຄ້າພາຍໃນ

ແຕ່ລະເສົາຫຼັກທາງຍຸດທະສາດໄດ້ຮັບການສະນັບສະໜູນຈາກຂົ້ນວາງນະໂຍບາຍສຳຄັນ ແລະ ມາດຕະການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດດັ່ງທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້:

ແຜນວຽກຈຸດສຸມທີ 1: ຍົກສູງການອຳນວຍຄວາມສະດວກ ແລະ ຄວາມມີປະສິດທິພາບທາງດ້ານການຄ້າ

ຫຼຸດຜ່ອນຕົ້ນທຶນການຄ້າ ແລະ ເວລາໃນການອອກອະນຸຍາດ ຜ່ານການປັບປຸງຂັ້ນຕອນໃຫ້ກະທັດລັດ, ຫັນໄປສູ່ແບບອັດຕະໂນມັດ ແລະ ການຄຸ້ມຄອງດ່ານແບບກົມກຽວລວມສູນ ດ້ວຍມາດຕະການຈັດຕັ້ງປະຕິບັດ ດັ່ງຕໍ່ໄປນີ້:

1. ເຮັດໃຫ້ຂັ້ນຕອນແຈ້ງພາສີ ແລະ ການຜ່ານດ່ານມີຄວາມກະທັດຮັດ

(i) ຫຼຸດຜ່ອນ ຫຼື ລົບລ້າງອັດຕາພາສີທີ່ບໍ່ຈຳເປັນ ແລະ ຈັດລະບຽບໂຄງສ້າງອັດຕາພາສີຄືນໃໝ່ ເພື່ອເຮັດໃຫ້ການອອກອະນຸຍາດດ້ານການຄ້າມີຄວາມກະທັດຮັດ ແລະ ຫຼຸດຜ່ອນຕົ້ນທຶນການປະຕິບັດເພື່ອຄວາມສອດຄ່ອງ.

(ii) ຂະຫຍາຍແພັດຟອມດີຈີຕອນສຳລັບການບໍລິການດ້ານພາສີແລະການບໍລິການປະຕູດຽວກ້າວໄປສູ່ການຍື່ນສະເໜີເອກະສານຜ່ານລະບົບອັດຕະໂນມັດ, ຍົກສູງຄວາມໂປ່ງໃສ ແລະ ເລັ່ງລັດຂັ້ນຕອນການແຈ້ງຜ່ານດ່ານ.

2. ເຮັດໃຫ້ມາດຕະການທີ່ບໍ່ແມ່ນພາສີມີຄວາມກະທັດຮັດ

(iii) ທົບທວນ ແລະ ເຮັດໃຫ້ມາດຕະການທີ່ບໍ່ແມ່ນພາສີ (NTMs)ມີຄວາມກະທັດຮັດ, ໃຫ້ຄວາມສຳຄັນກັບການຫຼຸດຜ່ອນມາດຕະການທີ່ຊ້ຳຊ້ອນ ຫຼື ຈຳກັດການຄ້າ, ໂດຍສະເພາະສຳລັບສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ປັດໄຈນຳເຂົ້າ ຫຼື ວັດຖຸດິບທາງອຸດສາຫະກຳ.

(iv) ເສີມຂະຫຍາຍການປະສານງານລະຫວ່າງຂະແໜງການກ່ຽວຂ້ອງ ເພື່ອເຮັດໃຫ້ມາດຕະການທີ່ບໍ່ແມ່ນພາສີເຊື່ອມສານລະຫວ່າງກະຊວງ ມີຄວາມສອດຄ່ອງກົມກຽວກັນ ແລະ ຫຼຸດຜ່ອນການຊ້ຳຊ້ອນກັນ.

(v) ດຳເນີນການປະເມີນຜົນກະທົບມາດຕະການ NTMs ກ່ອນ ແລະ ຫຼັງປະກາດໃຊ້ ແລະ ຮັບປະກັນການເຜີຍແຜ່ ທຸກລະບຽບການແລະຂໍ້ຮຽກຮ້ອງ ທັງໝົດໃຫ້ທັນເວລາ ລົງໃນເວັບໄຊການຄ້າລາວ ເພື່ອໃຫ້ສາທາລະນະຊົນ ສາມາດເຂົ້າເຖິງການປ່ຽນແປງນະໂຍບາຍໄດ້ຢ່າງທັນການ.

3. ເພີ່ມທະວີການອຳນວຍຄວາມສະດວກການຄ້າ ແລະ ປະສິດທິພາບຂອງການແຈ້ງຜ່ານດ່ານ

(vi) ເຮັດໃຫ້ເງື່ອນໄຂການອະນຸຍາດນຳເຂົ້າ-ສົ່ງອອກມີຄວາມກະທັດຮັດ ແລະ ເສີມຂະຫຍາຍການປະສານງານລະຫວ່າງຂະແໜງການກ່ຽວຂ້ອງປະຈຳຢູ່ດ່ານທີ່ສຳຄັນ.

(vii) ຈັດຕັ້ງປະຕິບັດຂັ້ນຕອນການກວດກາແບບຮ່ວມກັນ ແລະ ລະບົບຕິດຕາມສິນຄ້າແບບດິຈິຕອນ ເພື່ອຫຼຸດຜ່ອນເວລາຜ່ານດ່ານ ແລະ ຍົກສູງຄວາມໂປ່ງໃສ.

4. ພັດທະນາເຄື່ອງມື ແລະ ບໍລິການການຄ້າແບບດິຈິຕອນໃຫ້ມີຄວາມກ້າວໜ້າ

(viii) ສົ່ງເສີມການນຳໃຊ້ເຄື່ອງມືການຄ້າດິຈິຕອນ ເຊັ່ນ: ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເອເລັກໂຕຣນິກ (e-certificates of origin), ໃບບິນສິນຄ້າອີເລັກໂທຣນິກ (e-invoicing) ແລະ ລະບົບການຈ່າຍເງິນແບບເອເລັກໂຕຣນິກ (e-payment systems).

(ix) ຍົກສູງຄວາມພ້ອມການຄ້າດ້ານການບໍລິການ (ການຂົນສົ່ງໂລຈິສຕິກ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ, ບໍລິການດ້ານວິຊາຊີບ) ໃຫ້ສອດຄ່ອງກັບສັນຍາວ່າດ້ວຍເສດຖະກິດດິຈິຕອນອາຊຽນ (ASEAN Digital Economy Framework Agreement).

(x) ສ້າງພາລະບົດບາດຄຸ້ມຄອງທີ່ຊັດເຈນສຳລັບເວັບໄຊການຄ້າລາວ ໂດຍກຳນົດຄວາມຮັບຜິດຊອບຂອງກົມກ່ຽວຂ້ອງ ແລະ ກຳນົດກົນໄກການປະສານງານລະຫວ່າງກະຊວງເພື່ອສົ່ງເສີມການນຳໃຊ້ເວັບໄຊທີ່ມີຢູ່ໃຫ້ຫຼາຍຂຶ້ນ.

ແຜນວຽກຈຸດສຸມທີ 2: ເຊື່ອມໂຍງພາກພື້ນ ແລະ ອຸດສາຫະກຳໃຫ້ເລິກເຊິ່ງ

ເສີມຂະຫຍາຍການເຊື່ອມໂຍງກັບອາຊຽນ ແລະ ຫົວໜ່ວຍເສດຖະກິດໃກ້ຄຽງເພື່ອຂະຫຍາຍການເຂົ້າເຖິງຕະຫຼາດ ແລະ ສ້າງເງື່ອນໄຂໃຫ້ອຸດສາຫະກຳເຕີບໂຕໃນຕ່ອງໂສ້ມູນຄ່າເພີ່ມທີ່ເປັນບຸລິມະສິດ ດ້ວຍມາດຕະການ ດັ່ງຕໍ່ໄປນີ້:

5. ພັດທະນາການຄ້າພາກພື້ນ ແລະ ສອງຝ່າຍ

(xi) ເຈລະຈາ ແລະ ຈັດຕັ້ງປະຕິບັດຂອບການຮ່ວມມືການຄ້າເຈາະຈົງ ກັບຄູ່ຄ້າ ຫຼັກ (ເຊັ່ນ: ໄທ, ຫວຽດນາມ, ຈີນ).

(xii) ເຊື່ອມສານມາດຕະຖານ ແລະ ລະບົບການຢັ້ງຢືນ (ເຊັ່ນ: ສ່ວນປະກອບປ່ຽ, ການທົດສອບຄຸນນະພາບຂອງແຮ່ທາດ, ແລະ ເອກະສານການແຈ້ງພາສີ) ໃຫ້ກົມກຽວເປັນເອກະພາບກັນເພື່ອຫຼຸດຜ່ອນສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ.

6. ພັດທະນາການຂົນສົ່ງໂລຈິດສະຕິກຂ້າມແດນ ແລະ ການເຊື່ອມຕໍ່ໂຄງລ່າງພື້ນຖານ

(xiii) ສ້າງບົດບັນທຶກຄວາມເຂົ້າໃຈທາງຍຸດທະສາດ (MOUs) ດ້ານການຂົນສົ່ງໂລຈິດສະຕິກ ແລະ ແລວທາງອຳນວຍຄວາມສະດວກການຄ້າ ທີ່ເຊື່ອມຕໍ່ລາວກັບໄທ, ຫວຽດນາມ ແລະ ຈີນ ເພື່ອເສີມຂະຫຍາຍການເຊື່ອມຈອດລະຫວ່າງພາກພື້ນ ແລະ ຫຼຸດຜ່ອນເວລາ ແລະ ຕົ້ນທຶນຂອງການຂົນສົ່ງ.

(xiv) ພັດທະນາເຂດໂລຈິດສະຕິກພິເສດໃກ້ກັບເຂດເສດຖະກິດພິເສດ (SEZ) ສຳຄັນ ເພື່ອສະໜອງການບໍລິການສາງເກັບສິນຄ້າແບບຄົບວົງຈອນ, ບໍລິການສ້າງມູນຄ່າເພີ່ມ (ການຫຸ້ມຫໍ່, ການຕິດສະຫຼາກ, ການປະກອບສິນຄ້າ), ແລະ ໃຫ້ທາງເລືອກເສັ້ນທາງຜ່ານຂົ້ນພິເສດ.

7. ເຮັດໃຫ້ຕ່ອງໂສ້ມູນຄ່າເພີ່ມອຸດສາຫະກຳທີ່ເປັນບຸລິມະສິດມີການຂະຫຍາຍຕົວ

(xv) ອຳນວຍຄວາມສະດວກການນຳເຂົ້າທີ່ເປັນກຸນແຈ ປັດໄຈນຳເຂົ້າດ້ານອຸດສາຫະກຳສຳຄັນ, ເຊັ່ນ: ນິໂຕຣເຈນ, ຟອສເຟດ, ສານກະຕຸ້ນໃຫ້ເກີດປະຕິກິລິຍາ, ແລະ ສານອະນຸມູນ ເຊັ່ນ: ໂຊດາໄຟ, ເພື່ອເຮັດໃຫ້ການຜະລິດປຸຍ ແລະ ການປຸງແຕ່ງແຮ່ທາດພາຍໃນປະເທດເກີດຂຶ້ນໄດ້.

(xvi) ປະຕິບັດມາດຕະການອຳນວຍຄວາມສະດວກການຄ້າ ສອດຄ່ອງເຂົ້າກັບການພັດທະນາເຂດອຸດສາຫະກຳ ແລະ ເຂດເສດຖະກິດພິເສດ, ໂດຍຮັບປະກັນບໍລິການການດ້ານໂລຈິດສະຕິກຂົນສົ່ງ ແລະ ການແຈ້ງພາສີໃຫ້ເປັນອັນດຽວກັນ.

8. ຂະຫຍາຍຕະຫລາດສິ່ງອອກສິນຄ້າຜ່ານສັນຍາການຄ້າ ແລະ ສິດທິພິເສດດ້ານການຄ້າ ພາຍໃນປີ 2030

(xvii) ກຳນົດບັນດາຕະຫຼາດຕ່າງປະເທດທີ່ເປັນບຸລິມະສິດໂດຍອີງໃສ່ທ່າແຮງການສົ່ງອອກ ແລະ ຄວາມຕ້ອງການ ແລະ ເພີ່ມທະວີການນຳໃຊ້ບັນດາສັນຍາການຄ້າ ແລະ ສິດທິພິເສດທາງດ້ານການຄ້າທີ່ມີຢູ່ແລ້ວ.

9. ສ້າງຄວາມເຂັ້ມແຂງໃນ ດ້ານການເຈລະຈາການຄ້າ ແລະ ການບັງຄັບໃຊ້ສັນຍາ ພາຍໃນປີ 2030

(xviii) ຍົກລະດັບຄວາມຊ່ຽວຊານດ້ານວິຊາການໃນການເຈລະຈາການຄ້າ ແລະ ການວິເຄາະດ້ານກົດໝາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາກົນໄກປຶກສາຫາລືນຳຂະແໜງການຂອງ ສປປ ລາວ.

ແຜນວຽກຈຸດສຸມທີ 3: ເສີມຂະຫຍາຍການຄຸ້ມຄອງການຄ້າໃຫ້ເປັນແບບໂປ່ງໃສ ແລະ ແຂ່ງຂັນໄດ້

ສ້າງສະພາບແວດລ້ອມທາງການຄ້າ ໃຫ້ມີຄວາມໂປ່ງໃສ ແລະ ມີລະບຽບກົດໝາຍເປັນບ່ອນອີງ ເພື່ອສະໜັບສະໜຸນການແຂ່ງຂັນທີ່ເປັນທຳ, ປົກປ້ອງຜູ້ຊົມໃຊ້ ແລະ ສົ່ງເສີມພາກເອກະຊົນຢ່າງມີຊີວິດຊີວາ ດ້ວຍມາດຕະການດັ່ງຕໍ່ໄປນີ້:

10. ຮັບປະກັນຄວາມສອດຄ່ອງດ້ານລະບຽບກົດໝາຍ ແລະ ການບໍລິຫານຄຸ້ມຄອງທີ່ດີ

(xix) ກຳນົດໃຫ້ມີການປະເມີນຜົນກະທົບດ້ານລະບຽບການ (RIAs) ສຳລັບລະບຽບການທີ່ອອກໃໝ່ ຫຼື ທີ່ມີການປັບປຸງທັງໝົດທີ່ກ່ຽວຂ້ອງກັບການຄ້າ ແລະ ຮັບປະກັນການເຜີຍແຜ່ຂໍ້ມູນການປັບປຸງດ້ານລະບຽບການທັງໝົດໃຫ້ທັນເວລາ ລົງໃນເວັບໄຊການຄ້າລາວ ເພື່ອໃຫ້ສາທາລະນະຊົນສາມາດເຂົ້າເຖິງການປ່ຽນແປງນະໂຍບາຍໄດ້ຢ່າງທັນການ.

11. ບັງຄັບໃຊ້ກົດໝາຍການແຂ່ງຂັນ ແລະ ການປົກປ້ອງຜູ້ຊົມໃຊ້

(xx) ສຳເລັດ ແລະ ນຳໃຊ້ກົນໄກການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ ແລະ ກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້.

ພາຍໃຕ້ກົດຈະກຳເຫຼົ່ານີ້, ບຸລິມະສິດໃນການການນຳເຂົ້າ ແລະ ການສົ່ງອອກທາງອຸດສາຫະກຳຂອງລາວ ມີດັ່ງນີ້:

ການນຳເຂົ້າທາງຍຸດທະສາດ (ເພື່ອສະໜັບສະໜຸນຕ່ອງໂສ້ມູນຄ່າເພີ່ມພາຍໃນປະເທດ):

- ປັດໄຈການຜະລິດປຸຍ: ທາດນິໂຕຣເຈນ (ຢູເຣຍ/ອຳໂມເນຍ), ຟອສເຟດ.

- ສານທົດສອບ: ທາດໂຊດຽມໄຮດຣອກໄຊດ (ໂຊດາໄຟ), ປູນຂາວເພື່ອການຫຼອມອາລູມິນາ.
- ປັດໄຈຮັບໃຊ້ແກ່ການຂຸດຄົ້ນແຮ່: ສານເຄມີຕ່າງໆ ເຊັ່ນ ອາຊິດຊູນຟູຣິກ, ອໍາໂມເນຍຊັນເຟດ/ບາຍຄາໂບເນດ ສໍາລັບແຮ່ທາດເຊັ່ນ ຄໍາ, ທອງແດງ ແລະ ແຮ່ທາດຫາຍາກ.

ສິນຄ້າສົ່ງອອກຍຸດທະສາດ (ເພື່ອເສີມຂະຫຍາຍການເຊື່ອມໂຍງພາກພື້ນ):

- ປຸຍປະສົມ (NPK): ນໍາໃຊ້ຖານໂປຕັດຊຽມຂອງລາວເພື່ອການສະໜອງປຸຍໃຫ້ແກ່ພາກພື້ນ.
- ແຮ່ທາດປຸງແຕ່ງ: ອາລູມິນາ, ຄໍາ, ທອງ, ແຮ່ທາດຫາຍາກ ແລະ ແຮ່ທາດອື່ນໆທີ່ມີທ່າແຮງທີ່ຈະພັດທະນາຮອດ ປີ 2030.

ດ້ວຍການຈັດຕັ້ງຜັນຂະຫຍາຍສາມເສົາຫຼັກຍຸດທະສາດການຄ້າດັ່ງກ່າວ ລາວຈະສາມາດເຮັດໃຫ້ນະໂຍບາຍ ການຄ້າ ກາຍເປັນແຮງຂັບເຄື່ອນສໍາຄັນໃນການປ່ຽນແປງໂຄງສ້າງທາງອຸດສາຫະກໍາ ແລະ ການຂະຫຍາຍຕົວແບບຍືນ ຍົງ. ລະບົບການຄ້າແບບທັນສະໄໝ, ໂປ່ງໃສ ແລະ ເຊື່ອມໂຍງເຂົ້າກັບພາກພື້ນ ຈະເຮັດໃຫ້ລາວ ສາມາດນໍາເຂົ້າປັດໃຈ ອຸດສາຫະກໍາທີ່ຈໍາເປັນໄດ້ຢ່າງມີປະສິດທິພາບ, ຂະຫຍາຍການສົ່ງອອກທີ່ມີມູນຄ່າເພີ່ມສູງ, ແລະ ມີສ່ວນຮ່ວມເຂົ້າ ໃນຕ່ອງໂສ້ການຜະລິດຂ້າມຊາດໄດ້ຢ່າງເລິກເຊິ່ງ, ກໍ່ສ້າງພື້ນຖານອັນສໍາຄັນເພື່ອກ້າວເປັນຖານເສດຖະກິດທີ່ເຊື່ອມຈອດ ແລະ ສາມາດແກ້ງແຍ້ງແຂ່ງຂັນພາຍໃນອາຊຽນ.

ແຜນວຽກຈຸດສຸມທີ 4: ການສົ່ງເສີມ ແລະ ພັດທະນາການຄ້າພາຍໃນ

ສ້າງລະບົບການຄ້າພາຍໃນໃຫ້ມີຄວາມເຂັ້ມແຂງ ໂດຍການຫັນວິສາຫະກິດທີ່ຢູ່ນອກລະບົບໃຫ້ ເຂົ້າສູ່ລະບົບ ທາງການ ຜ່ານການສົ່ງເສີມການດໍາເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. ພ້ອມນັ້ນ, ພັດທະນາ ແລະ ປັບປຸງການຄຸ້ມຄອງຕະຫຼາດພາຍໃນ ແລະ ການຈໍາໜ່າຍຈໍລະຈອນສິນຄ້າ, ລວມທັງ ການຄ້າເອເລັກໂຕຣນິກ ໃຫ້ ມີປະສິດທິພາບ, ປະສິດທິຜົນ ແລະ ທັນສະໄໝ. ໃນຂະນະດຽວກັນ, ສົ່ງເສີມການແຂ່ງຂັນທຸລະກິດທີ່ເປັນທໍາ ເພື່ອສ້າງ ສະພາບແວດລ້ອມທີ່ເອື້ອອໍານວຍໃນການດໍາເນີນທຸລະກິດ ແລະ ເພີ່ມທະວີການປົກປ້ອງຜູ້ຊົມໃຊ້ ໂດຍສະເພາະ ກຸ່ມຄົນ ບອບບາງ ແລະ ເພີ່ມທະວີການຄຸ້ມຄອງກວດກາການຄ້າ ໃຫ້ໂປ່ງໃສ ແລະ ທັນສະໄໝ. ພ້ອມດຽວກັນນັ້ນ, ກໍ່ສ້າງກົນໄກ ການຕິດຕາມລາຄາສິນຄ້າ ແລະ ຄ່າບໍລິການ ແລະ ກົນໄກການແລກປ່ຽນສິນຄ້າໃນຕະຫຼາດພາຍໃນ ເພື່ອສົ່ງເສີມການຈໍາ ໜ່າຍ, ດຸ່ນດ່ຽງຄວາມສະໜອງ ແລະ ຄວາມຕ້ອງການ ແນໃສ່ເພື່ອສ້າງສະຖຽນລະພາບດ້ານລາຄາ ແລະ ການເຂົ້າເຖິງ ຕະຫຼາດຢ່າງໝັ້ນທ່ຽງ ສໍາລັບຜູ້ຜະລິດ ແລະ ຜູ້ຊົມໃຊ້ ຊຶ່ງຈະສຸມໃສ່ 04 ໜ້າວຽກຫຼັກດັ່ງນີ້:

1. **ການເຊື່ອມໂຍງຕະຫຼາດພາຍໃນ ແລະ ລະບົບການຈໍາໜ່າຍພາຍໃນ**
   1) **ສ້າງເຄືອຂ່າຍການກະຈາຍສິນຄ້າພາຍໃນໃຫ້ທັນສະໄໝ** ເພື່ອເຊື່ອມໂຍງຕະຫຼາດຈໍາໜ່າຍສິນຄ້າ ກັບ ຊາວ ກະສິກອນ, ຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ຊົມໃຊ້ ເຊັ່ນ: ການສ້າງຕະຫຼາດມາດຕະຖານ, ຕະຫຼາດປະມູນສິນຄ້າ, ການຄຸ້ມຄອງລະບົບຕ່ອງໂສ້ການສະໜອງ ແລະ ຄວາມຕ້ອງການ; ຄົ້ນຄວ້າສຶກສາຄວາມເປັນໄປໄດ້ໃນການ ສ້າງຕະຫຼາດປະມູນ ພ້ອມທັງ ລົງເກັບກໍາຂໍ້ມູນສິນຄ້າທ່າແຮງ (ສິນຄ້າກະສິກໍາສົ່ງອອກ). ພ້ອມທັງ, ຖອດຖອນ ບົດຮຽນຕົວຈິງຢູ່ປະເທດໃກ້ຄຽງ (ເຊັ່ນ: ໄທ ຫຼື ຈີນ) ເພື່ອນໍາມາເປັນຂໍ້ມູນພື້ນຖານໃນການຄົ້ນຄວ້າ.
   2) ສ້າງລະບົບ ການລົງທະບຽນສິນຄ້າຈໍາໜ່າຍພາຍໃນ ເພື່ອຕິດຕາມຄວາມດຸ່ນດ່ຽງ ລະຫວ່າງ ການ ສະໜອງ ແລະ ຄວາມຕ້ອງການການ, ການແຂ່ງຂັນທາງທຸລະກິດ ແລະ ການຄຸ້ມຄອງຜູ້ຊົມໃຊ້.
   3) ສົ່ງເສີມບັນດາກິດຈະກໍາທີ່ຕິດພັນກັບວຽກການຄ້າພາຍໃນ ເປັນຕົ້ນແມ່ນ ການຈັດງານສັບປະດາ ການຄ້າ ພາຍໃນ, ສົ່ງເສີມການຂາຍໃນລາຄາຖືກ, ສົ່ງເສີມການຈໍາໜ່າຍຕະຫຼາດພາຍໃນ, ຕະຫຼາດປະມູນສິນຄ້າ, ງານ ມະຫາກໍາການຄ້າທາງເອເລັກໂຕຣນິກ, ງານເສວະນາ... ເຊັ່ນ: ຈັດກິດຈະກໍາແຊກແຊງລາຄາ (ໂຄງການລາຄາອຸ່ນໃຈ

ຫຼື Back to School) ເພື່ອຊ່ວຍໜູນ ບໍ່ໃຫ້ມີການຂຶ້ນລາຄາ ສິນຄ້າ ທີ່ຈຳເປັນຂອງການດຳລົງຊີວິດໃນປັດຈຸບັນ ເປັນຕົ້ນ ເຂົ້າສານ,ອຸປະກອນເຄື່ອງໃຊ້ທີ່ຈຳເປັນ, ນ້ຳມັນພືດ, ນ້ຳປາ, ນ້ຳສະອີ໋ວ, ແປ້ງນົວ, ນ້ຳຕານ, ນົມຜົງເດັກ, ໝີ່ໄວ ໄວ ແລະ ນົມ UHT ເພື່ອເປັນການຊ່ວຍເຫລືອບັນເທົາຄ່າໃຊ້ຈ່າຍໃນສິນຄ້າເຫຼົ່ານັ້ນ.

2. ການຄຸ້ມຄອງການຄ້າພາຍໃນ ແລະ ການຕິດຕາມກວດກາການຄ້າ

1) ສ້າງກົນໄກການຕິດຕາມລາຄາສິນຄ້າ ແລະ ຄ່າບໍລິການ ລວມທັງ ເພື່ອຕິດຕາມການເໜັງຕີງຂອງລາຄາ ແລະ ພັດທະນາ ລະບົບແຈ້ງເຕືອນໄພລ່ວງໜ້າ ສຳລັບການຖີບຕົວສູງຂຶ້ນຂອງລາຄາ ແລະ ທ່າອ່ຽງການຂາດແຄນ ເຊັ່ນ: ຄົ້ນຄວ້າປັບປຸງລາຍການສິນຄ້າຄວບຄຸມ (ບັນຊີ ກ ແລະ ຂ) ໃຫ້ສອດຄ່ອງກັບສະພາບຕົວຈິງຂອງ ຕະຫຼາດໃນແຕ່ລະໄລຍະ ແລະ ຄົ້ນຄວ້າຄືນ ການກຳນົດໂຄງປະກອບລາຄາ ຕາມບັນຊີ ກ ໃຫ້ລະອຽດ ຊັດ ເຈນ ແລະ ສົມເຫດສົມຜົນ ໂດຍມີການສົມທຽບກັບລາຄາຕາມກົນໄກຕະຫຼາດ ແລະ ຕົ້ນທຶນຕົວຈິງ.

2) ຊຸກຍູ້**ການຕິດສະຫຼາກສິນຄ້າເປັນພາສາລາວ ແລະ ລະບົບຄິວອາໂຄ້ດ (QR code) ທີ່ໄດ້ມາດຕະຖານ** ເພື່ອສະ ໜອງຂໍ້ມູນສິນຄ້າ.

3) ສ້າງ ແລະ ປັບປຸງນິຕິກຳ ເພື່ອຄຸ້ມຄອງວຽກງານການຄ້າພາຍໃນ ເຊັ່ນ: ປັບປຸງຮ່າງຂໍ້ຕົກລົງ ວ່າດ້ວຍອົງການ ຄຸ້ມຄອງລາຄາ ແລະ ຄະນະຊີ້ນຳວຽກງານຄຸ້ມຄອງລາຄາ (ສະບັບປັບປຸງ); ຄົ້ນຄວ້າ ຮ່າງ ຂໍ້ຕົກລົງວ່າດ້ວຍ ທຸລະກິດການຈຳໜ່າຍຢາສູບ; ຄົ້ນຄວ້າ ຮ່າງ ຂໍ້ຕົກລົງວ່າດ້ວຍທຸລະກິດການຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ; ປັບປຸງ ດຳລັດ ວ່າດ້ວຍກວດກາການຄ້າ ຍົກຂຶ້ນເປັນກົດໝາຍ; ປັບປຸງຮ່າງຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ປະຕິບັດວຽກງານກວດກາການຄ້າ (ສະບັບປັບປຸງ); ປັບປຸງຮ່າງຂໍ້ຕົກລົງ ວ່າດ້ວຍ ເຄື່ອງແບບ, ການໝາຍ, ແບບພິມ ແລະ ບັດເຈົ້າໜ້າທີ່ການຄ້າ (ສະບັບປັບປຸງ); ສ້າງຖານຂໍ້ມູນ ການຈັດຕັ້ງປະຕິບັດວຽກງານກວດກາ ການຄ້າ ຂັ້ນສູນກາງ ຮອດ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

4) ສ້າງຖານ**ຂໍ້**ມູນການຄ້າພາຍໃນ ເພື່ອເກັບກຳຂໍ້ມູນແບບເວລາຕົວຈິງ (real-time) ແລະ ຂໍ້ມູນປະຈຳວັນ, ເດືອນ, ປີ ກ່ຽວກັບລາຄາສິນຄ້າ ແລະ ຄ່າບໍລິການ, ການສະໜອງ, ຄວາມຕ້ອງການ, ການຈະລາຈອນພາຍ ໃນ, ການນຳເຂົ້າ ແລະ ສົ່ງອອກ ສິນຄ້າທີ່ລັດຖະບານກຳນົດ ເຊັ່ນ: ຄົ້ນຄວ້າ ແລະ ຊອກແຫຼ່ງງົບປະມານ ສ້າງ ແອັບພລິເຄຊັນ ຫຼື ຖານຂໍ້ມູນອອນລາຍ ເພື່ອໃຫ້ພະແນກ ອຄ ແຂວງ ລາຍງານລາຄາສິນຄ້າປະຈຳວັນ ແນໃສ່ ການວິເຄາະທ່າອ່ຽງ (Trend Analysis) ໃຫ້ທັນການ; ສ້າງ ແລະ ພັດທະນາ Dashboard ຕິດຕາມ ລາຄາ ແລະ ຄາດຄະເນ Demand-Supply ພ້ອມທັງຕິດຕາມຕິດຕາມຕ່ອງໂສ້ອຸປະທານ (Supply Chain) ແຕ່ຟາມເຖິງຕະຫຼາດ.

5) ສ້າງຄັງສຳຮອງຍຸດທະສາດ ຫຼື ສະຕ໋ອກສິນຄ້າທີ່ລັດຖະບານກຳນົດ ເພື່ອແຊກແຊງຕະຫຼາດໃນເວລາຈຳເປັນ ເພື່ອຮັບປະກັນສະຖຽນລະພາບທາງດ້ານລາຄາໃນແຕ່ລະລະດູການ ເຊັ່ນ: ຈັດຕັ້ງປະຕິບັດ "ຄັງແຮເຂົ້າເພື່ອ ແຊກແຊງລາຄາ".

6) ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ,ການຄຸ້ມຄອງການຈຳໜ່າຍຈາລະ ຈອນສິນຄ້າ, ການແຂ່ງຂັນທາງທຸລະກິດ, ວຽກງານປົກປ້ອງຜູ້ຊົມໃຊ້, ວຽກງານກວດກາການຄ້າ,ວຽກງານການຄ້າທາງ ເອເລັກໂຕຣນິກ.

7) ສ້າງຄວາມເຂັ້ມແຂງໃຫ້ແກ່ ກົນໄກ ແລະ ລະບົບການກວດກາການຄ້າ ໃຫ້ໂປ່ງໃສ ແລະ ທັນສະໄໝ ມີ ປະສິດທິພາບ ແລະ ປະສິດທິຜົນ.

8) ປັບປຸງ-ແກ້ໄຂກົນໄກຄຸ້ມຄອງທຸລະກິດ ແລະ ລາຄາສິນຄ້າ ຕາມລາຍການຄວບຄຸມລາຄາ ແລະ ລາຍການຕິດຕາມການເໜັງຕີງຂອງລາຄາ; ນອກນັ້ນ, ຄຸ້ມຄອງຄັງແຮເຂົ້າໃຫ້ມີປະສິດທິຜົນສູງສຸດ.

3. ການຫັນທຸລະກິດ ໃຫ້ເຂົ້າສູ່ລະບົບທາງການ ຜ່ານການນຳໃຊ້ເຕັກໂນໂລຊີ ຫລື ຫັນເປັນດີຈິຕ໋ອນ.

1) ສ້າງລະບົບການຄຸ້ມຄອງ ແລະ ສົ່ງເສີມການຄ້າທາງເອເລັກໂຕຣນິກ, ການນຳໃຊ້ການຈ່າຍເງິນເອເລັກໂຕຣນິກ ແລະ ການແກ້ໄຂຂໍ້ຂັດແຍ່ງທາງອອນລາຍ;
2) ເພີ່ມທະວີ **ການປົກປ້ອງຜູ້ຊົມໃຊ້ສຳລັບການເຮັດທຸລະກຳອອນລາຍ** ໂດຍການເພີ່ມທະວີການບັງຄັບໃຊ້ກົດ ໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບ ການປົກປ້ອງຜູ້ຊົມໃຊ້, ການແຂ່ງຂັນທາງທຸລະກິດ, ການຄ້າທາງເອເລັກໂຕຣນິກ, ການຊຳລະສະສາງ ແລະ ການແກ້ໄຂຂໍ້ຂັດແຍ່ງ.

4. ການຄຸ້ມຄອງ ແລະ ສ້າງສະຖຽນລະພາບວຽກງານນ້ຳມັນເຊື້ອໄຟ ແລະ ອາຍແກ໊ສຫຸງຕົ້ມ.

ແນໃສ່ການຈັດຕັ້ງປະຕິບັດນິຕິກຳທີ່ສ້າງສຳເລັດແລ້ວໃຫ້ມີປະສິດທິພາບສູງສຸດ, ຫັນການຄຸ້ມຄອງເຂົ້າສູ່ລະບົບທັນສະໄໝ ແລະ ຮັບປະກັນຄວາມໝັ້ນຄົງທາງດ້ານພະລັງງານ ໂດຍສຸມໃສ່ກິດຈະກຳຈຸດສຸມ ດັ່ງນີ້:

1) **ສ້າງ-ປັບປຸງນິຕິກຳ, ເຜີຍແຜ່, ແນະນຳ ແລະ ບັງຄັບໃຊ້ບາງນິຕິກຳ ແລະ ກິດລະບຽບຢ່າງເຂັ້ມງວດ:**
2) **ພັດທະນາລະບົບດີຈິຕ໋ອນ ແລະ ຖານຂໍ້ມູນ:** ສ້າງລະບົບຖານຂໍ້ມູນອອນລາຍ ແລະ Dashboard ເພື່ອຕິດຕາມການຈໍລະຈອນ (Supply Chain) ແບບເວລາຕົວຈິງ (Real-time) ນັບຕັ້ງແຕ່ປະລິມານການນຳເຂົ້າຢູ່ດ່ານຊາຍແດນ, ປະລິມານນ້ຳມັນ/ອາຍແກ໊ສຢູ່ໃນສາງໃຫຍ່, ຈົນຮອດການຈຳໜ່າຍ ແລະ ຍອດຄ້າງສາງປະຈຳວັນ ຂອງບັນດາບໍລິສັດນຳເຂົ້າ, ຈຳໜ່າຍພາຍໃນ, ປ້ຳນ້ຳມັນ ແລະ ຕົວແທນຈຳໜ່າຍອາຍແກ໊ສ.
3) **ປັບປຸງກົນໄກການກຳນົດ ແລະ ຕິດຕາມໂຄງປະກອບລາຄາ:** ນຳໃຊ້ລະບົບໄອທີ (IT) ເຂົ້າໃນການຄິດໄລ່ ແລະ ອອກແຈ້ງການລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ແລະ ອາຍແກ໊ສ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ສອດຄ່ອງກັບການເໜັງຕີງຂອງຕະຫຼາດໂລກ ພ້ອມທັງຕິດຕາມກວດກາບໍ່ໃຫ້ມີການສວຍໂອກາດກັກຕຸນ ຫຼື ຂາຍກາຍລາຄາທີ່ລັດກຳນົດ.
4) **ສ້າງ ແລະ ບໍລິຫານຄັງແຮສຳຮອງຍຸດທະສາດ:** ຊຸກຍູ້ ແລະ ຮ່ວມມືກັບພາກທຸລະກິດ ພັດທະນາລະບົບຄັງແຮສຳຮອງນ້ຳມັນເຊື້ອໄຟ ແລະ ອາຍແກ໊ສຫຸງຕົ້ມ ເພື່ອຮັບປະກັນໃຫ້ມີພະລັງງານພຽງພໍສະໜອງພາຍໃນປະເທດຢ່າງໜ້ອຍ 15-30 ວັນ ໃນເວລາເກີດວິກິດການຂາດແຄນ, ໄພພິບັດທຳມະຊາດ ຫຼື ສະພາບຄວາມຜັນຜວນທາງດ້ານພູມສາດການເມືອງ.
5) **ຍົກລະດັບມາດຕະຖານການກວດກາ ແລະ ປົກປ້ອງຜູ້ຊົມໃຊ້:** ເພີ່ມທະວີການກວດກາເຕັກນິກ, ມາດຕະຖານຄວາມປອດໄພຂອງສາງ ແລະ ປ້ຳນ້ຳມັນ (ລວມທັງລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່), ມາດຕະຖານຖັງອາຍແກ໊ສຫຸງຕົ້ມ, ແລະ ກວດກາຄວາມຖືກຕ້ອງຂອງຫົວປ້ຳຈ່າຍນ້ຳມັນ ເພື່ອປົກປ້ອງຜົນປະໂຫຍດ ແລະ ຄວາມປອດໄພຂອງຜູ້ຊົມໃຊ້ຢ່າງແທ້ຈິງ.
6) **ການດັດສົມ, ຈັດສັນ ແລະ ປະເມີນຂີດຄວາມສາມາດຂອງທຸລະກິດນ້ຳມັນເຊື້ອໄຟ ຕາມດຳລັດ 559/ລບ:** ຈັດຕັ້ງການປະເມີນ, ຄັດກອງ ແລະ ດັດສົມຈຳນວນບໍລິສັດຜູ້ນຳເຂົ້າ, ບໍລິສັດຈຳໜ່າຍ ແລະ ສະຖານີບໍລິການ (ປ້ຳນ້ຳມັນ) ທົ່ວປະເທດ ໂດຍອີງໃສ່ເງື່ອນໄຂ ແລະ ເກນມາດຕະຖານທີ່ກຳນົດໄວ້ໃນດຳລັດ 559/ລບ ຢ່າງ

ເຂັ້ມງວດ, ແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະກອບການທີ່ມີຄວາມພ້ອມ, ຫຼຸດຜ່ອນການຂະຫຍາຍຕົວແບບຊະຊາຍ ແລະ ຮັບປະກັນສະຖຽນລະພາບຂອງຕ່ອງໂສ້ອຸປະທານພະລັງງານພາຍໃນປະເທດ.

2.2.2.2 ຍົກລະດັບມາດຕະຖານ, ຄຸນນະພາບ ແລະ ຄວາມຫຼາກຫຼາຍຂອງສິນຄ້າ

ສປປ ລາວ ມີຈຸດປະສົງພັດທະນາ ໂຄງລ່າງພື້ນຖານດ້ານຄຸນນະພາບແຫ່ງຊາດ (NQI) ໂດຍຖືເອົາຄວາມຕ້ອງການເປັນທີ່ຕັ້ງເພື່ອເຄື່ອນໄຫວວຽກງານ, ມີຄວາມຍືນຍົງ ແລະ ມີການປະສານງານທີ່ດີ ເພື່ອສະໜັບສະໜູນການຄ້າຂອງລາວ ຢ່າງມີປະສິດທິຜົນໃນການການແກ້ງແຍ້ງແຂ່ງຂັນທາງດ້ານການຄ້າ, ການພັດທະນາອຸດສາຫະກຳ ແລະ ການປົກປ້ອງຄວາມປອດໄພຂອງຜູ້ຊົມໃຊ້. ເຖິງວ່າ ສປປ ລາວ ໄດ້ສ້າງຕັ້ງເສົາຄ້ຳດ້ານໂຄງລ່າງພື້ນຖານດ້ານຄຸນນະພາບ NQI ຂຶ້ນມາແລ້ວກໍຕາມ ແຕ່ກໍ່ຍັງປະເຊີນກັບບັນຫາທ້າທາຍຫຼາຍດ້ານໃນການຈັດຕັ້ງປະຕິບັດ, ຂີດຄວາມສາມາດ ແລະ ດ້ານຄວາມຮັບຮູ້ຂອງສັງຄົມ.

ອົງການມາດຕະຖານແຫ່ງຊາດ ສປປ ລາວ ໂດຍທົ່ວໄປແລ້ວຈະຮັບຮອງໃຊ້ມາດຕະຖານແຫ່ງຊາດໃຫ້ສອດຄ່ອງກັບມາດຕະຖານສາກົນ (ໂດຍສະເພາະ ISO ແລະ IEC) ແລະ ມາດຕະຖານພາກພື້ນອາຊຽນ. ອົງການຮັບຮອງແຫ່ງຊາດ ລາວ (LaoNAB) ທີ່ສ້າງຕັ້ງຂຶ້ນໃນປີ 2016 ພາຍໃຕ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ (ກວສຕ) ໄດ້ເຊັນ MOU ກັບ ອົງການຮັບຮອງມາດຕະຖານຂອງຫວຽດນາມ (BOA), LaoNAB ຍັງບໍ່ໄດ້ເຊັນສັນຍາການຮັບຮູ້ເຊິ່ງກັນ ແລະ ກັນ (Mutual Recognition Agreements) ໃດໆ ກັບຄະນະກຳມະການຮັບຮອງຫ້ອງທົດລອງສາກົນ (ILAC) ແລະ ຂະບວນການຮັບຮອງສາກົນ (IAF8). ເຖິງຢ່າງໃດກໍຕາມ, ລາວ ມີຫ້ອງທົດລອງທີ່ໄດ້ຜ່ານການຮັບຮອງແມ່ນຍັງມີໜ້ອຍຫຼາຍ. ບັນດາອົງຈັດຕັ້ງຂອງລັດ ແລະ ເອກະຊົນທີ່ໃຫ້ບໍລິການທົດລອງ, ການກວດກາ ແລະ ການອອກໃບຢັ້ງຢືນສຳລັບການທົດສອບຜະລິດຕະພັນ, ຄວາມປອດໄພດ້ານອາຫານ ແລະ ອື່ນໆ ຍັງມີຂີດຈຳກັດດ້ານຄວາມສາມາດ ແລະ ຂອບເຂດການໃຫ້ບໍລິການກໍຍັງຈຳກັດ. ສປປ ລາວ ຂາດແຄນຊ່ຽວຊານຜູ້ມີຄຸນວຸດທິຢ່າງຫຼວງຫຼາຍໃນທຸກດ້ານໃນຂົງເຂດໂຄງລ່າງພື້ນຖານມາດຕະຖານແຫ່ງຊາດ. ໃນຂະນະທີ່ ກວສຕ ເປັນອົງການຈັດຕັ້ງຮັບຜິດຊອບຫຼັກ, NQI ມີຜົນກະທົບຕໍ່ການຄ້າ, ກະສິກຳ, ແລະ ສຸຂະພາບ.

ເພື່ອເພີ່ມທະວີການແຂ່ງຂັນດ້ານການສົ່ງອອກໃຫ້ແຂງແຮງຂຶ້ນ ສປປ ລາວ ຈະເສີມຂະຫຍາຍການນຳໃຊ້ມາດ ຕະ ຖານ ແລະ ການຢັ້ງຢືນທີ່ໄດ້ຮັບການຍອມຮັບໃນລະດັບສາກົນ (ເຊັ່ນ: ISO, ເຄື່ອງໝາຍ CE ແລະ ກົນໄກປະຕິດ ບັດຄວາມສອດຄ່ອງສາກົນອື່ນໆ) ເຂົ້າໃນທົ່ວຂົງເຂດການອຸດສາຫະກຳ ແລະ ການສົ່ງອອກທີ່ເປັນຂົງເຂດບຸລິມະສິດ. ໂດຍສະເພາະ, ກະຊວງ ອຄ ຈະສົ່ງເສີມການນຳໃຊ້ມາດຕະຖານ ISO, ເຄື່ອງໝາຍ CE ແລະ ມາດຕະຖານທີ່ອາຊຽນ ຮັບຮອງໃຊ້ຮ່ວມກັນ ສຳລັບຜະລິດຕະພັນຕ່າງໆ ເຊັ່ນ: ປຸຍປະສົມ, ອາລູມິນາ ແລະ ສິນຄ້າອຸດສາຫະກຳອື່ນໆ ທີ່ອີງໃສ່ຊັບພະຍາກອນ ເພື່ອຮັບປະກັນຄວາມສອດຄ່ອງກັບເງື່ອນໄຂຂອງຕະຫຼາດສົ່ງອອກທີ່ສຳຄັນ. ສິ່ງເຫຼົ່ານີ້ລວມມີການພັດ ທະນາອະນຸສັນຍາກ່ຽວກັບຄຸນນະພາບ ແລະ ການທົດລອງທີ່ເຈາະຈົງຕາມແຕ່ລະຂົງເຂດ, ຍົກລະດັບຫ້ອງທົດລອງໃຫ້ໄດ້ ຕາມເງື່ອນໄຂຂອງການຮັບຮອງຂອງ ISO/IEC ແລະ ສ້າງມາດຕະຖານການກຳນົດລັກສະນະທາງດ້ານວັດຖຸ ແລະ ອົງ ປະກອບວັດຖຸດິບ ເພື່ອການປະເມີນຄວາມສອດຄ່ອງ ແລະ ການຢັ້ງຢືນຂອງຜະລິດຕະພັນ. ດ້ວຍການເຮັດໃຫ້ຜະລິດຕະ ພັນຂອງລາວສອດຄ່ອງກັບມາດຕະຖານສາກົນ, ຜູ້ຜະລິດຈະໄດ້ເຂົ້າເຖິງຕ່ອງໂສ້ມູນຄ່າເພີ່ມຂອງພາກພື້ນ ແລະ ຂອງໂລກ

ໄດ້ດີຂຶ້ນ, ຍົກສູງຄວາມເຊື່ອໝັ້ນໃນຕະຫຼາດ ແລະ ດຶງດູດໄດ້ການລົງທຶນຂອງຕ່າງປະເທດທີ່ມີຄຸນນະພາບສູງເຂົ້າສູ່ຂົງເຂດທີ່ເປັນບຸລິມະສິດ.

ຄາດໝາຍສຳຄັນເພື່ອເສີມຂະຫຍາຍ NQI ລວມມີ:

1. ຈຳນວນຄັ້ງ ການບໍລິການດ້ານການສອບທຽບໃຫ້ເພີ່ມຂຶ້ນ 10%.
2. ຈຳນວນຫ້ອງທົດລອງທີ່ໄດ້ຮັບການຮັບຮອງ (accredited labs) ໃຫ້ເພີ່ມຂຶ້ນເປັນສອງເທົ່າ (ໂດຍສະເພາະໃນຂົງເຂດອາຫານ/ກະສິກຳ).
3. ເປີດໂຄງການຊຸກຍູ້ຄຸນນະພາບແຫ່ງຊາດເປັນຕົ້ນ; ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ 100 ແຫ່ງໃຫ້ໄດ້ຮັບນະໂຍບາຍດ້ານການເງິນ ແລະ ເຕັກນິກ ເພື່ອນຳໃຊ້ເຂົ້າໃນການຍື່ງຢືນມາດຕະຖານ.
4. ສ້າງຕັ້ງ ແລະ ເປີດຕົວລັດວິສາຫະກິດ ຫຼື ວິສາຫະກິດຮຸ້ນສ່ວນເພື່ອການກວດກາຄຸນນະພາບຂອງສິນຄ້ານຳເຂົ້າ ແລະ ສົ່ງອອກ.

ມີໂຄງລ່າງພື້ນຖານດ້ານຄຸນນະພາບແຫ່ງຊາດທີ່ແຂງແຮງຈະເປັນປະໂຫຍດໃຫ້ແກ່ປະຊາຊົນລາວ ໂດຍສາມາດຮັບປະກັນໃຫ້ຜະລິດຕະພັນມີຄວາມປອດໄພ ແລະ ມີຄຸນນະພາບດີຂຶ້ນ ແລະ ຊ່ວຍສົ່ງເສີມການແຂ່ງຂັນໃນການສົ່ງອອກ. ໃນແຜນພັດທະນາໃນ 5 ປີຕໍ່ໜ້າ, ກະຊວງ ອຄ ຈະສະໜັບສະໜູນການສ້າງຕັ້ງ ສະພາໂຄງລ່າງພື້ນຖານດ້ານຄຸນນະພາບແຫ່ງຊາດ NQI ລະດັບສູງທີ່ເປັນທາງການ ໂດຍມີກະຊວງເຕັກໂນໂລຊີ ແລະ ການສື່ສານ ຫຼື ກະຊວງ ອຄ ເປັນປະທານ ພ້ອມດ້ວຍສະມາຊິກຈາກກະຊວງຕ່າງໆທີ່ກ່ຽວຂ້ອງ, ເພື່ອພັດທະນານະໂຍບາຍແຫ່ງຊາດດ້ານຄຸນນະພາບທີ່ເປັນເອກະພາບ. ຊຶ່ງຈະຊຸກຍູ້ໃຫ້ມີການລົງທຶນໃນຫ້ອງທົດລອງຄຸນນະພາບເອກະຊົນ ເພື່ອຍົກລະດັບອຸປະກອນທົດລອງທີ່ສຳຄັນ, ດ້ວຍເປົ້າໝາຍທີ່ຈະບັນລຸການຮັບຮອງສຳລັບ ອຸປະກອນໄຟຟ້າ, ວັດສະດຸກໍ່ສ້າງ, ໂລຫະມີຄ່າ ແລະ ອຸປະກອນຜິເສດ ຕາມມາດຕະຖານ ISO 17025. ໃນຖານະ ກະຊວງ ອຄ ເປັນຈຸດປະສານງານໃນເສົາຄ້ຳເສດຖະກິດອາຊຽນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະເຂົ້າຮ່ວມຢ່າງເຕັມທີ່ໃນໜ່ວຍງານຂົງເຂດວິຊາສະເພາະຂອງອາຊຽນ ເພື່ອຮັບປະກັນເຖິງຄວາມສອດຄ່ອງຂອງມາດຕະຖານ ແລະ ລະບຽບການດ້ານເຕັກນິກຂອງລາວ. ນີ້ຈະຊ່ວຍຫຼຸດຜ່ອນອຸປະສັກຕໍ່ການຄ້າ. ກະຊວງ ອຄ ຍັງຈະໃຫ້ຄວາມສຳຄັນແກ່ການຈັດຕັ້ງປະຕິບັດ ສັນຍາວ່າດ້ວຍການຮັບຮູ້ເຊິ່ງກັນແລະກັນຂອງອາຊຽນ (MRAs) ເພື່ອສະໜັບສະໜູນພາກທຸລະກິດປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ທັງລະບຽບການເຕັກນິກ ແລະ ມາດຕະຖານຂອງພາກເອກະຊົນ ແລະ ຈະສ້າງຖານຂໍ້ມູນດິຈິຕອນພື້ນຖານ ສຳລັບມາດຕະຖານ, ການປະເມີນການສອດຄ່ອງ, ການຮັບຮອງ, ການບໍລິການດ້ານຄຸນນະພາບ ແລະ ເຄື່ອງມືວັດແທກ ເຊິ່ງຈະເປີດໃຫ້ເຂົ້າເຖິງໄດ້ຢ່າງກວ້າງຂວາງ.

2.2.2.3 ສົ່ງເສີມການແຂ່ງຂັນ ແລະ ຫ້ວຄິດປະດິດສ້າງ, ປົກປ້ອງຊັບສິນທາງປັນຍາ ແລະ ຜູ້ຊົມໃຊ້

ເຖິງວ່າ ສປປ ລາວ ໄດ້ຍົກລະດັບກົດໝາຍວ່າດ້ວຍຊັບສິນທາງປັນຍາ ຈາກປີ 2017 ເປັນສະບັບ ປີ 2023 ໂດຍໄດ້ປັບປຸງການຈົດທະບຽນເພື່ອປົກປ້ອງພັນພືດໃໝ່ ແລະ ແບບອຸດສາຫະກຳ ໃຫ້ສອດຄ່ອງກັບມາດຕະຖານສາກົນ. ແຕ່, ກະຊວງອຸດສາຫະກຳ ແລະ ການຄ້າ ຍັງຈຳເປັນຕ້ອງສືບຕໍ່ປັບປຸງຂໍ້ຕົກລົງຕ່າງໆຂອງແຕ່ລະປະເພດຊັບສິນທາງປັນຍາ ແລະ ກົນໄກການແກ້ໄຂຂໍ້ຍັດແຍ່ງທາງດ້ານຊັບສິນທາງປັນຍາ. ນອກນັ້ນ, ບຸກຄະລາກອນທີ່ມີຄວາມຊຳນິຊຳນານ ແລະ ມີຄວາມສາມາດໃນການກວດສອບ ຄຳຮ້ອງ ສິດທິບັດ ແລະ ແບບອຸດສາຫະກຳ ຍັງບໍ່ພຽງພໍທຽບໃສ່ປະລິມານຂອງໜ້າວຽກ. ນອກນັ້ນ, ກໍຍັງມີຂໍ້ຈຳກັດດ້ານພື້ນຖານໂຄງລ່າງ ແລະ ບຸກຄະລາກອນຍັງບໍ່ພຽງພໍ ໃນການຫັນເປັນທັນສະໄໝ ແລະ ໃຫ້ບໍລິການຕ່າງໆ ໃນວຽກງານຊັບສິນທາງປັນຍາໃຫ້ວ່ອງໄວ ແລະ ມີຄຸນນະພາບສູງຂຶ້ນ. ອີກດ້ານໜຶ່ງ, ຂັ້ນຕອນ

ການຈົດທະບຽນກໍຍັງມີຄວາມຊັກຊ້າ ແລະ ຫຍຸ້ງຍາກ. ນອກນີ້, ສັງຄົມທົ່ວໄປ, ພາກທຸລະກິດ ໂດຍສະເພາະ ຈຸນລະວິ ສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ສ້າງນະວັດຕະກຳ ແລະ ຜູ້ປະດິດຄິດແຕ່ງ ຍັງຂາດຄວາມຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງກ່ຽວກັບຄວາມສຳຄັນຂອງສິດຊັບສິນທາງປັນຍາ.

ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ ຢ່າງມີປະສິດທິຜົນ ແລະ ການປູກຈິດສຳນຶກກ່ຽວກັບ ສິດຊັບສິນທາງປັນຍາ ຈະຊ່ວຍໃຫ້ ສປປ ລາວ ສາມາດນຳໃຊ້ທ່າແຮງທາງດ້ານຫົວຄິດປະດິດສ້າງຂອງຄົນລາວ ລວມທັງ ການຫັນເອົາຊັບພະຍາກອນທາງດ້ານວັດທະນະທຳ ແລະ ຊັບພະຍາກອນພັນທຸກຳ ທີ່ເປັນເອກະລັກສະເພາະໃຫ້ກາຍເປັນ ຊັບສິນທາງປັນຍາ. ຜະລິດຕະພັນຖິ່ນກຳເນີດຈະຊ່ວຍສົ່ງເສີມ, ປົກປ້ອງ ແລະ ອະນຸລັກຮັກສາ ເອກະລັກສະເພາະຂອງ ຂະບວນການຜະລິດທີ່ເປັນຄວາມຮູ້ຜ່ານການຖ່າຍທອດຈາກຮຸ່ນສູ່ຮຸ່ນ, ສົ່ງເສີມຄວາມມີຊື່ສຽງບໍ່ວ່າຈະເປັນລິດຊາດ ຫຼື ຄຸນນະພາບສະເພາະ ຂອງສິນຄ້າຈາກເຂດດັ່ງກ່າວໃຫ້ຮັບຮູ້ຢ່າງກວ້າງຂວາງອອກກວ່າເກົ່າ ເຊັ່ນ: ກາເຟລາວ (ກາເຟພູ ພຽງບໍລະເວນ), ເຂົ້າໄກ່ນ້ອຍ (ເຂົ້າໄກ່ນ້ອຍຊຽງຂວາງ-ຫົວພັນ), ຜ້າໄໝ ຫຼວງພະບາງ-ຫົວພັນ ຫຼື ຊາປາກຊ່ອງ-ຝັ່ງສາລີ (ຊາກໍແມນ) ສາມາດເພີ່ມມູນຄ່າອັນມະຫາສານ, ສ້າງຄວາມແຕກຕ່າງຂອງຜະລິດຕະພັນໃນຕະຫຼາດສົ່ງອອກ ແລະ ຮັບປະກັນຜົນປະໂຫຍດໃຫ້ກັບຊາວກະສິກອນທ້ອງຖິ່ນ. ການຫັນ**ຄວາມຮູ້ພື້ນບ້ານ ແລະ ການສະແດງອອກທາງດ້ານ ວັດທະນະທຳທ້ອງຖິ່ນໃຫ້ເປັນຊັບສິນທາງປັນຍາ**: ປະເທດລາວອຸດົມສົມບູນໄປດ້ວຍເຄື່ອງຫັດຖະກຳ (ເຊັ່ນ: ຜ້າໄໝ, ຜ້າຝ້າຍ, ການຫຍິບປັກຖັກແສ່ວຂອງເຜົ່າຕ່າງໆ), ສູດຢາພື້ນເມືອງ ແລະ ສິນລະປະດົນຕີທ້ອງຖິ່ນອື່ນໆ ຈະປັນການສ້າງ ຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ, ສ້າງອຸດສາຫະກຳວັດທະນະທຳທີ່ຍືນຍົງ ແລະ ປະກອບສ່ວນໃຫ້ແກ່ການສົ່ງເສີມ ການທ່ອງທ່ຽວພາຍໃນຊຸມຊົນຕ່າງໆດ້ວຍການຂາຍເຄື່ອງຫັດຖະກຳ ທີ່ໄດ້ຮັບການປົກປ້ອງທາງດ້ານຊັບສິນທາງປັນຍາ, ສົ່ງເສີມຜະລິດຕະພັນອາຫານພື້ນບ້ານ ແລະ ການສະແດງວັດທະນະທຳຕ່າງໆ.

ສປປ ລາວ ເປັນສ່ວນໜຶ່ງຂອງຂອບການຮ່ວມມືພາກພື້ນ ແລະ ຫຼາຍຝ່າຍສຳລັບການຮ່ວມມືຊັບສິນທາງປັນຍາ (ເຊັ່ນ: ຄະນະກຳມະການ ຮ່ວມມືດ້ານຊັບສິນທາງປັນຍາອາຊຽນ) ເຊິ່ງເຮັດໃຫ້ ສປປ ລາວ ສາມາດເຂົ້າເຖິງການ ຊ່ວຍເຫຼືອດ້ານວິຊາການ, ໂຄງການສ້າງຂີດຄວາມສາມາດ ແລະ ການສ້າງມາດຕະຖານດຽວກັນ ຂອງຂັ້ນຕອນຕ່າງໆ ພາຍໃນອາຊຽນ. ອົງການຊັບສິນທາງປັນຍາໂລກ, ອົງການການຄ້າໂລກ, ແລະ ບັນດາຄູ່ຮ່ວມພັດທະນາ (ເຊັ່ນ: ສປ ຈີນ , ຍີ່ປຸ່ນ, ເກົາຫຼີ, ແລະ EU) ໃຫ້ການສະໜັບສະໜູນດ້ານວິຊາການ ແລະ ສະໜັບສະໜູນໂຄງການຕ່າງໆ ເປັນຕົ້ນ ການ ປັບປຸງນິຕິກຳ ແລະ ການສ້າງຕັ້ງອົງການລິຂະສິດແບບລວມໝູ່ ແລະ ອື່ນໆ.

ການປັບປຸງລະບົບການປົກປ້ອງຊັບສິນທາງປັນຍາຈະຊ່ວຍໃຫ້ ສິນຄ້າ ແລະ ການບໍລິການ ຂອງ ສປປ ລາວ ເຂົ້າສູ່ຕ່ອງໂສ້ມູນຄ່າເພີ່ມຂອງການຜະລິດ ຈາກການຂຸດຄົ້ນຊັບພະຍາກອນໄປສູ່ການຜະລິດເປົ້າ ແລະ ການສ້າງນະວັດຕະ ກຳ. ການເຊື່ອມໂຍງວຽກງານຊັບສິນທາງປັນຍາເຂົ້າໃນການບໍລິການພັດທະນາທຸລະກິດຕັ້ງແຕ່ເລີ່ມຕົ້ນ ຈາກແນວ ຄວາມຄິດຈົນກາຍເປັນຜະລິດຕະພັນ ຫຼື ສິນຄ້າ ຈົນຮອດ ການຂັ້ນຕອນເຂົ້າເຖິງຕະຫຼາດ ແລະ ພັດທະນາທຸລະກິດ ຈະ ຊ່ວຍໃຫ້ພາກທຸລະກິດຂະຫຍາຍຕົວໄດ້ໄວຂຶ້ນ, ປົກປ້ອງການປະດິດສ້າງຂອງພວກເຂົາ ແລະ ກາຍເປັນການແຂ່ງຂັນ.

ເພື່ອຮັບມືກັບສິ່ງທ້າທາຍ ເຫຼົ່ານີ້, ຈຶ່ງໄດ້ກຳນົດ 6 ເປົ້າໝາຍຈຸດປະສົງ ໃນແຜນພັດທະນາ ໄລຍະ 5 ປີ 2026-2030. I) ເພື່ອຮັບປະກັນກົດໝາຍ ແລະ ສະຖາບັນຊັບສິນທາງປັນຍາແຫ່ງຊາດສອດຄ່ອງກັບມາດຕະຖານສາກົນ, II) ນຳໃຊ້ ສູນບໍລິການຊັບສິນທາງປັນຍາແຫ່ງຊາດສົ່ງເສີມນະວັດຕະກຳ ແລະ ຄວາມຄິດສ້າງສັນ, III) ສົ່ງເສີມການນຳໃຊ້ ຊັບສິນທາງປັນຍາເພື່ອຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະ ການເຕີບໂຕສີຂຽວ, IV) ເຜີຍແຜ່ວຽກງານ ຊັບສິນ

ທາງປັນຍາ, ຄວາມເຂົ້າໃຈ ແລະ ຄວາມສາມາດດ້ານວິຊາການ, V) ເພີ່ມທະວີການເຂົ້າເຖິງລະບົບຊັບສິນທາງປັນຍາທົ່ວໂລກ, ແລະ VI) ນຳໃຊ້ຊັບສິນທາງປັນຍາ ເພື່ອເປົ້າໝາຍການພັດທະນາຢ່າງຍືນຍົງ.

ໃນໄລຍະປີ 2026-2030, ກະຊວງອຸດສາຫະກຳ ແລະ ການຄ້າ ຈະໃຫ້ບຸລິມະສິດບັນດາກິດຈະກຳ ດັ່ງນີ້:

1. ເພີ່ມທະວີຄວາມສາມາດດ້ານວິຊາການໂດຍຜ່ານການຝຶກອົບຮົມພະນັກງານຫ້ອງການຊັບສິນທາງປັນຍາທັງສູນກາງ ແລະ ທ້ອງຖິ່ນ ແລະ ປະສານສົມທົບກັບກະຊວງຕ່າງໆຂອງລັດເພື່ອຮັບປະກັນການອົບຮົມໃຫ້ແກ່ບັນດາອົງການລັດຖະບານອື່ນໆ ລວມທັງອົງການຕຸລາການ, ຕຳຫຼວດ ແລະ ພະນັກງານພາສີ.
2. ເປີດຕົວແຄມເປນປຸກຈິດສຳນຶກແຫ່ງຊາດໂດຍໃຊ້ພາສາທີ່ງ່າຍດາຍ ແລະ ສື່ທ້ອງຖິ່ນເພື່ອສຶກສາອົບຮົມທຸລະກິດ, ຊາວກະສິກອນ, ແລະ ນັກສິລະປິນກ່ຽວກັບຜົນປະໂຫຍດວຽກງານ ຊັບສິນທາງປັນຍາ ເປັນຕົ້ນ ສິດທິບັດ, ເຄື່ອງໝາຍການຄ້າ, ເຄື່ອງໝາຍຖິ່ນກຳເນີດ, ພັນພືດໃໝ່, ແບບອຸດສາຫະກຳ ແລະ ການແຈ້ງລິຂະສິດ.
3. ສະໜັບສະໜູນຜະລິດຕະພັນທີ່ມີທ່າແຮງສູງ (ເຊັ່ນກາເຟ ແລະ ຜ້າໄໝ) ເພື່ອສ້າງໃຫ້ສິນຄ້າຖິ່ນກຳເນີດທີ່ມີຊື່ສຽງ ແລະ ເປັນສິນຄ້າຂອງຝາກແຫ່ງຊາດ.
4. ລົງເລິກການຮ່ວມມືກັບບັນດາປະເທດເພື່ອນບ້ານອາຊຽນ, ໂດຍສະເພາະໄທ ແລະ ຫວຽດນາມ, ເພື່ອຖອດຖອນບົດຮຽນການປະຕິບັດວຽກງານ ຊັບສິນທາງປັນຍາ ໃຫ້ເຂັ້ມແຂງ, ປັບປຸງການບັງຄັບໃຊ້ນິຕິກຳຂ້າມຊາຍແດນ, ແລະ ຕ້ານອາດຊະຍາກຳຂ້າມຊາດ.
5. ສ້າງກົດໝາຍເພື່ອປົກປ້ອງຄວາມຮູ້ດ້ານວັດທະນະທຳພື້ນເມືອງທີ່ເຂົ້າເຖິງຂອງຊຸມຊົນທ້ອງຖິ່ນ ແລະ ຮັບປະກັນການແບ່ງປັນຜົນປະໂຫຍດທີ່ສະເໝີພາບ.
6. ລົງທຶນໃສ່ລະບົບການຍື່ນເອກະສານອອນໄລນ໌ (e-filing) ໃຫ້ມີຄວາມສະດວກສະບາຍ ໃນການນຳໃຊ້ງ່ານ ທີ່ວ່ອງໄວ ແລະ ຖານຂໍ້ມູນດິຈິຕອນເພື່ອເພີ່ມຄວາມໂປ່ງໃສ ແລະ ການເຂົ້າເຖິງ.
7. ເພີ່ມທະວີສິ່ງເສີມການຮ່ວມມືໃນລະດັບພາກພື້ນເພື່ອນຳໃຊ້ສິດຊັບສິນທາງປັນຍາໂດຍຜ່ານການສະໜັບສະໜູນລະບົບຊັບສິນທາງປັນຍາ ໃນພາກພື້ນງອາຊຽນ, ປຸກຈິດສຳນຶກ ແລະ ການເຂົ້າເຖິງເສດຖະກິດຂອງລາວ, ປະເມີນຄວາມກົມກຽວຂອງເຄື່ອງໝາຍການຄ້າ ແລະ ແບບອຸດສາຫະກຳໃນທົ່ວອາຊຽນ.

ເປົ້າໝາຍຫຼັກໃນການເສີມສ້າງສິດທິດ້ານຊັບສິນທາງປັນຍາລວມມີ:

1. ປັບປຸງກົດໝາຍຊັບສິນທາງປັນຍາ ໃຫ້ສອດຄ່ອງກັບ WTO-TRIPS ສຳລັບພາກຊັບສິນທາງປັນຍາ (IP) (ໃນປີ 2027).
2. ຫຼຸດຜ່ອນຂັ້ນຕອນ, ເວລາ ແລະ ຕົ້ນທຶນໃນການ ຈົດທະບຽນ ຊັບສິນທາງປັນຍາ (ໃຫ້ໄດ້ 25% ຮອດປີ 2030).
3. ສ້າງລະບົບການຍື່ນເອກະສານທາງເອເລັກໂຕຣນິກ (e-filing system) ໃຫ້ສາມາດນຳໃຊ້ໄດ້ຢ່າງເຕັມຮູບແບບສຳລັບເຄື່ອງໝາຍການຄ້າ ເຊັ່ນ: ການຍື່ນຄຳຮ້ອງອອນລາຍ, ການຕິດຕາມສະຖານະເອກະສານ ແລະ ການຊຳລະຄ່າທຳນຽມ (ສຳເລັດ 100% ໃນປີ 2030).
4. ເພີ່ມຈຳນວນຄຳຮ້ອງຂໍຈົດທະບຽນ ຊັບສິນທາງປັນຍາຂຶ້ນໂດຍ ຜູ້ທີ່ຢູ່ອາໄສພາຍໃນ ແລະ ຜູ້ທີ່ຢູ່ອາໃສຢູ່ຕ່າງປະເທດ.

5. ເຊື່ອມຕໍ່ລະບົບ ຖານຂໍ້ມູນ ຊັບສິນທາງປັນຍາ ໃນຂອບເຂດ ພາກພື້ນ ແລະ ສາກົນ ໂດຍການເຂົ້າຮ່ວມບັນດາ ພາຄີ ທີ່ໃຫ້ຜົນປະໂຫຍດຕໍ່ການພັດທະນາວຽກງານ ຊັບສິນທາງປັນຍາ ຂອງ ສປປ ລາວ.

2.2.2.4 ການເພີ່ມທະວີການບໍລິການທາງດ້ານໂລຈິສຕິກ

ໃນນາມເປັນເສດຖະກິດທີ່ບໍ່ມີຊາຍແດນຕິດທະເລ, ສປປ ລາວ ປະເຊີນກັບຂໍ້ຈຳກັດທາງພູມສາດທີ່ເພີ່ມຕົ້ນທຶນ ແລະ ຄວາມຊັບຊ້ອນໃນການຄ້າ ແລະ ການລົງທຶນ. ຕົ້ນທຶນການຂົນສົ່ງທີ່ສູງ ແລະ ການເຊື່ອມຕໍ່ກັບທ່າເຮືອທະເລຫຼັກ ທີ່ມີຈຳກັດ ໄດ້ກາຍເປັນອຸປະສັກຕໍ່ຄວາມສາມາດໃນການແຂ່ງຂັນດ້ານການສົ່ງອອກ ແລະ ເຮັດໃຫ້ນັກລົງທຶນດ້ານ ອຸດສາຫະກຳລັງເລ. ດັ່ງນັ້ນ, ການສ້າງຄວາມເຂັ້ມແຂງດ້ານໂລຈິດສະຕິກ ແລະ ໂຄງລ່າງພື້ນຖານອຸດສາຫະກຳ ຈຶ່ງມີ ຄວາມສຳຄັນຢ່າງຍິ່ງ ໃນການປັບປຸງຄວາມສາມາດໃນການແຂ່ງຂັນດ້ານຕົ້ນທຶນ ແລະ ການເຊື່ອມໂຍງເຂົ້າໃນຕ່ອງໂສ້ ມູນຄ່າພາກພື້ນ, ເພື່ອຫັນປ່ຽນປະເທດຈາກ "ທີ່ບໍ່ມີຊາຍແດນຕິດທະເລ" (Land-locked) ໃຫ້ກາຍເປັນ "ປະເທດ ເຊື່ອມໂຍງ-ເຊື່ອມຈອດ" (Land-linked) ຢ່າງແທ້ຈິງ.

ໃນໄລຍະ 5 ປີຕໍ່ໜ້າ, ລັດຖະບານຈະໃຫ້ບຸລິມະສິດແກ່ການພັດທະນາລະບົບໂລຊິດສະຕິກທີ່ມີປະສິດທິ ພາບ ແລະ ໂຄງລ່າງພື້ນຖານອຸດສາຫະກຳ ເພື່ອຫຼຸດຕົ້ນທຶນການຂົນສົ່ງ, ເພີ່ມທະວີການເຊື່ອມຈອດ ແລະ ສະໜັບສະໜູນການ ສ້າງມູນຄ່າເພີ່ມພາຍໃນ, ເຊິ່ງລວມມີ:

- ແລວທາງໂລຈິດສະຕິກຂ້າມແດນ: ພັດທະນາເສັ້ນທາງໂລຈິດສະຕິກຍຸດທະສາດທີ່ເຊື່ອມຕໍ່ລາວ ກັບປະເທດ ເພື່ອນບ້ານຫຼັກ ເຊັ່ນ: ໄທ, ຫວຽດນາມ ແລະ ຈີນ, ໂດຍສະເພາະຜ່ານ ແຂວງສະຫວັນນະເຂດ, ຄຳມ່ວນ ແລະ ບໍ່ເຕັນ ເພື່ອປັບປຸງການເຂົ້າເຖິງທ່າເຮືອ ແລະ ຕະຫຼາດຫຼັກໃນພາກພື້ນ.
- ເຂດເສດຖະກິດພິເສດດ້ານອຸດສາຫະກຳ ແລະ ບໍ່ແຮ່: ສ້າງຕັ້ງເຂດເສດຖະກິດພິເສດ ແລະ ນິຄົມອຸດສາ ຫະກຳ ສະເພາະດ້ານ ທີ່ມີລະບົບສາທາລະນູປະໂພກທີ່ເຊື່ອຖືໄດ້, ມີທາງລົດ ແລະ ທາງລົດໄຟເຂົ້າເຖິງ, ພ້ອມທັງ ບໍລິການໂລຈິດສະຕິກສຳລັບຂະແໜງການບຸລິມະສິດ ເຊັ່ນ: ຝຸ່ນ, ການປຸງແຕ່ງບົກຊິດເປັນອາລູມິນາ ແລະ ແຮ່ ທາຍາກ.
- ການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (PPP) ແລະ ການຈັດຫາທຶນ: ລະດົມທຶນຈາກ PPP ແລະ ແຫຼ່ງທຶນເພື່ອການພັດທະນາ ເພື່ອຂະຫຍາຍໂຄງລ່າງພື້ນຖານໂລຈິດສະຕິກ, ລວມທັງທ່າບົກ, ສູນຂົນສົ່ງ ຫຼາຍຮູບແບບ ແລະ ສາງພາງ (Bonded warehouses), ໂດຍສະເພາະໃນພາກກາງ ແລະ ພາກໃຕ້.

ການປັບປຸງລະບົບໂລຈິດສະຕິກ ແລະ ໂຄງລ່າງພື້ນຖານໃຫ້ເຂັ້ມແຂງ ຈະກາຍເປັນເສົາຄ້ຳໃຫ້ແກ່ຂີດຄວາມ ສາມາດໃນການແຂ່ງຂັນດ້ານອຸດສາຫະກຳ ຂອງ ສປປ ລາວ, ເຊິ່ງຈະຊ່ວຍໃຫ້ການເຄື່ອນຍ້າຍສິນຄ້າມີຄວາມວ່ອງໄວ, ປະຢັດຕົ້ນທຶນ ແລະ ມີຄວາມໜ້າເຊື່ອຖືຫຼາຍຂຶ້ນ. ດ້ວຍການຍົກລະດັບການເຊື່ອມຈອດ ແລະ ການຫຼຸດຜ່ອນຕົ້ນທຶນ ທາງດ້ານການຄ້າ, ສປປ ລາວ ຈະສາມາດເສີມສ້າງບົດບາດ ຂອງຕົນໃນການເປັນສູນກາງການຜະລິດ ແລະ ການຂົນສົ່ງ ຜ່ານແດນ ຂອງພາກພື້ນ, ເພື່ອຊຸກຍູ້ການສົ່ງອອກໃຫ້ມີຄວາມຫຼາກຫຼາຍ ແລະ ສ້າງການເຕີບໂຕທາງດ້ານອຸດສາຫະກຳ ແບບຍືນຍົງ.

2.2.3 ແຜນງານທີ III: ຍົກລະດັບການພັດທະນາເອກະຊົນ ແລະ ວິສາຫະກິດ

ສປປ ລາວ ຈະຕ້ອງໄດ້ແກ້ໄຂສິ່ງທ້າທາຍທາງດ້ານໂຄງສ້າງຫຼາຍປະການ ໃນການອອກແບບການປະຕິຮູບ ແລະ ກິດຈະກຳບຸລິມະສິດ ທີ່ແນໃສ່ເສີມສ້າງຄວາມສາມາດໃນການແຂ່ງຂັນ ຂອງທັງລັດວິສາຫະກິດ (SOE) ແລະ ບໍລິສັດ ເອກະຊົນ. ຂໍ້ຈຳກັດຕົ້ນຕໍລວມມີ:

(i) ສະພາບເສດຖະກິດມະຫາພາກທີ່ຍັງອ່ອນໄຫວ ພ້ອມກັບພາລະໜີ້ສິນທີ່ສູງ ເຮັດໃຫ້ຊັບພະຍາກອນດ້ານການເງິນ ຂອງລັດຖະບານມີຄວາມຈຳກັດຫຼາຍ. ການຮັບປະກັນສະຖຽນລະພາບດ້ານເສດຖະກິດມະຫາພາກ ແມ່ນເງື່ອນໄຂ ເບື້ອງຕົ້ນໃນການຊຸກຍູ້ຄວາມສາມາດໃນການແຂ່ງຂັນ ຂອງພາກເອກະຊົນ.

(ii) ການແກ້ໄຂຂໍ້ຂັດແຍ່ງທາງດ້ານການຄ້າ ເພື່ອບັງຄັບໃຊ້ສັນຍາ ແມ່ນຕ້ອງໃຊ້ເວລາຫຼາຍ ແລະ ມີຄ່າໃຊ້ຈ່າຍສູງ.

(iii) ລະດັບຂີດຄວາມສາມາດ ຂອງຊັບພະຍາກອນມະນຸດຍັງຕ່ຳ.

(iv) ຂະແໜງການນອກລະບົບ ຫຼື ການຜະລິດແບບກຸ້ມຕົນເອງ ມີຂະໜາດໃຫຍ່.

(v) ມີລະບຽບການທີ່ຊ້ຳຊ້ອນ ພ້ອມກັບຂັ້ນຕອນທີ່ຫຍຸ້ງຍາກ ແລະ ມາດຕະການທີ່ບໍ່ແມ່ນພາສີ (NTM).

(vi) ຕົ້ນທຶນດ້ານການຄ້າ ແລະ ໂລຊິດສະຕິກທີ່ສູງ ໄດ້ກີດດັນ ແລະ ຈຳກັດຫຼາຍໆໂອກາດໃນການລົງທຶນ.

ຂໍ້ຈຳກັດເຫຼົ່ານີ້ ແມ່ນເຫດຜົນພື້ນຖານສຳລັບເປົ້າໝາຍຍຸດທະສາດ ໃນການປັບປຸງສະພາບແວດລ້ອມທີ່ອຳນວຍ ໃຫ້ແກ່ການດຳເນີນທຸລະກິດ, ການເພີ່ມທະວີການຄ້າ ແລະ ການຍົກສູງຄວາມສາມາດໃນການແຂ່ງຂັນໃນທົ່ວລະບົບ ເສດຖະກິດ. ການຫຼຸດຜ່ອນຕົ້ນທຶນໃນການຂຶ້ນທະບຽນວິສາຫະກິດ ແລະ ການອອກໃບອະນຸຍາດ, ການເສີມສ້າງການ ປຶກສາຫາລືລະຫວ່າງພາກລັດ-ເອກະຊົນ ແລະ ຄວາມໂປ່ງໃສ, ພ້ອມທັງການປັບປຸງທັກສະແຮງງານ ແມ່ນເງື່ອນໄຂທີ່ ຈຳເປັນ ເພື່ອເພີ່ມໂອກາດໃນການລົງທຶນຢູ່ ສປປ ລາວ.

ລະດັບຄາດໝາຍຕົ້ນຕໍ ສຳລັບການພັດທະນາວິສາຫະກິດ ລວມມີ:

1. ປັບປຸງຕົວຊີ້ບອກຜົນການປະຕິບັດ ຂອງ ສປປ ລາວ ໃນບາງຫົວຂໍ້ຄັດເລືອກ ຂອງບົດລາຍງານ Business Ready (B-READY) ຂອງທະນາຄານໂລກ:

ກ. ການສ້າງຕັ້ງທຸລະກິດ/ເລີ່ມຕົ້ນທຸລະກິດ (Business entry): ປັບປຸງໃຫ້ດີຂຶ້ນ 10 ສ່ວນຮ້ອຍ ທຽບກັບປີ 2025.

ຂ. ການບໍລິການສາທາລະນຸປະໂພກ (Utility services): ປັບປຸງໃຫ້ດີຂຶ້ນ 10 ສ່ວນຮ້ອຍ ທຽບກັບປີ 2025.

ຄ. ການບໍລິການທາງດ້ານການເງິນ (Financial services): ປັບປຸງໃຫ້ດີຂຶ້ນ 10 ສ່ວນຮ້ອຍ ທຽບກັບປີ 2025.

2. ເປີເຊັນ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ທີ່ສາມາດເຂົ້າເຖິງສິນເຊື່ອທະນາຄານໃນລະບົບ ໃຫ້ເພີ່ມຂຶ້ນເປັນ 35 ສ່ວນຮ້ອຍ ພາຍໃນປີ 2030.

3. ຢ່າງໜ້ອຍມີ 250 ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໄດ້ຮັບການບໍລິການທີ່ປຶກສາແບບມີເປົ້າໝາຍ ຈາກໂຄງການຊ່ວຍເຫຼືອຕ່າງໆ (ຕໍ່ປີ).

2.2.3.1 ປັບປຸງດ້ານການຄ້າ ແລະ ອຸດສາຫະກຳ ແລະ ສະພາບແວດລ້ອມການດຳເນີນທຸລະກິດ

ສປປ ລາວ ໄດ້ມີຄວາມຄືບໜ້າຢ່າງຫຼວງຫຼາຍ ໃນການສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ ການດຳເນີນທຸລະກິດ ໃນທົດສະວັດທີ່ຜ່ານມາ; ເຖິງຢ່າງໃດກໍຕາມ, ຍັງຈຳເປັນຕ້ອງມີການດຳເນີນການເພີ່ມເຕີມ ເພື່ອ ຫຼຸດຜ່ອນຄວາມສ່ຽງ ແລະ ຕົ້ນທຶນໃນການເລີ່ມຕົ້ນ ແລະ ດຳເນີນທຸລະກິດ. ໃນສະໄໝ ຂອງແຜນການ 5 ປີ (FYP)

2026-2030, ກະຊວງອຸດສາຫະກຳ ແລະ ການຄ້າ ຈະຈັດຕັ້ງປະຕິບັດການປັບປຸງສະພາບແວດລ້ອມທາງທຸລະກິດ ດັ່ງນີ້:

ກິດຈະກຳບຸລິມະສິດຫຼັກ ສຳລັບປີ 2026-2030 ລວມມີ:

(i) ລົງເລິກການປະຕິຮູບການເຂົ້າເລີ່ມຕົ້ນທຸລະກິດ, ລວມທັງການຈັດຕັ້ງປະຕິບັດລະບົບຂຶ້ນທະບຽນວິສາຫະກິດແບບເອເລັກໂຕຣນິກ (eBRS) ຢ່າງເຕັມຮູບແບບ. ສິ່ງນີ້ຈະເປັນການເພີ່ມປະສິດທິພາບ ແລະ ຂະຫຍາຍຂອບເຂດການບໍລິການໃຫ້ກວ້າງຂວາງ, ໂດຍສະເພາະຢູ່ບັນດາແຂວງ, ເມືອງ ແລະ ເຂດເສດຖະກິດພິເສດ (SEZ).

(ii) ສ້າງຕັ້ງຂອບວຽກການອອກໃບອະນຸຍາດໂດຍອີງໃສ່ພື້ນຖານຄວາມສ່ຽງ ຜ່ານເວບໄຊຂໍ້ມູນຂ່າວສານທາງທຸລະກິດແບບອອນລາຍ ແລະ ສຶກສາການເຊື່ອມໂຍງກັບລະບົບ eBRS ເພື່ອຫຼຸດຜ່ອນພາລະດ້ານລະບຽບການໃນການອອກໃບອະນຸຍາດທຸລະກິດ ແລະ ຫຼຸດຕົ້ນທຶນໃນການຊອກຫາໂອກາດດ້ານການລົງທຶນ ແລະ ການຄ້າ.

(iii) ທົບທວນເຄື່ອງມືນະໂຍບາຍສົ່ງເສີມດ້ານການລົງທຶນ ເພື່ອຮັບປະກັນໃຫ້ສອດຄ່ອງກັບເປົ້າໝາຍການລົງທຶນຂອງລັດຖະບານ (ເຊັ່ນ: ການເພີ່ມຄວາມຫຼາກຫຼາຍ ແລະ ການສ້າງການເຊື່ອມໂຍງໃຫ້ຫຼາຍຂຶ້ນພາຍໃນລະບົບເສດຖະກິດ).

(iv) ເຂົ້າເປັນສະມາຊິກ ຂອງສູນສາກົນເພື່ອການແກ້ໄຂຂໍ້ຂັດແຍ່ງດ້ານການລົງທຶນ (ICSID).

(v) ລົບລ້າງຂໍ້ຈຳກັດໃນການເຂົ້າສູ່ຕະຫຼາດ ສຳລັບຂະແໜງບໍລິການທີ່ສຳຄັນ (ເຊັ່ນ: ການຂົນສົ່ງ ແລະ ໂລຊິດສະຕິກ) ເພື່ອສົ່ງເສີມການແຂ່ງຂັນ ແລະ ປະສິດທິພາບ.

(vi) ເພີ່ມທະວີການສື່ສານ ແລະ ການເຂົ້າເຖິງສັງຄົມ, ເສີມສ້າງການສະໜອງຂໍ້ມູນດ້ານນະໂຍບາຍ ແລະ ລະບຽບການທາງທຸລະກິດ ແລະ ການຄ້າ ໂດຍຜ່ານການປັບປຸງຂໍ້ມູນເປັນປົກກະຕິໃນ ສູນຂໍ້ມູນຂ່າວສານການຄ້າ ຂອງ ສປປ ລາວ (Lao Trade Portal), ເວບໄຊຂໍ້ມູນຂ່າວສານໃບອະນຸຍາດການດຳເນີນທຸລະກິດ ແລະ ເວບໄຊຂໍ້ມູນຂ່າວສານອື່ນໆ.

(vii) ປະສານງານກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ) ເພື່ອຄ່ອຍໆປັບປຸງຄ່າແຮງງານຂັ້ນຕ່ຳ ເພື່ອຫຼຸດຜ່ອນຄວາມແຕກໂຕນກັບປະເທດໃກ້ຄຽງ ແລະ ເພື່ອສ້າງແຮງຈູງໃຈໃຫ້ແຮງງານໃນພາກການຜະລິດແບບກຸ້ມຕົນເອງ ເຂົ້າສູ່ຕະຫຼາດແຮງງານ ຂອງລາວ.

(viii) ປະສານງານກັບກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງ ຮສສ ເພື່ອເພີ່ມການລົງທຶນໃນຫຼັກສູດການຍົກລະດັບທັກສະ (Upskilling) ແລະ ການສ້າງທັກສະໃໝ່ (Reskilling) ໃຫ້ສອດຄ່ອງກັບຄວາມຕ້ອງການດ້ານທັກສະໃນຂະແໜງການທີ່ກຳລັງເຕີບໂຕ ຂອງລາວ. ຊຸກຍູ້ໃຫ້ພາກເອກະຊົນມີສ່ວນຮ່ວມຢ່າງຕັ້ງໜ້າ ໃນການອອກແບບ ແລະ ຈັດຕັ້ງການພັດທະນາທັກສະໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງອຸດສາຫະກຳ.

(ix) ປະສານງານກັບກະຊວງ ຮສສ ເພື່ອລົງທຶນໃນລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ເພື່ອສະໜອງສະຖິຕິຕະຫຼາດແຮງງານທີ່ກ່ຽວຂ້ອງ ແລະ ທັນການ, ລວມທັງການຕິດຕາມລະດັບທັກສະແຮງງານ.

(x) ສະໜອງຂໍ້ມູນ ແລະ ຄຳແນະນຳທາງດ້ານເຕັກນິກ ເພື່ອຊ່ວຍເຫຼືອພາກທຸລະກິດ ໃຫ້ສາມາດປະຕິບັດໄດ້ຕາມລະບຽບການ ແລະ ມາດຕະຖານຕົ້ນຕໍ ດ້ານແຮງງານ, ສິ່ງແວດລ້ອມ ແລະ ການຄຸ້ມຄອງບໍລິຫານ ເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ພວມເກີດຂຶ້ນໃໝ່ໃນຕະຫຼາດຕ່າງປະເທດທີ່ສຳຄັນ (ເຊັ່ນ: EUDR, CSDDD).

2.2.3.2 ສົ່ງເສີມການພັດທະນາຜູ້ປະກອບການ, ຍົກລະດັບຄວາມສາມາດແຂ່ງຂັນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ)

ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ແມ່ນກະດູກສັນຫຼັງ ຂອງເສດຖະກິດລາວ , ເຊິ່ງກວມເອົາຫຼາຍກວ່າ 99 ສ່ວນຮ້ອຍ ຂອງວິສາຫະກິດທັງໝົດ ແລະ ເປັນຂະແໜງການທີ່ສ້າງວຽກເຮັດງານທຳໃຫ້ແຮງງານສ່ວນໃຫຍ່. ເຖິງຢ່າງໃດກໍຕາມ, ການປະກອບສ່ວນເຂົ້າໃນ ການຜະລິດ, ຕ່ອງໂສ້ມູນຄ່າ, ຜະລິດຕະພາບ, ນະວັດຕະກຳ ແລະ ການສົ່ງອອກຍັງມີຈຳກັດ. MSMEs ສ່ວນໃຫຍ່ແມ່ນມີຂະໜາດຈຸນລະພາກ, ກະຈຸກຕົວຢູ່ໃນຂະແໜງ ການຄ້າ ແລະ ການບໍລິການທີ່ມີມູນຄ່າເພີ່ມຕ່ຳ ແລະ ດຳເນີນທຸລະກິດໃນພາກນອກລະບົບ, ໂດຍມີພຽງແຕ່ປະມານ 1 ໃນ 3 ເທົ່ານັ້ນທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງ. MSMEs ຍັງສືບຕໍ່ປະເຊີນກັບຂໍ້ຈຳກັດຫຼາຍດ້ານ, ລວມມີ ລະບົບນິເວດ ການປະກອບການທີ່ຍັງອ່ອນນ້ອຍ, ການເຂົ້າເຖິງແຫຼ່ງທຶນທີ່ມີຂໍ້ຈຳກັດເນື່ອງຈາກເງື່ອນໄຂຊັບສິນຄ້ຳປະກັນທີ່ສູງ ແລະ ລະບົບການຄ້ຳປະກັນສິນເຊື່ອທີ່ຍັງບໍ່ທັນພັດທະນາ, ຜະລິດຕະພາບຕ່ຳ, ການນຳໃຊ້ເຕັກໂນໂລຊີມີຈຳກັດ, ແລະ ຂີດຄວາມສາມາດດ້ານການຄົ້ນຄວ້າ ແລະ ນະວັດຕະກຳຍັງບໍ່ທັນສູງ. ການເຂົ້າເຖິງການບໍລິການພັດທະນາທຸລະກິດແບບສະເພາະດ້ານຍັງບໍ່ທັນພຽງພໍ ແລະ ການເຂົ້າເຖິງຕະຫຼາດຍັງແຄບ, ໂດຍມີວິສາຫະກິດພຽງບໍ່ເທົ່າໃດແຫ່ງທີ່ສາມາດເຊື່ອມໂຍງເຂົ້າກັບຕ່ອງໂສ້ມູນຄ່າພາກພື້ນ ຫຼື ສາກົນ.

ສະພາບແວດລ້ອມທາງທຸລະກິດກໍຍັງເປັນສິ່ງທ້າທາຍ ເນື່ອງຈາກຂັ້ນຕອນການອອກໃບອະນຸຍາດທີ່ຊັບຊ້ອນ, ການປຶກສາຫາລືລະຫວ່າງພາກລັດ ແລະ ເອກະຊົນມີຈຳກັດ ແລະ ການຈັດຕັ້ງປະຕິບັດລະບຽບການທີ່ບໍ່ເປັນເອກະພາບ. ຄວາມກົດດັນທີ່ເກີດຂຶ້ນໃໝ່ ເຊັ່ນ: ການຂາດແຄນແຮງງານ, ການຫັນປ່ຽນໄປສູ່ເສດຖະກິດສີຂຽວ ແລະ ຜົນກະທົບທີ່ຍັງຫຼົງເຫຼືອຈາກ COVID-19 ໄດ້ເພີ່ມຄວາມອ່ອນໄຫວ ແລະ ເຮັດໃຫ້ການຟື້ນຕົວຊ້າລົງ.

ເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້, ນະໂຍບາຍພັດທະນາ MSME ປີ 2026-2030 ຈະເປັນເຂັມທິດໃນການຫັນປ່ຽນຂະແໜງການດັ່ງກ່າວ ໂດຍຜ່ານແຜນງານການພັດທະນາແບບຮອບດ້ານ ທີ່ສ້າງຂຶ້ນປິ່ນອ້ອມ 2 ຈຸດປະສົງ ແລະ 4 ເສົາຄ້ຳ ທີ່ເຊື່ອມໂຍງກັນ.

ສອງຈຸດປະສົງ:

1. ອຳນວຍຄວາມສະດວກໃຫ້ຜູ້ປະກອບການ, MSMEs ແລະ Startups ເຂົ້າສູ່ລະບົບທຸລະກິດທີ່ເປັນແບບແຜນທາງການ (Formalization).

2. ຊຸກຍູ້ໃຫ້ຜູ້ປະກອບການ, MSMEs ແລະ Startups ຂະຫຍາຍຂະໜາດທຸລະກິດໃຫ້ໃຫຍ່ຂຶ້ນ (Scale up).

ສີ່ເສົາຄ້ຳ:

1. ອຳນວຍຄວາມສະດວກໃນການຫັນເຂົ້າສູ່ລະບົບ ແລະ ການເຂົ້າເຖິງແຫຼ່ງທຶນ.

2. ສົ່ງເສີມການພັດທະນາ ຜູ້ປະກອບການ ແລະ Startups.

3. ຍົກສູງຜະລິດຕະພາບ ແລະ ຄວາມສາມາດໃນການແຂ່ງຂັນ ຂອງ ຜູ້ປະກອບການ, MSMEs ແລະ Startups.

4. ປັບປຸງການເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດ.

ເສົາຄ້ຳທີ 1: ອຳນວຍຄວາມສະດວກໃນການຫັນວິສາຫະກິດເຂົ້າສູ່ລະບົບທາງການ ແລະ ການເຂົ້າເຖິງແຫຼ່ງທຶນ

ຮັບປະກັນວິສາຫະກິດໄດ້ຮັບການຈົດທະບຽນຢ່າງເປັນທາງການຕາມກົດໝາຍ ແລະ ລະບຽບການ ແລະ ສາມາດຮັບປະກັນແຫຼ່ງທຶນທີ່ເໝາະສົມເພື່ອເລີ່ມຕົ້ນ ແລະ ຂະຫຍາຍການດຳເນີນງານ, ຍົກລະດັບເຕັກໂນໂລຊີ ແລະ ການເຕີບໂຕແບບຍືນຍົງຜ່ານການປະຕິບັດຕໍ່ໄປນີ້.

ເປີດໃຊ້ວິສາຫະກິດ: ແກ້ໄຂອຸປະສັກການເຂົ້າເຖິງແຫຼ່ງທຶນການເງິນ, ຕະຫຼາດ ແລະ ການຊ່ວຍເຫຼືອຂອງລັດຖະບານໂດຍການນຳວິສາຫະກິດເຂົ້າໄປໃນລະບົບຢ່າງເປັນທາງການ.

(i) ປັບປຸງຂະບວນການລົງທະບຽນວິສາຫະກິດ ເພື່ອເຮັດໃຫ້ຂະບວນຍື່ນຄຳຮ້ອງຂອງວິສາຫະກິດງ່າຍຂຶ້ນ ແລະ ຫຼຸດຜ່ອນໄດ້ດ້ານເວລາ.

(ii) ສະໜອງນະໂຍບາຍແຮງຈູງໃຈ ແລະ ຜົນປະໂຫຍດທີ່ຊັດເຈນ ເພື່ອຊຸກຍູ້ໃຫ້ວິສາຫະກິດຈັດຕັ້ງເປັນທາງການຢ່າງຖືກຕ້ອງ ສາມາດເຂົ້າເຖິງເງິນກູ້ດອກເບ້ຍຕ່ຳ: ຫຼຸດຜ່ອນຄ່າໃຊ້ຈ່າຍໃນການກູ້ຢືມ ແລະ ຮັບປະກັນວ່າວິສາຫະກິດຈະໄດ້ຮັບແຫຼ່ງທຶນ ເພື່ອໄປພັດທະນາທຸລະກິດຂອງເຂົາເຈົ້າ.

(iii) ປັບປຸງຂັ້ນຕອນການກູ້ຢືມ ແລະ ຫຼຸດຜ່ອນຄ່າທຳນຽມ ເພື່ອເຮັດໃຫ້ການເຂົ້າເຖິງງ່າຍຂຶ້ນ ແລະ ຫຼຸດຕົ້ນທຶນການກູ້ຢືມສຳລັບວິສາຫະກິດ.

(iv) ຍົກລະດັບກອງທຶນສົ່ງເສີມວິສາຫະກິດໃຫ້ເປັນທະນາຄານພັດທະນາວິສາຫະກິດເພື່ອເພີ່ມປະສິດທິພາບ ແລະ ຂະຫຍາຍການສະໜັບສະໜູນທາງດ້ານການເງິນ.

(v) ອອກແບບໂຄງຮ່າງການໃຫ້ກູ້ຢືມທີ່ເໝາະສົມສຳລັບກຸ່ມຜູ້ຜະລິດໃນຂະແໜງການທີ່ເປັນບູລິມະສິດຂອງລັດຖະບານ ເພື່ອປັບປຸງການເງິນຕາມເປົ້າໝາຍ ແລະແກ້ໄຂຄວາມຕ້ອງການສະເພາະຄວາມຫຼາກຫຼາຍຂອງຜະລິດຕະພັນສິນເຊື່ອ ແລະ ຮູບແບບການສະໜອງທຶນ: ໃຫ້ວິສາຫະກິດມີທາງເລືອກດ້ານການເງິນທີ່ກວ້າງຂວາງທີ່ເໝາະສົມກັບຄວາມຕ້ອງການຂອງທຸລະກິດ, ໄລຍະການຂະຫຍາຍຕົວ ແລະ ຄວາມສ່ຽງ.

(vi) ພັດທະນາຮູບແບບການເງິນທີ່ຫຼາກຫຼາຍ, ລວມທັງກອງທຶນລົງທຶນ, ບໍລິສັດລົງທຶນ ເພື່ອຂະຫຍາຍການເຂົ້າເຖິງທຶນໃນການລົງທຶນ.

(vii) ຊຸກຍູ້ໃຫ້ທະນາຄານການຄ້າ ແລະ ຮ້ານຂາຍຍ່ອຍຂະໜາດໃຫຍ່ສະເໜີໃຫ້ທຶນໃນລະບົບຕ່ອງໂສ້ມູນຄ່າທີ່ເຊື່ອມຕໍ່ຜູ້ຜະລິດຂະໜາດນ້ອຍກັບຊ່ອງທາງການຄ້າທັນສະໄໝ ແລະ ຕະຫຼາດທີ່ໝັ້ນຄົງກວ່າ.

(viii) ອອກແບບຜະລິດຕະພັນທາງດ້ານການເງິນສະເພາະສຳລັບວິສາຫະກິດ, ເຊັ່ນ: ໂຄງການການເງິນສີຂຽວທີ່ສະໜັບສະໜູນ "Greening MSMEs" ໂດຍຜ່ານການປ່ອຍອາຍພິດຄາບອນຕ່ຳ, ການຮັບຮອງເອົາພະລັງງານທົດແທນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມປັບປຸງສະຖາບັນການເງິນພາກລັດ ແລະ ເອກະຊົນ: ເສີມສ້າງຄວາມສາມາດ ແລະ ປະສິດທິພາບຂອງສະຖາບັນການເງິນໃນການສະໜອງສິນເຊື່ອໃຫ້ວິສາຫະກິດ.

(ix) ຍົກລະດັບຂໍ້ມູນຂ່າວສານ ກ່ຽວກັບສິນເຊື່ອ ທີ່ເຊື່ອຖືໄດ້.

(x) ປະຕິບັດການບໍລິສັດຄ້ຳປະກັນສິນເຊື່ອໂດຍການຮັບປະກັນແຫຼ່ງທຶນແບບຍືນຍົງ ແລະ ຮັບປະກັນໃຫ້ມີພະນັກງານທີ່ພຽງພໍກັບທັງພະນັກງານລັດຖະກອນ ແລະ ພະນັກງານຕາມສັນຍາ.

(xi) ຈັດໃຫ້ມີບັນດາໂຄງການຝຶກອົບຮົມພະນັກງານສິນເຊື່ອເປັນປະຈຳ ເພື່ອເສີມຂະຫຍາຍຄວາມສາມາດ, ປັບປຸງການຕີລາຄາເງິນກູ້, ຍົກສູງປະສິດທິຜົນຂອງການປ່ອຍເງິນກູ້ໃຫ້ກັບວິສາຫະກິດ.

(xii) ເລັ່ງການນຳໃຊ້ເຕັກໂນໂລຊີໃນການໃຫ້ເງິນກູ້: ປັບປຸງການເຂົ້າເຖິງເງິນກູ້ຂອງວິສາຫະກິດຜ່ານທາງດິຈິຕອນ ແລະ ວິທີແກ້ໄຂທີ່ຂັບເຄື່ອນດ້ວຍເຕັກໂນໂລຊີ.

(xiii) ຂະຫຍາຍການນຳໃຊ້ເຕັກໂນໂລຊີການເງິນ ເພື່ອເຮັດໃຫ້ການກູ້ຢືມສະດວກ, ໄວຂຶ້ນ ແລະ ເຂົ້າເຖິງວິສາຫະກິດໄດ້ຫຼາຍຂຶ້ນ.

(xiv) ແນະນຳກົນໄກການຮ່ວມທຶນ ເພື່ອສະໜັບສະໜູນການຍົກລະດັບເຕັກໂນໂລຊີ ແລະ ເຮັດໃຫ້ການຮັບຮອງເອົາຢ່າງກວ້າງຂວາງຂອງການແກ້ໄຂທາງດ້ານການເງິນດິຈິຕອນ, ປັບປຸງປະສິດທິພາບໃນທົ່ວລະບົບນິເວດການກູ້ຢືມເງິນ.

ເສົາຄ້ຳທີ 2: ສົ່ງເສີມການພັດທະນາຜູ້ປະກອບການ ແລະ Startups

ສະໜັບສະໜູນຜູ້ປະກອບການ ແລະ Startups ຜ່ານການສ້າງລະບົບນິເວດ ແລະ ການສະໜອງສິ່ງອຳນວຍຄວາມສະດວກ ເພື່ອຊ່ວຍໃນການເຕີບໂຕ ຂອງທຸລະກິດ, ການຍົກສູງຂີດຄວາມສາມາດ ແລະ ການຂະຫຍາຍຕົວ ຂອງການດຳເນີນງານ.

(xiv) ພັດທະນາລະບົບນິເວດ Startup ເພື່ອປົ່ມເພາະການປະກອບການ ແລະ ນະວັດຕະກຳ ເຊັ່ນ: ການສ້າງຕັ້ງສູນນະວັດຕະກຳ ຫຼື ສູນປົ່ມເພາະທຸລະກິດ ຮ່ວມກັບມະຫາວິທະຍາໄລ ແລະ ບັນດາສະຖາບັນຄົ້ນຄວ້າ ເພື່ອຊ່ວຍ Startups ປ່ຽນແນວຄວາມຄິດໃຫ້ກາຍເປັນຜະລິດຕະພັນທີ່ພ້ອມອອກສູ່ຕະຫຼາດ ແລະ ຈັດການແຂ່ງຂັນແຜນທຸລະກິດ ພ້ອມທັງສະໜັບສະໜູນດ້ານທຶນຮອນ ແລະ ເຕັກນິກ ສຳລັບທຸລະກິດສ່ຽງແຕ່ມີຫວັງທຳກຳໄລໄດ້.

(xv) ສົ່ງເສີມການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ, ການເລີ່ມຕົ້ນ, ແລະ ກິດຈະກຳເຄືອຂ່າຍເພື່ອສ້າງຄວາມເຂັ້ມແຂງການຮ່ວມມື ລະຫວ່າງ ພາກລັດ, ພາກເອກະຊົນ ແລະ ນັກລົງທຶນ

ເສົາຄ້ຳທີ 3: ຍົກສູງຜະລິດຕະພາບ ແລະ ຄວາມສາມາດໃນການແຂ່ງຂັນ ຂອງຜູ້ປະກອບການ, MSMEs ແລະ Startups

ຮັບປະກັນໃຫ້ຜູ້ປະກອບການ, MSMEs ແລະ Startups ມີທັກສະທີ່ຈຳເປັນ, ມີລະບົບສະໜັບສະໜູນ ແລະ ນະໂຍບາຍສົ່ງເສີມ ເພື່ອໃຫ້ສາມາດດຳເນີນງານໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ການສ້າງພື້ນຖານ: ເສີມສ້າງຂອບວຽກດ້ານສະຖາບັນ ແລະ ການຮ່ວມມື ເພື່ອສົ່ງເສີມຜະລິດຕະພາບແຫ່ງຊາດ.

(xvi) ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ອົງການຜະລິດຕະພາບແຫ່ງຊາດລາວ (LNPO) ແລະ ສູນບໍລິການ SME ເພື່ອໃຫ້ເປັນອົງກອນລະດັບຊາດ ແລະ ເປັນເຄືອຂ່າຍລະບົບສະໜັບສະໜູນ SME ທີ່ຮັບຜິດຊອບໃນການສົ່ງເສີມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ, ແລະ ເພື່ອການປະສານງານໂຄງການຜະລິດຕະພາບແຫ່ງຊາດ.

(xvii) ລະດົມທຶນຈາກແຫຼ່ງທີ່ເປັນໄປໄດ້ ແລະ ຍືນຍົງ ເພື່ອຈັດຕັ້ງປະຕິບັດແຜນແມ່ບົດຍົກສູງຜະລິດຕະພາບແຫ່ງຊາດໃຫ້ມີປະສິດທິຜົນ ແລະ ສອດຄ່ອງກັບບຸລິມະສິດການພັດທະນາ ຂອງຊາດ.

(xviii) ລົງເລິກການຮ່ວມມືກັບ ອົງການຜະລິດຕະພາບແຫ່ງອາຊີ (APO) ແລະ ສະຖາບັນພັດທະນາ SME ໃນລະດັບພາກພື້ນ ແລະ ສາກົນ ເພື່ອແລກປ່ຽນບົດຮຽນທີ່ດີ, ປັບປຸງແຜນງານລະດັບຊາດໃຫ້ສອດຄ່ອງກັບມາດຕະຖານພາກພື້ນ ແລະ ກຽມສະເໜີໂຄງການຕ່າງໆ ເຊັ່ນ: ງານວາງສະແດງຜະລິດຕະພາບແຫ່ງຊາດ, ກອງປະຊຸມສຳມະນາ, ການໄປທັດສະນະສຶກສາ ແລະ ກິດຈະກຳສ້າງຄວາມຮັບຮູ້ເຂົ້າໃຈ ອື່ນໆ ເພື່ອເປັນການສ້າງວັດທະນະທຳດ້ານຜະລິດຕະພາບ ແລະ ນະວັດຕະກຳໃນທົ່ວປະເທດ.

ການພັດທະນາຂີດຄວາມສາມາດ: ຍົກສູງຄວາມອາດສາມາດລວມ ຂອງ MSME ໂດຍຜ່ານການຊ່ວຍເຫຼືອ ຈາກຊ່ຽວຊານ ແລະ ການຍົກລະດັບທັກສະ.

(xix) ເສີມສ້າງຄວາມຊ່ຽວຊານດ້ານເຕັກນິກ ແລະ ການພັດທະນາທຸລະກິດ ໂດຍການສ້າງ ແລະ ຈັດຈ້າງຊ່ຽວຊານ ເພີ່ມເຕີມ ເພື່ອປັບປຸງປະສິດທິພາບການຜະລິດ ແລະ ຊ່ວຍ MSMEs ໃນການໄດ້ຮັບໃບຢັ້ງຢືນ, ການປະຕິບັດ ຕາມມາດຕະຖານຄຸນນະພາບ ແລະ ການປັບປຸງການດຳເນີນງານ.

(xx) ຊຸກຍູ້ການມີສ່ວນຮ່ວມຂອງພາກເອກະຊົນ, ລວມທັງນັກທຸລະກິດທີ່ມີປະສົບການ, ປະກອບສ່ວນໂດຍຜ່ານ ການແລກປ່ຽນຄວາມຮູ້, ຄູຝຶກສອນ, ແລະຄຳແນະນຳ.

(xxi) ຈັດຕັ້ງແຜນຝຶກອົບຮົມກ່ຽວກັບການຫັນເປັນດິຈິຕອນ, ຄວາມຮູ້ດ້ານການເງິນ ແລະ ການປະກອບການ ໂດຍ ຜ່ານຫຼາຍຊ່ອງທາງ ເຊັ່ນ: ຫຼັກສູດມັດທະຍົມປາຍ ແລະ ອາຊີວະສຶກສາ ພ້ອມທັງການຈຳລອງການເຮັດທຸລະ ກິດໃນໂຮງຮຽນ ເພື່ອສ້າງຂີດຄວາມອາດສາມາດລວມດ້ານການຄຸ້ມຄອງ, ຂີດຄວາມສາມາດດ້ານການເງິນ ແລະ ຄວາມສາມາດໃນການແຂ່ງຂັນ.

ລະບົບການຍ້ອງຍໍສັນລະເສີນ: ສິ່ງເສີມຄວາມເປັນເລີດດ້ານນະວັດຕະກຳ ແລະ ຜະລິດຕະພາບໃນບັນດາ MSMEs.

(xxii) ສ້າງຕັ້ງລະບົບການຍ້ອງຍໍສັນລະເສີນ ເພື່ອເຊີດຊູ MSMEs ທີ່ມີຜົນງານດີເດັ່ນດ້ານນະວັດຕະກຳ, ລວມທັງ ການອອກແບບຜະລິດຕະພັນທີ່ໂດດເດັ່ນ, ຄວາມກ້າວໜ້າທາງເຕັກໂນໂລຊີ, ການປະຢັດພະລັງງານ, ຄວາມຍືນ ຍົງດ້ານສິ່ງແວດລ້ອມ ແລະ ການນຳໃຊ້ຮູບແບບທຸລະກິດທີ່ຍືນຍົງ.

ເສົາຄ້ຳທີ 4: ປັບປຸງການເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດ

ເຊື່ອມໂຍງ MSMEs ເຂົ້າສູ່ຕະຫຼາດພາຍໃນ ແລະ ສາກົນໃຫ້ກວ້າງຂວາງຂຶ້ນ ໂດຍການເສີມສ້າງຕ່ອງໂສ້ມູນ ຄ່າ, ຂະຫຍາຍຊ່ອງທາງດິຈິຕອນ, ພ້ອມທັງຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ.

ການເຂົ້າເຖິງຕະຫຼາດ ແລະ ການພັດທະນາຊ່ອງທາງຈຳໜ່າຍ: ຂະຫຍາຍການເຂົ້າເຖິງລູກຄ້າ ຂອງ MSME ແລະ ເພີ່ມທະວີການມີສ່ວນຮ່ວມໃນເຄືອຂ່າຍການສະໜອງ ແລະ ການຈັດຈຳໜ່າຍ ທັງພາຍໃນ ແລະ ຕ່າງປະເທດ.

(xxiii) ສິ່ງເສີມການເປັນຄູ່ຮ່ວມກັບຕົວແບບການຄ້າຍ່ອຍ ແລະ ການຄ້າທີ່ທັນສະໄໝ ເຊັ່ນ: ຊຸບເປີມາເກັດ, ຮ້ານ ສັບພະສິນຄ້າ ແລະ ຮ້ານສະດວກຊື້ ເພື່ອເຊື່ອມໂຍງຜູ້ຜະລິດເຂົ້າກັບຜູ້ຈຳໜ່າຍ ແລະ ຂະຫຍາຍການເຂົ້າເຖິງ ຕະຫຼາດພາຍໃນ.

(xxiv) ເສີມສ້າງການມີສ່ວນຮ່ວມ ຂອງ MSME ໃນການຈັດຊື້-ຈັດຈ້າງ ຂອງລັດ ໂດຍກຳນົດໃຫ້ພາກສ່ວນລັດໃຫ້ ບຸລິມະສິດແກ່ສິນຄ້າ ແລະ ການບໍລິການພາຍໃນທີ່ມີຄຸນນະພາບ ແມ່ນມາຈາກ MSMEs.

(xxv) ຊຸກຍູ້ໃຫ້ວິສາຫະກິດຂະໜາດໃຫຍ່ ແລະ ນັກລົງທຶນຕ່າງປະເທດ (ລວມທັງໃນເຂດເສດຖະກິດພິເສດ) ນຳໃຊ້ ຜະລິດຕະພັນຈາກ MSMEs.

(xxvi) ຈັດກິດຈະກຳຈັບຄູ່ທຸລະກິດ (B2B), ງານວາງສະແດງສິນຄ້າ ແລະ ການພົບປະລະຫວ່າງຜູ້ຊື້-ຜູ້ຂາຍ ເພື່ອ ເຊື່ອມຕໍ່ MSMEs ກັບຜູ້ຊື້ພາຍໃນ ແລະ ທົ່ວໂລກ, ສ້າງການເປັນຄູ່ຮ່ວມ ແລະ ລົງເລິກການເຊື່ອມໂຍງເຂົ້າ ໃນຕ່ອງໂສ້ມູນຄ່າພາກພື້ນ ແລະ ສາກົນ.

(xxvii) ສ້າງຄວາມເຂັ້ມແຂງໃຫ້ການສົ່ງອອກໄປຍັງຕ່າງປະເທດ ໂດຍການກຳນົດ ແລະ ຈັດລຳດັບຄວາມສຳຄັນ ຂອງ ຜະລິດຕະພັນ ແລະ ຂະແໜງການທີ່ມີທ່າແຮງສູງ ເພື່ອສຸມໃສ່ການພັດທະນາແບບມີເປົ້າໝາຍ.

ການປັບປຸງຕ່ອງໂສ້ມູນຄ່າໂດຍລວມໃຫ້ເໝາະສົມທີ່ສຸດ: ປັບປຸງການເຊື່ອມໂຍງ ແລະ ປະສິດທິພາບ ຂອງ MSME ໂດຍການແກ້ໄຂບັນຫາທີ່ເປັນອຸປະສັກໃນທຸກຂັ້ນຕອນ ຂອງຕ່ອງໂສ້ມູນຄ່າ.

(xxviii) ຊຸກຍູ້ໃຫ້ MSMEs ລວມກຸ່ມເປັນກຸ່ມອຸດສາຫະກຳ (Clusters) ແລະ ມີສ່ວນຮ່ວມໃນຕ່ອງໂສ້ມູນຄ່າ ເພື່ອ ສົ່ງເສີມການມີສ່ວນຮ່ວມ, ການຮ່ວມມື ແລະ ການເຊື່ອມໂຍງທຸລະກິດໃຫ້ແໜ້ນແຟ້ນຂຶ້ນ.

(xxix) ດຳເນີນການວິເຄາະຕ່ອງໂສ້ມູນຄ່າ ເພື່ອກຳນົດ ແລະ ແກ້ໄຂບັນຫາທີ່ເປັນຄໍແກ້ວ (Bottlenecks) ໃນທຸກຂັ້ນ ຕອນ ນັບແຕ່ການຜະລິດ, ການສະໜອງ ແລະ ການຈຳໜ່າຍ ເພື່ອເພີ່ມປະສິດທິພາບ, ຄວາມສາມາດໃນການ ແຂ່ງຂັນ ແລະ ການເຂົ້າເຖິງຕະຫຼາດ ຂອງ MSME. ຍົກລະດັບມາດຕະຖານຄຸນນະພາບ: ສະໜັບສະໜູນ MSME ໃຫ້ບັນລຸມາດຕະຖານ ແລະ ເຄື່ອງໝາຍຜະລິດຕະພັນທີ່ກ່ຽວຂ້ອງ.

(xxx) ສົ່ງເສີມໂຄງການ ໜຶ່ງເມືອງ ໜຶ່ງຜະລິດຕະພັນ (ODOP) ແລະ ການຂຶ້ນທະບຽນຖິ່ນກຳເນີດສິນຄ້າ (GI) ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ບໍລິໂພກ ແລະ ເພີ່ມການຮັບຮູ້ຕໍ່ຜະລິດຕະພັນ MSME ໃນຕະຫຼາດພາຍໃນ ແລະ ຕ່າງປະເທດ.

(xxxi) ສະໜອງການຊ່ວຍເຫຼືອດ້ານເຕັກນິກ ແລະ ການເງິນ ເພື່ອຊ່ວຍໃຫ້ MSMEs ໄດ້ຮັບການອະນຸມັດ ແລະ ໃບຢັ້ງຢືນທີ່ຈຳເປັນ ເຊັ່ນ: ມາດຕະຖານ ແລະ ເຄື່ອງໝາຍຄຸນນະພາບ, ໃບຢັ້ງຢືນສຸຂານາໄມພືດ ແລະ ສັດ (SPS), ແລະ ມາດຕະຖານຄວາມປອດໄພດ້ານອາຫານ (GMP, HACCP) ເພື່ອຂະຫຍາຍການເຂົ້າເຖິງ ຕະຫຼາດ ແລະ ຕອບສະໜອງໄດ້ຕາມຂໍ້ກຳນົດຄຸນນະພາບສາກົນ.

ນອກຈາກ 3 ເສົາຄ້ຳຍຸດທະສາດແລ້ວ, ແມ່ນມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງເສີມສ້າງສະພາບແວດລ້ອມທາງ ທຸລະກິດໂດຍລວມ ເພື່ອສ້າງເງື່ອນໄຂໃຫ້ MSMEs ສາມາດເລີ່ມຕົ້ນ, ດຳເນີນການ ແລະ ເຕີບໂຕໄດ້ ແບບມີຄວາມ ສາມາດໃນການແຂ່ງຂັນ. ສິ່ງນີ້ລວມທັງການສືບຕໍ່ປັບປຸງສະພາບແວດລ້ອມການລົງທຶນ ໂດຍການເຮັດໃຫ້ຂັ້ນຕອນ ການໃຫ້ອະນຸຍາດ ແລະ ການອອກໃບອະນຸຍາດໃນທົ່ວບັນດາກະຊວງ ແລະ ຂະແໜງການມີຄວາມງ່າຍດາຍ ແລະ ໂປ່ງ ໃສ, ພ້ອມທັງກຳນົດ ແລະ ແກ້ໄຂບັນຫາທີ່ເປັນອຸປະສັກຕໍ່ການສ້າງຕັ້ງ ແລະ ການດຳເນີນທຸລະກິດຢ່າງເປັນລະບົບ. ການ ເສີມສ້າງລະບົບຄຸ້ມຄອງບໍລິຫານແບບດິຈິຕອນກໍມີຄວາມສຳຄັນເຊັ່ນກັນ; ມາດຕະການຕ່າງໆ ເຊັ່ນ: ການປັບປຸງການ ຂຶ້ນທະບຽນທຸລະກິດແບບອອນລາຍ ແລະ ການສົ່ງເສີມເຄື່ອງມືລັດຖະບານເອເລັກໂຕຣນິກ (ລວມທັງການແຈ້ງພາສີ-ອາກອນ ແລະ ການອອກໃບອະນຸຍາດແບບດິຈິຕອນ) ຈະຊ່ວຍຫຼຸດຜ່ອນພາລະດ້ານບໍລິຫານ ແລະ ປັບປຸງການຕິດຕາມ ກວດກາໃຫ້ດີຂຶ້ນ.

ໃນຂະນະດຽວກັນ, ທຸກໆລະບຽບການໃໝ່ທີ່ມີຜົນກະທົບຕໍ່ MSMEs ຄວນປະຕິບັດຕາມຂັ້ນຕອນການປະ ເມີນຜົນກະທົບດ້ານລະບຽບການ (RIA) ຢ່າງຖືກຕ້ອງ, ໂດຍມີການເຜີຍແຜ່ຄູ່ມື RIA ໃຫ້ແກ່ພະນັກງານໃນທຸກລະດັບ ເພື່ອສົ່ງເສີມການຈັດຕັ້ງປະຕິບັດໃຫ້ເປັນເອກະພາບ. ສຸດທ້າຍ, ຄວນສະໜັບສະໜູນສູນສົ່ງເສີມຫັດຖະກຳໃນບັນດາ ແຂວງທີ່ສຳຄັນ ເພື່ອກະຕຸ້ນການປະກອບການໃນທ້ອງຖິ່ນ ແລະ ຮັກສາຕ່ອງໂສ້ມູນຄ່າທາງດ້ານວັດທະນະທຳ. ມາດ ຕະການທັງໝົດນີ້ ຈະຊ່ວຍສ້າງລະບົບນິເວດທີ່ມີຄວາມໂປ່ງໃສ, ມີການປະສານງານກັນ ແລະ ເປັນມິດກັບທຸລະກິດ ເພື່ອ ສະໜັບສະໜູນການເຕີບໂຕ ຂອງ MSME ຢ່າງຍືນຍົງ.

2.2.3.3 ປະຕິຮູບລັດວິສາຫະກິດຍຸດທະສາດ

ລັດວິສາຫະກິດ ນອກຈາກຂະແໜງພະລັງງານ, ໂດຍສະເພາະຂະແໜງອຸດສາຫະກຳ ແລະ ການຄ້າ, ແມ່ນມີຂະໜາດນ້ອຍ, ມີການປະກອບສ່ວນຈຳກັດຕໍ່ການເຕີບໂຕເສດຖະກິດ ແລະ ການສ້າງວຽກເຮັດງານທຳ. ໃນທາງກົງກັນຂ້າມວິສາຫະກິດຂອງລັດຂະໜາດໃຫຍ່ຈຳນວນໜຶ່ງ, ໂດຍສະເພາະແມ່ນໃນຂົງເຂດສາທາລະນູປະໂພກ ແລະ ພະລັງງານ ທີ່ເປັນແຫຼ່ງການສ້າງໜີ້ສິນມະຫາສານ ໂດຍມີຜົນກະທົບຕໍ່ເສດຖະກິດຂອງປະເທດ ໂດຍສະເພາະ ບັນຫາການຊື້-ຂາຍໄຟຟ້າ ໂຄງການພະລັງງານນ້ຳ.

ເຫດຜົນໃນການປະຕິຮູບລັດວິສາຫະກິດ:

ການປະຕິຮູບລັດວິສາຫະກິດມີຄວາມສຳຄັນໃນການເສີມສ້າງຄວາມເຂັ້ມແຂງທາງດ້ານການເງິນຂອງລັດຖະບານ. ເຫດຜົນຫຼັກໃນການປະຕິຮູບມີດັ່ງນີ້:

1. ລາຍຮັບງົບປະມານ: ເປັນແຫຼ່ງລາຍຮັບງົບປະມານທີ່ສຳຄັນຂອງລັດຖະບານ ໂດຍການປະກອບສ່ວນອາກອນ ແລະ ເງິນປັນຜົນ.

2. ການດຸ່ນດ່ຽງດ້ານສາທາລະນູປະໂພກ: ໃນຮູບແບບຂອງໜີ້ຄ້າງຈ່າຍ (ເຊັ່ນ: ໃບເກັບເງິນທີ່ບໍ່ໄດ້ຈ່າຍ), ຂອງລັດວິສາຫະກິດສາທາລະນຸປະໂພກ ມີຜົນກະທົບຢ່າງຫຼວງຫຼາຍຕໍ່ຄວາມສົມດຸ່ນທາງດ້ານການເງິນຂອງລັດ.

3. ມູນຄ່າຊັບສິນ: ມູນຄ່າຊັບສິນຂອງລັດທີ່ລັດວິສາຫະກິດຖືຄອງ ສະແດງເຖິງແຫຼ່ງລາຍຮັບຂອງລັດໃນອະນາຄົດ.

4. ໜີ້ສິນທີ່ກ່ຽວຂ້ອງ: ໜີ້ສິນຂອງລັດວິສາຫະກິດໂດຍສະເພາະໜີ້ສິນພາຍນອກ, ມັກຈະເປັນໜີ້ສິນຂອງລັດຖະບານຢ່າງຈະແຈ້ງ ຫຼື ມີຄວາມໝາຍ, ເຊິ່ງມີຜົນກະທົບໂດຍກົງຕໍ່ສະພາບໜີ້ສິນແຫ່ງຊາດ.

ນອກຈາກນີ້, ການປະຕິຮູບຍັງແນ່ໃສ່ການແກ້ໄຂບັນຫາຄວາມສາມາດໃນການແຂ່ງຂັນຂອງລັດວິສາຫະກິດ ແລະ ຜົນກະທົບທີ່ມີຕໍ່ເສດຖະກິດໂດຍລວມ. ຕົວຢ່າງ, ການເຂົ້າເຖິງໄຟຟ້າທີ່ບໍ່ໜ້າເຊື່ອຖື, ເຊິ່ງຄຸ້ມຄອງໂດຍລັດວິສາຫະກິດໄຟຟ້າລາວ ໂດຍຖືກກ່າວວ່າເປັນໜຶ່ງໃນຂໍ້ຈຳກັດອັນໜຶ່ງຂອງວິສາຫະກິດເອກະຊົນໃນລາວ. ການປັບປຸງປະສິດທິພາບຂອງລັດວິສາຫະກິດ ເຫຼົ່ານີ້ແມ່ນເງື່ອນໄຂເບື້ອງຕົ້ນສຳລັບການຂະຫຍາຍຕົວທາງດ້ານເສດຖະກິດທີ່ກວ້າງຂວາງ. ນອກຈາກນັ້ນ, ການປະຕິຮູບກໍ່ຄາດຫວັງວ່າຈະຊ່ວຍເພີ່ມຄວາມເຂັ້ມແຂງທາງດ້ານການເງິນ, ປັບປຸງການບໍລິການສາທາລະນະ ແລະ ເຮັດໃຫ້ການນຳໃຊ້ຊັບພະຍາກອນ ແລະ ວຽກງານມີປະສິດທິພາບຫຼາຍຂຶ້ນ.

ແຜນການປະຕິຮູບ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ໃນໄລຍະແຜນການ 5 ປີ ມີລາຍລະອຽດ ດັ່ງນີ້:

1. ການຈັດປະເພດລັດວິສາຫະກິດ: ສຳເລັດການກຳນົດລັດວິສາຫະກິດທີ່ເປັນຍຸດທະສາດ ແລະ ບໍ່ເປັນຍຸດທະສາດ ໂດຍອີງໃສ່ເງື່ອນໄຂທີ່ກຳນົດໄວ້ຢ່າງຊັດເຈນ. ມາດຕະຖານເຫຼົ່ານີ້ຕ້ອງລວມເຖິງຄວາມອາດສາມາດຂອງຫົວໜ່ວຍໃນການສ້າງລາຍຮັບທີ່ຍືນຍົງ ແລະ ການເຕີບໂຕຂອງກຳໄລ ແລະ ຄວາມສຳຄັນຂອງ ການສະໜອງການບໍລິການສາທາລະນະ.

2. ການຖອນຕົວອອກຈາກລັດວິສາຫະກິດທີ່ບໍ່ແມ່ນຍຸດທະສາດ: ລັດຖະບານ ມີວາງແຜນທີ່ຈະຖອນການລົງທຶນຈາກລັດວິສາຫະກິດທີ່ບໍ່ແມ່ນຍຸດທະສາດໄວທີ່ສຸດເທົ່າທີ່ຈະໄວໄດ້. ການພະຍາຍາມປັບໂຄງສ້າງກ່ອນການຂາຍ ຊຶ່ງຖືເປັນເງື່ອນໄຂເບື້ອງຕົ້ນ, ອາດຈະບໍ່ເປັນເລື່ອງສົມເຫດສົມຜົນທາງດ້ານການເງິນ. ດັ່ງນັ້ນ, ທຸກວິທີການ, ລວມທັງ ການຂາຍຂາດຕົວ, ການຊຳລະບັນຊີ ຫຼື ການຍຸບເລີກວິສາຫະກິດ (Liquidation), ຈະຖືກປະເມີນບົນພື້ນຖານຜົນຕອບແທນທາງດ້ານການເງິນທີ່ຄາດໄວ້.

3. ການຫັນລັດວິສາຫະກິດຍຸດທະສາດ ໃຫ້ເປັນບໍລິສັດ. ສຳລັບລັດວິສາຫະກິດຂອງລັດ ທີ່ຖືກຈັດປະເພດເປັນຍຸດທະສາດ ຄື: ຫົວໜ່ວຍທີ່ລັດຈະສືບຕໍ່ຄຸ້ມຄອງ ເຊັ່ນ ລັດວິສາຫະກິດໄຟຟ້າລາວ ແລະ ວິສາຫະກິດນ້ຳມັນເຊື້ອໄຟລາວ ຄວນຈະໄດ້ຮັບການຫັນເປັນບໍລິສັດຂອງລັດຢ່າງເປັນທາງການ ໂດຍໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດຢ່າງເຕັມສ່ວນ.

ລັດວິສາຫະກິດ ຈະໄດ້ຮັບຄວາມເປັນເຈົ້າຕົນເອງຢ່າງເຕັມທີ່ທາງດ້ານການເງິນ ແລະ ການດຳເນີນງານໂດຍຜ່ານການຈັດຕັ້ງປະຕິບັດດັ່ງຕໍ່ໄປນີ້:

- ບໍລິສັດຈະໄດ້ຮັບການສ້າງຕັ້ງຂຶ້ນເປັນນິຕິບຸກຄົນ ທີ່ເປັນເອກະລາດຕາມກົດໝາຍ ຈາກລັດຖະບານ.
- ຊັບສິນຂອງລັດ (ເຊັ່ນ: ສິດນຳໃຊ້ທີ່ດິນ, ເຄື່ອງຈັກ, ອາຄານ) ຄວນຖືກນັບເປັນການລົງທຶນຂອງລັດ. ຫຼັງຈາກນັ້ນ, ລັດຖະບານຄວນຈະມີສິດທາງດ້ານກົດໝາຍທີ່ຈະນຳໃຊ້ຊັບສິນເຫຼົ່ານີ້ ເຊັ່ນ: ນຳໃຊ້ເປັນຫຼັກຊັບຄ້ຳປະກັນສຳລັບການກູ້ຢືມ ຫຼື ເປັນຮຸ້ນໃນບໍລິສັດຮ່ວມທຶນ.
- ຄຳສັ່ງຂອງລັດຖະບານ (ເຊັ່ນ: ການຂະຫຍາຍຕາໜ່າງໄຟຟ້າ ຫຼື ການສະໜອງນ້ຳປະປາໄປສູ່ເຂດຫ່າງໄກສອກຫຼີກ) ຈະຕ້ອງຖືກມອບໃຫ້ພາຍໃຕ້ສັນຍາການບໍລິການສາທາລະນະທີ່ໂປ່ງໃສທີ່ລະບຸມາດຕະຖານຄຸນນະພາບການບໍລິການ ແລະ ຈ່າຍຢ່າງຈະແຈ້ງຕາມການປະເມີນລາຄາທີ່ໄດ້ຕົກລົງກັນ.
- ການຄ້າງຈ່າຍຂອງລັດຖະບານຕໍ່ລັດວິສາຫະກິດຕ້ອງໄດ້ຮັບການຄຸ້ມຄອງໃນລັກສະນະທຸລະກິດໂດຍຜ່ານສັນຍາຢ່າງເປັນທາງການ ຫຼື ກົນໄກທີ່ຊັດເຈນ.
- ສຳລັບໜ່ວຍງານ ເຊັ່ນ: ວິສາຫະກິດນ້ຳມັນເຊື້ອໄຟລາວ, ລັດຖະບານ ສປປ ລາວ ຈະພິຈາລະນາການສະເໜີຂາຍຮຸ້ນສ່ວນ ໂດຍຜ່ານຂະບວນການແຂ່ງຂັນທີ່ໂປ່ງໃສ, ໃຫ້ແກ່ນັກລົງທຶນຍຸດທະສາດ ເພື່ອແນະນຳລະບຽບວິໄນຂອງຕະຫຼາດ ແລະ ທຶນ. ກະຊວງອຸດສາຫະກຳ ແລະ ການຄ້າມີຈຸດປະສົງເພື່ອເພີ່ມທະວີຄວາມໂປ່ງໃສໂດຍການບັງຄັບໃຫ້ມີການຮັບຮອງເອົາບັນຊີແບບມາດຕະຖານ, ຮຽກຮ້ອງໃຫ້ມີການກວດສອບເອກະລາດສາທາລະນະຂອງການປົກປ້ອງວິສາຫະກິດທີ່ສຳຄັນທັງໝົດ ແລະ ການສ້າງບັນຊີລາຍການສາທາລະນະການຮັບປະກັນຂອງລັດຖະບານ ເພື່ອຕິດຕາມການເປີດເຜີຍງົບປະມານ. ປະຕິບັດສັນຍາການປະຕິບັດລັດວິສາຫະກິດ ທີ່ກຳນົດເວລາກັບຕົວຊີ້ວັດດ້ານການເງິນ ແລະ ການບໍລິການທີ່ຊັດເຈນ ແລະ ໃຫ້ພວກເຂົາມີການປະເມີນເອກະລາດທຸກໆ 12 ເດືອນ. ປັບປຸງໂຄງຮ່າງກົດໝາຍ ແລະ ລະບຽບການໂດຍການຊີ້ແຈງສະຖານະທາງດ້ານກົດໝາຍຂອງຂະແໜງວິສາຫະກິດຂອງບໍລິສັດ, ຊ່ວຍໃຫ້ການຂາຍຮຸ້ນສ່ວນໜ້ອຍໃນຊັບສິນຍຸດທະສາດ, ແລະ ເສີມສ້າງກົນໄກການບັງຄັບໃຊ້ສັນຍາເພື່ອປົກປ້ອງຄວາມເປັນໄປໄດ້ທາງການຄ້າຂອງວິສາຫະກິດ. ແກ້ໄຂຜົນກະທົບທາງດ້ານສັງຄົມຈາກການປັບລາຄາຫຼືການບໍລິການໂດຍການຮັບປະກັນການມີຕາໜ່າງສັງຄົມເປົ້າໝາຍ ແລະ ການໂຄສະນາການສື່ສານທີ່ສົມບູນແບບອະທິບາຍວ່າການປ່ຽນແປງເຫຼົ່ານີ້ຈະຮັບປະກັນແລະປັບປຸງການບໍລິການສາທາລະນະທີ່ສຳຄັນໃນໄລຍະຍາວແນວໃດ.
- ກະຊວງອຸດສາຫະກຳ ແລະ ການຄ້າ ຈະສະແຫວງຫາການຊ່ວຍເຫຼືອທາງດ້ານວິຊາການຕາມເປົ້າໝາຍຈາກຄູ່ຮ່ວມພັດທະນາ (ເຊັ່ນ: ທະນາຄານພັດທະນາອາຊີ, ທະນາຄານໂລກ) ແລະ ບັນດາຄູ່ຮ່ວມໃນພາກພື້ນທີ່ສຸມໃສ່ການປະເມີນມາດຕະຖານຂອງວິສາຫະກິດ, ການສ້າງໂຄງປະກອບໜີ້ສິນ ແລະ ເຕັກນິກການເຈລະຈາຄືນໃໝ່ຂອງສັນຍາຊື້-ຂາຍພະລັງງານໄຟຟ້າ. ນອກເໜືອຈາກການປະຕິຮູບວິສາຫະກິດ, ລັດຖະບານຮັບຮູ້ເຖິງຄວາມຈຳເປັນໃນຄວາມກະຈ່າງແຈ້ງຈຸດປະສົງ, ການປົກຄອງແລະຄຳສັ່ງຂອງວິສາຫະກິດຍຸດທະສາດ, ໂດຍສະເພາະລັດວິສາຫະກິດພັດທະນາບໍ່ແຮ່ຂອງລາວ.

ຈຸດປະສົງຂອງລັດວິສາຫະກິດພັດທະນາແຮ່ທາດລາວ

ໃນທົ່ວເສດຖະກິດ, ລັດວິສາຫະກິດຮັບໃຊ້ສາມຈຸດປະສົງກວ້າງ. 1) ເປັນວິສາຫະກິດພັດທະນາ, ສ້າງຕັ້ງຂຶ້ນເພື່ອກະຕຸ້ນຂະແໜງການໃໝ່ ຫຼື ຍຸດທະສາດທີ່ສຳຄັນທີ່ການລົງທຶນຂອງເອກະຊົນຍັງຈຳກັດ ຫຼື ມີຄວາມສ່ຽງສູງ. 2) ເປັນວິສາຫະກິດການຄ້າ, ໄດ້ສຸມໃສ່ການສ້າງຜົນກຳໄລ ແລະ ການເພີ່ມມູນຄ່າຂອງລັດສູງສຸດຈາກອຸດສາຫະກຳຍຸດທະສາດ ເຊັ່ນ: ຊັບພະຍາກອນທຳມະຊາດ. 3) ມີບົດບາດໃນສັງຄົມ ຫຼື ການບໍລິການສາທາລະນະ, ຮັບປະກັນການເຂົ້າເຖິງສິນຄ້າ ແລະ ການບໍລິການທີ່ຈຳເປັນເຊັ່ນ: ພະລັງງານ, ນ້ຳ, ຫຼື ການຂົນສົ່ງທີ່ຕະຫຼາດດຽວບໍ່ສາມາດຮັບປະກັນການສະໜອງທີ່ເທົ່າທຽມກັນ, ຮ່ວມກັນ, ຮູບແບບເຫຼົ່ານີ້ຊ່ວຍໃຫ້ລັດຖະບານສາມາດດຸ່ນດ່ຽງການພັດທະນາເສດຖະກິດ, ລາຍຮັບງົບປະມານ ແລະ ຈຸດປະສົງສະຫວັດດີການສາທາລະນະໂດຍຜ່ານການມີສ່ວນຮ່ວມຂອງລັດເປົ້າໝາຍ.

ການພັດທະນາຕະຫຼາດແຮງງານ ແລະ ການຈ້າງງານສາມາດຮັບໃຊ້ຈຸດປະສົງສອງຢ່າງທີ່ປະສົມປະສານບົດບາດການພັດທະນາແລະການຄ້າຂອງວິສາຫະກິດຂອງລັດ. ນີ້ສອດຄ່ອງກັບວາລະການປະຕິຮູບວິສາຫະກິດທີ່ກວ້າງຂວາງ, ການຈັດຕຳແໜງການພັດທະນາຕະຫຼາດແຮງງານ ແລະ ການຈ້າງງານເພື່ອເສີມສ້າງຜົນຕອບແທນງົບປະມານ, ປັບປຸງປະສິດທິພາບການລົງທຶນ ແລະ ແກ້ໄຂຊ່ອງຫວ່າງຂອງຕະຫຼາດໃນຂະແໜງການທໍລະນີສາດ ແລະ ບໍ່ແຮ່.

ໃນຖານະເປັນວິສາຫະກິດໃນການພັດທະນາ, ການພັດທະນາຕະຫຼາດແຮງງານ ແລະ ການຈ້າງງານສາມາດຖືກວາງໄວ້ ເພື່ອເຮັດໜ້າທີ່ເປັນຕົວຊ່ວຍໃນການປົດລັອກທ່າແຮງດ້ານແຮ່ທາດຂອງປະເທດໂດຍການເປັນຂົວຕໍ່ພາກລັດ ແລະ ເອກະຊົນ ເພື່ອນຳທາງຂະບວນການກົດລະບຽບ ແລະ ເລັ່ງການພັດທະນາໂຄງການທີ່ໜ້າເຊື່ອຖື. ຄຽງຄູ່ກັນນັ້ນ, ການພັດທະນາຕະຫຼາດແຮງງານ ແລະ ການຈ້າງງານຈະຕ້ອງມີບົດບາດຢ່າງຕັ້ງໜ້າໃນການພັດທະນາຄວາມສາມາດຊຸດຄົ້ນບໍ່ແຮ່ພາຍໃນປະເທດ, ຮັບປະກັນວ່າການຮ່ວມມື ແລະ ສັນຍາສຳປະທານລວມມີການສະໜອງການຖ່າຍທອດທັກສະ , ການຝຶກອົບຮົມດ້ານວິຊາການ ແລະ ການແບ່ງປັນຄວາມຮູ້ ເພື່ອສ້າງທ່ຳປະກອບອາຊີບຂອງລາວໃຫ້ເຂັ້ມແຂງ ແລະ ເສີມສ້າງຄວາມສາມາດຊຸດຄົ້ນບໍ່ແຮ່ໃນໄລຍະຍາວຂອງປະເທດ.

ພ້ອມກັນນັ້ນ, ການພັດທະນາຕະຫຼາດແຮງງານ ການຈ້າງງານຕ້ອງປະຕິບັດບົດບາດດ້ານການຄ້າ ໂດຍຮັບປະກັນການຄຸ້ມຄອງມູນຄ່າຍຸຕິທຳໃຫ້ແກ່ລັດ. ໃນນັ້ນລວມມີການຖືຄອງ ແລະ ຄຸ້ມຄອງຮຸ້ນສ່ວນຍຸດທະສາດໃນໂຄງການຊຸດຄົ້ນບໍ່ແຮ່ຂະໜາດໃຫຍ່ ແລະ ໂຄງການຍຸດທະສາດ, ການເຈລະຈາຂໍ້ຕົກລົງທີ່ສອດຄ່ອງພາກລັດ ແລະ ເອກະຊົນ ແລະ ຊຸກຍູ້ການເພີ່ມມູນຄ່າພາຍໃນ ເຊັ່ນ: ກຸ່ມແຮ່ທາດທີ່ໄດ້ຈັດເປັນກຸ່ມ.

ບົດຮຽນທີ່ຖອດຖອນໄດ້ຈາກວິສາຫະກິດຂອງລາວ ແລະ ການປະຕິບັດທີ່ດີທີ່ສຸດກ່ຽວກັບການປົກຄອງທີ່ສັງເກດເຫັນໃນທົ່ວໂລກບໍລິສັດວິສາຫະກິດໃນລາວ, ຕາມທີ່ສັງເກດໄດ້ກັບບໍລິສັດໄຟຟ້າລາວ ແລະ ບໍລິສັດນ້ຳມັນເຊື້ອໄຟຂອງລັດ, ປະເຊີນກັບສິ່ງທ້າທາຍດ້ານໂຄງສ້າງ ແລະ ການປົກຄອງຫຼາຍດ້ານຄື:

ການປົກຄອງທາງດ້ານການຄ້າທີ່ຈຳກັດ: ການມີສ່ວນຮ່ວມຂອງລັດຖະບານຢ່າງກວ້າງຂວາງ ແລະ ການຊີ້ນຳຂອງລັດຖະມົນຕີກ່ຽວກັບການກຳນົດລາຄາ ແລະ ການຕັດສິນໃຈການດຳເນີນງານໄດ້ຈຳກັດຄວາມຢືດຢຸ່ນໃນການຄຸ້ມຄອງ, ນຳໄປສູ່ການຟື້ນຕົວຂອງຄ່າໃຊ້ຈ່າຍ ແລະ ການປະຕິບັດທາງການຄ້າທີ່ອ່ອນແອລົງ.

ຄວາມສ່ຽງດ້ານການເງິນ ແລະ ຄວາມສ່ຽງດ້ານການເງິນສູງ: ການເອື່ອຍອີງທີ່ສຳຄັນຕໍ່ໜີ້ສິນຂອງຕ່າງປະເທດແລະ ການຄ້ຳປະກັນທີ່ລັດສະໜັບສະໜູນໄດ້ເພີ່ມຄວາມສ່ຽງດ້ານການເງິນ ແລະ ຄວາມຍືນຍົງທາງດ້ານການເງິນ**ທີ່ຈຳກັດຄຳສັ່ງທີ່ບໍ່ຊັດເຈນ ແລະ ຈຸດປະສົງທີ່ຂັດແຍ້ງກັນ:** ການປະສົມປະສານຂອງຈຸດປະສົງທາງການຄ້າ ແລະ ສັງຄົມ ເຊັ່ນ: ການຮັກສາລາຄາຜູ້ບໍລິໂພກຕ່ຳໃນຂະນະທີ່ການດຳເນີນການກຳໄລ, ໄດ້ສ້າງບູລິມະສິດທີ່ຂັດແຍ້ງກັນໃນທົ່ວການດຳເນີນງານ.

ສິ່ງທ້າທາຍເຫຼົ່ານີ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການສ້າງຕັ້ງລະບົບການປົກຄອງທີ່ສົ່ງເສີມການຄຸ້ມຄອງເອກະລາດ ແລະ ເອກະລາດທາງການຄ້າ ແລະ ການບັງຄັບໃຊ້ຄວາມຮັບຜິດຊອບພາຍໃນວິສາຫະກິດ. ອີງຕາມການສັງເກດຂອງວິສາຫະກິດໃນສາກົນ, ສາມປະຕິບັດທີ່ດີທີ່ສຸດສາມາດຊີ້ນຳຮູບແບບການບໍລິຫານຂອງການພັດທະນາຕະຫຼາດແຮງງານ ການຈ້າງງານເພື່ອຮັບປະກັນການດຳເນີນງານແບບຍືນຍົງ, ມີປະສິດທິພາບທາງການຄ້າ:

ການປະຕິບັດທີ່ດີທີ່ສຸດ #1: ຂະແໜງວິສາຫະກິດດຳເນີນທຸລະກິດເປັນວິສາຫະກິດເປັນເອກະລາດທາງດ້ານການຄ້າແທນທີ່ຈະເປັນການຂະຫຍາຍການບໍລິຫານຂອງລັດ

ຄວາມເປັນເອກະລາດຂອງວິສາຫະກິດໄດ້ຖືກຝັງໄວ້ໂດຍຜ່ານກົດໝາຍຂອງບໍລິສັດ, ຂອບການຄຸ້ມຄອງ ແລະ ຄວາມເປັນເອກະລາດໃນການດຳເນີນງານ ທີ່ອະນຸຍາດໃຫ້ວິສາຫະກິດສາມາດຕັດສິນໃຈລົງທຶນ, ລາຄາ ແລະ ການເງິນໂດຍບໍ່ມີການອະນຸມັດໂດຍກົງຈາກກະຊວງ. ວິສາຫະກິດເຫຼົ່ານີ້ແມ່ນຖືກຄຸ້ມຄອງພາຍໃຕ້ກົດໝາຍຂອງບໍລິສັດ ແລະ ປະຕິບັດຕາມມາດຕະຖານການລາຍງານການເງິນຂອງພາກເອກະຊົນ.

ຕົວຢ່າງ: ບໍລິສັດຂຸດແຫຼ່ງແຮ່ຈາກປະເທດຊາອຸດີອາຣາເບຍ ດຳເນີນການເປັນບໍລິສັດຂຸດຄົ້ນບໍ່ແຮ່ທາງການຄ້າຢ່າງເຕັມທີ່, ເຖິງແມ່ນວ່າຈະເປັນເຈົ້າຂອງສ່ວນໃຫຍ່ໂດຍລັດ. ບໍລິສັດລະດົມທຶນຈາກຕະຫຼາດຫຼັກຊັບ, ອອກພັນທະບັດຂອງບໍລິສັດ, ແລະ ເຂົ້າສູ່ການຮ່ວມທຶນ ລະຫວ່າງ ປະເທດໂດຍບໍ່ມີການຮັບປະກັນຂອງລັດຖະບານ. ສຳລັບຕົວຢ່າງ, ໂຄງການອະລູມິນຽມຫຼາຍຕື້ຂອງຕົນກັບ Alcoa ໄດ້ຖືກຈັດໂຄງສ້າງເປັນບໍລິສັດຮ່ວມທຶນ, ໂດຍບໍລິສັດຂຸດແຫຼ່ງແຮ່ຈາກປະເທດຊາອຸດີອາຣາເບຍ ນຳພາການປະຕິບັດການຈັດຊື້ ແລະ ຍຸດທະສາດລາຄາເປັນເອກະລາດ.

ບໍລິສັດນ້ຳມັນ ແລະ ແຫຼ່ງພາຫະນະແຫ່ງຊາດຂອງວິສາຫະກິດແມ່ນເປັນເຈົ້າຂອງທັງໝົດໂດຍລັດຖະບານມາເລເຊຍແຕ່ຖືກສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍແຍກຕ່າງຫາກທີ່ໃຫ້ສິດໃນການເຈລະຈາ, ເຊັນສັນຍາ, ແລະຄຸ້ມຄອງການຂຸດຄົ້ນ ແລະ ການຜະລິດ ໂດຍບໍ່ຈຳເປັນຕ້ອງຂໍການອະນຸມັດຈາກລັດໃນແຕ່ລະທຸລະກຳ. ບໍລິສັດນ້ຳມັນແຫ່ງຊາດຍັງຮັບຜິດຊອບຕໍ່ຜົນກຳໄລ ແລະ ການສູນເສຍຂອງຕົນເອງ ແລະ ຈ່າຍເງິນປັນຜົນໃຫ້ລັດຖະບານໂດຍອີງໃສ່ຜົນກຳໄລ, ບໍ່ແມ່ນເປົ້າໝາຍບໍລິຫານ.

ການປະຕິບັດທີ່ດີທີ່ສຸດ # 2: ຂະແໜງວິສາຫະກິດແມ່ນຖືກຄຸ້ມຄອງໂດຍຜ່ານການເປັນເຈົ້າການຂອງລັດເປັນສູນກາງ ແລະ ການກວດກາແບບມືອາຊີບແທນທີ່ຈະເປັນການຄວບຄຸມຂອງກະຊວງ.

ໃນຮູບແບບນີ້, ລັດຈັດຕັ້ງການເປັນເຈົ້າຂອງຂອງຕົນໂດຍຜ່ານອົງການສູນກາງທີ່ມີຄວາມຮັບຜິດຊອບສຳລັບການຕິດຕາມກວດກາການປະຕິບັດ ແລະ ການແຕ່ງຕັ້ງຄະນະ. ການແບ່ງແຍກ ລະຫວ່າງ ຄວາມເປັນເຈົ້າຂອງ ແລະ ບົດບາດນະໂຍບາຍນີ້ຊ່ວຍຫຼຸດຜ່ອນຄວາມຂັດແຍ້ງດ້ານຜົນປະໂຫຍດ ແລະເຮັດໃຫ້ການປະຕິບັດໜ້າທີ່ຄຸ້ມຄອງທົ່ວກຸ່ມບໍລິສັດຂອງວິສາຫະກິດ.

ໃນກໍລະນີຂອງບໍລິສັດນ້ຳມັນແຫ່ງຊາດຈີນຄະນະກຳມະການຄຸ້ມຄອງຊັບສິນຂອງລັດເຮັດໜ້າທີ່ເປັນຜູ້ຖືຮຸ້ນ ແລະ ເຈົ້າຂອງໃນນາມຂອງລັດ, ເບິ່ງແຍງການຄຸ້ມຄອງບໍລິສັດ, ການແຕ່ງຕັ້ງ ແລະ ການປະເມີນຜົນການປະຕິບັດ.ໃນຂະນະນັ້ນ, ຄະນະກຳມະການພັດທະນາ ແລະ ປະຕິຮູບກະຊວງການພັດທະນາ ແລະ ການປັບປຸງຊາດໄດ້ກຳນົດນະໂຍບາຍພະລັງງານ ແລະ ບັນດາຈຸດໝາຍແຫ່ງຊາດ. ການແຍກບົດບາດລະຫວ່າງເຈົ້າຂອງ, ຄະນະກວດກາ ແລະ ບໍລິຫານສິນທິທັງຂອງລັດ ແລະ ຜູ້ສ້າງນະໂຍບາຍຂອງກະຊວງການພັດທະນາ ແລະ ການປັບປຸງຊາດນີ້ຊີ້ແຈ້ງຄວາມຮັບຜິດຊອບ ແລະ ຫຼຸດຜ່ອນຂໍ້ຂັດແຍ່ງ ລະຫວ່າງ ຈຸດປະສົງທາງການຄ້າ ແລະນະໂຍບາຍ.

ບໍລິສັດພີທີທີມະຫາຊົນຂອງໄທເຊິ່ງເປັນວິສາຫະກິດພະລັງງານແຫ່ງຊາດຂອງປະເທດ, ກໍດຳເນີນງານພາຍໃຕ້ຮູບແບບນີ້. ໃນຂະນະທີ່ກະຊວງພະລັງງານກຳນົດນະໂຍບາຍພະລັງງານແຫ່ງຊາດ, ການຄຸ້ມຄອງການເປັນເຈົ້າຂອງພີທີທີ ແລະ ປະເມີນຜົນການປະຕິບັດແມ່ນດຳເນີນໂດຍຫ້ອງການນະໂຍບາຍລັດວິສາຫະກິດພາຍໃຕ້ກະຊວງການເງິນ. ການຈັດວາງນີ້ອະນຸຍາດໃຫ້ບໍລິສັດພີທີທີສອດຄ່ອງກັບຍຸດທະສາດພະລັງງານຂອງລັດຖະບານໃນຂະນະທີ່ຮັກສາຄວາມເປັນເອກະລາດດ້ານການດຳເນີນງານແລະການຄ້າຈາກການຄວບຄຸມຂອງລັດຖະມົນຕີ.

ການປະຕິບັດທີ່ດີທີ່ສຸດ #3: ຂະແໜງວິສາຫະກິດແມ່ນ "ການຄຸ້ມຄອງການປະຕິບັດ" ສຳລັບຄວາມຮັບຜິດຊອບທີ່ເຂັ້ມແຂງ

ວິສາຫະກິດທີ່ມີການຄຸ້ມຄອງການປະຕິບັດແມ່ນດຳເນີນການພາຍໃຕ້ຮູບແບບທີ່ລວມເອົາເປົ້າໝາຍການປະຕິບັດທີ່ສາມາດວັດແທກໄດ້, ການປະເມີນເອກະລາດ ແລະ ການລາຍງານສາທາລະນະທີ່ໂປ່ງໃສ ເພື່ອຮັບປະກັນໃຫ້ວິສາຫະກິດມີທັງຈຸດປະສົງທາງການຄ້າ ແລະ ການພັດທະນາ.

ລັດຖະບານກຳນົດທິດທາງຍຸດທະສາດ ແລະ ຄວາມຄາດຫວັງທາງດ້ານການເງິນ ແຕ່ປະຕິເສດການຄວບຄຸມປະຈຳວັນ, ແທນທີ່ຈະຖືການຄຸ້ມຄອງຄວາມຮັບຜິດຊອບໂດຍຜ່ານສັນຍາການປະຕິບັດ, ຄະແນນຕິດຕາມຕົວຊີ້ບອກປະສິດທິພາບຫຼັກ ແລະ ການກວດສອບປົກກະຕິ.

ບໍລິສັດແຫ່ງຊາດຊິລີ, ບໍລິສັດຂຸດຄົ້ນທອງຂອງປະເທດຊິລີ, ເປັນຕົວຢ່າງຂອງວິສາຫະກິດທີ່ມີການຄຸ້ມຄອງປະສິດທິພາບພາຍໃນຂອບເຂດວິສາຫະກິດຂອງປະເທດ. ກຳນົດຈຸດປະສົງການປະຕິບັດປະຈຳປີ, ການທົບທວນຄືນງົບປະມານ, ແລະ ການຕິດຕາມຜົນໄດ້ຮັບໃນທົ່ວວິສາຫະກິດທັງໝົດ. ເປົ້າໝາຍເຫຼົ່ານີ້ລວມມີຜົນຕອບແທນທາງດ້ານການເງິນ, ປະສິດທິພາບການຜະລິດ, ຄວາມປອດໄພ ແລະ ການປະຕິບັດດ້ານສິ່ງແວດລ້ອມ. ຄວາມຄືບໜ້າແມ່ນການທົບທວນຄືນປະຈຳໄຕມາດ ແລະ ແຮງຈູງໃຈໃນການຄຸ້ມຄອງແມ່ນຕິດກັບຜົນສຳເລັດເປົ້າໝາຍ. ບໍລິສັດແຫ່ງຊາດຂອງຊິລີຍັງເຜີຍແຜ່ລາຍງານການເງິນທີ່ກວດສອບແລ້ວ ແລະ ຂໍ້ມູນການດຳເນີນງານ, ເປີດເຜີຍການປະກອບສ່ວນດ້ານງົບປະມານຂອງຕົນໃຫ້ແກ່ລັດ.

ການປະຕິບັດທີ່ດີທີ່ສຸດ 4: ໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ ມີສ່ວນຮ່ວມໃນການຖືຮຸ້ນ ໂຄງການບໍ່ແຮ່ ທີ່ເຫັນວ່າມີປະສິດທິຜົນ ແລະ ເປັນຍຸດທະສາດ ໂດຍສະເພາະແຮ່ທາດຫາຍາກ ຕ້ອງເຂົ້າຖືຮຸ້ນ ບໍ່ໃຫ້ໜ້ອຍ 20 ສ່ວນຮ້ອຍ

ບັນດາແຮ່ທາດທີ່ເປັນຍຸດທະສາດ ໂດຍສະເພາະ ແຮ່ທາດຫາຍາກ ລັດຕ້ອງເຂົ້າຖືຮຸ້ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລັດຖະບານ, ພ້ອມນີ້ ບັນດາໂຄງການຂະໜາດໃຫ່ຍ ໂດຍສະເພາະໂຄງການຄຳ ແລະ ເກືອໂປຕາສ ລັດຈະຕ້ອງໄດ້ພິຈາລະນາເຂົ້າຮ່ວມ.

ນອກຈາກການປະຕິບັດທີ່ດີທີ່ສຸດດັ່ງທີ່ໄດ້ລະບຸໄວ້ຂ້າງເທິງແລ້ວ, ກະຊວງ ອຄ ໄດ້ ມີເປົ້າໝາຍທີ່ຈະສ້າງຄວາມເຂັ້ມແຂງໃຫ້ ລັດວິສາຫະກິດພັດທະນາແຮ່ທາດລາວ ດັ່ງນີ້:

ເພື່ອສ້າງຄວາມເຂັ້ມແຂງໃຫ້ ລັດວິສາຫະກິດພັດທະນາແຮ່ທາດລາວ ຕ້ອງບັນລຸ 4 ຄາດໝາຍ ແລະ 6 ວຽກຈຸດສຸມ ດັ່ງນີ້:

❖ **ຄາດໝາຍ:**

1) ສ້າງແຫຼ່ງລາຍຮັບທີ່ໝັ້ນທ່ຽງ ສາມາດກຸ້ມຕົນເອງດ້ານງົບປະມານ, ມອບພັນທະເຂົ້າງົບປະມານແຫ່ງລັດ ແລະ ສາມາດລິເລີ່ມລົງທຶນພັດທະນາໂຄງການບໍ່ແຮ່ດ້ວຍຕົນເອງ ສຳລັບປະເພດແຮ່ທາດທີ່ມີຄວາມເໝາະສົມ.

2) ຄັດເລືອກເປົ້າໝາຍໂຄງການຮ່ວມມືການລົງທຶນດ້ານບໍ່ແຮ່ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນໃນ ການຈັດຕັ້ງປະຕິບັດພ້ອມນີ້. ທຸກໆໂຄງການແຮ່ທາດຫາຍາກຕ້ອງໃຫ້ ລັດວິສາຫະກິດພັດທະນາແຮ່ທາດລາວ ມີສ່ວນ ຮ່ວມໃນການຖືຮຸ້ນ.

3) ສ້າງຄວາມເຂັ້ມແຂງໃຫ້ແກ່ລັດວິສາຫະກິດພັດທະນາແຮ່ທາດລາວ ເປັນຕົ້ນ: ສ້າງສຳນັກງານລັດວິສາຫະກິດ, ຊອກຫາແຫຼ່ງທຶນ ແລະ ການຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນ ແລະ ດ້ານການຈັດຕັ້ງ.

4) ສືບຕໍ່ຈັດຕັ້ງປະຕິບັດໂຄງການສ້າງຕັ້ງສູນວິໄຈແຮ່ທາດ ແລະ ໂຄງການສຶກສາທາງດ້ານແຮ່ທາດທີ່ໄດ້ຮັບອະນຸ ຍາດ ແລະ ສະເໜີລັດຖະບານຂໍບູລິມະສິດໃນການຮັກສາເຂດເນື້ອທີ່ໆມີທ່າແຮງ, ສຶກສາຊອກຫາແຫຼ່ງຈຸດປະກົດປະເພດ ແຮ່ທາດທີ່ມີລັກສະນະຍຸດທະສາດ ແລະ ມີຄວາມສຳຄັນຕໍ່ອຸດສາຫະກຳໃນອະນາຄົດ ແລະ ຮັກສາເຂດເນື້ອທີ່ຈຸດປະກົດ ແຮ່ທາດດ້ວຍຄວາມສົມເຫດສົມຜົນຈາກລັດຖະບານ ເພື່ອການພັດທະນາໃນອະນາຄົດດ້ວຍຈັງຫວະທີ່ເໝາະສົມ ແລະ ສອດຄ່ອງກັບຄວາມສາມາດຕົວຈິງ.

❖ **ວຽກຈຸດສຸມ:**

1) ຈັດຕັ້ງປະຕິບັດບັນດາໂຄງການຮ່ວມມືໃນການຂຸດຄົ້ນ, ປຸງແຕ່ງ ແລະ ຈຳໜ່າຍແຮ່ທາດ ໃຫ້ເປັນແຫຼ່ງລາຍຮັບທີ່ ສຳຄັນ. ເຂັ້ມງວດການຄຸ້ມຄອງດ້ານ ລາຍຮັບ-ລາຍຈ່າຍ ກັບບັນດາໂຄງການຮ່ວມມື, ກຳນົດຄັງສຳຮອງ ເພື່ອການ ພັດທະນາ ແລະ ນຳໃຊ້ລາຍຮັບຢ່າງປະຢັດ ແລະ ມີປະສິດທິຜົນ ກ້າວໄປເຖິງການພັດທະນາບໍ່ແຮ່ ເປັນຂອງຕົນເອງ ເພື່ອ ໃຫ້ມີລາຍຮັບ ແລະ ເປັນທຶນຮອນໃນໄລຍະເບື້ອງຕົ້ນ ເພື່ອກ້າວເຂົ້າສູ່ການພັດທະນາບໍ່ແຮ່ຂະໜາດກາງ ແລະ ໃຫຍ່ ໃນ ອະນາຄົດ.

2) ມອບໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ ເປັນຜູ້ຕາງໜ້າລັດຖະບານເຂົ້າຖືຮຸ້ນ ຕາມກົດໝາຍວ່າດ້ວຍແຮ່ ທາດ ໃນທຸລະກິດກ່ຽວກັບບໍ່ແຮ່ປະເພດແຮ່ທາດມີຄ່າ ແລະ ເປັນຍຸດທະສາດ. ພິເສດສຳລັບບັນດາໂຄງການແຮ່ທາດຫາ ຍາກ ຕ້ອງໃຫ້ບູລິມະສິດ ລັດວິສາຫະກິດພັດທະນາແຮ່ທາດລາວ ຮ່ວມມືໃນການຖືຮຸ້ນ ບໍ່ໃຫ້ຫຼຸດ 20% ຫຼື ບົນພື້ນຖານ ການເຈລະຈາຕໍ່ລອງທີ່ເຫັນວ່າລັດຖະບານມີຜົນປະໂຫຍດສູງສຸດ. ພາຍຫຼັງ ກະຊວງອຸດສາຫະກຳ ແລະ ການຄ້າ ລາຍງານ ຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ກະຊວງການເງິນ ຄົ້ນຄວ້າເພື່ອນຳສະເໜີລັດຖະບານ ພິຈາລະນາເຂົ້າຖືຮຸ້ນ. ສ່ວນການປະກອບ ແລະ ການຖອນຮຸ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ຫຼື ຕາມ ສັນຍາຮ່ວມທຶນ.

3) ຊອກຫາແຫຼ່ງທຶນກັບຄູ່ຮ່ວມພັດທະນາ ແລະ ສະຖາບັນການເງິນ ພາຍໃນ ແລະ ຕ່າງປະເທດ, ຍົກລະດັບຄວາມຮູ້ ຄວາມສາມາດຂອງບຸກຄະລາກອນໃຫ້ສອດຄ່ອງເໝາະສົມຕາມພາລະບົດບາດ, ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ສ້າງສຳນັກງານໃຫຍ່ ຂອງລັດວິສາຫະກິດພັດທະນາແຮ່ທາດລາວ.

4) ຊຸກຍູ້ສ້າງຕັ້ງໂຮງງານຫຼອມເຫຼັກ ຢູ່ແຂວງຄຳມ່ວນ ແລະ ສືບຕໍ່ຊຸກຍູ້ສິ່ງເສີມການສຶກສາຄວາມເປັນໄປໄດ້ໃນ ການສ້າງຕັ້ງໂຮງງານຫຼອມຊີລິຄອນ.

5) ຊຸກຍູ້ໂຄງການສ້າງຕັ້ງສູນວິໄຈແຮ່ທາດ ແລະ ເສີມຂະຫຍາຍການຈັດຕັ້ງປະຕິບັດກັບບັນດາຄູ່ຮ່ວມ ໃນໂຄງ ການຮ່ວມມື ຊອກຄົ້ນ, ສຳຫຼວດ ແລະ ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ສາມາດກ້າວເຂົ້າສູ່ ຂັ້ນຕອນການຂຸດຄົ້ນ, ປຸງແຕ່ງ ແລະ ຈຳໜ່າຍ ໂດຍໄວ ແລະ ມີປະສິດທິຜົນ.

6) ສ້າງໂຄງການສຶກສາຊອກຫາແຫຼ່ງຈຸດປະກົດປະເພດແຮ່ທາດທີ່ມີລັກສະນະຍຸດທະສາດ ແລະ ມີຄວາມສຳຄັນຕໍ່ ອຸດສາຫະກຳໃນອະນາຄົດ. ໃຫ້ບູລິມະສິດໃນການສະຫງວນເຂດເນື້ອທີ່ ເພື່ອການພັດທະນາໃນອານາຄົດ ຢ່າງໜ້ອຍ 14 ເຂດ ຈາກບັນດາເຂດຈຸດສຸມຄື: ເຂດສຳປະທານຂອງບັນດາບໍລິສັດ ທີ່ສິ້ນສຸດສັນຍາກັບລັດຖະ ບານ; ເຂດເນື້ອທີ່ຈຸດ ປະກົດແຮ່ທາດ ທີ່ໄດ້ຮັບຈາກການສຶກສາ ແລະ ບັນດາເຂດພື້ນທີ່ເປົ້າຫວ່າງຕ່າງໆ.

ສິດ, ໜ້າທີ່ ຂອງລັດວິສາຫະກິດພັດທະນາແຮ່ທາດລາວ

ໜ້າທີ່ປະຈຸບັນ, ເຊິ່ງປະກອບມີດັ່ງຕໍ່ໄປນີ້, ຕຳແໜ່ງລັດວິສາຫະກິດພັດທະນາບໍ່ແຮ່ຂອງລາວເປັນຕົ້ນຕໍເປັນໜ່ວຍງານຕົວແທນທີ່ຈະເປັນຜູ້ຂັບຂີ່ຍຸດທະສາດ ຫຼື ການຄ້າ. ໃນຂະນະທີ່ວິທີການນີ້ຮັບປະກັນການເປັນຕົວແທນທີ່ເຂັ້ມແຂງ, ລັດວິສາຫະກິດພັດທະນາບໍ່ແຮ່ຂອງລາວສາມາດພັດທະນາພາຍໃນຕື່ມອີກ ແລະ ຫັນໄປສູ່ວິສາຫະກິດການພັດທະນາ ແລະ ການຄ້າ.

ໜ້າທີ່ຄວາມຮັບຜິດຊອບ ປະຈຸບັນ:

- ຖື ແລະ ຄຸ້ມຄອງຮຸ້ນສ່ວນຂອງລັດໃນໂຄງການຂຸດຄົ້ນ, ຂຸດຄົ້ນບໍ່ແຮ່ ແລະ ການປຸງແຕ່ງໃນນາມຂອງລັດຖະບານ.
- ກວດກາ ແລະ ຄຸ້ມຄອງໂຄງການຮ່ວມມືໃນທໍ່ລະບົບຕ່ອງໂສ້ມູນຄ່າການຂຸດຄົ້ນບໍ່ແຮ່ ລວມທັງການສະແຫວງຫາ, ການສຳຫຼວດ, ການສຶກສາຄວາມເປັນໄປໄດ້ ແລະ ການພັດທະນາແຮ່ທາດທັງໂລຫະ ແລະ ບໍ່ໂລຫະ.
- ຄົ້ນຄວ້າ ແລະ ປະເມີນຄວາມເປັນໄປໄດ້ດ້ານການສະໜອງວັດຖຸດິບແຮ່ທາດ ແລະ ທ່າແຮງດ້ານຊັບພະຍາກອນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍພາຍໃຕ້ຫຼັກການ "ຫັນເປັນອຸດສາຫະກຳ ແລະ ທັນສະໄໝ" ຂອງພັກ ແລະ ຫຼັກການພັດທະນາແບບຍືນຍົງ ແລະ ສີຂຽວ.
- ຮ່ວມມືກັບບັນດາກົມກອງຂອງລັດ ແລະ ລັດວິສາຫະກິດພາຍໃຕ້ການພັດທະນານະໂຍບາຍບໍ່ແຮ່, ຂໍ້ຕົກລົງສຳປະທານ, ມາດຕະຖານເຕັກນິກ.
- ເຂົ້າຮ່ວມການເຄື່ອນໄຫວດ້ານການຄ້າ ເຊັ່ນ: ການໃຫ້ບໍລິການດ້ານເຕັກນິກ, ການຂົນສົ່ງ ແລະ ການໃຫ້ຄຳປຶກສາກ່ຽວກັບການດຳເນີນງານບໍ່ແຮ່ທັງພາຍໃນ ແລະ ຕ່າງປະເທດ.

ເປົ້າໝາຍໃນໄລຍະຍາວຂອງລັດຖະບານແມ່ນເພື່ອຊຸກຍູ້ການລົງທຶນທີ່ມີຄຸນນະພາບສູງ, ການປຸງແຕ່ງລຸ່ມນ້ຳ, ແລະ ຜົນຕອບແທນງົບປະມານແບບຍືນຍົງ. ການບັນລຸການຫັນປ່ຽນດັ່ງກ່າວຮຽກຮ້ອງໃຫ້ລັດວິສາຫະກິດມີຄວາມສາມາດຊຸກຍູ້ການເຂົ້າຮ່ວມຂອງພາກເອກະຊົນ, ຄຸ້ມຄອງທຶນຂອງລັດຢ່າງມີປະສິດທິຜົນ ແລະ ປະສານສົມທົບກັນໃນທໍ່ຕ່ອງໂສ້ມູນຄ່າບໍ່ແຮ່. ເພື່ອສະໜັບສະໜູນການຫັນປ່ຽນຂະແໜງການຂຸດຄົ້ນບໍ່ແຮ່ຢ່າງມີປະສິດທິພາບ, ໜ້າທີ່ຂອງລັດວິສາຫະກິດພັດທະນາບໍ່ແຮ່ຂອງລາວຈຳເປັນຕ້ອງປ່ຽນຈາກບົດບາດຕົວແທນໄປສູ່ວິສາຫະກິດທີ່ຫ້າວຫັນ, ຍຸດທະສາດ ແລະ ທາງດ້ານການຄ້າ, ໂດຍມີຄວາມຮັບຜິດຊອບທີ່ເຮັດໃຫ້ມັນສາມາດ ດັ່ງນີ້:

- **ເປັນວິສາຫະກິດທີ່ມີລະບຽບວິໄນທາງການຄ້າ:** ເຂົ້າຮ່ວມບໍລິສັດຮ່ວມທຸລະກິດ, ເຈລະຈາສັນຍາຊື້ຜະລິດຕະພັນລວມ ຫຼື ຄຸ້ມຄອງຫຼັກຊັບແຮ່ທາດຂອງລັດດ້ວຍຄວາມຮັບຜິດຊອບໂດຍອີງໃສ່ການປະຕິບັດເຊັ່ນ: ເຂົ້າຮ່ວມໂຄງການທົດລອງຂຸດຄົ້ນແຮ່ທາດສຳລັບບຸລິມະສິດ.
- **ລະດົມການລົງທຶນຍຸດທະສາດ ແລະ ຄູ່ຮ່ວມມື:** ກຳນົດຢ່າງຫ້າວຫັນ, ສ້າງໂຄງສ້າງ ແລະ ດຶງດູດນັກລົງທຶນລະດັບພາກພື້ນ ແລະ ສາກົນທີ່ໜ້າເຊື່ອຖືເຂົ້າໃນໂຄງການແຮ່ທາດ ແລະ ອຸດສາຫະກຳບຸລິມະສິດ, ໝູນໃຊ້ທ່າທີທີ່ສະໜັບສະໜູນຂອງລັດຂອງການພັດທະນາຕະຫຼາດແຮງງານ ແລະ ການຈ້າງງານເພື່ອຫຼຸດການລົງທຶນທີ່ມີມູນຄ່າສູງ.
- **ການເຊື່ອມໂຍງແຕ່ອຸດສາຫະກຳຕົ້ນນ້ຳ ຫາ ປາຍນ້ຳ:** ເປັນໃຈກາງໃນການເຊື່ອມໂຍງການຂຸດຄົ້ນ ແລະ ການຂຸດຄົ້ນບໍ່ແຮ່ຕົ້ນນ້ຳ ດ້ວຍການປຸງແຕ່ງຂັ້ນກາງ ແລະ ກິດຈະກຳອຸດສາຫະກຳລຸ່ມນ້ຳ ລວມທັງກຸ່ມ ເຊັ່ນ: ທາດໂປຕາສຊຽມຫາປຸ໋ຍ ແລະ ບາຊິດ-ກັບອາລູມິນາ.

- **ສ້າງຄວາມສາມາດ ແລະ ຄວາມຊ່ຽວຊານດ້ານວິຊາການແຫ່ງຊາດ:** ເຊື່ອມໂຍງການພັດທະນາສີມືແຮງງານ, ການຖ່າຍທອດເຕັກໂນໂລຊີ ແລະ ການຄຸ້ມຄອງຄວາມຮູ້ເຂົ້າໄປໃນທຸກໂຄງການເຊື່ອມຕໍ່ການພັດທະນາຕະຫຼາດແຮງງານ ແລະ ການຈ້າງງານ.

2.2.4 ວຽກງານສະໜັບສະໜຸນ ແລະ ປິ່ນອ້ອມ

ວຽກງານສະໜັບສະໜຸນ ແລະ ປິ່ນອ້ອມ ໝາຍເຖິງ ປັດໄຈພື້ນຖານທີ່ເປັນຕົວຊຸກຍູ້ຄວາມຄືບໜ້າໃນທຸກຂະແໜງການ ຂອງແຜນງານການພັດທະນາ ຂອງ ສປປ ລາວ. ປັດໄຈຊຸກຍູ້ເຫຼົ່ານີ້ ສ້າງເງື່ອນໄຂທີ່ຈຳເປັນ ທາງດ້ານສະຖາບັນ, ລະບຽບການ ແລະ ໂຄງລ່າງພື້ນຖານ ເພື່ອຂັບເຄື່ອນການເຕີບໂຕ ຂອງອຸດສາຫະກຳ, ດຶງດູດການລົງທຶນ ແລະ ຍົກສູງຄວາມສາມາດໃນການແຂ່ງຂັນແຫ່ງຊາດ. ສິ່ງເຫຼົ່ານີ້ ລວມມີມາດຕະການຕ່າງໆ ທີ່ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງບໍລິຫານ, ການປັບປຸງທຶນມະນຸດ, ການສົ່ງເສີມນະວັດຕະກຳ ແລະ ການຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ສັງຄົມ.ເຖິງແມ່ນວ່າ ພາກສ່ວນນີ້ຈະເນັ້ນໃສ່ບຸລິມະສິດທີ່ຕິດພັນກັບຫຼາຍຂະແໜງການ ເຊັ່ນ: ການປະຕິຮູບສະພາບແວດລ້ອມທາງທຸລະກິດ, ອຸດສາຫະກຳສີຂຽວ, ໂຄງລ່າງພື້ນຖານ ແລະ ການຫັນເປັນດິຈິຕອນ, ແຕ່ກໍຄວນສັງເກດວ່າ ນະໂຍບາຍການຄ້າ ແລະ ການພັດທະນາພະລັງງານ ເຊິ່ງລ້ວນແຕ່ແມ່ນປັດໄຈຊຸກຍູ້ປິ່ນອ້ອມທີ່ສຳຄັນນັ້ນ ແມ່ນໄດ້ຖືກກ່າວເຖິງຢ່າງລະອຽດແລ້ວໃນແຜນພັດທະນາສະບັບນີ້ ພາຍໃຕ້ ແຜນງານທີ 1: ສົ່ງເສີມການພັດທະນາອຸດສາຫະກຳ; ແຜນງານທີ 2: ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ ແລະ ແຜນງານທີ 3: ຍົກລະດັບການພັດທະນາພາກເອກະຊົນ ແລະ ວິສາຫະກິດ ຕາມລຳດັບ.

2.2.4.1 ແຜນງານ ທີ VI: ການສ້າງຂີດຄວາມສາມາດ

ຄວາມສາມາດດ້ານການວາງແຜນ, ເຕັກນິກວິຊາການ, ການຖ່າຍຖອດຄວາມຮູ້-ໝູນໃຊ້ ແລະ ການຄຸ້ມຄອງຕິດພັນກັບການພັດທະນາອຸດສາຫະກຳ ແລະ ການຄ້າ ທີ່ຍືນຍົງ ຢູ່ ສປປ ລາວ ບໍ່ພຽງແຕ່ຕ້ອງການການລົງທຶນໃນໂຄງລ່າງພື້ນຖານ ແລະ ການປະຕິຮູບນະໂຍບາຍເທົ່ານັ້ນ, ແຕ່ຍັງຕ້ອງການຂີດຄວາມສາມາດ ດ້ານສະຖາບັນທີ່ເປັນລະບົບຈັດຕັ້ງຄຸ້ມຄອງ ແລະ ດ້ານຊັບພະຍາກອນມະນຸດທີ່ເຂັ້ມແຂງ. ເຖິງວ່າຈະມີຄວາມຄືບໜ້າຢ່າງເຫັນໄດ້ຊັດເຈນ ໂດຍຜ່ານການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (SME), ການປະຕິຮູບການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຂອບນະໂຍບາຍອຸດສາຫະກຳ, ແຕ່ຊ່ອງວ່າງດ້ານຂີດຄວາມສາມາດ ຍັງຄົງມີຢູ່ພາຍໃນບັນດາກະຊວງ, ພະແນກການຂັ້ນແຂວງ ແລະ ສະຖາບັນສະໜັບສະໜຸນທຸລະກິດຕ່າງໆ.

ການນຳເອົາວຽກງານສ້າງຂີດຄວາມສາມາດເຂົ້າເປັນບຸລິມະສິດຫຼັກ ແມ່ນສິ່ງຈຳເປັນ ເພື່ອຮັບປະກັນວ່າ ພະນັກງານລັດ, ວິສາຫະກິດ ແລະ ສະຖາບັນຕ່າງໆ ມີຄວາມຮູ້, ທັກສະ ແລະ ລະບົບໃນການອອກແບບ, ຈັດຕັ້ງປະຕິບັດ ແລະ ຮັກສາຍຸດທະສາດອຸດສາຫະກຳ ແລະ ການຄ້າ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ ແລະ ສາກົນ.

ທິດທາງຍຸດທະສາດ:

- ເຊື່ອມສານການສ້າງຂີດຄວາມສາມາດ ເຂົ້າໃນຂອບວຽກນະໂຍບາຍ ແລະ ການວາງແຜນ.
- ປັບການສ້າງຂີດຄວາມສາມາດ ໃຫ້ສອດຄ່ອງກັບຂະແໜງການບຸລິມະສິດ ແລະ ການປະຕິຮູບທີ່ສຳຄັນ.
- ເສີມສ້າງຂີດຄວາມສາມາດດ້ານສະຖາບັນ/ລະບົບການຈັດຕັ້ງຄຸ້ມຄອງ.
- ມາດຕະການຈັດຕັ້ງປະຕິບັດ:
    1) ສົ່ງເສີມການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ເອກະຊົນ-ສະຖາບັນການສຶກສາ.
    2) ຫັນການຮຽນຮູ້ແບບຕໍ່ເນື່ອງ ແລະ ການຄຸ້ມຄອງຄວາມຮູ້ ໃຫ້ເປັນລະບົບທາງການແບບອັດຕະໂນມັດ ໃນການເຄື່ອນໄຫວ ຂອງອົງການຈັດຕັ້ງ.

3) ປະສານງານ ແລະ ລະດົມການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ.

4) ສ້າງຂີດຄວາມສາມາດດ້ານການນຳພາ ແລະ ການບໍລິຫານການປ່ຽນແປງ.

2.2.4.2 ແຜນງານ ທີ V: ພັດທະນາອຸດສາຫະກຳ ແລະ ການຄ້າ ຕາມທິດຍືນຍົງ

ການປ່ຽນແປງສະພາບດິນຟ້າອາກາດ ແລະ ການຄ້າ ແມ່ນມີຄວາມຜູກພັນກັນຢ່າງສະນິດແໜ້ນ ໃນຂະນະທີ່ບັນດາປະເທດກຳລັງຫັນປ່ຽນໄປສູ່ອະນາຄົດທີ່ມີການປ່ອຍກາກບອນຕ່ຳ. ສຳລັບ ສປປ ລາວ, ການບັນລຸ ການເຕີບໂຕທີ່ສູງກວ່າເກົ່າ ແລະ ມີຄວາມສາມາດຫຼາຍຂຶ້ນໃນການຮັບມືໄດ້ຕໍ່ກັບຜົນກະທົບນັ້ນ ຈະຂຶ້ນກັບຄວາມສາມາດໃນການເຊື່ອມໂຍງຄວາມຍືນຍົງດ້ານສິ່ງແວດລ້ອມ ເຂົ້າໃນການຫັນເປັນອຸດສາຫະກຳ, ການລົງທຶນ ແລະ ການຄ້າ. ສປປ ລາວ ຈະສຸມໃສ່ເສີມສ້າງຄວາມສາມາດໃນການແຂ່ງຂັນ ໂດຍການນຳໃຊ້ທ່າແຮງຈາກຊັບພະຍາກອນພະລັງງານໄຟຟ້ານ້ຳຕົກທີ່ໝູນວຽນ ແລະ ອຸດົມສົມບູນ ໃຫ້ເກີດປະໂຫຍດຢ່າງຫຼວງຫຼາຍ, ພ້ອມທັງການນຳເອົາຫຼັກການດ້ານສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງທີ່ດີ (ESG) ມາໃຊ້ໃນຂະແໜງການຂຸດຄົ້ນແຮ່ທາດ, ການປຸງແຕ່ງຜົນຜະລິດຂັ້ນຕົ້ນ ແລະ ອຸດສາຫະກຳປຸງແຕ່ງ. ສິ່ງນີ້ຈະສະໜັບສະໜູນການຫັນປ່ຽນປະເທດ ໄປສູ່ເສດຖະກິດສີຂຽວ, ມີສ່ວນຮ່ວມຈາກທຸກພາກສ່ວນ ແລະ ເນັ້ນການສົ່ງອອກຫຼາຍຂຶ້ນ.

ໃນໄລຍະ 5 ປີຕໍ່ໜ້າ, ຈະສຸມໃສ່ ດ້ານມາດຖານ ESG, ການນຳໃຊ້ຊັບພະຍາກອນຢ່າງຄຸ້ມຄ່າ, ເສດຖະກິດໝູນວຽນ, ການຟື້ນຟູສະພາບແວດລ້ອມຂອງໂຄງການ ຕາມນະໂຍບາຍລັດຖະບານທີ່ສຸມໃສ່ການພັດທະນາກຸ່ມອຸດສາຫະກຳສີຂຽວທີ່ອີງໃສ່ຊັບພະຍາກອນ ແລະ ຮັບປະກັນວ່າການລົງທຶນໃໝ່ແມ່ນສອດຄ່ອງກັບການຂຸດຄົ້ນ, ການປຸງແຕ່ງຜົນຜະລິດຂັ້ນຕົ້ນ ແລະ ອຸດສາຫະກຳປຸງແຕ່ງທີ່ຍືນຍົງ. **ບຸລິມະສິດຫຼັກ ປະກອບມີ**:

- ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດທີ່ສອດຄ່ອງກັບ ESG: ຈັດຕັ້ງປະຕິບັດຂອບຂ່າຍ ESG ແລະ ໂຄງການເຮັດທົດລອງ (Sandbox mining) ສຳລັບການຂຸດຄົ້ນແຮ່ທາດທີ່ມີຄວາມຮັບຜິດຊອບ, ໂດຍຮັບປະກັນໄດ້ວ່າບັນດາໂຄງການແຮ່ທາດໃໝ່ແມ່ນໄດ້ມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມໃນລະດັບສາກົນ. ສິ່ງນີ້ຈະກາຍເປັນພື້ນຖານໃຫ້ແກ່ການພັດທະນາຊັບພະຍາກອນທີ່ຍືນຍົງ ແລະ ດຶງດູດນັກລົງທຶນທີ່ມີຄຸນນະພາບ ແລະ ມີຄວາມຮັບຜິດຊອບສູງ.
- ການຄ້າສີຂຽວ ແລະ ການເຂົ້າເຖິງຕະຫຼາດ: ເສີມສ້າງການປັບປຸງລະບຽບການໃຫ້ສອດຄ່ອງກັບມາດຕະຖານການຄ້າສີຂຽວ ຂອງໂລກ ທີ່ພວມເກີດໃໝ່ (ເຊັ່ນ: ຂໍ້ກຳນົດດ້ານຕ່ອງໂສ້ການສະໜອງທີ່ຍືນຍົງ), ເພື່ອຊ່ວຍໃຫ້ສິນຄ້າສົ່ງອອກ ຂອງລາວສາມາດເຂົ້າເຖິງຕະຫຼາດລະດັບສູງ ທີ່ໃຫ້ຄວາມສຳຄັນຕໍ່ສະພາບດິນຟ້າອາກາດ, ໂດຍສະເພາະແມ່ນການນຳໃຊ້ພະລັງງານໄຟຟ້ານ້ຳຕົກ ເຂົ້າໃນການກັ່ນອາລູມິນາຈາກແຮ່ບ໊ອກໄຊ.
- ການຜະລິດຝຸ່ນພາຍໃນປະເທດເພື່ອສ້າງກະສິກຳທີ່ຍືນຍົງ: ພັດທະນາກຸ່ມອຸດສາຫະກຳ ແຮ່ໂປຕາສ-ສູ່-ຝຸ່ນ ເພື່ອຜະລິດຝຸ່ນ NPK ພາຍໃນປະເທດຈາກແຮ່ໂປຕາສທີ່ຂຸດຄົ້ນໄດ້ຢູ່ທ້ອງຖິ່ນ, ເພື່ອຫຼຸດຜ່ອນການເພິ່ງພາການນຳເຂົ້າຝຸ່ນ ແລະ ປັບປຸງຄວາມໝັ້ນຄົງທາງດ້ານສະບຽງອາຫານແຫ່ງຊາດ. ການປ່ຽນແທນການນຳເຂົ້າຝຸ່ນທີ່ຕ້ອງໄດ້ຂົນສົ່ງມາຈາກໄລຍະທາງທີ່ໄກດ້ວຍການຜະລິດຢູ່ພາຍໃນ, ຈະເຮັດໃຫ້ ສປປ ລາວ ສາມາດຫຼຸດຜ່ອນການປ່ອຍອາຍພິດທີ່ເກີດຈາກການຂົນສົ່ງ, ເຮັດໃຫ້ຕ່ອງໂສ້ການສະໜອງສັ້ນລົງ ແລະ ຫຼຸດຜ່ອນການປ່ອຍທາດອາຍກາກບອນ ລວມ (Carbon footprint) ຈາກຂະບວນການນຳໃຊ້ປັດໄຈນຳເຂົ້າ ຂອງການຜະລິດກະສິກຳ.

ຜ່ານການນຳໃຊ້ມາດຕະຖານສາກົນເຂົ້າໃນຕ່ອງໂສ້ມູນຄ່າການຂຸດຄົ້ນແຮ່ທາດ ແລະ ການຜະລິດອຸດສາຫະກຳປຸງແຕ່ງ, ສປປ ລາວ ຈະສາມາດຍົກສູງຄວາມສາມາດໃນການແຂ່ງຂັນທາງດ້ານການຄ້າ ພ້ອມທັງປະກອບສ່ວນເຂົ້າໃນເປົ້າໝາຍດ້ານສະພາບດິນຟ້າອາກາດ ຂອງພາກພື້ນ ແລະ ໂລກ. ການພັດທະນາອຸດສາຫະກຳສີຂຽວສາມາດເປີດໂອກາດໃໝ່ໃນການສົ່ງອອກ ແລະ ວາງຕຳແໜ່ງໃຫ້ ສປປ ລາວ ເປັນຜູ້ສະໜອງປັດໄຈການຜະລິດອຸດສາຫະກຳທີ່ມີການປ່ອຍກາກບອນຕ່ຳ ໃຫ້ແກ່ຕະຫຼາດພາກພື້ນ ແລະ ສາກົນ.

2.2.4.3 ແຜນງານ ທີ VI: ເລັ່ງການຫັນເປັນດິຈິຕອນ

ການຫັນເປັນດິຈິຕອນໃນທົ່ວກິດຈະກຳທາງເສດຖະກິດ ແລະ ການຄ້າແບບດິຈິຕອນ ແມ່ນມີຄວາມສຳຄັນຢ່າງຍິ່ງຕໍ່ການຍູ້ແຮງການເຕີບໂຕທາງເສດຖະກິດ. ໃນໄລຍະສອງທົດສະວັດທີ່ຜ່ານມາ, ການຂະຫຍາຍຕົວ ຂອງອິນເຕີເນັດ, ການສ້າງຂໍ້ມູນໃນປະລິມານມະຫາສານ ແລະ ການເພີ່ມຂຶ້ນຢ່າງຫຼວງຫຼາຍ ຂອງກຳລັງການປະມວນຜົນ ຂອງຄອມພິວເຕີ ໄດ້ກໍ່ໃຫ້ເກີດເຕັກໂນໂລຊີດິຈິຕອນໃໝ່ໆ ລວມມີ: ການວິເຄາະຂໍ້ມູນຂະໜາດໃຫຍ່ (Big Data Analytics), ລະບົບຄລາວ/ບໍລິການທີ່ໃຫ້ໃຊ້ ຫຼື ເຊົ່າໃຊ້ລະບົບຄອມພິວເຕີ້ ຫຼື ຊັບພະຍາກອນດ້ານຄອມພິວເຕີ້ (Cloud Computing), ອິນເຕີເນັດໃນທຸກສິ່ງ/ອິນເຕີເນັດສັບພະສິ່ງ (IoT) ແລະ ໃນປັດຈຸບັນແມ່ນ ປັນຍາປະດິດ (AI). ເຕັກໂນໂລຊີທີ່ນຳໃຊ້ທົ່ວໄປເຫຼົ່ານີ້ ສາມາດເຊື່ອມໂຍງເຂົ້າໃນທຸກຂະແໜງການ ຂອງເສດຖະກິດ ແລະ ເປັນຕົວຂັບເຄື່ອນການເຕີບໂຕທີ່ສຳຄັນ. ການຫັນເປັນດິຈິຕອນ ໄດ້ສົ່ງຜົນໃຫ້ການໄຫຼວຽນ ຂອງຂໍ້ມູນຂ້າມແດນເພີ່ມຂຶ້ນຢ່າງຫຼວງຫຼາຍ ເຊິ່ງຊ່ວຍເພີ່ມການເຜີ່ງພາອາໄສກັນລະຫວ່າງປະເທດ ແລະ ສ້າງໂອກາດທາງທຸລະກິດໃໝ່, ແຕ່ໃນຂະນະດຽວກັນ ກໍມີຄວາມສ່ຽງດ້ານຄວາມປອດໄພທາງໄຊເບີ(ຄອມພິວເຕີ້).

ການຫັນເປັນດິຈິຕອນໃນທົ່ວກິດຈະກຳທາງເສດຖະກິດ ແມ່ນປັດໄຈຊຸກຍູ້ປີ່ນອ້ອມທີ່ສຳຄັນ ໃນການຍົກສູງຜະລິດຕະພາບ, ຄວາມສາມາດໃນການແຂ່ງຂັນ ແລະ ການຄຸ້ມຄອງບໍລິຫານ ຢູ່ ສປປ ລາວ. ການນຳໃຊ້ເຄື່ອງມືດິຈິຕອນ ຈະຫັນປ່ຽນຮູບແບບການພົວພັນ ລະຫວ່າງ ພາກທຸລະກິດ, ນັກລົງທຶນ ແລະ ພາກລັດ, ຊ່ວຍຫຼຸດຕົ້ນທຶນໃນການດຳເນີນການ, ປັບປຸງຄວາມໂປ່ງໃສ ແລະ ເລັ່ງການຕັດສິນໃຈໃຫ້ໄວຂຶ້ນ.

ໃນໄລຍະ 5 ປີຕໍ່ໜ້າ, ຈະສຸມໃສ່ ການນຳໃຊ້ດິຈິຕອນ ເພື່ອອອກອະນຸຍາດ, ເກັບກຳ ແລະ ສ້າງຖານຂໍ້ມູນນຳເຂົ້າ-ສົ່ງອອກ, ຍົກປະສິດທິພາບຂອງການຜະລິດ ແລະ ດຳເນີນທຸລະກິດ ຕາມນະໂຍບາຍລັດຖະບານທີ່ໃຫ້ບຸລິມະສິດແກ່ການຫັນເປັນດິຈິຕອນ ໃນລະບົບອຸດສາຫະກຳ, ການຄ້າ ແລະ ພະລັງງານ ເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນທີ່ມີປະສິດທິພາບ, ການຄຸ້ມຄອງຊັບພະຍາກອນ ແລະ ການເຊື່ອມໂຍງຂ້າມແດນ, ເຊິ່ງລວມມີ:

- ລະບົບການອອກໃບອະນຸຍາດແບບດິຈິຕອນ: ພັດທະນາພະແລັດຟອມອອນລາຍແບບລວມສູນ ເພື່ອລວມການອະນຸມັດດ້ານບໍ່ແຮ່ ແລະ ດ້ານອຸດສາຫະກຳປຸງແຕ່ງ, ຫຼຸດຜ່ອນຄວາມຊ້ຳຊ້ອນ ແລະ ເພີ່ມຄວາມເຊື່ອໝັ້ນໃຫ້ນັກລົງທຶນ.
- ການເຊື່ອມໂຍງຂໍ້ມູນ ແລະ ຄວາມໂປ່ງໃສ: ສ້າງຖານຂໍ້ມູນດິຈິຕອນສຳລັບຊັບພະຍາກອນແຮ່ທາດ, ທີ່ດິນອຸດສາຫະກຳທີ່ຍັງວ່າງຢູ່, ຜົນງານດ້ານ ESG ເພື່ອໃຫ້ຊ່ວຍນັກລົງທຶນເຂົ້າເຖິງຂໍ້ມູນທີ່ໜ້າເຊື່ອຖືໄດ້ງ່າຍຂຶ້ນ.
- ລະບົບພາສີເອເລັກໂຕຣນິກ ແລະ ເຄື່ອງມືອຳນວຍຄວາມສະດວກທາງດ້ານການຄ້າ: ຈັດຕັ້ງປະຕິບັດລະບົບພາສີດິຈິຕອນ ແລະ ການແລກປ່ຽນຂໍ້ມູນຂ້າມແດນ ເພື່ອເຮັດໃຫ້ຂັ້ນຕອນການຄ້າມີຄວາມກະທັດຮັດ, ສ້າງຄວາມ

ເປັນເອກະພາບໃນດ້ານລະບົບເອກະສານ ແລະ ສາມາດຕິດຕາມສິນຄ້າໄດ້ແບບທັນການ (Real-time) ຕາມ ແລວທາງໂລຊິດສະຕິກພາກພື້ນ.

- ໂຄງລ່າງພື້ນຖານ ແລະ ລະບົບຕາໜ່າງໄຟຟ້າ ແບບອັດສະລິຍະ: ຂະຫຍາຍເຄື່ອງມືຕິດຕາມແບບດິຈິຕອນ ໃນ ໂຄງລ່າງ ພະລັງງານ ແລະ ການຂົນສົ່ງ (ເຊັ່ນ: ລະບົບຄວາມສະຖຽນ ຂອງຕາໜ່າງໄຟຟ້າ, ການຄຸ້ມຄອງໂລຊິດ ສະຕິກທ່າເຮືອ) ເພື່ອປັບປຸງປະສິດທິພາບການດຳເນີນງານ ແລະ ຫຼຸດຜ່ອນການສູນເສຍ.
- ທັກສະດິຈິຕອນ ແລະ ຄວາມປອດໄພທາງໄຊເບີ: ສົ່ງເສີມຄວາມຮູ້ດ້ານດິຈິຕອນ ແລະ ມາດຕະຖານຄວາມ ປອດໄພທາງໄຊເບີໃນທົ່ວພາກລັດ ແລະ ເອກະຊົນ ເພື່ອຮັບປະກັນການນຳໃຊ້ດິຈິຕອນທີ່ປອດໄພ ແລະ ທົ່ວ ເຖິງ.

ດັ່ງນັ້ນ, ການຫັນເປັນດິຈິຕອນ ຈະກາຍເປັນພື້ນຖານໃຫ້ແກ່ລະບົບນິເວດອຸດສາຫະກຳທີ່ທັນສະໄໝ, ມີ ປະສິດທິພາບ ແລະ ໂປ່ງໃສ, ເພື່ອສະໜັບສະໜູນການຫັນປ່ຽນ ຂອງ ສປປ ລາວ ໄປສູ່ອຸດສາຫະກຳປຸງແຕ່ງທີ່ມີມູນຄ່າ ເພີ່ມສູງຂຶ້ນ ແລະ ການເຊື່ອມໂຍງເຂົ້າກັບເສດຖະກິດພາກພື້ນ.

2.2.4.4 ແຜນງານ ທີ VII: ສົ່ງເສີມຄວາມສະເໝີພາບທາງເພດ ແລະ ການມີສ່ວນຮ່ວມ

ສ້າງພະນັກງານນຳພາຄຸ້ມຄອງເພດຍິງ, ສົ່ງເສີມສະມາຄົມນັກທຸລະກິດຍິງ, ສົ່ງເສີມສະມາຄົມຜູ້ປະກອບການ ພິການ, ... ແລະ ການພັດທະນາແຜນງານ, ນະໂຍບາຍ, ແລະ ຂອບວຽກການຕິດຕາມ ແລະ ຈັດຕັ້ງປະຕິບັດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນຖືກອອກແບບມາເພື່ອສ້າງໃຫ້ເກີດການເຕີບໂຕທີ່ເປັນທຳ, ຍືນຍົງ ແລະ ສາມາດປັບຕົວໄດ້. ຂອບວຽກນີ້ໄດ້ເຊື່ອມສານຄວາມສະເໝີພາບລະຫວ່າງຍິງ-ຊາຍ, ໃຫ້ຄວາມສຳຄັນກັບກຸ່ມຄົນທີ່ ບອບບາງ ໂດຍສະເພາະແມ່ນຄົນພິການ ແລະ ການໄດ້ຮັບປະໂຫຍດທົ່ວເຖິງ ຂອງທຸກພາກສ່ວນໃນສັງຄົມ, ວຽກງານ ນະໂຍບາຍ ແລະ ສະຖິຕິເພດ, ວຽກຮ່ວມມືພາກພື້ນ ແລະ ສາກົນ, ວຽກສົ່ງເສີມ ແລະ ປົກປ້ອງແມ່ຍິງ-ເດັກ, ຄົນພິການ, ການພັດທະນາແມ່ຍິງ, ການປົກປ້ອງ ແລະ ດ້ານການນຳໃຊ້ຄວາມຮຸນແຮງທຸກຮູບແບບຕໍ່ແມ່ຍິງ ແລະ ເດັກ ເຂົ້າໃນການ ອອກແບບ, ການຈັດຕັ້ງປະຕິບັດ ແລະ ການປະເມີນຜົນ ໃນທຸກກິດຈະກຳ ຂອງແຜນການ 5 ປີ ຂອງ ກະຊວງ ອຄ.

ພາກທີ III

ກົນໄກການຈັດຕັ້ງປະຕິບັດ, ການປະສານງານ ລະຫວ່າງ ພາກລັດກັບພາກລັດ ແລະ ການຕິດຕາມ-ປະເມີນຜົນ

ກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນອົງການຫຼັກທີ່ຮັບຜິດຊອບໃນການພັດທະນາກົນໄກການດຳເນີນງານ ເພື່ອຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນບັນດານະໂຍບາຍ, ແຜນງານ ແລະ ແຜນການຂອງແຜນພັດທະນາ 5 ປີ ດັ່ງນີ້:

1. ຮ່າງນະໂຍບາຍ, ຂັ້ນຕອນການດຳເນີນງານ ແລະ ລະບຽບການຕ່າງໆ.
2. ກຳນົດບົດບາດ ແລະ ຄວາມຮັບຜິດຊອບໃຫ້ຊັດເຈນ ພາຍໃນກະຊວງ ອຄ.
3. ສ້າງແຜນຝຶກອົບຮົມ ເພື່ອຍົກລະດັບຂີດຄວາມສາມາດດ້ານວິຊາການ ຂອງພະນັກງານ ກະຊວງ ອຄ ຕະຫຼອດ ສະໄໝ ຂອງແຜນ 5 ປີ.
4. ເພີ່ມຂີດຄວາມສາມາດໃຫ້ແກ່ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ (ພອຄ) ໂດຍຜ່ານການແລກປ່ຽນ ຄວາມຮູ້ ແລະ ການຝຶກອົບຮົມໃນວຽກງານຕົວຈິງ (On-the-job training) ໂດຍພະນັກງານຈາກກະຊວງ ອຄ.
5. ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານປະສານງານດ້ານບົດບາດຍິງ-ຊາຍ ໃນກະຊວງ ອຄ ແລະ ຂະຫຍາຍ ໄປສູ່ ພອຄ ແຂວງ.
6. ຄຸ້ມຄອງ ແລະ ຈັດສັນຊັບພະຍາກອນດ້ານການເງິນ, ບຸກຄະລາກອນ ແລະ ເຕັກນິກ ເພື່ອຈັດຕັ້ງປະຕິບັດ ແລະ ບັນລຸຄາດໝາຍ ຂອງແຜນ 5 ປີ ຢ່າງມີປະສິດທິຜົນ.
7. ສ້າງການມີສ່ວນຮ່ວມ ແລະ ຊຸກຍູ້ການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ, ລວມທັງພາກເອກະຊົນ, ພາກປະຊາ ສັງຄົມ, ນັກວິຊາການ ແລະ ຄູ່ຮ່ວມມືສາກົນ.
8. ຕິດຕາມ, ລາຍງານ ແລະ ປະເມີນຜົນ ເພື່ອກວດສອບສະພາບຄວາມຄືບໜ້າ, ຄຸ້ມຄອງຄວາມສ່ຽງ ແລະ ປະ ເມີນໝາກຜົນ ເພື່ອດັດປັບໃຫ້ເໝາະສົມໃນໄລຍະການຈັດຕັ້ງປະຕິບັດແຜນ 5 ປີ.
9. ຄະນະນຳກະຊວງ ອຄ ກຳນົດ, ປະເມີນ ແລະ ວາງແຜນຮັບມືກັບຄວາມສ່ຽງ ແລະ ຄວາມຊັກຊ້າທີ່ອາດເກີດ ຂຶ້ນ.

3.1 ກົນໄກການປະສານງານ ແລະ ວິທີການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ 2026-2030

ການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ 2026-2030 ໃຫ້ມີປະສິດທິຜົນນັ້ນ ຮຽກຮ້ອງໃຫ້ກະຊວງ ອຄ ຕ້ອງເສີມສ້າງທັງວິທີການເຮັດວຽກພາຍໃນ ແລະ ການປະສານງານກັບລະບົບນິເວດໃນວົງກວ້າງ ເຊິ່ງປະກອບມີ ບັນດາ ອົງການຈັດຕັ້ງພາກລັດ, ພາກສ່ວນເອກະຊົນ ແລະ ຄູ່ຮ່ວມພັດທະນາ. ໃນນາມເປັນກະຊວງທີ່ຮັບຜິດຊອບການ ພັດທະນາອຸດສາຫະກຳ, ການຄ້າ ແລະ ການລົງທຶນ, ກະຊວງ ອຄ ຕ້ອງກ້າວຂ້າມຈາກການເຮັດວຽກແບບແຍກສ່ວນ (Siloed execution) ແລະ ຫັນມາໃຊ້ວິທີການທີ່ປະສານກົມກຽວ ແລະ ເປັນເຈົ້າການຫຼາຍຂຶ້ນ ໃນການຈັດ ຕັ້ງ ປະຕິບັດບຸລິມະສິດແຫ່ງຊາດໃຫ້ເກີດຜົນ.

ເພື່ອສະໜັບສະໜຸນການຫັນປ່ຽນນີ້, ກະຊວງ ອຄ ຈະສ້າງໂຄງປະກອບທີມງານຈັດຕັ້ງປະຕິບັດ (Delivery team) ທີ່ຈະແຈ້ງ ສຳລັບທຸກແຜນງານໂຄງການບຸລິມະສິດ. ແຕ່ລະແຜນງານໂຄງການຈະມີ "ເຈົ້າຂອງແຜນງານ" (Initiative Owner) ທີ່ໄດ້ຮັບການມອບໝາຍ ເພື່ອຮັບຜິດຊອບຢ່າງເຕັມສ່ວນຕໍ່ການຈັດຕັ້ງປະຕິບັດແຕ່ຕົ້ນຈົນຈົບ. ເຈົ້າຂອງແຜນງານ ຈະເຮັດໜ້າທີ່ປະສານງານກິດຈະກຳຕ່າງໆ, ຮັບປະກັນຄວາມສອດຄ່ອງລະຫວ່າງກົມກອງ ແລະ ສ້າງການມີສ່ວນຮ່ວມກັບພາກສ່ວນພາຍນອກທີ່ກ່ຽວຂ້ອງຕາມຄວາມຈຳເປັນ. ຫົວໜ້າກົມ ຈະເປັນຜູ້ກຳກັບດູແລແຜນງານພາຍໃຕ້ຂອບເຂດຄວາມຮັບຜິດຊອບ ຂອງຕົນ, ສະໜັບສະໜຸນການແກ້ໄຂບັນຫາ ແລະ ຮັບປະກັນໃຫ້ທີມງານ ຂອງຕົນໄດ້ປະກອບສ່ວນຢ່າງມີປະສິດທິຜົນ.

ໜ່ວຍງານໃຈກາງປະສານງານ ຈະມີບົດບາດສຳຄັນໃນການສະໜັບສະໜຸນ ໂດຍການສັງລວມຄວາມຄືບໜ້າ ຂອງທຸກແຜນງານໂຄງການ, ຊີ້ໃຫ້ເຫັນຈຸດທີ່ຕິດພັນກັນ ແລະ ຮັບປະກັນໃຫ້ຂໍ້ມູນຂ່າວສານໄຫຼວຽນລະຫວ່າງທີມງານ ຢ່າງຄ່ອງຕົວ. ສິ່ງນີ້ຈະຊ່ວຍໃຫ້ຄະນະນຳກະຊວງ ອຄ ສາມາດກຳໄດ້ສະພາບການຈັດຕັ້ງປະຕິບັດ ແລະ ສະໜັບສະໜຸນ ການຕັດສິນໃຈ ເພື່ອເຮັດໃຫ້ການດຳເນີນງານເປັນໄປຕາມແຜນການ. ທີ່ສຳຄັນ, ໂຄງປະກອບພາຍໃນເຫຼົ່ານີ້ຖືກອອກ ແບບມາໃຫ້ກະທັດຮັດ ແລະ ສອດຄ່ອງກັບກົງຈັກການຈັດຕັ້ງທີ່ມີຢູ່ແລ້ວ ຂອງກະຊວງ ອຄ ເພື່ອຮັບປະກັນຄວາມຊັດ ເຈນ ໂດຍບໍ່ສ້າງພາລະດ້ານບໍລິຫານທີ່ບໍ່ຈຳເປັນ.

ການສ້າງຄວາມເຂັ້ມແຂງໃຫ້ການດຳເນີນງານພາຍໃນ ຈະໄດ້ຮັບການຕື່ມເຕັມດ້ວຍວິທີການເຮັດວຽກທີ່ມີ ລະບຽບວິໄນຫຼາຍຂຶ້ນ. ບັນດາກົມກອງຈະເຮັດວຽກຮ່ວມກັບເຈົ້າຂອງແຜນງານຢ່າງເປັນເອກະພາບ ພາຍໃຕ້ຮູບແບບ ການພົວພັນທີ່ຊັດເຈນ ເຊິ່ງກຳນົດ ວິທີການແບ່ງປັນຄວາມຮັບຜິດຊອບ, ກຳນົດເວລາວ່າຍາມໃດຈຶ່ງຈຳເປັນຕ້ອງມີການ ປະສານງານລະຫວ່າງກົມ ແລະ ວິທີການທີ່ຈະສະເໜີ ຫຼື ແກ້ໄຂບັນຫາ. ສິ່ງນີ້ຈະຊ່ວຍໃຫ້ກະຊວງ ອຄ ເຄື່ອນໄຫວເປັນ ລະບົບດຽວກັນ ຫຼາຍກວ່າການເຮັດວຽກແບບຕ່າງກົມຕ່າງເຮັດ.

ເນື່ອງຈາກລັກສະນະ ຂອງການພັດທະນາອຸດສາຫະກຳ ແລະ ການຄ້າ ມີການຕິດກັບຫຼາຍຂະແໜງການ, ກະຊວງ ອຄ ຍັງຕ້ອງລົງເລິກການຮ່ວມມືກັບບັນດາກະຊວງ, ອົງການຈັດຕັ້ງລັດ, ອຳນາດການປົກຄອງທ້ອງຖິ່ນ, ພາກ ເອກະຊົນ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງພາກພື້ນ. ຄວາມສຳເລັດ ຂອງການຈັດຕັ້ງປະຕິບັດ ແມ່ນຈະຂຶ້ນຢູ່ກັບ ວ່າ ກະຊວງ ອຄ ສາມາດສ້າງການມີສ່ວນຮ່ວມກັບພາກສ່ວນເຫຼົ່ານີ້ໄດ້ດີພຽງໃດໃນແຕ່ລະໄລຍະ.

ການສ້າງການມີສ່ວນຮ່ວມ ເລີ່ມຕົ້ນຕັ້ງແຕ່ໄລຍະການຮັບຮອງ, ເຊິ່ງກະຊວງ ອຄ ຈະສະແຫວງຫາການສະໜັບ ສະໜຸນໃນລະດັບຊາດ ສຳລັບແຜນງານໂຄງການບຸລິມະສິດ ເພື່ອຮັບປະກັນວ່າທຸກກະຊວງທີ່ກ່ຽວຂ້ອງຮັບຮູ້ບົດບາດ ຂອງຕົນໃນການຈັດຕັ້ງປະຕິບັດ. ສິ່ງນີ້ຈະຊ່ວຍຍົກລະດັບແຜນງານໂຄງການຫຼັກໃຫ້ເໜືອກວ່າກິດຈະກຳປົກກະຕິ ແລະ ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວຮ່ວມກັນ ຂອງທົ່ວພາກລັດ.

ກ່ອນເລີ່ມການຈັດຕັ້ງປະຕິບັດ, ກະຊວງ ອຄ ຈະດຳເນີນການປະສານງານລ່ວງໜ້າແບບມີເປົ້າໝາຍກັບບັນດາ ກະຊວງ ແລະ ອົງການທີ່ກ່ຽວຂ້ອງ. ສິ່ງນີ້ລວມມີການເຮັດໃຫ້ມີຄວາມຊັດເຈນກ່ຽວກັບຂໍ້ມູນ ຫຼື ການດຳ ເນີນງານດ້ານ ນະໂຍບາຍທີ່ຈຳເປັນ, ການກຳນົດຜູ້ປະສານງານ, ການກຳນົດຂອບເວລາຫຼັກ ແລະ ການຢືນຢັນການຕັດສິນໃຈ ຫຼື ການ ອະນຸມັດທີ່ຈະຕ້ອງມີ. ຂັ້ນຕອນນີ້ແມ່ນມີຄວາມຈຳເປັນ ເພື່ອຫຼີກເວັ້ນຄວາມຊັກຊ້າ ແລະ ຮັບປະ ກັນໃຫ້ບັນດາກະຊວງ ເຂົ້າໃຈຢ່າງຊັດເຈນວ່າ ຈະປະກອບສ່ວນແນວໃດເຂົ້າໃນຄວາມສຳເລັດ ຂອງແຕ່ລະແຜນງານໂຄງການ.

ໃນໄລຍະການຈັດຕັ້ງປະຕິບັດ, ຮູບແບບການເປັນຄູ່ຮ່ວມງານຈະຖືກປັບປ່ຽນຕາມລະດັບການຮ່ວມມືທີ່ ຕ້ອງການ. ເມື່ອໜາກຜົນ ຂອງວຽກມີຄວາມຕິດພັນກັນຢ່າງແໜ້ນແຟ້ນ, ກະຊວງ ອຄ ຈະໃຊ້ຮູບແບບການເຮັດວຽກ

ຮ່ວມກັນ (Joint working model), ເຊິ່ງຕົວແທນຈາກກະຊວງທີ່ກ່ຽວຂ້ອງຈະເຮັດວຽກຢ່າງໃກ້ຊິດກັບເຈົ້າຂອງແຜນງານໂຄງການ ໃນນາມເປັນສ່ວນໜຶ່ງ ຂອງທີມງານແຜນງານ. ໃນກໍລະນີທີ່ການປະກອບສ່ວນມີລັກສະນະສະເພາະດ້ານ ຫຼື ເປັນໄລຍະ, ຈະໃຊ້ຮູບແບບການປຶກສາຫາລື, ເຊິ່ງບັນດາກະຊວງຈະໃຫ້ຄຳປຶກສາດ້ານຊ່ຽວຊານ, ຄຳຄິດເຫັນ ຫຼື ການອະນຸມັດຕາມຄວາມຈຳເປັນ ໂດຍທີ່ກະຊວງ ອຄ ຍັງຄົງເປັນຜູ້ຮັບຜິດ ຊອບຫຼັກ. ຮູບແບບເຫຼົ່ານີ້ຊ່ວຍໃຫ້ເກີດ ຄວາມມີໄຫວພິບ ແລະ ຮັບປະກັນວ່າການຮ່ວມມືນັ້ນມີຄວາມເໝາະສົມກັບຈຸດປະສົງ.

ກະຊວງ ອຄ ຍັງຈະຂະຫຍາຍການມີສ່ວນຮ່ວມກັບພາກສ່ວນເອກະຊົນ ແລະ ນັກລົງທຶນ ເຊິ່ງເປັນຜູ້ມີບົດບາດ ຫຼັກໃນການພັດທະນາອຸດສາຫະກຳ ແລະ ຄວາມສາມາດໃນການແຂ່ງຂັນດ້ານການສົ່ງອອກ. ໂດຍຜ່ານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (ສຄອຊ), ສະມາຄົມທຸລະກິດຕາມຂະແໜງການ, ຜູ້ປະກອບການເຂດເສດຖະກິດພິເສດ ແລະ ບໍລິສັດຕ່າງໆ, ກະຊວງ ອຄ ຈະສ້າງກົນໄກການຮັບຟັງຄຳຄິດເຫັນຢ່າງຕໍ່ເນື່ອງ ເພື່ອໃຫ້ ເຂົ້າໃຈຂໍ້ຈຳກັດ, ຮ່ວມກັນ ອອກແບບທາງອອກ ແລະ ສົ່ງເສີມໂອກາດການລົງທຶນ.

ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ຍັງຄົງເປັນຜູ້ປະກອບສ່ວນທີ່ສຳຄັນ ໃນການໃຫ້ການຊ່ວຍເຫຼືອ ດ້ານເຕັກນິກ, ທຶນຮອນ, ການສ້າງຂີດຄວາມສາມາດ, ເຄື່ອງມື ດິຈິຕອນ ແລະ ການວິເຄາະ, ພ້ອມທັງການສະໜັບສະໜູນວຽກງານຫັນເປັນທັນສະໄໝ ເຊັ່ນ: ອຸດສາຫະກຳ 4.0, ການຄ້າດິຈິຕອນ, ການພັດທະນາມາດຕະຖານ ແລະ ການພັດທະນາເສດຖະກິດທີ່ຍືນຍົງ. ຊ່ອງທາງການປະສານງານ ເຊັ່ນ: ໜ່ວຍງານພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ (TPSWG), ຂະບວນການກອງປະຊຸມໂຕະມົນ, ໜ່ວຍງານຄຸ້ມຄອງລວມການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອດ້ານການຄ້າ (NIU), ກອງປະຊຸມ PRC/PEC ແລະ ກອງປະຊຸມທຸລະກິດລາວ (Lao Business Forum) ຈະສືບຕໍ່ເປັນເວທີຫຼັກໃນການປະສານງານການຊ່ວຍເຫຼືອ.

ສຸດທ້າຍ, ກະຊວງ ອຄ ຈະເຮັດວຽກຢ່າງໃກ້ຊິດກັບອົງການຈັດຕັ້ງໃນພາກພື້ນ ແລະ ອົງການວິຊາການ ເພື່ອສະໜັບສະໜູນການເຮັດໃຫ້ມາດຕະຖານເປັນເອກະພາບກັນ, ການເຊື່ອມຈອດຂ້າມແດນ, ການແລກປ່ຽນຄວາມຮູ້ ແລະ ການເຊື່ອມໂຍງເຂົ້າໃນຕ່ອງໂສ້ມູນຄ່າພາກພື້ນ, ໂດຍສະເພາະແມ່ນຕາມແລວທາງເສດຖະກິດຫຼັກ ແລະ ໃນເຂດເສດຖະກິດພິເສດ.

3.2 ງົບປະມານ ແລະ ແຫຼ່ງທຶນ

ເພື່ອເຮັດໃຫ້ບັນດາກິດຈະກຳ ບຸລິມະສິດ ແລະ ໂຄງການ ທີ່ກຳນົດໄວ້ໃນແຜນພັດທະນາອຸດສາຫະກຳ ແລະ ການຄ້າ ປີ 2026-2030 ໂດຍສະເພາະ ໃນ 3 ແຜນງານ ຫຼັກ ຄື: ແຜນງານ ສົ່ງເສີມການພັດທະນາອຸດສາຫະກຳ, ແຜນງານ ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ ແລະ ແຜນງານ ຍົກລະດັບການພັດທະນາພາກເອກະຊົນ ແລະ ວິສາຫະກິດ ໄດ້ຮັບການຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດ ຕາມຈຸດປະສົງລະດັບຄາດໝາຍທີ່ກຳນົດໄວ້ ຈະຕ້ອງໄດ້ນຳໃຊ້ງົບປະມານທັງໝົດ ປະມານ 744,458 ຕື້ກ່ວາກີບ ລວມມີ 63 ໂຄງການ ຄາດການວ່າ ສ່ວນໜຶ່ງ ຂອງງົບປະມານ ຈະໄດ້ຮັບຈາກລັດຖະບານ ສປປ ລາວ ແລະ ສ່ວນທີ່ເຫຼືອຈະໄດ້ຮັບການລະດົມຮ່ວມກັນຈາກແຫຼ່ງທຶນພາຍນອກ ເຊັ່ນ: ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນໃນພາກພື້ນ ຫຼື ຫຼາຍຝ່າຍ.

3.3 ການຕິດຕາມ, ປະເມີນຜົນ ແລະ ການລາຍງານ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ 2026-2030 ຢ່າງມີປະສິດທິຜົນ, ກະຊວງ ອຄ ຈະເພີ່ມທະວີການຕິດຕາມ, ປະເມີນຜົນ ແລະ ການປະສານງານໃນທຸກກົນກອງ. ກົນໄກທີ່ເຂັ້ມແຂງຂຶ້ນ ຈະຊ່ວຍໃຫ້

ກະຊວງສາມາດຮັບຮູ້ໄດ້ຄວາມຄືບໜ້າ ຂອງແຜນງານ, ກຳນົດສິ່ງທ້າທາຍໄດ້ໄວ ແລະ ດັດປັບໄດ້ທັນການ ເພື່ອໃຫ້ສອດຄ່ອງກັບບຸລິມະສິດແຫ່ງຊາດ. ດັ່ງນັ້ນ, ການຕິດຕາມຈະບໍ່ພຽງແຕ່ສຸມໃສ່ການສຳເລັດກິດຈະກຳຕາມແຜນການເທົ່ານັ້ນ, ແຕ່ຍັງຈະເນັ້ນໃສ່ຈັງຫວະ ຂອງການຈັດຕັ້ງປະຕິບັດ, ຂໍ້ຈຳກັດທີ່ເກີດຂຶ້ນໃນລະຫວ່າງທາງ ແລະ ລະດັບຄວາມສຳເລັດ ຂອງແຜນງານທີ່ປະກອບສ່ວນເຂົ້າໃນຈຸດປະສົງນະໂຍບາຍໃນວົງກວ້າງ ຂອງກະຊວງ ອຄ.

ໃນແຕ່ລະປີ, ກະຊວງ ອຄ ຈະມອບໝາຍຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ແກ່ໂຄງປະກອບການຈັດຕັ້ງພາຍໃນ ແລະ ກຳນົດໃຫ້ທຸກກົມກອງນຳໃຊ້ວິທີການຕິດຕາມ ແລະ ລາຍງານທີ່ສອດຄ່ອງກັນ, ແທດຕົວຈິງ ແລະ ສາມາດເຊື່ອມໂຍງຂໍ້ມູນກັນໄດ້ທົ່ວກະຊວງ. ກົນໄກການລາຍງານເຫຼົ່ານີ້ຈະສະໜັບສະໜູນການສື່ສານເປັນປົກກະຕິກັບຄະນະນຳກະຊວງ, ລັດຖະບານ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຮັບປະກັນວ່າຂໍ້ມູນໄດ້ຖືກແບ່ງປັນຢ່າງທັນການ ແລະ ເປັນເອກະພາບ.

ເພື່ອເສີມສ້າງວຽກງານນີ້, ກະຊວງ ອຄ ຈະກຳນົດຕາຕະລາງເວລາປົກກະຕິ ຂອງການປະສານງານ ແລະ ການທົບທວນທີ່ມີລະບົບແບບແຜນທີ່ຊັດເຈນໃນທົ່ວທີມງານຈັດຕັ້ງປະຕິບັດ. ບັນດາກົມກອງຈະຈັດກອງປະຊຸມພາຍໃນຢ່າງສະໝ່ຳສະເໝີ ເພື່ອທົບທວນຄວາມຄືບໜ້າ ຂອງແຜນງານ, ສົນທະນາບັນຫາທີ່ເກີດຂຶ້ນ ແລະ ຮັບປະກັນວ່າທີມງານຍັງຄົງປະຕິບັດຕາມບຸລິມະສິດ ແລະ ຂອບເວລາທີ່ກຳນົດໄວ້. ກອງປະຊຸມໃນລະດັບວິຊາການເຫຼົ່ານີ້ ຈະຊ່ວຍໃຫ້ເຫັນໄດ້ເຖິງຄວາມສ່ຽງ ແລະ ຈຸດທີ່ຕິດພັນກັນລະຫວ່າງກົມກ່ອນທີ່ບັນຫາຈະບານປາຍ ແລະ ຈະຊ່ວຍໃຫ້ຜູ້ຮັບຜິດຊອບແຜນງານສາມາດປະສານງານກັບຂົງເຂດເຕັກນິກອື່ນໆ ຂອງກະຊວງໄດ້ດີຂຶ້ນ.

ໃນລະດັບຄະນະນຳ, ກອງປະຊຸມທົບທວນປະຈຳເດືອນ ຈະເປັນເວທີໃຫ້ຄະນະນຳກະຊວງ ອຄ ປະເມີນຄວາມຄືບໜ້າລວມ ຂອງທຸກແຜນງານໂຄງການ, ປຶກສາສົນທະນາກ່ຽວກັບຂໍ້ຈຳກັດທີ່ມີຜົນກະທົບຕໍ່ຫຼາຍກົມ ຫຼື ຫຼາຍກະຊວງ ແລະ ຕັດສິນໃຈແກ້ໄຂຈຸດທີ່ຕິດຂັດໃນການຈັດຕັ້ງປະຕິບັດ. ກອງປະຊຸມເຫຼົ່ານີ້ຍັງຈະຊ່ວຍໃຫ້ຄະນະນຳສາມາດໃຫ້ທິດຊີ້ນຳຕໍ່ແຜນງານໂຄງການທີ່ຕ້ອງການການປະສານງານກັບກະຊວງອື່ນ ຫຼື ການປັບປ່ຽນວິທີການດຳເນີນງານ. ນອກຈາກນີ້, ການທົບທວນແຜນງານເປັນແຕ່ລະໄລຍະ (ລາຍໄຕມາດ ຫຼື 6 ເດືອນ) ຈະຊ່ວຍໃຫ້ກະຊວງສາມາດສະຫຼຸບຄວາມຄືບໜ້າໃນໄລຍະຍາວ, ຖອດຖອນບົດຮຽນ ແລະ ປັບປຸງບຸລິມະສິດ ຫຼື ຍຸດທະສາດການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບສະພາບການທີ່ປ່ຽນແປງ ຫຼື ຂໍ້ມູນໃໝ່.

ການຜົວພັນກັນເປັນປົກກະຕິເຫຼົ່ານີ້ ຈະຊ່ວຍຮັກສາຈັງຫວະການດຳເນີນງານໃຫ້ຕໍ່ເນື່ອງ, ເສີມສ້າງການປະສານງານໃນທົ່ວຂົງເຂດເຕັກນິກວິຊາການ ແລະ ຮັບປະກັນໃຫ້ກະຊວງ ອຄ ສາມາດຕິດຕາມກວດກາແຜນ 5 ປີ ໄດ້ຢ່າງເປັນເອກະພາບ. ນອກຈາກນີ້, ຍັງສະໜັບສະໜູນການລາຍງານທີ່ໜ້າເຊື່ອຖືໃຫ້ແກ່ລັດຖະບານ, ລວມທັງການປະເມີນລາຍໄຕມາດ, ປະຈຳປີ, ໄລຍະກາງສະໄໝ ແລະ ທ້າຍສະໄໝ ຕາມທີ່ກຳນົດໄວ້ໃນຂະບວນການວາງແຜນລະດັບຊາດ.

ໂດຍການເສີມສ້າງຂະບວນການຕິດຕາມ, ປະເມີນຜົນ ແລະ ການປະສານງານ, ພ້ອມທັງການກຳນົດຮອບວຽນການປະຊຸມພາຍໃນ ແລະ ກອງປະຊຸມຄະນະນຳທີ່ຊັດເຈນ, ກະຊວງ ອຄ ຈະສາມາດຍົກສູງຂີດຄວາມສາມາດໃນການຊີ້ນຳການຈັດຕັ້ງປະຕິບັດແຜນ 5 ປີ, ຕອບໂຕ້ກັບສິ່ງທ້າທາຍຢ່າງເປັນເຈົ້າການ ແລະ ຮັກສາທ່າແຮງການຂັບເຄື່ອນໃນທຸກແຜນງານບຸລິມະສິດຢ່າງຕໍ່ເນື່ອງ.

ເອກະສານຊ້ອນທ້າຍ 1:

ຕົວຊີ້ບອກຜົນສຳເລັດ ໃນການປະຕິບັດ ແຜນພັດທະນາອຸດສາຫະກຳ ແລະ ການຄ້າ 5 ປີ 2026-2030

ລ/ດ	ຄາດໝາຍລວມ	ຖານປີ (2021-2025)	ຄາດໝາຍສູ້ຊົນ (2030)	ແຫຼ່ງຂໍ້ມູນ
1.	ອັດຕາການຂະຫຍາຍຕົວ ຂອງມູນຄ່າ ການຄ້າ (ສະເລ່ຍຕໍ່ປີ)	12.71%	10%	ກຄຕ
2.	ອັດຕາການເຕີບໂຕສະເລ່ຍຕໍ່ປີ ຂອງ ຂະແໜງອຸດສາຫະກຳ (ເຊິ່ງກຳນົດ ເປັນຄ່າສະເລ່ຍການເຕີບໂຕແບບ ຖ່ວງນ້ຳໜັກ ຂອງ ພະລັງງານ, ບໍ່ ແຮ່ ແລະ ອຸດສາຫະກຳປຸງແຕ່ງ)	24.82%	5%	ກພງ, ກທບ, ກຊປ...
3.	ອັດຕາການຂະຫຍາຍຕົວສະເລ່ຍ ຂອງ ວິສາຫະກິດທີ່ລົງທະບຽນໃໝ່ 5% ຕໍ່ ປີ	ອັດຕາການ ຂະຫຍາຍຕົວສະເລ່ຍ ໄລຍະ 2021-2026	5%	ກຄວ
4.	ການປະກອບສ່ວນຂອງເພດຍິງໃນ ຂົງເຂດເສດຖະກິດ-ຈຳນວນຫົວໜ່ວຍ ວິສາຫະກິດທີ່ມີແມ່ຍິງເປັນເຈົ້າຂອງ ແລະ ບໍລິຫານໂດຍແມ່ຍິງ.	47% (2024)	50%	ກຄວ
ຕົວຊີ້ບອກຜົນສຳເລັດ ຂອງ ແຜນງານ ທີ I ສົ່ງເສີມການພັດທະນາອຸດສາຫະກຳ				
No.	ໂຕຊີ້ບອກ	ຖານປີ (2021-2025)	ຄາດໝາຍສູ້ຊົນ (2030)	ແຫຼ່ງຂໍ້ມູນ
1.	ການຂະຫຍາຍຕົວສະເລ່ຍ ຂອງຂະ ແໜງ ພະລັງງານໄຟຟ້າ ຕໍ່ປີ	26.96%	5%	ກພງ
2.	ການຂະຫຍາຍຕົວສະເລ່ຍ ຂອງຂະ ແໜງບໍ່ແຮ່ ຕໍ່ປີ	9.13%	2.3%	ກທບ
3.	ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ຂະຫຍາຍຕົວສະເລ່ຍ	9.13%	13%	ກອປ
4.	ສ້າງໂຄງການຂຸດຄົ້ນແຮ່ບົກຊິດ ໃຫ້ໄດ້ ຢ່າງໜ້ອຍ 1 ແຫ່ງ ແລະ ໂຮງງານ ສະກັດແຮ່ບົກຊິດ ເປັນຜະລິດ ຕະພັນ ອາລູມິນາ ໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງ (ທີ່ມີກຳລັງການຜະລິດສະເລ່ຍ 1 ລ້ານ ໂຕນ ຕໍ່ປີ ຕັ້ງຢູ່ໃນເຂດຖະກິດພິເສດ)			ກອປ, ກທບ, ກຄວ

5.	ສ້າງ 1 ຫາ 2 ໂຄງການຂຸດຄົ້ນແຮ່ທາດໂປຕັສ (potash) ແລະ ສ້າງໃຫ້ໄດ້ ໂຮງງານຜະລິດຝຸ່ນວິທະຍາສາດ 2 ຫາ 4 ແຫ່ງ			ກທບ
6.	ສ້າງໂຄງການຂຸດຄົ້ນແຮ່ທອງ ແລະ ແຮ່ຄຳ ທີ່ໄດ້ຮັບການອະນຸຍາດລົງທຶນ ຢ່າງຖືກຕ້ອງ ໃຫ້ໄດ້ 2-3 ແຫ່ງ.			ກທບ, ກຄວ
7.	ສ້າງໂຄງການຕົວແບບຂຸດຄົ້ນແຮ່ຫາຍາກ ທີ່ ມີຄວາມອາດສາມາດຈະພັດທະນາອຸດສາຫະກຳປຸງແຕ່ງແຮ່ຫາຍາກ ໃນປີ 2023.			ກທບ
8.	ຫັນບັນດາໂຄງການພັດທະນາພະລັງງານ ແລະ ໂຄງການຂຸດຄົ້ນແຮ່ທາດທີ່ ມີຢູ່ປະຈຸບັນ ຢ່າງ ໜ້ອຍ 50% ໃຫ້ ເຂົ້າສູ່ລະບຽບການ ແລະ ມາດຕະຖານ ດ້ານສັງຄົມ ແລະ ສິ່ງແວດລ້ອມ	-	50%	ກພງ, ກທບ
ຕົວຊີ້ບອກຜົນສຳເລັດ ຂອງ ແຜນງານ ທີ II ເພີ່ມທະວີການຄ້າ ແລະ ການເຂົ້າເຖິງຕະຫຼາດ				
ລ/ດ	**ໂຕຊີ້ວັດ**	**ປີຖານ (2021-2025)**	**ຄາດໝາຍສຸ້ຊິນ (2030)**	**ແຫຼ່ງຂໍ້ມູນ**
1.	ການປັບປຸງການອອກອະນຸຍາດດຳເນີນທຸລະກິດ ຂອງ ສປປ ລາວ ໃນດ້ານຕ່າງໆ ສະແດງອອກໃນບົດລາຍງານ WB's BR Report (ປັບປຸງດີຂຶ້ນ)	ປີຖານ 2025	10%	ບົດລາຍງານ WB's
2.	ຫຼຸດເວລາການແຈ້ງເສຍພາສີ ສິນຄ້ານຳເຂົ້າ, ສົ່ງອອກ ແລະ ຜ່ານແດນຢູ່ບັນດາດ່ານ (ຊົ່ວໂມງ)	3.19	1.55	ກຄຕ
3.	ການປະກອບສ່ວນຂອງການສົ່ງອອກສິນຄ້າ ແລະ ບໍລິການ ພາຍໃຕ້ຂອບສັນຍາການຄ້າສອງຝ່າຍ ແລະ ຫຼາຍຝ່າຍ ໃນມູນຄ່າການການສົ່ງອອກທັງໝົດ (ມູນຄ່າສົ່ງອອກລວມພາຍໃຕ້ກອບສັນຍາ).	41%	45%	ກອຄ

4.	ການໃຫ້ບໍລິການກວດສອບຢັ້ງຢືນຕາຊັ່ງ-ຕາຊີ່ງເພີ່ມຂຶ້ນ 10 ສ່ວນຮ້ອຍ; ຈຳນວນຂອງຫ້ອງທົດລອງ ທີ່ໄດ້ມາດຕະຖານເພີ່ມຂຶ້ນເປັນເທົ່າຕົວ (ໂດຍສະເພາະສຳລັບສິນຄ້າປະເພດອາຫານ/ກະສິກຳ)	ຖານປີ 2024	10%	ກມວ
5.	ປັບປຸງ ກົດໝາຍ ວ່າດ້ວຍ ການປົກປ້ອງຊັບສິນທາງປັນຍາ ໃຫ້ສອດຄ່ອງກັບ WTO-TRIPS	-	-	ກຊປ (ເຜີຍແຜ່ ຜ່ານຈົດໝາຍເຫດທາງລັດຖະການ)
6.	ການຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ສຳລັບການຈົດບຽນປົກປ້ອງຊັບສິນທາງປັນຍາ	ປີຖານ 2024	ຫຼຸດລົງ 25% ທຽບໃສ່ ປີ 2024	ກຊປ
7.	ສຳເລັດການສ້າງລະບົບສຳເນົາເອກະສານ (e-filing) ສຳລັບເຄື່ອງໝາຍການຄ້າ, ສິດທິບັດ, ອານຸສິດທິບັດ ແລະ ແບບອຸດສາຫະກຳ ຢ່າງເປັນລະບົບ ສາມາດຕິດຕາມຄວາມຄືບໜ້າການອອກອະນຸຍາດ ລວມທັງການຊຳລະສະສາງຄ່າບໍລິການ ຜ່ານລະບົບທັນສະໄໝ.	ບໍ່ມີ	ໄດ້ຖືກຈັດຕັ້ງປະຕິບັດ	ກຊປ
8	ການຍື່ນສະເໜີຄຳຮ້ອງຈົດທະບຽນຊັບສິນທາງປັນຍາ ໂດຍຜູ້ສະເໜີພາຍໃນ ແລະ ຕ່າງປະເທດ ເພີ່ມຂຶ້ນ.	ຖານປີ 2024	ທຽບໃສ່ປີ 2024 (% ການເພີ່ມຂຶ້ນ ໂດຍຄິດໄລ່ຈາກຈາກໂຕເລກຂອງປີຖັດມາທຽບ ໃສ່ປີຜ່ານມາ)	ກຊປ (ການຈົດທະບຽນຊັບສິນທາງປັນຍາ)
9.	ສັດສ່ວນຂອງມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດທາງດ້ານການຄ້າຕໍ່ການສົ່ງອອກສິນຄ້າທັງໝົດ ຂອງການສົ່ງອອກສິນຄ້າທັງໝົດໃນແຕ່ລະປີ		45%	ກຄຕ
10.	ຫຼຸດຜ່ອນຂອດຂັ້ນ ແລະ ເວລາການນຳເຂົ້າ-ສົ່ງອອກສິນຄ້າ		45%	ກຄຕ
11.	ປັບປຸງດັດສະນີຕົວຊີ້ວັດປະສິດທິພາບດ້ານໂລຊິດສະຕິກຂອງ ສປປ ລາວ ໃຫ້ເພີ່ມຂຶ້ນ		40%	ກຄຕ
12.	ມູນຄ່າການສົ່ງອອກ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຂອງມູນຄ່າການສົ່ງອອກທັງໝົດ.		70%	ກຄຕ

13.	ຫຼຸດຜ່ອນເວລາການອອກອະນຸຍາດ, ຢັ້ງຢືນການນຳເຂົ້າ ແລະ ສົ່ງອອກ ສິນຄ້າຂອງຂະແໜງການທີ່ກ່ຽວຂ້ອງ		40%	ກຄຕ
14.	ຫຼຸດຜ່ອນເວລາໃນການກວດປ່ອຍ ສິນຄ້ານຳເຂົ້າ-ສົ່ງອອກ ແລະ ຜ່ານ ແດນຢູ່ດ່ານສາກົນ		50%	ກຄຕ
15.	ຫຼຸດຜ່ອນຈຸດກວດກາຕາມເສັ້ນທາງ ທີ່ ບໍ່ຈຳເປັນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນຍ້າຍ ແລະ ຂົນສົ່ງ ສິນຄ້າ		**50%**	ກຄຕ

ຕົວຊີ້ບອກຜົນສຳເລັດ ຂອງ ແຜນງານ ທີ **III** ຍົກລະດັບການພັດທະນາພາກເອກະຊົນ ແລະ ວິສາຫະກິດ

ລ/ດ	**ໂຕຊີ້ວັດ**	**ຖານປີ (2021-2025)**	**ຄາດໝາຍສຸ້ຊົນ (2030)**	**ແໜ່ງຂໍ້ມູນ**
1.	ອອກອະນຸຍາດດຳເນີນທຸລະກິດ ຂອງ ສປປ ລາວ ໃນດ້ານຕ່າງໆ ໄດ້ຮັບການ ປັບປຸງດີຂຶ້ນ ຈາກການປະເມີນໃນບົດ ລາຍງານ WB's BR Report			ບົດລາຍງານ WB's BR Report)
	• ການແຈ້ງຂຶ້ນທະບຽນວິສາຫະກິດ (ເພີ່ມຂຶ້ນ 10% ທຽບໃສ່ປີ 2025)	ຖານປີ 2025	10%	ບົດລາຍງານ WB's BR Report
	• ການຊົມໃຊ້ບໍລິການຂອງພາກ ທຸລະກິດ (ເພີ່ມຂຶ້ນ 10% ທຽບໃສ່ປີ 2025)		10%	ບົດລາຍງານ WB's BR Report
	• ການບໍລິການດ້ານການເງິນ (ເພີ່ມ ຂຶ້ນ 10% ທຽບໃສ່ປີ 2025)	ຖານປີ 2025	10%	ບົດລາຍງານ BR Report
2.	ຂະຫຍາຍການບໍລິການ ແລະ ຍົກສູງ ຄຸນນະພາບ ແລະ ປະສິດທິພາບ ຂອງ ການບໍລິການ ທີ່ສະໜອງໂດຍ ຝຝລ ແລະ ລນລ	-	ສາມາດກຸ້ມທຶນໄດ້ 100%	ບົດລາຍງານດ້ານການເງິນ ຂອງ ຝຝລ ແລະ ລນລ
3.	ການເຂົ້າເຖິງສິນເຊື່ອ ຂອງຫົວໜ່ວຍວິ ສາຫະກິດ ຈນກ ເພີ່ມຂຶ້ນ	30%	35%	ບົດລາຍງານ ຂອງ ທຫລ
4.	ວິສາຫະກິດ ຈນກ ຢ່າງ ໜ້ອຍ 250 ຫົວໜ່ວຍ ໄດ້ຮັບການບໍລິການໃຫ້ຄຳ ປຶກສາ ຈາກບັນດາໂຄງການສົ່ງເສີມ ດ້ານວິຊາການ	200 ຫົວໜ່ວຍ	250 ຫົວໜ່ວຍ	ກຈນກ

5.	ຈຳນວນວິສາຫະກິດຂຶ້ນທະບຽນໃໝ່ໃຫ້ເພີ່ມຂຶ້ນ		5%	ກຄອ
6.	ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບສ່ວນຕໍ່ GDP		17%	ກຈນກ
7.	ຫົວໜ່ວຍທຸລະກິດ ໄດ້ຮັບໂອດ໊ອບ (ODOP) ເພີ່ມຂຶ້ນ		20%	ກຈນກ

ເອກະສານຊ້ອນທ້າຍ 2

ແຜນດຳເນີນງານ ຂອງແຜນພັດທະນາ ອຄ 5 ປີ 2026-2030 ສຳລັບ ອຸດສາຫະກຳປຸງແຕ່ງ, ພະລັງງານ ແລະ ບໍ່ແຮ່, ການສົ່ງເສີມການຄ້າ ແລະ ການພັດທະນາພາກເອກະຊົນ

ແຜນງານ ທີ I	**ສົ່ງເສີມການພັດທະນາອຸດສາຫະກຳ**	1. **ອັດຕາການເຕີບໂຕສະເລ່ຍ ຂອງຂະແໜງພະລັງງານ 5 % ຕໍ່ປີ** 2. **ອັດຕາການເຕີບໂຕ ຂອງຂະແໜງການບໍ່ແຮ່ ສະເລ່ຍໃນລະດັບ 2.3 % ຕໍ່ປີ** 3. **ຜົນຜະລິດອຸດສາຫະກຳປຸງແຕ່ງເພີ່ມຂຶ້ນ ສະເລ່ຍ 13 % ຕໍ່ປີ** 4. **ສ້າງໂຮງງານແຍກທາດບົກຊິດ (bauxite) 1 ແຫ່ງ ແລະ ໂຮງງານຜະລິດອາລູມິນາ (alumina) 1 ແຫ່ງ (ດ້ວຍກຳລັງການຜະລິດ ປະມານ 1 ລ້ານໂຕນ ຕໍ່ປີ) ຢູ່ໃນເຂດເສດຖະກິດພິເສດໃດໜຶ່ງ.** 5. **ສ້າງໂຄງການຂຸດຄົ້ນແຮ່ທາດໂປຕາສ ໃຫ້ໄດ້ເພີ່ມຕື່ມ 1 ຫາ 2 ແຫ່ງ ແລະ ສ້າງໂຮງງານຝຸ່ນວິທະຍາສາດ ໃຫ້ໄດ້ 2 ຫາ 4 ແຫ່ງ (ດ້ວຍກຳລັງການຜະລິດປະມານ 200,000 ໂຕນ ຕໍ່ປີ)** 6. **ໂຄງການຂຸດຄົ້ນແຮ່ຄຳ ແລະ ແຮ່ທອງ ໃຫ້ໄດ້ 2 ຫາ 3 ແຫ່ງ ທີ່ພວມດຳເນີນການ, ທີ່ມີແຜນຈະຂຸດຄົ້ນໃໝ່ ລວມທັງບັນດາໂຄງການຂຸດຄົ້ນແຮ່ທາດ ທີ່ໄດ້ຮັບສິດໃນການສຳຫຼວດ ແລະ ຂຸດຄົ້ນ ຕາມລະບຽບການ.** 7. **ສ້າງ ໂຄງການຂຸດຄົ້ນແຮ່ຫາຍາກ ໃຫ້ໄດ້ 1 ຫາ 2 ແຫ່ງ ເພື່ອສ້າງເປັນໂຄງການຕົວແບບ ທີ່ມີທ່າແຮງຜະລິດເປັນເຄິ່ງສຳເລັດຮູບ ນັບແຕ່ປີ 2030 ເປັນຕົ້ນໄປ.** 8. **50% ຂອງໂຄງການລົງທຶນພັດທະນາພະລັງງານ ແລະ ໂຄງການຂຸດຄົ້ນແຮ່ທາດ ໄດ້ຫັນເຂົ້າເຂົ້າສູ່ລະບຽບ ແລະ ມາດຕະຖານທາງດ້ານເຕັກນິກ, ສັງຄົມ ແລະ ສິ່ງແວດລ້ອມ**	
ແຜນວຽກຈຸດສຸມ ທີ I: ອຸດສາຫະກຳພະລັງງານ		1. ອັດຕາການເຕີບໂຕ ຂອງຂະແໜງພະລັງງານ ສະເລ່ຍ 5% ຕໍ່ປີ 2. ເພີ່ມອັດຕາສ່ວນການກູ້ຄືນ/ກຸ້ມຕົນເອງດ້ານຕົ້ນທຶນ ຂອງ ຟຟລ ເປັນ 100% ແຕ່ນີ້ຮອດປີ 2030. 3. ຟຟລ ສາມາດກຸ້ມທຶນໄດ້ 100% ພາຍໃນປີ 2030. 4. 50% ຂອງຈຳນວນໂຄງການພັດທະນາພະລັງງານ (ໂຄງການໃໝ່) ຫັນເຂົ້າສູ່ລະບຽບຫຼັກການ ແລະ ມາດຖານດ້ານເຕັກນິກ, ສະພາບແວດລ້ອມ ແລະ ສັງຄົມ.		
ລ/ດ	**ມາດຕະການ**	**ສິ່ງທ້າທາຍ**	**ຮັບຜິດຊອບຫຼັກ**	**ພາກສ່ວນສະໜັບສະໜຸນ**
1.	**ຮັບຮອງແຜນການປະຕິຮູບ ຂອງຂະແໜງພະລັງງານ.** ແຜນດັ່ງກ່າວ ຈະກຳນົດທິດທາງໃນການຮັກສາສະຖຽນ	ການຂາດສະຖຽນລະພາບທາງດ້ານການເງິນ ແລະ ມີໜີ້ສິນຕໍ່ ພາຍ	ຄະນະປະຕິຮູບລັດວິສາຫະກິດລະດັບ	ການຊ່ວຍເຫຼືອດ້ານວິຊາການ ເພື່ອຍົກສູງຄວາມອາດສາ

	ລະພາບທາງດ້ານການເງິນ ຂອງ ຟຟລ ຊຶ່ງມີຄວາມຈຳເປັນຕ້ອງໄດ້ມີການຄົ້ນຄວ້າ ແລະ ປັບປຸງໂຄງສ້າງລາຄາໄຟຟ້າ ເປັນແຕ່ໄລຍະ ເພື່ອໃຫ້ສອດຄ່ອງກັບຕົ້ນທຶນການຜະລິດຕົວຈິງ ສຳລັບການສະໜອງພາຍໃນ, ຮັບປະກັນໃຫ້ແກ່ຖານລາຍຮັບທີ່ໝັ້ນຄົງ ຂອງ ຟຟລ ບົນພື້ນຖານຮັບປະກັນບໍ່ໃຫ້ມີຜົນກະທົບສູງຕໍ່ສັງຄົມ ໂດຍສະເພາະກຸ່ມຄົນທີ່ມີລາຍຮັບຕ່ຳ. ຍົກສູງປະສິດທິພາບການຄຸ້ມຄອງ ແລະ ການບັງຄັບໃຊ້ນິຕິກຳ: ເພີ່ມປະສິດທິພາບໃນການຄຸ້ມຄອງ ແລະ ບໍລິຫານພາຍໃນອົງກອນຂອງຂະແໜງພະລັງງານ ເພື່ອຮັບປະກັນຄວາມໂປ່ງໃສ, ຍົກສູງຄວາມຮັບຜິດຊອບ ແລະ ສາມາດກວດສອບໄດ້, ທັງເປັນການດຶງດູດເອົາການລົງທຶນທີ່ມີຄຸນນະພາບຂອງພາກເອກະຊົນ. ທັນເປັນທັນສະໄໝລະບົບການຄຸ້ມຄອງ ປົກປັກຮັກສາສິ່ງແວດ ລ້ອມ ແລະ ສັງຄົມ. ການປັບປຸງໂຄງສ້າງໜີ້ສິນ ແລະ ລະບົບການຄຸ້ມຄອງບໍລິຫານ: ສືບຕໍ່ເຈລະຈາກັບເຈົ້າໜີ້ ໃນການປັບປຸງໂຄງສ້າງໜີ້ສິນ ແລະ ຈັດຕັ້ງປະຕິບັດກົນໄກການຄຸ້ມຄອງໜີ້ສິນ ເພື່ອຫຼຸດຜ່ອນຄວາມກົດດັນທາງດ້ານການເງິນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ.	ນອກສູງ,ຂາດນະໂຍບາຍສະໜັບສະໜູນ ທີ່ສຳຄັນ ແລະ ຂາດຄວາມອາດສາມາດໃນການຕິດຕາມກວດກາ.	ຊາດ ຂັ້ນສູນກາງ (ຟຟລ), ກຄວ	ມາດໃນການປະຕິຮູບລັດວິສາຫະກິດ (ADB)
2.	**ສົ່ງເສີມການຜະລິດພະລັງງານທີ່ຫຼາກຫຼາຍໃນ ສປປ ລາວ ໂດຍການພັດທະນາແຫຼ່ງຜະລິດພະລັງງານສະອາດທີ່ຫຼາກຫຼາຍ ທີ່ບໍ່ແມ່ນພະລັງງານໄຟຟ້ານ້ຳຕົກ.** ໃຫ້ບູລິມະສິດ ແລະ ກຳນົດມາດຕະການເລັ່ງດ່ວນ ໃນການອອກອະນຸຍາດ ແລະ ການພັດທະນາໂຄງການພະລັງງານແສງຕາເວັນ, ພະລັງງານລົມ ແລະ ພະລັງງານຊີວະມວນ ເພື່ອຫຼຸດຜ່ອນການເອື່ອຍອີງໃສ່ພະລັງງານໄຟຟ້ານ້ຳຕົກ, ຮັບປະກັນການສະໜອງໄຟຟ້າ ໃຫ້ພຽງພໍ ໃນ	ການເອື່ອຍອີງໃສ່ພະລັງງານໄຟຟ້ານ້ຳຕົກ ເປັນສາເຫດທີ່ພາໃຫ້ ສປປ ລາວ ມີຄວາມບອບບາງສູງຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ເປັນຕົ້ນ: ລະດູແລ້ງທີ່ຍາວຂຶ້ນ ແລະ ຄວາມຖີ່ຂອງການປ່ຽນແປງຂອງລະດັບນ້ຳ ໄດ້ສົ່ງຜົນກະທົບໂດຍກົງຕໍ່ ຄວາມ	ກພງ, ກຄວ	ຄູ່ຮ່ວມພັດທະນາ ລາວ-ອົດສະຕາລີ ດ້ານຄວາມຍືນຍົງ ຂອງພະລັງງານ (DFAT)

	ທຸກຊ່ວງລະດູ ແລະ ຮັບປະກັນຄວາມສອດຄ່ອງກັບບັນດາຄາດໝາຍສູ້ຊົນກໍຄື ພັນທະທີ່ມີຕໍ່ສາກົນ ກ່ຽວກັບການປ່ຽນແປງດິນຟ້າອາກາດ. ສາມາດບັນລຸເປົ້າໝາຍການຜະລິດພະລັງງານສະອາດອື່ນ ໃຫ້ກວມເອົາ 11%. ປະເມີນຄືນບັນດາໂຄງການພະລັງງານຄວາມຮ້ອນຈາກຖ່ານຫີນ: ປະເມີນຄືນບັນດາໂຄງການພະລັງງານຄວາມຮ້ອນຈາກຖ່ານຫີນທັງໝົດ ເພື່ອຮັບປະກັນໃຫ້ສອດຄ່ອງກັບເປົ້າໝາຍການຫຼຸດອາຍພິດເຮືອນແກ້ວ ໃຫ້ເປັນສູນ ແລະ ສອດຄ່ອງກັບທ່າອ່ຽງຂອງສາກົນ ໃນການສົ່ງເສີມການນຳໃຊ້ພະລັງງານສະອາດເປັນມິດກັບສິ່ງແວດລ້ອມ. ຄົ້ນຄວ້າເພື່ອນຳໃຊ້ເຕັກໂນໂລຊີທັນສະໄໝ: ສຶກສາທ່າແຮງໃນການຜະລິດພະລັງງານຈາກ ໄຮໂດຣເຈັນ ແລະ ແອັມໂມເນຍ (hydrogen and ammonia) ເພື່ອຜະລິດເປັນນ້ຳມັນເຊື້ອໄຟທີ່ສະອາດ, ທັງເປັນກະຕຸກຊຸກຍູ້ການຜະລິດພະລັງງານສະອາດໃຫ້ມີຄວາມຫຼາກຫຼາຍຂຶ້ນຕື່ມ.	ສາມາດໃນການຜະລິດພະລັງງານໄຟຟ້ານ້ຳຕົກ. ເຂື່ອນໄຟຟ້ານ້ຳຕົກຂະໜາດໃຫຍ່ ໄດ້ສົ່ງຜົນກະທົບຮ້າຍແຮງຕໍ່ສະພາບແວດລ້ອມ ເປັນຕົ້ນ: ການຂັດຂວາງຕໍ່ເສັ້ນທາງການອົບພະຍົບຂອງປະຊາກອນປາ, ຫຼຸດຜ່ອນການໄຫຼຂອງຕະກອນ ແລະ ສົ່ງຜົນກະທົບຕໍ່ ລະບົບນິເວດວິທະຍາ ແລະ ລະບົບນິເວດສຳລັບການດຳລົງຊີວິດ ຂອງພວກສັດນ້ຳ. ດ້ານສັງຄົມ, ບັນດາເຂື່ອນເຫຼົ່ານັ້ນ ເປັນສາເຫດໃຫ້ມີການອົບພະຍົບເຄື່ອນຍ້າຍຊຸມຊົນ ໄປຢູ່ເຂດໃໝ່, ເຮັດໃຫ້ສູນເສຍການດຳລົງຊີວິດແບບດັ້ງເດີມ ແລະ ບັນຫາການຊົດເຊີຍທີ່ບໍ່ເປັນທຳ ຫຼື ພຽງພໍ. ໃນຂະນະທີ່ການຜະລິດພະລັງງານສະອາດຂ້ອນຂ້າງສູງ, ແຕ່ປະລິມານການຊົມໃຊ້ພະລັງງານສ່ວນໃຫຍ່ (ປະມານ 20%) ຍັງເພິ່ງພາອາໄສພະລັງງານທີ່ບໍ່ສະອາດ/ບໍ່ເປັນມິດກັບສິ່ງແວດລ້ອມ (ນ້ຳມັນເຊື້ອໄຟ ແລະ ຖ່ານຫີນ) ໂດຍສະເພາະໃນຂະແໜງຄົມມະນາຄົມ ແລະ ອຸດສາຫະກຳຈຳນວນ ໜຶ່ງ. ການຜະລິດພະລັງງານທາງເລືອກອື່ນ ໃນປະຈຸບັນ ເຫັນວ່າ 15%		

		ແມ່ນມາຈາກພະລັງງານ ຄວາມຕ້ອນຈາກຖ່ານຫີນ. ແຜນພັດທະນາ ພະລັງງານແຫ່ງຊາດ ເຫັນວ່າຍັງກຳນົດຈຸດ ສຸມ ເພື່ອເພີ່ມກຳລັງ ການຜະລິດພະລັງງານ ຈາກຖ່ານຫີນ, ຊຶ່ງເຫັນ ວ່າສວນກະແສ ກັບທ່າ ອ່ຽງຂອງສາກົນ ໃນ ຄວາມພະຍາຍາມຫຼຸດ ຜ່ອນການປ່ອຍອາຍ ກາກໂບນິກ		
3.	**ປັບປຸງພື້ນຖານໂຄງລ່າງລະບົບສາຍສົ່ງ ແລະ ລະບົບສະໜອງກະແສໄຟຟ້າໃຫ້ ທັນສະໄໝ** ດ້ວຍການຮັບປະກັນການ ສະໜອງທຶນຮອນໃຫ້ແກ່ ແລະ ຈັດຕັ້ງ ປະຕິບັດບັນດາໂຄງການ ເພື່ອປັບປຸງ ແລະ ຂະຫຍາຍລະບົບສາຍສົ່ງ ແລະ ຕາຂ່າຍສະໜອງໄຟຟ້າ ແຫ່ງຊາດ. ບັນຫາສຳຄັນ ແມ່ນການປັບປຸງຄຸນ ນະພາບ/ຄວາມສະຖຽນ, ຫຼຸດຜ່ອນ ການສູນເສຍ, ແລະ ຄຸ້ມຄອງການ ກະຈາຍໄຟຟ້າພາຍໃນປະເທດ ແລະ ການແລກປ່ຽນພະລັງງານກັບພາກ ພື້ນ. ແກ້ໄຂບັນຫາການຂາດແຄນ ງົບປະມານ ເພື່ອສະໜອງໃຫ້ແກ່ຜູ້ ພັດທະນາໂຄງການພັດທະນາລະບົບ ສາຍສົ່ງ. ການພັດທະນາລະບົບສາຍສົ່ງ ອັດສະລິຍະ (Smart Grid): ຄົ້ນ ຄວ້ານຳໃຊ້ເຕັກໂນໂລຊີສາຍສົ່ງອັດສະ ລິຍະ ໃນການຍົກສູງຄຸນນະພາບການ ເຊື່ອມຕໍ່, ບໍລິຫານຈັດການຄວາມຜັນ ຜວນໃນການສະໜອງພະລັງງານທາງ ເລືອກອື່ນ ລວມທັງການຍົກລະດັບປະ ສິດທິຜົນຂອງລະບົບໂດຍລວມທັງໝົ ດ. ສືບຕໍ່ຍົກສູງພາລະບົດບາດ ຂອງ EDL-T: ຊຸກຍູ້ສິ່ງເສີມ EDL-T ໃຫ້ ສາມາດປະຕິບັດພາລະບົດບາດຂອງ ຕົນຢ່າງເຕັມສ່ວນ ໃນການພັດທະນາ	ເຖິງວ່າຈະເປັນຜູ້ ສົ່ງ ອອກກະແສໄຟຟ້າລາຍ ໃຫຍ່, ແຕ່ ສປປ ລາວ ກໍຍັງປະສົບກັບບັນຫາ ໄຟຕົກ ໄຟມອດ ລວມ ທັງບັນຫາການຂາດດຸນ ໃນການແລກປ່ຽນພະ ລັງງານ ໃນບາງໄລຍະ ໂດຍສະເພາະໃນລະດູ ແລ້ງ. ປະເທດຍັງຂາດ ລະບົບສາຍສົ່ງແຫ່ງຊາດ ທີ່ທັນສະໄໝ ແລະ ມີປະ ສິດທິຜົນສູງ, ສົ່ງຜົນ ເຮັດໃຫ້ການສະໜອງ ໄຟຟ້າມີຄຸນນະພາບຕ່ຳ ແລະ ເຮັດໃຫ້ການ ເຊື່ອມຕໍ່ກັບລະບົບສາຍ ສົ່ງທີ່ໄດ້ພັດທະນາກ່ອນ ໜ້ານີ້ ພົບບັນຫາ ຫຍຸ້ງຍາກ.	ຟຟລ, ກພງ, ສະ ຖາບັນ, ກຄວ	World Bank, AIIB, ADB, **ໂຄງການຍົກສູງ ປະສິດທິພາບການ ສະໜອງພະລັງງານ** (IDA)

	ລະບົບສາຍສົ່ງ ເພື່ອຮັບປະກັນໃຫ້ແກ່ການສະໜອງໄຟຟ້າທີ່ມີສະຖຽນລະພາບ, ຮັບປະກັນການສະໜອງພະລັງງານພາຍໃນປະເທດໃຫ້ມີຄຸນນະພາບ ລວມທັງການເຊື່ອມຕໍ່ກັບລະບົບສາຍສົ່ງພາຍໃນພາກພື້ນ.			
4.	**ການສ້າງມູນຄ່າເພີ່ມຢູ່ພາຍໃນ** ນອກຈາກການຊຸກຍູ້ສົ່ງເສີມການພັດທະນາອຸດສາຫະກຳ ໂດຍການໃຫ້ນະໂຍບາຍສົ່ງເສີມພິເສດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງອຸດສາຫະກຳປຸງແຕ່ງແຮ່ທາດ ແລະ ໂຮງງານຫຼອມແຮ່ທາດ (ເຫຼັກ, ຊິລິຄອນ, ທອງ) ໃນການຍົກສູງການສ້າງຜົນປະໂຫຍດທາງດ້ານເສດຖະກິດໃຫ້ແກ່ຊັບພະຍາກອນທຳມະຊາດຂອງ ສປປ ລາວ ແລະ ຫຼຸດຜ່ອນການສົ່ງອອກແຮ່ດິບເທື່ອລະກ້າວ.	ການພັດທະນາອຸດສາຫະກຳປຸງແຕ່ງແຮ່ທາດ ແລະ ໂຮງງານຫຼອມແຮ່ທາດ (ເຫຼັກ, ຊິລິຄອນ, ທອງ) ໂດຍການນຳໃຊ້ທ່າແຮງດ້ານພະລັງງານ ຖືໄດ້ວ່າເປັນທ່າແຮງອັນສຳຄັນໃນການສ້າງມູນຄ່າເພີ່ມໃຫ້ແກ່ວັດຖຸດິບພາຍໃນ, ຫຼຸດຜ່ອນການນຳເຂົ້າ, ແລະ ສ້າງແຫຼ່ງລາຍຮັບໃໝ່ ໃຫ້ແກ່ປະເທດຊາດ.	ຝຟລ, ກພງ, ສະຖາບັນ, ກຄວ, ກອປ	ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອສົ່ງເສີມການປະຕິຮູບຂະແໜງພະລັງງານ (ADB)
5.	**ປັບປຸງໂຄງສ້າງລາຄາໄຟຟ້າ ທີ່ສະທ້ອນຕົ້ນທຶນການຜະລິດຕົວຈິງ ດ້ວຍລະດັບລາຄາທີ່ຕ່າງກັນ ຕາມໄລຍະຊົ່ວໂມງໃຊ້ໄຟສູງສຸດ/ຕ່ຳສຸດ, ຊ່ວງລະດູການ, ອັດຕາແລກປ່ຽນ (FX) ແລະ ການເໜັງຕີງຂອງລາຄານ້ຳມັນເຊື້ອໄຟ.** ພັດທະນາກົນໄກກຳນົດໂຄງສ້າງລາຄາໄຟຟ້າທີ່ສະທ້ອນຕົ້ນທຶນການຜະລິດຕົວຈິງ ແລະ ມີຄວາມໂປ່ງໃສ ດ້ວຍການປັບລາຄາຕາມຊ່ວງການຊົມໃຊ້ໄຟຟ້າສູງສຸດ/ຕ່ຳສຸດ ແລະ ຕາມລະດູການ, ການປັບໂຄງສ້າງລາຄາໄຟຟ້າແບບໂອໂຕມາຕິກ ຕາມການເໜັງຕີງຂອງລາຄານ້ຳມັນເຊື້ອໄຟ, ອັດຕາແລກປ່ຽນ ແລະ ປັດໄຈການໄຫຼຂອງກະແສນ້ຳ ແລະ ນຳໃຊ້ກົນໄກອຸດໜູນສຳລັບກຸ່ມເປົ້າໝາຍ. ຂໍ້ລິເລີ່ມດັ່ງກ່າວນີ້ ມີຈຸດປະສົງເພື່ອຮັກສາສະຖຽນລະພາບດ້ານລາຍຮັບງົບປະມານ ຂອງ ຝຟລ, ຫຼຸດຜ່ອນການຮົ່ວໄຫຼຂອງງົບປະມານ ໂດຍການປັບປຸງໂຄງສ້າງລາຄາໄຟຟ້າໃຫ້ເໝາະ	ໂຄງສ້າງລາຄາໄຟຟ້າປະຈຸບັນຢູ່ໃນລະດັບຕ່ຳກວ່າຕົ້ນທຶນ; ລາຄາປະຈຸບັນ ຍັງບໍ່ທັນສາມາດສະທ້ອນລະບົບຕົ້ນທຶນການຜະລິດຕົວຈິງ; ການໃຫ້ອຸດໜູນລາຄາໄຟຟ້າຍັງບໍ່ທັນແທດເຖິງເປົ້າໝາຍ; ລາຍຮັບງົບປະມານ ທີ່ຜັນຜວນສູງ ສົ່ງຜົນເຮັດໃຫ້ ຝຟລ ຂາດສະພາບຄ່ອງ; ການຂາດຄວາມໂປ່ງໃສທາງດ້ານການເງິນ ສົ່ງຜົນກະທົບຕໍ່ຄວາມເຊື່ອໝັ້ນຂອງນັກລົງທຶນ.	ຝຟລ, ກອຄ, ກງ	5.

	ສົມ ໃນແຕ່ລະໄລຍະ ແລະ ສອດຄ່ອງກັບກົດໝາຍ ວ່າດ້ວຍໄຟຟ້າ.			
6.	**ສ້າງມາດຕະຖານສັນຍາຊື້-ຂາຍໄຟຟ້າ (PPA) ແລະ ຂະບວນການອະນຸມັດ ເພື່ອຫຼຸດຜ່ອນຮູບແບບການຊື້-ຂາຍໄຟຟ້າຮູບແບບ take-or-pay** ສ້າງໂຄງຮ່າງສັນຍາຊື້-ຂາຍໄຟຟ້າ ມາດຕະຖານດຽວກັນ (PPA template) ແລະ ຂະບວນການອອກອະນຸຍາດທີ່ສະດວກງ່າຍດາຍ ໃນການກວດກາການປະຕິບັດຂໍ້ກຳນົດ, ກົດບັງຄັບຂອງສັນຍາ ລວມທັງການປະຕິບັດພັນທະດ້ານການເງິນ ຮັບປະກັນການປະສານງານທີ່ດີ ເພື່ອເຮັດປະເມີນທາງດ້ານການເງິນ ແລະ ດ້ານເຕັກນິກ ເປັນເອກະພາບ ໃນທົ່ວອີງກອນ. ຂໍ້ລິເລີ່ມດັ່ງກ່າວນີ້ ຈະຊ່ວຍຫຼຸດຜ່ອນໄລຍະເວລາໃນການເຈລະຈາ, ສ້າງຄວາມເຂັ້ມແຂງໃຫ້ແກ່ການຕິດຕາມກວດກາ ການປະຕິບັດພັນທະ ແລະ ຍົກລະດັບຄວາມໂປ່ງໃສ ໃຫ້ແກ່ນັກລົງທຶນ	ຮ່າງສັນຍາ PPAs ທີ່ມີຢູ່ປະຈຸບັນ ແມ່ນມີຄວາມແຕກໂຕນກັນ ບໍ່ວ່າຈະເປັນດ້ານໂຄງຮ່າງ ແລະ ການກະຈາຍຄວາມສ່ຽງ; ເງື່ອນໄຂທາງດ້ານການເງິນ ແລະ ການຊຳລະສະສາງ-ການຄ້ຳປະກັນ ລ້ວນແລ້ວແຕ່ແຕກຕ່າງກັນ; ຂະບວນການອອກອະນຸຍາດທີ່ມີຫຼາຍຂັ້ນຕອນແຕກຕ່າງກັນ; ຂາດຂະບວນການຕິດຕາມກວດກາ ການປະຕິບັດສັນຍາ PPAs ແລະ ລະບົບການຕິດຕາມປະເມີນຜົນສະຖານະພາບທາງດ້ານການເງິນ.	**ຟຟລ, ກອຄ, ກງ**	
7.	**ເລັ່ງຂະບວນການຫັນປ່ຽນ/ປະຕິຮູບ ຟຟລ ຜ່ານການປັບປຸງກົງຈັກ ການຈັດຕັ້ງ ແລະ ລະບົບບັນຊີ-ການເງິນ ແລະ ສ້າງຄວາມອາດສາມາດ** ສ້າງຄວາມອາດສາມາດທາງດ້ານການຄຸ້ມຄອງໃຫ້ແກ່ ຟຟລ ດ້ວຍການສ້າງຫ້ອງການຄຸ້ມຄອງການຫັນປ່ຽນ ເພື່ອປະຕິຮູບ, ຕິດຕາມຜົນ, ສົ່ງເສີມຜູ້ທີ່ມີແນວຄວາມຄິດລິເລີ່ມ ແລະ ຄຸ້ມຄອງໂຄງການ ແລະ ສ້າງຄວາມອາດສາມາດໃນການວິເຄາະ-ວິໄຈ. ຂໍ້ລິເລີ່ມດັ່ງກ່າວນີ້ ຈະຊ່ວຍຍົກລະດັບຄວາມຄ່ອງຕົວຂອງພາຍໃນ, ທັງເປັນການຊຸກຍູ້ ການຈັດຕັ້ງປະຕິບັດ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ການຫັນປ່ຽນຢ່າງແຂງແຮງດ້ານການຈັດຕັ້ງ ແລະ ການເງິນ.	ຍົກສູງຄວາມອາດສາມາດໃນການຄຸ້ມຄອງບໍລິຫານ ຂອງ ຟຟລ ໂດຍການສ້າງຕັ້ງຫ້ອງການຄຸ້ມຄອງການປະຕິຮູບ (TMO) ເພື່ອໃຫ້ເປັນຈຸດປະສານງານດ້ານການປະຕິຮູບ, ການຕິດຕາມກວດກາ, ສົ່ງເສີມຜູ້ທີ່ມີຂໍ້ຄິດຄິດລິເລີ່ມ ແລະ ສ້າງໂຄງການ ເພື່ອສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງ ແລະ ການວິເຄາະ-ວິໄຈ. ຂໍ້ລິເລີ່ມດັ່ງກ່າວນີ້ ຈະຊ່ວຍໃຫ້ກົນໄກພາຍໃນມີຄວາມເປັນເອກະພາບ ສອດຄ່ອງ,	ຟຟລ, ກອຄ, ຄະນະປະຕິຮູບລັດວິສາຫະກິດຂັ້ນສູນກາງ	ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອສົ່ງເສີມການປະຕິຮູບຂະແໜງພະລັງງານ (ADB)

		ຊ່ວຍເລັ່ງຂະບວນການຈັດຕັ້ງປະຕິບັດ ແລະ ເພີ່ມປະສິດທິຜົນ ໃຫ້ແກ່ ຝຟລ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ທາງດ້ານກົງຈັກການຈັດຕັ້ງ ແລະ ການເງິນ.		
8.	**ປະກາດໃຊ້ກົດໝາຍ/ນິຕິກຳ ທີ່ບັງຄັບໃຫ້ບັນດາຜູ້ສົ່ງອອກໄຟຟ້າຕ້ອງເຊື່ອມເຂົ້າກັບລະບົບສາຍສົ່ງ ຂອງ ຝຟລ ທີ່ໃຫ້ບຸລິມະສິດແກ່ການສະໜອງພາຍໃນ.** ປະກາດໃຊ້ນະໂຍບາຍການສົ່ງອອກໄຟຟ້າແຫ່ງຊາດ ດ້ວຍການບັງຄັບໃຫ້ບັນດາໂຄງການໄຟຟ້າທີ່ຜະລິດເພື່ອສົ່ງອອກທັງໝົດ ຕ້ອງໄດ້ເຊື່ອມເຂົ້າກັບລະບົບສາຍສົ່ງ ຂອງ ຝຟລ, ສ້າງໃຫ້ລະບົບມີຄວາມໂປ່ງໃສ, ເຊື່ອມໂຍງລະບົບສາຍສົ່ງໄຟຟ້າ ແລະ ລະບົບຕິດຕາມກວດກາການປະຕິບັດງານ ແລະ ການຊື້-ຂາຍໄຟຟ້າ. ຂໍ້ລິເລີ່ມດັ່ງກ່າວນີ້ ຈະຊ່ວຍຮັບປະກັນການສະໜອງໃຫ້ແກ່ການຊົມໃຊ້ພາຍໃນ, ຍົກລະດັບການປະສານງານ ແລະ ເຮັດໃຫ້ການສົ່ງອອກກະແສໄຟຟ້າ ສອດຄ່ອງກັບບຸລິມະສິດແຫ່ງຊາດ.	ບັນດາໂຄງການທີ່ຜະລິດເພື່ອສົ່ງອອກ ເປັນບັນຫາຂໍ້ຈຳກັດໜຶ່ງທີ່ເຮັດໃຫ້ ຝຟລ ບໍ່ສາມາດຄວາມຄຸມສະພາບຄ່ອງທາງດ້ານການເງິນ ແລະ ການບໍລິຫານຄຸ້ມຄອງກະແສໄຟຟ້າ; ບັນດາສັນຍາສອງຝ່າຍ ຍັງບໍ່ສາມາດຕິດຕາມກວດກາການປະຕິບັດຕາມສັນຍາ; ໜ້າທີ່ຄວາມຮັບຜິດຊອບ ຍັງກະ ແຈກກະຈາຍຢູ່ ກັບແຕ່ລະພາກສ່ວນ; ການແຍກບົດບາດລະຫວ່າງ EDL-Gen/ EDL-T/ ຝຟລ ເຮັດໃຫ້ກົນໄກການປະສານງານ ຂາດປະສິດທິຜົນ ກວ່າເກົ່າ.	ກອຄ, ຝຟລ, ກງ	
9.	**ພັດທະນາກົນໄກການຄຸ້ມຄອງຊັບສິນແຫ່ງຊາດ ເພື່ອຮັບປະກັນການຊົມໃຊ້ບັນດາຊັບສິນ ພາຍຫຼັງທີ່ຖືກມອບ-ໂອນ ໃຫ້ມີປະສິດທິຜົນສູງ.** ພັດທະນາຂອບວຽກ ການບໍລິຫານຄຸ້ມຄອງວຽກງານໃຫ້ເປັນມາດຕະຖານດຽວກັນ ໃນການປະເມີນບັນດາຊັບສົມບັດ ຢ່າງຕໍ່ເນື່ອງ ພາຍຫຼັງທີ່ມີການມອບໂອນກັບຄືນ, ກຳນົດການຈັດແບ່ງຢ່າງຍຸຕິທຳ ລະຫວ່າງ ການສົ່ງອອກ ແລະ ຄວາມຈຳເປັນໃນການຊົມໃຊ້ພາຍໃນ, ພ້ອມທັງ ນຳໃຊ້ມາດຕະຖານ, ກົນໄກການກຳນົດໂຄງສ້າງລາຄາ ແລະ ຮູບແບບໃນການດຳ	ຂາດລະບົບຄຸ້ມຄອງບັນດາຊັບສົມບັດ ພາຍຫຼັງການມອບໂອນກັບຄືນ; ບໍ່ມີການກຳນົດມາດຖານເງື່ອນໄຂ ເພື່ອເປັນບ່ອນອີງໃຫ້ແກ່ການປະເມີນຜົນ; ຂາດການຄຸ້ມຄອງຮ່ວມ ໃນການຊົມໃຊ້ຊັບສົມບັດດັ່ງກ່າວໃຫ້ມີປະສິດທິຜົນສູງ; ການຕັດສິນໃຈເປັນແຕ່ລະກໍລະນີ ເຮັດໃຫ້ຂາດປະສິດຜົນ ແລະ	ກອຄ, ຝຟລ, ກງ	

	ເນີນງານ ທີ່ໂປ່ງໃສ. ຂໍ້ລິເລີ່ມດັ່ງກ່າວ ນີ້ ຈະຊ່ວຍຮັບປະກັນວ່າ ບັນດາຊັບສິນບັດ ພາຍຫຼັງຖືກມອບໂອນກັບຄືນ ມາແລ້ວ ຈະຖືກນຳໃຊ້ເຂົ້າໃນວຽກ ງານຍຸດທະສາດສຳຄັນຕ່າງໆ ເພື່ອ ສ້າງລາຍຮັບງົບປະມານ, ສ້າງລະບົບ ຕິດຕາມກວດກາຄວາມຄົບໜ້າຂອງ ການດຳເນີນງານ (system reliability) ແລະ ປະສິດທິຜົນຂອງ ການວາງແຜນໄລຍະຍາວ.	ເຮັດໃຫ້ລາຍຮັບງົບ ປະມານຫຼຸດລົງ.		
10.	**ສ້າງລະບຽບການຄຸ້ມຄອງທີ່ເປັນເອກະ ພາບ ໃນການປະເມີນຊັບສິນບັດ ພາຍຫຼັງການມອບ-ໂອນ ຢ່າງເປັນ ລະບົບຕໍ່ເນື່ອງ, ກຳນົດກົນໄກການຈັດ ສັນ ລະຫວ່າງຄວາມຈຳເປັນສຳລັບພາຍ ໃນ ແລະ ເພື່ອສົ່ງອອກ ແລະ ບົນ ຫຼັກການທີ່ໂປ່ງໃສ, ຫຼັກການດ້ານ ລາຄາ ແລະ ຮູບແບບການດຳເນີນການ.** ຂໍ້ລິເລີ່ມດັ່ງກ່າວນີ້ ຈະຊ່ວຍຮັບປະກັນ ວ່າ ຊັບສິນ/ຊັບສິນບັດ ທີ່ໄດ້ມາຈາກ ການມອບນັ້ນ ຖືກນຳໃຊ້ຢ່າງເກີດ ປະໂຫຍດສູງສຸດ ໃນການລາຍຮັບ ງົບປະມານປະຈຳປີ, ຊ່ວຍສ້າງຄວາມ ໜ້າເຊື່ອຖື ແລະ ຮັບປະກັນໃຫ້ແກ່ ການວາງແຜນໄລຍະຍາວມີປະສິດທິ ຜົນສູງ.	ບັນດາຊັບສິນພາຍຫຼັງທີ່ ຖືກມອບ-ໂອນຍັງຂາດ ການຄຸ້ມຄອງທີ່ເປັນ ເອກະພາບ; ບໍ່ ມີ ມາດຖານໃນການປະ ເມີນຜົນ; ມີຂໍ້ຈຳກັດ ດ້ານລະບຽບຫຼັກ ການ ລວມ ໃນຄຸ້ມຄອງຊັບ ສິນເຫຼົ່ານັ້ນ; ການຕັດ ສິນເປັນແຕ່ລະກໍລະນີ ພາໃຫ້ຂາດປະສິດທິຜົນ ແລະ ການເກັບລາຍຮັບ ງົບປະມານຫຼຸດລົງ.	ກອຄ, ຝຝລ	
11.	**ການຈຳແນກລະຫວ່າງນະໂຍບາຍດ້ານ ການຕະຫຼາດ, ຜູ້ດຳເນີນງານ ແລະ ການບັງຄັບໃຊ້ນິຕິກຳ ໃນການສ້າງ ຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງ ແລະ ເພີ່ມຄວາມໂປ່ງໃສ** ການກຳນົດພາລະບົດບາດ ໂດຍ ການຈຳແນກລະຫວ່າງນະໂຍບາຍດ້ານ ການຕະຫຼາດ, ຜູ້ດຳເນີນງານ ແລະ ການບັງຄັບໃຊ້ນິຕິກຳ ຈະຊ່ວຍ ໃຫ້ການຕົກລົງຕັດສິນບັນຫາມີຄວາມ ແນ່ນອນ, ການອອກອະນຸຍາດມີ ຄວາມເປັນເອກະພາບ ແລະ ໂຄງສ້າງ ລາຄາໄຟຟ້າມີຄວາມໂປ່ງໃສກວ່າເກົ່າ ແລະ ທັງຮັບປະກັນດ້ານຄວາມ	ພາລະບົດບາດທີ່ຊ້ຳຊ້ອນ ກັນລະຫວ່າງບັນດາຂະແ ໜງການ ເຮັດໃຫ້ການ ອອກອະນຸຍາດຕ່າງໆບໍ່ ມີຄວາມເປັນເອກະພາບ, ຂາດຄວາມແນ່ນອນ ແລະ ຂາດຄວາມເປັນ ເອກະລາດ ທີ່ກົດໝາຍ ກຳໃຫ້; ການຕິດຕາມ ກວດກາ ທີ່ບໍ່ເຂັ້ມແຂງ ແລະ ການຂາດຄວາມ ອາດສາມາດໃນການປະ ເມີນໂຄງປະກອບສ້າງ ລາຄາໄຟຟ້າ ຍິ່ງເປັນ	ຝຝລ, ກອຄ	ການຊ່ວຍເຫຼືອທາງ ດ້ານວິຊາການ ເພື່ອ ສົ່ງເສີມການປະຕິ ຮູບຂະແໜງພະລັງ ງານ (ADB)

	ສອດຄ່ອງ. ຂໍ້ລິເລີ່ມດັ່ງກ່າວນີ້ ຈະຊ່ວຍສ້າງພື້ນຖານ ໃຫ້ແກ່ການຫັນເປັນກົງຈັກການຈັດຕັ້ງບໍລິຫານທີ່ທັນສະໄໝ ທີ່ມີຄວາມແນ່ນອນ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ລົງທຶນ.	ສາເຫດເຮັດໃຫ້ ການ ບໍ ລິ ຫານ ຄຸ ້ ມ ຄອງ ບໍ່ ເຂັ້ ມ ແຂງ.		
ແຜນວຽກຈຸດສຸມ ທີ II: ອຸດສາຫະກຳບໍ່ແຮ່		1. ຂະແໜງບໍ່ແຮ່ ຂະຫຍາຍຕົວສະເລ່ຍ 2.3% ຕໍ່ປີ. 2. 50% ຂອງບັນດາໂຄງການຂຸດຄົ້ນແຮ່ທາດທີ່ໄດ້ຮັບອະນຸຍາດໃໝ່ ສອດຄ່ອງກັບມາດຕະຖານດ້ານເຕັກນິກ, ສິ່ງແວດລ້ອມ ແລະ ສັງຄົມ 3. ສຳເລັດການສຶກສາຄວາມເປັນໄປໄດ້ ໃນການສ້າງຕັ້ງໂຮງງານແຍກແຮ່ທາດ 2 ແຫ່ງ		
ລ/ດ	**ມາດຕະການຈັດຕັ້ງປະຕິບັດ**	**ສິ່ງທ້າຍທາຍ**	**ພາກສ່ວນຮັບຜິດຊອບຫຼັກ**	**ພາກສ່ວນສະໜັບສະໜຸນ**
1.	**ສຳເລັດການອອກແຜນທີ່ດ້ານທໍລະນີສາດແຮ່ທາດໃນຂອບເຂດທົ່ວປະເທດ** ຊຶ່ງມີຄວາມຈຳເປັນຕ້ອງໄດ້ຈັດສັນງົບປະມານຈາກພາຍໃນ ແລະ ສາ ກົນ ເຂົ້າໃນການສ້າງແຜນທີ່ທໍລະ ນີ ສາດແຮ່ທາດ ໃນມາດຕາສ່ວນ 1:200,000 ໃຫ້ສຳເລັດ ພ້ອມທັງ ຮີບຮ້ອນສ້າງແຜນທີ່ດ້ານທໍລະນີສາດ ແຮ່ ທາດ ໃນ ມາດ ຕາ ສ່ ວນ 1:50,000 ໃນເຂດທີ່ເປັນບຸລິມະສິດໃຫ້ສຳເລັດໂດຍໄວ, ສ້າງຖານຂໍ້ມູນແຫ່ງຊາດ ດ້ານຊັບພະຍາກອນທຳມະຊາດ ຢ່າງເປັນລະບົບຄົບຊຸດ ແລະ ເຊື່ອຖືໄດ້.	ຂໍ້ ຈຳ ກັ ດ ດ້ ານ ງົ ບ ປ ະ ມ ານ; ການ ສ ້ າ ງ ແ ຜ ນ ທ ີ ່ ດ ້ ານ ທ ໍ ລ ະ ນ ິ ສ າ ດ ໃ ຊ ້ ງ ົ ບ ປ ະ ມ ານ ລ ົ ງ ທ ຶ ນ ສ ູ ງ; ຕ ້ ອ ງ ເ ພ ິ ່ ງ ພ າ ອ າ ໄ ສ ຊ ່ ຽ ວ ຊ ານ ຕ ່ າ ງ ປ ະ ເ ທ ດ.	ກທບ	ການ ຊ ່ ວ ຍ ເ ຫ ຼ ື ອ ທ າ ງ ດ ້ ານ ວ ິ ຊ າ ການ ເ ພ ື ່ ອ ສ ົ ່ ງ ເ ສ ີ ມ ການ ປ ະ ຕ ິ ຮ ູ ບ ຂ ະ ແ ໜ ງ ພ ະ ລ ັ ງ ງ ານ (ADB)
2.	**ສ້າງຄວາມເຂັ້ມແຂງ ດ້ານການຄຸ້ມຄອງແຮ່ທາດ ແລະ ການບັງຄັບໃຊ້ກົດໝາຍ, ຊຶ່ງເຫັນຄວນເລີ່ມຈາກແຮ່ທາດບຸລິມະສິດ (ບົກຊິດ, ໂປຕາສ, ຄຳ/ທອງ, ແຮ່ຫາຍາກ)** ດ້ວຍການນຳໃຊ້ລະບົບການອອກອະນຸຍາດລົງທຶນ ທີ່ມີຄວາມໂປ່ງໃສ, ສ້າງກົນໄກການ ຄັດເລືອກນັກລົງທຶນທີ່ມີຄຸນນະພາບ, ກຳນົດເງື່ອນໄຂ ໃນການຄັດເລືອກຜູ້ ລົງທຶນ ໂດຍອີງໃສ່ຫຼັກການ ESG, ການຄັດເລືອກການລົງທຶນຄຸນນະພາບ ສູງ ຜ່ານຂະບວນການປັບປຸງ ການ	ຂ ະ ບ ວ ນ ກ ານ ອ ອ ກ ອ ະ ນ ຸ ຍ າ ດ ຍ ັ ງ ບ ໍ ່ ທ ັ ນ ເ ປ ັ ນ ເ ອ ກ ະ ພ າ ບ ແ ລ ະ ກ ະ ແ ຈ ກ ກ ະ ຈ າ ຍ; ການ ກ ຳ ນ ົ ດ ພ ັ ນ ທ ະ ຂ ອ ງ ນ ັ ກ ລ ົ ງ ທ ຶ ນ ຍ ັ ງ ບ ໍ ່ ທ ັ ນ ຈ ະ ແ ຈ ້ ງ; ການ ໂ ຈ ະ ການ ອ ອ ກ ອ ອ ກ ອ ະ ນ ຸ ຍ າ ດ ເ ປ ັ ນ ການ ຈ ຳ ກ ັ ດ ການ ເ ຂ ົ ້ າ ມ າ ຂ ອ ງ ການ ລ ົ ງ ທ ຶ ນ ທ ີ ່ ດ ີ; ການ ບ ັ ງ ຄ ັ ບ ໃ ຊ ້ ກ ົ ດ ໝ າ ຍ ແ ລ ະ ຄ ວ າ ມ ອ າ ດ ສ າ ມ າ ດ	ກທບ, ກອປ, ຄລທ, ກງ,	

	ອອກອະນຸຍາດ, ການທົບທວນຄືນນະໂຍບາຍການສ້າງມູນຄ່າເພີ່ມ ແລະ ດ້ານລາຍຮັບງົບປະມານ ພ້ອມທັງມີໜ່ວຍງານທີ່ເຮັດໜ້າທີ່ຮັບຜິດຊອບອອກອະນຸຍາດສະເພາະວຽກດັ່ງກ່າວ ແລະ ຕ້ອງນຳໃຊ້ລະບົບຕິດຕາມກວດກາແບບດິຈິຕອນ/ທັນສະໄໝ ເພື່ອຮັບປະກັນໃຫ້ແກ່ການປະຕິບັດກົດໝາຍຢ່າງເຂັ້ມງວດ ແລະ ເປັນເອກະພາບໃນທົ່ວປະເທດ.	ໃນການຕິດຕາມກວດກາຍັງອ່ອນ; ນະໂຍບາຍທາງດ້ານການເງິນ ຫຼ້າຫຼັງ; ຂາດລະບົບຕິດຕາມກວດກາການອອກອະນຸຍາດທີ່ທັນສະໄໝ; ການຊ້ຳຊ້ອນກັນຂອງພາລະບົດບາດລະຫວ່າງຂະແໜງການ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ; ຂາດປະສົບການໃນການຕິດຕາມກວດກາ ປະເມີນຄວາມສອດຄ່ອງດ້ານການຄຸ້ມຄອງ, ສະພາບແວດລ້ອມ ແລະ ສັງຄົມ ຕາມຫຼັກການ ESG.		
3.	**ຍົກລະດັບການຄຸ້ມຄອງ ສິ່ງແວດລ້ອມ ແລະ ສັງຄົມ** ໂດຍການບັງຄັບໃຊ້ຫຼັກການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESI) ໃຫ້ເປັນພັນທະຂອງຜູ້ລົງທຶນ, ພັດທະນາກົນໄກເຮັດວຽກຮ່ວມກັນໃນການປະເມີນ ESG ໂດຍເລີ່ມຈາກແຮ່ທາດຍຸດທະສາດ, ດຳເນີນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສຳລັບກິດຈະກຳຂຸດຄົ້ນ, ແກ້ໄຂຊ່ອງຫວ່າງດ້ານຄວາມອາດສາມາດ ໃນການຕິດຕາມກວດກາບັນດາຂະແໜງການກ່ຽວຂ້ອງ, ນຳໃຊ້ກົນໄກການຄຸ້ມຄອງຕິດຕາມກວດກາທີ່ເໝາະສົມ ແລະ ເພີ່ມທະວີການຮ່ວມມື ກັບບັນດາຄູ່ຮ່ວມມື ໃນວຽກການຄຸ້ມຄອງກິດຈະກຳຂຸດຄົ້ນແຮ່ທາຍາກ ແລະ ໂຄງການຂຸດຄົ້ນແຮ່ທາດຕົວແບບ ເພື່ອຮັບປະກັນໃຫ້ການພັດທະນາ ເກີດຜົນກະທົບດ້ານດີ, ມີຄວາມສ່ຽງຕ່ຳ.	ການປະຕິບັດນິຕິກຳ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມ ຍັງອ່ອນ; ຄວາມອາດສາມາດທາງດ້ານເຕັກນິກວິຊາການ ໃນການຕິດຕາມກວດກາສະພາບແວດລ້ອມ ຍັງບໍ່ທັນເຂັ້ມແຂງ; ຍັງບໍ່ທັນມີໂຄງການຕົວແບບທີ່ດີດ້ານ ESG; ການພັດທະນາໂຄງການຂຸດຄົ້ນແຮ່ຫາຍາກ ຍັງຂາດເຕັກນິກທີ່ແນ່ນອນ;	ກທບ, ກນຜປ, ກອປ, ກມອ, ກົມວິຊາການທີ່ກ່ຽວຂ້ອງ, ກສລ	

4.	**ຍົກລະດັບການຄຸ້ມຄອງຂໍ້ມູນ ແລະ ເພີ່ມຄວາມໂປ່ງໃສ** ດ້ວຍການສ້າງຖານຂໍ້ມູນລວມສູນ ໃນການເກັບກຳຂໍ້ມູນດ້ານການຜະລິດ, ຝັນທະດ້ານການເງິນ ແລະ ຄຸ້ມຄອງບັນດາໂຄງ ການທີ່ໄດ້ຮັບການສຳປະທານ, ແລະ ສ້າງຖານຂໍ້ມູນອອນລາຍດ້ານແຮ່ທາດ ທີ່ສັງລວມ ແລະ ຂໍ້ມູນກ່ຽວກັບທໍລະ ນີສາດເຂົ້າໃນລະບົບດີຈີຕອນ ທີ່ສາ ມາດເປັນບ່ອນອີງໃຫ້ແກ່ການຕົກລົງ ຕັດສິນບັນຫາ, ເພື່ອຫຼຸດຜ່ອນການຊ້ຳ ຊ້ອນ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ ນັກລົງທຶນ.	ຂາດພື້ນຖານໂຄງລ່າງ ດ້ານດີຈີຕອນ; ການ ເກັບຂໍ້ມູນກ່ຽວກັບທໍ ລະນີວິທະຍາຫຼ້າຫຼັງ ຫຼື ບໍ່ສາມາດເຂົ້າເຖິງໄດ້; ຂາດລະບົບການລາຍ ງານທີ່ເປັນເອກະພາບ; ການແລກປ່ຽນຂໍ້ມູນ ເຊິ່ງກັນລະຫວ່າງລະ ຫວ່າງພາກສ່ວນກ່ຽວ ຂ້ອງ ທັງສູນກາງ ແລະ ທ້ອງຖິ່ນຍັງເຮັດບໍ່ທັນ ໄດ້ດີ; ຄວາມໂປ່ງໃສ ຍັງບໍ່ ທັນຮັບປະກັນ ເຮັດໃຫ້ ນັກລົງທຶນ ຂາດຄວາມເຊື່ອໝັ້ນ.	ກທບ	ການຊ່ວຍເຫຼືອທາງ ດ້ານວິຊາການ ຈາກ ບັນດາຄູ່ຮ່ວມ ພັດທະນາ
5.	**ທົບທວນ ແລະ ປັບປຸງສັນຍາສຳປະ ທານໃຫ້ມີຄວາມໂປ່ງໃສ**ນັ້ນ ຕ້ອງໄດ້ ປັບປຸງຂະບວນການພິຈາລະນາຕົກລົງ ໃຫ້ສິດສຳປະທານ ແກ່ບັນດາໂຄງການ ອານຸມັດໃໝ່ຢ່າງໂປ່ງໃສ, ກຳນົດຜັນ ທະທາງດ້ານການເງິນທີ່ເປັນມາດ ຕະ ຖານ, ນຳໃຊ້ສັນຍາໃຫ້ສິດສຳປະທານ ທີ່ມີຄວາມແນ່ນອນ ໂດຍສະເພາະ ບັນດາໂຄງການແຮ່ທາດທີ່ເປັນຍຸດທະ ສາດສຳຄັນ ແລະ ສ້າງຄວາມເຂັ້ມແຂງ ໃຫ້ພະນັກງານຂອງ ກະຊວງ ອຄ ໃນ ການຕິດຕາມ ກວດກາ ການປະຕິບັດ ຜັນທະ ແລະ ຂໍ້ກຳນົດຕ່າງໆ ຢ່າງເປັນ ເອກະພາບໃນທົ່ວຂະແໜງການ.	ຂາດຄວາມແນ່ນອນ ສຳລັບຜູ້ລົງທຶນ ເນື່ອງ ຈາກມີການປ່ຽນແປງ ດ້ານນະໂຍບາຍເລື້ອຍ ໆ; ຂາດການກຳນົດ ຜັນທະທາງດ້ານການ ເງິນໄລຍະຍາວ; ກົນ ໄກການສ້າງຄວາມ ເຂັ້ມແຂງ ແລະ ການ ຝຶກອົບຮົມຍັງກະແຈກ ກະຈາຍ ປະຕິບັດພໍໃຜ ລາວ.	ກທບ, ຄລທ	
6.	**ສົ່ງເສີມການປຸງແຕ່ງອຸດສາຫະກຳຕໍ່ ເນື່ອງ ແລະ ການສ້າງມູນຄ່າເພີ່ມ ຜ່ານ ການສ້າງກຸ່ມຜູ້ຜະລິດແຮ່ທາດ** ດ້ວຍ ການສ້າງຂອບນະໂຍບາຍຊຸກຍູ້ສົ່ງເສີມ ຂອງລັດຖະບານ ສຳລັບແຮ່ທາດຍຸດ ທະສາດສຳຄັນ ເປັນຕົ້ນການສ້າງເຂດ ເສດຖະກິດພິເສດ/ເຂດນິຄົມອຸດສາຫະ ກຳ ສຳລັບການປຸງແຕ່ງແຮ່ໂປຕັສ ໃຫ້ ເປັນຝຸ່ນວິທະຍາສາດ ແລະ ປຸງແຕ່ງ ບັກຊິດ ຮັບໃຊ້ໃຫ້ແກ່ການຜະລິດອາລູ ມິນາ ແລະ ຝັດທະນາລະບົບຄ່ຽນຖ່າຍ	ຂາດຄວາມສາມາດໃນ ການປຸງແຕ່ງພາຍໃນ ແລະ ການເຊື່ອມສານ ກັນລະຫວ່າງ ໂຄງການ ຂຸດຄົ້ນແຮ່ທາດ ແລະ ບັນດາອຸດສາຫະກຳປຸງ ແຕ່ງແຮ່ທາດຕ່າງໆຂອງ ພາຍໃນ; ນະໂຍບາຍ ການຊຶດເຊີຍຍັງບໍ່ ທັນ ພຽງພໍ ຊຶ່ງເຮັດໃຫ້ຂາດ ຄວາມແນ່ນອນສຳລັບຜູ້	ກທບ, ຫອຄ, ກອປ, ກພງ, ກຈຣ, ກຄຜນ, ກຈນກ, ກຄວ	ກຄຕ, ກຕປ

	ສິນຄ້າ/ໂລຊິດສະຕິກຂອງແຕ່ລະເຂດແຄວ້ນ ເພື່ອຊຸກຍູ້ສິ່ງເສີມການເຂົ້າເຖິງວັດຖຸດິບທີ່ສຳຄັນ ແລະ ຕະຫຼາດສົ່ງອອກ.	ລົງທຶນ; ຄວາມພ້ອມຂອງເຂດເສດຖະກິດພິເສດ SEZ ຍັງບໍ່ທັນຮັບປະກັນ; ຍັງເອື່ອຍອີງໃສ່ການນຳເຂົ້າວັດຖຸດິບ (ເປັນຕົ້ນ ທາດເຄມີ caustic soda ສຳລັບການຜະລິດອາລູມິນາ; ທາດເຄມີ N ແລະ P ສຳລັບການຜະລິດຝຸ່ນວິທະຍາສາດ); ການອຳນວຍຄວາມສະດວກທາງດ້ານການຄ້າຂ້າມແດນ ຍັງເຮັດບໍ່ທັນໄດ້ດີ.		
ແຜນແຜນວຽກຈຸດສຸມທີ III: ອຸດສາຫະກຳປຸງແຕ່ງ		1. ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ຂະຫຍາຍຕົວສະເລ່ຍ 13 ຕໍ່ປີ, ປະກອບສ່ວນໃນລວມຍອດຜະລິດຕະພັນພາຍໃນ ຫຼື GDP ກວມ 12.21%. 2. ມູນຄ່າການສົ່ງອອກຜະລິດຕະພັນອຸດສາຫະກຳປຸງແຕ່ງ ຂະຫຍາຍຕົວສະເລ່ຍ 15 ເປີເຊັນຕໍ່ປີ		
ລ/ດ	**ມາດຕະການຈັດຕັ້ງປະຕິບັດ**	**ສິ່ງທ້າທາຍ**	**ພາກສ່ວນຮັບຜິດຊອບຫຼັກ**	**ພາກສ່ວນສະໜັບສະໜຸນ**
1.	**ສ້າງຄວາມເຂັ້ມແຂງໃຫ້ແກ່ການເຊື່ອມສານ ແລະ ການຮ່ວມມື ກັບຄູ່ຮ່ວມພັດທະນາຂອງພາກພື້ນ ແລະ ສາກົນ** ໂດຍການເສີມຂະຫຍາຍການຮ່ວມມືດ້ານອຸດສາຫະກຳ, ການຖ່າຍທອດເຕັກໂນໂລຊີ, ການພັດທະນາທັກສະທັງໃນກອບສອງຝ່າຍ ແລະ ຫຼາຍຝ່າຍ ແລະ ການພັດທະນາອຸດສາຫະກຳທີ່ມີຄວາມຮັບຜິດຊອບຕໍ່ສະພາບແວດລ້ອມ ແລະ ສັງຄົມ ບົນຫຼັກການ ESG	ການຮ່ວມມືປະສານງານຍັງບໍ່ທັນໄດ້ທີ່ດີ; ກົນກົນໄກການຖ່າຍທອດເຕັກໂນໂລຊີຍັງອ່ອນ, ການປະສານງານຍັງບໍ່ລວມສູນ.	ກຈຮ, ກມຜປ	ກອປ, ກພງ, ກຈນກ, ກຄຕ, ກຄອ, ຫອຄ, ກງ, ກສລ.
2.	**ປັບປຸງສະພາບແວດລ້ອມໃນການລົງທຶນ ແລະ ເພີ່ມການແກ້ງແຍ້ງແຂ່ງ ຂັນ ຂອງພາກອຸດສາຫະກຳ** ໂດຍການຫຼຸດຜ່ອນຂັ້ນຕອນການຂໍອະນຸ ຍາດ ໃຫ້ສະດວກວ່ອງໄວຂຶ້ນກວ່າເກົ່າ	ການອອກອະນຸຍາດຍັງບໍ່ທັນເປັນເອກະພາບ; ການໃຫ້ນະໂຍບາຍສົ່ງເສີມແບບເລືອກ	ກອປ, ກພງ, ກຄອ	ກທບ, ກຈນກ, ກຄຕ, ຫອຄ, ຄລທ

	ລວມທັງການໃຫ້ນະໂຍບາຍສົ່ງເສີມທີ່ຍຸຕິທຳ ເພື່ອດຶງດູດການລົງທຶນຕ່າງ ປະເທດຄຸນນະພາບສູງ ແລະ ເພີ່ມ ຄວາມໂປ່ງໃສ ດ້ວຍລະບົບຕິດຕາມ ກວດກາທັນສະໄໝ ໃນທົ່ວຂະແໜງ ການ.	ປະຕິບັດ; ຂາດຄວາມ ໂປ່ງໃສ ໃນການສະ ໜອງຂໍ້ມູນດ້ານອຸດສາຫະ ກຳ ແລະ ການອອກ ອະນຸຍາດທີ່ຂາດຄວາມ ແນ່ນອນ ທີ່ບໍ່ສາມາດ ຄາດຄະເນໄດ້.		
3.	**ການປັບປຸງຄຸນນະພາບຖານການຜະລິດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງ ໂສ້ການສະໜອງພາຍໃນ** ໂດຍການ ພັດທະນາເຂດນິຄົມອຸດສາຫະກຳ/ເຂດ ເສດຖະກິດພິເສດ, ເພີ່ມທະວີການ ເຊື່ອມໂຍງກັນລະຫວ່າງ ວິສາຫະກິດ ຈນກ ກັບວິສາຫະກິດຂະໜາດໃຫຍ່ ແລະ ຍົກລະດັບລະບົບຄ່ຽນຖ່າຍ ສິນຄ້າໂລຊິດສະຕິກ ແລະ ການເຊື່ອມ ໂຍງ ເພື່ອຫຼຸດຜ່ອນຄ່າຂົນສົ່ງ.	ບັນຫາພື້ນຖານໂຄງ ລ່າງ; ການເຊື່ອມໂຍງ ກັນຂອງ ວິສາຫະກິດ ຈນກ ຍັງອ່ອນ; ຄ່າ ບໍລິການຄ່ຽນຖ່າຍ ສິນຄ້າຜ່ານລະບົບໂລຊິດ ສະຕິກ ຍັງສູງ; ການ ເຊື່ອມໂຍງ ກັບຕາໜ່າງ ຄົມມະນາຄົມ ຍັງອ່ອນ.	ກອປ, ກຈນກ	ກຄຕ, ກຄວ, ກພງ, ຫອຄ, ກຊ ກງ
4.	**ສົ່ງເສີມອຸດສາຫະກຳປຸງແຕ່ງທີ່ຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ** ໂດຍ ຂະຫຍາຍການນຳໃຊ້ເຕັກໂນໂລຊີ ສະອາດ, ສົ່ງເສີມນະໂນບາຍເປັນມິດ ກັບສິ່ງແວດລ້ອມ, ສັງຄົມ ແລະ ການ ຄຸ້ມຄອງທີ່ດີ (ESG) ແລະ ລະບົບ ການຄວບຄຸມມົນລະພິດ ແລະ ຮັບຮອງມາດຕະຖານສາກົນດ້ານຄຸນ ນະພາບ ແລະ ສິ່ງແວດລ້ອມ	ການປະຕິບັດນະໂຍບາຍ ESG ຍັງອ່ອນ; ຄວາມ ສາມາດໃນການ ຕິດຕາມກວດກາ ຍັງບໍ່ ທັນສູງ; ຂາດຫ້ອງທົດ ລອງທີ່ໄດ້ ຜ່ານການ ຮັບຮອງມາດຕະຖານ	ກພງ, ກອປ	ກທບ, ກຈນກ, ການຜປ, ກສລ
5.	**ເສີມຂະຫຍາຍນະໂຍບາຍພັດທະນາອຸດ ສາຫະກຳ ຕາມທິດສີຂຽວ ຍືນຍົງ** ດ້ວຍການດຳເນີນນະໂຍບາຍອຸດສາຫະ ກຳສີຂຽວ, ສົ່ງເສີມອຸດສາຫະກຳໝູ ນວຽນຢ່າງແຂງແຮງ ແລະ ເສີມ ຂະຫຍາຍລະບົບກວດສອບການປ່ອຍ ສານເຄມີ/ມົນລະພິດ ເພື່ອສ້າງໃຫ້ໄດ້ ອຸດສາຫະກຳສີຂຽວຕົວແບບ	ນະໂຍບາຍສົ່ງເສີມອຸດ ສາຫະກຳໝູນວຽນ ຍັງ ຈຳກັດ; ລະບົບກວດ ສອບລະດັບການປ່ອຍ ມົນລະພິດຫຼ້າຫຼັງ.	ກອປ, ການຜປ,	ກພງ, ກຈນກ, ກທບ, ຫອຄ, ກສລ
6.	**ພັດທະນາອຸດສາຫະກຳຍຸດທະສາດ ແລະ ອຸດສາຫະກຳສະໜັບສະໜຸນ** ໂດຍການໃຫ້ບູລິມະສິດແກ່ຕ່ອງໂສ້ ການຜະລິດ ໃນຂະບວນການປຸງແຕ່ ແຮ່ໂປຕາສ ໃຫ້ກາຍເປັນຝຸ່ນ, ຮັບປະ	ການປະຕິບັດຫຼັກການ ESG ໃນຂົງເຂດຂຸດ ຄົ້ນແຮ່ທາດ ຍັງບໍ່ທັນ ຮັບປະກັນ; ຂາດຍຸດທະ ສາດການຜະລິດອຸດ	ກອປ, ກທບ	ກພງ, ກພນ, ກຄວ, ຫກ, ກະຊວງ ກງ, ກະຊວງ ກສ,

	ກັບໃຫ້ກິດຈະການຂຸດຄົ້ນແຮ່ໂປຕາສ ສອດຄ່ອງກັບ ຫຼັກການ ESG, ສ້າງ ຄວາມອາດສາມາດໃຫ້ແກ່ອຸດສາຫະ ກຳປຸງແຕ່ງຝຸ ນ NPK ແລະ ສ້າງ ພື້ນຖານ ໃຫ້ແກ່ການພັດທະນາອຸດ ສາຫະກຳປຸງແຕ່ງແບບຄົບວົງຈອນ ໃນ ໄລຍະຍາວ.	ສາຫະກຳຫົວອາຫານ ສັດ; ລະບົບຄ່ຽນຖ່າຍ ສິນຄ້າໂລຊິດສະຕິກຍັງ ບໍ່ທັນຄອບຄຸມ; ຄວາມ ແນ່ນອນ ສຳລັບນັກ ລົງທຶ ນ ຍັ ງບໍ່ ທັ ນ ຮັບປະກັນ.		
7.	**ຊຸກຍູ້ສິ່ງເສີມພື້ນຖານອຸດສາຫະກຳພາຍ ໃນ ແລະ ເຂດແຄວ້ນ** ໂດຍການສ້າງ ຄວາມເຂັ້ມແຂງໃຫ້ແກ່ກຸ່ມຜູ້ຜະລິດ ແລະ ປຸງແຕ່ງສິນຄ້າກະສິກຳ ແລະ ຫັດຖະກຳ, ຍົກລະດັບການເຊື່ອມ ຈອດລະຫວ່າງ ເຂດຊົນນະບົດ ກັບ ຕະຫຼາດ ແລະ ສ້າງຄວາມເຂັ້ມແຂງໃຫ້ ແກ່ຫົວໜ່ວຍທຸລະກິດ ຈນກ ຜ່ານ ການພັດທະນາກຸ່ມການຜະລິດ ແລະ ຕ່ອງໂສ້ການຜະລິດ.	ຄວາມອາດສາມາດໃນ ການແກ້ງແຍ້ງແຂ່ງຂັນ ຂອງຫົວໜ່ວຍທຸລະກິດ ຈນກ ຍັງອ່ອນ; ການ ເຂົ້າເຖິງຕະຫຼາດຂອງ ຊົນນະບົດ ຍັງຈຳກັດ; ຍັງບໍ່ທັນສາມາດຫັນເຂົ້າ ສູ່ມາດຕະຖານໄດ້ຢ່າງ ເຕັມສ່ວນ.	ກຈນກ, ກຄຜນ	ກຄຕ, ກຄວ, ກະຊວງ ກງ
ແຜນງານທີ II	**ເພີ່ມທະວີການຄ້າ ແລະ ການເຂົ້າເຖິງ ຕະຫຼາດ**	1. ປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດຢູ່ ສປປ ລາວ ໃນດ້ານຕ່າງໆ ສະແດງອອກໃນບົດລາຍງານ WB's Business Ready Report ຂອງ WB (World Bank) (ມີການປັບປຸງ ດີຂຶ້ນ 10 ສ່ວນຮ້ອຍ ຈາກປີ 2025) 2. ການນຳໃຊ້ເວລາສະເລ່ຍໃນແຈ້ງພາສີ/ດຳເນີນເອກະສານ ໃນ ການນຳເຂົ້າ, ສົ່ງອອກ ແລະ ການຜ່ານແດນສິນຄ້າ ຢູ່ບັນດາ ດ່ານນຳເຂົ້າ-ສົ່ງອອກ (ຫຼຸດລົງ 50 ສ່ວນຮ້ອຍພາຍໃນປີ 2030) 3. ຫຼຸດຜ່ອນເວລາ ໃນການນຳເຂົ້າ ແລະ ສົ່ງອອກ (ຫຼຸດລົງ 25 ສ່ວນຮ້ອຍພາຍໃນປີ 2030) 4. ປັບປຸງ ກົດໝາຍ ວ່າດ້ວຍ ການປົກປ້ອງຊັບສິນທາງປັນຍາ ໃຫ້ ສອດຄ່ອງກັບ WTO-TRIPS 5. ປັບປຸງຂະບວນການ ແລະ ເວລານຳໃຊ້ເຂົ້າໃນການຈົດຊັບສິນ ທາງປັນຍາ ໃຫ້ຫຼຸດລົງ (ຫຼຸດລົງ 25 ສ່ວນຮ້ອຍ ພາຍໃນ 2030) 6. ການນຳໃຊ້ລະບົບ e-filing ເຕັມຮູບແບບ ສຳລັບທະບຽນເຄື່ອງ ໝາຍການຄ້າ ທີ່ສາມາດຍື່ນຄຳຮ້ອງ, ຕິດຕາມຄວາມຄືບໜ້າ ແລະ ການຊຳລະຄ່າບໍລິການຜ່ານລະບົບດັ່ງກ່າວ (ເປີດບໍລິການ ພາຍໃນປີ 2030) 7. ການຍື່ນສະເໜີຄຳຮ້ອງຈົດທະບຽນຊັບສິນທາງປັນຍາ ໂດຍຜູ້ສະ ເໜີພາຍໃນ ແລະ ຕ່າງປະເທດ ເພີ່ມຂຶ້ນ.		

		8. . ການໃຫ້ບໍລິການກວດສອບຢັ້ງຢືນຕາຊັ່ງ-ຕາຊີ່ງເພີ່ມຂຶ້ນ 10 ສ່ວນຮ້ອຍ; ຈຳນວນຂອງຫ້ອງທົດລອງ ທີ່ໄດ້ມາດຕະຖານເພີ່ມຂຶ້ນເປັນເທົ່າຕົວ (ໂດຍສະເພາະສຳລັບສິນຄ້າປະເພດອາຫານ/ກະສິກຳ) 9. ຂະຫຍາຍຕະຫຼາດສິ່ງອອກສິນຄ້າຜ່ານສັນຍາການຄ້າ ແລະ ສິດທິພິເສດດ້ານການຄ້າ ພາຍໃນປີ 2030. 10. ສ້າງຄວາມເຂັ້ມແຂງໃນ ດ້ານການເຈລະຈາການຄ້າ ແລະ ການບັງຄັບໃຊ້ສັນຍາ ພາຍໃນປີ 2030.		
ແຜນວຽກຈຸດສຸມທີ I: ປັບປຸງນະໂນບາຍການຄ້າ		• ປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດຢູ່ ສປປ ລາວ ໃນດ້ານຕ່າງໆ ສະແດງອອກໃນບົດລາຍງານ WB's Business Ready Report ຂອງ WB (World Bank) (ມີການປັບປຸງດີຂຶ້ນ 10 ສ່ວນຮ້ອຍ ຈາກປີ 2025) • ການນຳໃຊ້ເວລາສະເລ່ຍໃນການດຳເນີນການນຳເຂົ້າ, ສິ່ງອອກ ແລະ ການຜ່ານແດນສິນຄ້າ ຢູ່ບັນດາດ່ານນຳເຂົ້າ-ສິ່ງອອກ (ຫຼຸດລົງ 50 ສ່ວນຮ້ອຍພາຍໃນປີ 2030) • ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ໃນການນຳເຂົ້າ ແລະ ສິ່ງອອກສິນຄ້າ (ຫຼຸດລົງ 25 ສ່ວນຮ້ອຍພາຍໃນປີ 2030).		
ລ/ດ	**ມາດຕະການ**	**ສິ່ງທ້າທາຍ**	**ໜ່ວຍງານຮັບຜິດຊອບຫຼັກ**	**ໜ່ວຍງານສະໜັບສະໜຸນ**
1.	ຫຼຸດຜ່ອນ ຫຼື ລົບລ້າງອັດຕາພາສີ, ຈັດລຽງຄວາມສຳຄັນ ຂອງ ອັດຕາພາສີ.	ຂະບວນການແຈ້ງເສຍພາສີສັບສົນ ຜ່ານຫຼາຍຂັ້ນຕອນ;	ກຈຮ	ກອປ, ກຄຕ, ກນຜປ, ກມວ, ກຄວ, ຫອຄ, ຄລທ, ກຕປ, ກງ
2.	ນຳໃຊ້ລະບົບແຈ້ງເສຍພາສີແບບດິຈິຕອນ ແລະ ການແຈ້ງຜ່ານລະບົບ single-window ເພື່ອປະກອບເອກະສານແບບອອນລາຍ, ເພີ່ມຄວາມໂປ່ງໃສ, ແລະ ຫຼຸດຜ່ອນເວລາໃນການແຈ້ງພາສີ.	ການແຈ້ງພາສີບໍ່ສາມາດຄາດເດົາໄດ້.	ກຄຕ	ກງ
3.	ເຮັດໃຫ້ ຂະບວນການອະນຸມັດດ້ານມາດຕະການທີ່ບໍ່ແມ່ນພາສີ (NTMs) ໃຫ້ມີຄວາມກະທັດຮັດຂຶ້ນກວ່າເກົ່າ	ການອອກອະນຸຍາດຊ້ຳຊ້ອນຫຼາຍຂັ້ນຕອນ; NTMs ມີຫຼາຍຂໍ້ຮຽກຮ້ອງທີ່ຫຼາກຫຼາຍ ທີ່ແຕກຕ່າງກັນ; ສ້າງພາລະຄ່າໃຊ້ຈ່າຍທີ່ສູງ.	ກຈຮ	ກມວ, ກນຜປ, ຫອຄ, ກສລ, ຄລທ, ກຕປ, ກຄຕ

4.	ຍົກລະດັບການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຄ້າຊາຍແດນໃຫ້ມີປະສິດທິຜົນສູງ ໂດຍການ ເຮັດໃຫ້ຂະບວນການອອກອະ ນຸຍາດສະດວກຂຶ້ນກວ່າເກົ່າ, ຍົກລະດັບການຮ່ວມມື ຂອງບັນດາດ່ານ ແລະ ນຳໃຊ້ຂະບວນການກວດສອບຮ່ວມກັນ ລວມທັງລະບົບຕິດຕາມ ກວດກາສິນຄ້າ ເພື່ອຫຼຸດຜ່ອນຄວາມອຶດອາດຊັກຊ້າ.	ການອອກອະນຸຍາດຜ່ານຫຼາຍຂັ້ນຂອດ; ການຄຸ້ມຄອງຊາຍແດນທີ່ຍັງກະແຈກກະຈາຍ; ໃຊ້ເວລາຍາວ ໃນການພິຈາລະນາອະນຸມັດ.	ກຄຕ	ກມອ, ການຜປ, ຫອຄ, ກສລ, ຄລທ, ກຕປ, ກຈຣ
5.	ຍົກສູງການນຳໃຊ້ເຄື່ອງມື ແລະ ການບໍລິການຜ່ານລະບົບດິຈິຕອນ ໂດຍການນຳໃຊ້ ລະບົບອອກການຢັ້ງຢືນແຫຼ່ງກຳເນີດສິນຄ້າທາງອອນລາຍ (e-certificates of origin), ການອອກໃບຮຽກເກັບເງິນ (e-in voicing) ແລະ ລະບົບການຊຳລະສະສາງຜ່ານລະບົບດິຈິຕອນ (e-pay ment).	ການນຳໃຊ້ລະບົບທັນສະໄໝ ຍັງມີໜ້ອຍ; ການຫັນເປັນລັດຖະບານທັນສະໄໝ ຍັງບໍ່ທັນຊັດເຈນ; ການບໍລິການຍັງບໍ່ຄ່ອງຕົວ-ລວມທັງຄວາມພ້ອມດ້ານການຄ້າ.	ກຄຕ, ຄອຄຊ	
6.	ຍົກລະດັບການເຊື່ອມໂຍງໃຫ້ເລິກເຊິ່ງກວ່າເກົ່າ ດ້ວຍການເຈລະຈາສັນຍາການຄ້າພາກພື້ນ ແລະ ສອງຝ່າຍ ກັບ ລາຊະອານາຈັກໄທ, ຫວຽດນາມ, ຈີນ ແລະ ອາຊຽນ.	ຂາດສົນທິສັນຍາສະເພາະ;	ກຈຣ	ກມອ, ກຄຜນ, ຫ້ອງການກະຊວງ, ກຄຕ, ກຕປ
7.	ການເຊື່ອມໂຍງທາງດ້ານມາດຖະຖານ, ລະບົບການຢັ້ງຢືນ ແລະ ເອກະສານ ການແຈ້ງພາສີ ທີ່ ເປັນເອກະພາບ ເພື່ອອຳນວຍສະດວກໃຫ້ແກ່ການຄ້າຝຸ່ນ, ແຮ່ທາດ ແລະ ຜະລິດພັນຍຸດທະສາດອື່ນໆ.	ມາດຕະຖານແຕກຕ່າງກັນ; ຂາດຫ້ອງທົດລອງກວດສອບຢັ້ງຢືນທີ່ເຊື່ອຖືໄດ້	ກມອ	
8.	ຍົກລະດັບ ລະບົບໂລຊິດສະຕິກ ແລະ ການເຊື່ອມໂຍງເຊື່ອມຈອດຂ້າມແດນ ໂດຍການເຂັ້ມງວດຜັນບັງຄັບໃຊ້ MOUs ລະບຽງການຄ້າລະຫວ່າງປະເທດ, ຍົກລະດັບການເຊື່ອມໂຍງຂອງຕາໜ່າງຄົມມະນາຄົມຂົນສົ່ງທີ່ ຫຼາກຫຼາຍ ແລະ ພັດທະນາເຂດ/ສູນ ໂລຊິດສະຕິກ ຫຼື ກະຈາຍສິນຄ້າ ໃກ້ກັບບັນດາເຂດເສດຖະກິດພິເສດ ເພື່ອ	ຄ່າບໍລິການດ້ານໂລຊິດສະຕິກ ຍັງສູງ; ການເຊື່ອມຈອດຂອງຕາໜ່າງຄົມມະນາຄົມຍັງອ່ອນ; ຂາດລະບົບໂລຊິດສະຕິກຄົບວົງຈອນ	ກຄຕ, ຄອຄຊ	ກຈຣ, ຕປທ, ຫ້ອງການເຂດເສດຖະກິດພິເສດ, ຫ້ອງການກະຊວງ

	ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍໃນ ການຂົນສົ່ງ.			
9.	ຍົກລະດັບການເພີ່ມມູນຄ່າໃນຕ່ອງໂສ້ ການສະໜອງດ້ານອຸດສາຫະກຳ ດ້ວຍ ການອຳນວຍຄວາມສະດວກໃຫ້ແກ່ ການນຳເຂົ້າສິນຄ້າວັດຖຸດິບ (ເຊັ່ນ: ໄນໂຕຣເຈນ ແລະ ຝິດສະຟັດ, ທາດ ເລັ່ງປະຕິກິລິຍາ ທາດທົດສອບ) ຮັບ ໃຊ້ໃຫ້ແກ່ອຸດສາຫະກຳ ແລະ ເຮັດ ໃຫ້ວຽກງານອຳນວຍຄວາມສະດວກ ທາງດ້ານການຄ້າ ກັບວຽກງານການ ພັດທະນາເຂດເສດຖະກິດພິເສດ ແລະ ເຂດນິຄົມອຸດສາຫະກຳ ມີຄວາມ ກົມກຽວໄປດ້ວຍກັນ ເພື່ອຮັບປະກັນ ໃຫ້ແກ່ການເຊື່ອມໂຍງທາງດ້ານການ ບໍລິການຄ່ຽນຖ່າຍສິນຄ້າ ແລະ ການ ແຈ້ງເສຍພາສີ.	ຂະບວນການນຳເຂົ້າ ສິນຄ້າວັດຖຸດິບສຳຄັນ ຍັງໃຊ້ເວລາດົນ; ຂາດ ການປະສານທີ່ດີລະ ຫວ່າງບັນດາຫ້ອງການ ພາສີປະຈຳເຂດເສດຖະ ກິດພິເສດ	ກຈຮ, ກຄຕ, ຄອຄຊ	
10.	ເຮັດໃຫ້ລະບົບນິຕິກຳມີຄວາມສອດ ຄ່ອງ ແລະ ໂປ່ງໃສ ໂດຍການດຳເນີນ ການປະເມີນຜົນກະທົບທາງດ້ານນິຕິ ກຳ (RIAs) ກ່ອນປະກາດໃຊ້ບັນດາ ນິຕິກຳຄຸ້ມຄອງວຽກງານການຄ້າ ແລະ ຕ້ອງເຜີຍແຜ່ ເພື່ອໃຫ້ສາທາລະ ນະ ຊົນສາມາດເຂົ້າເຖິງໄດ້ຕະຫຼອດເວລາ.	ຂາດຄວາມໂປ່ງໃສ; ການຮ່າງນິຕິກຳ ຍັງບໍ່ ທັນມີຄວາມເປັນເອກະ ພາບ; ການປຶກສາຫາລື ຕໍ່ຮ່າງນິຕິກຳ ຍັງຈຳກັດ.	ກຄຕ, ການຜປ, ຄອຄຊ	ກຄຜນ, ກຊປ, ຫອຄ
11.	ບັງຄັບໃຊ້ນິຕິກຳການແຂ່ງຂັນ ແລະ ປົກປ້ອງຜູ້ຊົມໃຊ້ ດ້ວຍກົນໄກການບັງ ໃຊ້ກົດໝາຍວ່າດ້ວຍການແຂ່ງຂັນ ແລະ ກົດໝາຍວ່າດ້ວຍການປົກປ້ອງຜູ້ ຊົມໃຊ້ ເພື່ອສົ່ງເສີມການແຂ່ງຂັນທີ່ ຍຸຕິທຳ, ປ້ອງກັນທຸກພຶດຕິກຳທີ່ເປັນ ການຕ້ານການແຂ່ງຂັນ ຫຼື ຜູກຂາດ, ແລະ ປົກປ້ອງສິດຂອງຜູ້ຊົມໃຊ້ທຸກ ຮູບແບບ.	ການບັງໃຊ້ກົດໝາຍຍັງ ອ່ອນ; ກົນໄກການປະ ຕິ ບັດຍັງບໍ່ ທັນຈະແຈ້ງ; ຂາດຄວາມຮັບຮູ້ກ່ຽວ ກັບວຽກງານດັ່ງກ່າວ.	ກຄຜນ, ກຄວ	ກຄຕ, ກຈນກ, ການຜປ, ກມວ

12.	ກຳນົດບັນດາຕະຫຼາດຕ່າງປະເທດທີ່ເປັນບຸລິມະສິດໂດຍອີງໃສ່ທ່າແຮງການສົ່ງອອກ ແລະ ຄວາມຕ້ອງການ ແລະ ເພີ່ມທະວີການນຳໃຊ້ບັນດາສັນຍາການຄ້າ ແລະ ສິດທິພິເສດດ້ານການຄ້າທີ່ມີຢູ່ແລ້ວ.		ກຈຮ	ກງ
13.	ຍົກລະດັບຄວາມຊ່ຽວຊານດ້ານວິຊາການໃນການເຈລະຈາການຄ້າ ແລະ ການວິເຄາະດ້ານກົດໝາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາກົນໄກປຶກສາຫາລືນຳຂະ ແໜງການຂອງ ສປປ ລາວ.		ກຈຮ	ຫອຄ
ແຜນວຽກຈຸດສຸມທີ II	**ການສົ່ງເສີມ ແລະ ພັດທະນາການຄ້າພາຍໃນ**	1. ການເຊື່ອມໂຍງຕະຫລາດ ແລະ ລະບົບການຈຳໜ່າຍພາຍໃນ; 2. ການຄຸ້ມຄອງການຄ້າພາຍໃນ ແລະ ການຕິດຕາມກວດກາການຄ້າ; 3. ການຫັນທຸລະກິດ ໃຫ້ເຂົ້າສູ່ລະບົບທາງການ ຜ່ານການນຳໃຊ້ເຕັກໂນໂລຊີ ຫລື ຫັນເປັນດີຈີຕ່ອນ.		
ລ/ດ	**ມາດຕະການ**	**ສິ່ງທ້າທາຍ**	**ພາກສ່ວນຮັບຜິດຊອບຫຼັກ**	**ພາກສ່ວນສະໜັບສະໜຸນ**
1.	**ການເຊື່ອມໂຍງຕະຫລາດ ແລະ ລະບົບການຈຳໜ່າຍພາຍໃນ**			
1.1	ສ້າງເຄືອຂ່າຍການກະຈາຍສິນຄ້າພາຍໃນໃຫ້ທັນສະໄໝ ເພື່ອເຊື່ອມໂຍງຊາວກະສິກອນ, ຜູ້ຜະລິດ, ຜູ້ຂາຍ ແລະ ຜູ້ຊົມໃຊ້.	ໂຄງສ້າງພື້ນຖານດ້ານການຄ້າຍັງບໍ່ທັນສະໄໝ, ລະບົບກະຈາຍສິນຄ້າຍັງບໍ່ເປັນເອກະພາບ.	ກຄພນ	ກະຊວງກະສິກຳ, ຫ້ອງການອຄ ແຂວງ,ສະມາຄົມ ທຸລະກິດ ແລະ ພາກເອກະຊົນ.
1.2	ສ້າງຕະຫລາດມາດຕະຖານ ແລະ ຕະຫລາດປະມູນສິນຄ້າ.	ຂາດມາດຕະການ ຕະຫລາດ, ການຊື້-ຂາຍຍັງຂາດຄວາມໂປ່ງໃສ.	ກຄພນ	ກົມມາດຕະຖານ, ອົງການປົກຄອງທ້ອງຖິ່ນ ແລະ ພາກເອກະຊົນ.
